ໂຮມ ບົດຄວາມວິຊາການ

ພາສາລາວ, ອັນນະຄະດີ, ວັດທະນະທຳ ແລະການສື່ສານມວນຊົນ

ແດ່ ວັນຄົບຮອບ ມະຫອມຫຼວງ

ວຽງຈັນ 450 ປີ

ວຽງຈັນຂອັນໃຈລາວໝັ້ນຍືນ

ພາກວິຊາພາສາລາວ-ສື່ສານມວນຊົນ ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ ຄ.ສ 2010

ขอภาวิรา ของกวีเอกโต หิละหุด
ผ่านพ้น สิ่งลา ไปละ

สจ.ดร.บัวลี ปะพาพัน

มะหาวิทะยาไลแห่งชาด
ถะนะอักสอนสาด
พาภาวิชาพาสาลาว-สี่สานมอนชิน

โธม บิดถวามวิชาทาน

พาสาลาว, วันนะถะดิ, วัดทะนะทำ และภาบสี่สานมอนชิน

ข่ำนับธับต้อน แด่

วาจาม 450 ป

ถะนะจัดทำ:

สจ. ดต. บัวลี ปะพาพัน
ธส. แสงฟ้า โทลาบุพาบ
ธจ. ภูงแก้ว นอนมะวง
ธจ. ดวงตา มะนิวง

วงจัน, 2010

ຄຳຜາລົບ

450 ປີຜ່ານໄປ, ເຫດການທາງປະຫວັດສາດຫລາຍເຫດການໄດ້ເປັນບົດຮຽນອັນລ້ຳຄ່າໃຫ້ແກ່ເຮົາ ຜູ້ທີ່ມີເລືອດເນື້ອເຊື້ອໄຂເປັນລາວບ່ວ່າຢູ່ແຫ່ງຫົນໃດ ຄວນໄດ້ຈົດຈຳ ແລະຝັງໄວ້ໃນສ່ວນເລິກຂອງຫົວໃຈ ທັງສະແດງອອກໃນພຶດຕິກຳ ດ້ວຍຄວາມເດັດດ່ຽວໜຽວແໜ້ນ ແລະກ້າສະຫລະແມ່ນແຕ່ຊີວິດເມື່ອເຫັນຈຳເປັນ ເພື່ອເທີດທູນ ແລະຄ້ຳຄວາມເປັນຊາດໄວ້ຄູ່ຟ້າດິນ.

ເນື່ອງໃນໂອກາດການຈັດຕັ້ງບຸນມະໂຫລານສະເຫລີມສະຫລອງວັນຄົບຮອບ 450 ປີແຫ່ງການສ້າງຕັ້ງວຽງຈັນເປັນລາຊະທານີແຫ່ງອານາຈັກລ້ານຊ້າງ, ***ພາກວິຊາພາສາລາວ & ສື່ສານມວນຊົນ*** ໄດ້ຮີບໂຮມ ບົດຄວາມອາຈານສອນປະຈຳພາກວິຊາຈຳນວນໜຶ່ງ ມາຈັດພິມເພື່ອຄຳນັບຮັບຕ້ອນວັນບຸນດັ່ງກ່າວ. ບົດຄວາມເຫລົ່ານີ້ເປັນພຽງສ່ວນນ້ອຍໆເທົ່ານັ້ນ ຫາກທຽບໃສ່ພະປີຊາສາມາດຂອງສົມເດັດພະເຈົ້າໄຊຍະເຊດຖາທິລາດ; ແລະຄວາມຍິ່ງໃຫຍ່ອາລັງການຂອງງານສະຫລອງ. ແຕ່ພາກວິຊາພວກເຮົາ ກໍພູມໃຈນ້ອມນຳມາເປັນພວງດອກໄມ້ຈາກດວງໃຈຂອງຜູ້ຮ່ວມຊາດ ຖວາຍບູຊາຄຸນບຸບພະຊົນ ຜູ້ຊົງພະຄຸນອັນລ້ຳເລີດຂອງຊາດ ແລະປະກອບສ່ວນອາບເອີໃນວັນບຸນນີ້.

ຄຸນແລະຜົນປະໂຫຍດໃດຫາກເກີດແຕ່ບົດຄວາມເຫລົ່ານີ້, ພວກເຮົາ ຂໍນ້ອມຍົກແດ່ພະເດດພະຄຸນຂອງສົມເດັດໄຊຍະເສດຖາທິລາດເຈົ້າ ແລະບັນດາບຸບພາຈານ. ຄວາມພາດພັ້ງອັນເກີດຈາກເຫລືອວິໄສ, ພວກເຮົາ ຂໍຮັບໄວ້ເປັນການສ່ວນຕົນ.

ທີ່ພາກວິຊາພາສາລາວ-ສື່ສານມວນຊົນ, ວັນທີ 17 ພະຈິກ 2010

ຫົວໜ້າພາກວິຊາ

ຄຳນຳ

ບັນດາບົດຄວາມທີ່ນຳມາສະເໜີໃນໜັງສືອະນຸສອນສະບັບນີ້ ສ່ວນໜຶ່ງເປັນບົດຄວາມທີ່ເຄີຍໄດ້ສະເໜີໃນກອງປະຊຸມມາແລ້ວ ອີກສ່ວນໜຶ່ງ ກໍເປັນບົດທີ່ຂຽນຂຶ້ນມາໃໝ່ໆ.

ຫົວຂໍ້ບົດຈະປິ່ນອ້ອມ ຢູ່ໃນແວດວົງພາສາ, ວັນນະຄະດີ, ວັດທະນະທຳ, ການສື່ສານ ທັງໂດຍກົງ ແລະທີ່ນຳໃຊ້ເຂົ້າໃນຂົງເຂດຕ່າງໆ ໂດຍຈັດກຸ່ມຕາມລຳດັບ. ໝາຍຄວາມວ່າ ເນື້ອໃນຂອງບົດ ກໍຈະກ່ຽວ ກັບພາສາ, ວັນນະຄະດີ ແລະວັດທະນະທຳໂດຍກົງ, ແລະອີກສ່ວນໜຶ່ງ ແມ່ນກ່ຽວກັບການສຶກສາບັນຫາຕ່າງໆ ທີ່ຕິດພັນກັບວຽກງານດ້ານພາສາ, ວັນນະຄະດີແຫ່ງຊາດ ແລະ ການສື່ສານ.

ຄວາມເບື້ອງຕົ້ນ ຄາດວ່າຈະຈັດຕັ້ງການກວດກາຄັດຈ້ອນບົດຄັກແນ່, ເຫັນສົມມາພາຄວນຈຶ່ງນຳມາລົງພິມ. ແຕ່ເນື່ອງຈາກ ຈຳນວນບົດທີ່ສົ່ງເຂົ້າມາມີໜ້ອຍ, ການຄັດເລືອກ ຈຶ່ງກາຍເປັນບັນຫາສຳຮອງ ຄືມີພຽງແຕ່ກວດຜ່ານ ແລະແລ້ວກໍນຳມາດຳເນີນການຈັດທຳເປັນເຫລັ້ມ ແລະພິມອອກເປັນບັນນານຸສອນ. ສະນັ້ນ, ຂໍ້ຂາດຕົກບົກພ່ອງໃນປຶ້ມໂຮມບົດຄວາມສະບັບນີ້ ຈຶ່ງເປັນເລື່ອງທີ່ບໍ່ປາສະຈາກໄດ້.

ພາກວິຊາ, ຄະນະຈັດທຳ ແລະເຈົ້າຂອງບົດທຸກທ່ານ ຂໍຖືໂອກາດນີ້ ນຳສະເໜີຜົນງານ ແລະ ກໍຂໍອະໄພໂທດໃນຄວາມບໍ່ເລີກເຊິ່ງດ້ານຫລັກວິຊາ ແລະອັນຜິດພາດທີ່ອາດເກີດມີ ໃນໜັງສືສະບັບນີ້.

ຄະນະຈັດທຳ

ສຈ. ດຕ. ບົວລີ ປະພາພັນ

ຮສ. ແສງຟ້າ ໂທລານຸພາບ

ອຈ. ກຸງແກ້ວ ນວນນະວົງ

ອຈ. ດວງຕາ ມະນີວົງ

ສັນເສີນພະປາລະມີ

ໂດຍ ນິນ ລູກຈັນ

ອົ່ງສົມເດັດ ໄຊເສດຖາ ມະຫາລາດ

ຈອມມະສັດ ຜູ້ອົ່ງອາດ ທ້ຽງກາຍໃຈ

ວິໄສທັດ ສຸດຮອບຮູ້ ດຸການໄກ

ທະລືໄຫ ໄວ້ແດ່ຊາດ ແກ່ປະຊາ

ຊາດກ້ານກຸ່ງ ເມືອງເຮືອງຮຸ່ງ ປະຊາໃສ

ເປັນທີ່ອັດ ສະຈັນໃຈ ໃຫຍ່ຕື້ນໆຫນ

ມ່ລະດົ່ງ ຕົ້ງທອດໄວ້ ໃຫ້ລູກຫລານ

ຊາວລ້ານຊ້ຳ ຫົວອົ່ງວານ ທະນົ່ງກຸດ

ຫ້ຳພະແກ້ວ ພະທາດຫລວງ ງານຕະຫງານ

ເປັນມົ່ງຂວັນ ກ້ຽງກຸດຊາດ ລາດປະຊາ

ລາວຊ້າຍ-ຂວາ ຂອງສອງຝັ່ງ ຕ່ຽງຫວ່ຽງຫາ

ໄຊເສດຖາ ເໜືອຂະໝອມ ລຸ້ງຫລານລາວ

ນ້ອມກົ້ມຂາບ ດວງວິນຍານ ພະບິດາ

ເຫລົ່າປະຊາ ຂໍຕອມເຕົ້ຳ ລາວທ້ຽວອ່ຽ

ລ້ານຈ່ຽງຈັນ ຍັ້ນຈ່ຽງຄ້ຳ ໃຫ້ເຮືອງຮອ່ຽ

ຕອບສະໜອ່ຽ ພະຄຸນທານ ລາວໜຶ່ງດຽວ.

(14/11/2010)

ສາລະບານ

ເລື່ອງ	ໜ້າ
ຄຳຜາລິບ	ກ
ຄຳນຳ	ຂ
ສັນເສີນພະປາລະມີ	ຄ
ພະເຈົ້າໄຊຍະເຊດຖາ ພະອົງ ຜູ້ຕັ້ງນະຄອນຈັນທະບູລີ ສີສັດຕະນາຄະນາຫຸດ ອຸດຕະມະລາຊະທານີ	01
ຍຸກເພີ່ນສະໄໝເຮົາ	6
ພາສາ ແລະໜັງສື	07
ເຄົ້າກຳເນີດໂຕໜັງສືລາວ	25
ກິລິຍາພວງໃນພາສາລາວ	49
ຄຳມອບທ້າຍບົ່ງການໃນພາສາລາວ	59
ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນ	73
ການໃຊ້ຄຳສັບໃນນິທານສຳລັບເດັກ	89
ທັດສະນະຄະຕິຕາຍຕົວກັບການຮຽນພາສາຕ່າງປະເທດ	103
ອິດທິພົນການສຶບທອດດ້ານການສ້າງຕົວລະຄອນຢູ່ໃນວັນນະຄະດີລາວ	113
ກະແສວັນນະຄະດີສັດຈະທັດວິຈານ: ຜ່ານບົດປະພັນທີ່ດີເດັ່ນ (ໄລຍະ1930-1945)	119
ຄວາມເປັນຍິງໃນສັງຄົມອານາຈັກລ້ານຊ້າງ	123
ອັດຕະລັກຂອງຊົນເຜົ່າທາງດ້ານຄວາມເຊື່ອ ແລະພິທີກຳໃນເລື່ອງສັ້ນ ແລະນະວະນິຍາຍຮ່ວມສະໄໝ	135
ລະບົບຄວາມເຊື່ອຖືແບບດັ້ງເດີມຂອງຊົນເຜົ່າລາວ	149
ຍ່ອຍວັດທະນະທຳ: ປະເພນີການສູ່ຂວັນ	169
ສື່ມວນຊົນສຶກສາ	171
ສະພາບ ແລະ ບັນຫາການບໍລິຫານວິຊາການຂອງມະຫາວິທະຍາໄລແຫ່ງຊາດ ວິທະຍາເຂດດົ່ງໂດກ	199

ສົມເດັດພະເຈົ້າໄຊເສດຖາ[1]

ພະອົງຜູ່ຕັ້ງພະນະຄອນຈັນທະບຸລີສີສັດຕະນາຄະນາຫຸດອຸດຕະມະລາຊະທານີ

(ນະຄອນວຽງຈັນ)

ຮຽບຮຽງໂດຍ ລ. ປະພາພັນ

ສົມເດັດເຈົ້າໄຊເສດຖາທິລາດ ເປັນອົງກະສັດໜຸ່ມແໜ້ນທີ່ປ່ຽມລົ້ນພະປີຊາສາມາດໃນການປົກຄອງ ແລະປະດິດຄິດສ້າງ ໃນການສ້າງສາພັດທະນາບ້ານເມືອງໃຫ້ປັກກຸ່ມຊຸ່ມເຢັນ, ກ້ານກຸ່ງຮຸ່ງເຮືອງ ແລະເຂັ້ມແຂງ.

ພະອົງ ເປັນລາຊະໂອລົດອົງໃຫຍ່ຂອງສົມເດັດພະໂພທິສາລະລາດ ແລະພະນາງຍອດຄຳ, ປະສູດ ປີກາບສະງ້າ ຈສ. 896 (ຄ.ສ.1534). ພະອົງມີຫລາຍພະນາມ: ນາມເດີມ *ເສດຖະວັງໂສ*, ເມື່ອຂຶ້ນເປັນກະສັດມີພະນາມວ່າ *ພະໄຊເສດຖາທິລາດ, ພະອຸໄພພູທອນ ບໍ່ອນໄຊເສດຖາ ພູວະນາຖາທິປັດ ສີສັດຕະນາຄະນະຫຸດ,*ແລະ*ພະພຸດທະ ປະວໍລະໄຊເສດຖາທິລາຊະ ບໍລົມມະຈັກກະພັດຕິ ພູມິນທະລາຊາ*, ມີບາງແຫ່ງເອີ້ນຫຍໍ້ວ່າ *ພະພຸດທະເສດຖາທິລາດ.* ແລະພວກເຮົາຮູ້ກັນທົ່ວໄປໃນຊ່ວມື້ນີ້ວ່າ *ເຈົ້າໄຊເສດຖາ.*

ເມື່ອຊຽງໃໝ່ວ່າງກະສັດ, ມະຫາເຖນ (ພະສົງຜູ້ໃຫຍ່-ສັງຄະລາດ) ພ້ອມມະຫາມົນຕີ(ນາຍົກລາຊະມົນຕີ) ແຫ່ງນະຄອນຊຽງໃໝ່ ໄດ້ມາທູນຂໍໃຫ້ພະໂພທິສາລະລາດໄປນັ່ງເມືອງ. ພະໂພທິສາລະລາດໄດ້ມອບໝາຍໃຫ້ພະລາຊະບຸດອົງໃຫຍ່ເມືອແທນ. ເຈົ້າເສດຖະວັງໂສ, ເມື່ອພະຊົນມາຍຸໄດ້ 14 ພັນສາ, ໄດ້ເປັນເຈົ້າແຜ່ນດິນຄອງນະຄອນຊຽງໃໝ່ ໂດຍໄດ້ຈັດ "ພິທີມຸດທາພິເສກ" ຂຶ້ນໃນວັນພຸດ ເດືອນ 11 ຂຶ້ນ 4 ຄ່ຳ ຈ.ສ. 910 (ຄສ. 1548), ຖວາຍພະນາມວ່າ ສົມເດັດພະເຈົ້າໄຊເສດຖາທິລາດ ນະຄອນຊຽງໃໝ່ໃນລັດຊະສະໄໝຂອງພະອົງ ຢູ່ໃນຄວາມປັກກຸ່ມຊຸ່ມເຢັນ ປະຊາລາສະດອນຍູທ່ຽງທຳມາຫາກິນແລະສ້າງບ້ານແປງເມືອງ. ຕະຫລອດໄລຍະແຫ່ງການນັ່ງຊຽງໃໝ່, ພະອົງໄດ້ຕັ້ງຢູ່ໃນຄອງ 14, ເຄົາລົບຮີດ 12 ຢ່ຽງເຄັ່ງຄັດ ແລະໄດ້ອຸທິດພະລັງກາຍໃຈທີ່ມີເຂົ້າໃນວຽກບ້ານ ການເມືອງ.

ເມື່ອນະຄອນຊຽງທອງ ເກີດການຈໍລະຈົນວຸ້ນວາຍກໍ່ການແຍກບ້ານຜານເມືອງ ຫລັງການສຸລະຄົດຂອງພະເຈົ້າໂພທິສານ ອົງເປັນພະບິດາ, ພະອົງ ກໍໄດ້ມາຈັດແຈງປ່ຽນແປງລາຊະການບ້ານເມືອງຈົນເປັນອັນສະຫງົບຮຽບຮ້ອຍ. ດ້ວຍພະເດດພະຄຸນອັນລົ້ນເກົ້າເໜືອຂະໜ່ອມ, ເສນາອາມາດ

---

[1] ຕຳໜານທາງຊຽງໃໝ່ວ່າ ອຸບປະໂຍ, ອຸບປະໂຍອະລາດ. ພົງສາວະດານລາວບາງສະບັບວ່າ ໄຊຍະເຊດຖາທະລາດ. ພົງສາວະດານລາວ ສະບັບ 1927 - ຮ່າໂນ້ຍ ໃຊ້ຄຳວ່າ ເສດຖະວັງໂສ ເປັນນາມເດີມ, ແລະ *ໄຊເສດຖາທິລາດ* ເມື່ອຄອງລາດ. ພວກເຮົາ ເຫັນຕາມພົງສາວະດານສະບັບຫຼັງນີ້ ເພາະ ຄຳວ່າ *ເສດຖາ* ໝາຍເຖິງ ອຸດົມຮຸ່ງເຮືອງ ຮັບກັບ ວໍລະວັງໂສ (ຜູ້ເປັນນ້ອງ ທີ່ໝາຍເຖິງ ປະເສີດ) ແລະເໝາະສົມກັບຖານະຄວາມເປັນກະສັດ ຫຼາຍກວ່າ. ຖ້າມີເຈຕະນາວ່າ ເຊດຖາວັງໂສ ໃນຖານະເປັນເຈົ້າອ້າຍ, ກໍໜ້າຈະມີຄຳຮັບ: ກະນິດຖາວັງໂສ(ໃນຖານະເຈົ້ານ້ອງ)?

ພະສົງອົງເຈົ້າ ແລະບ່າວໄພ່ລາສະດອນ ຈຶ່ງໄດ້ອະພິເສກໃຫ້ພະອົງຂຶ້ນເປັນເຈົ້າແຜ່ນດິນ ນະຄອນຊຽງທອງ ຄວບຄູ່ກັບເຈົ້ານະຄອນຊຽງໃໝ່ ໂດຍຖວາຍພະນາມວ່າ ***ພະອຸໄພພູທອນບໍ່ອນໄຊເສດຖາພູວະນາຖາທິປັດສີສັດຕະນາຄະນະພຸດ*** (ໝາຍເຖິງເຈົ້າສອງນະຄອນ).

ເພື່ອສະດວກໃນການປົກຄອງ, ສົມເດັດ ***ພະອຸໄພພູທອນບໍ່ອນໄຊເສດຖາພູວະນາຖາທິປັດສີສັດຕະນາຄະນະພຸດ*** ໄດ້ມອບໃຫ້ເຈົ້ານາງຈິລະປະພາ ເປັນຜູ້ສຳເຫລັດລາຊະການ ແທນພະອົງຢູ່ນະຄອນຊຽງໃໝ່; ສ່ວນພະອົງ ໄດ້ປະທັບຢູ່ນະຄອນຊຽງທອງ. ໃນໄລຍະນີ້, ນະຄອນຊຽງໃໝ່ເກີດອົນລະຫົນວຸ້ນວາຍ ອັນເນື່ອງຈາກເສນາມຸນຕີຜູ້ໃຫຍ່ ເກີດການແຍ່ງຊີງກັນເປັນໃຫຍ່. ສົມເດັດເຈົ້າໄຊເສດຖາທິລາດ ຈຳເປັນໄດ້ສົ່ງກຳລັງທັບ ຂຶ້ນໄປຊ່ວຍແກ້ໄຂສະຖານະການ. ສາມປີຕໍ່ມາ, ທາງຊຽງໃໝ່ ໄດ້ອະພິເສກເຈົ້າເມກຸຕິ ຂຶ້ນເປັນເຈົ້າແຜ່ນດິນ. ຫລັງລັດຊະການສົມເດັດເຈົ້າໄຊເສດຖາທິລາດ, ນະຄອນຊຽງໃໝ່ ໄດ້ຕົກເປັນເມືອງ ຂຶ້ນຂອງພະມ້າ.

ການໄດ້ຕັດສິນພະໄທ ກັບຄືນມາຄອງນະຄອນຊຽງທອງ ຂອງສົມເດັດພະເຈົ້າໄຊເສດຖາທິລາດ ກໍເພາະພະອົງຫລົງເຫັນສະພາວະການບ້ານເມືອງມີອັນເປັນໄປ ແລະເຫັນແກ່ຄວາມເປັນປຶກແຜ່ນແໜ້ນໜາ ແລະກ້ານກຸ່ງຮຸ່ງເຮືອງຂອງອານາຈັກລ້ານຊ້າງ. ເພື່ອສົມກຽດແຫ່ງການອຸທິດ, ທາງການບ້ານເມືອງໄດ້ຈັດ ພິທີຖວາຍພະນາມແດ່ພະອົງ: *ພະພຸດທະປະອໍລະໄຊເສດຖາທິລາຊະບໍລົມມະຈັກກະພັດຕິພູມິນທະລາຊາ*[2].

ຕະຫລອດລັດຊະສະໄໝ, ສົມເດັດພະເຈົ້າໄຊຍະເສດຖາທິລາດ ໄດ້ບຳເພັນພະລາຊະກິດທີ່ມີຄຸນມະຫັນຕໍ່ປະເທດຊາດບ້ານເມືອງ. ພະອົງ ໄດ້ຈຸດປະກາຍພັດທະນາການ ແລະຊື່ສຽງຮອບດ້ານແກ່ອານາຈັກລ້ານຊ້າງ.

ການປົກຄອງ: ວຽກງານພາຍໃນ

ສົມເດັດພະເຈົ້າໄຊຍະເສດຖາທິລາດ ເປັນກະສັດທີ່ຂຶ້ນຄອງລາດແຕ່ຄາວເຍົາໄວ, ແຕ່ພະອົງມີພະປີຊາສາມາດໃນການເລືອກ ແລະຈັດຕຳແໜ່ງງານໃຫ້ອາມາດລາຊະມົນຕີ. ໂດຍຮັບບົດຮຽນຈາກຜູ້ເປັນອົງບິດາ ແລະປະສົບການຊີວິດສ່ວນພະອົງ, ທຸກແຫ່ງທຸກເທື່ອທີ່ມີການປ່ຽນແປງ ພະອົງໄດ້ຈັດລາຊະການບ້ານເມືອງຄືນໃໝ່ທັງໝົດ. ພະອົງມີສັນຊາດຍານການເມືອງ ເລີກແລບກວ້າງໄກ, ວາງນະໂຍບາຍການປົກຄອງທີ່ເໝາະສົມກັບສະພາບ, ເຄົາລົບຄວາມຄຶດເຫັນຂອງຄະນະມົນຕີແລະຕັດສິນພະໄທໂດຍມີວິຈາລະນະຍານທີ່ສັ່ງມແຫລມສຽບຂາດ, ຮູ້ອັນຄວນ ແລະມິຄວນ. ພະອົງທົ່ງປະກາດໃຫ້ອະໄພໂທດແກ່ຜູ້ຫລົງຜິດທີ່ກັບຕົວ ແລະລົງໂທດສາຫັດຕໍ່ຜູ້ທໍລະຍົດທີ່ສ້າງຄວາມເສື່ອມ

---

[2] ຕົ້ນສະບັບວ່າ *ພະພຸດທະລະປະອໍລະໄຊເສດຖາທິລາຊະບໍລົມມະຈັກກະພັດຕິພູມິນທະລາຊາ*. ຄຳວ່າ ພຸດທະລະນັ້ນ ເມື່ອກວດຄືນຈາກຮາກສັບ ທັງຈາກພາສາປາລີ ແລະສັນສະກິດ ບໍ່ຜາກົດຄຳວ່າ ພຸດທະລະ ມີແຕ່ ພຸດທະ. ພາຍຫລັງກວດສອບ ແລະໝັ້ນໃຈດີແລ້ວ, ຄຳ *ພຸດທະລະ* ໃນຕົ້ນສະບັບ ຈຶ່ງປັບມາເປັນ *ພຸດທະ* ໃນສະບັບນີ້ ເພື່ອໃຫ້ເປັນໄປຕາມຮາກສັບທີ່ເຫັນວ່າຖືກຕ້ອງ ແລະມີຄວາມໝາຍ.

ແລະເສຍຫາຍແກ່ປະເທດຊາດບ້ານເມືອງ. ຕໍ່ພາຍໃນ, ແມ່ນແຕ່ການຄຶດທໍລະຍົດ; ຖ້າຮູ້ກັບຕົວພະອົງກໍຍົກໂທດ; ແຕ່ຕໍ່ກັບການຮ່ວມມືກັບພາຍນອກ ຫລືປ່ອຍໃຫ້ສັດຕູພາຍນອກເຂົ້າລ່ວງລ້ຳດິນແດນໂດຍບໍ່ບັງຄວນ ແມ່ນຈະບໍ່ມີຄຳວ່າອະໄພ.

ໜຶ່ງໃນບັນຫາສຳຄັນແຫ່ງການຈັດການປົກຄອງແມ່ນການຍ້າຍນະຄອນຫລວງ, ຕັ້ງນະຄອນວຽງຈັນເປັນລາຊະທານີ ຂະໜານນາມວ່າ ***ພະນະຄອນຈັນທະບຸລີ ສີສັດຕະນາຄະນະຫຸດອຸດຕະມະລາຊະທານີ.*** ການຍ້າຍນະຄອນຫລວງມາວຽງຈັນ ມີຂໍ້ສະດວກຫລາຍຢ່າງ. ດ້ານພູມສັນຖານ, ນະຄອນຫລວງວຽງຈັນເປັນເຂດທີ່ງພຽງກວ້າງຂວາງແລະອຸດົມສົມບູນດ້ວຍແຫລ່ງຊັບພະຍາກອນ ໂດຍສະເພາະ ການຜະລິດທັນຍາຫານ ອັນເປັນອາຊີບຫລັກ ແລະເປັນເສດຖະກິດຍຸດທະສາດ ໃນເວລານັ້ນທັງສະດວກໃນການທຳການຄ້າຂາຍໃນແລະນອກປະເທດ. ນະຄອນຫລວງວຽງຈັນ ຕັ້ງຢູ່ໃຈກາງຂອງປະເທດ ເປັນທີ່ຕັ້ງເໝາະສົມທາງພູມສາດການປົກຄອງ ເຊິ່ງຈະອຳນວຍຄວາມສະ ດວກແກ່ການດູແລໄດ້ທົ່ວເຖິງ,ຕະຫລອດເຖິງການຮຽກໂຮມຫົວເມືອງຕ່າງໆ ໃນການເປີກສາວຽກ ລາຊະການບ້ານເມືອງກໍ່ວ່ອງໄວທັນການ. ໃນແງ່ການຕ່າງປະເທດ,ນະຄອນຫລວງຢູ່ໄກຈາກຊາຍ ແດນເທົ່າໃດກໍ່ຍິ່ງດີ; ເພາະຢູ່ໃກ້ເຂດຊາຍແດນ, ຫລືໂດຍສະເພາະເຂດທີ່ມີການຍາດແຍ່ງ ຈະມີຄວາມຫຍຸ້ງຍາກ ແລະຖືກທ່າຮັບ ໃນການກຽມການປ້ອງກັນຕົວ, ທັງເປັນທ່າດີແກ່ຄູ່ອະລິ ຫລາຍກວ່າຜູ້ເປັນເຈົ້າຂອງ ເມື່ອເກີດກໍລະນີການສົງຄາມ. ການຕັດສິນພະໄທ ຍ້າຍນະຄອນ ຫລວງ ຈາກຊຽງທອງສູ່ວຽງຈັນ ຂອງສົມເດັດພະເຈົ້າໄຊເສດຖານັ້ນ ບໍ່ແມ່ນ ຍ້າຍເພື່ອຍ້າຍ, ມັນຕັ້ງມີຄວາມໝາຍສຳຄັນທັງໃນແງ່ເສດຖະກິດແລະການປົກຄອງ ອັນໄດ້ສະແດງໃຫ້ເຫັນສາຍຕາທີ່ມອງກວ້າງເຫັນໄກຂອງນັກການປົກຄອງ, ສະແດງໃຫ້ເຫັນອັດສະລິຍະພາບ ແລະພະປີຊາສາມາດຂອງພະອົງ ໃນການຈັດການບໍລິຫານບ້ານເມືອງ.

ການປົກຄອງ: ວຽກງານພາຍນອກ

ສົມເດັດພະເຈົ້າໄຊເສດຖາທິລາດ ເປັນກະສັດທີ່ມີເລືອດເນື້ອເຊື້ອໄຂຂອງສອງພະນະຄອນ: ຊຽງທອງ-ຊຽງໃໝ່. ພະອົງພະຍາຍາມຮັກສາຄວາມເປັນໜຶ່ງທີ່ມີສັນຕິສຸກໃນສອງພະນະຄອນ ແລະໄດ້ຜູກສຳພັນທະໄມຕີກັບອານາຈັກບ້ານອ້າຍເມືອງນ້ອງ ທັງໃນລັກສະນະການທູດແລະສາຍເລືອດ. ພະອົງ ມີພະຊາຍາທັງທີ່ເປັນລາຊະບຸດຕິ ຂອງຊຽງໃໝ່, ອະຍຸດທະຍາ ແລະເຂມມະລາດ (ສິບສອງພັນນາ)...

ໃນລັດຊະສະໄໝຂອງສົມເດັດພະເຈົ້າໂພທິສາລະລາດ ແລະສົມເດັດພະເຈົ້າໄຊເສດຖານັ້ນ ໃນຂົງເຂດກຳລັງປັ້ນຕົວພັດທະນາຕົນເອງແລະເຕັມໄປດ້ວຍການແກ່ງແຍ້ງລະຫວ່າງລັດ. ອານາຈັກຕ່າງໆກຳລັງ ຢູ່ໃນຍຸກເຟື່ອງຟູ, ຂະຫຍາຍອຳນາດ ແລະອານາເຂດ ໂດຍສະເພາະແລ້ວ ແມ່ນກະສັດບຸເລັງນອງແຫ່ງອານາຈັກຕອງອູ (ພະມ້າ) ກຳລັງປ່ວງບ້າອຳນາດ. ກະສັດພະມ້າ ຊົງຊາບດີເຖິງກິດຕິສັບຂອງພະເຈົ້າໂພທິສາລະລາດແຫ່ງລ້ານຊ້າງ. ຂະນະທີ່ພະອົງ ສະເດັດມາອະພິເສກພະ

ໂອລົດຂຶ້ນຄອງຊຸງໃໝ່, ຝ່າຍພະມ້າ ກໍໄດ້ສົ່ງທູດເກ່ຍກ່ອມໃຫ້ພະອົງຮ່ວມມືກັບພະມ້າ ໄປຕີເອົາ ເມືອງສີອະຍຸດທະຍາ.

ເຫັນສະພາບຊຸງທອງ-ຊຸງໃໝ່ມີຮອຍແຫງ ແລະນະຄອນຊຸງໃໝ່ ເກີດວຸ້ນວາຍແຍ່ງຊີງ ອຳນາດກັນ, ພະມ້າ ກໍສວຍໂອກາດຍາດເອົາທ່າດີນີ້ ເຂົ້າແຊກແຊງທັນທີ. ເມື່ອເຂົ້າຄອບຄອງຊຸງ ໃໝ່ໄດ້ແລ້ວ ພະມ້າ ກໍສົ່ງສານອັງເຊີນເຈົ້າໄຊຍະເສດຖາຄືນຄອງຊຸງໃໝ່. ພະໄຊເສດຖາທີ່ລາດ ຊົງຢັ່ງຮູ້ ກົນອຸບາຍເລິກແລບອັນນີ້ ຈຶ່ງແຈ້ງຄືນໂດຍມີໄນວ່າ ວຸງກທ່ານເຮັດ, ທ່ານຮັບຜິດຊອບ; ສ່ວນເຮົາຈະຄືນຄອງລ້ານຊ້າງ.

ຄວາມຝັນຫວານຂອງບຸເລັ້ງນອງ ທີ່ຫວັງກືນສອງອານາຈັກລວດດຽວ ແລະຄອງຄວາມເປັນ ເຈົ້າ ໃນສຸວັນນະພູມທັງໝົດ ໄດ້ພັງທະລາຍລົງແຕ່ຫົວທີໂລດ. ບຸເລັ້ງນອງຜູ້ຊະນະສິບທິດທີ່ພິຊິດຊຸງ ໃໝ່ ແລະອະຍຸດທະຍາ ມາແລ້ວ ຖືກຕົບໜ້າແລະຕີຕ້ານ ຢ່າງເປັນຕາອັບອາຍຂາຍໜ້າທີ່ສຸດ ຈາກ ຍຸດໂທບາຍ ຂອງສົມເດັດພະເຈົ້າໄຊເສດຖາ. ການບຸກໂຈມຕີວຸງຈັນສອງຄັ້ງ ຂອງກອງທັບພະມ້າ ທັງຫລອນຕີ ແລະປະຈັນບານ ລ້ວນແຕ່ປະລາໄຊ. ບຸເລັ້ງນອງ ຈຳຕ້ອງສັ່ງຖອຍທັບກັບນະຄອນ ດ້ວຍຄວາມຍ່ອຍຍັບອັບປະໂຫຍດ, ສູນເສຍທັງກຳລັງພົນ, ຍຸດໂທປະກອນ ແລະຊັບສິນ. ໃນການ ບຸກວຸງຈັນຄັ້ງທີສອງ, ຕາມຕົວເລກຈາກພົງສາວະດານລາວ, ທະຫານພະມ້າ ລົ້ມຕາຍເປັນຈຳນວນ ມາກ ແລະຖືກກອງທັບລາວຈັບເປັນສະເລີຍເສິກ ທັງທະຫານພະມ້າ ແລະທະຫານເມືອງສ່ວຍ ໄດ້ ທັງໝົດ 30.000 ຄົນ, ໄດ້ຊ້າງ 100 ໂຕ, ງາຊ້າງ 2.300 ກິ່ງ.

ໃນຖານະບ້ານພີ່ເມືອງນ້ອງແລະພະເຈົ້າເຂີຍ, ສົມເດັດພະເຈົ້າໄຊເສດຖາ ໄດ້ຕອບສະໜອງ ຕາມສານສະເໜີຂອງພະມະຫິນທະລາຊາແຫ່ງກຸງສີອະຍຸດທະຍາ ເຖິງສອງຄັ້ງ ໃນການປາບຂະບົດ ລູກມື ແລະທັບພະມ້າທີ່ມາຍ່ຳຍີນະຄອນສີອະຍຸດທະຍາ. ດ້ວຍເຫັນວ່າ ອະຍຸດທະຍາເປັນສູນກາງ ອານາຈັກໜຶ່ງ, ການທີ່ເຈົ້າເມືອງພິດສະນຸໂລກ ເອົາຕົວອອກ ແລະໄປຮ່ວມມືກັບພະມ້າ ຈຶ່ງເປັນ ການກະທຳທີ່ບໍ່ບັງຄວນ. ການຮ່ວມມືກັບອະຍຸດທະຍາໃນຄັ້ງນີ້ ສຳເລັດຜົນ ຢ່າງເປັນທີ່ໜ້າພໍໃຈ. ຄວາມບໍ່ສົມປະສົງ ໃນການຊ່ອຍອະຍຸດທະຍາຄັ້ງທີສອງ ແມ່ນຍ້ອນເສຍລັບ ໂດຍທີ່ພະມ້າຈັບພະຍາ ລາມທູດກຸງສີໄດ້ ແລະສາຍສືບຂ່າວບໍ່ຖ່ອງແທ້. ພະມ້າ ໄດ້ບັງຄັບໃຫ້ພະຍາລາມແຕ່ງສານ ລວງ ພະເຈົ້າໄຊເສດຖາ. ເນື້ອໃນສານແຈ້ງວ່າ "ບັດນີ້ ກອງທັບຂອງພະເຈົ້າຫົງສາວະດີ ກຳລັງຂັດສົນ ດ້ວຍສະບຽງອາຫານ ໄພ່ພົນໄດ້ຮັບຄວາມລຳບາກຫລາຍ ຮອມຈະເລີກທັບໄປແລ້ວ ຂໍໃຫ້ສົມເດັດ ພະເຈົ້າລ້ານຊ້າງ ຟ້າວຍົກທັບລົງມາຕີຂະໜາບ ທາງເມືອງສະລະບຸລີ ໂດຍດ່ວນ". ກອງປະຊຸມມົນ ຕີພິຈາລະນາ ສານຂອງພະຍາລາມ ເສນາບໍດີກຸງສີອະຍຸດທະຍາ ມີຫລາຍມະຕິ; ພະຍາແສນສຸລິນ ໄດ້ຄັດຄ້ານແຜນການໂດຍເຫັນວ່າ ນັ້ນແມ່ນເປັນພຽງເລ່ກົນຂອງພະມ້າ. ແຕ່,ອີງຕາມສານຂອງພະ ລາມ ແລະລາຍງານທີ່ພະຍານະຄອນທີ່ໄດ້ແຈ້ງຜົນການຊະນະພະມ້າ ຂອງທັບພະຍາຈັນກອງນາງ, ລວມທັງຄຳເຫັນຢືນຢັນ ແລະຂັນອາສາຂອງສອງພໍ່ລູກພະຍານະຄອນໃນການຄັ້ງນີ້, ສົມເດັດພະໄຊ ເສດຖາ ຈຶ່ງຊົງຕັດສິນພະໄທ ຕາມຄວາມໃນສານ, ບໍ່ເຫັນຕາມຄຳຄ້ານຂອງພະຍາແສນສຸລິນ. ສຸດ

ທ້າຍ, ກອງທັບພະອົງ ກໍຕົກອຸບາຍຂອງພະມ້າ. ບົດຮຽນເຈັບແສບນີ້ ເປັນຄະຕີທີ່ພະອົງຈົດຈຳໄວ້ ໃນພະໄທ ຕະຫລອດ ແລະມຸ່ງໝັ້ນເພື່ອບໍ່ໃຫ້ຊ້ຳຮອຍ ແລະຕ້ອງແກ້ມືໃຫ້ໄດ້. ໃນຕົວຈິງ,ເຈດຈຳນົງ ຂອງພະອົງ ກໍບັງເກີດຜົນ ສະແດງອອກໃຫ້ເຫັນ ໃນບັ້ນປາບທັບພະມ້າທີ່ບຸກວຽງຈັນຄັ້ງທີສອງ.

ການສ້າງສາພັດທະນາ

ພ້ອມກັບການຈັດການປົກຄອງລະບຽບບ້ານເມືອງ ແລະປົກປ້ອງປະເທດຊາດ ຕ້ານການຮຸກຮານສັດຕູພາຍນອກ, ພະອົງ ກໍໄດ້ທຳການສ້າງສາບູລະນະພັດທະນາບ້ານເມືອງ. ພະອົງ ໄດ້ລົງມື ສ້າງສານະຄອນວຽງຈັນ ໃຫ້ເປັນລາຊະທານີທີ່ເຂັ້ມແຂງ ແລະຮຸ່ງເຮືອງ ສົມເປັນມິ່ງເມືອງຂອງປະ ເທດ. ຈາກພະນະຄອນຫລວງວຽງຈັນ, ພະອົງ ໄດ້ກະຈາຍຄວາມຈະເລີນ ໄປຍັງພາກສ່ວນຕ່າງໆ ຂອງປະເທດ.ທັງສອງຟາກຕາມລ້ອງແມ່ນ້ຳຂອງ ຈຸຈອດຊາຍແດນແຕ່ລະທິດ ໄດ້ຮັບການພັດທະນາ ຢ່າງທົ່ວເຖິງ. ວັດວາສາດສະໜາ ອັນເປັນສູນກາງທາງຈິດໃຈ ແລະການສຶກສາແຫ່ງຊາດ ໄດ້ຮັບ ການອຸປະຖຳສົ່ງເສີມເປັນຂະໜານໃຫຍ່ ສະເພະຢູ່ວຽງຈັນ ມີວັດເຖິງ 120 ວັດ. ພະພຸດທະຮູບ(ພະ ອົງຕື້,ພະສຸກ,ພະໃສ, ພະເສີມ),ພະທາດເຈດີ(ພະທາດຫລວງ,ພະທາດສີໂຄດທ່າແຂກ,ພະທາດພະ ນົມນະຄອນພະນົມ), ຫໍໂຮງ ແລະບູຮານສະຖານທີ່ສຳຄັນໆຫລາຍແຫ່ງ(ວັງຫລວງ, **ຫໍພະແກ້ວ**...) ໄດ້ຮັບການສ້າງສາປູລະນະປົວແປງຍົກລະດັບ ທັງຮູບສັນຖານ ແລະຄວາມສຳຄັນ. ທີ່ໂດດເດັ່ນ ແມ່ນ**ພະທາດຫລວງ** ໄດ້ກາຍເປັນສູນລວມແຫ່ງຈິດໃຈ, ເປັນ ສັນຍະລັກແຫ່ງຊາດ ແລະເປັນໜຶ່ງ ໃນອັດຕະລັກດ້ານສິນລະປະສະໄໝລ້ານຊ້າງ.

ບັ້ນທ້າຍ

ສົມເດັດພະເຈົ້າໄຊເສດຖາທິລາດ ຄອງນະຄອນແຕ່ເຍົາໄວ, ແຕ່ໂດດເດັ່ນ ແລະອັດສະລິ ຍະແທ້ທຽບກັບຜົນງານ. 24 ປີແຫ່ງການຄອງບັນລັງ ແມ່ນ 24 ປີທີ່ເຕັມໄປດ້ວຍວິລະກຳ ແລະ ຜົນງານອັນລ້ຳເລີດ; ປະເທດຊາດ ຄົງຄວາມເປັນເອກະລາດຢ່າງໝັ້ນຄົງ ຕໍ່ໜ້າສັດຕູທີ່ເຂັ້ມແຂງ, ແລະມີຄວາມຈະເລີນຮຸ່ງເຮືອງ ທັງທາງດ້ານວັດຖຸ ແລະຈິດໃຈ. ຜົນການປະສານສົມທົບອຳນາດ ປາລະມີ ແລະພະປັຊຊາສາມາດສ່ອນພະອົງ ກັບມະຕິຂອງລາຊະນິນຕິ ໃນການປົກຄອງແລະສ້າງສາ ປະເທດຂອງພະອົງໄດ້ເປັນແວ່ນແຍງສະທ້ອນໃຫ້ພວກເຮົາ ຄວນໄດ້ສຶກສາ ຈະເລີນຮອຍຕາມ. ພະ ເຈົ້າໄຊເສດຖາທິລາດ ເປັນກະສັດນັກຮົບທີ່ຈົງຮັກພັກດີຕໍ່ຊາດຕໍ່ປະຊາຊົນ. ຜ່ານວຽກງານການເຄື່ອນ ໄຫວລາຊະການບ້ານເມືອງ ໃນລັດຊະສະໄໝຂອງພະອົງ, ເຮົາເຫັນວ່າ ຄວາມຜິດພາດຂອງອຳນາດ ລາຊະນິນຕິອັນເກີດພາຍໃນ, ແມ່ນແຕ່ການຫວັງຍຶດອຳນາດ ຖ້າຮູ້ກັບຕົວ, ພະອົງ ກໍຈະຊົງອະໄພ ໂທດ ແລະຍັງກ້ານອບໝາຍໜ້າວຽກ ເຖິງວ່າອາດຫລຸດຕຳແໜ່ງເດີມແດ່. ຄວາມເບົາໃຈໃນດ້ານນີ້ ອາດເປັນສ່ອນແລະມີສ່ອນໃຫ້ພະອົງເພີ່ຕົວ.ຊີວິດອັນມີຄວາມໝາຍ ແລະໜ້າຈະຢູ່ຍືນຍາວສ້າງຄວາມ ຮັ່ງມີເຂັ້ມແຂງ ແລະວິຈິດພິດສະດານແກ່ປະເທດຊາດບ້ານເມືອງໃຫ້ຫລາຍກວ່າທີ່ເປັນຢູ່ຂອງພະເຈົ້າ

ໄຊເສດຖາທິລາດນັ້ນ, ອີງຕາມ"ພົງສາວະດານລາວ"ກະຊວງສຶກສາທິການ ສະບັບພິມ ພສ. 2500, ໄດ້ຈົບລົງດ້ວຍນ້ຳມືຂອງສັດຕູພາຍໃນທີ່ໂງ່ຈ້າ ເຕັມດ້ວຍໂລພະຕັນຫາຄວາມອາຄາດບາດໝາງໃນ ອັນບໍ່ສົມເຫດສົມຜົນ.ຄາດຕະກອນບ້າຍົດຄົນນີ້ ຕັ້ງຫາກແມ່ນຄາດຕະກອນຜານຊາດທີ່ແທ້ຈິງ ເພາະ ພາຍຫລັງສຳເຫລັດແຜນການ ກໍບໍ່ໄດ້ສ້າງປະໂຫຍດຫຍັງ ແກ່ຊາດບ້ານເມືອງ ແລະໃນທີ່ສຸດ, ເຂົາ ກໍເຖິງແກ່ຄວາມຈິບຫາຍວາຍວອດ ຍ້ອນກຳທີ່ເຂົາກໍ່.

ເຈົ້າໄຊເສດຖາທິລາດ ຄອງຄວາມເປັນພະມະຫາກະສັດຢູ່24ປີ, ໄດ້ສິ້ນພະຊົນ ຄສ. 1653 ເມື່ອພະຊົນມາຍຸໄດ້ 38 ພັນສາ, ເປັນການສູນເສຍວີລະບຸລຸດທີ່ບໍ່ຄວນເປັນ. ພະອົງສິ້ນພະຊົນດ້ວຍ ນ້ຳມືຂອງພະຍານະຄອນທີ່ຄຸງດຂົ່ມຍ້ອນບໍ່ໄດ້ຄຳຊົ່ມແລະຕຳແໜ່ງສົມໃຈໃນວົງລາຊະການ(ອັນເນື່ອງ ມາຈາກມີຄວາມສາມາດຕ່ຳ ໃນການບໍລິຫານວຸງກບ້ານການເມືອງ ແຕ່ຄວາມທະເຍີທະຍານຢາກເປັນ ໃຫຍ່ພັດສູງ). ພະຍານະຄອນ[3] ຈຶ່ງໄດ້ເປັນໂຕການຫາເຫດ ໂດຍທຳຕົວເປັນຊະນວນສ້າງຄວາມ ເປັນສັດຕູລະຫວ່າງເມືອງອົງການ (ຂະເມນ?) ກັບອານາຈັກລ້ານຊ້າງ (ພະເຈົ້າເສດຖາ) ແລ້ວທັບ ພະຍານະຄອນ ກໍສະກັດລັດຕິທັບຂອງພະເຈົ້າເສດຖາທິລາດໂດຍບໍ່ຮູ້ສຶກຕົວ ໃນຂະນະເດີນທັບໄປ ປາບສັດຕູ.

ເຖິງສົມເດັດພະໄຊເສດຖາມະຫາລາດ ໄດ້ຈາກພວກເຮົາໄປເປັນເວລາດົນນານແລ້ວ, ແຕ່ ກຸງດສັກສີ ແລະຊື່ສຽງຮຸ່ງນາມຂອງພະອົງຍັງຝັງແໜ້ນ ແລະຕິດພັນກັບນະຄອນຫລວງວຽງຈັນ ກັບ ອານາຈັກລາວລ້ານຊ້າງ ແລະກັບພວກເຮົາທຸກຄົນທີ່ມີເລືອດເນື້ອເຊື້ອໄຂເປັນລາວ ຕະຫລອດໄປ.

ເອກະສານປະກອບການຮຽບຮຽງ

1.) ພົງສາວະດານລາວ: ຫລວງພະບາງ, ວຽງຈັນ, ເມືອງພວນ ແລະ ຈຳປາສັກ: ANNALE DU LAOS: LUANGPRABANG VIENTIANE TRANNINH ET BASSAC, ACHEVE D'IMPRIMER SUR LES PRESS DE L'IMPRIMERIE D'EXTREME-ORIENT HANOI (TONKIN) EN JANVIER MCMXXVII

2.) *ພົງສາວະດານ*, ພ.ສ. 2500, ກະຊວງສຶກສາທິການ.

3.) ປະຫວັດສາດ ເມືອງອັດຕະປື, ສະບັບພຸດທະບັນດິດສະພາ, ວັດຫຼວງປາກເຊ.

4.) ສຳມະນາປະຫວັດສາດລາວ, 25 ກັນຍາ - 02 ຕຸລາ 1971, ກະຊວງສຶກສາທິການ

5.) *ຕຳນານພື້ນເມືອງຊຽງໃໝ່ ສະບັບ 700* ປີ, ພ.ສ. 2538, ສະຖາບັນລາຊະພັດຊຽງໃໝ່.

6.) ສະຫງວນ ໂຊຕິສຸຂະລັດ, *ປະຊຸມຕຳນານລານນາໄທ*, ພສ.2515, ພິສະນາຄະການພິມ,ກຸງເທບ

7.) ສົມໝາຍ ເປມຈິດ(ຊຳຮະ),*ຕຳນານສິບຫ້າລາຊະວົງ*, ສະຖາບັນວິໄຈສັງຄົມ ມະຫາວິທະຍາໄລຊຽງໃໝ່, ພ.ສ. 25406.)

8.) ໂຍຊິຍູກິ ມາຊູຮາລາ, ປະຫວັດສາດເສດຖະກິດຂອງລາຊະອານາຈັກລ້ານຊ້າງ, ພສ. 2546, ສິລະປະ ວັດທະນະທຳ ສະບັບພິເສດ, ສຳນັກພິມມະຕິຊົນ.

---

[3] ມະຫາຈັນ ອິນທຸພິລາດ ໃນປຶ້ມສຳມະນາປະຫວັດສາດລາວ ໜ. 81 ເຫັນວ່າ ອາດຮ່ວມມືກັບພະຍາແສນສຸລິນທຳ.

ยุทเพิ่น สะไหฆเธิา

ໂดย: ນິນ ลูภจัม

☼ ฮิ๎วอ่อนอ้วม เยิาวะลาด นวยมาย

สัภพะล้างสูง พิดสะวิ๋ง ฆายฝั่ง

ปิชาม้ำ เกิมภาย ละเมอ่าม

ฆูงคู่ถุ้ม ถองถ้อมถ่อยสะฎุม

เฮังซี่ *ไซเสดถาทิลาด* ล้ำ บันดาซาด เกงฆาม

ซาวมะถอมพูม พ่ำภะเสิม ฆายธ้อม

จอบเมื่อสิงถามถ้าม ปะจิมมามมอมมอด

ยุดทะสาดถ้อม ถะเมิมท้า แก่นแขง

ยุดทะสิมซ้อม สะทัดสอด สูมมาม

ทังเล่าป๋อแปงปับ เผ่าพัน พิงเฮื๊อ

เป็นที่ลือชั้น มะถอมลาว เฮังซี่ ปางนั้น

เธ็องเธื่อเป็นเอกเธื้อง สะเหิอมท้าม ผ่านมะถอม

(พะอิง) ฮิงพะลิชิบไว้ สามสี่ พายลุน

ดินดอมลาว เผ่าลาว ถะหฆอมตู้ม

ธักร่วมธิงชุมเฮื๊อ เจิอจูม ไว้ซี่

ไซยะเสดถุ้ม แดนด้าว เพื่อลาว *ซอบแล้ว*

สันชาดชั้น เฮังซี่ สะกุมแมว ลาวเอ๊ย

ถวมเต้าตองตาดู ให้ธุ่งหวม เห้มแจ้ง

บันพะชินลาวแผ้ว ผัดเมือง ก้ามกุ่ง มาแล้ว

ชุมสำ*เธ็าสืบเฮื๊อ* ชินอมแล้ง ล่ำดาย *ซอบบ๋ำ*

(30/10/2010)

ພາສາ ແລະໜັງສື

ໂດຍ ບຸນເລີດ ແສງສຸລິນ

1 ຄຳວ່າ "ໜັງສື"

ໂດຍທົ່ວໄປ, ການຮຽນຮູ້ວິຊາສາດຕ່າງໆໃນສັງຄົມລາວສະໄໝບູຮານ ມັກເລີ່ມຕົ້ນດ້ວຍການ "ຮຽນໜັງສື" ແລະຈຸດເລັ່ງກໍມີລັກສະນະແນໃສ່ໃຫ້ "ອ່ານໄດ້ຈີ່ຫຼາຍ". ເວົ້າແນວໜຶ່ງ, ການຮຽນໜັງສືໃນຄາວບູຮານກໍມີລັກສະນະສະເພາະເດັ່ນສົມຄວນຄື ບໍ່ໄດ້ຮຽນອ່ານເປັນແຕ່ລະຕົວອັກສອນ; ແຕ່ຮຽນອ່ານເປັນແຕ່ລະຜູກ ຫຼືເປັນແຕ່ລະເລື່ອງເລີຍໂລດ. ຖ້າເລື່ອງທີ່ຮຽນອ່ານຈານດ້ວຍຕົວອັກສອນລາວກໍເວົ້າວ່າ "ຮຽນໜັງສືລາວ"; ຖ້າຈານດ້ວຍຕົວອັກສອນທຳກໍເວົ້າວ່າ "ຮຽນໜັງສືທຳ"; ຖ້າຈານດ້ວຍຕົວອັກສອນຂອມກໍເວົ້າວ່າ "ຮຽນໜັງສືຂອມ" ແລະອື່ນໆ. ສະພາບດັ່ງກ່າວນີ້ຄົງເປັນສາເຫດໜຶ່ງທີ່ເອື້ອອຳນວຍໃຫ້ຄວາມສຳນຶກຕໍ່ຄວາມໝາຍຂອງ "ໜັງສື" ກັບ "ພາສາ" ຫຍັບເຂົ້າໃກ້ກັນ ເຊິ່ງບໍ່ສະເພາະແຕ່ຜູ້ຮຽນເທົ່ານັ້ນ ຫາກຍັງມີລັກສະນະທົ່ວສັງຄົມນຳດ້ວຍ.

ໃນດ້ານອື່ນ, "ໜັງສື" ຫຼື "ຕົວອັກສອນ" ແມ່ນສິ່ງທີ່ຕ້ອງຮຽນ-ເຝິກຫັດແບບເປັນຂັ້ນຕອນ ເຊິ່ງຜູ້ຮຽນຈຳຕ້ອງໄດ້ດຳເນີນຕາມຢ່າງມີສະຕິ. ຫາກບໍ່ດັ່ງນັ້ນ, ຜູ້ຮຽນກໍຈະຖືກຕຳໜິຕິຕຽນວ່າ ເປັນສິດທີ່ບໍ່ຢູ່ໃນໂອວາດ ອັນເປັນການເສີມຕື່ມຄ່ານິຍົມທາງສັງຄົມຕໍ່ຂະບວນວິວັດແຫ່ງການຮຽນຮູ້ວ່າ ເປັນສິ່ງທີ່ມີຄວາມຫຍຸ້ງຍາກສັບສົນ-ມີໜ້ອຍຄົນເຮັດໄດ້. ຈາກຈຸດນີ້, "ການຮູ້ໜັງສື" ຫຼືເວົ້າໃຫ້ແຈ້ງກວ່ານີ້ແມ່ນ "ການອ່ານອອກຂຽນໄດ້" ຈຶ່ງຄ່ອຍໆພອກພູນຄູນສ້າງຄວາມໝາຍໃຫ້ນັບມື້ນັບກວ້າງອອກ. ນີ້ໝາຍຄວາມວ່າ ຮູ້ອ່ານຮູ້ຂຽນໜັງສືລາວ ກໍຖືວ່າ ຮູ້ພາສາລາວ; ຮູ້ອ່ານຮູ້ຂຽນໜັງສືຂອມກໍຖືວ່າ ຮູ້ພາສາຂອມ ແລະອື່ນໆ. ຄວາມເຂົ້າໃຈຕໍ່ຄວາມໝາຍຂອງ "ພາສາ" ກັບ "ໜັງສື" ຈຶ່ງສັບປົນ-ເຈືອລະເມືອກັນຢູ່ແບບແຍກບໍ່ອອກ.

ຕາມຄວາມເປັນຈິງ, ກ່ອນສະຕະວັດທີ XX, ທິດສະດີທາງພາສາສາດບໍ່ທັນໄດ້ຮັບການເຜີຍແຜ່ຢ່າງແຂງແຮງຢູ່ໃນລາວ. ຮອດເຄິ່ງຕົ້ນຂອງສະຕະວັດດັ່ງກ່າວ ຈຶ່ງມີການຄົ້ນຄວ້າ, ຮຽບຮຽງ ແລະພິມເຜີຍແຜ່ຫຼັກໄວຍາກອນລາວແບບມູນເຊື້ອ. ເຖິງປານນັ້ນກໍຕາມ, ທິດສະດີທາງພາສາສາດກໍຍັງບໍ່ທັນໄດ້ຖືກນຳໃຊ້ເຂົ້າໃນການຄົ້ນຄວ້າພາສາລາວຢ່າງເປັນກິດຈະລັກສະນະ ຈົນກວ່າມາຮອດເຄິ່ງທ້າຍຂອງສະຕະວັດດຽວກັນ. ບົດຄົ້ນຄວ້າທີ່ໃສ່ຫົວຂໍ້ວ່າ "ຄົ້ນຄວ້າພາສາລາວ" ຂອງ ສຸລັງ ເດດວົງສາ ແລະ ຄະນະ (1972) ຖືເປັນບົດໜຶ່ງທີ່ເບິ່ງພາສາລາວຕາມແນວພາສາສາດ. ບົດດັ່ງກ່າວນີ້, ເຖິງວ່າຍັງມີຂອບເຂດຈຳກັດ ແຕ່ກໍກວມເອົາຄົບທຸກບັນຫາໃນຫຼັກພາສາຄື ອັກຂະຫຼະ (ສຽງ), ວັດຈະນາ (ຄຳສັບ) ແລະວາກະຍະສຳພັນ (ລະບຽບຄຳ).

ພາສາສາດສະໄໝໃໝ່ຖືວ່າ ເມື່ອເວົ້າເຖິງພາສາຕ້ອງເວົ້າເຖິງ "ພາສາເປັນຄວາມ" ຫຼື "ສຽງໃນພາສາ" ເພາະມີແຕ່ຮູ້ "ສຽງ" ແລະ "ລະບົບສຽງ" ໃນພາສາຢ່າງລະອຽດ ຈຶ່ງສາມາດກຳນົດເຄື່ອງໝາຍແທນສຽງຕ່າງໆນັ້ນໄດ້. ໃນຕົວຈິງ, ມາຮອດປັດຈຸບັນນີ້ກໍຍັງມີຫຼາຍພາສາໃນໂລກ ທີ່ຍັງບໍ່ທັນມີເຄື່ອງໝາຍແທນສຽງ. ຮູບແລະເຄື່ອງໝາຍຕ່າງໆທີ່ຖືກກຳນົດ ຫຼືປະດິດຂຶ້ນມາເພື່ອໃຊ້ແທນສຽງ ໂດຍການສຳຜັດດ້ວຍຕາ ເອີ້ນວ່າ "ໜັງສື" ຫຼື "ຕົວອັກສອນ".

2 ຄວາມເປັນມາຂອງໜັງສືລາວ

ພາສາລາວແມ່ນພາສາໜຶ່ງທີ່ມີໜັງສືສະເພາະເປັນຂອງຕົນເອງມາແຕ່ເທິງນານ; ແຕ່ຜູ້ທີ່ໃຫ້ກຳເນີດ ແລະວັນເວລາແຫ່ງການກຳເນີດທີ່ແນ່ນອນ ຍັງບໍ່ທັນມີຫຼັກຖານຢືນຢັນຄັກແນ່. ເຖິງປານນັ້ນກໍຕາມ, ບັນຫາດັ່ງກ່າວກໍຈະບໍ່ໄດ້ຖືກນຳມາສະເໜີໃນທີ່ນີ້ເຊັ່ນກັນ ແຕ່ຈະຖືກເວົ້າເຖິງໃນລັກສະນະພາດກ່າຍຫຼາຍກວ່າລົງເລິກບັນຫາ. ທັງນີ້ກໍເພາະເຫັນວ່າ ໃນສະພາບ-ເງື່ອນໄຂປັດຈຸບັນ ບັນຫາດັ່ງກ່າວມີລັກສະນະເຫຼືອວິໄສ. ຍ້ອນແນວນັ້ນ, ການສະເໜີຂອງບົດນີ້ຈຶ່ງເລັ່ງໃສ່ ສິ່ງຊຸກຍູ້ ຫຼືຄວາມຮຽກຮ້ອງຕ້ອງການເພື່ອໃຫ້ເກີດມີການປະດິດ ແລະນຳໃຊ້ໜັງສືເປັນຕົ້ນຕໍ.

ໃນເວລາປາກົດຕົວທຳອິດ, ສັງຄົມລາວກໍຄົງມີລັກສະນະຄ້າຍຄືກັບສັງຄົມອື່ນໆຢູ່ບ່ອນວ່າ ຄົງບໍ່ທັນມີການປະດິດໜັງສືເພື່ອບັນທຶກຄວາມເປັນໄປຕ່າງໆໄດ້ເທື່ອ. ເມື່ອສັງຄົມລາວຂະຫຍາຍຕົວຂຶ້ນສູ່ລະດັບໜຶ່ງ, ລະດັບທີ່ມີການແບ່ງງານໃນສັງຄົມຂັ້ນປະຖົມປະຖານ, ຄວາມຕ້ອງການໃນການບັນທຶກຄວາມເປັນໄປຕ່າງໆຍ່ອມເກີດມີ. ເວົ້າແນວໜຶ່ງ, ເມື່ອສັງຄົມຂະຫຍາຍຕົວຮອດລະດັບການແບ່ງງານໃນສັງຄົມ, ການເກັບທ້ອນຜົນຜະລິດປະເພດຕ່າງໆເຂົ້າຄັງຫຼວງຍ່ອມເກີດມີ. ໃນວິວັກການດັ່ງກ່າວນີ້, ຄົນລາວຄາວນັ້ນຄົງມີມີທີການໃດໜຶ່ງເພື່ອແຕ້ມ-ຈົດ; ຢ່າງໜ້ອຍກໍຄົງໃຊ້ວັດຖຸໃດໜຶ່ງເປັນເຄື່ອງໝາຍຫຼືເປັນຕົວແທນໃຫ້ແກ່ປະເພດສິ່ງເກັບທ້ອນ ແລະຈຳນວນຂອງສິ່ງເຫຼົ່ານັ້ນ. ບໍ່ດັ່ງນັ້ນ, ການຄຸ້ມຄອງບໍລິຫານສັງຄົມຄົງເປັນໄປໄດ້ຢ່າງລຳບາກ. ຫາກເປັນໄປແນວນັ້ນ, ຮູບຮ່າງຂອງວັດຖຸທີ່ໃຊ້ ແລະຮອຍແຕ້ມ-ຈົດຕ່າງໆນັ້ນກໍຄວນໄດ້ຖືວ່າ ເປັນໜັງສືລາວແບບປະຖົມປະຖານ.

ບັນຫາທີ່ຍົກຂຶ້ນຂ້າງເທິງນີ້ເປັນບັນຫາທີ່ນັກວິຊາການລະໄວ້ ຫຼືບໍ່ເວົ້າເຖິງ ຍ້ອນເຫດຜົນໃດໜຶ່ງ ແຕ່ກໍຖືວ່າ ເປັນບັນຫາທີ່ເປັນຕາສົນໃຈບໍ່ໜ້ອຍ. ກ່ອນອື່ນໝົດ, ຫາກມີຫຼັກຖານຢັ້ງຢືນວ່າ ກ່ອນການເຂົ້າມາເຖິງສັງຄົມລາວຂອງອັດທະນະທຳຈີນ ແລະອິນເດຍ, ສັງຄົມເມືອງຂອງ "ອ້າຍລາວ" ມີການແຕ້ມ-ຈົດຢ່າງຄັກແນ່ ບັນຫາກໍຈະແຈ່ມແຈ້ງຂຶ້ນ ຫຼືແຍກເປັນສອງບັນຫາ. ບັນຫາໜຶ່ງເຊິ່ງເປັນບັນຫາທີ່ນັກວິຊາການຊອກຄົ້ນແມ່ນ ເຄົ້າກຳເນີດຂອງໜັງສືລາວປັດຈຸບັນ ແລະອີກບັນຫາໜຶ່ງເຊິ່ງຖືວ່າເປັນບັນຫາທີ່ນັກວິຊາການລະໄວ້ແມ່ນ ໜັງສືລາວແບບປະຖົມປະຖານ. ແນວໃດກໍຕາມ, ໃນປັດຈຸບັນນີ້ເງື່ອນໄຂຊອກຄົ້ນບັນຫາທີສອງຍັງພົບຄວາມຫຍຸ້ງຍາກຫຼາຍດ້ານ ເຊິ່ງອັນຕົ້ນຕໍກໍແມ່ນດ້ານພູມີສາດ. ຍ້ອນແນວນັ້ນ, ນັກວິຊາການສ່ວນຫຼາຍຈຶ່ງດຳເນີນການຊອກຄົ້ນສະເພາະແຕ່ບັນຫາທີໜຶ່ງ ແລະລົງຄວາມເຫັນດັ່ງທີ່ໄດ້ສະເໜີມາແລ້ວ.

ໜັງສືລາວປັດຈຸບັນໄດ້ຮູບແບບມາຈາກໜັງສືສັນສະກິດ ເຊິ່ງແຜ່ເຂົ້າຮອດສັງຄົມລາວພ້ອມກັບສາສະໜາພາມໃນກາງສະຕະວັດທີໜຶ່ງ. ໃນໄລຍະດຽວກັນນີ້, ອະລະຍະທຳດັ່ງກ່າວກໍແຜ່ເຂົ້າຮອດດິນແດນອັນເປັນລາຊະອານາຈັກກຳປູເຈຍປັດຈຸບັນເຊັ່ນດຽວກັນ. ໜັງສືສັນສະກິດໄດ້ເປັນບ່ອນອີງ ຫຼື ຕົ້ນແບບໃຫ້ແກ່ການກຳເນີດໜັງສືຂອມ ແລະໜັງສືລາວບູຮານໃນໄລຍະຕໍ່ມາ. ໃນເບື້ອງຕົ້ນ, ໜັງສືທັງສອງປະເພດນີ້ຄົງມີຮູບຄ້າຍຄືກັບໜັງສືສັນສະກິດຫຼາຍສົມຄວນ. ສະເພາະໜັງສືລາວ, ເຖິງແມ່ນວ່າເວລາໄດ້ລ່ວງເລີຍໄປແລ້ວເກືອບສອງພັນປີ, ໜັງສືລາວບາງໂຕກໍຍັງຄົງມີເຄົ້າໂຄງຄ້າຍຄືກັບໜັງສືສັນສະກິດຢູ່.

ໜັງສືລາວປັດຈຸບັນ			ໜັງສືສັນສະກິດປັດຈຸບັນ		
ພະຍັນຊະນະ	ສະຫຼະ	ປະກອບຄຳ	ພະຍັນຊະນະ	ສະຫຼະ	ປະກອບຄຳ
ກ	◌ະ	ກ	क	आ - ा	का
	◌ິ	ກິ		इ - ि	कि
ມ	ເ◌	ເມ	म	ए - े	मे
	ເ◌ົາ	ເມົາ		औ - ौ	मौ
ລ	◌ຸ	ລຸ	ल	उ - ु	लु
	ໂ◌	ໂລ		ओ - ो	लो

3 ໜັງສືສະຫຼະ

3.1 ຮູບແລະສຽງສະຫຼະ

ໜັງສືສະຫຼະກໍໄດ້ແກ່ເຄື່ອງໝາຍ ຫຼືສິ່ງທີ່ເປັນຕົວແທນໃຫ້ແກ່ສຽງສະຫຼະ. ພາສາລາວມີໜັງສືສະຫຼະທັງໝົດ 28 ຮູບ ເຊິ່ງເປັນຕົວແທນໃຫ້ແກ່ສຽງສະຫຼະທັງໝົດ 27 ສຽງ. ສິ່ງສຳຄັນແມ່ນສຽງອ່ານໜັງສືສະຫຼະເກືອບທຸກສຽງຄືປະມານ 22/28 (78%) ບົ່ງຊີ້ຕົວຈິງໃດໜຶ່ງ. ເວລາຂຽນ, ໜັງສືສະຫຼະທັງໝົດກຳນົດໃຫ້ມີເຄື່ອງໝາຍຕີນກາ (x) ກຳກັບໄວ້ ເພື່ອເປັນສິ່ງໝາຍບອກທີ່ຕັ້ງຂອງພະຍັນຊະນະຕົ້ນພະຍາງ ຫຼືຕົວແກນ. ສະເພາະຢູ່ໃນບົດນີ້, ເຄື່ອງໝາຍຂີດໜ້າ (-) ຈະໄດ້ຖືກນຳໃຊ້ກຳກັບຕື່ມອີກເພື່ອເປັນສິ່ງໝາຍບອກທີ່ຕັ້ງຂອງພະຍັນຊະນະທ້າຍພະຍາງ ຫຼືຕົວສະກິດ. ສຳລັບສຽງອ່ານ, ຢູ່ຕາມຕຳລາຫຼັກພາສາລາວສ່ວນຫຼາຍ ມີການນຳໃຊ້ຮູບພະຍັນຊະນະ “ອ” ກຳກັບແທນບ່ອນຕີນກາ. ສ່ວນບົດນີ້ຈະນຳໃຊ້ສັດທະອັກສອນເປັນສຽງອ່ານ.

ສຽງ	ຮູບ	ມີຕົວສະກົດ
a	xະ	ັx -
i	ິx	ິx -
ɯ	ຶx	ຶx -
u	ຸx	ຸx -
e	ເxະ	ເັx -
ɛ	ແxะ	ແັx -
o	ໂxะ	ົx - / ໂັx -
ɔ	ເxาะ	ັxอ -
ə	ເx	ເx -
ie	ເัxย	ັxj -
uo	ົxอะ	ັxอ -
ɯə	ເ ຶxอ	ເ ຶxอ -

ສຽງ	ຮູບ	ມີຕົວສະກົດ
a:	xา	xา -
i:	ีx	ีx -
i:	ืx	ืx -
u:	ูx	ูx -
e:	เx	เx -
ɛ:	แx	แx -
o:	โx	โx -
ɔ:	ำx	xอ -
ə:	เิx	เิx -
i:e	เxย	xj -
u:o	็xอ	xอ -
ɯ:ə	เ ืxอ	เ ืxอ -

ສຽງ	ຮູບ
ai	ไx
	ใx
au	เ ็xา
am	ำxา

3.2 ການຈັດແບ່ງສະຫຼະ

ການຈັດແບ່ງສະຫຼະມີຫຼາຍວິທີຈັດ ເພາະຂຶ້ນກັບບ່ອນອີງ ແລະຈຸດປະສົງໃນການຈັດແບ່ງ. ໃນບົດນີ້, ຈະອີງໃສ່ໄລຍະຜັນສຽງ, ລັກສະນະສຽງ, ຖານກອນ ແລະຮູບເພື່ອຈັດແບ່ງ.

3.2.1 ອີງໃສ່ໄລຍະຜັນສຽງ

ວິທີນີ້ແມ່ນເອົາໄລະຍະເວລາຂອງສຽງສະຫຼະແຕ່ລະຕົວ ທີ່ຖືກຜະລິດອອກມານັ້ນຄົງຕົວຢູ່ເປັນເກນ. ໝາຍຄວາມວ່າ ສຽງສະຫຼະທີ່ຖືກຜະລິດອອກມານັ້ນ ຈຳນວນໜຶ່ງກໍຄົງຕົວຢູ່ບໍ່ດົນ ແຕ່ຈຳນວນໜຶ່ງກໍຄົງຕົວຢູ່ດົນ. ຈຳພວກທີ່ຄົງຕົວຢູ່ບໍ່ດົນເອີ້ນວ່າ "ສະຫຼະສຽງສັ້ນ", ຈຳພວກທີ່ຄົງຕົວຢູ່ດົນເອີ້ນວ່າ "ສະຫຼະສຽງຍາວ". ຫາກອີງຕາມວິທີນີ້, ສະຫຼະໃນພາສາລາວກໍມີສອງຈຳພວກຄື ສະຫຼະສຽງສັ້ນ ແລະ ສະຫຼະສຽງຍາວ.

ສຽງສັ້ນ	xะ	ิx	ึx	ุx	เxะ	แxะ	โxะ	เxาะ	เิx	เัxย	็xอะ	เ ืxอ	ไx	ใx	เ ็xา	ำxา
	a	i	ɯ	u	e	ɛ	o	ɔ	ə	ie	uo	ɯə	ai		au	am
ສຽງສັ້ນ	xา	ีx	ืx	ูx	เx	แx	โx	ำx	เิx	เxย	็xอ	เ ืxอ				
	a:	i:	ɯ:	u:	e:	ɛ:	o:	ɔ:	ə:	i:e	u:o	ɯ:ə				

2.2.2 ອີງໃສ່ລັກສະນະສຽງ

ວິທີນີ້ແມ່ນເອົາລັກສະນະຂອງສຽງສະຫຼະແຕ່ລ:ະຕົວ ທີ່ຖືກຜະລິດອອກມານັ້ນເປັນແນວໃດເປັນເກນ. ໝາຍຄວາມວ່າ ສຽງສະຫຼະທີ່ຖືກຜະລິດອອກມານັ້ນ ເປັນສຽງດ່ຽວ (ມີແຕ່ສຽງດຽວ) ຫຼືສຽງປົນ (ມີຫຼາຍສຽງປົນກັນຢູ່). ຈຳພວກທີ່ເປັນສຽງດ່ຽວເອີ້ນວ່າ "ສະຫຼະປ່ຽວ", ຈຳພວກທີ່ເປັນສຽງປົນເອີ້ນວ່າ

"ສະຫຼະປະສົມ". ນອກຈາກຈຳພວກນີ້ແລ້ວ ຍັງມີອີກຈຳພວກໜຶ່ງ ເຊິ່ງສຽງທີ່ຖືກຜະລິດອອກມານັ້ນມີສຽງພະຍັນຊະນະ ຫຼືສຽງພະຍັນຊະນະເຄິ່ງສະຫຼະປົນຢູ່ນຳ. ຕາມຕຳລາຫຼັກພາສາລາວສ່ວນຫຼາຍ, ສະຫຼະຈຳພວກນີ້ເອີ້ນວ່າ "ສະຫຼະພິເສດ". ແນວໃດກໍຕາມ, ວິທີນີ້ກໍມີຂໍ້ຈຳກັດຫຼາຍສົມຄວນ ເພາະຕ້ອງໄດ້ໃຊ້ເຄື່ອງມືທີ່ທັນສະໄໝເຂົ້າຊ່ວຍຈຶ່ງຈະຮູ້ໄດ້. ຫາກອີງຕາມວິທີນີ້, ສະຫຼະໃນພາສາລາວກໍມີສາມຈຳພວກຄື ສະຫຼະປ່ຽວ, ສະຫຼະປະສົມ ແລະສະຫຼະພິເສດ.

ປ່ຽວ	◌ະ	◌າ	◌ິ	◌ີ	◌ຶ	◌ື	◌ຸ	◌ູ	ເ◌ະ	ເ◌	ແ◌ະ	ແ◌	ໂ◌ະ	ໂ◌	ເ◌າະ	◌ໍ	ເ◌ີ	ເ◌ີ
	a	a:	i	i:	ɯ	ɯ:	u	u:	e	e:	ɛ	ɛ:	o	o:	ɔ	ɔ:	ə	ə:
ປະສົມ	ເ◌ັຍ		ເ◌ຍ		◌ົວ		◌ົວ		ເ◌ືອ		◌ືອ							
	ie		i:e		uo		u:o		ɯə		ɯ:ə							
ພິເສດ	ໄ◌		ໃ◌		◌ຳ		◌ໍ◌											
	ai				au		am											

2.2.3 ອີງໃສ່ຖານກອບ

ວິທີນີ້ແມ່ນເອົາຈຸດທີ່ຜະລິດສຽງສະຫຼະແຕ່ລະຕົວອອກມານັ້ນເປັນເກນ. ເວົ້າແນວໜຶ່ງ, ວິທີນີ້ແມ່ນອີງໃສ່ພື້ນຖານດ້ານສະລີລະສາດຂອງອັກຂະຫຼະເປັນເກນການຈັດແບ່ງ. ໝາຍຄວາມວ່າ ແມ່ນອະໄຍະວະສ່ວນໃດເປັນບ່ອນຕິກແຕ່ງອາກາດທີ່ຖືກສົ່ງອອກມາຈາກປອດ ໃຫ້ເກີດເປັນສຽງສະຫຼະແຕ່ລະຕົວ. ຜ່ານຈາກການສັງເກດ-ທົດລອງ, ເອວາຜັນສຽງສະຫຼະ, ມີອະໄວຍະວະທີ່ເຄື່ອນເໜັ້ງແບບປະສົມກົມກືນກັນທີ່ສຸດສາມສ່ວນ: ລີ້ນ-ສົບ-ປາກ. ລີ້ນກະດົກຂຶ້ນສູງ ຫຼືລົງຕ່ຳສ່ຳໃດ ຈະມີລັກສະນະກົງກັນຂ້າມກັບລະດັບອ້າຂອງປາກ; ຮູບຊົງຂອງສົບຈ້ອມ ຫຼືບໍ່ຈ້ອມ ຈະບົ່ງບອກທີ່ຕັ້ງຂອງສະຫຼະໃນແຕ່ລະຍ່ານຕາມລວງຍາວຂອງລີ້ນ.

ແຜນວາດສະແດງທີ່ຕັ້ງສະຫຼະມາຕະຖານສາກົນ



ແຜນວາດສະແດງທີ່ຕັ້ງສະຫຼະລາວ



ແຜນວາດຊ້າຍມືເທິງນີ້ສະແດງເຖິງລະດັບການກະດົກຂອງລີ້ນ ແລະທີ່ຕັ້ງສະຫຼະມາຕະຖານສາກົນຊຸດທີໜຶ່ງ (Primary Cardinal Vowels). ໃນແຜນວາດດັ່ງກ່າວ, ມີເສັ້ນຊື່ນອນ 4 ເສັ້ນຕັ້ງສາກກັບເສັ້ນຊື່ຕັ້ງທີ່ຢູ່ທາງຂວາມື. ນັບແຕ່ເທິງລົງ, ເສັ້ນທີໜຶ່ງເອີ້ນວ່າ ເສັ້ນແຄບສຸດ ຫຼືເສັ້ນອັດ; ເສັ້ນທີສອງເອີ້ນວ່າ ເສັ້ນແຄບແດ່ ຫຼືເສັ້ນອ່າວແຄບ; ເສັ້ນທີສາມເອີ້ນວ່າ ເສັ້ນກວ້າງແດ່ ຫຼືເສັ້ນອ່າວກວ້າງ; ແລະ

ເສັ້ນທີສີ່ເອີ້ນວ່າ ເສັ້ນກວ້າງສຸດ ຫຼືເສັ້ນເປີດ. ບໍລິເວນທີ່ຢູ່ລະຫວ່າງເສັ້ນທີໜຶ່ງກັບເສັ້ນທີສອງຖືເປັນ ບໍລິເວນສູງ; ບໍລິເວນທີ່ຢູ່ລະຫວ່າງເສັ້ນທີສອງກັບເສັ້ນທີສາມຖືເປັນ ບໍລິເວນກາງ; ແລະບໍລິເວນທີ່ຢູ່ ລະຫວ່າງເສັ້ນທີສາມກັບເສັ້ນທີສີ່ຖືເປັນ ບໍລິເວນຕ່ຳ (ສູງ-ກາງ-ຕ່ຳ).

ໃນແຜນວາດອັນດຽວກັນນີ້, ເບິ່ງຕາມລວງເສັ້ນຊື່ນອນແຕ່ຊ້າຍມືຫາຂວາມື, ບໍລິເວນທີ່ຢູ່ສ່ວນ ສິ້ນທາງຊ້າຍມືຖືເປັນ ບໍລິເວນໜ້າ; ບໍລິເວນທີ່ຢູ່ລະຫວ່າງສ່ວນສິ້ນທາງຊ້າຍມືກັບສ່ວນສິ້ນທາງຂວາມື ຖືເປັນ ບໍລິເວນກາງ; ແລະບໍລິເວນທີ່ຢູ່ສ່ວນສິ້ນທາງຂວາມືຖືເປັນ ບໍລິເວນຫຼັງ (ປາຍ-ກາງ-ກົກ). ຫາກ ອີງຕາມວິທີນີ້, ສະຫຼະໃນພາສາລາວກໍມີສາມຈຳພວກຄື ສະຫຼະລິ້ນ, ສະຫຼະປາກ ແລະສະຫຼະສີບ.

ກ) ສະຫຼະລິ້ນ: ສະຫຼະລິ້ນແມ່ນຊື່ກຸ່ມສະຫຼະທີ່ຖືກຕິກແຕ່ງ-ດັດຕ້ອມຢູ່ຕາມສ່ວນຕ່າງໆຂອງ ລິ້ນ ເຊິ່ງມີຢູ່ສາມສ່ວນ (ປາຍ-ກາງ-ກົກ). ສະເພາະພາສາລາວ, ສະຫຼະຖືກຕິກແຕ່ງ-ດັດຕ້ອມຢູ່ພຽງ ແຕ່ສອງສ່ວນເທົ່ານັ້ນຄື ພາກສ່ວນປາຍ ແລະພາກສ່ວນກົກ (ຄຳຮຸ່ງ ແສນມະນີ, 2002). ສະຫຼະທີ່ຖືກ ຕິກແຕ່ງ-ດັດຕ້ອມຢູ່ພາກສ່ວນປາຍລິ້ນເອີ້ນວ່າ ສະຫຼະໜ້າ; ຖືກຕິກແຕ່ງ-ດັດຕ້ອມຢູ່ພາກສ່ວນກົກລິ້ນ ເອີ້ນວ່າ ສະຫຼະຫຼັງ.

ໜ້າ	◌ິ	◌ີ	ເ◌ັຍ	ເ◌ຍ	ເ◌ະ	ເ◌	ແ◌ະ	ແ◌	◌ະ	◌າ					
	i	i:	ie	i:e	e	e:	ɛ	ɛ:	a	a:					
ຫຼັງ	◌ຶ	◌ື	◌ຸ	◌ູ	ເ◌ືອ	ເ◌ືອ	◌ົ◌ະ	◌ົ◌	ເ◌ິ	ເ◌ີ	ໂ◌ະ	ໂ◌	ເ◌າະ	◌໋	
	ɯ	ɯ:	u	u:	ɯə	ɯ:ə	uo	u:o	ə	ə:	o	o:	ɔ	ɔ:	

ຂ) ສະຫຼະປາກ: ສະຫຼະປາກແມ່ນຊື່ກຸ່ມສະຫຼະທີ່ຖືກຕິກແຕ່ງ-ດັດຕ້ອມເພີ່ມຕື່ມ ດ້ວຍລະດັບ ອ້າຂອງປາກ ເຊິ່ງມີຢູ່ສີ່ລະດັບ (ແຄບ-ອ່າວແຄບ-ອ່າວກວ້າງ-ກວ້າງ). ໃນພາສາລາວ, ມີສະຫຼະທີ່ຖືກ ຕິກແຕ່ງ-ດັດຕ້ອມເພີ່ມຕື່ມຢູ່ທຸກລະດັບ. ສະຫຼະທີ່ຖືກຕິກແຕ່ງ-ດັດຕ້ອມເພີ່ມຕື່ມຢູ່ຕາມລະດັບເສັ້ນຊື່ ນອນເທິງສຸດເອີ້ນວ່າ ສະຫຼະແຄບ; ຖືກຕິກແຕ່ງ-ດັດຕ້ອມເພີ່ມຕື່ມຢູ່ຕາມລະດັບເສັ້ນຊື່ນອນເສັ້ນທີ ສອງ (ຈາກເທິງສຸດ) ເອີ້ນວ່າ ສະຫຼະແຄບແດ່; ຖືກຕິກແຕ່ງ-ດັດຕ້ອມເພີ່ມຕື່ມຢູ່ຕາມລະດັບເສັ້ນຊື່ ນອນເສັ້ນທີສາມ (ຈາກເທິງສຸດ) ເອີ້ນວ່າ ສະຫຼະກວ້າງແດ່; ແລະຖືກຕິກແຕ່ງ-ດັດຕ້ອມເພີ່ມຕື່ມຢູ່ ຕາມລະດັບເສັ້ນຊື່ນອນເສັ້ນທີສີ່ (ຈາກເທິງສຸດ) ເອີ້ນວ່າ ສະຫຼະກວ້າງ.

ແຄບ	◌ິ	◌ີ	◌ຶ	◌ື	◌ຸ	◌ູ				
	i	i:	ɯ	ɯ:	u	u:				
ແຄບແດ່	ເ◌ະ	ເ◌	ເ◌ິ	ເ◌ີ	ໂ◌ະ	ໂ◌				
	e	e:	ə	ə:	o	o:				
ກວ້າງແດ່	ແ◌ະ	ແ◌	ເ◌າະ	◌໋						
	ɛ	ɛ:	ɔ	ɔ:						
ກວ້າງ	◌ະ	◌າ								
	a	a:								

ນອກຈາກສະຫຼະປ່ຽວເຫຼົ່ານີ້ແລ້ວ, ພາສາລາວ ຍັງມີສະຫຼະສອງສຽງ (ປະສົມ) ແບບເລື່ອນສຽງ ຈາກລະດັບແຄບຫາແຄບແດ່. ໃນເວລາຜັນສຽງ ສະຫຼະຈຳພວກນີ້, ໃຫ້ປາກເລີ່ມແຄບສຸດ ແລ້ວ ເລື່ອນລົງໜ້ອຍໜຶ່ງເທົ່ານັ້ນ.

ເ◌ັຍ	ເ◌ຍ	ເ◌ືອ	ເ◌ືອ	◌ົ◌ະ	◌ົ◌
ie	i:e	ɯə	ɯ:ə	uo	u:o

ຂ)ສະຫຼະສິບ: ສະຫຼະສິບແມ່ນຊື່ໝວດສະຫຼະທີ່ຖືກຕົກແຕ່ງເພີ່ມຕື່ມດ້ວຍວິທີການເຮັດໃຫ້ຮູບຊົງຂອງສິບຈ້ອມ ຫຼືບໍ່ຈ້ອມ. ສຽງສະຫຼະທີ່ຕົກແຕ່ງ-ດັດຕ້ອມຢູ່ຕາມສ່ວນຕ່າງໆຂອງລີ້ນແຕ່ລະລະດັບຍັງຖືກຈຳແນກດ້ວຍຮູບຊົງຂອງສິບຕື່ມອີກ. ຖ້າເຮັດໃຫ້ສິບຢູ່ໃນລັກສະນະປົກກະຕິ ຫຼືບໍ່ຈ້ອມ ກໍຈະໄດ້ສະຫຼະໜ້າໃນແຕ່ສະສ່ວນ ເຊິ່ງເອີ້ນວ່າ ສະຫຼະສິບບໍ່ມົນ; ແຕ່ຖ້າເຮັດໃຫ້ສິບຈ້ອມເຂົ້າຈາກລັກສະນະປົກກະຕິ ກໍຈະໄດ້ສະຫຼະຫຼັງໃນແຕ່ສະສ່ວນ ເຊິ່ງເອີ້ນວ່າ ສະຫຼະສິບມົນ. ສະເພາະພາສາລາວມີແຕ່ສະຫຼະທີ່ມີຖານກອນຢູ່ພາກສ່ວນກົກລີ້ນເທົ່ານັ້ນ ທີ່ມີການຕົກແຕ່ງ-ດັດຕ້ອມເພີ່ມຕື່ມດ້ວຍຮູບຊົງຂອງສິບ; ສ່ວນຈຳພວກທີ່ມີຖານກອນຢູ່ພາກສ່ວນປາຍລີ້ນບໍ່ມີ.

ສິບບໍ່ມົນ	◌ິ	◌ີ	ເ◌ັຍ	ເ◌ຍ	ເ◌ະ	ເ◌	ແ◌ະ	ແ◌	◌ະ	◌າ	◌ึ	◌ื	ເ◌ືອ	ເ◌ືອ	◌ິ	◌ີ
	i	i:	ie	i:e	e	e:	ɛ	ɛ:	a	a:	ɯ	ɯ:	ɯə	ɯ:ə	ə	ə:
ສິບມົນ	◌ຸ	◌ູ	◌ົວ	◌ົວ	ໂ◌ະ	ໂ◌	ເ◌າ	◌ໍ								
	u	u:	uo	u:o	o	o:	ɔ	ɔ:								

2.2.4 ອີງໃສ່ຮູບ

ວິທີນີ້ແມ່ນເອົາສັນຍະລັກ ຫຼືເຄື່ອງໝາຍທີ່ຖືກກຳນົດ ໃຫ້ເປັນຕົວແທນສຽງຂອງສະຫຼະແຕ່ລະສຽງເປັນເກນ. ໝາຍຄວາມວ່າ ສຽງສະຫຼະທີ່ຖືກຜະລິດອອກມານັ້ນ ມີຮູບຊຸ່ນເປັນແນວໃດ; ມີແຕ່ຮູບດຽວ-ສິ່ງດຽວ ຫຼືວ່າມີຫຼາຍຮູບ-ຫຼາຍສິ່ງ. ຈຳພວກທີ່ມີແຕ່ຮູບດຽວ-ສິ່ງດຽວເອີ້ນວ່າ "ສະຫຼະເດົ່າ/ສະຫຼະຮູບດຽວ", ຈຳພວກທີ່ມີຫຼາຍຮູບ-ຫຼາຍສິ່ງເອີ້ນວ່າ "ສະຫຼະໝູ່/ສະຫຼະຫຼາຍຮູບ". ກໍລະນີທີ່ມີຫຼາຍຮູບນີ້, ຕາມຕຳລາຫຼັກພາສາລາວສ່ວນຫຼາຍ, ເອີ້ນສະຫຼະຈຳພວກນີ້ເອີ້ນວ່າ "ສະຫຼະປະສົມ". ຫາກອີງຕາມວິທີນີ້, ສະຫຼະໃນພາສາລາວກໍມີແຕ່ສອງຈຳພວກຄື ສະຫຼະເດົ່າ (ຮູບດຽວ) ແລະສະຫຼະໝູ່ (ຫຼາຍຮູບ).

ຮູບດຽວ	◌ະ	◌າ	◌ິ	◌ີ	◌ຶ	◌ື	◌ຸ	◌ູ	ເ◌	ແ◌	ໂ◌	◌ໍ	ໄ◌	ໃ◌
	a	a:	i	i:	□	□:	u	u:	e:	ɛ:	ɛ	ɛ:	o	
ຫຼາຍຮູບ	ເ◌ະ	ແ◌ະ	ໂ◌ະ	ເ◌າະ	ເ◌ິ	ເ◌ີ	ເ◌ັຍ	ເ◌ຍ	◌ົວ◌ະ	◌ົວ	◌ືອ	◌ືອ	ເ◌ິາ	◌ໍາ
	e	ɛ	o	ɔ	ə	ə:	ia	i:a	uo	u:o	ɯ ə	ɯ:ə	au	am

ການຈັດແບ່ງຕາມຮູບມີລັກສະນະງ່າຍດາຍແນວໜຶ່ງຄື ໜັງສືສະຫຼະທັງໝົດ 28 ຮູບ ແບ່ງອອກເປັນສອງຈຳພວກ ແລະຈຳພວກລະ 14 ຮູບເທົ່າກັນ. ເຖິງປານນັ້ນກໍຕາມ, ອາດມີການຕັ້ງບັນຫາຂຶ້ນວ່າ ◌ິ, ◌ີ ແລະ ແ◌ ຄວນຈັດເຂົ້າໃນຈຳພວກຫຼາຍຮູບ ເພາະແຕ່ລະຮູບມີເຄື່ອງໝາຍສອງຢ່າງ. ຫາກເບິ່ງແຕ່ຮູບປັດຈຸບັນກໍອາດຕັ້ງບັນຫານີ້ໄດ້ ແຕ່ຖ້າເບິ່ງຄວາມເປັນມາຂອງຮູບສະຫຼະທັງສາມຮູບນີ້ ກໍມີອັນທີ່ເປັນຕາສົນໃຈຫຼາຍສົມຄວນ. ໃນເອກະສານບູຮານ, ມັກປາກົດເຫັນວິທີຊຸ່ນຮູບສະຫຼະດັ່ງກ່າວນີ້ເປັນຮູບດຽວ. ສະເພາະ ◌ິ ແລະ ◌ີ, ມັກມີການຈານແບບໃຫ້ສົ້ນໂຕທາງຫຼັງມ້ວນເຂົ້າໃນໂຕ ຫຼືບໍ່ກໍໃຫ້ຈ້ຳຢູ່ກາງຕິດກັບສົ້ນໂຕທາງໜ້າ; ທັງຍັງມີລັກສະນະບໍ່ຈຳແນກຮູບສຽງສັ້ນກັບສຽງຍາວ, ຈຳຕ້ອງອາໄສ

ບໍລິບົດເປັນໂຕຊ່ວຍ. ສ່ວນວ່າ ແx ມັກມີການຈານແບບໃຊ້ຮູບຂອງ ເx ແຕ່ຫັນການໄປທາງຫຼັງ. ນີ້ແມ່ນສິ່ງໜຶ່ງທີ່ໃຫ້ຈັດສະຫຼະດັ່ງກ່າວນີ້ເຂົ້າໃນຈຳພວກຮູບດ່ຽວ.



ແຖວສຸດທ້າຍ: ເຕັ້ນ ຈັບຫາງ**ດຶ**ງຈ່ອງ ຂ້າງກໍເລີຍຕ່າວໜ້າ ມາແທ້ວ່າຈີແທງ ບາກໍຊວາງ**ມື**ໄດ້~

ແຫຼ່ງຂໍ້ມູນ: ເລື່ອງທ້າວເຈັດໄຫ

ຈາກສ່ວນໜຶ່ງຂອງເລື່ອງທ້າວເຈັດໄຫທີ່ຍົກມານີ້, ຮູບຂອງ x̊ ຢູ່ໃນຄຳ “ດຶງ” ແລະຮູບຂອງ x̊ ຢູ່ໃນຄຳ “ມື” ບໍ່ແຕກຕ່າງກັນ; ຕ່າງກໍມ້ວນສິ້ນໂຕທາງຫຼັງເຂົ້າໃນໂຕໝົດ.

4 ໜັງສືພະຍັນຊະນະ

4.1 ຮູບແລະສຽງພະຍັນຊະນະ

ໜັງສືພະຍັນຊະນະກໍມີລັກສະນະຄ້າຍຄືກັບໜັງສືສະຫຼະຢູ່ບ່ອນວ່າ ເປັນເຄື່ອງໝາຍ ຫຼືສິ່ງທີ່ເປັນຕົວແທນໃຫ້ແກ່ສຽງພື້ນຂອງພະຍັນຊະນະ. ພາສາລາວມີໜັງສືພະຍັນຊະນະທັງໝົດ 32 ຮູບ ເຊິ່ງເປັນຕົວແທນໃຫ້ແກ່ໜ່ວຍສຽງພະຍັນຊະນະທັງໝົດ[1] 20 ໜ່ວຍ. ເວລາຂຽນ, ໜັງສືພະຍັນຊະນະທັງໝົດບໍ່ມີເຄື່ອງໝາຍໃດໆກຳກັບໄວ້. ສິ່ງທີ່ເປັນຕາສົນໃຈຫຼາຍກໍແມ່ນເວລາອ່ານ ເພາະວ່າຮູບໜັງສືພະຍັນຊະນະທຸກຕົວຖືກກຳນົດໃຫ້ເປັນແກນສຽງ (ຕົວແກນ) ຂອງພະຍາງທີ່ມີສຽງ [□:] ເປັນຈອມສຽງ. ເວົ້າແນວໜຶ່ງ, ສຽງອ່ານໜັງສືພະຍັນຊະນະແຕ່ລະຕົວແມ່ນຄືກັບສຽງອ່ານພະຍາງໜຶ່ງ. ຊ້ຳບໍ່ໜຳ, ສຽງອ່ານໜັງສືພະຍັນຊະນະເກືອບທຸກສຽງຄື 24/32 (70%) ບົ່ງຊີ້ຕົວຈິງໃດໜຶ່ງ. ແມ່ນວ່າຈະຫຼຸດສຽງອ່ານໜັງສືສະຫຼະ (ສຽງອ່ານໜັງສືສະຫຼະປະມານ 78%), ແຕ່ສຽງອ່ານພະຍັນຊະນະມີຄວາມໝາຍໃນການນຳໃຊ້ສູງກວ່າ. ສ່ວນວ່າສຽງອ່ານສະຫຼະ, ແມ່ນວ່າມີອັດຕາສ່ວນສູງ ແຕ່ກໍມີປະມານ 1/3 ຂອງສຽງເຫຼົ່ານັ້ນມີຄວາມໝາຍໃນການຂານ-ຕອບ ແລະ/ຫຼືອຸທານ ເຊິ່ງມີຂອບເຂດນຳໃຊ້ຈຳກັດກວ່າ.

ລາວ	ສຽງ	ກໍ	ຂໍ ຄໍ	ຫງໍ ງໍ	ຈໍ	ສໍ ຊໍ	ຫຍໍ ຍໍ	ດໍ	ຕໍ	ຖໍ ທໍ	ໜໍ ນໍ
	ຮູບ	ก	ข ค	ห ง	จ	ส ช	ห ย	ด	ต	ถ ท	ห น
ສຄຖິນ	ສຽງ	[k]	[kh]	[ŋ]	[c]	[s]	[ɲ]	[d]	[t]	[th]	[n]

[1] ໃນປັດຈຸບັນ, ໄດ້ມີການນຳເອົາສຽງພະຍັນຊະນະສຽງໜຶ່ງຄື [r] ເຂົ້າມາຢູ່ໃນລະບົບສຽງພະຍັນຊະນະລາວ ແລະເອົາຮູບ /ร/ ເປັນໂຕແທນໃຫ້ສຽງດັ່ງກ່າວ. ສຽງ-ຮູບນີ້ຖືກກຳນົດນຳໃຊ້ຢ່າງຈຳກັດພິເສດ ຈຶ່ງບໍ່ໄດ້ນຳເຂົ້າມາສະເໜີຢູ່ໃນບົດນີ້.

	ໜ່ວຍສຽງ	/k/	/kh/	/ŋ/	/c/	/s/	/ɲ/	/d/	/t/	/th/	/n/
ລາວ	ສຽງ	ບໍ	ປໍ	ຜໍ ພໍ	ຝໍ ຟໍ	ໝໍ ມໍ	ຢໍ	ຫຼໍ ລໍ	ຫວໍ ວໍ	ຫໍ ຮໍ	ອໍ
	ຮູບ	ບ	ປ	ຜ ພ	ຝ ຟ	ໝ ມ	ຢ	ຫຼ ລ	ຫວ ວ	ຫ ຮ	ອ
ສາກົນ	ສຽງ	[b]	[p]	[ph]	[f]	[m]	[y]	[l]	[v]	[h]	[ʔ]
	ໜ່ວຍສຽງ	/b/	/p/	/ph/	/f/	/m/	/y/	/l/	/v/	/h/	/ʔ/

4.2 ການຈັດແບ່ງພະຍັນຊະນະ

ການຈັດແບ່ງພະຍັນຊະນະກໍມີຫຼາຍວິທີຈັດ ເພາະຂຶ້ນກັບບ່ອນອີງ ແລະຈຸດປະສົງໃນການຈັດແບ່ງ. ໃນບົດນີ້, ຈະອີງໃສ່ແບບມູນເຊື້ອ, ລັກສະນະສຽງ, ຮູບ ແລະຖານກອນເພື່ອຈັດແບ່ງ.

4.2.1 ອີງຕາມແບບມູນເຊື້ອ

ໂດຍທົ່ວໄປແລ້ວ, ຕາມຕຳລາຫຼັກພາສາລາວນັບແຕ່ກ່ອນຈົນມາຮອດປັດຈຸບັນ ມີການຈັດແບ່ງພະຍັນຊະນະອອກເປັນສາມໝວດຄື ອັກສອນສູງ 12 ຕົວ, ອັກສອນກາງ 8 ຕົວ ແລະອັກສອນຕ່ຳ 12 ຕົວ. ບັນຫາທີ່ເປັນຕາສົນໃຈກໍຄືວ່າ ຊື່ໝວດອັກສອນ (ສູງ-ກາງ-ຕ່ຳ) ຊ້ຳພັດເປັນຄຳທີ່ສະແດງລະດັບສຽງອັກສອນ. ເວົ້າແນວໜຶ່ງ, ການໃສ່ຊື່ໝວດຕາມວິທີຈັດແບ່ງແບບນີ້ ບໍ່ໄດ້ມີການບອກບ່ອນອີງໄວ້ຢ່າງລະອຽດ ແມ່ນວ່າເວລາລ່ວງເລີຍມາຫຼາຍທົດສະວັດແລ້ວ, ໄດ້ມີການຮຽບຮຽງ-ພິມຈຳໜ່າຍຕຳລາຫຼັກພາສາລາວຫຼາຍສະບັບ, ແຕ່ກໍຍັງບໍ່ທັນມີຄຳຕອບໃຫ້ແກ່ບັນຫານີ້ເທື່ອ.

ອັກສອນສູງ	ຂ	ຫງ	ສ	ຫຍ	ຖ	ໝ	ຜ	ຝ	ໝ	ຫຼ	ຫວ	ຫ
	kh	ŋ	s	ɲ	th	n	ph	f	m	l	v	h
ອັກສອນກາງ	ກ	ຈ	ດ	ຕ	ບ	ປ	ຢ	ອ				
	k	c	d	t	b	p	y	ʔ				
ອັກສອນຕ່ຳ	ຄ	ງ	ຊ	ຍ	ທ	ນ	ພ	ຟ	ມ	ລ	ວ	ຮ
	kh	ŋ	s	ɲ	th	n	ph	f	m	l	v	h

ການຈັດແບ່ງແບບນີ້ມີຄວາມສະດວກຫຼາຍດ້ານ ເຊິ່ງກ່ອນອື່ນໝົດແມ່ນການນຳໃຊ້ວັນນະຍຸດ. ຫາກພະຍາງໃດມີອັກສອນກາງເປັນຕົວແກນ ມີຄວາມສາມາດປ່ຽນລະດັບສຽງໄປຕາມສຽງວັນນະຍຸດໄດ້ທຸກສຽງ. ສ່ວນພະຍາງທີ່ມີອັກສອນສູງ ຫຼືອັກສອນຕ່ຳເປັນຕົວແກນ ມີຄວາມສາມາດປ່ຽນລະດັບສຽງໄປຕາມສຽງວັນນະຍຸດໄດ້ພຽງແຕ່ສອງສຽງ.

ຄຽງຄູ່ກັບການປ່ຽນລະດັບສຽງ, ການຈັດແບ່ງແບບນີ້ຍັງຊ່ວຍໃຫ້ການຈັດປະເພດຕົວສະກົດໄດ້ງ່າຍຕື່ມ. ຕົວສະກົດທີ່ເຮັດໃຫ້ພະຍາງນັ້ນໆ ບໍ່ສາມາດປ່ຽນລະດັບສຽງໄປຕາມສຽງວັນນະຍຸດໄດ້ ເຊິ່ງເອີ້ນວ່າ ຕົວສະກົດຕາຍ (ກ, ດ, ບ) ລ້ວນແຕ່ນອນຢູ່ໃນໝວດອັກສອນກາງ. ຕົວສະກົດທີ່ເຮັດໃຫ້ພະຍາງນັ້ນໆ ສາມາດປ່ຽນລະດັບສຽງໄປຕາມສຽງວັນນະຍຸດໄດ້ ເຊິ່ງເອີ້ນວ່າ ຕົວສະກົດເປັນ (ງ, ນ, ມ, ຍ, ວ) ລ້ວນແຕ່ນອນຢູ່ໃນໝວດອັກສອນຕ່ຳ. ສ່ວນພະຍັນຊະນະທີ່ນອນຢູ່ໃນໝວດອັກສອນສູງບໍ່

ມີຕົວໃດເປັນຕົວສະກົດໄດ້. ແນວໃດກໍຕາມ, ການຈັດແບ່ງແບບນີ້ບໍ່ເໝາະສົມທາງດ້ານຊື່ເອີ້ນ ແຕ່ຊ້ຳພັດເປັນປະໂຫຍດໃນການນຳໃຊ້ສູງສົມຄວນ.

4.2.2 ອີງຕາມລັກສະນະຂອງສຽງ

ເມື່ອເບິ່ງໂດຍພື້ນຖານ, ພາສາລາວມີຈຸດພິເສດສະເພາະເປັນຂອງຕົນເອງຫຼາຍຢ່າງ. ໃນນັ້ນ, ອັກສອນຄູ່ກໍແມ່ນລັກສະນະສະເພາະເດັ່ນອັນໜຶ່ງ ເຊິ່ງກໍມີທັງສະຫຼະ ແລະພະຍັນຊະນະ. ສະຫຼະສຽງຄູ່ໝາຍເຖິງໄລຍະເວລາຜັນສຽງສະຫຼະແຕ່ລະຕົວເປັນເກນວ່າ ສັ້ນ-ຍາວລື່ນກັນແນວໃດ. ສ່ວນວ່າພະຍັນຊະນະສຽງຄູ່ໝາຍເຖິງພະຍັນຊະນະທີ່ພື້ນສຽງຄືກັນ ແຕ່ມີວິທີຜັນສຽງຕ່າງກັນ. ຫາກອີງຕາມວິທີນີ້, ພະຍັນຊະນະໃນພາສາລາວກໍແບ່ງອອກເປັນສອງຈຳພວກຄື ອັກສອນສຽງຄູ່ ແລະອັກສອນສຽງຄີກ. ອັກສອນສຽງຄູ່ໄດ້ແກ່ອັນທີ່ເອີ້ນວ່າ "ອັກສອນສູງ-ຕ່ຳ" ເຊິ່ງມີ 12 ຄູ່; ສ່ວນອັກສອນສຽງຄີກໄດ້ແກ່ອັນທີ່ເອີ້ນວ່າ "ອັກສອນກາງ" ເຊິ່ງມີ 8 ຕົວ.

ອັກສອນສຽງຄູ່	ຂ	ຫງ	ສ	ຫຍ	ຖ	ໜ	ຜ	ຝ	ໝ	ຫຼ	ຫວ	ຫ
	kh	ŋ	s	ɲ	th	n	ph	f	m	l	v	h
	ຄ	ງ	ຊ	ຍ	ທ	ນ	ພ	ຟ	ມ	ລ	ອ	ຮ
ອັກສອນສຽງຄີກ	ກ	ຈ	ດ	ຕ	ບ	ປ	ຢ	ອ				
	k	c	d	t	b	p	y	ʔ				

ການຈັດແບ່ງແບບນີ້ມີຄວາມແທດເໝາະກັບປະລິມານຂອງໜ່ວຍສຽງພະຍັນຊະນະຄື ພາສາລາວມີໜັງສືພະຍັນຊະນະທັງໝົດ 32 ຕົວ ເຊິ່ງເປັນສັນຍະລັກໃຫ້ແກ່ສຽງພະຍັນຊະນະ 32 ສຽງ ແຕ່ມີໜ່ວຍສຽງພະຍັນຊະນະພຽງແຕ່ 20 ໜ່ວຍ.

ດ້ານການນຳໃຊ້ກໍມີລັກສະນະຄ້າຍຄືກັບການຈັດຕາມມູນເຊື້ອ ໂດຍສະເພາະແມ່ນການກຳນົດຕົວສະກົດ ແລະການປ່ຽນລະດັບສຽງອັນນະຍຸດ. ຕົວສະກົດຕາຍທັງສາມຕົວ (ກ-ດ-ບ) ກໍຢູ່ໃນກຸ່ມອັກສອນສຽງຄີກ; ສ່ວນຕົວສະກົດເປັນຫ້າຕົວ (ງ-ນ-ມ-ຍ-ອ) ຢູ່ໃນກຸ່ມອັກສອນສຽງຄູ່. ການນຳໃຊ້ວັນນະຍຸດກໍມີລັກສະນະເປັນໄປແບບດຽວກັນຄື ຫາກພະຍາງໃດມີອັກສອນສຽງຄີກເປັນຕົວແກນ ມີຄວາມສາມາດປ່ຽນລະດັບສຽງໄປຕາມສຽງອັນນະຍຸດໄດ້ທຸກສຽງ. ສ່ວນພະຍາງທີ່ມີອັກສອນສຽງຄູ່ເປັນຕົວແກນ ມີຄວາມສາມາດປ່ຽນລະດັບສຽງໄປຕາມສຽງອັນນະຍຸດໄດ້ພຽງແຕ່ສອງສຽງ.

4.2.3 ອີງຕາມຮູບ

ການຈັດແບ່ງຕາມວິທີນີ້ແມ່ນອີງຕາມປະລິມານໜັງສືພະຍັນຊະນະ ທີ່ໃຊ້ເປັນຕົວແກນ ຫຼືວ່າອັກສອນຕົ້ນພະຍາງໃນເວລາຂຽນ. ໝາຍຄວາມວ່າ ໃນພະຍາງຂຽນພະຍາງໜຶ່ງນັ້ນມີອັກສອນຕົ້ນພະຍາງຕົວໜຶ່ງ ຫຼືວ່າສອງຕົວ. ຫາກວ່າພະຍາງໃດມີພະຍັນຊະນະຕົ້ນພະຍາງຕົວດຽວ ພະຍັນຊະນະຕົວນັ້ນແມ່ນ "ພະຍັນຊະນະເຄົ້າ". ຫາກພະຍາງໃດມີພະຍັນຊະນະຕົ້ນພະຍາງສອງຕົວ ພະຍັນຊະນະ

ສອງຕົວນັ້ນແມ່ນ "ພະຍັນຊະນະໝູ່". ພະຍັນຊະນະຈຳພວກນີ້ຍັງມີສອງກຸ່ມສອງລັກສະນະຄື ກຸ່ມທີ່ມີຕົວໜ້າຕົວດຽວກັນ ແລະກຸ່ມທີ່ມີຕົວຫຼັງຕົວດຽວກັນ.

ພະຍັນຊະນະໝູ່ທີ່ມີຕົວໜ້າຕົວດຽວກັນ ໄດ້ແກ່ອັກສອນສຽງຄູ່ຕົວທີ່ບໍ່ມີຄູ່ເປັນຮູບຕ່າງຫາກຈຳນວນ 6 ຕົວ (ງ-ຍ-ນ-ມ-ລ-ວ). ພະຍັນຊະນພວກນີ້ຕ້ອງໄດ້ໃຊ້ຮູບຕົວເອງໄປວາງເຂົ້າຖັດຫຼັງຕົວ ຫ ເຊິ່ງເປັນຕົວທີ່ມີຄູ່ຢູ່ເລ້ວ. ຕຳລາຫຼັກພາສາລາວເອີ້ນພະຍັນຊະນະພວກນີ້ວ່າ ພະຍັນຊະນະປະສົມ. ໃນເວລາຜັນສຽງ, ພະຍັນຊະນະຕົວທີໜຶ່ງ (ຫ) ບໍ່ອອກສຽງ; ມີແຕ່ຕົວທີສອງອອກສຽງ ແຕ່ຕ້ອງປ່ຽນລະດັບສຽງໃຫ້ຄືກັນກັບລະດັບສຽງຂອງຕົວທີໜຶ່ງ (ຫ). ບັນຫາທີ່ເປັນຕາສົນໃຈກໍຄືວ່າ ໂຕທີ່ມີສຽງລະດັບດຽວກັນກັບຕົວ ຫ ເຊິ່ງມີຄູ່ຢູ່ແລ້ວມີ 5 ຕົວ (ຂ-ສ-ຖ-ຜ-ຝ) ບໍ່ມີຕົວໃດຖືກນຳໃຊ້ເຂົ້າໃນວິວັດການນີ້. ຈຸດນີ້ກໍມີຄວາມເປັນໄປໄດ້ອີກວ່າ ວິທີການໂຮມໜັງສືພະຍັນຊະນະໃນພາສາລາວ ຄົງສືບທອດຮູບແບບມາຈາກວິທີການໂຮມພະຍັນຊະນະໃນພາສາບາລີ-ສັນສະກິດ. ສຳລັບຈຳພວກທີ່ມີຕົວຫຼັງຕົວດຽວກັນ ແມ່ນໄດ້ແກ່ພະຍັນຊະນະຕົ້ນພະຍາງສອງຕົວ ເຊິ່ງຕົວທີສອງແມ່ນຕົວ ວ. ເວລາຜັນສຽງ, ພະຍັນຊະນະທັງສອງຕົວນີ້ອອກສຽງທັງສອງຕົວ ຫຼືອອກສຽງຄວບກັນ. ຫາກວ່າເບິ່ງຕາມຮູບ, ໜັງສືພະຍັນຊະນະໃນພາສາລາວກໍແບ່ງອອກເປັນສອງຈຳພວກຄື ພະຍັນຊະນະເດ້ົາ (ມີແຕ່ຮູບດຽວ) ແລະ ພະຍັນຊະນະໝູ່ (ມີແຕ່ສອງຮູບ).

ພະຍັນຊະນະ ເດ້ົາ		ກ	ຂ	ຄ	ງ	ຈ	ສ	ຊ	ຍ	ດ	ຕ	ຖ	ທ	ນ
		k	kh		ŋ	c	s		ɲ	d	t	th		n
		ບ	ປ	ຜ	ພ	ຝ	ຟ	ມ	ຢ	ລ	ວ	ຫ	ຮ	ອ
		b	p	ph		f		m	y	l	v	s		ʔ
ພະຍັນຊະນະ ໝູ່	ຕົວໜ້າ ຕົວດຽວກັນ	ຫງ	ຫຍ	ຫນ	ຫມ	ຫລ	ຫວ							
		ŋ	ɲ	n	m	l	v							
	ຕົວຫຼັງ ຕົວດຽວກັນ	ກວ	ຂວ ຄວ		ງວ	ຈວ	ສວ ຊວ		ຍວ	ດວ	ຕວ	ຖວ ທວ		ຢວ
		kw	khw		ŋw	cw	sw		ɲw	dw	tw	thw		yw
		ລວ	ອວ	ຫວ ຮວ										
		lw	ʔw	hw										

4.2.4 ອີງຕາມຖານກອນ

ວິທີນີ້ແມ່ນເອົາຈຸດທີ່ຜະລິດສຽງພະຍັນຊະນະແຕ່ລະຕົວອອກມານັ້ນເປັນເກນ. ເວົ້າແນວໜຶ່ງ, ວິທີນີ້ແມ່ນອີງໃສ່ພື້ນຖານດ້ານສະລິລະສາດຂອງອັກຂະຫຼະເປັນເກນການຈັດແບ່ງ. ໝາຍຄວາມວ່າ ແມ່ນອະໄຍະວະສ່ວນໃດເປັນບ່ອນກັກກັ້ນ-ຕີກແຕ່ງອາກາດທີ່ຖືກສົ່ງອອກມາຈາກປອດ ໃຫ້ເກີດເປັນສຽງພະຍັນຊະນະແຕ່ລະຕົວ. ຜ່ານຈາກການສັງເກດ-ທົດລອງ, ເອວາຜັນສຽງພະຍັນຊະນະ, ມີຈຸດທີ່ກັກກັ້ນ-ຕີກແຕ່ງສຽງພະຍັນຊະນະຫຼາຍຈຸດ ດັ່ງຕາລາງລຸ່ມນີ້:

ວິທີສັນສຽງ \ ຈຸດຜະລິດສຽງ			ຮິມສີບ		ລິ້ນ				ບ້ອງຄໍ ຫອຍ	ໂກ້ງຄໍ ຮູຄໍ
					ປາຍລິ້ນ		ກາງລິ້ນ	ກິກລິ້ນ		
			ຄູ່	ລຸ່ມແຂ້ວເທິງ	ແຂ້ວເທິງ	ເຫືອກ				
ອັດ	ຜິວ	ບໍ່ກ້ອງ	ph			th		kh		
	ບໍ່ຜິວ	ບໍ່ກ້ອງ	p		t		c	k		
		ກ້ອງ	b			d				
		ສຽງອອກທາງດັ້ງ	m			n	ñ	ŋ		
ງ		ບໍ່ກ້ອງ		f			s		h	
		ກ້ອງ		v			y			
		ຂ້າງລິ້ນ (ກ້ອງ)				l				
ສຽງສັ້ນ						r				
ເຄິ່ງສະຫລະເຄິ່ງພະຍັນຊະນະ			w				i			ʔ

ແຫ່ງຂໍ້ມູນ: ຄຳຮຸ່ງ ແສນມະນີ, 2002

ຈາກຕາລາງເທິງນີ້, ພະຍັນຊະນະລາວກໍມີສີ່ຈຳພວກຄື ຈຳພວກທີ່ຖືກກັກກັ້ນ-ຕີກແຕ່ງສຽງຢູ່ທີ່ ໂກ້ງຄໍ, ບ້ອງຄໍ, ລິ້ນ, ແລະ ຮິມສີບ. ອາດສັງຮອມດ້ວຍຕາລາງລຸ່ມນີ້:

ໂກ້ງຄໍ			ʔ							
ບ້ອງຄໍ			h							
ລິ້ນ	ກິກລິ້ນ		ก	ข ฅ		ฆง ง				
			ห	kh		ŋ				
	ກາງລິ້ນ		จ	ส ฉ		ฌย ย		ย	ย*	
			ç	s		ɲ		y	i	
	ປາຍລິ້ນ	ເຫືອກ	ด	ถ ท		ฑน ณ		ฒล ล		
			ð	th		n		l		
		ແຂ້ວເທິງ	ต							
			θ							
ຮິມສີບ	ລຸ່ມ-ແຂ້ວເທິງ		ฝ ฟ			ห อ ฮ				
			f			v				
	ຄ่ູ		บ	ป		ผ พ		ฑม ม	อ*	
			β	p		ph		m	w	

4.3 ພະຍັນຊະນະພິເສດ

ໃນພາສາລາວ, ຍັງມີພະຍັນຊະນະຈຳນວນໜຶ່ງທີ່ມີຄຸນລັກສະນະສະເພາະເພີ່ມຕື່ມ ຕ່າງຈາກຄຸນລັກສະນະລວມຂອງພະຍັນຊະນະ. ຄຸນລັກສະນະສະເພາະດັ່ງກ່າວນີ້ກໍຖືໄດ້ວ່າເປັນຈຸດເດັ່ນຂອງ ພະຍັນຊະນະພາສາລາວ.

4.3.1 ສຽງດຽວສອງຮູບສອງວິທີ

ພະຍັນຊະນະທີ່ບໍ່ມີຄູ່ (ພະຍັນຊະນະຄີກ) ຈຳນວນຫົກຕົວ (ງ, ຍ, ນ, ມ, ລ, ວ) ຈຳຕ້ອງເອົາຮູບຕົວເອງໄປຮຽງຖັດຫຼັງຕົວ ຫ ເພື່ອໃຫ້ໄດ້ຄູ່ສຽງ ຖືວ່າເປັນຈຳພວກພະຍັນຊະນະທີ່ມີສອງຮູບ ເຊິ່ງຕຳລາຫຼັກພາສາລາວເອີ້ນວ່າ ພະຍັນຊະນະປະສົມ. ວິທີການໂຮມຕົວພະຍັນຊະນະຈຳພວກນີ້ ມີຫຼາຍຂໍ້ທີ່ເປັນຕາສົນໃຈ ແຕ່ໃນນີ້ຈະສະເໜີພຽງແຕ່ສອງຂໍ້ຄື ກ່ອນອື່ນໝົດແມ່ນ ຕົວທີ່ຖືກເລືອກເປັນສ່ວນປະກອບມີພຽງແຕ່ຕົວດຽວ (ຫ) ຈາກກຸ່ມ. ໃນຕົວຈິງ, ຫ ຢູ່ໃນກຸ່ມພະຍັນຊະນະຄູ່ຫົກຄູ່ຄື ຂ-ຄ, ສ-ຊ, ຖ-ທ, ຜ-ພ, ຝ-ຟ, ຫ-ຮ; ແຕ່ຕົວອື່ນໆຫ້າຕົວບໍ່ຖືກເລືອກ. ບັນຫາທີສອງແມ່ນ "ທີ່ຕັ້ງ" ເຊິ່ງກຳນົດໃຫ້ ຫ ຢູ່ໜ້າ. ຂໍ້ນີ້ກໍມີລັກສະນະປົ້ນລວງກັບລັກສະນະການໂຮມສຽງໃນພາສາລາວ ເຊິ່ງໂດຍພື້ນຖານແລ້ວ ຕົວຢູ່ໜ້າຈະເປັນຫຼັກ ຫຼືໂຕຕົ້ນຕໍ ສ່ວນຕົວຢູ່ຫຼັງຈະເປັນຕົວສຳຮອງ ແລະເຮັດໜ້າທີ່ເປັນສ່ວນຂະຫຍາຍ. ເມື່ອພະຍັນຊະນະຈຳພວກນີ້ໂຮມກັນແລ້ວ, ຕົວໜ້າ (ຫ) ບໍ່ອອກສຽງ; ມີແຕ່ຕົວຫຼັງເທົ່ານັ້ນອອກສຽງ ແລະສຽງນັ້ນກໍແມ່ນສຽງພື້ນຂອງຕົວຫຼັງນັ້ນເອງ ພຽງແຕ່ປ່ຽນລະດັບສຽງເທົ່ານັ້ນ. ຍິ່ງກວ່ານີ້, ຍັງມີບາງສຽງມີວິທີຂຽນສັນຍະລັກສອງແບບຕື່ມອີກ.

ສິ່ງທີ່ຍົກມາສະເໜີເທິງນີ້ສະທ້ອນໃຫ້ເຫັນວ່າ ວິທີການໂຮມພະຍັນຊະນະໃນພາສາລາວຄົງມີຄວາມເປັນມາສະຫຼັບສັບຊ້ອນສົມຄວນ, ຢ່າງໜ້ອຍກໍຄົງມີເຫດຜົນທາງອັກຂະຫຼະວິທີ. ເບິ່ງດ້ານໜຶ່ງ, ຄົງມີຄວາມເປັນໄປໄດ້ວ່າຮູບຕົວ ຫ ມີຄວາມເໝາະສົມກວ່າຮູບຕົວອື່ນໆ ເພາະມີຄວາມສາມາດເອົາສ່ວນທ້າຍເຫຼື່ອມກັບສ່ວນໜ້າຂອງຕົວຫຼັງບາງຕົວ (ນ, ມ) ໄດ້ດີ. ນອກຈາກນີ້, ວິທີການໂຮມກໍຄົງມີການສືບທອດຈາກວິທີການໂຮມພະຍັນຊະນະໃນພາສາສັນສະກິດອີກດ້ວຍ ເພາະຕາມຫຼັກອັກຂະຫຼະວິທີສັນສະກິດ ມີການໂຮມພະຍັນຊະນະເຂົ້າກັນໄດ້ຫຼາຍຕົວ. ສັງເກດເບິ່ງຮູບການໂຮມພະຍັນຊະນະໃນພາສາສັນສະກິດກັບພາສາລາວແບບຕົວຕໍ່ຕົວໃນຕາລາງລຸ່ມນີ້:

ສັນສະກິດ	ສຽງ		h-ṅa	h-ya	h-na	h-ma	h-la	h-va
	ຮູບ		ह्ङ	ह्य	ह्न	ह्म	ह्ल	ह्व
ລາວ	ຮູບ	A	ຫງ	ຫຍ	ຫນ	ຫມ	ຫລ	ຫວ
		B	0	0	ໜ	ໝ	ຫຼ	0
	ສຽງ		ŋ	ɲ	n	m	l	v

ຈາກຕາລາງເທິງນີ້, ໃນການໂຮມພະຍັນຊະນະສັນສະກິດຫົກກໍລະນີ ມີສອງກໍລະນີທີ່ສອງຕົວໂຮມກັນ ແລ້ວຜັນເປັນຮູບໃໝ່ຄື ह् + य = ह्य (h + y = h-ya) ແລະ ह् + म = ह्म (h + m = h-ma). ສ່ວນກໍລະນີອື່ນໆ ຍັງມີລັກສະນະຄົງຮູບເດີມໄວ້ທັງສອງຕົວ ຕ່າງແຕ່ວ່າຕົວໜ້າ (ह्) ປ່ຽນແປງໜ້ອຍໜຶ່ງ. ແມ່ນວ່າຈະມີຮູບຜັນປ່ຽນເປັນຕົວດຽວ ຫຼືຄົງຮູບສອງຕົວໄວ້ ທັງສອງກໍລະນີກໍຍັງຮັກສາສຽງໄວ້ທັງສອງສຽງຄືເກົ່າ ຫຼືວ່າອອກສຽງທັງສອງຕົວ. ສິ່ງນີ້ສະທ້ອນໃຫ້ເຫັນວ່າ ການໂຮມພະຍັນຊະນະໃນພາສາສັນສະກິດ ມີຈຸດປະສົງທາງດ້ານໜັງສື ຫຼືການຂຽນ; ບໍ່ແມ່ນທາງດ້ານສຽງ ຫຼືການເວົ້າ.

ຈາກຕາລາງດຽວກັນນີ້, ໃນການໂຮມພະຍັນຊະນະລາວທີ່ກໍລະນີ ກໍມີພຽງສອງກໍລະນີເທົ່າກັນ ກັບພາສາສັນສະກິດທີ່ສອງຕົວໂຮມກັນ ແລ້ວສາມາດຜັນເປັນຮູບໃໝ່ໄດ້ຄື ຫ + ນ = ໜ (h + n = n) ແລະ ຫ + ມ = ໝ (h + m = m). ນອກຈາກນີ້, ຮູບ ຫຼ ກໍສົມຄວນຖືເປັນຕົວດຽວໄດ້ ເພາະມີຮູບທີ່ມີສອງຕົວສົມທຽບ (ຫລ). ເມື່ອໂຮມກັນແລ້ວ, ແມ່ນວ່າຈະມີຮູບຜັນປ່ຽນເປັນຕົວດຽວ ຫຼືຄົງຮູບສອງຕົວໄວ້ ທັງສອງກໍລະນີລ້ວນແລ້ວແຕ່ຖົ່ມປະສົງຕົວໜ້າ (ຫ) ແລ້ວຮັກສາສົງຕົວຫຼັງໄວ້ ຕ່າງແຕ່ວ່າປ່ຽນລະດັບສຽງເທົ່ານັ້ນ. ສິ່ງນີ້ສະທ້ອນໃຫ້ເຫັນວ່າ ການໂຮມພະຍັນຊະນະໃນພາສາລາວນີ້ ມີຈຸດປະສົງທາງດ້ານສຽງ ຫຼືການເວົ້າ; ບໍ່ແມ່ນທາງດ້ານໜັງສື ຫຼືການຂຽນ. ເມື່ອເປັນແນວນີ້, ຫາກສາມຕົວທີ່ເຫຼືອ (ຫງ, ຫຍ, ຫວ) ຜັນປ່ຽນເປັນຕົວດຽວໄດ້ ຫຼືຢ່າງໜ້ອຍກໍໃຫ້ໄດ້ຮູບທີ່ມີລັກສະນະເປັນໄປແບບດຽວກັນກັບ "ຫຼ" ກໍຈະມີລັກສະນະເປັນລະບົບຫຼາຍກວ່າເກົ່າ.

4.3.2 ເປັນສ່ວນປະກອບສະຫຼະປະສົມ

ໃນພາສາລາວຍັງມີພະຍັນຊະນະຈຳນວນສາມຕົວຄື ຍ, ວ, ອ ທີ່ມີລັກສະນະສະເພາະເພີ່ມຕື່ມອີກ ເພາະຖືກນຳໃຊ້ເປັນສ່ວນປະກອບສະຫຼະປະສົມ. ດ້ານຫຼັກການ, ອັນທີ່ຖືວ່າເປັນສະຫຼະປະສົມກໍຕ້ອງແມ່ນຫົວໜ່ວຍທີ່ປະກອຍສ້າງຂຶ້ນດ້ວຍສະຫຼະຫຼາຍຕົວ ແຕ່ສະຫຼະປະສົມໃນພາສາລາວຊ້ຳພັດເອົາພະຍັນຊະນະເປັນສ່ວນປະກອບໜຶ່ງ. ຂໍ້ນີ້ຄົງເປັນເພາະພະຍັນຊະນະຈຳພວກນີ້ມີສຽງເຄິ່ງສະຫຼະນັ້ນເອງ.

ຍ	ປະກອບເປັນສະຫຼະ	ເ◌ັຍ-ເ◌ຍ
ວ	ປະກອບເປັນສະຫຼະ	◌ົວ-◌ົວ
ອ	ປະກອບເປັນສະຫຼະ	ເ◌ືອ-ເ◌ືອ

ສິ່ງທີ່ເປັນຕາສົນໃຈກໍຄືວ່າ ເມື່ອມີຕົວສະກົດ ຫຼືສຽງທ້າຍ, ສະຫຼະທີ່ມີຕົວ ຍ ຫຼື ວ ເປັນສ່ວນປະກອບຕ້ອງປ່ຽນຮູບ; ສ່ວນສະຫຼະທີ່ມີຕົວ ອ ເປັນສ່ວນປະກອບຊ້ຳພັດບໍ່ຕ້ອງປ່ຽນຮູບ. ບັນຫາໜຶ່ງອີກແມ່ນ ໃນພະຍັນຊະນະສາມຕົວນີ້ (ຍ, ວ, ອ) ມີພຽງສອງຕົວ (ຍ, ວ) ທີ່ສາມາດເປັນຕົວສະກົດໄດ້. ເຖິງປານນັ້ນກໍຕາມ, ພະຍັນຊະນະທັງສອງຕົວນີ້ກໍຈະບໍ່ເປັນຕົວສະກົດ ຫຼືສຽງທ້າຍໃນພະຍາງທີ່ມີສະຫຼະເຊິ່ງພວກຕົນເປັນສ່ວນປະກອບ ເປັນຈອມສຽງ.

4.3.3 ແທນສຽງສະຫຼະ

ໃນພາສາລາວຍັງມີພະຍັນຊະນະຈຳນວນສອງຕົວຄື ວ, ອ ທີ່ມີລັກສະນະສະເພາະເພີ່ມຕື່ມອີກ ເພາະຖືກນຳໃຊ້ເປັນເຄື່ອງໝາຍແທນສຽງສະຫຼະ. ແນວໃດກໍຕາມ, ພະຍັນຊະນະທັງສອງຕົວນີ້ຈະຖືກນຳໃຊ້ເປັນເຄື່ອງໝາຍແທນສຽງສະຫຼະໄດ້ ກໍຕໍ່ເມື່ອສະຫຼະທີ່ກ່ຽວຂ້ອງນັ້ນເປັນຈອມສຽງໃຫ້ພະຍາງທີ່ມີສຽງທ້າຍເປັນພະຍັນຊະນະເທົ່ານັ້ນ.

ວ ແທນສຽງສະຫຼະ ◌ົວ ເຊັ່ນ: ໝວກ, ລວງ, ດ້ວຍ, ຫວດ, ມ່ວນ, ກວບ, ສ້ວມ, ...

ອ ແທນສຽງສະຫຼະ ◌ໍ ເຊັ່ນ: ນອກ, ຮ່ອງ, ຫ້ອຍ, ປອດ, ມ້ອນ, ຄອບ, ຊອມ,...

ຫາກວ່າເບິ່ງເລິກ, ອ ເປັນເຄື່ອງໝາຍແທນສຽງສະຫຼະປະສົມ ຕົວທີ່ຕົນເອງເປັນສ່ວນປະກອບ; ສ່ວນ ອ ຊ້ຳພັດບໍ່ໄດ້ເປັນເຄື່ອງໝາຍແທນສຽງສະຫຼະປະສົມ ຕົວທີ່ຕົນເອງເປັນສ່ວນປະກອບ. ຈຸດນີ້ ກໍບົ່ງຊີ້ໄດ້ວ່າ ການໃຊ້ພະຍັນຊະນະທ້າງສອງຕົວນີ້ເປັນເຄື່ອງໝາຍແທນສຽງສະຫຼະ ຄົງບໍ່ແມ່ນເພື່ອຈຸດປະສົງທາງດ້ານໜັງສື ຫຼືການຂຽນ, ຄົງແມ່ນເລື່ອງເຫດຜົນທາງດ້ານສຽງ ຫຼືການເວົ້າ. ກ່ອນອື່ນໝົດແມ່ນກໍລະນີຂອງ ອ ເພາະວ່າຈະແມ່ນ x̊ ຫຼື ອ ກໍຕາມ, ເວລາອ່ານແມ່ນອອກສຽງຄືກັນທ້າງສອງຕົວ [ɔ:]. ສະເພາະ ອ ກໍມີລັກສະນະຄ້າຍຄືກັນເພາະ ອ ທີ່ຢູ່ໃນ x̊ອ ມີຈຸດຜະລິດສຽງຢູ່ທີ່ຮີມສົບທ້າງສອງເບື້ອງ (ລຸ່ມ-ເທິງ) ເຊິ່ງເປັນລັກສະນະສຽງສະຫຼະ [w]; ບໍ່ຄືກັບ ອ ທີ່ຢູ່ໃນ ແອ່ນ ເພາະຢູ່ບ່ອນນີ້ ອ ມີຈຸດຜະລິດສຽງຢູ່ທີ່ຮີມສົບລຸ່ມກັບເທິງ ເຊິ່ງເປັນລັກສະນະສຽງພະຍັນຊະນະ [v].

ຄຽງຄູ່ກັບບັນຫາເທິງນີ້, ສິ່ງທີ່ເປັນຕາສົນໃຈອີກຂໍ້ໜຶ່ງກໍຄືວ່າ ສະຫຼະທີ່ພະຍັນຊະນະສອງຕົວນີ້ເປັນຕົວແທນລ້ວນແຕ່ປະຕິເສດສຽງທ້າຍ ຫຼືຕົວສະກົດ ອ. ໝາຍຄວາມວ່າ ເມື່ອ x̊ ແລະ x̊ອ ເປັນຈອມສຽງໃຫ້ພະຍາງໃດ ແລ້ວພະຍາງນັ້ນກໍຈະບໍ່ຮັບ ອ ເປັນສຽງທ້າຍ. ແນ່ນອນ, ເມື່ອ x̊ ແລະ x̊ອ ບໍ່ຮັບ ອ ເປັນສຽງທ້າຍ ແລ້ວຄູ່ສຽງຂອງສະຫຼະທ້າງສອງນີ້ (ɤɑ, x̊ɔ) ກໍບໍ່ຮັບ ອ ເປັນສຽງທ້າຍເຊັ່ນດຽວກັນ. ສິ່ງນີ້ກໍຍິ່ງບົ່ງຊີ້ແຈ້ງຕື່ມອີກວ່າ ການເລືອກໃຊ້ ອ ແລະ ɔ ເປັນເຄື່ອງໝາຍແທນສະຫຼະຄົງແມ່ນເຫດຜົນທາງສຽງ ຫຼືການເວົ້າ; ບໍ່ແມ່ນເລື່ອງໜັງສື ຫຼືການຂຽນ.

4.3.4 ຮູບດຽວສອງສຽງ

ໃນພາສາລາວຍັງມີພະຍັນຊະນະຕົວໜຶ່ງຄື ອ ທີ່ມີລັກສະນະສະເພາະແປກຕ່າງຈາກຕົວອື່ນໆຫຼາຍ. ເວົ້າແນວໜຶ່ງ, ຮູບພະຍັນຊະນະຕົວນີ້ຖືກເລືອກເພື່ອນຳໃຊ້ໃຫ້ເຮັດໜ້າທີ່ຫຼາຍຢ່າງ. ເປັນແນວນີ້ກໍຄົງຍ້ອນເຫດຜົນທາງສຽງເຊັ່ນດຽວກັນ; ບໍ່ດັ່ງນັ້ນຄົງບໍ່ຖືກເລືອກ. ເມື່ອຖືກໃຫ້ເຮັດໜ້າທີ່ເປັນຕົວແທນ ແລະ/ຫຼືເປັນສ່ວນປະກອບພະຍັນຊະນະໝູ່ກຸ່ມຕົວໜ້າຕົວດຽວກັນ ເຊິ່ງຢູ່ຕາມຫຼັກພາສາລາວເອີ້ນວ່າ ພະຍັນຊະນະປະສົມ, ອ ມີຈຸດຜະລິດສຽງຢູ່ທີ່ຮີມສົບລຸ່ມກັບເທິງ [v]. ໃນຂະນະດຽວກັນ, ຖ້າຖືກໃຫ້ເຮັດໜ້າທີ່ເປັນຕົວສະກົດ ແລະ/ຫຼືເປັນສ່ວນປະກອບພະຍັນຊະນະໝູ່ກຸ່ມຕົວຫຼັງຕົວດຽວກັນ ເຊິ່ງຕາມຫຼັກພາສາລາວເອີ້ນວ່າ ພະຍັນຊະນະຄວບ, ເປັນສ່ວນປະກອບສະຫຼະ ແລະ/ຫຼືເປັນເຄື່ອງໝາຍແທນສຽງສະຫຼະ, ອ ມີຈຸດຜະລິດສຽງຢູ່ທີ່ຮີມສົບທ້າງສອງເບື້ອງ (ລຸ່ມ-ເທິງ) [w].

ອ [v] - **ສຽງຕົ້ນ/ຕົວແທນ** : ອອກແອກ, ວັ່ງເວ, ວິ່ງວອນ, ວຸ່ນວາຍ, ໂວບເວບ, ...
- **ໝູ່ໜ້າ/ປະສົມ** : ຫວີ, ໄຫວ້, ຫວ່ານ, ຫວິດ, ຫວາດຫວັ່ນ, ຫວັ່ນໄຫວ, ...

ອ [w] - **ສຽງທ້າຍ/ຕົວສະກົດ** : ຂ່າວ, ແລ້ວ, ຖົວ, ປ່ຽວ, ເຊ້ືອເລ້ືອ, ...
- **ໝູ່ຫຼັງ/ຄວບ** : ຂວາ, ໄກວ, ແກວ່ງ, ຖວາຍ, ລວາດ, ...
- **ປະກອບສະຫຼະ** : ຕິວະ, ຍິວະ, ມິວ, ຂົ້ວ, ຮິ່ວ...
- **ແທນສະຫຼະ** : ໜວດ, ປ່ວງ, ມວຍ, ຊວນ, ລວກ, ...

5 ໜ້າທີ່ຂອງໜ້ງສ

ໂດຍພື້ນຖານ, ໜ້ງສຖືກກຳນົດຂຶ້ນເພື່ອໃຊ້ເປັນຕົວແທນສຽງອັກຂະຫຼະໃນເວລາຂຽນ; ໜ້ງສຕົວໜຶ່ງກໍເປັນຕົວແທນສຽງອັກຂະຫຼະສຽງໜຶ່ງ. ໃນເມື່ອສຽງອັກຂະຫຼະປະກອບກັນເປັນຫົວໜ່ວຍອັນໜຶ່ງ (ພະຍາງ ຫຼື ຄຳ), ຫົວໜ່ວຍນັ້ນກໍຈະມີສຽງສາມສ່ວນຄ ແກນສຽງ ຫຼືສຽງຕົ້ນ, ຈອມສຽງ ຫຼືຈຸດສູງສຸດ ຂອງສຽງ ແລະສຽງທ້າຍ. ໃນພາສາລາວ, ແກນສຽງແມ່ນສຽງຂອງພະຍັນຊະນະ (C); ຈອມສຽງແມ່ນ ສຽງຂອງສະຫຼະ (V). ສະເພາະສຽງທ້າຍມັກມີລັກສະນະເປັນໄປຕາມຫົວໜ່ວຍທີ່ຖືກສ້າງຂຶ້ນ; ຫາກ ຫົວໜ່ວຍນັ້ນເປັນພະຍາງອັດ, ສຽງທ້າຍແມ່ນສຽງຂອງພະຍັນຊະນະ; ຫາກຫົວໜ່ວຍນັ້ນເປັນພະຍາງ ໄຂ, ສຽງທ້າຍ ແລະຈອມສຽງແມ່ນສຽງຂອງສະຫຼະຕົວດຽວກັນ. ເວົ້າແນວໜຶ່ງ, ສຽງຂອງຫົວໜ່ວຍທີ່ ສ້າງຂຶ້ນແຍກອອກເປັນສາມສຽງຍ່ອຍຕາມລຳດັບ: ສຽງຕົ້ນ-ຈອມສຽງ-ສຽງທ້າຍ (CV/CVC).

ຕາມຫຼັກກຳນົດ, ໃນພາສາລາວ, ພະຍັນຊະນະທຸກຕົວ (32) ເຮັດໜ້າທີ່ເປັນສຽງຕົ້ນໄດ້; ແຕ່ວ່າ ມີພະຍັນຊະນະພຽງແຕ່ 8 ຕົວເທົ່ານັ້ນ (ກ, ງ, ຍ, ດ, ນ, ບ, ມ, ອ) ທີ່ສາມາດເຮັດໜ້າທີ່ເປັນສຽງທ້າຍ ໄດ້. ສ່ວນສະຫຼະແມ່ນເຮັດໜ້າທີ່ເປັນຈອມສຽງໄດ້ທຸກຕົວ (28). ບັນຫາທີ່ເປັນຕາສົນໃຈກໍຄືວ່າ ໃນຈຳ ນວນສະຫຼະ 24 ຕົວ (ຍົກເວັ້ນ ໄx, ໃx, ເx̊ າ, x̊ າ), ທີ່ສາມາດຮັບເອົາສຽງພະຍັນຊະນະເປັນສຽງທ້າຍ ໄດ້ນັ້ນ, ເມື່ອສະຫຼະຕົວໃດໜຶ່ງໃນຈຳນວນສະຫຼະຕໍ່ໄປນີ້ຄື x̊-x̊, ເxะ-ເx, ແxะ-ແx, ເxัย-ເxย ເປັນ ຈອມສຽງໃຫ້ຫົວໜ່ວຍໃດ ຫົວໜ່ວຍນັ້ນຈະບໍ່ຮັບ ย* ເປັນສຽງທ້າຍ. ໃນທຳນອງດຽວກັນ, ເມື່ອສະຫຼະ ຕົວໃດໜຶ່ງໃນຈຳນວນສະຫຼະຕໍ່ໄປນີ້ຄື x̯-xู, ເxาะ-x̊, x̊ อะ-x̊ อ, เx̊ อ-เx̊ อ ເປັນຈອມສຽງໃຫ້ຫົວໜ່ວຍ ໃດ ຫົວໜ່ວຍນັ້ນກໍຈະບໍ່ຮັບ อ* ເປັນສຽງທ້າຍ.

ບັນຫາທີ່ມີລັກສະນະສະເພາະອີກອັນໜຶ່ງຂອງໜ້ງສລາວກໍຄືວ່າ ເມື່ອເຮັດໜ້າທີ່ເປັນຕົວແທນ ສຽງໃນຫົວໜ່ວຍຂັ້ນພະຍາງ, ລຳດັບໜ້ງສມີທ້ງຄືກັບ ແລະຕ່າງຈາກລຳດັບສຽງໃນຫົວໜ່ວຍນັ້ນ. ເວົ້າ ແນວໜຶ່ງ, ລຳດັບອັກສອນໃນພະຍາງເວົ້າ ແລະພະຍາງຂຽນມີທ້ງຄືກັນ ແລະບໍ່ຄືກັນ, ນັບທ້ງຈຳນວນ ຂອງລຳດັບອີກດ້ວຍ. ຫາກວ່າພະຍາງໃດມີສະຫຼະຕົວໃດໜຶ່ງໃນຈຳນວນສະຫຼະຕໍ່ໄປນີ້ຄື xะ-xา, x̊-x̊, x̊-x̊, x̯-xู, x̊ อะ-x̊ อ, x̊ (11 ຕົວ) ເປັນຈອມສຽງ, ລຳດັບອັກສອນໃນພະຍາງນັ້ນຈະຄືກັນທ້ງໃນເວລາ ເວົ້າ ແລະເວລາຂຽນ, ເຖິງແມ່ນວ່າພະຍາງດັ່ງກ່າວນັ້ນຈະມີຕົວທ້າຍເປັນພະຍັນຊະນະ ຫຼືບໍ່ມີກໍຕາມ. ແຕ່ຫາກວ່າ ພະຍາງໃດມີສະຫຼະຕົວໃດໜຶ່ງໃນຈຳນວນສະຫຼະຕໍ່ໄປນີ້ຄື เxะ-เx, แxะ-แx, โxะ-โx, เx̊-เx̊, เxัยะ-เxย, เx̊ อ-เx̊ อ, เxาะ (13 ຕົວ) ເປັນຈອມສຽງ, ລຳດັບອັກສອນໃນພະຍາງນັ້ນ ເວລາ ເວົ້າກັບຂຽນຈະບໍ່ຄືກັນ. ແນວໃດກໍຕາມ, ຖ້າຫາກວ່າ เxัยะ-เxย, โxะ, เxาะ ເປັນຈອມສຽງໃຫ້ແກ່ ພະຍາງໃດ ແລະພະຍາງນັ້ນມີຕົວທ້າຍເປັນພະຍັນຊະນະ (ຍົກເວັ້ນ ย*, อ*), ລຳດັບອັກສອນໃນ ພະຍາງນັ້ນຊ້ຳພັດຄືກັນທ້ງໃນເວລາເວົ້າ ແລະເວລາຂຽນ.

ບັນຫາທີ່ຍົກຂຶ້ນຂ້າງເທິງນີ້ສ້າງຄວາມສັບສົນບໍ່ໜ້ອຍໃຫ້ແກ່ການຂຽນໜ້ງສລາວ ໂດຍສະເພາະ ແມ່ນກໍລະນີເວົ້າ-ຂຽນບໍ່ຄືກັນ. ກໍລະນີດັ່ງກ່າວນີ້ ໃນເວລາເວົ້າ ລຳດັບສຽງໃນຫົວໜ່ວຍກໍເລີ່ມດ້ວຍ

ສຽງຕົ້ນ ແລ້ວເລື່ອນໄປຫາຈອມສຽງ ແລະສຽງທ້າຍ (ສຽງຕົ້ນ→ຈອມສຽງ→ສຽງທ້າຍ); ແຕ່ເວລາຂຽນ ລຳດັບໜັງສືຊ້ຳພັດຕ່າງ ເພາະໜັງສືສະຫຼະທີ່ເຮັດໜ້າທີ່ເປັນຈອມສຽງມີທີ່ຕັ້ງບ່ກົງກັບລຳດັບສຽງເວົ້າ. ຍິ່ງກວ່ານີ້, ໜັງສືສະຫຼະບາງຕົວຍັງມີຫຼາຍຮູບຕື່ມອີກ ລຳດັບຂຽນກໍຍິ່ງມີຈຳນວນເພີ່ມຂຶ້ນ.

ລຳດັບຄືກັນ

	ເວົ້າ			ຂຽນ			
	ຕົ້ນ	ຈອມ	ທ້າຍ	1	2	3	4
ປີ	p	i:	i:	ປ	◌ິ		
ງູ	ŋ	u:	u:	ງ	◌ู		
ທາງ	th	a:	ŋ	ທ	າ	ງ	
ອອກ	ʔ	ɔ:	k	ອ	ອ	ກ	
ຫວານ	v	a:	n	ຫ	ວ	າ	ນ

ລຳດັບບໍ່ຄືກັນ

	ເວົ້າ			ຂຽນ				
	ຕົ້ນ	ຈອມ	ທ້າຍ	1	2	3	4	5
ແພ	ph	ɛ:	ɛ:	ແ	ພ			
ເຮ	h	ə	ə	ເ	ຮ	◌ ◌		
ເຄີຍ	kh	ə:	i	ເ	ຄ	◌ ◌	ຍ	
ເປັນ	p	e	n	ເ	ປ	◌ ◌	ນ	
ເມືອງ	m	ɯ:ə	ŋ	ເ	ມ	◌ ◌	ອ	ງ

ຕາງລາງເທິງນີ້ບ່ງຊີ້ວ່າ ເວລາເວົ້າ ຫົວໜ່ວຍໜຶ່ງໃນພາສາລາວມີວິວັດການຕົກແຕ່ງສຽງສາມ ຂັ້ນຕອນ ຫຼືສາມລຳດັບ (ສຽງຕົ້ນ→ຈອມສຽງ→ສຽງທ້າຍ); ແຕ່ເວລາໃຊ້ໜັງສືແທນສຽງ ລຳດັບຊ້ຳພັດຕ່າງ. ປາກົດການນີ້ຖືເປັນເລື່ອງປົກກະຕິ ເພາະໜັງສືມີຂໍ້ຈຳກັດຫຼາຍດ້ານ. ບັນຫາທີ່ສຳຄັນແມ່ນ ເມື່ອຂຽນໜັງສືແທນສຽງຫົວໜ່ວຍໃດໜຶ່ງ ຕ້ອງປະຕິບັດຕາມລຳດັບຂອງໜັງສື; ບ່ຄວນປະຕິບັດຕາມລຳດັບຂອງສຽງເວົ້າ. ໃນທຳນອງດຽວກັນ, ເວລາອ່ານ-ເວົ້າຫົວໜ່ວຍໃດໜຶ່ງ ກໍຕ້ອງປະຕິບັດຕາມລຳດັບຂອງສຽງ; ບ່ຄວນປະຕິບັດຕາມລຳດັບຂອງໜັງສືເຊັ່ນດຽວກັນ.

ເອກະສານອ້າງອີງ

ຄຳຮຸ່ງ ແສນມະນີ 2001, *ທິດສະດີພາສາ*, ພາກວິຊາພາສາລາວ-ວັນນະຄະດີ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ.

ສີສະເຫວີຍ ສຸວັນນີ 1995, "ບັນຫາພາສາສາດ" ໃນ *ກອງປະຊຸມໂຕະມົນວິທະຍາສາດກ່ຽວກັບພາສາລາວ*, ສະຖາບັນຄົ້ນຄວ້າວັດທະນະທຳ, ກະຊວງຖະແຫຼງຂ່າວ ແລະວັດທະນະທຳ, ໜ້າ 72-82.

—— 2004. *ວັດຈະນານຸກົມພາສາປາລີ-ລາວ*, ໂຄງການພັດທະນາວັດຈະນານຸກົມປາລີ-ລາວ, ນະຄອນຫຼວງວຽງຈັນ.

ສີລາ ວິລະວົງ, ມະຫາ 2001, *ປະຫວັດສາດລາວ ແຕ່ບູຮານເຖິງ 1946*, ຫໍສະໝຸດແຫ່ງຊາດ, ວຽງຈັນ.

—— 2549[2005/6], *ວັດຈະນານຸກົມພາສາລາວ*, ສະບັບປັບປຸງໃໝ່,ພິມເທື່ອທີສາມ, ດອກເກດການພິມ.

ສີວຽງແຂກ ກອນນິວົງ 2005. *ວັດຈະນານຸກົມພາສາລາວ*, ກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ ແລະວັດທະນະທຳ.

ສຳລິດ ບົວສີສະຫວັດ 1995, "ບາງທັດສະນະກ່ຽວກັບພາສາລາວໃນປັດຈຸບັນ" ໃນ *ກອງປະຊຸມໂຕະມົນວິທະຍາສາດກ່ຽວກັບພາສາລາວ*, ສະຖາບັນຄົ້ນຄວ້າວັດທະນະທຳ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ໜ້າ 119-124.

ທອງຄຳ ອ່ອນມະນີສອນ 2008. *ວັດຈະນານຸກົມພາສາລາວ*, ສະບັບປັບປຸງໃໝ່, ພິມເທື່ອທີສອງ, ຫໍສະໝຸດແຫ່ງຊາດ.

ທອງເພັດ ກິ່ງສະດາ 1995, "ບັນຫາຕົວ 'ຣ' ໃນພາສາລາວ" ໃນ*ກອງປະຊຸມໂຕະມົນວິທະຍາສາດກ່ຽວກັບ ພາສາລາວ*, ສະຖາບັນຄົ້ນຄວ້າວັດທະນະທຳ, ກະຊວງຖະແຫຼງຂ່າວ ແລະວັດທະນະທຳ, ໜ້າ103-116.

ບົວແກ້ວ ບຸນສີໃສ 1980. *ພາສາສາດ: ປາລີ-ສັນສະກິດ*, ພະແນກວັນນະຄະດີ-ພາສາສາດ, ມະຫາວິທະຍາໄລສ້າງຄູວຽງຈັນ.

ບົວລີ ປະພາພັນ ແລະຄະນະ 2001. *ພາສາລາວສຳລັບວິທະຍາໄລວິທະຍາສາດພື້ນຖານ*, ພາກວິຊາພາສາລາວ-ວັນນະຄະດີ, ມະຫາວິທະຍາໄລແຫ່ງຊາດ.

ບົວລີ ປະພາພັນ ແລະ ບຸນຍໍ ພິມມະບຸດ 1998. *ພາສາລາວ III ສຳລັບໂຮງຮຽນສ້າງຄູລະບົບ 11+3 ປີທີ II*, ສູນພັດທະນາຄູ, ກະຊວງສຶກສາ.

ບົ່ງ ສຸວັນນະວົງ 1970, *ອັກຂະຫຼະວິທີ*, ພິມຄັ້ງທີສາມ, ໂຮງພິມລາວໃໝ່.

ບຸນຍົກ ແສນສູນທອນ 1995, "ຄຳເຫັນກ່ຽວກັບພາສາສາດແລະວັນນະຄະດີລາວ" ໃນ *ກອງປະຊຸມໂຕະມົນວິທະຍາສາດກ່ຽວກັບພາສາລາວ*, ສະຖາບັນຄົ້ນຄວ້າວັດທະນະທຳ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ໜ້າ 98-100.

ບຸນມີ ເທບສີເມືອງ 2001. *ສັງລວມເນື້ອໃນສິລາຈາລຶກຂອງພະເຈົ້າອະນຸວົງ ກ່ຽວກັບການສ້າງວັດສີສະເກດ ນະຄອນຫຼວງວຽງຈັນ*, ໂຮງພິມດາວວິໄລ.

ພູມີ ວົງວິຈິດ 1967. *ໄວຍາກອນລາວ*, ພິມຄັ້ງທີໜຶ່ງ, ພະແນກສຶກສາສູນກາງ.

ລາຊະບັນດິຕະສະພາລາວ 2515 [1972], *ໄວຍາກອນລາວພາກທີໜຶ່ງ-ອັກຂະຫຼະວິທີ*, ປາກປ່າສັກການພິມ.

ຫໍພະສະໝຸດປະເທດລາວ 2478 [1935], *ໄວຍາກອນລາວ (1) ອັກຂະຫຼະວິທີ*, [ຫໍພະສະໝຸດປະເທດລາວ].

ອ່ອນແກ້ວ ນວນນະວົງ ແລະຄະນະ 2000, *ໄວຍາກອນລາວປັດຈຸບັນ-ອັກຂະຫຼະວິທີ*, ພິມຄັ້ງທີໜຶ່ງ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ.

ເຄົ້າກຳເນີດໂຕໜັງສືລາວ

ສືບສາວຕາມຮູບລັກສະນະ ແລະຫຼັກການຂຽນໂຕໜັງສື

ໂດຍ ບົວລີ ປະພາພັນ

The Origins of the Lao Writing System
Evidence from Character Shapes and Methods of Writing[1]

(Summary)

The purpose of this paper is to investigate the proplem of the origins of the Lao Writing system through an examination of comparative evidence from the other similar scripts. It is generally agreed by scholars that the origins of the alphabets that we know today as Lao, Thai, khmer, Burmese, Mon, and so on, are from Indic sources. However, few agree on the actual pathways of dissamination from these sources to their present form. I am especially concerned here with the origins of the Black Tai, Red Tai, White Tai, Lanxang, and Siamese alphabets. These I will refer to as the Tai Group 1 writing systems. In terms of ultimate origins, the arguments may be summed up as followes :

Some say the Indic source was Sanskrit while others maintain it was Pali. And, for the Tai group1 systems, some say it evolved gradually from the Indic source, and others that they are all direcly descended from the alphabet of King Ramkhamhaeng of Sukhothai.Maha Sila Viravong sugguested that Sanskrit (Nagari) writing arrived in Laos from the north in the form of Mahayana Bhuddhist texts - this is the origin most prefered by intellectuals in Laos todays. For them, it seems highly unlikely that one man sat down and created the Sukhothai alphabet without having had exposure to other Tai - Thai alphabets on which to base his own. But at some point, these arguments all come down to a matter of one chooses to believe, rather than scientific evidence. The first Lao grammar, written in 1935, states that the Lao writing system came from Pali along with Hinayana Buddhist doctrine, and that it is based on early Khmer and Mon alphabets.This is the assumption made by Houmphanh Rattanavong in his article on the Qui Chau alphabet that is written top - to - buttom, right - to - left. Yet another theory, based on Qui chau alphabet also, is that the Lao alphabet derived from the Kharosti alphabet of northern India which was written from right to left, too.

The alphabets of the southwestern Tai groups fall into two main groups. Those that originate in the north that are often said to be based on Khmer (including Lao Thai, Black, Red and White Tai) and those that are based on Pali alphabet via Sri Lanka (including Lanna, Lue and the Lao Tham). I will not have time to go over all of the details in my presentation, but I can provide some brief explanations of the tables in the appendix of the paper.

Table 1 compares some Lao characters with corresponding characters in Qui Chau and White, Red and Black Tai (the later are some time refered to as the " rat-tailed " characters because of their shape). While differences exist, there is no way from just looking at the characters to determine which writing systems might be older. This is also true when we add the Sukhothai characters as in table 2.

---

[1] The Origin of the Lao Script :

If however we add the Indic Brahmi, Pallava, Devanagari alphabets which we know are older, as we have done in Table 3 the results are interesting. The rat-tailed alphabets are clearly more similar to the Devanagari than they are to Sukhothai, in 99, 05 % of the cases. This observation clearly weakens the idea that the rat-tailed alphabets were the product of Sukhothai influence.

Therefore, it may be concluded that the evedence so far opens the possibility that the origin of the Tai Group 1 scripts may be more directly linked to India than has previously been supposed, and for certain, the writing system of King Ramkhamhaeng was not the model on which the alphabets of this groups are based. There is, however, much more work and research that needs to be carried out before we have a definitive answer as to the origins of the Lao writing system.

ເຄົ້າກຳເນີດໜັງສືລາວ:

ສືບສາວຕາມຮູບລັກສະນະ ແລະຫລັກການຂຽນໂຕໜັງສື

(ສ່ວນໜຶ່ງຂອງບົດຂຽນນີ້ ແມ່ນໄດ້ສຳມະນາປະກອບ ປະມວນວິຊາວິຊາອັກຂະລະວິທຍາລາວ ທີ່ໄດ້ນຳສະເໜີເວລາສອນ ປະມວນວິຊາດັ່ງກ່າວ ແກ່ນັກສຶກສາປີທີສອງ ໃນສົກສຶກສາ 2002-2003. ແລະ, ມັນ ກໍ ແມ່ນສ່ວນໜຶ່ງໃນບົດ: ສັງເຂບ ວິວັດທະນາການອັກສອນ ແລະ ຫລັກພາສາລາວ).

ບົດຄວາມນີ້ ປະສົງຈະຕັ້ງບັນຫາ ພິຈາລະນາຫາແຫລ່ງເຄົ້າ ແລະ ຄວາມເກົ່າແກ່ຂອງຕົວ ອັກສອນທີ່ເປັນຕົ້ນເຄົ້າຂອງອັກສອນລາວ ບົນພື້ນຖານສຶກສາວິວັດທະນາການຮູບອັກສອນ ຜ່ານ ການສົມທຽບກັນລະຫວ່າງອັກສອນທີ່ກ່ຽວຂ້ອງ.

I. **ອັກສອນລາວ** ກໍຄືຫລາຍອັກສອນ ໃນຕະກຸນໄຕ ຍັງເປັນບັນຫາທີ່ບໍ່ເອກະພາບ ໃນລາຍ ລະອຽດ ກ່ຽວກັບທີ່ມາ. ກ່າວຄື ເຖິງວ່າ ທຸກຄົນເອກະພາບກັນວ່າ ພວກມັນ ໄດ້ເຄົ້າກຳເນີດມາຈາກ ອັກສອນອິນເດຍ; ແຕ່ ບັນຫາຕັ້ງຂຶ້ນວ່າ ຈາກເຄົ້າໃດແທ້ ລະຫວ່າງ ສັນສະກິດ ແລະບາລີ. ເຮັ່ງໄປ ກວ່ານັ້ນ ກໍແມ່ນບັນຫາທີ່ວ່າ ອັກສອນໃດເປັນຕົ້ນເຄົ້າ ຫລືເກົ່າແກ່ກວ່າໝູ່ ໃນບັນດາກຸ່ມຕະກຸນໄຕ. ອັກສອນຕະກຸນໄຕ ມີຫລາຍຮູບແບບ. ແຕ່ ທີ່ກ່າວເຖິງນີ້, ເຮົາໝາຍເອົາສະເພາະແຕ່ ອັກສອນໄຕກຸ່ມ ໜຶ່ງອັນມີ ໄທດຳ, ໄທແດງ, ໄທຂາວ, ໄທລ້ານຊ້າງ ແລະໄທສະຫຍາມ. ເພື່ອສະດວກໃນຕໍ່ໄປ, ອັກສອນເຫລົ່ານີ້ຈະເອີ້ນໂຮມກັນວ່າ **ອັກສອນຕະກຸນໄຕ1**.

ຄວາມຄິດເຫັນກ່ຽວກັບບັນຫານີ້ ພໍສະຫລຸບໄດ້ພໍເປັນດ້າວດັ່ງນີ້:

ກ່ຽວກັບທີ່ມາ, ມີສອງທັດສະນະ. ທັດສະນະທີໜຶ່ງ ເຫັນວ່າ ມັນໄດ້ເຄົ້າມາຈາກສັນສະກິດ, ແລະອີກທັດສະນະໜຶ່ງວ່າໄດ້ມາຈາກບາລີ. ທີ່ວ່າດ້ວຍເຄົ້າອັກສອນຕະກຸນໄຕ1 ກໍມີສອງທັດສະນະ. ພວກໜຶ່ງເຫັນວ່າ ອັກສອນເຫລົ່ານີ້ດັດຈາກອັກສອນອິນເດຍແບບຄ່ອຍເປັນຄ່ອຍໄປ. ອີກພວກໜຶ່ງ ກໍ ເໝົາເອົາວ່າ ອັກສອນພໍ່ຂຸນລາມຄຳແຫງ ເປັນຕົ້ນຕະກຸນຂອງອັກສອນຕະກຸນໄຕ1 ທັງມວນ.

ກ. ທີ່ມາ

ກ.1. ໄດ້ເຄົ້າຈາກອັກສອນເທວະນາຄີ (ສັນສະກິດ).

ປະຫວັດສາດລາວ ຍອມຮັບວ່າ ລາວເຄີຍໄດ້ຮັບອິດທິພົນທາງພຸດທະສາດສະໜາ ຜ່ານຈີນ ແລະອິນເດຍເໜືອ. ອາຈານມະຫາສີລາ ວີລະວົງ (10) ຈຶ່ງມີຄຳເຫັນວ່າ ອັກສອນລາວໄດ້ແບບມາ ຈາກອັກສອນສັນສະກິດ. ທ່ານເຫັນດັ່ງນັ້ນ ກໍເພາະສາດສະໜາພຸດ ທີ່ເຂົ້າສູ່ເມືອງຈີນນັ້ນ ເປັນພຸດ ລັດທິມະຫາຍານ. ພຸດທະສາດສະໜາລັດທິນີ້ ໄດ້ນຳໃຊ້ອັກສອນສັນສະກິດ ບັນທຶກພຸດທະພິດ ແລະ ສາສະນະກິດອື່ນໆ. ມະຕິນີ້ ໄດ້ຮັບຄວາມເຫັນດີເຫັນພ້ອມກັນຫລວງຫລາຍ ໃນໝູ່ປັນຍາຊົນລາວ ໂດຍສະເພາະນັກປາດທາງສາດສະໜາ.

ກ.2. ໄດ້ເຄົ້າຈາກບາລີ

ໃນປຶ້ມໄວຍາກອນລາວ ຫົວທຳອິດທີ່ພິມອອກ ໃນປີ 1935, ມີຕອນໜຶ່ງໄດ້ເວົ້າວ່າອັກສອນ ລາວ ໄດ້ເຄົ້າມາຈາກອັກສອນບາລີ. ເຫດຜົນງ່າຍໆ ກໍເຫັນຈະແມ່ນກຸ່ມຕະກຸນໄຕທີ່ມີຄວາມຈະເລີນ ຮຸ່ງເຮືອງ ກໍສະໄໝໄດ້ຮັບອິດທິພົນທາງພຸດທະສາດສະໜາ ລັດທິຫີນະຍານ ແລະໄດ້ພົວພັນກັບກຸ່ມ ເຊື້ອຊາດຕ່າງໆທັງທີ່ເປັນມອນ, ຂະແມ ໃນຂົງເຂດນີ້. ໃນຫວ່າງບໍ່ດົນມານີ້, ບົດຄວາມ: " ອັກສອນ ກຸຍເຈົາ " ຂອງທ່ານທຸມພັນ ລັດຕະນະວົງ ລົງໃນວາລະສານວິທະຍາສານ "ມໍລະດົກລ້ານຊ້າງ"(14) ກໍໄດ້ສະໜັບສະໜູນຄວາມເຫັນນີ້ຕື່ມ ຢ່າງໜ້າຄິດ.

ນອກຈາກນັ້ນ ກໍຍັງມີອີກທັດສະນະໜຶ່ງ ທີ່ບໍ່ເຫັນຕາມສອງທັດສະນະທີ່ກ່າວມາ. ອີງໃສ່ຮູບ ແບບການຂຽນ ຂອງອັກສອນກຸຍເຈົາ, ພວກເພິ່ນ ເຫັນວ່າ ອັກສອນຕະກຸນໄຕ1 ໄດ້ຕົ້ນມາຈາກ ອັກ ສອນຂະໂລດສະຖີ ບໍ່ແມ່ນມາຈາກສັນສະກິດ. ອັກສອນຂະໂລດສະຖີ ແມ່ນອັກສອນອິນເດຍຝ່າຍ ເໜືອ ແລະມີແບບການຂຽນຈາກຊ້າຍຫາຂວາ. ອາຈານ ບົວແກ້ວ ບຸນສີໃສ ອະດີດອາຈານສອນ ສະ ຖາບັນການສຶກສາພຸດທະສາດສະໜາ, ມະຫາວິທະຍາໄລສ້າງຄູວຽງໄຊ ແລະວຽງຈັນ ໄດ້ສະໜັບ ສະໜູນທິດສະດີນີ້ ໂດຍໄດ້ຂຽນລົງໄວ້ໃນຕຳລາສອນປະຫວັດຕົວອັກສອນຂອງເພິ່ນ(13).

ຂ. ອັກສອນດັ້ງເດີມຂອງຕະກຸນໄຕ

ອັກສອນທີ່ມີລັກສະນະເປັນຕົວແທນ ໃນວົງຕະກຸນໄຕສາຍຕາເວັນຕົກກຳໃຕ້ ມີຢູ່ສອງຮູບ ແບບໃຫຍ່ໆ. ກຸ່ມໃຫຍ່ທີໜຶ່ງ ແມ່ນພວກທີ່ໄດ້ແບບຈາກອິນເດຍຝ່າຍເໜືອ ອາດຜ່ານຈີນ ຫລືບໍ່ກໍຂະ ແມ. ແລະ ອີກພວກໜຶ່ງ ແມ່ນ ໄດ້ແບບຜ່ານສີລັງກາ, ພະມ້າແລະມອນ. ແບບທີໜຶ່ງ ໄດ້ແກ່ ອັກສອນ ຂອງພວກໄທດຳ, ໄທແດງ, ໄທຂາວ, ໄທລາວ ແລະໄທສະຫຍາມ... ແບບທີສອງ ໄດ້ແກ່ອັກສອນ ຍວນ(ໂຕເມືອງ), ລື້, ຕົວທຳລາວ...

ໃນບົດນີ້ ເຮົາຈະສຶກສາສະເພາະ ຮູບແບບກຸ່ມທີໜຶ່ງທໍ່ນັ້ນ. ໃນກຸ່ມນີ້ ກໍມີຄຳເຫັນ ແຕກຕ່າງ ກັນກ່ຽວກັບອັກສອນເຄົ້າ. ໂດຍສະເພາະຢ່າງຍິ່ງ ແມ່ນພາຍຫລັງການຄົ້ນພົບ ສີລາຈາລຶກຂອງພໍ່ຂຸນ ລາມຄຳແຫງ, ນັກພາສາສາດທີ່ມີຊື່ສຽງ ສ່ວນໃຫຍ່ເຫັນວ່າ ອັກສອນພໍ່ຂຸນລາມຄຳແຫງ ເປັນຕົ້ນກຳ ເນີດຂອງອັກສອນຕະກຸນໄຕ ນັບທັງໃນສ່ວນທີ່ເປັນອັກສອນຝັກຂາມ, ໄທນ້ອຍ ແລະລາວລ້ານຊ້າງ ຕະຫລອດເຖິງອັກສອນອື່ນໆທີ່ໄດ້ອິດທິພົນຕໍ່ຈາກອັກສອນເຫລົ່ານີ້. ຄົນລາວທີ່ສຶກສາ ຕາມມູນເຊື້ອ

ບໍ່ພຽງແຕ່ບໍ່ເຫັນດີກັບທັດສະນະດັ່ງກ່າວ ຫາກຍັງມີຄວາມຮູ້ສຶກບໍ່ສະບາຍໃຈນຳ. ເຂົາເຈົ້າຕ່າງກໍເບະ ສິບວ່າ ບໍ່ມີໃຜດອກ ຈະວິເສດວິໂສຄິດແຕ່ງອັກສອນອອກມາເປັນລະບົບບາດດຽວໄດ້ ແລະນັ້ນເປັນ ພຽງແນວຄິດລັດທິໄທໃຫຍ່. ໃນການລົມ, ໃນການປະກອບຄຳເຫັນ ຢູ່ໃສ, ເວລາໃດ, ພວກເຮົາກໍມັກ ໄດ້ຟັງໄດ້ຍິນແນວນັ້ນ. ຄວາມຄິດເຫັນເຫລົ່ານັ້ນ ສ່ວນໃຫຍ່ເປັນຄວາມເຫັນທີ່ເວົ້າແລ້ວ ກໍແລ້ວໄປ, ບໍ່ ໄດ້ບັນທຶກຈົດແຕ້ມໄວ້. ເມື່ອພວກເພິ່ນຕາຍໄປ, ຄວາມຄິດນັ້ນກໍຕາຍໄປນຳ. ນອກນັ້ນ, ມັນຍັງເປັນ ພຽງຄວາມຄິດໃນຄວາມເປັນຊາດ ແລະຄວາມເຊື່ອດັ້ງເດີມຫລາຍກວ່າ ຄວາມເປັນວິທະຍາສາດ ເຊິ່ງ ຍາກແກ່ການເອົາຊະນະ ຫລືສ້າງຄວາມເຊື່ອໃຫ້ນັກພາສາສາດຍຸກນີ້. ຄົນລາວເອງ ທີ່ສະແດງຄວາມ ຄິດເຫັນອອກເປັນລາຍລັກອັກສອນ ມີພຽງບໍ່ທ່ໃດຄົນ; ແລະ ພວກເພິ່ນ ຕ່າງກໍສະແດງຄວາມບໍ່ເຫັນ ພ້ອມ ໃນລະດັບແຕກຕ່າງກັນຕໍ່ບັນຫາດັ່ງກ່າວ.

II. ສຶກສາເບິ່ງຄວາມອາດເປັນໄປໄດ້ເຖິງທີ່ມາແລະອັກສອນເຄົ້າຂອງອັກສອນລາວ.

ຜົນງານການສຶກສາ ແລະ ຄົ້ນພົບອັກສອນຕະກຸນໄຕເຜົ່າຕ່າງໆ ໃນພາກໃຕ້ຈີນ, ພາກເໜືອ ລາວ ແລະຫວຽດນາມ ໄດ້ສ້າງໃຫ້ພວກເຮົາ ເປີດສາຍຕາກວ້າງໄກອອກ. ການຄົ້ນພົບ ແລະນຳເອົາ ອັກສອນອັກສອນໄທດຳ, ໄທແດງ, ໄທຂາວ ມາສຶກສາພ້ອມທັງໃຫ້ທັດສະນະໄວ້ນັ້ນເປັນນິມິດໝາຍ ທີ່ສຳຄັນ; ກ່ຽວກັບທີ່ມາຂອງພວກມັນ, ນັກຄົ້ນຄວ້າສ່ວນໃຫຍ່ເຫັນວ່າ ພວກມັນໄດ້ຮັບອິດທິພົນ ຈາກ ອັກສອນລ້ານຊ້າງ; ເຊິ່ງອັກສອນລ້ານຊ້າງ ພັດໄດ້ຮັບອິດທິພົນຈາກອັກສອນສຸໂຂໄທ ອີກຕໍ່ໜຶ່ງ. ແລະ ໂດຍອາໄສຜົນງານການຄົ້ນພົບ ແລະທັດສະນະຕ່າງໆຂອງພວກເພິ່ນ, ຄຳຄິດເຫັນໃນລັກສະນະລອງ ຄິດ ທີ່ນຳມາສະເໜີມື້ນີ້ຈຶ່ງປາກົດເກີດມີຂຶ້ນ. (ຫລັກການຄິດງ່າຍໆ ຄືສຶກສາເບິ່ງວິວັດທະນາການໂຕ ອັກສອນ ແລະຫລັກການສະກົດຄຳ, ພ້ອມທັງ ລັກສະນະສະເພາະອື່ນໆປະກອບກັນ ນຳມາສົມທຽບ ບົນພື້ນຖານຂໍ້ມູນທີ່ມີໃນມື ແລະພໍຄວ້າເຖິງໄດ້).

ກ. ແຫລ່ງກຳເນີດອັກສອນ ແລະລັກສະນະຂອງມັນ

ເມື່ອດຳເນີນການສຶກສາປະຫວັດອັກສອນໃນລາວ, ສິ່ງສະດຸດຕາອັນໜຶ່ງ ແມ່ນຄວາມໃກ້-ໄກ ຂອງຮູບອັກສອນທີ່ເປັນເປົ້າໝາຍ ກັບອັກສອນເປັນແຫລ່ງທີ່ມາ. ບາດກ້າວທຳອິດ ແມ່ນສຶກສາ ຮູບອັກສອນທີ່ເຫລືອຫລໍໃນເຜົ່າໄຕດຳ, ໄທແດງ, ໄທຂາວທີ່ນັກຄົ້ນຄວ້າຮຸ່ນກ່ອນສະເໜີໄວ້.ໃນການ ລອງເຮັດ ຕາຕະລາງປຽບທຽບຮູບລັກສະນະຕົວອັກສອນໃນກຸ່ມຕະກຸນໄຕ ທີ່ບໍ່ມີການພັດທະນາໂຕ ຫລາຍ (ນອກຈາກໂຕອັກສອນລາວ ແລະໄທ), ມັນໄດ້ຊ່ອຍໃຫ້ພວກເຮົາເຫັນລັກສະນະຮ່ວມ ແລະ ລັກສະນະສະເພາະ ຂອງພວກມັນ. (ເບິ່ງຕາຕະລາງ 1 ໃນພາກຜະໜວກ).

ສັງເກດຈາກຕາຕະລາງ, ພວກເຮົາເຫັນວ່າ ທັງຮູບຮ່າງແລະລັກສະນະການຂຽນ ມີອັນແຕກ ຕ່າງກັນໃນດ້ານຄວາມລະອຽດອ່ອນແຫ່ງພັດທະນາການ. ອາດຈາກລັກສະນະອັນນີ້ ທ່ານ ຊອກ ເຊ ແດັດ ຈຶ່ງກ່າວວ່າ " ຖ້າສັງເກດລັກສະນະຕົວອັກສອນໄຕໃນຕົງແກງແລ້ວ ປາກົດວ່າ ພວກເຂົາເອົາມາ ຈາກຕົວອັກສອນລ້ານຊ້າງ ແຕ່ຮູບແບບຜ່ຽນໄປ ແລະຂີ້ຮ້າຍລົງຫລາຍ "(14. ໜ.11). ຢ່າງໃດກໍ

ຕາມ, ລຳພັງອີງໃສ່ແຕ່ພັດທະນາການ, ມັນກໍເປັນຍາກທີ່ຈະຊີ້ຊັດລົງໄປວ່າ ໃຜເກີດກ່ອນໃຜໄດ້ ຄືບໍ່ສາມາດຈະຕັດສິນການເກີດກ່ອນຫລັງໄດ້ຢ່າງເດັດຖານ (ພຸດທະສາດສະໜາຮຸ່ງເຮືອງຢູ່ສີລັງກາ, ໄທ ເວລານີ້ ກໍບໍ່ໝາຍວ່າ ບ່ອນທັ້ນເປັນບ່ອນໃຫ້ກຳເນີດ ພຸດທະສາດສະໜາ, ຫລືເວົ້າວ່າຊາວອິນເດຍໄດ້ ຮັບອິດທິພົນພຸດທະສາດສະໜາຈາກໄທ). ພວກເຮົາເຫັນວ່າ ຄວາມເຫັນຂອງທ່ານ ເຊແດັດ ນັ້ນ ຈະ ເປັນການສະຫລຸບໄວເກີນໄປໂພດບໍ ?

ເມື່ອເປັນແນວນັ້ນ ພວກເຮົາກໍບໍ່ໄດ້ຫລຸດລ່ອຍໃນຄວາມພະຍາຍາມ. ທິນທາງອອກໜຶ່ງ ກໍຄື ເດີນຕາມຮອຍປະຫວັດສາດ. ໃນປະຫວັດສາດປະຫວັດຕິອັກສອນຕະກຸນນີ້, ພວກນັກປາດອາຈານ ຫລາຍທ່ານ ໄດ້ເຫັນເປັນແລວດຽວວ່າອັກສອນສຸໂຂໄທ ເປັນຕົ້ນແບບ. ພວກເຮົາໄດ້ສ້າງຕາຕະລາງ ຂຶ້ນອີກຕາຕະລາງໜຶ່ງເພື່ອຕິດຕາມຫາເຄົ້າ. ຕາຕະລາງຕໍ່ໄປນີ້ເປັນຕາຕະລາງທີ2 ທີ່ຍົກຂຶ້ນມາເພື່ອ ທຽບຫາຄວາມເກົ່າແກ່ຂອງອັກສອນ (ເບິ່ງ ຕາຕະລາງ 2 ຢູ່ ພາກຜະໜວກ).

ສຶກສາຈາກຕາຕະລາງ, ເຮົາເຫັນວ່າ:

- ດ້ານປະລິມານ ອັກສອນໄຕ1 ກັບ ອັກສອນສຸໂຂໄທ ມີອັນຕ່າງກັນ: ມີໃນກຸ່ມນີ້, ບໍ່ມີໃນ ກຸ່ມອື່ນ ຫລືກົງຂ້າມ ເຊັ່ນ ບໍ່ມີ ທ ອຸດທະ, ບໍ່ມີ ຣ ໃນສຸໂຂໄທ; ແຕ່ມີໃນ ຫາງໜູ ເປັນຕົ້ນ.

- ດ້ານພັດທະນາການຂອງຮູບອັກສອນ, ຮູບອັກສອນ ມີທັ້ງອັນລະມ້າຍ ແລະອັນແຕກຕ່າງ ກັນ, ແຕ່ຕ່າງຫລາຍກວ່າຄ້າຍ. ຮູບປະລັກຂອງອັກສອນສຸໂຂໄທ ແລະອັກສອນຝັກຂາມມີລັກສະນະ ພັດທະນາກ້າວໜ້າກວ່າອັກສອນຫາງໜູ.

ສິ່ງເຫລົ່ານີ້ສະແດງໃຫ້ເຫັນເຖິງຄວາມສຳພັນ, ການສືບທອດ ແລະຄວາມເປັນເອກະລາດຕໍ່ ກັນ. ແຕ່ ກໍຈາກສອງຈຸດທີ່ກ່າວມາ, ມັນຈຶ່ງບໍ່ໄດ້ໃຫ້ເຫດຜົນຕັດສິນໄດ້ວ່າ ອັນໃດເກີດກ່ອນ ອັນໃດມາ ຕາມຫລັງ ຄືກັບການພິຈາລະນາຕາຕະລາງໜຶ່ງ. ອັນທີ່ສຳຄັນກວ່ານັ້ນ ແມ່ນການສົມທຽບນີ້ບໍ່ໄດ້ໃຫ້ ຄວາມກະຈ່າງແຈ້ງຫຍັງແກ່ພວກເຮົາ. ຮູບອັກສອນທີ່ນຳມາປຽບທຽບ ບໍ່ປາກົດຮ່ອງຮອຍຂອງຄວາມ ສືບທອດຈາກຕົວຫລັກທຽບ. ໃນທາງກົງຂ້າມ, ມັນ ພັດແຖມກໍ່ໃຫ້ເຮົາເກີດມີແນວຄິດທາງປີ້ນ ຫລື ເຫັນກັບກັນ. ເມື່ອເສຍຫວັງ ແລະ ພົບທາງຕັນ, ພວກເຮົາ ເຫັນວ່າ ທາງອອກສຸດທ້າຍ ກໍເຫັນມີແຕ່ ກັບຄືນສູ່ຕົ້ນເຄົ້າອັນເປັນທີ່ມາເທື່ອທຳອິດຂອງພວກມັນແທ້ໆ ຈຶ່ງພໍທີ່ຈະຊ່ອຍເກື້ອຍແກ້ບັນຫາ. ນັ້ນຄື ນຳໄປປຽບທຽບກັບອັກສອນອິນເດຍ ທັ້ງທີ່ເປັນ ພາມີ, ປັນລະວະ ແລະເທວະນາຄີ (ເບິ່ງການສົມທຽບ ແລະຄຳເຫັນປະກອບ: ຕາຕະລາງ 3 ຢູ່ພາກຜະໜວກ).

ພາຍຫລັງສຶກສາຕາຕະລາງທີ 3, ມີອັນຄວນສັງເກດດັ່ງນີ້:

- ໃນອັກສອນທີ່ອ່າວຄ້າຍກັນລະຫວ່າງອັກສອນລາວຄຳແຫງຫລືແມ່ນແຕ່ລິໄທ ກັບຫາງໜູ ທີ່ ຕ່າງອັນຕ່າງມີນັ້ນ, ອັກສອນທີ່ຄືຫລືຄ້າຍຄືອັກສອນເຄົ້າ (ເທວະນາຄີ)[2] ແມ່ນ ອັກສອນຫາງໜູ. ສັງ ເກດຕື່ມໄປອີກ, ໃນກຸ່ມອັກສອນທີ່ພຽງແຕ່ລະມ້າຍກັນຫລືຄືກັນໜ້ອຍທີ່ສຸດ, ອັກສອນຫາງໜູໂຕໃດ

---

[2] ເບິ່ງຕື່ມໃນ "ສັງເຂບວິວັດທະນາການອັກສອນລາວແລະຫລັກພາສາລາວ" ICT. PROJECT LAO (STEA UNDP) 2005

ທີ່ຕ່າງ ຈາກອັກສອນລາມຄຳແຫງເທົ່າໃດ ພັດແຮ່ງໄປຄືອັກສອນເທວະນາຄີ[3]ຫລາຍເທົ່ານັ້ນ. ຄວາມໜ້າເຊື່ອຖືທີ່ວ່າອັກສອນຕະກຸນໄຕ1 ທັງມວນ ໄດ້ເຄົ້າຈາກອັກສອນສຸໂຂໄທຕາມນັກຄົ້ນຄວ້າຫລາຍທ່ານອ້າງມາໂດຍອີງໃສ່ແຜ່ນປະຫວັດສາດ ບູຮານຄະດີນັ້ນ ເກີດມີອັນຄອນແຄນ. ຄັນບໍ່ມີໂຕທຽບ ອັນຄວາມຄອນແຄນ ກໍຈະບໍ່ມີ. ທຽບເຫັນເປັນອັນຕ່າງ ຍິ່ງເຮັດໃຫ້ເຮົາສົງໄສ ແລະເກີດມີຄວາມເຊື່ອໃນລັກສະນະກົງຂ້າມ.

- ເມື່ອນຳໄປປຽບທຽບກັບແຫລ່ງກຳເນີດຂອງມັນ, ພວກເຮົາເຫັນວ່າ ອັກສອນຫາງໜູ/ໄທດຳ, ໄທແດງ, ໄທຂາວ ມີຄວາມໃກ້ຄຽງກັນຫລາຍ; ລັກສະນະວິວັດການຂອງພວກມັນ ມີອັນປະດິດປັບປຸງນໄປ ຈາກລັກສະນະເດີມ ໜ້ອຍຫລາຍຕາມກໍລະນີ. ແຕ່, ເບິ່ງໂດຍລວມແລ້ວ, ຄວາມແຕກຕ່າງບໍ່ຫລວງຫລາຍທ່ໃດ. ອັກສອນສອນບາງໂຕຂອງຕະກຸນນີ້ ພັດຄືຂອງອິນເດຍສາຍນີ້, ອີກຕະກຸນອື່ນພັດຄືສາຍນັ້ນ. ຈຳນວນ 99,05% ອັກສອນຫາງໜູ ຄ້າຍຄືອັກສອນເທວະນາຄີ, 05% ມີລັກສະນະສົງໄສ. ສ່ວນອັກສອນກຸຍເຈົາ ໃນຈຳນວນພະຍັນຊະນະ 18 ຕົວທີ່ນຳມາທຽບນັ້ນ ມີແຕ່ 11% ໄປຄ້າຍອັກສອນປັນລະວະ. ອິດທິພົນອັກສອນອິນເດຍທີ່ມີຕໍ່ອັກສອນຕະກຸນໄຕແນວນີ້ ກໍເປັນໄປໄດ້ທີ່ອັກສອນອິນເດຍເດີມ ມາພ້ອມກັບອັກສອນອິນເດຍທີ່ກະທົບໂດຍກົງຕໍ່ອັກສອນຕະກຸນໄຕ ທີ່ກຳລັງສຶກສານີ້. ແລະດ້ານໜຶ່ງ, ມັນ ກໍຈະເປັນຂໍ້ມູນໃຫ້ເຮົາສຶກສາເຖິງໄລຍະປະຫວັດສາດອິນເດຍ ທີ່ມີຕໍ່ເຊື້ອຊາດຕະກຸນໄຕ.

ມາຮອດນີ້ ພວກເຮົາໝັ້ນໃຈຫລາຍຂຶ້ນໃນຄວາມເກົ່າແກ່ຂອງອັກສອນຕະກຸນໄຕ1. ຢ່າງໃດກໍຕາມ, ໃນການສຶກສາຫາ ທີ່ມາຂອງອັກສອນນັ້ນ, ພຽງສະເພາະແຕ່ເບິ່ງ ຮູບວິວັດຂອງໂຕອັກສອນຍັງບໍ່ເປັນອັນພຽງພໍເທື່ອ. ບັນຫາອື່ນໆທີ່ກ່ຽວຂ້ອງ ກໍຄວນໄດ້ຮັບການຍົກຂຶ້ນມາພິຈາລະນາປະກອບເຊັ່ນ ເຄື່ອງໝາຍສັນຍະລັກ, ຮູບແບບການສະກົດຄຳແລະອື່ນໆ...ເຫລົ່ານີ້ ກໍໜ້າຈະມີປະໂຫຍດ ໃນການຊ່ອຍສຶກສາບັນຫາ ໃຫ້ພາວະວິໄສຕື່ມ

ຂ. ລັກສະນະທາງອັກຂະລະວິທີ.

ການຮັບອິດທິພົນຈາກອັກສອນອິນເດຍ ບໍ່ສະເພາະແຕ່ຮູບອັກສອນ ຫາກຍັງຮັບເອົາທັງຮູບແບບອັກຂະລະວິທີນຳ. ລັກສະນະດ້ານນີ້ ມີດັ່ງນີ້:

(1). ເຄື່ອງໝາຍ, ໄມ້ ແລະວັນນະຍຸດ

ນອກຈາກອັກສອນແລ້ວ ຍັງມີເຄື່ອງໝາຍອື່ນ ເຊັ່ນໄມ້ x̌ ແທນໃຫ້ສະລະ xะ ; ໄມ້ x̂ ແທນໃຫ້ສະລະ โxะ ໃນເວລາໄປກັບຕົວສະກົດ (xะน = x̌น, โxะน = x̂น)...

ສຳຫລັບວັນນະຍຸດນັ້ນ ບໍ່ປາກົດເຫັນມີໃນອັກສອນກຸ່ມໃດຂອງກຸ່ມທີ່ສະເໜີມາ, ເຫັນແຕ່ອັກສອນວັນນະຍຸດ ຄື ຕົວ ห. ໃຊ້ປະກອບປຸ່ງນສຽງອັກສອນຕ່ຳໃຫ້ເປັນສຽງສູງ (ອັກສອນສູງ).

---

[3] ໂດຍສະເພາະແມ່ນເທວະນາຄີຊີໂລເຫຕີ ເຊິ່ງມີລັກສະນະຫລາຍຢ່າງໃນອັກສອນລາວ : ຮູບລັກສະນະອັກສອນເມື່ອຕັດຄານເທິງອອກ, ຊື່ເອີ້ນອັກສອນເປັນ ກໍ ບໍ່ແມ່ນ กะ (ko ບໍ່ແມ່ນ ka...) ຄືໃນອິນເດຍສາຍອື່ນ.

(2). ຮູບອັກສອນປະສົມ

ອັນເນື່ອງຈາກ ເປັນພາສາວັນນະຍຸດ, ໃນທຸກກຸ່ມທີ່ສະເໜີມາ ແມ່ນ ເປັນເອກະພາບກັນ ໃນ ການສ້າງອັກສອນວັນນະຍຸດທີ່ບໍ່ມີ ໃຫ້ມີ. ການສ້າງຈຳນວນໜຶ່ງແມ່ນນຳເອົາຕົວ *ห* ນຳໜ້າອັກສອນ ຕ່ຳທີ່ບໍ່ມີຄູ່ເປັນອັກສອນສູງ ໃຫ້ກາຍເປັນອັກສອນສູງຄູ່ກັບມັນ. ເມື່ອນຳມາປະສົມກັນ, ຮູບອັກສອນ ຈະເຊື່ອມເຂົ້າກັນ ເຊິ່ງຈະມີຮູບ ດັ່ງນີ້:

ພະຍັນຊະນະທີ່ນຳມາປະສົມ		ຮູບສຳເລັດ			
ພະຍັນຊະນະຕົ້ນ	ພະຍັນຊະນະທ້າຍ	ກຸຍເຈົ້າ	ຫາງໜູ	ໄຫແດງ	ໄຫຂາວ
ห บ ฟ	ฯ ง ว	ห	หน	หง	
	ญ ม	ห	หย	หม	
	น น	ห	หน	หน	
	ร ล ฬ	ห	หร	หล	
	ว ฮ	ห	หว	หฮ	

(3). ການຈັດວາງຕຳແໜ່ງໃນການສະກົດຄຳ

ໃນການສະກົດຄຳນັ້ນ :

- ຕຳແໜ່ງສະລະຈະແຕກຕ່າງກັນຕາມກໍລະນີຄືມີທັງຢູ່ໜ້າ, ຢູ່ຫລັງ, ຢູ່ເທິງ, ຢູ່ໜ້າ-ຫລັງ, ຢູ່ ລຸ່ມ, ຢູ່ເທິງ-ຫລັງ, ຢູ່ໜ້າ-ເທິງ-ຫລັງ. ຕຳແໜ່ງໜ້າມີ ເx ແx ໂx ໄx ໃx, ຕຳແໜ່ງຫລັງ : x̄ x̄ x̄ x̄ x̀, ຢູ່ ໜ້າ-ຫລັງ : ເxะ, ແxะ, ໂxะ, ຢູ່ລຸ່ມ : x̣ x̱, ຢູ່ເທິງ-ຫລັງ xำ, ຢູ່ໜ້າ-ເທິງ-ຫລັງ : ເx̄า.

- ສຳຫລັບໄມ້ ຈະຢູ່ໃນຕຳແໜ່ງເທິງພະຍັນຊະນະຫລັກ.

ຄ. ອັກສອນຫາງໜູ ເປັນອັກສອນຕົ້ນເຄົ້າໜຶ່ງໃນອັກສອນໄຕ1.

ອັກສອນຫາງໜູ ແມ່ນໜຶ່ງໃນອັກສອນໃນຕະກຸນໄຕ1. ອີງຕາມຜົນການສຶກສາເບິ່ງວິວັດການ ອັກສອນ, ອັກສອນຫາງໜູ ເປັນອັກສອນເກົ່າແກ່ອັກສອນໜຶ່ງ. ຄວາມເກົ່າແກ່ສະແດງອອກ:

1. ອັກສອນນີ້ ບໍ່ໄດ້ຮັບອິດທິພົນຈາກອັກສອນສຸໂຂໄທ.

ຄືທີ່ໄດ້ສະເໜີມາ, ພວກເຮົາ ບໍ່ປາກົດພົບເຫັນອິດທິພົນ ຂອງອັກສອນສຸໂຂໄທ ຕໍ່ອັກສອນ ຫາງໜູ ແລະລັກສະນະສືບທອດຂອງອັກສອນຫາງໜູ ຈາກອັກສອນສຸໂຂໄທ ກໍບໍ່ເຫັນຮ່ອງຮອຍ ປາກົດ ເຊິ່ງພໍສັງລວມໃຫ້ເຫັນດັ່ງຕໍ່ໄປນີ້ :

+ ຮູບອັກສອນ, ອັກສອນຫາງໜູ ໃກ້ອັກສອນອິນເດຍບູຮານອັນເປັນທີ່ມາຂອງມັນ ຫລາຍ ກວ່າອັກສອນສຸໂຂໄທ ແລະອັກສອນອື່ນໆທີ່ມີໃນສຸໂຂໄທ, ລາມນາ. ຂັ້ນຕອນໃນການສືບສ້າງຄືນ

ຫາເຄົ້າບໍ່ຫລາຍຂອດ (ເບິ່ງຕາຕະລາງ 4). ປາກົດການທີ່ມີອັກສອນສຸໂຂໄທກັບຫາງໜູບາງໂຕຄ້າຍຄືກັນນັ້ນ ກໍເປັນເລື່ອງທຳມະດາຂອງການຮ່ວມສືບທອດຈາກເຫງົ້າດຽວ.

+ ດ້ານອັກຂະລະວິທີ, ອັກສອນຫາງໜູ ມີການເຊື່ອມຮູບອັກສອນປະສົມ ຕາມແບບສະບັບຂອງເທວະນາຄີ ເຊິ່ງບໍ່ມີໃນອັກສອນສຸໂຂໄທ (ເບິ່ງອັກສອນປະສົມ); ການຈັດວາງຕຳແໜ່ງສະຫລະຂອງອັກສອນຫາງໜູ ກໍເປັນໄປຕາມອັກຂະລະວິທີອິນເດຍ (ໜ້າ ຫລັງ ເທິງ ລຸ່ມ...ແລ້ວແຕ່ກໍລະນີ) ຫາແມ່ນຕາມແບບຂອງສຸໂຂໄທຈຸດໃດເລີຍ (ທີ່ວາງໄວ້ລະດັບດຽວກັບພະຍັນຊະນະ).

+ ອັກສອນຫາງໜູ ມີແຕ່ສັນຍະລັກອື່ນ, ບໍ່ມີຮູບວັນນະຍຸດຄືໃນອັກຂະລະວິທີສຸໂຂໄທ.

+ ດ້ານໜຶ່ງກໍມີອົນສິງໄສຢູ່ວ່າໜັງສືທີ່ມີຊື່ສຽງຂຽນຕາມແບບລາມຄຳແຫງນີ້ມີຫລາຍຂະໜາດໃດທີ່ແຜ່ຢັ່ງລົງສູ່ປວງຊົນ ເຖິງຂັ້ນມີຜົນໃຫ້ທັງຕະກຸນໄຕຕ້ອງໄດ້ຮັບເອົາຕາມຢ່າງ.

ສະຫລຸບແລ້ວ ເຮົາບໍ່ປາກົດເຫັນມີ ພິລຸດອັນເປັນຄຸນລັກສະນະ ແລະຈຸດພິເສດຕ່າງໆ ຂອງອັກສອນສຸໂຂໄທມີໃນອັກສອນຫາງໜູ. ລັກສະນະທີ່ກ່າວມານີ້ ສະແດງໃຫ້ເຫັນຄວາມເກົ່າແກ່ ຂອງອັກສອນຫາງໜູ. ພ້ອມດຽວກັນ ມັນ ກໍຍັງບົ່ງບອກຕື່ມວ່າ ອັກສອນສຸໂຂໄທ ແມ່ນເປັນພຽງຄວາມພະຍາຍາມໜຶ່ງ ທີ່ຢາກດັດແປງ ອັກຂະລະວິທີ ທີ່ມີມາກ່ອນແລ້ວ ບົນພື້ນຖານອັກສອນເດີມ ຫາກບໍ່ແມ່ນການປະດິດອັກສອນໄຕທຳອິດ. ຄັນວ່າ ອັກສອນສຸໂຂໄທ ມີອາຍຸແຕ່ 700 ປີຂຶ້ນໄປ, ອັກສອນຫາງໜູທີ່ກຳລັງສຶກສານີ້ ກໍຈະມີອາຍຸ ຢ່າງໜ້ອຍ 350 ປີ (10, 14) ກ່ອນອັກສອນສຸໂຂໄທ.

2. ອັກສອນນີ້ ເປັນອັກສອນເກົ່າແກ່ ເພາະຮັບອິດທິພົນໂດຍກົງຈາກອັກສອນອິນເດຍ

ອີງຕາມຂັ້ນຕອນການດຳເນີນງານຄົ້ນຄວ້າ ແລະຜົນທີ່ອອກມາ, ມັນ ກໍເປັນການຍາກທີ່ຈະປະຕິເສດ ຫລືເຫັນຢ່າງອື່ນຕໍ່ກັບຄວາມເກົ່າແກ່ຂອງອັກສອນປະເພດນີ້. ກ່າວຄື ດ້ານຮູບອັກສອນ, ເມື່ອນຳອັກສອນມາທຽບກັນແລ້ວ, ມັນ ມີຄວາມໃກ້ຄຽງອັກສອນອິນເດຍ (ເບິ່ງຈາກ ຕາຕະລາງ 3) ກວ່າອັກສອນ ທີ່ຫລາຍຄົນເຄີຍຍອມຮັບວ່າເປັນອັກສອນຕົ້ນແບບ (ອັກສອນສຸໂຂໄທ). ອັນນັ້ນ ກໍ ສະແດງໃຫ້ເຫັນທັງລັກສະນະການສືບທອດ ແລະການສືບທອດໂດຍກົງ ຂອງໂຕອັກສອນນີ້ ຈາກແຫລ່ງກຳເນີດ. ນອກຈາກນັ້ນ, ລະບົບອັກຂະຫລະວິທີຂອງອັກສອນຫາງໜູ ກໍເດີນຕາມຮອຍຂອງອິນເດຍ (ການຈັດວາງຕຳແໜ່ງສະຫລະ, ການຕັດຮູບອັກສອນ ເພື່ອເຊື່ອມໃນກໍລະນີຊ້ອນອັກສອນ: (ສັງໂຍກ/ຊ້ອນ..รฺ้กฺษา...(รักสา), ປະສົມ..ขฺมา, ขฺมาฯ...,ຈາ..ฉฺนา...(สะหฺนา)). ອັນນີ້ ໄດ້ສະແດງໃຫ້ເຫັນວ່າອັກສອນນີ້ ເປັນອັກສອນເກົ່າແກ່ຄືດັ່ງທີ່ໄດ້ສະເໜີມານັ້ນແທ້.

III. ອັກສອນຫາງໜູ : ອັກສອນບັນພະບຸລຸດອັກສອນໄທດຳແລະອັກສອນລາວທັງລາວເດີມ ແລະປັດຈຸບັນ.

ຜ່ານການສຶກສາປຽບທຽບວິວັດອັກສອນ, ຕາຕະລາງ1 ແລະຕາຕະລາງ 2 ໄດ້ຊ່ອຍທາງໃຫ້ພວກເຮົາ ມີປ່ອງທາງອອກໃໝ່ໃນການຊອກຫາເຄົ້າອັກສອນ. ເມື່ອສຶກສາຕາຕະລາງທີ 3, ມັນໄດ້ປະກອບທິດສະດີໃຫ້ເຮົາຕັດສິນໄດ້ເບື້ອງຕົ້ນວ່າ ອັກສອນຫາງໜູທີ່ເກົ່າແກ່ນີ້ ມີລັກສະນະສະເພາະ

ຕົວ ຫລາຍຢ່າງ ຄືທີ່ໄດ້ສະເໜີມາແລ້ວນັ້ນ. ລັກສະນະເຫລົ່ານັ້ນ ຍັງເຫລືອໃຫ້ເຫັນໃນອັກສອນໄທ1. ອັນທີ່ປະຈັກຕາມຮູບດັ້ງເດີມເດັ່ນ ແມ່ນໃນອັກສອນໄທດຳ. ສ່ວນໃນອັກສອນລາວ, ອາດຍ້ອນມີການພັດທະນາຫລາຍຂັ້ນຕອນ, ໄດ້ສູ້ສົມກັບອັກສອນອື່ນໆ, ຮູບປະລັກຂອງມັນ ໄດ້ປ່ຽນຫ່າງອອກໄປຈາກເດີມພໍຄວນ; ແຕ່ ກໍຍັງຄົງຮ່ອງຮອຍ ໃຫ້ພວກເຮົາຮູ້ເຫັນໄດ້, ດັ່ງຈະນຳມາສຶກສາຕໍ່ໄປນີ້.

ອັກສອນລາວ ແລະ ອັກຂະລະວິທີລາວ, ນອກຈາກການພັດທະນາຮູບແບບໂຕອັກສອນ ໃຫ້ກະທັດຮັດ ແລະຄ່ອງຕົວຂຶ້ນ ພ້ອມທັງສ້າງ ແລະດັດສົມພາວະໃຫ້ແທດກັບລັກສະນະຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງພາສາລາວແລ້ວ, ມັນ ຮັບເອົາທັງໝົດ ລັກສະນະຕ່າງໆຂອງອັກສອນທາງໜູ.

ກ. ລັກສະນະລວມ

ກ.1. **ຮູບອັກສອນ**

ໜັງສືລາວເມື່ອກ່ອນ ໄດ້ຮັບອິດທິພົນ ອັກສອນທຳ ມີຮູບລັກສະນະຮຽວ ແລະຫລົ້ນທາງຄືກັນ ກັບ ອັກສອນທາງໜູ. ຫລືແມ່ນແຕ່ໄດ້ຮັບອິດທິພົນຈາກຕົວທຳແລ້ວ ໜັງສືຫລາຍສະບັບ ກໍຍັງຮັກສາ ຮູປະລັກອ່າວຮຽວຢູ່. ເບິ່ງຈາກການສົມທຽບ :

ອັກສອນທາງໜູ (ສ່ວນທີ່ຍັງເຫລືອໃຫ້ເຫັນໃນເອກະສານໄທດຳ - ຄັດຈາກພັບສາ ທີ່ໄດ້ ທ່ານໝູໄຊຄຳ ຄູນສີລິເຮືອງ, ຫລວງນ້ຳທາ).



ອັກສອນລາວ

(1) ສະບັບໃບລານ (-ຫ້າວຮຸ່ງຫ້າວເຈືອງ):



(2) ສະບັບຂຽນໃສ່ໃບລານ (ຄັດຈາກປະຫວັດເມືອງອັດຕະປື ສະບັບ ພຸດທະບັນດິສະພາ ເມືອງ ປາກເຊ)



(3) ສະບັບພິມ (ຄັດຈາກ COURS DE LANGUE LAOTIENNE (PAR ROLAND MEYER), IMPRIMERIE DU GOUVERNEMENT VIENTIANE, 1924)



(4) ສະບັບຂຽນໃສ່ເຈ້ຍ ປີ 1927 : (ຄັດຈາກ ພິງສາວະດານລາວ, ACHEVE D'IMPRIMER SUR LES PRESSES DE L'IMPRIMERIE D'EXTREMEORIENT HANOI (TONKIN)) EN JANVIER MCMXXVII (1927)).



ບໍ່ທັນເວົ້າເຖິງເອກະສານອື່ນ ທີ່ມີອາຍຸໃນຕົ້ນແຫ່ງການພັດທະນາ, ພຽງສະເພາະສຶກສາເບິ່ງ ອັກສອນລາວ ທີ່ຂຽນໃນໄລຍະໃກ້ພວກເຮົາສຸດ ຄືຂຽນໃນປີ ຄສ. 1927(ການຍົກສົມທຽບໝາຍເລກ 4), ມັນກໍຍັງບົ່ງບອກລັກສະນະຮ່ວມອັນເປັນພື້ນຖານຂອງສອງອັກສອນ.

ແລະ, ສິ່ງທີ່ໜ້າສັງເກດອີກຢ່າງໜຶ່ງ ຂອງອັກສອນທັງສອງນີ້ ມີອັນພິເສດຮ່ວມອັນໜຶ່ງ. ອັນ ນັ້ນ ແມ່ນອັກສອນພວກນີ້ ບໍ່ມີ ໂຕ ຣ (ລ ຫັນຫລົ້ນ). (ເບິ່ງຕາຕະລາງ 4 ຢູ່ພາກຜະໜວກ).

ກ.2. ບໍ່ມີຮູບວັນນະຍຸດ

ສຶກສາຈາກໜັງສືສະໄໝອານາຈັກລ້ານຊ້າງຮຸ່ງເຮືອງ, ອັກສອນລາວບໍ່ມີຮູບວັນນະຍຸດໃຊ້. ທີ່ມີ ກໍແຕ່ການສ້າງອັກສອນວັນນະຍຸດ ຄືອາໄສໂຕ ຫ. ເປັນເຄື່ອງໝາຍປະກອບພະຍັນຊະນະຕ່ຳເພື່ອປ່ຽນໃຫ້ເປັນສຽງສູງ (ຈັດຕະວາ). ກ່າວຄື ມັນສາມາດ ຊ່ຽນຈຳແນກ *ນາ* ກັບ *ໜາ/ຫນາ* ໄດ້ ແຕ່ບໍ່ສາມາດຈຳແນກ *ນາ* ກັບ *ນ້າ*, ແລະ *ໜາ* ກັບ *ໜ້າ*; ສົມມຸດ ຢາກເວົ້າວ່າ : *ຂ້ອຍ ນອນນາ ກັບນ້າ. ນ້າ ຂ້ອຍ ເປັນໄຂ້, ກິນຢາທໍ່ໃດ ອາການກໍແຮ່ງໜັກໜ້າ ໄປຊັກໄຂ້*, ກໍຈະຊ່ຽນເປັນ :

" *ຂອຍ ນອນນາ ກັບນາ. ນາ ຂອຍ ເປັນໄຂ ກິນຢາທໍ່ໃດ; ອາການ ກໍແຮງໜັກໜາ ໄປຊັກໄຂ* ". ເວລາອ່ານ, ຜູ້ອ່ານກໍຕ້ອງຄິດອ່ານໄປພ້ອມ ຕາມສະພາບຂອງບົດທີ່ຄວນຈະເປັນ. ລາງເທື່ອ ກໍຍາກແກ່ການຕັດສິນ ເຊັ່ນ ໃນຄຳວ່າ *ໜັກໜາ* ໃນປະໂຫຍກຍົກສົມມຸດ. ເຮົາຈະອ່ານ *ໜັກໜາ* ຫລື *ໜັກໜ້າ* ກໍຍັງໄດ້ຄວາມ; ແຕ່ບໍ່ໝັ້ນໃຈວ່າຜູ້ຊ່ຽນປະສົງຈະເວົ້າອັນໃດແທ້.

ກ.3. ມີອັກສອນປະສົມເຊື່ອມຮູບ

ອັກສອນປະສົມທີ່ສົມຊື່ໃນອັກສອນທາງໜູນັ້ນ ຢູ່ໃນພະຍັນຊະນະລາວ ທັງເມື່ອກ່ອນແລະປັດຈຸບັນ ກໍຍັງເຫັນໃຊ້ກັນທົ່ວໄປ. ລັກສະນະການປະກອບສ້າງຂອງມັນ ເກືອບເວົ້າໄດ້ວ່າບໍ່ມີຫຍັງຕ່າງດ້ານຫລັກການພື້ນຖານ. ທີ່ແຕກຕ່າງອອກໄປ ກໍແມ່ນລັດນິຍົມແຫ່ງການສະຫງວນຄວາມງາມສະເພາະຂອງໃຜລາວ. ປຽບທຽບອັກສອນປະສົມບາງໂຕໃຫ້ເຫັນ:

ອັກສອນທາງໜູ	ອັກສອນລາວ
ᨻᨾ	ບມ
ᨻᩁ	ບຣ
ᨻᨶ	ບນ

ກ.4. ການສະກົດຄຳ

ໂດຍຫລັກການແລ້ວ, ການສະກົດຄຳຂອງອັກສອນທັງສອງແມ່ນອັນດຽວກັນ, ເບິ່ງໄດ້ຈາກການວາງສະລະ ແລະໄມ້. ສະຫລະ ຈະວາງໄປຕາມກໍລະນີ ມີທັງຢູ່ໜ້າ, ຫລັງ, ເທິງ, ລຸ່ມ...ສ່ວນໄມ້ນັ້ນຢູ່ເທິງພະຍັນຊະນະແທນ.

ເພື່ອໃຫ້ເຮົາໄດ້ສຳຜັດຕົວຈິງ ຂອງລະບົບອັກຂະລະວິທີສະໄໝກ່ອນ, ຂໍໃຫ້ເບິ່ງສຳເນົາບາງຕອນ ຈາກໜັງສືທາ (ໜັງສືກ້ອມ - ຜະຫຍາຍ່ອຍ) ສະບັບໄດ້ຈາກບ້ານໜອງລຳຈັນ :

ຂ. ລັກສະນະສະເພາະ

ໃນການທຽບລັກສະນະສະເພາະນີ້ ຈະນຳເອົາອັກສອນທາງໜູ ທີ່ຍັງເຫລືອຢູ່ໃນກຸ່ມໄທດຳ ມາສົມທຽບກັບອັກສອນທາງໜູກຸ່ມໄທລາວ.

ຂ.1. ກ່ຽວກັບອັກສອນ

ຈຳນວນອັກສອນ ຂອງສອງກຸ່ມນີ້ ມີບໍ່ສະເໝີກັນ. ພະຍັນຊະນະໃນກຸ່ມໄທດຳ ມີຈຳນວນຫລາຍກວ່າພະຍັນຊະນະລາວ ເຊິ່ງອັກສອນກຸ່ມໄທດຳມີຈຳນວນ 34, ອັກສອນລາວ 32 (ນັບທັງ ພະຍັນຊະນະປະສົມ); ໃນຂະນະທີ່ຈຳນວນສະຫລະອັກສອນລາວຫລາຍກວ່າ (ມີສະຫລະຄູ່: ສັ້ນ - ຍາວ) ທາງໜູທີ່ເຫລືອນຳໄທດຳ (ມີສະລະສັ້ນພຽງໂຕດຽວເຊັ່ນ x) ທັງນີ້ກໍຂຶ້ນກັບຄວາມຕ້ອງການທີ່ ຈຳເປັນທີ່ຕົກໄປຢູ່ກຸ່ມໄທດຳ ກໍຮັບເອົາລະດັບໜຶ່ງ, ທີ່ຕົກມາເປັນອັກສອນລາວຮັບເອົາອີກລະດັບໜຶ່ງ.

ຂ.2. ອັກສອນປະສົມ :

ອັກສອນປະສົມທຸກຮູບໃນອັກສອນໄທດຳແມ່ນເຊື່ອມຮູບ, ແຕ່ໃນອັກສອນລາວ ມີຈຳນວນໜຶ່ງ ບໍ່ເຊື່ອມ : ຫວ, ຫຽ . ແຕ່, ປາກົດການນີ້ ອາດເກີດທີຫລັງ ເຊິ່ງກ່ອນໜ້ານັ້ນ ອາດຄືກັນ.

ໃນການຫຍໍ້ຮູບມີໃນອັກສອນລາວ ແຕ່ບໍ່ຄ່ອຍເຫັນໃນອັກສອນໄທດຳ; ຂະນະທີ່ການຫຍໍ້ຄຳ ມີໃນແບບການຂຽນຂອງໄທດຳ (ꪙ = ນັ້ນ, ꪀ = ຄົນ) ແຕ່ບໍ່ນິຍົມກັນໃນອັກຂະລະວິທີລາວ.

(ເບິ່ງທ່ວໄປແລ້ວ ພວກເຮົາກໍພໍປຽໃຈວ່າ ອັກສອນລ້ານຊ້າງນັ້ນໄດ້ຮັບການພັດທະນາຈາກ ອັກສອນທາງໜູ ມາເປັນຂັ້ນໆ ຈົນເປັນອັກສອນລາວໃນປັດຈຸບັນ ຄືກັບຫລາຍໆຄົນ ໄດ້ມີຄຳເຫັນໄວ້)

IV. ສະຫລຸບ

ໃນການດຳເນີນການສຶກສາ ໂດຍການສົມທຽບ ຮູບອັກສອນ ແລະອັກຂະຫລະວິທີ ທັງໃນກຸ່ມ ແລະອັກສອນທີ່ເປັນແຫລ່ງກຳເນີດ, ມັນໄດ້ໃຫ້ຂໍ້ມູນທີ່ຄວນເອົາໃຈໃສ່ບໍ່ໜ້ອຍຕໍ່ການຊອກທີ່ມາຂອງ ອັກສອນ. ຮູບອັກສອນທາງໜູ ໄດ້ສະແດງແຈ້ງເຖິງຄວາມໃກ້ຊິດ ແລະສືບທອດໂດຍກົງ ຈາກ ອັກສອນອິນເດຍ. ຄວາມເປັນໄປໄດ້ອັນນັ້ນຍັງຖືກພິສູດດ້ວຍອັກຂະຫລະວິທີນຳ. ສອງບັນຫາທີ່ຍົກ ຂຶ້ນມາພິຈາລະນາ ໄດ້ຊ່ວຍໃຫ້ເຮົາກຳນົດໃນເບື້ອງຕົ້ນເຖິງ ອັກສອນເກົ່າແກ່ ທີ່ເປັນຕົ້ນກຳເນີດຂອງ ອັກສອນລາວເຮົາ. ພ້ອມດຽວກັນ, ມັນ ໄດ້ຊ່ວຍຢັ້ງຢືນໜັກແໜ້ນສົມຄວນ ພໍທີ່ຈະໃຫ້ພວກເຮົາເບິ່ງ ຄືນທັດສະນະຂອງນັກປາດອາຈານຈຳນວນໜຶ່ງກ່ອນນີ້ ທີ່ຖືວ່າອັກສອນສຸໂຂໂທຂອງພໍ່ຂຸນລາມຄຳ ແຫງ ເປັນອັກສອນເກົ່າແກ່ ແລະເປັນແມ່ແບບແກ່ອັກສອນໄຕ1 ທັງມວນ. ໝາກຜົນການຄົ້ນຄວ້າ ເທື່ອນີ້ ຢ່າງໜ້ອຍກໍໄດ້ປະກອບສ່ວນແກ້ໄຂຂໍ້ຂ້ອງໃຈ ທີ່ມີມາດົນນານໄດ້ສ່ວນໃດໜຶ່ງ ຕໍ່ທັດສະນະ ເຄົ້າກຳເນີດ ອັກສອນລາວເຮົາ. ຢ່າງໃດກໍຕາມ, ການສຶກສາເທື່ອນີ້ ເປັນພຽງການສຶກສາ ໃນແງ່ມູມ ໜຶ່ງ ບົນພື້ນຖານເອກະສານທີ່ເປັນຂໍ້ມູນຈຳກັດ. ຍັງມີຫລາຍບັນຫາທີ່ລັບລີ້ຢູ່ເຊິ່ງເຮົາບໍ່ທັນອະທິບາຍ ໄດ້ຄັກແນ່ໃນເວລານີ້ ແລະນັ້ນກໍຈະເປັນຂອດໃຫ້ພວກເຮົາເດີນໜ້າຄົ້ນຄວ້າຕໍ່ໄປເຊັ່ນ ຄວາມແຕກ ຕ່າງກັນໃນອັກສອນບາງໂຕ ແລະຄວາມຫລຸດໂຕນກັນທາງດ້ານປະລິມານອັກສອນ ແລະອັນອື່ນໆ.

ສະນັ້ນ, ໝາກຜົນການຄົ້ນຄວ້າເທື່ອນີ້ ຈຶ່ງເປັນພຽງຂໍ້ຄິດໜຶ່ງເພື່ອຈະກ້າວໄປຫາຄວາມເປັນຈິງທີ່ແນ່ນອນກວ່າ ໃນອະນາຄົດ.

ເອກະສານອ້າງອີງ

ກ. ພາສາລາວ

1. ຫໍພຸຍະສຸມຸດປະເທດລາວ, 1935, *ໄວຍາກອນລາວ ພາກອັກຂຣະວິທີ*, ສຳນັກພິມເອັກສະແຕຣັມ ອໍຣຽງ.
2. ຄະນະກຳມະການອັກສອນສາດ, 1944, *ອັກຂະຫລະແລະສະກົດຄຳໃນພາສາລາວ*, ສຳນັກພິມ ລາວໃຫຍ່, ໂຮງພິມລັດຖະບານ.
3. ກະຊວງມະຫາດໄທ ແລະກຳມະການ, ກົມກຳມະການທີ່ເມືອງວຽງຈັນ, *ອັກຂຣສມຍະ* ວ່າດ້ວຍ ໜັງສືລາວ.
4. ຄະນະກຳມະການວັນນະຄະດີ, 1954, *ໄວຍາກອນລາວ ພາກ ອັກຂຣະວິທີ*, ກະຊວງສຶກສາ ທິການ.
5. ຄຳໄຊ ພູພະມີໄຊ, 1962, ແບບຮຽນອ່ານໜັງສືໄທແດງ,
6. ພູມີ ວົງວິຈິດ, 1967, *ໄວຍາກອນລາວ*, ຫ້ອງການສຶກສາສູນກາງ, ຊຳເໜືອ.
7. ຣາຊບັນດິດສະພາ, 1972, *ໄວຍາກອນລາວພາກທີໜຶ່ງ - ອັກຂຣະວິທີ*, ປາກປາສັກການພິມ.
8. ສຸລັງເດດວົງສາ ແລະຄະນະ, 1972, *ຄົ້ນຄວ້າພາສາລາວ*, ຫໍສມຸດແຫ່ງຊາດ ວຽງຈັນ.
9. ສະຖາບັນການສຶກສາພຸທສາສນາ ສຳນັກວັດອົງຕື້ ວຽງຈັນ, ບັນທຶກ *ການສຳມະນາພາສາລາວ*, ຄັ້ງວັນທີ 07 - 11 ພຶດສະພາ, 1972.
10. ສີລາ ວີຣະວົງ, 1973 , *ປວັດໜັງສືລາວ*, ສຳນັກພິມໃຜ່ໜາມ, ປາກປາສັກການພິມ.
11. ພູມີ ວົງວິຈິດ, 1978, *ຄວາມຊົງຈຳຂອງເຮົາ ໃນຂະບວນວິວັດແຫ່ງປະຫວັດສາດລາວ*, ໂຮງພິມ ວິສາຫະກິດຈຳໜ່າຍສຶກສາ.
12. ກະຊວງສຶກສາ ແລະ ກີລາ, 1979, ເອກະສານສິດສອນ *ປະຫວັດຕົວອັກສອນ* ສຳຫລັບ ໂຮງຮຽນສ້າງຄູມັດທະຍົມລະບົບ 11+3.
13. ບົວແກ້ວ ບຸນສີໃສ, 1980, *ປະຫວັດຕົວອັກສອນໃນລາວ*, ມະຫາວິທະຍາໄລສ້າງຄູວຽງຈັນ.
14. ທຸມພັນ ລັດຕະນະວົງ, 1996, ອັກສອນກຸ່ຍເຈົ່າ, ໃນວາລະສານ " ວິທະຍາສາມໍລະດົກລ້ານຊ້າງ " ສະບັບທີສອງ. ມິນາ-ທັນວາ, 1996.
15. ບົວລີ ປະພາພັນ, 1997, *ໂຕລາວເດີ*, ມະຫາວິທະຍາໄລແຫ່ງຊາດລາວ.
16. ບົວລີ ປະພາພັນ, 2002, *ປະຫວັດອັກສອນລາວໂດຍສັງເຂບ* :ສຳຫລັບນັກສຶກສາຕ່າງປະເທດ, ມະຫາວິທະຍາໄລການສຶກສາຕ່າງປະເທດ ໂຕກຽວ.

17. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ, 2000, *ໄວຍາກອນລາວປັດຈຸບັນ, ພາກທີ 1 ອັກຂະຫລະວິທີ*, ກະຊວງສຶກສາທິການ.
18. ຈອມໃຈ ພົມມີ, ກັນທິນາ ປ້ານອິນທອນ (ນາງ), 2006, ປະຫວັດຄວາມເປັນມາຕົວອັກສອນໄທດຳ ແຂວງຫລວງນ້ຳທາ, ເມືອງນ້ຳທາ, ກຸ່ມສອງ. (ບົດໂຄງການຈົບຊັ້ນ ປະລິນຍາຕີ), ພາກວິຊາພາສາລາວ ແລະ ສື່ສານມວນຊົນ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ.

ຂ.ພາສາໄທ

19. ແສງ ມົນວິທູນ ພ້ອມຄະນະ, ພສ. 2504, ຄູ່ມືຮຽນພາສາສັນສະກິດ, ກອງວິຊາການມະຫາຈຸລາລົງກອນຣາຊະວິທະຍາໄລ.
20. ກຳທອນ ສະຖິຣະກຸນ, 2527, ລາຍສືໄທ 700 ປີ, ອົງການຄ້າຄະຮຸສະພາ, ກຸງເທບ.
21. ເຮືອງເດດ ປັ່ນເຂື່ອນຂັດ, ພສ. 2531, ພາສາຖິ່ນຕະກຸນໄຕ ພ້ອມທັງພາສາຕະກຸນຕ່າງໆໃນປະເທດໄທ, ສະຖາບັນວິໄຈພາສາແລະວັດທະນະທຳເພື່ອພັດທະນາຊົນນະບົດ, ມະຫາວິທະຍາໄລມະຫິດົນ.
22. ສຸຈິດ ວົງເທດ : ບັນນາທິການ, 2531- ພິມຄັ້ງແຣກ, *ຈາຣຶກພໍ່ຂຸນຣາມຄຳແຫງ ໃຄຣແຕ່ງກັນແນ່ "ຂອງຈິງ "ຫລືວ່າ "ຂອງປອມ"*, ສຳນັກພິມສິລະປະວັດທະນະທຳ, , ກໍລະກະດາຄົມ.
23. ສົມຊິງ ບຸຣຸດພັດ, ພສ. 2540, ສາຣານຸກົມກຸ່ມຊາດພັນໄທໂຊ່ງ, ສະຖາບັນວິໄຈພາສາແລະວັດທະນະທຳເພື່ອພັດທະນາຊົນນະບົດ, ມະຫາວິທະຍາໄລມະຫິດົນ.
24. ທະວັດ ບຸນໂນທົກ, ພສ. 2540, *ອັກສອນໂບຣານອີສານ : ອັກຂຣວິທຍາອັກສຣຕົວທັມແລະຕົວໄທນ້ອຍ*, ພິມຄັ້ງແຣກ, ບໍຣິສັທສຍາມເພຣສ ແມເນຈເມັ້ນ, ກຸງເທບ.

ຄ. ພາສາຝະລັ່ງ ແລະອັງກິດ:

25. J.J. Hospitalier, 1--937, GRAMMAIRE LAOTIENNE, Imprimerie NATIONAL PARIS .
26. P.S. NGINN, 1965, ELEMENT DE GRAMMAIRE LAOTIENNE, 2eme Edition, Commite LITTERATURE LAO.
27. V. N. Bharawayj, 1997, ELEMENTARY SANSKRIT MANUAL Part I. Goyal Brothers Prakashan, New Delhi - 1110055.
28. http://www.ancientscripts.com| (Languages and Scripts of India)

ພາກຜະໜວກ

ຕາຕະລາງ 1

ທຽບອັກສອນໃນກຸ່ມຕະກຸນໄຕ 1

ลาวปัดจุบัน	ภุยเจ๊า	ทางหนู/ไทดำ	ไทแดง	ไทขาว
ก	ᥐ	ก	ก แ	ก
ข	ᥑ	ᥒ ᥒᥴ ᥒᥲ	ᥓ	ᥒᥰ
'ก		ᥔ	ᥕ	ᥒᥭ
ค	ᥖ	ᥗ ᥗ	ᥘ	ᥙ
ง	ᥚ	ᥛ	ᥜ	ᥛ
จ	ᥝ	ᥞ ᥞ	ᥟ	ᥠ
'จ	ᥡ	ᥢ ᥣ	ᥤ	ᥠᥰ ᥠᥭ
ช	ᥥ	ᥦ ᥦ	ᥧ	ᥦᥰ
ย	ᥨ	ᥩ		
ด	ᥪ	ᥫ	ᥬ	
ต	ᥭ	᥮		
ถ	᥯	ᥰ		
ท	ᥱ	ᥲ ᥳ	ᥴ	
น	᥵	᥶	᥷	᥸
บ	᥹	᥺ ᥻	᥼	᥽
ป	᥾	᥿ ᥿	ᦀ	ᦁ
ผ		ᦂ ᦃ	ᦄ	ᦅ
ฝ		ᦆ	ᦇ	ᦈ
พ		ᦉ	ᦊ	ᦋ
ฟ		ᦌ	ᦍ	ᦎ
ม		ᦏ ᦐ	ᦑ	ᦒ
ย		ᦓ	ᦔ	ᦕ
ร		ᦖ	ᦗ	ᦘ
ล		ᦙ	ᦚ	ᦛ
ว		ᦜ ᦝ	ᦞ	ᦟ
ส	ᦠ	ᦡ ᦡ	ᦢ	ᦣ

ตาตะลาง 1 (ต่ำ)

ลาวปัดจุบัน	ภุยเจิา	หาๆหมู/ไทดำ	ไทแดๆ	ไทขาว
ป		ป ป	ป	ป
ผ, ฝ	ผ	ผ ผ	ผ ผ	ผ ผ
พ, ฟ			พ	
ภ		ภ		ภ
ม, ฆ	ม	ม ม	ม	ม
ย	ฆ	ฆ	ฆ	ฆ
ร		ร ร	ร	ร
ล	ล	ล ล	ล	ล
ว	ว	ว	ว	ว
ส	ส	ส	ส	ส ส
ห	ห	ห ห	ห	ห
อ		อ อ	อ อ	อ
ฮ		ฮ ฮ	ฮ	ฮ

ຕາຕະລາງ 2

ສົມທຽບກັບອັກສອນສຸໂຂໄທ, ຟັກຂາມ

ສຸໂຂໄທ	ຟັກຂາມ	ກຸຍເຈົາ	ທາງໜູ/ໄທດຳ	ໄທແດງ	ໄທຂາວ
ก	ก	ᨠ	ก	ก	ก
ข	ข	ᨡ	ข ฃ	ข	ข
ฃ	ฃ				
ค	ค		ค	ค	ค
ฅ	ฅ				
ฆ	ฆ	ᨢ	ฆ	ฆ	ฆ
ง	ง	ᨣ	ง	ง	ง
จ	จ	ᨤ	จ	จ	จ
ฉ	ฉ				
ช	ช	ᨥ	ช	ช	ช
ซ	ซ	ᨦ	ซ	ซ	ซ ศ
ฌ	ฌ	ᨧ	ฌ	ฬ	ฌ
ญ	ญ	ᨨ	ญ	ญ	ฎ
ฐ	ฐ		ฐ		
ฏ	ฏ		ฏ		
ฑ	ฑ		ฑ	ฑ	ฒ
	ฒ		ฒ		
ฌ	ณ		ณ		
ด	ด		ด		
ต	ต		ต		
ถ	ถ		ถ		
ท	ท		ท		
ธ	ธ				

24/VII
ศูนย์จำหน่าย

ຕາຕະລາງ 2 (ຕໍ່)

ສົມທຽບກັບອັກສອນສຸໂຂໄທ, ຟັກຂາມ

ສຸໂຂໄທ	ຟັກຂາມ	ກຸຍເຈົາ	ທາງໜູ/ໄທດຳ	ໄທແດງ	ໄທຂາວ
ᦀ	ᦀ		ᦀ ᦀ	ᦀ	ᦁ
ᦁ	ᦁ		ᦁ	ᦁ	ᦂ
ᦂ	ᦂ	ᦂ	ᦂ		
ᦃ	ᦃ	ᦃ	ᦃ	ᦃ	ᦃ ᦃ
ᦄ	ᦄ		ᦄ		
ᦅ	ᦅ		ᦅ		ᦅ
ᦆ	ᦆ		ᦆ		ᦆ
ᦇ	ᦇ		ᦇ		
ᦈ	ᦈ	ᦈ	ᦈ	ᦈ	ᦈ
ᦉ	ᦉ		ᦉ	ᦉ	ᦉ
ᦊ	ᦊ				
ᦋ	ᦋ				
ᦌ	ᦌ	ᦌ	ᦌ ᦌ	ᦌ	ᦌ ᦌ
ᦍ	ᦍ ᦍ	ᦍ	ᦍ	ᦍ	ᦍ
ᦎ		ᦎ	ᦎ ᦎ	ᦎ ᦎ	ᦎ

ຕາຕະລາງ 3

ສົມທຽບອັກສອນທາງໜູກັບອັກສອນອິນເດຍທີ່ຖືວ່າແມ່ນແຫລ່ງກຳເນີດອັກສອນຕະກຸນໄຕ

ອ່ານທຽບ	ອັກສອນອິນເດຍ			ອັກສອນຕະກຸນໄຕ1			
ລາວບາລີ	ພາມີ	ປັນລະວະ	ເທວະນາຄີ	ກຸຍເจ๋า	ທາງໜູ/ໄທດຳ	ໄທຂາວ	ໄທແດງ
	+	ᨷ	ก	ᨠ	ก	ก	ก
	๒	๒	ข	๒	ข ฃ	ฃ	ฃ
	๑	๑	ฅ		ค	ฅ	ค
	๖	๖	ฆ	ง	ง	ฆ	ง
		๔	ง	๗	๔	๔	๑
	๗	๕	จ	๘	๘	๕	๘
	๘	๘	ฉ				
	๔	๔	ช	๙	๙ ฌ	๕๕	๒
	๑		ฌ	๙	๗ ๗	๗	๗
	๓	๖	ญ				
	๕	๕	ฎ				
	๒	๒	ฏ	๒	∩	๓	๓
	๐		ฐ	๒			
	~	๒	ฑ	∩	∩	๓	๓
	๑		ฒ		๗		
	I	๙	ณ				
	ሃ	๘	ด		๓	๓	๓
	⊙	๑	ต		๖	๒	๗
	๔	๕	ถ ภ		๗		๗
	D	๑	ท ธ		๖	๓	๓
	⊥	๙	ท		๗ ๗	๕	๗
	∪	๓	น	∪	∪	๓	๓
	∪	๐	บ	∪	∪ ∪	๓๑	๓
	□	๓	ป		๓	๓	
	~	~	ผ		๗	๗	
	๗	๗	ฝ	∪	๒	๗	๒

ตาตะลาง 3 (ต่ำ)

ສົມທຽບອັກສອນທາງໜູກັບອັກສອນອິນເດຍທີ່ຖືວ່າແມ່ນແຫລ່ງກຳເນີດອັກສອນຕະກຸນໄຕ

ອ່ານທຽບ	ອັກສອນອິນເດຍ			ອັກສອນຕະກຸນໄຕ1			
ລາວບາລີ	ພາມີ	ປັນລະວະ	ເທວະນາຄີ	ກຸຍເຈົ	ທາງໜູ/ໄທດຳ	ໄທຂາວ	ໄທແດງ

ຂໍ້ສັງເກດ : ตาตะลาง 3

ก. ทางสามยังรักสารูบเดิมไว้ แต่ กุยเจิาจะให้สันสะกิดกว่า

ข. ไทขาวและไทแดงให้ ส. กว่า, พวกอื่นมีลักสะนะพัดทะนาไป

ค. รักสารูบเดิมในกุ่ม, นอกจาก กุยเจิา

ฅ . บ่มีใน กุยเจิา แต่มีในอักสอนอื่น ในนั้นทางหนู ให้ญาง ส. กว่า; ขะนะที่ ไทขาว พัดไปให้กับอักสอนพามิ.

ง. กุยเจิา จะให้ญาง ส. กว่าหมู่

จ. ทางสามบ่ปุ่มรูบหลาย

ส. บ่ปากิดในกุ่มใด

ฌ. เว้นไทขาว, ให้ญาง ส. หลายในกุ่มอื่น

ตาตะลาๆ 4

ສະແດງຮູບວິວັດອັກສອນຈາກອິນເດຍມາເປັນຫາງໜູ

(ໃສ່ແຖວເທິງອັກສອນເປັນສິນນິຍົມຂອງອິນເດຍ, ອັກສອນຫາງໜູເປັນຕົວອ່າວເນີ້ງແລະຫລິ້ນຫາງ)

ลาวบาลี	เทอะนาคี	เทอะนาคี ตัดแถวเทิง	รูบฝันปุ่มจากตั้งเป็นอ่าวเนิ้ง และหลิ้นหาง			หางหนู	
ก	ก	ก	ก	ก	ก	ก	ก
ข	ข	ข	ข	ข	ข	ข	ข
ค	ค	ค	ค	ค	ค	ค	ค
ฆ	ฆ	ฆ	ฆ	ฆ	ฆ	ฆ	ฆ
ง	ง	ง	ง	ง	ง	ง	ง
จ	จ	จ	จ	จ	จ	จ	จ
ฉ	ฉ	ฉ					
ช	ช	ช	ช	ช	ช	ช	ช
ฌ	ฌ	ฌ	ฌ	ฌ	ฌ	ฌ	ฌ
ญ	ญ	ญ	ญ	ญ	ญ	ญ	ญ
ฎ	ฎ	ฎ					
ฏ	ฏ	ฏ	ฏ	ฏ	ฏ	ฏ	ฏ
ฐ	ฐ	ฐ	ฐ	ฐ	ฐ	ฐ	ฐ
ฑ	ฑ	ฑ	ฑ	ฑ	ฑ	ฑ	ฑ
ฒ	ฒ	ฒ	ฒ	ฒ	ฒ	ฒ	ฒ
ณ	ณ	ณ					
ด	ด	ด	ด	ด	ด	ด	ด
ต	ต	ต	ต	ต	ต	ต	ต
ถ	ถ	ถ	ถ	ถ	ถ	ถ	ถ
ท	ท	ท	ท	ท	ท	ท	ท
ธ	ธ	ธ					
น	น	น	น	น	น	น	น
บ	บ	บ	บ	บ	บ	บ	บ
ป	ป	ป	ป	ป	ป	ป	ป
ผ	ผ	ผ	ผ	ผ	ผ	ผ	ผ
ฝ	ฝ	ฝ					
พ	พ	พ	พ	พ	พ	พ	พ
ฟ	ฟ	ฟ	ฟ	ฟ	ฟ	ฟ	ฟ
ภ	ภ	ภ	ภ	ภ	ภ	ภ	ภ
ม	ม	ม	ม	ม	ม	ม	ม
ย	ย	ย	ย	ย	ย	ย	ย
ร	ร	ร	ร	ร	ร	ร	ร
ล	ล	ล	ล	ล	ล	ล	ล
ว	ว	ว					
ศ	ศ	ศ	ศ	ศ	ศ	ศ	ศ
ษ	ษ	ษ	ษ	ษ	ษ	ษ	ษ
ส	ส	ส	ส	ส	ส	ส	ส
ห	ห	ห	ห	ห	ห	ห	ห
ฬ	ฬ	ฬ					

ຕາຕະລາງ 4 (ຕໍ່)

ສະແດງຮູບວິວັດອັກສອນຈາກອິນເດຍມາເປັນຫາງໜູ

(ໃສ່ແຖວເທິງອັກສອນເປັນສິນິຍົມຂອງອິນເດຍ, ອັກສອນຫາງໜູເປັນຕົວອ່າວເນີ້ງແລະຫລົ້ນຫາງ)

ລາວບາລີ	ເທວະນາຄີ	ເທວະນາຄີ ຕັດແຖວເທິງ	ຮູບຜັນປ່ຽນຈາກຕັ້ງເປັນອ່າວເນີ້ງ ແລະຫລົ້ນຫາງ			ຫາງໜູ	
๐	०	०	०	०	०	०	०
๑	१	१	१	१	१	१	१
๒	२	२	२	२	२	२	२
๓	३	३	३	३	३	३	३
๔	४	४	४	४	४	४	४
๕	५	५	५	५	५	५	५
๖	६	६	६	६	६	६	६
๗	७	७	७	७	७	७	७
๘	८	८	८	८	८	८	८
๙	९	९	९	९	९	९	९
ก	क	क	क	क	क	क	क
ข	ख	ख	ख	ख	ख	ख	ख
ค	ग	ग	ग	ग	ग	ग	ग
ฆ	घ	घ	घ	घ	घ	घ	घ
ง	ङ	ङ	ङ	ङ	ङ	ङ	ङ
จ	च	च	च	च	च	च	च
ฉ	छ	छ	छ	छ	छ	छ	छ
ช	ज	ज	ज	ज	ज	ज	ज
ฌ	झ	झ	झ	झ	झ	झ	झ
ญ	ञ	ञ	ञ	ञ	ञ	ञ	ञ
ฏ	ट	ट	ट	ट	ट	ट	ट
ฐ	ठ	ठ	ठ	ठ	ठ	ठ	ठ
ฑ	ड	ड	ड	ड	ड	ड	ड
ฒ	ढ	ढ	ढ	ढ	ढ	ढ	ढ
ณ	ण	ण	ण	ण	ण	ण	ण
ด	त	त	त	त	त	त	त
ถ	थ	थ	थ	थ	थ	थ	थ
ท	द	द	द	द	द	द	द
ธ	ध	ध	ध	ध	ध	ध	ध
น	न	न	न	न	न	न	न
บ	प	प	प	प	प	प	प
ผ	फ	फ	फ	फ	फ	फ	फ
ฝ	ब	ब	ब	ब	ब	ब	ब
พ	भ	भ	भ	भ	भ	भ	भ
ฟ	म	म	म	म	म	म	म
ภ	य	य	य	य	य	य	य
ม	र	र					
ย	ल	ल	ल	ल	ल	ल	ल
ร	व	व	व	व	व	व	व
ฤ	श	श	श	श	श	श	श
ฤๅ	ष	ष					
ล	स	स	स	स	स	स	स
ฦ	ह	ह	ह	ह	ह	ह	ह
ฦๅ	ळ	ळ	ळ	ळ	ळ	ळ	ळ
ว	ऴ	ऴ					
ศ	ं						
ษ	ः	ः	ः	ः	ः	ः	ः
ส	ऽ	ऽ	ऽ	ऽ	ऽ	ऽ	ऽ
ห	ा	ा	ा	ा	ा	ा	ा
ฬ	ि	ि	ि	ि	ि	ि	ि
อ	ी	ी	ी	ी	ी	ी	ी
ฮ	ु	ु	ु	ु	ु	ु	ु
ฯ	ू	ू	ू	ू	ू	ू	ू
ะ	ृ	ृ	ृ	ृ	ृ	ृ	ृ
ั	ॄ	ॄ					
า	ॅ	ॅ	ॅ	ॅ	ॅ	ॅ	ॅ
ำ	ॆ	ॆ	ॆ	ॆ	ॆ	ॆ	ॆ
ิ	े	े	े	े	े	े	े
ี	ै	ै	ै	ै	ै	ै	ै
ึ	ॉ	ॉ	ॉ	ॉ	ॉ	ॉ	ॉ
ื	ॊ	ॊ	ॊ	ॊ	ॊ	ॊ	ॊ
ุ	ो	ो	ो	ो	ो	ो	ो
ู	ौ	ौ	ौ	ौ	ौ	ौ	ौ
เ	्	्	्	्	्	्	्
แ	्	्	्	्	्	्	्
โ	्	्	्	्	्	्	्
ใ	्	्	्	्	्	्	्
ไ	्	्	्	्	्	्	्

ຕາຕະລາງ 5

ທຽບອັກສອນໄທດຳ ກັບອັກສອນລາວ

ພະຍັນຊະນະໄທດຳ			ພະຍັນຊະນະລາວ		
1	2	3	1	2	3
ก	ก	ก	ก	ก	ก
ค	ค	ค	ค	ค ฆ	ค
ง	ง	ง	ง	ง ฺ	ฺ
จ	จ	จ	' ค, ฆ	ค ฆ	ฆ (ญ)
ฉ			ฉ	ฉ	ฉ
ช	ช		ช	ช	ช
ซ	ซ ฌ	ฌ	ซ	ซ ฌ	ฌ
ญ	ญ	ญ	' ย	ญ	ฌ (ญ)
ฎ	ฎ	ฎ	ด	ด	ด
ฏ			' ต	ฐ ถ	ฐ, ถ (ฏ)
ฐ	ฐ	ฐ	ท	ธ	ธ
ฑ	ฑ	ฑ	' ท	ธ	ธ
ฒ	ฒ	ฒ	ท, ธ	ท	ฑ
ณ	ณ	ณ	น	บ	บ
บ	บ ป	ป	ผ	ผ	ผ, พ
ป	ป		พ	พ	พ
ผ			' บ	ฟ	ฟ
ฝ	ฝ	ฝ	ฟ	ภ	ภ
พ			' ป		
ฟ	ฟ	ฟ	ม	ย	ย

ຕາຕະລາງ 5 (ຕໍ່)

ທຽບອັກສອນໄທດຳ ກັບອັກສອນລາວ

ພະຍັນຊະນະໄທດຳ			ພະຍັນຊະນະລາວ		
1	2	3	1	2	3
ก	ก	ก	ก	ก	ก
ข			ข	ข	ข, ฃ
ค	ค	ฆ	ค ฅ	ฅ	ค
ง	ง	ง	ง	ง	ง
จ	จ	จ	จ	จ	จ
ช	ช		ช	ช	ช
ซ	ซ	ฌ	ซ	ซ	ซ, ฌ
ญ	ญ	ญ	ญ	ญ	ญ
ฐ	ฑ	ฒ	ฐ	ฑ	ฒ
ณ	ณ	ฌ	ณ	ณ	ณ
ด	ด	ฎ	ด	ด	ด
ต	ต	ฏ	ต	ต	ต
ถ	ท	ธ	ถ	ท	ธ
น	น	น	น	น	น
บ	บ	ภ	บ	บ	บ, ภ
ป	ป	พ	ป	ป	ป, พ
ฟ	ฝ	ฟ	ฟ	ฝ	ฟ
ม	ม	ม	ม	ม	ม
ย	ย	ญ	ย	ย	ย
ร	ร	ร	ร	ร	ร
ล	ล	ฬ	ล	ล	ล
ว	ว	ว	ว	ว	ว
ศ	ษ	ส	ศ ษ	ส	ส
ห	ห	ห	ห	ห	ห
อ	อ		อ	-	-

ກິລິຍາພວງ ໃນພາສາລາວ

ໂດຍ ເລໂກ ຊຸຊຸກິ - ຈອມໃຈ ພົມມີ

1.ເປີດຫົວເລື່ອງ

1.1.ຈຸດປະສົງ

ພາສາລາວແມ່ນພາສາທີ່ມີລັກສະນະການຮຽງຄຳກິລິຍາ ຫຼືກິລິຍາອະລິຕິດກັນ, ເຊິ່ງເອີ້ນວ່າ " ກິລິຍາພວງ ". ຕົວຢ່າງ ເຊັ່ນ:

1) ປີ້ງປາກິນ
2) ຮຽນພາສາລາວຍາກ
3) ຕັດຜົມສັ້ນ
4) ໃຊ້ບິກຂຽນພາສາລາວ

ກິລິຍາພວງຂໍ້1) ອາດຈະເວົ້າໄດ້ວ່າເອົາກິລິຍາອະລິຮຽງຕາມປາກົດຕະການ. ສ່ວນກິລິຍາພວງຂໍ້ 2) ນັ້ນແມ່ນຄຳກິລິຍາທີ 1 "ຮຽນ" ແມ່ນຄຳຕົວຕັ້ງຂອງຄຳກິລິຍາທີ 2 "ຍາກ". ກິລິຍາທີ 2 "ສັ້ນ" ໃນ ກິລິຍາພວງຂໍ້3) ແມ່ນຜົນທີ່ໄດ້ອອກມາຈາກການປະຕິບັດຂອງກິລິຍາທີ 1 "ຕັດ". ແລະກິລິຍາທີ 1 "ໃຊ້" ກັບກິລິຍາທີ 2 "ຂຽນ" ໃນກິລິຍາພວງຂໍ້4) ຈະເປັນເຫດການທີ່ປາກົດຂຶ້ນໃນເວລາດຽວກັນກໍໄດ້.

ຈຸດປະສົງຂອງບົດນີ້ ແມ່ນການຈຳແນກກິລິຍາພວງຈາກໃນທັດສະນະຄວາມໝາຍ ແລະລັກສະ ນະພິເສດຂອງໂຄງສ້າງຂອງກິລິຍາພວງ.

1.2.ຂອບເຂດ

ກ່ອນຊິເລີ່ມພິຈາລະນາກິລິຍາພວງຕ່າງໆ, ຕ້ອງກ່າວເຖິງເງື່ອນໄຂຂອງຄຳສັບທີ່ຈະໃຊ້ຢູ່ໃນ ບົດ ແລະຂອບເຂດໃນການຄົ້ນຄວ້າ.

1.2.1.ຄຳກິລິຍາ

ເງື່ອນໄຂຂອງຄຳກິລິຍາໃນບົດນີ້ ມີ 4 ຂໍ້ດັ່ງຕໍ່ໄປນີ້:

(1) ສາມາດວາງຄຳຕົວຕັ້ງຢູ່ທາງໜ້າ

(2) ສາມາດຕື່ມຄຳປະຕິເສດ " ບໍ່ " ໃສ່ຢູ່ທາງໜ້າ

(3) ສາມາດເອົາຄຳ " ການ " ຫຼື " ຄວາມ " ມາໃສ່ທາງໜ້າແລ້ວໃຫ້ເປັນຄຳນາມ

(4) ສາມາດເອົາຄຳນັ້ນມາເປັນຄຳຕອບຂອງປະໂຫຍກຄຳຖາມແບບຕອບຮັບ-ປະຕິເສດ, ເຊັ່ນ:

5)ໄປຕະຫຼາດບໍ?

- ເຈົ້າ, ໄປ (ຕອບຮັບ)
- ບໍ່, ບໍ່ໄປ (ຕອບປະຕິເສດ)

ໃນບົດນີ້ ເພື່ອອຳນວຍຄວາມສະດວກໃນການຂຽນ ບາງເທື່ອເອົາ "V" ມາຂຽນແທນ " ຄຳກິລິຍາ " ຫຼື " ກິລິຍາອະລິ " ກໍໄດ້.

1.2.2 ຄຳປະກອບ

ຄຳປະກອບໃນບົດນີ້ເວົ້າສະເພາະແຕ່ " ນາມອະລິ " ທີ່ສະແດງເຖິງຜູ້ຖືກກະທຳ, ເຊິ່ງວາງໄວ້ຢູ່ທາງຫຼັງຂອງຄຳກິລິຍາ. ບາງເທື່ອເອົາ " N " ມາຂຽນແທນ " ຄຳນາມ " ຫຼື " ນາມອະລິ " ກໍໄດ້.

1.2.3. ໂຄງສ້າງຄຳກິລິຍາພວງ

ໂຄງສ້າງກິລິຍາພວງທີ່ປະກອບດ້ວຍV1, V2 ແລະN ມີ 2 ຊະນິດໃຫຍ່ ດັ່ງຕໍ່ໄປນີ້:

(1) V1+N+V2 (ກິລິຍາທີ 1 + ຄຳນາມ + ກິລິຍາທີ 2)

6) ປີ້ງປາກິນ

7) ຕັດຜົມສັ້ນ

(2) V1+V2+N (ກິລິຍາທີ 1 + ກິລິຍາທີ 2 + ຄຳນາມ)

8) ຫາຊື້ປຶ້ມ

9) ໄປຢາມເຮືອນ

1.2.4. ຂອບເຂດຂອງກິລິຍາພວງ

ເນື່ອງຈາກ ກິລິຍາພວງທີ່ມີໂຄງສ້າງ " V1+V2+N " ຂໍ້ມູນມີບໍ່ຫຼາຍ, ຂອບເຂດຂອງບົດນີ້ຈຶ່ງຈະເນັ້ນໜັກສະເພາະໃນການຈຳແນກກິລິຍາພວງທີ່ມີໂຄງສ້າງ " V1+N+ V2 " ໃນພາສາລາວ.

1.3. ວິທີດຳເນີນການ

1.3.1. ວິທີຊອກຂໍ້ມູນ

ຂໍ້ມູນກິລິຍາພວງທີ່ມີໂຄງສ້າງ " V1+N+V2 " ໃນບົດນີ້ ໄດ້ມາຈາກວັນນະຄະດີປັດຈຸບັນ ແລະບົດສົນທະນາໃນຊີວິດປະຈຳວັນ.

1.3.2. ວິທີການຈຳແນກ

ວິທີດຳເນີນການຄົ້ນຄວ້າເພື່ອພິຈາລະນາການຈຳແນກກິລິຍາພວງແມ່ນໃຊ້ການທົດລອງ 5 ຢ່າງຢູ່ຂ້າງລຸ່ມນີ້ ໂດຍໃຫ້ຜູ້ເວົ້າພາສາລາວເປັນພາສາແມ່ ເປັນຜູ້ຕັດສິນໃຈໃນການທົດລອງ.

ການທົດລອງທີ 1a : ເອົາຄຳປະຕິເສດ " ບໍ່ " ໄວ້ຢູ່ທາງໜ້າຂອງກິລິຍາອະລິທີ 1 ໄດ້ ຫຼືບໍ່.

ການທົດລອງທີ 1b : ເອົາຄຳປະຕິເສດ " ບໍ່ " ໄວ້ຢູ່ທາງໜ້າຂອງກິລິຍາອະລິທີ 2 ໄດ້ ຫຼືບໍ່.

ການທົດລອງທີ 2 : ເອົາຄຳຕໍ່ " ແລ້ວ " ມາໃສ່ທາງຫຼັງຂອງກິລິຍາອະລິທີ 1 ໄດ້ ຫຼືບໍ່.

ການທົດລອງທີ 3 : ເອົາຄຳຕໍ່ " ແລະ " ມາໃສ່ທາງຫຼັງຂອງກິລິຍາອະລິທີ 1 ໄດ້ ຫຼືບໍ່.

ການທົດລອງທີ 4 : ເອົາຄຳຕໍ່ " ເພື່ອ " ມາໃສ່ທາງຫຼັງຂອງກິລິຍາອະລິທີ 1 ໄດ້ ຫຼືບໍ່.

ການທົດລອງທີ5 : ໃນເມື່ອຕັ້ງຄຳຖາມແບບຕອບຮັບ-ປະຕິເສດແລ້ວ, ຮູບຄຳຕອບນັ້ນເປັນແນວໃດ, ໃຊ້ແຕ່ກິລິຍາທຳອິດ ຫຼື ກິລິຍາທີ 2 ຫຼື ບໍ່ກໍໃຊ້ທັງ 2 ກິລິຍາມາຕອບ. ຕົວຢ່າງເຊັ່ນ:

10) ປີ້ງປາກິນ

10-1 a) ບ່ປ້ຳປາກິນ

10-1 b) ປ້ຳປາບ່ກິນ

10-2) ປ້ຳປາແລ້ວກິນ

10-3) ປ້ຳປາແລະກິນ

10-4 ປ້ຳປາເພື່ອກິນ

10-5) ປ້ຳປາກິນບ່ ? -ປ້ຳ, -ບ່ປ້ຳ

11) ຕັດຜົມສັ້ນ

11-1 a) ບ່ຕັດຜົມສັ້ນ

11-1 b) ຕັດຜົມບ່ສັ້ນ

11-2) ຕັດຜົມແລ້ວສັ້ນ

11-3) * ຕັດຜົມແລະສັ້ນ

11-4) * ຕັດຜົມເພື່ອສັ້ນ

11-5) ຕັດຜົມສັ້ນບ່ ? -ເຈົ້າ, ສັ້ນ -ບ່, ບ່ສັ້ນ

ໝາຍ " * " ໃນບົດນີ້ມີຄວາມໝາຍວ່າ ບ່ໃຊ້ໃນການເວົ້າ.

2. ການຈຳແນກກິລິຍາພວງໃນທາງຄວາມໝາຍ

ໃນຂໍ້ 2 ນີ້ຈະພິຈາລະນາເຖິງຄວາມໝາຍຂອງກິລິຍາພວງ ໂດຍໃຊ້ການທົດລອງທີ່ກ່າວໄວ້ໃນຂໍ້ 1.3.2..

2.1.ຄວາມໝາຍຂອງຮູບແບບທີ (A)

ຄຳກິລິຍາພວງຮູບແບບທີ (A) ສາມາດເວົ້າໄດ້ວ່າຮ່ຽງກິລິຍາອະລິຕາມເຫດການທີ່ເກີດຂຶ້ນ ແລະ ເປັນເຫດການທີ່ຕ່ໍເນື່ອງກັນ. ໝາຍຄວາມວ່າ ເຫດການທີ1, ເຊ່ິງເປັນເນື້ອໃນຂອງກິລິຍາອະລິທີ1, ສິ້ນສຸດລົງແລ້ວ ເຫດການທີ2, ເຊ່ິງເປັນເນື້ອໃນຂອງກິລິຍາອະລິທີ2, ຈະເກີດຂຶ້ນມາ. ເນື່ອງຈາກວ່າ ໄດ້ຜົນການທົດລອງດັ່ງຕ່ໍໄປນີ້:

(12) ອ່ານຈົດໝາຍຈົບ

(12-1 a) ບ່ອ່ານຈົດໝາຍຈົບ

(12-1 b) ອ່ານຈົດໝາຍບ່ຈົບ

(ຖ້າໃສ່ຄຳວ່າ"ແຕ່"ຢູ່ທາງໜ້າຂອງ"ບ່", ຈະເຮັດໃຫ້ໄດ້ຄວາມໝາຍດີກວ່າ)

(12-2) ອ່ານ ຈົດໝາຍແລ້ວຈົບ

(12-3) ອ່ານຈົດໝາຍແລະຈົບ

ห้ามจำหน่าย

(12-4) ອ່ານຈົດໝາຍ<u>ເພື່ອ</u>ຈີກ

(12-5) ອ່ານຈົດໝາຍຈີກ <u>ບໍ່</u>? -<u>ອ່ານ</u> , -<u>ບໍ່ອ່ານ</u>

(13) ປີ້ງປາກິນ

(13-1 a) <u>ບໍ່</u>ປີ້ງປາກິນ

(13-1 b) ປີ້ງປາ<u>ບໍ່</u>ກິນ

(ຖ້າໃສ່ຄຳວ່າ"ແຕ່"ຢູ່ທາງໜ້າຂອງ "ບໍ່" ຈະເຮັດໃຫ້ໄດ້ຄວາມໝາຍດີກວ່າ)

(13-2) ປີ້ງປາ<u>ແລ້ວ</u>ກິນ

(13-3) ປີ້ງປາ<u>ແລະ</u> ກິນ

(13-4) ປີ້ງປາ<u>ເພື່ອ</u>ກິນ

(13-5) ປີ້ງປາກິນ<u>ບໍ່</u>? -<u>ປີ້ງ</u>, -<u>ບໍ່ປີ້ງ</u>

ນອກຈາກນີ້ແລ້ວປະໂຫຍກທີ (12)ແລະປະໂຫຍກທີ (13) ຍັງເອົາກິລິຍາອະລິທີ 1 ກັບ ກິລິຍາອະລິທີ 2 ມາວາງປົນກັບກັນບໍ່ໄດ້ອີກ.

(12) '* ຈີກອ່ານຈົດໝາຍ

(12)"* ຈີກຈົດໝາຍອ່ານ

(13) '* ກິນປີ້ງປາ

(13)"* ກິນປາປີ້ງ

ໃນກິລິຍາພວງ(13)' ນີ້ ຕາມທຳມະດາແລ້ວບໍ່ສາມາດເປັນກິລິຍາພວງທີ່ຖືກຕ້ອງໄດ້. ຍ້ອນວ່າ ຈະກິນກ່ອນ ປີ້ງປາ ບໍ່ໄດ້ ແຕ່ຄົນໃນສັງຄົມພັດເຂົ້າໃຈວ່າ "ປີ້ງປາ" ມີຄວາມໝາຍຄືກັນກັບ "ປາປີ້ງ". ສ່ວນ "ປາປີ້ງ" ໃນກໍລະນີ(13)" ນີ້ ແມ່ນ ຊື່ຂອງອາຫານຊະນິດໜຶ່ງ ທີ່ມັກເວົ້າໃນສັງຄົມ.

ລັກສະນະພິເສດຂອງກິລິຍາພວງທີ່ເປັນຮູບແບບທີ (A)ນີ້ສາມາດໃສ່ຄຳຕໍ່ " ແລ້ວ ", " ແລະ " ຫຼື " ເພື່ອ " ໄດ້. ແລະເວລາຕອບຄຳຖາມແບບຕອບຮັບ-ປະຕິເສດ ໃຊ້ແຕ່ກິລິຍາທີ1 ກໍພໍ. ລັກສະນະເຫຼົ່ານີ້ສະແດງໃຫ້ເຫັນວ່າກິລິຍາພວງຮູບແບບທີ (A) ມີຄວາມໝາຍວ່າ ຮຽງກິລິຍາອະລິຕາມເຫດການທີ່ປາກົດຂຶ້ນ, ແລະເປັນເຫດການທີ່ຕໍ່ເນື່ອງກັນ ຫຼືເຫດການທີ 1 ກັບເຫດການທີ 2 ນັ້ນຈະເກີດຂຶ້ນຕາມລຳດັບ ແຕ່ໃນເວລາຖືກຖາມປະໂຫຍກຕອບຮັບ-ປະຕິເສດແລ້ວ ມີບາງກິລິຍາພວງທີ່ເອົາກິລິຍາທີ 2 ມາໃຊ້ເປັນຄຳຕອບກໍໄດ້, ເອົາທັງ 2 ກິລິຍາກໍໄດ້ ເຊັ່ນ

(14) ຈີກຈົດໝາຍຖິ້ມ

(14-1 a) <u>ບໍ່</u>ຈົກຈິດໝາຍຖົ້ມ

(14-1 b) ຈົກຈິດໝາຍ<u>ບໍ່</u>ຖົ້ມ

(ຖ້າໃສ່ຄຳວ່າ"ແຕ່"ຢູ່ທາງໜ້າຂອງ"ບໍ່", ຈະເຮັດໃຫ້ໄດ້ຄວາມໝາຍດີກວ່າ)

(14-2) ຈົກຈິດໝາຍ<u>ແລ້ວ</u>ຖົ້ມ

(14-3) ຈົກຈິດໝາຍ<u>ແລະ</u>ຖົ້ມ

(14-4) ຈົກຈິດໝາຍ<u>ເພື່ອ</u>ຖົ້ມ

(14-5) ຈົກຈິດໝາຍຖົ້ມ<u>ບໍ່</u>? -<u>ຖົ້ມ</u>, -<u>ບໍ່ຖົ້ມ</u> ຫຼື -<u>ຈົກຖົ້ມ</u>, -<u>ບໍ່ຈົກຖົ້ມ</u>

ມັນຈະມີໂຄງສ້າງແນວໃດກໍຕາມ, ກໍແລ້ວແຕ່ບໍລິບົດຂອງປະໂຫຍກ ແລະຂຶ້ນກັບຜູ້ຖາມວ່າ ຢາກໄດ້ຄຳຕອບຄືແນວໃດ, ຖ້າຜູ້ຖາມເນັ້ນໃສ່ກິລິຍາອະລິທິ 1 ຜູ້ຕອບກໍຈະໃຊ້ກິລິຍາອະລິທິ 1 ມາຕອບ.

2.2.ຄວາມໝາຍຂອງຮູບແບບທີ (B)

ຄຳກິລິຍາພວງຮູບແບບທີ (B) ສາມາດເວົ້າໄດ້ວ່າ ຮຽງກິລິຍາອະລິຕາມເຫດການທີ່ເກີດຂຶ້ນ, ແລະເປັນເຫດການທີ່ເກີດຂຶ້ນໄລ່ລຽງກັນ ຫຼືເນື່ອງຈາກວ່າ ໄດ້ຜົນການທົດລອງດັ່ງຕໍ່ໄປນີ້:

(15) ເລື່ອນປະຕູເປີດ

(15-1 a) ບໍ່ເລື່ອນປະຕູເປີດ

(15-1 b) *ເລື່ອນປະຕູ<u>ບໍ່</u>ເປີດ

(15-2) *ເລື່ອນປະຕູ<u>ແລ້ວ</u>ເປີດ

(15-3) *ເລື່ອນປະຕູ<u>ແລະ</u>ເປີດ

(15-4) ເລື່ອນປະຕູ<u>ເພື່ອ</u>ເປີດ

(15-5) ເລື່ອນປະຕູເປີດ<u>ບໍ່</u> ? -ເຈົ້າ, <u>ເລື່ອນ</u>, -ບໍ່, <u>ບໍ່ເລື່ອນ</u>

(16) ເປີດກະເປົາເບິ່ງ

(16-1 a) <u>ບໍ່</u>ເປີດກະເປົາເບິ່ງ

(16-1 b) *ເປີດກະເປົາ<u>ບໍ່</u>ເບິ່ງ

(16-2) *ເປີດກະເປົາ<u>ແລ້ວ</u>ເບິ່ງ

(16-3) *ເປີດກະເປົາ<u>ແລະ</u>ເບິ່ງ

(16-4) ເປີດກະເປົາ<u>ເພື່ອ</u>ເບິ່ງ

(16-5) ເປີດກະເປົາເບິ່ງ<u>ບໍ່</u> ? - ເຈົ້າ, <u>ເປີດ</u>, -ບໍ່, <u>ບໍ່ເປີດ</u>

ລັກສະນະພິເສດຂອງກິລິຍາພວງທີ່ເປັນຮູບແບບທີ (B) ນັ້ນແມ່ນບໍ່ສາມາດໃສ່ຄຳຕໍ່ " ແລ້ວ ", " ແລະ "ໄດ້. ແລະເວລາຕອບຄຳຖາມແບບຕອບຮັບ-ປະຕິເສດ ກໍຕ້ອງໃຊ້ກິລິຍາທີ1 ເທົ່ານັ້ນ. ລັກສະນະເຫຼົ່ານີ້ສະແດງໃຫ້ເຫັນວ່າກິລິຍາພວງຮູບແບບທີ (B) ມີຄວາມໝາຍວ່າຮຽງ ກິລິຍາອະລິຕາມເຫດການທີ່ເກີດຂຶ້ນ, ແລະເປັນເຫດການທີ່ໄລ່ລຽງກັນ.

2.3. ຄວາມໝາຍຂອງຮູບແບບທີ (C)

ຄຳກິລິຍາພວງຮູບແບບທີ (C) ສາມາດເວົ້າໄດ້ວ່າ ກິລິຍາອະລິທີ 2 ສະແດງເຖິງຜົນທີ່ໄດ້ຈາກເຫດການຂອງກິລິຍາອະລິທີ 1. ເນື່ອງຈາກວ່າໄດ້ຜົນການທົດລອງດັ່ງໂຕຢ່າງທີ (17) ຢູ່ຂ້າງລຸ່ມນີ້.

(17) ປີ້ງປາໄໝ້

(17-1 a) ບໍ່ປີ້ງປາໄໝ້

(17-1 b) ປີ້ງປາບໍ່ໄໝ້

(17-2) ປີ້ງປາແລ້ວໄໝ້

(17-3) *ປີ້ງປາແລະໄໝ້

(17-4) *ປີ້ງປາເພື່ອໄໝ້

(17-5) ປີ້ງປາໄໝ້ບໍ່? -ໄໝ້, -ບໍ່ໄໝ້

ລັກສະນະພິເສດຂອງກິລິຍາພວງທີ່ເປັນຮູບແບບທີ (C) ນີ້ ແມ່ນບໍ່ສາມາດໃສ່ຄຳຕໍ່ " ແລະ " ຫຼື " ເພື່ອ " ໄດ້. ແລະເວລາຕອບຄຳຖາມແບບຕອບຮັບ-ປະຕິເສດ ຕ້ອງໃຊ້ແຕ່ກິລິຍາ ທີ2 ເທົ່ານັ້ນ. ພ້ອມດຽວກັນນີ້ ຕົວປະກອບຂອງກິລິຍາທີ 1 ແມ່ນຄຳຕົວຕັ້ງຂອງກິລິຍາທີ 2 ໃນທາງຄວາມໝາຍດ້ວຍ. ໝາຍຄວາມວ່າໂຕຢ່າງທີ(17) " ປາ " ແມ່ນຄຳປະກອບຂອງກິລິຍາທີ 1 " ປີ້ງ " ພ້ອມດຽວກັນ ນີ້ " ປາ "ແມ່ນຄຳຕົວຕັ້ງ ຂອງຄຳກິລິຍາ " ໄໝ້ "ເຊິ່ງສະແດງເຖິງຜົນສະທ້ອນຂອງກິລິຍາທີ 1 " ປີ້ງ ". ລັກສະນະເຫຼົ່ານີ້ ສະແດງໃຫ້ເຫັນວ່າກິລິຍາພວງຮູບແບບທີ (C) ມີຄວາມໝາຍວ່າ ກິລິຍາ ທີ2 ສະແດງເຖິງຜົນທີ່ໄດ້ຈາກເຫດການຂອງກິລິຍາອະລິທີ 1.

2.4. ຄວາມໝາຍຂອງຮູບແບບທີ (D)

ຄຳກິລິຍາພວງຮູບແບບທີ (D) ສາມາດເວົ້າໄດ້ວ່າ ກິລິຍາອະລິທີ 2 ສະແດງເຖິງສະພາບທີ່ໄດ້ຈາກເຫດການຂອງກິລິຍາອະລິທີ1ນັ້ນເກີດຂຶ້ນແລ້ວ. ເນື່ອງຈາກວ່າໄດ້ຜົນການທົດລອງດັ່ງໂຕຢ່າງທີ (18) ຢູ່ຂ້າງລຸ່ມນີ້.

(18) ຕັດຜົມສັ້ນ

(18-1 a) ບໍ່ຕັດຜົມສັ້ນ

(18-1 b) ຕັດຜົມບໍ່ສັ້ນ

(18-2) ຕັດຜົມ<u>ແລ້ວ</u>ສັ້ນ

(18-3) *ຕັດຜົມ<u>ແລະ</u>ສັ້ນ

(18-4) *ຕັດຜົມ<u>ເພື່ອ</u>ສັ້ນ

(18-5) ຕັດຜົມສັ້ນ<u>ບໍ່</u> ? -ເຈົ້າ, <u>ສັ້ນ</u>. -ບໍ່, ບໍ່<u>ສັ້ນ</u>

ລັກສະນະພິເສດຂອງກິລິຍາພວງທີ່ເປັນຮູບແບບທີ (D) ນີ້ ແມ່ນສາມາດໃສ່ຄຳຕໍ່ " ແລ້ວ " ໄດ້. ແລະເວລາຕອບຄຳຖາມແບບຕອບຮັບ-ປະຕິເສດ ຕ້ອງໃຊ້ແຕ່ກິລິຍາທີ2 ເທົ່ານັ້ນ. ພ້ອມດຽວກັນນີ້ ຕົວປະກອບຂອງກິລິຍາທີ 1 ແມ່ນຄຳຕົວຕັ້ງຂອງກິລິຍາທີ2 ໃນທາງຄວາມໝາຍດ້ວຍ. ແລະຍັງເອົາຄຳວ່າ" ໃຫ້ " ຕື່ມໃສ່ທາງໜ້າຂອງກິລິຍາທີ2 ໄດ້ອີກ.ເຊັ່ນ

(18) ' ຕັດຜົມ<u>ໃຫ້</u>ສັ້ນ

ເອົາຄຳວ່າ" ໃຫ້ " ຕື່ມໃສ່ທາງໜ້າຂອງກິລິຍາ ທີ2 ໄດ້ ກໍສະແດງວ່າ ກິລິຍາທີ2ສະແດງເຖິງສະພາບທີ່ໄດ້ອອກມາຈາກການປະຕິບັດຂອງກິລິຍາອະລິ1. ສ່ວນກິລິຍາພວງຮູບແບບທີ(C) ກໍໄດ້ມີຜົນອັນດຽວກັນກັບຮູບແບບທີ(D). ແຕ່ບໍ່ສາມາດໃສ່ຄຳວ່າ " ໃຫ້ " ຢູ່ທາງໜ້າຂອງກິລິຍາທີ 2 ເຊັ່ນ

(17) ' *ປີ້ງປາ<u>ໃຫ້</u>ໄໝ້

ອັນນີ້ ແມ່ນຄວາມແຕກຕ່າງລະຫວ່າງຮູບແບບທີ (C) ກັບ(D)

ລັກສະນະເຫຼົ່ານີ້ສະແດງໃຫ້ເຫັນວ່າກິລິຍາພວງຮູບແບບທີ(D) ມີຄວາມໝາຍວ່າ ກິລິຍາທີ2 ສະແດງເຖິງສະພາບທີ່ຢາກໄດ້ຈາກເຫດການຂອງກິລິຍາອະລິທີ1.

2.5. ຄວາມໝາຍຂອງຮູບແບບທີ (E)

ຄຳກິລິຍາພວງຮູບແບບທີ (E) ສາມາດເວົ້າໄດ້ວ່າ ເຫດການກິລິຍາທີ 1 ກັບເຫດການກິລິຍາທີ2 ຈະເກີດຂຶ້ນພ້ອມໆກັນ. ເນື່ອງຈາກວ່າໄດ້ຜົນການທົດລອງດັ່ງໂຕຢ່າງທີ (19) ຢູ່ຂ້າງລຸ່ມນີ້.

(19) ໃຊ້ບິກຂຽນ

(19-1 a) <u>ບໍ່</u>ໃຊ້ບິກຂຽນ

(19-1 b) *ໃຊ້ບິກ<u>ບໍ່</u>ຂຽນ

(19-2) *ໃຊ້ບິກ<u>ແລ້ວ</u>ຂຽນ

(19-3) *ໃຊ້ບິກ<u>ແລະ</u>ຂຽນ

(19-4) ໃຊ້ບິກ<u>ເພື່ອ</u>ຂຽນ

(19-5) ໃຊ້ບໍ່ກຂຽນບໍ່ ? -ເຈົ້າ, ໃຊ້. -ບໍ່, ບໍ່ໃຊ້

ລັກສະນະພິເສດຂອງກິລິຍາພວງທີ່ເປັນຮູບແບບທີ (E) ນີ້ ແມ່ນບໍ່ສາມາດໃສ່ຄຳຕໍ່ " ແລ້ວ ", ຫຼື " ແລະ " ໄດ້. ແລະເວລາຕອບຄຳຖາມແບບຕອບຮັບ-ປະຕິເສດ ຕ້ອງໃຊ້ກິລິຍາທີ1. ລັກສະນະເຫຼົ່ານີ້ສະແດງໃຫ້ເຫັນວ່າກິລິຍາພວງຮູບແບບທີ (E) ມີຄວາມໝາຍວ່າ ເຫດການກິລິຍາທີ 1 ກັບເຫດການກິລິຍາທີ 2 ຈະເກີດຂຶ້ນພ້ອມກັນ.

2.6. ສະຫຼຸບໃນການທົດລອງ

ຜົນທີ່ໄດ້ຈາກການທົດລອງຕໍ່ກິລິຍາພວງຢູ່ຂ້າງເທິງນັ້ນ ໄດ້ສະແດງອອກໃນຕາຕະລາງດັ່ງຕໍ່ໄປນີ້:

ທົດລອງ	1 a ບໍ່ V1	1 b ບໍ່ V2	2 ແລ້ວ	3 ແລະ	4 ເພື່ອ	5 ຮູບຄຳຕອບ	ໝາຍເຫດ
ຮູບແບບ(A)	✓	✓	✓	✓	✓	V1 ,V2, V1 +V2	
ຮູບແບບ(B)	✓	×	×	×	✓	V1	
ຮູບແບບ(C)	✓	✓	✓	×	×	V2	+ໃຫ້ V2ບໍ່ໄດ້
ຮູບແບບ(D)	✓	✓	✓	×	×	V2	+ໃຫ້ V2ໄດ້
ຮູບແບບ(E)	✓	×	×	×	✓	V1	

ໝາຍເຫດ: ✓ ແມ່ນໃຊ້ໄດ້, × ແມ່ນໃຊ້ບໍ່ໄດ້

ຈາກຕາຕະລາງຂ້າງເທິງນັ້ນ ປາກົດວ່າ ຮູບແບບທີ(B) ແລະ(E)ໄດ້ຮັບຜົນອັນດຽວກັນ ສະນັ້ນ ຜູ້ຂຽນຈຶ່ງໄດ້ຈັດຮູບແບບທີ (B) ແລະ(E) ເຂົ້າເປັນອັນດຽວກັນ.

ສະຫຼຸບລວມແລ້ວຄວາມໝາຍຂອງຄຳກິລິຍາພວງທີ່ມີໂຄງສ້າງ " V1+N+V2" ມີ 4 ຄວາມໝາຍດັ່ງລຸ່ມນີ້:

(1) ຮູບແບບທີ (A) : V1 ແລ້ວຈຶ່ງ V2

(2)ຮູບແບບທີ (B) (E) : ເຮັດ V1 ໄປ V2 ເກີດຂຶ້ນໄປນຳ

(3) ຮູບແບບທີ (C) : V1 ແລ້ວໄດ້ຜົນ V2,

(4) ຮູບແບບທີ (D) : V1 ແລ້ວໄດ້ສະພາບ V2,

2.7. ກ່ຽວກັບຄຳຕົວປະກອບຂອງກິລິຍາທີ 1

ກ່ອນຈະສະຫຼຸບບົດ ຄວນຈະກ່າວເຖິງຄຳຕົວປະກອບຂອງກິລິຍາທີ 1.

ໃນກິລິຍາພວງ " V1+N+V2" ມີ N ສອງຊະນິດ ເຊິ່ງເປັນຄຳຕົວປະກອບຂອງກິລິຍາທີ 1 ຄື:

-N ແມ່ນຄຳຕິອປະກອບຂອງທັງ V1 ແລະ V2

-N ແມ່ນຄຳຕິອປະກອບຂອງ V1, ແຕ່ເປັນຄຳຕິອຕັ້ງຂອງ V2 ໃນທັງຄວາມໝາຍ ໂຕຢ່າງເຊັ່ນ:

(20) ປີ້ງປາກິນ.

(20) 'ຂ້ອຍເປັນຄົນປີ້ງ, ຂ້ອຍເປັນຜູ້ກິນ.

(21) ປີ້ງປາໄໝ້.

(21) ' ຂ້ອຍເປັນຄົນປີ້ງ, ຫຼັງຈາກນັ້ນປາໄໝ້.

(22) ນາຍສັ່ງລູກນ້ອງໄປຕ່າງແຂວງ.

(22) ' ນາຍເປັນຄົນສັ່ງ, ລູກນ້ອງເປັນຄົນໄປຕ່າງແຂວງ.

ໂຕຢ່າງທີ(21) " ປາ " ແມ່ນຄຳຕິອປະກອບຂອງກິລິຍາທີ 1 " ປີ້ງ " ພ້ອມດຽວກັນນີ້ " ປາ " ແມ່ນຄຳຕິອຕັ້ງຂອງຄຳກິລິຍາ " ໄໝ້ " ເຊິ່ງສະແດງເຖິງຜົນສະທ້ອນຂອງກິລິຍາທີ 1. ສ່ວນໂຕຢ່າງທີ (22) " ລູກນ້ອງ " ແມ່ນຄຳຕິອປະກອບຂອງກິລິຍາ " ສັ່ງ " ພ້ອມດຽວກັນນີ້ " ລູກນ້ອງ " ແມ່ນຄຳຕິອ ຕັ້ງ ຂອງກິລິຍາວະລີ "ໄປຕ່າງແຂວງ ", ເຊິ່ງສະແດງເຖິງຜູ້ປະຕິບັດຂອງກິລິຍາທີ 2.

ປະໂຫຍກແບບນີ້ມີແຕ່ໃນກໍລະນີຄຳກິລິຍາທີ 1 ມີຄວາມໝາຍຢູ່ໃນໂຕວ່າຄຳປະກອບນັ້ນ ສາມາດຮັບຜົນປະໂຫຍດຈາກການກະທຳຂອງກິລິຍາທີ 1 .

ຄຳກິລິຍາທີ່ໃຫ້ມີຄວາມໝາຍແບບນີ້ມີໜ້ອຍເຊັ່ນ " ເອົ້ນ ", " ໃຊ້ ", " ຊັກຊວນ " ແລະອື່ນໆ, ຫຼືບໍ່ແມ່ນກໍ່ເປັນຄຳກິລິຍາ ທີ່ມີອິດທິພົນຕໍ່ຄຳຕິອປະກອບເຊັ່ນ " ຕີ ", " ຢຽບ " ເປັນຕົ້ນ ຢ່າງປະໂຫຍກ ໂຕຢ່າງຂ້າງລຸ່ມນີ້:

(23) ນັກທ່ອງທ່ຽວຢຽບດອກໄມ້ຫັກ.

ໃນກໍລະນີນີ້ ຄຳກິລິຍາ " ຢຽບ " ມີອິດທິພົນຕໍ່ຄຳປະກອບ " ດອກໄມ້ " ແລະ " ດອກໄມ້ " ແມ່ນປະທານຂອງຄຳກິລິຍາ " ຫັກ ".

ເຖິງຢ່າງໃດກໍ່ຕາມ, ໃນບົດນີ້ ຂໍຊີ້ແນະແຕ່ກິລິຍາພວງ "V1+N+V2" ທີ່ມີໂຄງສ້າງ ໃນທາງ ຄວາມໝາຍຕ່າງກັນ.

3. ສະຫຼຸບ

3.1.ຜົນທີ່ໄດ້ຮັບ

ຜົນທີ່ໄດ້ຮັບຈາກການພິຈາລະນາກິລິຍາພວງ "V1+N+V2" ມີຢູ່ 2 ຂໍ້ລຸ່ມນີ້

1) ເຖິງແມ່ນວ່າມີຮູບກິລິຍາພວງ " V1+N+V2" ອັນດຽວກັນກໍຕາມ, ສາມາດຈຳແນກ ຄວາມໝາຍເປັນ 4 ຄວາມໝາຍ ໂດຍໃຊ້ວິທີທົດລອງ.

2) ຜູ້ເວົ້າຈະເນັ້ນໜັກກິລິຍາໃດນັ້ນຈະຂຶ້ນກັບບໍລິບົດ ຫຼືຄວາມຮູ້ສຶກຂອງຜູ້ເວົ້າ.

3.2. ຂໍ້ສະເໜີໃນການຄົ້ນຄວ້າຂັ້ນຕໍ່ໄປ

ໃນບົດນີ້ ຈຳກັດຂອບເຂດແຕ່ ກິລິຍາພວງ " V1+N+V2" ເທົ່ານັ້ນ, ເຊິ່ງອາດຈະເວົ້າໄດ້ວ່າ ເປັນສ່ວນນ້ອຍໆຂອງກິລິຍາພວງໃນພາສາລາວ. ເພາະສະນັ້ນ ຍັງຕ້ອງສຶກສາ ກິລິຍາພວງ ທີ່ມີໂຄງ ສ້າງຕ່າງກັນອີກເຊັ່ນ " V1+N_1+V2+ N_2", "V1+V2+ N" ເປັນຕົ້ນ. ພ້ອມດຽວກັນນີ້ ຍັງຕ້ອງສຶກສາ ຈາກລັກສະນະໜ້າທີ່ຂອງ N ດ້ວຍ. ແລະອາດຈະມີຄຳສັບ ຫຼືສຳນວນອື່ນໆ ທີ່ສາມາດໃຊ້ໃນການທົດ ລອງກໍໄດ້.

ໃນການຄົ້ນຄວ້າຄັ້ງຕໍ່ໄປນີ້ ຄວນຈະຂະຫຍາຍຂອບເຂດຂອງໂຄງສ້າງຂອງກິລິຍາວະລີ ແລະ ຕ້ອງພິຈາລະນາລັກສະນະຂອງ V ກັບ N ໃຫ້ລະອຽດຂຶ້ນກວ່າເກົ່າ.

ເອກະສານອ້າງອີງ

Chuuwichaa, Yaacay(1993) *'khwaam pen prayook khoang nuaysaang kriyaa riang nay phaasaa Thai'* Ph.D. dissertation, Churalongkorn University

Mikami, Naomitsu(1981) 'Serial Verb Construction in Vietnamese and Cambodian' Journal of Japanese Linguistic Society, Vol.79. pp.95-117

Mochizuki, Keiko(1990) 'Compound Verb Meaning a Result in Japanese and Chinese' Journal of Tokyo University of Foreign Studies, Vol.40. pp.13-27

Thepkanjana,Kingkarn(1986) 'Serial verb Construction in Thai' Ph.D. dissertation, University of Michigan

ຄຳມອບທ້າຍ ບົ່ງການໃນພາສາລາວ

ໂດຍ ແສງຟ້າ ໂທລານຸພາບ

ລັກສະນະຂອງປະໂຫຍກທີ່ຄົນລາວໃຊ້ສື່ສານໃນຊີວິດປະຈຳວັນ ມີຢູ່ 4 ປະເພດ ຄື ປະໂຫຍກບອກເລົ່າ, ປະໂຫຍກຄຳຖາມ, ປະໂຫຍກບົ່ງການ ແລະປະໂຫຍກອຸທານ. ໃນແຕ່ລະລັກສະນະຂອງປະໂຫຍກ ເວລາໃຊ້ເວົ້າໃນຊີວິດຕົວຈິງມັກຈະມີຄຳມອບທ້າຍເຂົ້າຢູ່ໃນທ້າຍປະໂຫຍກສະເໝີ ເພື່ອໃຫ້ເຮັດຄວາມເວົ້າເປັນຕາຟັງ ແລະຍັງສະແດງເຖິງຄວາມຮູ້ສຶກຂອງຜູ້ເວົ້າອີກດ້ວຍ. ຄຳມອບທ້າຍທີ່ປາກົດຢູ່ທ້າຍປະໂຫຍກທັງ 4 ປະເພດນັ້ນ ມີຊື່ເອີ້ນຕາມປະໂຫຍກທີ່ມັນປາກົດຄື ຄຳມອບທ້າຍບອກເລົ່າ, ຄຳມອບທ້າຍຄຳຖາມ, ຄຳມອບທ້າຍບົ່ງການ ແລະຄຳມອບທ້າຍອຸທານ. ຄຳມອບທ້າຍແມ່ນຄຳທີ່ເຮັດໜ້າທີ່ເສີມໃຫ້ແກ່ປະໂຫຍກເພື່ອບອກເຈດຕະນາ, ອາລົມ ຫຼື ຄວາມຮູ້ສຶກ ແລະຊີ້ບອກເຖິງສາຍພົວພັນລະຫວ່າງຜູ້ເວົ້າແລະຜູ້ຟັງ. ມັນບໍ່ມີຄວາມໝາຍຕາຍໂຕ ແລະມີສ່ຽງວັນນະຍຸດບໍ່ຄົງທີ່. ຄົນລາວຜູ້ເປັນເຈົ້າຂອງພາສາຈະໃຊ້ຄຳມອບທ້າຍໄດ້ຢ່າງອັດຕະໂນມັດ ແຕ່ກໍເປັນການຍາກທີ່ຈະບອກວ່າຄຳມອບທ້າຍແຕ່ລະຄຳໃຊ້ແນວໃດ ເພາະຄຳມອບທ້າຍສ່ວນຫຼາຍ ເມື່ອປາກົດຢູ່ຢ່າງອິດສະຫຼະຈະບໍ່ມີຄວາມໝາຍສະເພາະຂອງຄຳ ແຕ່ຄວາມໝາຍແລະໜ້າທີ່ຂອງມັນຈະຂຶ້ນຢູ່ກັບປະໂຫຍກທີ່ຖືກນຳໃຊ້ໃນສະຖານະການຕົວຈິງຕ່າງໆ. ດ້ວຍສາເຫດນີ້ ຄົນຕ່າງປະເທດທີ່ຮຽນພາສາລາວຈຶ່ງພົບກັບຄວາມຫຍຸ້ງຍາກໃນການຮຽນຮູ້ ແລະນຳໃຊ້ຄຳມອບທ້າຍໃນຊີວິດຕົວຈິງ.

ໃນບົດຄວາມນີ້ຈະສະເໜີພຽງແຕ່ຄຳມອບທ້າຍທີ່ປາກົດຢູ່ໃນປະໂຫຍກບົ່ງການທີ່ເອີ້ນສັ້ນໆ ວ່າຄຳມອບທ້າຍບົ່ງການ.ຄຳມອບທ້າຍບົ່ງການໃນພາສາລາວທ້ອງຖິ່ນວຽງຈັນທີ່ສາມາດເກັບກຳໄດ້ ຈາກການໃຊ້ໃນຊີວິດຕົວຈິງ, ຈາກເລື່ອງສັ້ນ ແລະບົດນະວະນິຍາຍ ມີທັງໝົດ 15 ຄຳ ເຊິ່ງມີລາຍລະອຽດໃນການນຳໃຊ້ ດັ່ງຕໍ່ໄປນີ້:

1. ຊະ ~ ສາ /sa^{3}/~/sa:^{7}/

ຄຳມອບທ້າຍ “ຊະ-ສາ” ຖືກນຳໃຊ້ຢູ່ທ້າຍສະເພາະປະໂຫຍກບົ່ງການ. ຜູ້ເວົ້າໃຊ້ “ຊະ” /sa^{3}/ ເພື່ອແນະນຳຜູ້ມີຖານະທາງສັງຄົມຕ່ຳ ແລະອາຍຸອ່ອນກວ່າ ຫຼືຖານະທາງສັງຄົມສະເໝີກັນ (1)-(2).

(1) [ແວດບົດ] ຊາຍໜຸ່ມເອົາກະແລັມໄມ້ໃຫ້ທ້າວຕຸ ແລະເວົ້າວ່າ:

"ຕຸກິນ<u>ຊະ</u>, ອ້າຍເຄີຍກິນມາຫລາຍແລ້ວ." (Outhin, 1999: 90)
tu² kin⁵ <u>sa³</u> ʔa:ɲ⁵ kʰə:ɲ³ kin⁷ ma:ᐟ² la:ɲ⁴ lɛ:w⁵

(2) [ແວດບົດ] ຍິງຊະລາບອກຄວາມຈິງ ຕໍ່ຊາຍໜຸ່ມຜູ້ມາຕິດພັນລູກສາວຂອງລາວນັ້ນວ່າທັງສອງເປັນອ້າຍນ້ອງກັນ ພ້ອມທັງກ່າວວ່າ:
"ຄັນຊັ້ນ ລູກຮີບເມືອ<u>ຊະ</u>." (ບຸນທະນອງ ຊົມໄຊຜົນ, 2000: 46)
kʰan³ san⁵ lu:k⁵ hi:p⁵ mɯ:a³ <u>sa³</u>

• ກໍລະນີຜູ້ເວົ້າໃຊ້ໂຕຜັນແປສຽງຍາວ /sa:⁷/ ກັບຄູ່ສົນທະນາທີ່ມີຖານະທາງສັງຄົມສູງ ຫຼື ອາຍຸແກ່ກວ່າດັ່ງຕົວຢ່າງ:

(3) [ແວດບົດ] ລູກສາວແອ່ວພໍ່:
"ພໍ່ຊ້ໍ<u>ລິ</u>ດໃຫ້ເຮົາ<u>ສາ</u>."
pʰɔ:ᐟ² sɯ:⁵ lot² haɲ⁴ haw³ <u>sa:⁷</u>

• ບາງຄັ້ງໂຕຜັນແປສຽງສັ້ນ "ຊະ" /sa³/ ສາມາດໃຊ້ໃນເວລາຜູ້ເວົ້າຢາກໄດ້ຄຳເຫັນດີ ດັ່ງຕົວຢ່າງ (4) ຫຼືຄຳອະນຸຍາດຈາກຄູ່ສົນທະນາ (5).

(4) [ແວດບົດ] ຍິງສາວຕໍ່ລາຄາຜັກກັບແມ່ຄ້າ:
A. "ກິໂລລະຫ້າພັນໄດ້ບໍ?"
ki³ lo:ᐟ³ la⁵ ha:ᐟ⁶ pʰan³ daɲ⁵ bɔ:ᐟ²
B. "ເອົາ<u>ຊະ</u>."
ʔaw⁴ <u>sa³</u>

(5) [ແວດບົດ] ລູກເວົ້າກັບພໍ່:
A. "ພໍ່, ລູກໄປວັນເກີດໝູ່ເດີ"
pʰɔ³ lu:k⁵ paɲ⁴ wan³ kə:tᐟ⁶ mu:ᐟ² də:ᐟ⁵
B. "ເອີ, ໄປ<u>ຊະ</u>."
ʔə:ᐟ² paɲ⁴ <u>sa³</u>

2. ດຸ ~ ດູ /du³/~/du:⁷/

ຄຳລົງທ້າຍ "ດຸ-ດູ" /du³/~/du:⁷/ ຖືກນຳໃຊ້ເຂົ້າໃນປະໂຫຍກບົ່ງການ ເພື່ອສັ່ງການ ຫຼືຂໍຮ້ອງ. ໂຕຜັນແປສຽງສັ້ນ "ດຸ", ຜູ້ເວົ້ານຳໃຊ້ເວລາຢາກຊຸກຍູ້ໃຫ້ຄູ່ສົນທະນາເຮັດສິ່ງໃດສິ່ງໜຶ່ງໃຫ້ຕົນ ດັ່ງຕົວຢ່າງ:

(6) [ແວດບົດ] ນາຍສາລະວັດທະທານເວົ້າກັບລູກນ້ອງ:
"ກວດໜັງສືມັນເບິ່ງ<u>ດຸ</u>. ບໍ່ແມ່ນພວກອັນທະພານຫວະ?" (ຈ.ທ່ຽງເທບວົງສາ, 1997:63)
ku:atᐟ⁶ nanɲ⁴ sɯ:⁴ manᐟ³ bəɲ² <u>du³</u> bɔ:ᐟ² mɛ:nᐟ² pʰu:ak³ ʔanᐟ¹ tʰaᐟ² pʰa:nᐟ³ waᐟ³

(7) [ແວດບົດ] ພໍ່ເວົ້າກັບລູກ:
“ນ້ອຍ, ເອົານ້ຳມາກິນ ດຸ.”
nɔ:j⁵, ʔaw¹ nam⁵ ma:³ kin¹ du³

(8) [ແວດບົດ] ທ່ານໝໍເວົ້າກັບຄົນເຈັບ:
“ຫາຍໃຈແຮງໆເບິ່ງ ດຸ.”
ha:j⁴ tɕaj¹ hɛ:ŋ³ hɛ:ŋ³ bəŋ² du³

• ສ່ວນໂຕຜັນແປສຽງຍາວ “ ດູ”, ຜູ້ເວົ້າໃຊ້ເພື່ອຂໍຮ້ອງໃຫ້ຄູ່ສົນທະນາເຮັດສິ່ງໃດສິ່ງໜຶ່ງ ດັ່ງ ຕົວຢ່າງ:

(9) [ແວດບົດ] ເອື້ອຍເວົ້າກັບນ້ອງສາວຜູ້ກຳລັງເບິ່ງໂທລະພາບ:
“ມອດໂທລະທັດ ດູ, ຊິເບິ່ງບົດຮຽນນ່າ.”
mɔ:t⁴ tʰo:³ la² tʰat² du:⁷ si² bəŋ³ bot³ hi:an³ na³

(10) [ແວດບົດ] ຍິງສາວເວົ້າກັບໝູ່ທີ່ພວມສົ່ງສຽງດັງ:
“ຢ່າສູ່ເວົ້າແຮງຫລາຍ ດູ.”
ja:² su² waw⁵ hɛ:ŋ³ la:j⁴ du:⁷

(11) [ແວດບົດ] ລູກຊາຍເວົ້າກັບພໍ່:
“ພໍ່ເວົ້າຫຍັງເກາະ? ເວົ້າໃໝ່ເບິ່ງ ດູ.” (ບຸນເສີນ ແສງມະນີ, 2000: 30)
pʰɔ:² waw⁵ ɲaŋ⁴ kɔ?² waw⁵ maj² bəŋ⁶ du:⁷

3. ແດ່ /dɛ:²/

ຄຳນອບທ້າຍ“ແດ່” /dɛ:²/, ຜູ້ເວົ້າໃຊ້ເພື່ອສັ່ງການ ຫຼືຂໍຮ້ອງ. “ແດ່” ສາມາດແທນດ້ວຍ “ແມ່” ເຊິ່ງປັດຈຸບັນໄວໜຸ່ມຫຼາຍຄົນກໍໃຊ້ໂຕຜັນແປນີ້.

• **ການສັ່ງ**: ຜູ້ເວົ້າສາມາດໃຊ້ “ແດ່” ເພື່ອບອກໃຫ້ຄູ່ສົນທະນາເອົາສິ່ງໃດສິ່ງໜຶ່ງໃຫ້ຕົນ ດັ່ງ ຕົວຢ່າງ:

(12) [ແວດບົດ] ທ່ານໝໍສັ່ງກາເຟໃຫ້ໝູ່ຢູ່ຮ້ານກິນດື່ມ:
“ຂໍກາເຟອີກຈອກໜຶ່ງ ແດ່.” (ບຸນທະນອງ ຊົມໄຊຜົນ, 2000: 60)
kʰɔ:⁴ ka:¹ fe:³ ʔi:k⁶ tɕɔ:k⁶ nɯŋ³ dɛ:²

(13) [ແວດບົດ] ຊາຍໜຸ່ມສັ່ງເຝີໃນຮ້ານອາຫານ:
“ເອົາເຝີໃຫ້ ແດ່ ຖ້ວຍໜຶ່ງ.”
ʔaw¹ fə:⁴ haj⁶ dɛ:² tʰu:aj⁶ nɯŋ²

• **ການຂໍຮ້ອງ:** ຜູ້ເວົ້າສາມາດໃຊ້ "ແດ່" ເພື່ອສະແດງຄວາມຂໍຮ້ອງໃຫ້ຄູ່ສົນທະນາເຮັດສິ່ງໃດສິ່ງໜຶ່ງແກ່ຕົນ, ດັ່ງຕົວຢ່າງ:

(14) [ແວດບົດ] ຊາຍໜຸ່ມເວົ້າກັບຍິງສາວ:

"ອະໄພໃຫ້ອ້າຍ<u>ແດ່</u>... ດວງພອນ." (ບຸນເສີນ ແສງມະນີ, 2000: 25)

ʔaˀ pʰajˀ hajˀ ʔaːjˀ <u>dɛːˀ</u> duːanˀ pʰɔːnˀ

(15) [ແວດບົດ] ລູກສາວບອກພໍ່ໃຫ້ໄປສົ່ງຢູ່ໂຮງຮຽນ (ຕາມປົກກະຕິລາວຈະຍ່າງໄປ)

"ພໍ່, ສົ່ງລູກໄປໂຮງຮຽນ<u>ແມ່</u>."

pʰɔːˀ sonˀ luːkˀ pajˀ hoːŋˀ hiːanˀ <u>nɛːˀ</u>

(16) [ແວດບົດ] ນ້ອງສາວຂໍຄວາມຊ່ອຍເຫຼືອຈາກເອື້ອຍ:

"ຍ້າຍໂຕ๊ະຊ່ອຍ<u>ແມ່</u>."

ɲaːjˀ toˀ sɔːjˀ <u>nɛːˀ</u>

(17) [ແວດບົດ] ແມ່ຄ້ານ້ອຍຮ້ອງໃສ່ຍິງສາວທີ່ຍ່າງກາຍ:

"ຊື້ຊ່ອຍ<u>ແດ່</u> ເອື້ອຍ." (Outhin, 1999: 160)

sɯːˀ sɔːjˀ <u>dɛːˀ</u> ʔɯːajˀ

4. ເດີ ~ ເດ໊ /dəˀ/~/dəːˀ/

ເວລາຄຳມອບທ້າຍ "ເດີ-ເດ໊" /dəˀ/~/dəːˀ/ ປາກົດຢູ່ທ້າຍປະໂຫຍກບົ່ງການ, ຜູ້ເວົ້າໃຊ້ເພື່ອສະແດງເຖິງການສັ່ງທີ່ອ່ອນໂຍນ, ໃຫ້ກຳລັງໃຈ, ຕັກເຕືອນ, ເຊີນຊວນ ຫຼືສະເໜີແນະ.

• **ການສັ່ງທີ່ອ່ອນໂຍນ:** ຜູ້ເວົ້າໃຊ້ "ເດີ-ເດ໊" ເວລາບອກຄູ່ສົນທະນາໃຫ້ເຮັດສິ່ງໃດສິ່ງໜຶ່ງ. ໂຕຜັນແປສຽງຍາວມີລັກສະນະອ່ອນໂຍນແລະສຸພາບກວ່າ ດັ່ງຕົວຢ່າງ:

(18) [ແວດບົດ] ແມ່ເວົ້າກັບລູກ:

"ມື້ອື່ນຕື່ນແຕ່ເຊົ້າ<u>ເດີ</u>."

mɯːˀ ʔɯːnˀ tɯːnˀ tɛːˀ sawˀ dəˀ

(19) [ແວດບົດ] ຊາຍໜຸ່ມເວົ້າກັບຜູ້ເສີບໃນຮ້ານຂາຍເຝີ:

"ເກັບເງິນໂຕະຂ້ອຍພີ້<u>ເດ໊</u>." (ດວງຈຳປາ, 2002: 15)

kepˀ ŋənˀ toˀ kʰɔjˀ pʰiːˀ <u>dəːˀ</u>

(20) [ແວດບົດ] ນາຍຄູບອກໃຫ້ນັກຮຽນຮ້ອງເພງ:

"ເອົາລະ ຮ້ອງພ້ອມໆກັນເດີ້."
ʔaw¹ la⁵ hɔ:ŋ⁵ pʰɔ:m⁵ pʰɔ:m⁵ kan³ dəː⁷

- **ຊຸກຍູ້ໃຫ້ກຳລັງໃຈ:**

(21) [ແວດບົດ] ພໍ່ເວົ້າກັບລູກສາວຫຼັງຈາກລູກເອົາປຶ້ມຕິດຕາມການຮຽນໃຫ້ພໍ່ເຊັນ:
"ຕັ້ງໃຈຮຽນໃຫ້ເກັ່ງໆເດີ້."
taŋ⁵ tɕaj¹ hi:an⁵ haj⁶ keŋ² keŋ² dəː⁷

- **ການຕັກເຕືອນ:**

(22) [ແວດບົດ] ແມ່ເຕືອນລູກຊາຍທີ່ພວມຂ້າມທາງ:
"ລະວັງລົດເດີ້."
la² waŋ³ lot² dəː⁷

- **ການສະເໜີແນະ:**

(23) [ແວດບົດ] ເອື້ອຍເວົ້າກັບນ້ອງຜູ້ພວມປຸງອາຫານ:
"ເອົາເກືອໃສ່ຕື່ມອີກເດີ້, ມັນຈຶ່ງພໍດີ."
ʔaw¹ kɯ:a¹ saj³ tɯ:m² ʔi:k⁶ dəː⁷ man² tɕɯŋ² pʰɔ:⁶ di:¹

- **ການຊວນເຊີນ:**

(24) [ແວດບົດ] ຊາຍໜຸ່ມເວົ້າກັບໝູ່ຂອງລາວ:
"ຕອນແລງໄປກິນເຂົ້າຢູ່ເຮືອນຂ້ອຍເດີ້."
tɔ:n¹ lɛ:ŋ³ paj¹ kin¹ kʰaw⁶ juː² hɯ:an³ kʰɔŋ⁶ dəː⁷

5. ໄດ໋ /daj³/

ຄຳນອບທ້າຍ "ໄດ໋" /daj³/ ເຊິ່ງປາກົດຢູ່ທ້າຍປະໂຫຍກບົ່ງການ, ຜູ້ເວົ້າໃຊ້ເພື່ອສະແດງເຖິງການຕັກເຕືອນ (25) ຫຼື ການກະຕຸກຊຸກຍູ້ (26).

(25) [ແວດບົດ] ພໍ່ເຕືອນລູກສາວຜູ້ກຳລັງຊີກິນກະແລັມ:
"ຢ່າກິນໄດ໋. ລູກຍັງຄ້ຳຮ້ອນຢູ່ນ່າ."
jaː² kin¹ daj³ luːk⁵ ɲaŋ³ kʰiŋ³ hɔ:n⁵ juː² naː²

(26) [ແວດບົດ] ນັກສຶກສາຜູ້ໜຶ່ງເບິ່ງໂມງ ແລະເວົ້າກັບໝູ່ຜູ້ຍັງນັ່ງເສີຍຢູ່:
"ໄປໄດ໋, ຮອດໂມງແລ້ວ."
paj¹ daj³ hɔ:t⁵ mo:ŋ³ lɛ:w⁵

6. ຕິ ~ ຕີ້ /ti³/~/ti:⁷/

ຄຳມອບທ້າຍ "ຕິ-ຕີ້" ໃນປະໂຫຍກບົ່ງການ, ຜູ້ເວົ້າໃຊ້ໃນເວລາທີ່ຕ້ອງການເຊີນຊວນ, ສະ ເໜີແນະ ຫຼືກະຕຸກຊຸກຍູ້ໃຫ້ຄູ່ສົນທະນາເຮັດສິ່ງໃດສິ່ງໜຶ່ງ. "ຕິ" ສຽງສັ້ນ, ຜູ້ເວົ້າໃຊ້ເວລາເຊີນຊວນ ດັ່ງຕົວຢ່າງ (27)-(28). ສຽງຍາວ "ຕີ້" ໃຊ້ເພື່ອສະແດງເຖິງການສະເໜີແນະ(29) ຫຼື ການກະຕຸກຊຸກຍູ້ (30)-(31).

- **ການເຊີນຊວນ:**

(27) [ແວດບົດ] ຊາຍໜຸ່ມເຊີນຍິງສາວຂຶ້ນຊ້ອນທ້າຍລົດຖີບ:
"ເຊີນ<u>ຕິ</u>, ອ້າຍຊິໄປສົ່ງ." (Outhin, 1999: 50)
sə:n³ <u>ti²</u> ʔa:j¹ si² paj¹ soŋ²

(28) [ແວດບົດ] ຍິງສາວເຊີນຊວນຊາຍໜຸ່ມເຂົ້າຮ່ວມງານລາຕີສະຫຼອງຂອງໂຮງຮຽນ:
"ເຊີນອ້າຍມ່ວນຊື່ນນຳນ້ອງກ່ອນ<u>ຕິ</u>." (ບຸນທະວີ ຈຳປາທອງ, 2002: 23)
sə:n³ ʔa:j¹ mu:an² sɯ:n² nam³ nɔ:ŋ¹ kɔ:n² <u>ti²</u>

- **ການສະເໜີແນະ:**

(29) [ແວດບົດ] ຊາວໜຸ່ມເອີ້ນໝູ່ໃຫ້ມານັ່ງນຳກັນໃນພິທີບາສີ:
"ມານັ່ງນຳກັນ<u>ພີ້ຕີ້</u>"
ma:³ naŋ² nam³ kan¹ pʰi:⁵ <u>ti:⁷</u>

- **ການກະຕຸກຊຸກຍູ້:**

(30) [ແວດບົດ] ຊາຍໜຸ່ມຊຸກຍູ້ໃຫ້ໝູ່ໄປນຳ:
"ໄປ<u>ຕີ້</u> ຢູ່ຫຍັງເກາະ?"
paj¹ <u>ti:⁷</u> ju:² ɲaŋ⁴ kɔʔ²

(31) [ແວດບົດ] ຊາຍໜຸ່ມເວົ້າກັບໝູ່ຜູ້ແລ່ນຊ້າ:
"ແລ່ນໄວໆ<u>ຕີ້</u>, ຈັກໜ້ອຍບໍ່ທັນລົດ."
lɛ:n² waj³ waj³ <u>ti:⁵</u>, tɕak³ nɔ:j¹ bɔ:² tʰan³ lot²

7. ເທາະ /tʰɔʔ²/

ຄຳມອບທ້າຍ "ເທາະ" ໃນປະໂຫຍກບົ່ງການ ໃຊ້ໃນເວລາທີ່ຜູ້ເວົ້າຢາກສະແດງການຊັກຊວນແບບຮີບດ່ວນ (32)-(33) ຫຼື ຂໍຮ້ອງ (34)-(35).

- **ຊັກຊວນ**

(32) [ແວດບົດ] ເມຍເວົ້າກັບຜົວ:

"ອ້າຍ, ເມືອ<u>ເທາະ</u> ໃກ້ຊິຄ่ำแล้ว." (ส.เถื่องเทพะลิด, 1997: 109)
ʔa:ʃ¹ mɯ:a³ tʰɔʔ² kaʃ¹ siˀ³ kʰamˀ² lɛ:wˀ⁵

(33) [แอดบิด] ผือเอ้ำกับเมย:
"ไป<u>เทาะ</u> นอน." (บุนเสิน แสงมะนิ, 2000: 51)
paʃ¹ <u>tʰɔʔ²</u> nu:amˀ³

(34) [แอดบิด] เมยเอ้ำกับผือ:
"เธ้าไปตะหลาดกัน<u>เทาะ</u>."
hawˀ³ paʃ¹ taːˀ² la:tˀ¹ kanˀ¹ <u>tʰɔʔ²</u>

- ການຂໍຮ้ອງ:

(35) [แอดบิด] ผือขໍถอามเห็นใจจากผู้เป็นเมย เซิ่งปะร้างกันเป็นเอลาดึมแล้อ:
"ขໍให้ข้อย และลูกได้อู่แบบนี้ตะหลอดไป<u>เทาะ</u>." (บุนเสิน แสงมะนิ, 2000: 88)
kʰɔːˀ⁴ haʃ¹ kʰɔʃ¹ lɛˀ² luːkˀ⁵ daʃ¹ juːˀ² bɛːpˀ⁶ niːˀ⁵ taˀ² lɔːtˀ⁶ paʃ¹ <u>tɔʔ²</u>

(36) [แอดบิด] เอื้อยเอ้ำกับน้องสาอ:
"ย่ากินหลาย<u>เทาะ</u> จักน้อยเจ็บท้อง."
jaːˀ² kinˀ¹ laːʃ³ <u>tʰɔʔ²</u> tɕakˀ³ nɔːʃ⁶ tɕepˀ³ tʰɔːŋˀ²

(37) [แอดบิด] เมยเอ้ำกับผือ:
"ฟ้าอพาลูกไปโธงหมໍ<u>เทาะ</u>."
faːwˀ⁵ pʰaːˀ¹ luːkˀ⁵ paʃ¹ hoːŋˀ³ mɔːˀ⁴ <u>tʰɔʔ²</u>

8. เถิด ~ เถิ้น /tʰəːtˀ⁶/~/tʰəːnˀ⁷/

ค้ำมอบท้าย "เถิด" /tʰəːtˀ⁶/, บางคั้งออกสูง /tʰəːnˀ⁶/ มักใช้ในสะถานะการ เป็นทางการเพื่ออวยพอม และอิงออม ในงานบุนเฮือน หิพิทิบาสิสู่ขอันเป็นต้น.

(38) [แอดบิด] เจ้าพาบอวยพอมแขกที่มาร่อมในงาน:
"ขໍให้ท่านจิ่งปะสิบแต่ถอามสุก<u>เถิด</u>."
kʰɔːˀ⁴ haʃ⁶ tʰaːnˀ² tɕoŋˀ² paˀ² sopˀ³ tɛːˀ² kuːamˀ³ sukˀ³ <u>tʰəːtˀ⁶</u>

(39) [แอดบิด] โถสิกก่าอในพิทิชาปะนากิดสิบ:
"ขໍให้ดอางอินยานขอางพ่ตู้จิ่งไปสู่สุถะติ<u>เถิ้น</u>."
kʰɔːˀ⁴ haʃ⁶ duːanʃ¹ winˀ³ ɲaːnˀ³ kʰɔːŋˀ⁴ pʰɔːˀ² tuːˀ⁵ tɕoŋˀ² paʃ¹ suːˀ² suˀ² kʰaˀ² tiˀ³ <u>tʰəːnˀ⁷</u>

9. ท้อน /tʰɔːnˀ⁷/

ຄຳມອບທ້າຍ "ທ້ອນ" /tʰɔ:n⁷/ ມີໜ້າທີ່ເພື່ອຮຽກຮ້ອງຄືກັບ "ເທາະ" /tʰɔʔ²/ ແຕ່ມີຄວາມໝາຍໜັກແໜ້ນກວ່າ ແລະມີລັກສະນະອ້ອນວອນ ດັ່ງຕົວຢ່າງ (40)-(42). ບາງຄັ້ງ ຜູ້ເວົ້າໃຊ້ໃນການໄຫວ້ວອນ ດັ່ງຕົວຢ່າງ (43).

(40) [ແວດບົດ] ຊາຍກາງຄົນເວົ້າກັບໝໍເຢົາ:

"ຂໍເພິ່ງ<u>ທ້ອນ</u> ຍາໍ່ຫລວງເອີ້ຍ." (ດອກເກດ, 1988:7)

kʰɔ:⁴ pʰəŋ² <u>tʰɔ:n⁷</u> ɲa:³ pʰɔ:² lu:aŋ⁴ ʔə:ɲ⁵

(41) [ແວດບົດ] ແມ່ເຖົ້າເວົ້າກັບຫຼານຊາຍຂີ້ດື້:

"ຢ່າເຮັດຈັ່ງຊັ້ນ<u>ທ້ອນ</u>."

ja:² het² tɕaŋ² san⁵ tʰɔ:n⁵

(42) [ແວດບົດ] ແມ່ເວົ້າກັບລູກຊາຍຜູ້ພວມຄັ້ນໄກ່ນ້ອຍ:

"ຢ່າທໍລະມານມັນ<u>ທ້ອນ</u>."

ja:² tʰɔ:³ la² ma:n³ man³ <u>tʰɔ:n⁵</u>

(43) [ແວດບົດ] ນັກຮຽນຜູ້ໜຶ່ງໄຫວ້ວອນກ່ອນຈະສອບເສັງ:

"ສາທຸ, ຂໍໃຫ້ເສັງໄດ້<u>ທ້ອນ</u>."

sa:⁴ tʰu² kʰɔ:⁴ haɲ⁵ seŋ⁴ daɲ⁵ <u>tʰɔ:n⁵</u>

10. ນ່າ /na:⁷/

ຄຳມອບທ້າຍ "ນ່າ" /na:⁷/ ເຊິ່ງປາກົດຢູ່ໃນປະໂຫຍກບົ່ງການ, ຜູ້ເວົ້ານຳໃຊ້ເວລາຢາກ ກະ ຕຸກຊຸກຍູ້ ຫຼືຮຽກຮ້ອງໃຫ້ຄູ່ສົນທະນາເຮັດສິ່ງໃດສິ່ງໜຶ່ງ.

- **ການກະຕຸກຊຸກຍູ້:**

(44) [ແວດບົດ] ຍິງສາວຊຸກຍູ້ຍິງທີ່ລ້ຽງແກ່ນກັນໄປທ່ຽວນ້ຳຕົກ:

"ໄປ<u>ນ່າ</u>... ເອີ້ຍງາມ ໄປພັກຜ່ອນຢ່ອນອາລົມແດ່..." (ບຸນທະນອງ ຊົມໄຊພົນ, 2000:29)

paɲ <u>na:⁷</u> ʔɯ:aɲ⁵ ŋa:m⁵ paɲ pʰak² pʰɔ:n⁵ jɔ:m² ʔa:¹ lom² dɛ:².

(45) [ແວດບົດ] ຊາຍໜຸ່ມເວົ້າກັບໝູ່:

A. "ເຮີຍ ດວນ! ມານີ້ໄວໆ." (ບຸນເສີນ ແສງມະນີ, 2000: 79-80)

həːɲ² duːan¹ maː³ niː⁵ waɲ³ waɲ³

B. "ມີຫຍັງບໍ ແຫ້?"

miː³ ɲaŋ⁴ bɔː² lɛː⁶

A. "ມານີ້ກ່ອນ<u>ນ່າ</u>, ຂ່າວດີ ແລ້ວຊິບອກ."

maː³ niː⁵ kɔːn⁵ <u>naː⁷</u> kʰaːw² diː¹ lɛːw⁵ siˀ bɔːk⁶

- **ການຂໍຮ້ອງ:**

(46) [ແວດບ໊ດ] ຍິງສາວເວົ້າກັບໝູ່ຜູ້ຕິດອກປີກໄກ່ນຳ:
"ຢ່າຟ້າວເຊົ້ານ່າ ກຳລັງມ່ວນ."
ja:² fa:w⁵ saw³ na:⁷ kam¹ laŋ³ mu:an²

11. ໄປ໋ ~ ປ໊ະ /paj³/~/pa³/

ຄຳມອບທ້າຍ "ໄປ໋-ປ໊ະ" /paj³/~/pa³/ ມາຈາກຄຳກິລິຍາ "ໄປ". ຜູ້ເວົ້າໃຊ້ "ໄປ໋" /paj³/ ເວລາຢາກກະຕຸກຊຸກຍູ້ຄູ່ສົນທະນາໄປ ຫຼືເຮັດຊິໃດສິ່ງໜຶ່ງ ດັ່ງຕົວຢ່າງ:

(47) [ແວດບ໊ດ] ນາງພະຍາບານບອກໃຫ້ນ້ອງສາວເອົາແພປຸງກມາໃຫ້ຄົນເຈັບ:
"ນ້ອງໄປເອົາແພຈຸ່ມນ້ຳມາເປ໋ີໃສ່ໜ້າຜາກລາວ<u>ໄປ໋</u>." (ທິດາຈັນ, 2001: 18)
nɔ:ŋ⁵ paj¹ ʔaw¹ pʰɛ:³ tɕum² nam⁵ ma:³ pə³ saj² na:⁶ pʰa:k³ law³ paj³

(48) [ແວດບ໊ດ] ແມ່ເວົ້າກັບລູກ:
"ເອົາຂີ້ເຫຍື້ອໄປຖິ້ມ<u>ໄປ໋</u>."
ʔaw¹ kʰi:⁶ ɲɯ:a⁶ paj¹ tʰi:m⁶ paj³

(49) [ແວດບ໊ດ] ພໍ່ເວົ້າກັບລູກໆ:
"ໄປນອນ<u>ໄປ໋</u>."
paj¹ nɔ:n³ paj³

- ໂຕຜັນແປ "ປ໊ະ" /pa³/ ຖືກນຳໃຊ້ເພື່ອສະແດງເຖິງການຊັກຊວນ ດັ່ງຕົວຢ່າງ:

(50) [ແວດບ໊ດ] ນ້ອງຊວນເອ້ີຍ:
"ຕິດອກປີກໄກ່<u>ປ໊ະ</u>."
ti:¹ dɔ:k⁶ pi:k⁶ kaj² pa³

(51) [ແວດບ໊ດ] ຍິງສາວຊວນໝູ່:
"ກິນຕຳໝາກຫຸ່ງ<u>ປ໊ະ</u>."
kin¹ tam¹ ma:k⁴ huŋ² pa³

12. ແມ໊ะ ~ ແມ໊ /mɛ³/~/mɛ:⁷/

ຄຳມອບທ້າຍ "ແມ໊ะ-ແມ໊" /mɛ³/~/mɛ:⁷/ ປາກົດຢູ່ທ້າຍປະໂຫຍກບົ່ງການເພື່ອຊີ້ບອກເຖິງການສັ່ງ, ສະເໜີແນະ, ກະຕຸກຊຸກຍູ້, ອະນຸຍາດ ແລະເຊີນຊວນ. ບາງຄັ້ງຄຳມອບທ້າຍ "ຕິ-ຕ໊ີ" /ti³/~/ti:⁷/ ສາມາດແທນໃຫ້ "ແມ໊ะ-ແມ໊" /mɛ³/~/mɛ:⁷/, ແຕ່ມີລັກສະນະອ່ອນກວ່າ.

- **ການສັ່ງ:** ໂຕຜັນແປສຽງສັ້ນ "ແມ໊ะ" /mɛ³/, ຜູ້ເວົ້າໃຊ້ບອກຄູ່ສົນທະນາໃຫ້ເຮັດສິ່ງໃດສິ່ງໜຶ່ງ ດັ່ງຕົວຢ່າງ (52). ຖ້າຄູ່ສົນທະນາບໍ່ຕອບສະໜອງຕາມຄຳສັ່ງ, ຜູ້ເວົ້າກໍຈະໃຊ້ "ແມ໊"

/mɛ:^{7}/ ສຽງຍາວ ສຳລັບການສັ່ງເທື່ອທີສອງເພື່ອສະແດງເຖິງຄວາມບໍ່ພໍໃຈຂອງຜູ້ເວົ້າ ດັ່ງຕົວຢ່າງ (53). ນອກຈາກນັ້ນ, "ແມ້" ສຽງຍາວຍັງໃຊ້ເປັນການສັ່ງຫ້າມ ດັ່ງຕົວຢ່າງ (54).

(52) [ແວດບົດ] ແມ່ບອກລູກສາວອັດປ່ອງຢັ້ມ:
"ຝົນຕົກແລ້ວ, ອັດປ່ອງຢັ້ມ<u>ແມ</u>ະ."
fon^{4} tok^{3} lɛ:w^{5} ʔat^{3} pɔ:ŋ^{2} ji:am^{1} <u>mɛ^{3}</u>

(53) [ແວດບົດ] ແມ່ບອກລູກສາວລ້າງມືກ່ອນກິນເຂົ້າ, ແຕ່ຜູ້ເປັນລູກໄປຫຼິ້ນເສີຍ ແມ່ຈຶ່ງບອກຕື່ມອີກດ້ວຍນ້ຳສຽງໃຈຮ້າຍ:
"ໄປລ້າງມື<u>ແມ້</u>, ຄືບອກຍາກແທ້."
paj^{1} la:ŋ^{5} mɯ:^{3} <u>mɛ:^{7}</u>, kʰɯ:^{3} bɔ:k^{6} ɲa:k^{3} tʰɛ:^{5}

(54) [ແວດບົດ] ພໍ່ຕູ້ຫ້າມເດັກນ້ອຍສົ່ງສຽງດັງ:
"ຢ່າແຊວຫລາຍ<u>ແມ້</u>."
ja:^{2} sɛ:w^{3} la:j^{5} <u>mɛ:^{7}</u>

- **ການສະເໜີແນະ:** ຄຳມອບທ້າຍ "ແມ້" /mɛ:^{7}/, ຜູ້ເວົ້າໃຊ້ເພື່ອແນະນຳຄູ່ສົນທະນາໃຫ້ເຮັດສິ່ງໃດສິ່ງໜຶ່ງ, ດັ່ງຕົວຢ່າງ:

(55) [ແວດບົດ] ຍິງສາວບອກໝູ່ເອົານ້ຳຕານໃສ່ຕຳໝາກຫຸ່ງຕື່ມ:
"ເອົານ້ຳຕານໃສ່ຕື່ມອີກ<u>ແມ້</u> ມັນຈຶ່ງແຊບ."
ʔaw^{1} nam^{5} ta:n^{1} saj^{3} tɯ:m^{2} ʔi:k^{3} <u>mɛ:^{7}</u> man^{3} tɕɯŋ^{2} sɛ:p^{5}

(56) [ແວດບົດ] ຄຳໄດ້ແນະນຳໝູ່ໃຫ້ໄປຫາອາຈານ ຖ້າຫາກລາວບໍ່ເຂົ້າໃຈບົດຮຽນ:
"ຄັນໂຕບໍ່ເຂົ້າໃຈ ໄປຫາອາຈານ<u>ແມ້</u>."
kʰan^{3} to:^{1} bɔ:^{2} kʰaw^{6} tɕaj^{1} paj^{1} ha:^{4} ʔa:^{1} tɕa:n^{2} <u>mɛ:^{7}</u>

- **ການກະຕຸກຊຸກຍູ້:** "ແມ້" ສຽງຍາວ, ຜູ້ເວົ້າໃຊ້ເວລາຕ້ອງການກະຕຸກຊຸກຍູ້ຄູ່ສົນທະນາທີ່ຍັງລັງເລໃນການເຮັດສິ່ງໃດສິ່ງໜຶ່ງ, ດັ່ງຕົວຢ່າງ:

(57) [ແວດບົດ] ແມ່ຄ້າຊຸກຍູ້ໃຫ້ລູກຄ້າຊື້ສິນຄ້າຂອງຕົນ:
"ເອົາ<u>ແມ້</u>, ສິບພັນກີບໜຶ່ງ."
ʔaw^{1} <u>mɛ:^{5}</u>, sip^{3} pʰan^{3} ki:p^{6} nɯŋ^{2}

(58) [ແວດບົດ] ໝູ່ຂອງພໍ່ຊຸກຍູ້ໃຫ້ນາງນ້ອຍກິນກະແລັມທີ່ລາວຊື້ໃຫ້:
"ກິນ<u>ແມ້</u>, ບໍ່ຕ້ອງອາຍດອກ."
kin^{1} <u>mɛ:^{5}</u> bɔ:^{2} tɔ:ŋ^{5} ʔa:j^{1} dɔ:k^{6}

- **ການອະນຸຍາດ:** "ແມ້" ສຽງຍາວ, ໃຊ້ເວລາຜູ້ເວົ້າອະນຸຍາດໃຫ້ຄູ່ສົນທະນາເຮັດສິ່ງໃດສິ່ງໜຶ່ງ ດັ່ງຕົວຢ່າງ:

(59) [ແວດບົດ] ຍິງສາວຖາມແມ່ຄ້າຂາຍເຄື່ອງກິນຢູ່ຕະຫຼາດ:

A. "ຂໍຊີມເບິ່ງໄດ້ບໍ່?"
kʰɔ:⁴ si:m³ bəŋ² daj⁵ bɔ:²

B. "ໄດ້, ຊີມ<u>ແມ້</u>."
daj⁵ si:m³ <u>mɛ:⁷</u>

- **ການເຊີນຊວນ:** "ແມ້" ສຽງຍາວ, ໃຊ້ເວລາຜູ້ເວົ້າເຊີນຊວນຄູ່ສົນທະນາເຮັດສິ່ງໃດສິ່ງໜຶ່ງ ດັ່ງຕົວຢ່າງ:

(60) [ແວດບົດ] ນັກຮຽນຍິງກ່າວກັບຄູສອນຂອງຕົນທີ່ມາຢາມ:
"ອ້າຍຄູ ເຊີນດື່ມນ້ຳກ່ອນ<u>ແມ້</u>." (ບຸນເສີນ ແສງມະນີ, 2000:152)
ʔa:j⁵ kʰu:³ sə:ŋ³ dɯ:ŋ² nam⁵ kɔ:ŋ² <u>mɛ:⁷</u>

13. ເຢີ ~ ເຢີ /ɲə:⁷/~/jə:⁷/

"ເຢີ-ເຢີ" /jə:⁷/~/ɲə:⁷/ ເປັນຄຳນອບທ້າຍທີ່ຜູ້ເຖົ້າມັກໃຊ້ອອກຄຳສັ່ງທີ່ອ່ອນນອນກັບເດັກນ້ອຍ (61), ຫຼືເວລາທີ່ຜູ້ກ່ອມລູກນ້ອຍ (62). ໃນພິທີບາສີສູ່ຂວັນ ໝໍພອນກໍມັກໃຊ້ເພື່ອເອີ້ນຂວັນຂອງແຂກທີ່ເຂົ້າຮ່ວມໃນພິທີໃຫ້ມາຢູ່ກັບເນື້ອກັບຄີງ (63).

(61) [ແວດບົດ] ພໍ່ຕູ້ກ່າວກັບຫຼານ:
"ຟັງ<u>ເຢີ</u>, ພໍ່ຕູ້ຊິເລົ່ານິທານໃຫ້ຟັງ."
faŋ³ <u>ɲə:⁷</u> pʰɔ:² tu:⁵ si² law² ni² tʰa:ŋ³ haj⁵ faŋ³

(62) [ແວດບົດ] ແມ່ກ່ອມລູກນອນ:
"ນອນ<u>ເຢີ</u> ແພງແມ່ເອີ້ຍ."
nɔ:ŋ³ <u>jə:⁷</u> pʰɛ:ŋ³ mɛ:² ʔə:j⁵

(63) [ແວດບົດ] ໝໍພອນກ່າວໃນລະຫວ່າງພິທີບາສີ:
"ມາ<u>ເຢີ</u> ຂວັນເອີ້ຍ."
ma:³ <u>jə:⁷</u> kʰuan⁴ ʔə:j⁵

14. ເລີຍ /lə:j³/

ຄຳນອບທ້າຍ "ເລີຍ" /lə:j³/ ປາກົດຢູ່ປະໂຫຍກບົ່ງການເພື່ອສະແດງເຖິງການໃຫ້ກຳລັງໃຈ ຫຼືກະຕຸກຊຸກຍູ້ຄູ່ສົນທະນາໃຫ້ເຮັດສິ່ງໃດສິ່ງໜຶ່ງ.

(64) [ແວດບົດ] ແມ່ເວົ້າກັບລູກໆຫຼັງຈາກທີ່ລໍຖ້າພໍ່ມາໄດ້ດົນເຕັບແລ້ວ:
"ບໍ່ຕ້ອງຖ້າດອກ, ກິນ<u>ເລີຍ</u>."
bɔ:² tɔ:ŋ⁵ tʰa:⁶ dɔ:k⁶ kin¹ <u>lə:j³</u>

(65) [ແວດບົດ] ແມ່ເຈົ້າເຮືອນເວົ້າກັບຜູ້ຂາຍເຂົ້າທີ່ແບກຖົງເຂົ້າເທິງບ່າ:
"ເອົາເຂົ້າມາໃນໜີ້<u>ເລີຍ</u>."
ʔaw¹ kʰaw⁶ ma:³ naj³ ni:⁶ <u>lə:j³</u>

15. ໂລດ /lo:t⁵/

ຄຳລົງທ້າ "ໂລດ" ປາກົດຢູ່ໃນປະໂຫຍກບົ່ງການ ແລະນຳໃຊ້ເພື່ອສະແດງການໃຫ້ກຳ ລັງ ໃຈ ແລະກະຕຸກຊຸກຍູ້ໃຫ້ຄູ່ສົນທະນາເຮັດສິ່ງໃດສິ່ງໜຶ່ງ ດັ່ງຕົວຢ່າງ(66)-(67).ຜູ້ເວົ້າໃຊ້ "ໂລດ" ເພື່ອອະນຸຍາດຄູ່ສົນທະນາເຮັດໃນສິ່ງທີ່ເຂົາຂໍຮ້ອງ(68)-(69)ເຊິ່ງມີຄວາມໜັກແໜ້ນກວ່າ"ເລີຍ"

(66) [ແວດບົດ] ເມື່ອເຫັນພໍ່ຄ້າຍຄືມີຫຍັງຢູ່ໃນໃຈ, ຊາຍໜຸ່ມຈຶ່ງເວົ້າກັບເພິ່ນ:
"ມີຫຍັງກໍເວົ້າ<u>ໂລດ</u>ພໍ່... ເວົ້າ<u>ໂລດ</u>." (Bounseun 2000: 30)
mi:³ ɲaŋ⁴ kɔ:¹ waw⁵ <u>lo:t⁵</u> pʰɔ:² waw⁵ <u>lo:t⁵</u>

(67) [ແວດບົດ] ຊາຍໜຸ່ມເວົ້າກັບນາງນ້ອຍ:
"ບໍ່ຕ້ອງອາຍດອກ. ກິນ<u>ໂລດ</u>."
bɔ:² tɔ:ŋ⁵ ʔa:j³ dɔ:k⁶ kin¹ <u>lo:t⁵</u>

(68) [ແວດບົດ] ແມ່ເວົ້າກັບລູກ:
"ຄັນລູກມັກ ກໍເອົາ<u>ໂລດ</u>."
kʰan³ lu:k⁵ mak³ kɔ:¹ ʔaw⁵ <u>lo:t⁵</u>

(69) [ແວດບົດ] ຊາຍແປກໜ້າຖາມຍິງຊະລາ:

A. "ເຂົ້າໄປໄດ້ບໍ່?"
kʰaw⁶ paj¹ daj⁵ bɔ:²
enter go able FP
'Can I go in?'

B. "ເຂົ້າມາ<u>ໂລດ</u>."
kʰaw⁶ ma:³ <u>lo:t⁵</u>
enter come FP
'Please come in.'

ສະຫຼຸບ:

ຄຳມອບທ້າຍທີ່ປາກົດຢູ່ທ້າຍປະໂຫຍກບົ່ງການ ຫຼືຄຳມອບທ້າຍບົ່ງການ ມີທັງໝົດ 15 ຄຳ ເຊິ່ງສາມາດແບ່ງອອກເປັນ 11 ປະເພດໂດຍອີງຕາມຄວາມໝາຍຂອງຄຳມອບທ້າຍທີ່ປາກົດຢູ່ໃນປະໂຫຍກເປັນເກນ:

1) ການສັ່ງ ປະກອບມີ ດຸ໊, ແດ່, ເດີ-ເດີ້, ໄປ໊, ແມະ-ແມ້ ແລະ ເຍີ-ເຢີ
2) ການຂໍຮ້ອງ ປະກອບມີ ສາ, ດູ໋, ແດ່, ເທາະ, ທ້ອນ, ນ່າ ແລະ ເຍີ-ເຢີ
3) ການຊັກຊວນ ປະກອບມີ ເທາະ, ນ່າ ແລະ ປ໊ະ.
4) ການເຊີນຊວນ ປະກອບມີ ເດີ-ເດີ້, ຕິ ແລະ ແມະ-ແມ້.
5) ການຕັກເຕືອນ ປະກອບມີ ເດີ-ເດີ້ ແລະ ໄດ໋.
6) ການອະນຸຍາດ ປະກອບມີ ຊະ, ແມະ-ແມ້ ແລະ ໂລດ.
7) ການກະຕຸກຊຸກຍູ້ ປະກອບມີ ໄດ໋, ຕິ້, ນ່າ, ແມະ-ແມ້, ເລີຍ ແລະ ໂລດ.
8) ການໃຫ້ກຳລັງໃຈ ປະກອບມີ ເດີ-ເດີ້, ເລີຍ ແລະ ໂລດ.
9) ການສະເໜີແນະ ປະກອບມີ ຊະ, ເດີ-ເດີ້, ຕິ້ ແລະ ແມະ-ແມ້.
10) ການອ້ອນວອນ ປະກອບມີ ທ້ອນ.
11) ການອວຍພອນ ປະກອບມີ ເຖີດ ຫຼື ເຖີ້ນ.

ສັງເກດເຫັນໄດ້ວ່າ ໃນຈຳນວນຄຳມອບທ້າຍບົ່ງການເຫຼົ່ານີ້, ມີບາງຄຳກໍສາມາດໃຊ້ເຂົ້າໃນຫຼາຍປະເພດ ແລະບາງຄຳກໍໃຊ້ໄດ້ພຽງແຕ່ປະເພດດຽວຂອງປະໂຫຍກບົ່ງການ.

ເອກະສານອ້າງອີງ

ห้ามจำหน่าย

ບົວລີ ປະພາພັນ ແລະຄະນະ. 2000. ໄວຍາກອນລາວປັດຈຸບັນ, ພາກ 3 ວາກະຍະສຳພັນ. ວຽງຈັນ: ກະຊວງສຶກສາ.

ບຸນເສີນ ແສງມະນີ. 2000. ໂຮມເລື່ອງສັ້ນ: ວັນທີ່ລໍຄອຍ. ວຽງຈັນ: ໂຮງພິມສຶກສາ.

ບຸນທະນອງ ຊົມໄຊຜົນ. 2000. ມະນຸດເອີຍ! ຂ້າຜູ້ນ້ອຍຂໍທາຍໃນນຳແດ່. ວຽງຈັນ: ວາລະສານທ່ອງທ່ຽວເມືອງລາວ.

ບຸນທະວີ ຈຳປາທອງ. 2002. ແສນເສຍດາຍ. ວາລະສານວັນນະສິນ, ເດືອນກໍລະກົດ. ໜ້າ 22.

ຈ. ທ່ຽງເທບວົງສາ. 1997. ແຮງຮັກ. ວຽງຈັນ: ໂຮງພິມວຽງຈັນ.

ດອກເກດ. 1988. ຫົວໃຈປາຖະໜາ. ວາລະສານວັນນະສິນ, ເດືອນມີນາ. ໜ້າ 13.

ດວງຈຳປາ. 1989. ແລງນີ້ມີແຂກສຳຄັນ. ວາລະສານວັນນະສິນ, ເດືອນມິຖຸນາ. ໜ້າ 15.

ສ. ເຄື່ອງເທພະລິດ. 2000. ຝັນສະຫຼາຍ. ວາລະສານວັນນະສິນ, ເດືອນກໍລະກົດ. ໜ້າ 15.

ທິດາຈັນ. 2001. ເດືອນລັບແລ. ວາລະສານວັນນະສິນ. ເດືອນມີນາ. ໜ້າ 18.

ພາສາໄທ

ເຮືองเดด ปันเยื่อมขัด. 2541. พาสาสาพาสาไท. สาลายา:มะหาวิทะยาไลมะหิดิน.

ພາສາອັງກິດ

Sengfa Holanouphab. 2003. Final Particles in Vientiane Lao. M.A Thesis, Payap University.

Outhine Bounyavong.1999. Mother's beloved stories from Laos. Chieng Mai: Silkworm Books.

ຄຳຮຽກຂານ ໃນພາສາລາວປັດຈຸບັນ

ໂດຍ ສີພອນ ສຸນັນທາ

ບົດຄັດຫຍໍ້:

ຄຳຮຽກຂານເປັນສ່ວນປະກອບແຮກຂອງການເລີ່ມບົດສົນທະນາຂອງຜູ້ເວົ້າກັບຜູ້ຟັງ ແລະຄຳຮຽກຂານກໍປາກົດມີຢູ່ໃນພາສາຂອງມວນມະນຸດທຸກຊາດ; ດ້ວຍປະການດັ່ງກ່າວບົດຄວາມນີ້ຈຶ່ງມີຈຸດປະສົງເພື່ອສຶກສາສະເພາະບັນຫາສ່ວນປະກອບຮູບແບບ ແລະປັດໄຈການເລືອກໃຊ້ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນ ເຊິ່ງຜູ້ວິໄຈໄດ້ຮວບຮວມຂໍ້ມູນຈາກເລື່ອງສັ້ນຈຳນວນ 7 ເລື່ອງ, ນະວະນິຍາຍ ຈຳນວນ 3 ເລື່ອງ, ລະຄອນວິທະຍຸຈຳນວນ 5 ເລື່ອງ, ລະຄອນໂທລະພາບຈຳນວນ 5 ເລື່ອງ ແລະຮູບເງົາທີ່ຜະລິດເປັນແຜ່ນວີຊີດີ(VCD)ຈຳນວນ 2 ເລື່ອງທີ່ແຕ່ງ ແລະຜະລິດຂຶ້ນຢູ່ທີ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃນປີ 2005, ໂດຍຮວບຮວມຂໍ້ມູນໄດ້ທັງໝົດ ຈຳນວນ 431 ຖ້ອຍຄຳ ແລ້ວນຳມາວິເຄາະຂໍ້ມູນທາງຄຸນລັກສະນະ ແລະນຳສະເໜີຜົນການວິໄຈແບບພັນລະນາວິເຄາະ.

ຜົນການຄົ້ນຄວ້າພົບວ່າສ່ວນປະກອບຂອງຄຳຮຽກຂານໃນພາສາລາວສະໄໝປັດຈຸບັນຈຳແນກເປັນ 9 ປະເພດ ໄດ້ແກ່ຄຳຮຽກຊື່, ຍາດ, ຍົດ, ອາຊີບ, ຕຳແໜ່ງ, ແທນນາມ(ສັບພະນາມ), ຄຳນຳໜ້າບອກເພດ, ອະລິສະແດງຄວາມຮູ້ສຶກ ແລະຄຳລົງທ້າຍ. ສ່ວນຮູບແບບຂອງຄຳຮຽກຂານຈຳແນກເປັນ 26 ປະເພດ ແລະແບ່ງເປັນ 3 ໝວດຄື:

ໝວດທີໜຶ່ງ: ແມ່ນໝວດຄຳຮຽກຂານທີ່ມີສ່ວນປະກອບດ່ຽວລວມມີ 8 ປະເພດ ໄດ້ແກ່ຄຳຮຽກຊື່, ຍາດ, ຍົດ, ອາຊີບ, ຕຳແໜ່ງ, ແທນນາມ(ສັບພະນາມ), ຄຳນຳໜ້າບອກເພດ, ອະລິສະແດງຄວາມຮູ້ສຶກ ແລະຄຳລົງທ້າຍ.

ໝວດທີສອງ: ແມ່ນໝວດຄຳຮຽກຂານທີ່ມີສ່ວນປະກອບ 2 ສ່ວນລວມມີ 16 ປະເພດ ໄດ້ແກ່ຄຳຮຽກຊື່+ອະລິສະແດງຄວາມຮູ້ສຶກ, ຍາດ+ຊື່, ຍາດ+ຍົດ, ຍາດ+ອາຊີບ, ຍາດ+ສັບພະນາມ, ຍົດ+ຍາດ, ອາຊີບ+ຊື່, ຕຳແໜ່ງ+ຊື່, ສັບພະນາມ+ຊື່, ສັບພະນາມ+ຍົດ, ສັບພະນາມ+ອາຊີບ, ສັບພະນາມ+ຕຳແໜ່ງ, ສັບພະນາມ+ອະລິສະແດງຄວາມຮູ້ສຶກ, ຄຳນຳໜ້າບອກເພດ+ຊື່, ຄຳນຳໜ້າ+ຍາດ, ຄຳນຳໜ້າບອກເພດ+ອະລິສະແດງຄວາມຮູ້ສຶກ.

ໝວດທີສາມ: ແມ່ນໝວດຄຳຮຽກຂານທີ່ມີສ່ວນປະກອບ 3 ສ່ວນລວມມີ 2 ປະເພດ ໄດ້ແກ່ຄຳຮຽກຍາດ+ອາຊີບ+ຊື່ ແລະຄຳຮຽກຍາດ+ຊື່+ອະລິສະແດງຄວາມຮູ້ສຶກ.

ສຳລັບປັດໄຈການເລືອກໃຊ້ຄຳຮຽກຂານໃນພາສາລາວສາມາດຈຳແນກເປັນ 6 ປັດໄຈຄື: ສານ ແລະບັນຍາກາດ, ຜູ້ມີສ່ວນຮ່ວມ, ວັດຖຸປະສົງໃນການຮຽກຂານ, ນ້ຳສຽງ, ພາສາທີ່ໃຊ້,

ບັນທັດຖານໃນການປະຕິສຳພັນ. ຜ່ານການສຶກສາແຕ່ລະຮູບແບບຂອງຄຳຮຽກຂານນັ້ນພົບວ່າຂຶ້ນຢູ່ກັບຜູ້ຮຽກຈະເລືອກໃຫ້ນ້ຳໜັກຕໍ່ແຕ່ລະປັດໄຈດັ່ງກ່າວນັ້ນຫລຸດລັ່ນກັນໄປຕາມສະຖານະການຫຼືບໍລິບົດທາງສັງຄົມ.

TITLE: The Use of Address Terms in Contemporary Lao

AUTHOR: Siphone Sounantha

Abstract

In regards to a unit of the initiation in conversation between a sender and a receiver, the address terms appear in any languages of every nation. This article aimed to study specific features of units, styles and factors related to the address term preference in the contemporary Lao language. The data collection in this study came by 7 short stories, 3 novels, 5 voiced dramas from the radio, 5 dramas on TV, and 2 movies. All of those were composed and produced in People's Democratic Republic of Laos, in 2006. There are totally 431 address terms collected from the data which were analyzed through qualitative research methodology. The research finding was presented by analytical narration.

The findings revealed that the address terms in the contemporary Lao language were divided into 9 units: terms of name, relative, rank status, occupation, position, pronoun, gender initial, expressive phrase, and final particle. There were 26 styles of address terms, which were divided into 3 categories. 1) 8 types of single component of the terms: name, relative, rank status, occupation, position, pronoun, and gender initial and expressive phrase. 2) 16 types of double component of the terms: name + expressive phrase, relative + name, relative + rank status, relative + occupation, relative + pronoun, rank status + relative, occupation + name, position + name, pronoun + name, pronoun + rank status, pronoun + occupation, pronoun + position, pronoun + expressive phrase, gender initial + name, initial + relative, and gender initial + expressive phrase. 3) 2 types of three-component of the terms: relative + occupation + name and relative + name + expressive phrase. There were 6 factors related to the address term preference in Lao language: scene and atmosphere, participants, purpose of the addressing, tone, language used, and norm of interaction. It was demonstrated that each style of the address terms depended on the sender. He/ She selectively weighed what terms to use according to each factor as mentioned above. The terms were declined along with the situation or social contexts.

ບົດສະເໜີ

ເຖິງວ່າຈະຢູ່ໃນສະຖານນະການຫຼືຈະຢູ່ໃນບໍລິບົດໃດໆກໍຕາມ, ກ່ອນຜູ້ໃດຜູ້ໜຶ່ງຈະເວົ້າຈາສົນທະນາໂອ້ລົມນຳກັນກັບຜູ້ອື່ນນັ້ນຜູ້ເວົ້າ ຫຼືຜູ້(ຮຽກ) ເອີ້ນມັກສະແດງສີໜ້າ, ທ່າທາງ, ນ້ຳສຽງ ພ້ອມໆກັບເອີ້ນຜູ້ຟັງດ້ວຍຄຳຮຽກຂານໃນຮູບແບບໃດຮູບແບບໜຶ່ງ ເພື່ອໃຫ້ຜູ້ຟັງໄດ້ຮັບຮູ້ຈຸດປະສົງທີ່ຕົນເອງຈະເວົ້າຕໍ່ໄປ. ດັ່ງນັ້ນ, ຄຳຮຽກຂານຈຶ່ງກາຍເປັນສ່ວນປະກອບທີ່ສຳຄັນສ່ວນໜຶ່ງຂອງຜູ້ເອີ້ນ ແລະຜູ້ເອີ້ນກໍເປັນປັດໄຈໜຶ່ງທີ່ສົ່ງຜົນກະທົບຕໍ່ການໃຊ້ຄຳຮຽກຂານເຊັ່ນດຽວກັນຕົວຢ່າງວ່າກ່ອນຜູ້ເອີ້ນຈະເອີ້ນຜູ້ຟັງຜູ້ເອີ້ນຈະຕ້ອງໄດ້ເລືອກຄຳຮຽກຂານໃຫ້ເໝາະສົມກັບສະຖານະການ. ດ້ວຍເຫດນັ້ນການເລືອກໃຊ້ຄຳຮຽກຂານໃຫ້ຖືກຕ້ອງຕາມສະຖານະການຫຼືບໍລິບົດຕ່າງໆຈຶ່ງກາຍເປັນບັນຫາໜຶ່ງທີ່ຄວນສຶກສາຄືດັ່ງການໃຊ້ຄຳຮຽກຂານໃນພາສາລາວກໍຄືກັນກັບການໃຊ້ຄຳຮຽກຂານໃນພາສາອື່ນໆເຊັ່ນວ່າກ່ອນຈະຮຽກເອີ້ນຄົນພາຍໃນຄອບຄົວດຽວກັນ, ຍາດພີ່ນ້ອງ, ໝູ່ເພື່ອນຫຼືຄົນອື່ນໆກໍຕາມຜູ້ເອີ້ນຈະຕ້ອງເລືອກຄຳຫຼືອະລິທີ່ເປັນຄຳຮຽກຂານເພື່ອເອີ້ນຜູ້ຟັງໃຫ້ຖືກຕ້ອງຕາມກາລະເທສະ, ຈຸດປະສົງຂອງການເອີ້ນ, ນ້ຳສຽງ, ພາສາທີ່ໃຊ້ເປັນຕົ້ນ. ດັ່ງນັ້ນ, ບັນຫາການໃຊ້ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນຈຶ່ງເປັນເລື່ອງສົນໃຈສຶກສາ ໂດຍສະເພາະແມ່ນສ່ວນປະກອບ, ຮູບແບບ ແລະປັດໄຈໃນການເລືອກໃຊ້ຄຳຮຽກຂານເປັນຕົ້ນ.

ວິທີການສຶກສາ

ຜູ້ສຶກສາໄດ້ກຳນົດຂອບເຂດການເກັບລວບລວມຂໍ້ມູນຄຳຮຽກຂານໃນພາສາລາວຈາກເລື່ອງສັ້ນທີ່ລົງພິມໃນໜັງສືພິມວັນນະສິນຈຳນວນ 2 ເລື່ອງ; ບົດເລື່ອງສັ້ນຈາກປຶ້ມລວມບົດປະພັນເລື່ອງສັ້ນ 1 ເຫຼັ້ມມີ 5 ເລື່ອງ; ນະວະນິຍາຍຈຳນວນ 3 ເລື່ອງ; ບົດລະຄອນວິທະຍຸຈຳນວນ 5 ເລື່ອງ, ລະຄອນໂທລະພາບຈຳນວນ 5 ເລື່ອງ, ຮູບເງົາທີ່ຜະລິດເປັນ VCD ຈຳນວນ 2 ເລື່ອງ, ບົດເລື່ອງທຸກເລື່ອງທີ່ນຳເອົາມາສະເໜີຂ້າງເທິງນີ້ເປັນບົດເລື່ອງທີ່ພິມ ແລະຜະລິດອອກໃນປີ 2005 ແລະກໍເປັນບົດເລື່ອງທີ່ສະແດງໃຫ້ເຫັນການໃຊ້ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນຫຼາຍສົມຄວນ.

ການກຳນົດແຫຼ່ງຂໍ້ມູນຄືດັ່ງກ່າວກໍເພາະວ່າເລື່ອງທຸກຢ່າງມີຄວາມເປັນປັດຈຸບັນຮ່ວມສະໄໝ ແລະເຫັນວ່າມີການໃຊ້ຄຳຮຽກຂານໃນຫຼາຍບໍລິບົດທີ່ແຕກຕ່າງກັນ. ຫຼັງຈາກເກັບລວບລວມຂໍ້ມູນແລ້ວຜູ້ສຶກສາກໍໄດ້ຈັດສ່ວນປະກອບຂອງຄຳຮຽກຂານເປັນແຕ່ລະປະເພດ ແລະຈັດຮູບແບບຂອງມັນເປັນໝວດພ້ອມກັບແຍກເປັນປະເພດທີ່ພົບຈາກແຫຼ່ງຂໍ້ມູນຕາມຄວາມຈິງ ແລ້ວນຳເອົາຄຳຮຽກຂານແຕ່ລະປະເພດນັ້ນໄປວິເຄາະຕາມປັດໄຈການເລືອກຄຳຮຽກຂານຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງເປັນແຕ່ລະກໍລະນີໄປໂດຍການນຳສະເໜີຜົນຂອງການສຶກສາແບບພັນລະນາວິເຄາະ.

ຂອບແນວຄິດໃນການສຶກສາ

ການໃຊ້ຄຳຮຽກຂານນັ້ນ ຂຶ້ນຢູ່ກັບຜູ້ເອີ້ນເປັນຜູ້ເລືອກວ່າເອົາຄຳແບບໃດເພື່ອເອີ້ນຜູ້ຟັງຈຶ່ງເໝາະສົມກັບກາລະເທສະ,ຄວາມປະສົງ ຫຼືເຈຕະນາລົມຂອງຕົນ;ຄືດັ່ງແນວຄິດຂອງ“ຮາມ” Hymes

(1974) ທີ່ຂຽນອ້າງລົງໃນປຶ້ມ Ronald Wardhaugh(1986 P.238-242) ທີ່ໃຊ້ຄຳຫຍໍ້ວ່າ: "SPEAKING" ເປັນຕົວອັກສອນຫຍໍ້ສຳລັບປັດໄຈການເລືອກໃຊ້ຄຳຮຽກຂານ ແລະຕົວອັກສອນຫຍໍ້ແຕ່ລະຕົວໄດ້ກຳນົດຄວາມໝາຍເອົາໄວ້ດັ່ງນີ້:

1) ສາກແລະບັນຍາກາດ(S): ສາກໝາຍເຖິງເວລາແລະສະຖານທີ່ເປັນບໍລິບົດທາງກາຍະພາບ ແລະເປັນຮູປະທຳທີ່ການໃຊ້ພາສານັ້ນເກີດຂຶ້ນ. ສ່ວນບັນຍາກາດຂອງສາກໝາຍເຖິງສະພາບທາງຈິດຕະວິທະຍາທີ່ເປັນນາມມະທຳຫຼືການໃຫ້ຄວາມໝາຍທາງວັດທະນະທຳຂອງໂອກາດນັ້ນໆ.

2) ຜູ້ມີສ່ວນຮ່ວມ(P): ໝາຍເຖິງຄວາມສຳພັນແບບຕ່າງໆຂອງຜູ້ເອີ້ນກັບຜູ້ຖືກເອີ້ນຫຼືຜູ້ສົ່ງສານກັບຜູ້ຮັບສານ.

3) ວັດຖຸປະສົງໃນການຮຽກເອີ້ນ(E): ໝາຍເຖິງຜົນຮັບທີ່ຄາດຫວັງ ແລະເນັ້ນໜັກໄດ້ຕາມປະເພນີປະຕິບັດໃນການແລກປ່ຽນສື່ສານລວມເຖິງເປົ້າໝາຍຂອງຜູ້ຮ່ວມທີ່ຕ້ອງການເຮັດໃຫ້ປະສົບຜົນສຳເລັດໃນໂອກາດນັ້ນໆ.

4) ລຳດັບຂອງການກະທຳ(A): ໝາຍເຖິງຮູບພາສາ ແລະເນື້ອໃນຂອງບັນຫາທີ່ເວົ້າອອກມາແທ້ໆ ນັ້ນກໍຄືຖ້ອຍຄຳທີ່ແທ້ຈິງ; ວິທີການໃຊ້ ແລະຄວາມສຳພັນລະຫວ່າງບັນຫາທີ່ເວົ້າກັບເລື່ອງທີ່ກ່ຽວຂ້ອງແທ້ນັ້ນ.

5) ນ້ຳສຽງ(K): ໝາຍເຖິງນ້ຳສຽງ, ອາລົມ, ທ່າທາງຫຼືຈິດວິນຍານທີ່ຜູ້ສົ່ງສານນັ້ນຕ້ອງການສື່ອອກມາເຊັ່ນ: ມ່ວນຊື່ນ, ເຄັ່ງຄຽດ, ເຍາະເຍີ້ຍ, ສຽດສີ, ເປັນທາງການເກີນໄປ ແລະອື່ນໆ.

6) ພາສາທີ່ໃຊ້(I): ໝາຍເຖິງຕົວເລືອກຂອງຊ່ອງທາງການສື່ສານນັ້ນຄືພາສາເວົ້າ, ພາສາຂຽນ, ສື່ທາງໄກ ແລະຮູບການໃນການໃຊ້ແທ້ໆເຊັ່ນ: ພາສາຖິ່ນ, ລະຫັດຫຼືພາສາທາງລັດຖະການທີ່ຖືກເລືອກນຳມາໃຊ້.

7) ບັນທັດຖານໃນການປະຕິສຳພັນ(N): ໝາຍເຖິງພຶດຕິກຳຈຳເພາະເຈາะจົງ ແລະຄວາມເໝາะสົມທີ່ເຊື່ອມໂຍງເຂົ້າກັບການເວົ້າ ແລະທີ່ເບິ່ງດ້ວຍຜູ້ອື່ນທີ່ບໍ່ໄດ້ຮ່ວມໃຊ້ໃນການສື່ສານນັ້ນກໍຄືສຽງດັງ, ຄວາມງຽບ, ການจ້ອງມອງເບິ່ງໜ້າຕາ ແລະອື່ນໆ.

8) ເລື່ອງທີ່ເວົ້າ(G): ໝາຍເຖິງປະເພດຂອງຖ້ອຍຄຳທີ່ບົ່ງບອກຊະນິດໄດ້ຕົວຢ່າງເຊັ່ນ: ບົດກະວີ, ສຸພາສິດ, ປິດສະໜາຄຳທວາຍ, ບົດສວດມົນ, ບົດສວດອ້ອນວອນ, ການບັນຍາຍ ແລະບົດບັນນາທິການເຫຼົ່ານີ້ມີວິທີສະเพาะที่ต่างจากการใช้ถ้อยคำแบบเป็นกันเอง.

ตามอົງປะกอบของปัดไจทัง 8 ย่างที่ธาม(Hymes) ได้กำนิดเอาไว้ดั่งที่ก่าอมาข้างเทิงนั้นเห็นอ่าปัดไจที 4 ที่เป็นลำดับของการกะทำ (A) นั้นกอืคำธฺกาขานที่ใช้แท้ๆ. ตัวอย่างจากข้อมูนเห็นอ่าผู้เอิ้นเลือกเอาคำธฺกาชื่ใช้เอิ้นผู้ฟังเช่น: ภี, แก้ว, จ่อย, ดำ, แดง... ผู้เอิ้นเลือกเอาคำธฺกายาดใช้เอิ้นผู้ฟังเช่น: พ่ໍ, แม่, ลุง, ป้า, เถ้า... และปัดไจที 8 คือ เลื่องที่เว้า(G) เซิ่งหมายเถิงเลื่องของการใช้ถ้อยคำแบบอื่นเช่น: นิทาน, เลื่องสั้น, กะวี, นะอะนิยาย, เลื่องตะหลิก, จ๋ดหมายทางการ, สุพาสิด...จึ่งเห็นอ่ามันบ่ได้ก่ຽวข้อง

ບັນຫາຂອງຄຳຮຽກຂານ. ດັ່ງນັ້ນ, ປັດໄຈການເລືອກຄຳຮຽກຂານຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງໃນພາສາລາວສະໄໝປັດຈຸບັນຈຶ່ງເຫັນວ່າມັນມີຄວາມກ່ຽວຂ້ອງພຽງແຕ່ 6 ປັດໄຈເທົ່ານັ້ນ. ດ້ວຍເຫດຜົນດັ່ງກ່າວຜູ້ສຶກສາຈຶ່ງສ້າງແຜນວາດເພື່ອສະແດງອົງປະກອບຂອງປັດໄຈການເລືອກຄຳຮຽກຂານຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງໄດ້ດັ່ງນີ້:

ແຜນວາດສະແດງປັດໄຈການເລືອກໃຊ້ຄຳຮຽກຂານໃນພາສາລາວ



ແຜນວາດຂ້າງເທິງນີ້ສະແດງໃຫ້ເຫັນວ່າຜູ້ເອີ້ນຕ້ອງເຂົ້າໃຈຄວາມໝາຍຂອງປັດໄຈທັງ 6 ຢ່າງນີ້ລະອຽດ ໂດຍເລີ່ມຈາກສາກແລະບັນຍາກາດ ແລະຮຽງລຳດັບໄປຕັ້ງແຕ່ຂວາໄປຫາຊ້າຍ ແລ້ວຈຶ່ງເລືອກຄຳຮຽກຂານເພື່ອເອີ້ນຜູ້ຟັງຕາມຮູບແບບຕ່າງໆທີ່ເຫັນວ່າເໝາະສົມ.

ຜົນການສຶກສາ:

ຈາກການສຶກສາການໃຊ້ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນຄັ້ງນີ້ ຜົນຂອງການສຶກສາພົບວ່າ ຄຳຮຽກຂານຖືກປະກອບຂຶ້ນດ້ວຍຄຳ ຫຼືອະລິຫຼາຍປະເພດ ແລະຄຳເຫຼົ່ານັ້ນຖືກນຳມາສ້າງຫຼືປະສົມເຂົ້າກັນເປັນຫຼາຍຮູບແບບ. ຈາກການວິເຄາະຂໍ້ມູນສາມາດສະຫຼຸບສ່ວນປະກອບ ແລະຮູບແບບຂອງຄຳຮຽກຂານໃນພາສາລາວສະໄໝປັດຈຸບັນທີ່ຜູ້ເວົ້າໃຊ້ເອີ້ນຜູ້ຟັງ ໂດຍສ້າງເປັນແຜນວາດດັ່ງນີ້:

แผนอาดสะแดงส่อนปะกอบและธูบแบบของคำธงภาษาในภาษาลาว



ອີງຕາມແຜນອາດຂ້າງເທິງນີ້ຜູ້ສຶກສາຈຶ່ງເອົາຂໍ້ມູນທີ່ລວບລວມໄດ້ທັງໝົດນັ້ນນຳມາຈັດເປັນຕົວຢ່າງໃຫ້ເຫັນຢູ່ໃນແຕ່ລະປະເພດດັ່ງຕໍ່ໄປນີ້:

1. ສ່ວນປະກອບຂອງຄຳຮຽກຂານໃນພາສາລາວມີທັງໝົດ 9 ປະເພດ

1) ຄຳຮຽກຊື່ເຊັ່ນ: ດຳ, ແດງ, ພິງ, ດອກແກ້ວ, ວົງທອງ, ພອນປະສົງ...

2) ຄຳຮຽກຍາດເຊັ່ນ: ພໍ່, ແມ່, ລຸງ, ປ້າ, ອາວ, ອ້າຍ, ເອື້ອຍ...

3) ຄຳຮຽກຍິດເຊັ່ນ: ຍາອ້າຍ, ຍາພໍ່ອ້າຍ, ຊຽງ...

4) ຄຳຮຽກອາຊີບເຊັ່ນ: ຄູ, ອາຈານ, ໝໍ...

5) ຄຳຮຽກຕຳແໜ່ງເຊັ່ນ: ເຈົ້ານາຍ, ຫົວໜ້າ, ນາຍບ້ານ...

6) ຄຳສັບພະນາມເຊັ່ນ: ທ່ານ, ພວກເຮົາ, ພວກເຈົ້າ...

7) ຄຳນຳໜ້າບອກເພດເຊັ່ນ: ອີ່, ນາງ, ບັກ...

8) ອະລິສະແດງຄວາມຮູ້ສຶກເຊັ່ນ: ຊາຍງາມເອີຍ, ຄົນງາມເອີຍ, ທີ່ຮັກຂອງນ້ອງ...

9) ຄຳລົງທ້າຍເຊັ່ນ: ເອີຍ, ເຮີຍ...

2. ຮູບແບບຂອງຄຳຮຽກຂານໃນພາສາລາວມີທັງໝົດ 26 ປະເພດ ແລະແບ່ງອອກເປັນ 3 ໝວດດັ່ງນີ້:

2.1 ໝວດຄຳຮຽກຂານທີ່ມີສ່ວນປະກອບດ່ວມີ 8 ປະເພດ

1) ຄຳຮຽກຊື່ເຊັ່ນ: ດຳ, ແດງ, ພິງ, ແກ້ວ, ວັນດີ, ວົງທອງ, ພອນປະສົງ...

2) ຄຳຮຽກຍາດເຊັ່ນ: ພໍ່, ແມ່, ລຸງ, ປ້າ, ອາວ, ສ່ງວ...

3) ຄຳຮຽກຍິດເຊັ່ນ: ຍາອ້າຍ, ຍາພໍ່ອ້າຍ, ພໍ່ໃຫຍ່...

4) ຄຳຮຽກອາຊີບເຊັ່ນ: ຄູ, ອາຈານ, ໝໍ, ແມ່ຄ້າ, ຕຳຫຼວດ...

5) ຄຳຮຽກຕຳແໜ່ງເຊັ່ນ: ເຈ້ົ້ານາຍ, ຫົວໜ້ົາ, ນາຍບ້ານ...

6) ຄຳສັບພະນາມເຊັ່ນ: ທ່ານ, ພວກເຮົາ, ພວກເຈ້ົ້າ, ສູ...

7) ຄຳນຳໜ້ົາບອກເພດເຊັ່ນ: ອ້ີ, ນາງ, ທ້ົາວ, ບັກ...

8) ອະລິສະແດງຄວາມຮູ້ສຶກເຊັ່ນ: ຊາຍງາມເອີຍ, ຄົນງາມເອີຍ, ທ່ີຮັກຂອງນ້ອງ...

2.2 ໝວດຄຳຮຽກຂານທ່ີມີສ່ວນປະກອບ 2 ສ່ວນ ມີ 16 ປະເພດ

1) ຄຳຮຽກຊ່ື+ອະລິສະແດງຄວາມຮູ້ສຶກເຊັ່ນ: ວັນດີລູກແມ່, ພ້ົງທ່ີຮັກ.

2) ຄຳຮຽກຍາດ+ຊ່ືເຊັ່ນ: ພ່ໍແດງ, ພ່ໍແອ, ພ່ໍໃຫຍ່ແກ້ວ.

3) ຄຳຮຽກຍາດ+ຍົດເຊັ່ນ: ອ້ົາຍບ່າວ, ອ້ົາຍຊ້ົງ, ອ້ົາຍທິດ.

4) ຄຳຮຽກຍາດ+ອາຊີບເຊັ່ນ: ອ້ົາຍຄູ, ອ້ົາຍຕຳຫຼວດ, ອ້ົາຍໂຊເຟ.

5) ຄຳຮຽກຍາດ+ຄຳສັບພະນາມເຊັ່ນ: ພ່ໍມັນ, ແມ່ມັນ, ເຖ້ົາອັນນ້ີ.

6) ຄຳຮຽກຍົດ+ຍາດເຊັ່ນ: ຍາພ່ໍອ້ົາຍ.

7) ຄຳຮຽກອາຊີບ+ຊ່ືເຊັ່ນ: ຄູຜັນ.

8) ຄຳຮຽກຕຳແໜ່ງ+ຊ່ືເຊັ່ນ: ພ່ໍໃຫຍ່ແກ້ວ.

9) ຄຳສັບພະນາມ+ຊ່ືເຊັ່ນ: ທ່ານຕຸ້ຍ, ທ່ານສຸສານ.

10) ຄຳສັບພະນາມ+ຍົດເຊັ່ນ: ທ່ານພັນຕີ, ບັກຊ້ົງ.

11) ຄຳສັບພະນາມ+ອາຊີບເຊັ່ນ: ທ່ານໝໍ.

12) ຄຳສັບພະນາມ+ຕຳແໜ່ງເຊັ່ນ: ທ່ານຫົວໜ້ົາບ້ານ.

13) ຄຳສັບພະນາມ+ອະລິສະແດງຄວາມຮູ້ສຶກເຊັ່ນ: ພວກຜ້ົເວນສູເອ້ີຍ.

14) ຄຳນຳໜ້ົາບອກເພດ+ຊ່ືເຊັ່ນ: ອ້ີນາງ, ບັກກ້ີ, ບັກເຜ້ືອກ.

15) ຄຳນຳໜ້ົາ+ຄຳຮຽກຍາດເຊັ່ນ: ອ້ີພ່ໍ, ອ້ີແມ່, ພວກອ້ົາຍ.

16) ຄຳນຳໜ້ົາບອກເພດ+ອະລິສະແດງຄວາມຮູ້ສຶກເຊັ່ນ: ບັກຮ່ຳມ້ົງ, ບັກບ້ົາຫ້ານ.

2.3 ໝວດຄຳຮຽກຂານທ່ີມີສ່ວນປະກອບ 3 ສ່ວນ ມີ 2 ປະເພດ

1) ຄຳຮຽກຍາດ+ອາຊີບ+ຊ່ືເຊັ່ນ: ອ້ົາຍຄູຜັນ.

2) ຄຳຮຽກຍາດ+ຊ່ື+ອະລິສະແດງຄວາມຮູ້ສຶກເຊັ່ນ: ອ້ົາຍກ້ົງສະເດັນທ່ີຮັກຂອງນ້ອງ

3. ປັດໄຈການເລ້ືອກໃຊ້ຄຳຮຽກຂານ

ຜູ້ສຶກສາໄດ້ວິເຄາະປັດໄຈການເລ້ືອກໃຊ້ຄຳຮຽກຂານໃນພາສາລາວຕາມຮູບແບບແຕ່ລະໝວດທ່ີແຍກເປັນແຕ່ລະປະເພດນັ້ນ ແລະວິເຄາະຕາມ 6 ປັດໄຈດັ່ງທ່ີສະເໜ້ີຢູ່ໃນກອບແນວຄິດ.

3.1 ຮູບແບບທ່ີມີສ່ວນປະກອບດ່ຽວ

ຜູ້ເອ້ີນເລ້ືອກຮູບແບບຄຳຮຽກຂານທ່ີມີສ່ວນປະກອບດ່ຽວເພ່ືອເອ້ີນຜູ້ຟັງໄດ້ບ້ົນພ້ືນຖານທ່ີວ່າລະຫວ່າງຜູ້ເອ້ີນກັບຜູ້ຖືກເອ້ີນມີການພ້ົວພັນກັນໃນດ້ານຕ່າງໆຄືດັ່ງລຸ່ມນ້ີ:

1) ເລືອກຊື່ໃຊ້ເອີ້ນຜູ້ຟັງເຫັນວ່າມີໃຊ້ທັ້ງຊື່ຫຼິ້ນ(ຊື່ນ້ອຍ) ແລະຊື່ແທ້(ຊື່ໃຫຍ່)ເຊັ່ນ: ໃຊ້ຊື່ຫຼິ້ນ ເພື່ອເອີ້ນມີ ແດງ, ຈ່ອຍ, ດຳ, ຊ້າງ ເປັນຕົ້ນ. ໃຊ້ຊື່ແທ້ເພື່ອເອີ້ນມີວັນດີ, ດວງເດືອນ, ວົງທອງ ເປັນຕົ້ນ. ຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຊື່ໃຊ້ເອີ້ນຜູ້ຟັງແມ່ນຢູ່ໃນສາກ ແລະບັນຍາກາດແບບສະບາຍໆຫຼາຍກວ່າແບບສະພິດສະພີ້ມ, ຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນເພື່ອນກັບເພື່ອນຫຼາຍກວ່າຄົນອື່ນ. ການຮຽກຊື່ຢູ່ໃນນີ້ມີຈຸດປະສົງເພື່ອເອີ້ນຫາເທົ່ານັ້ນ ແລະການໃຊ້ນ້ຳສຽງຂອງຜູ້ເອີ້ນຈະມີຫຼາຍແບບຄື ແບບກາງໆ, ແບບເຄັ່ງຄຽດ, ແບບຢ້ານກົວ ເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນຕ້ອງການເອີ້ນຜູ້ຟັງ. ການເອີ້ນຊື່ທີ່ພົບເຫັນທັ້ງໝົດລ້ວນແຕ່ເປັນຄຳລາວ(ຄຳພາສາລາວ) ໂດຍມີບັນທັດຖານທາງສັງຄົມຈະເຫັນວ່າເປັນໄປຕາມທັ້ງແບບປົກກະຕິ ແລະແບບບໍ່ປົກກະຕິ.

2) ເລືອກຄຳຮຽກຍາດໃຊ້ເອີ້ນຜູ້ຟັງພົບວ່າຜູ້ເວົ້າໃຊ້ເອີ້ນຜູ້ຟັງທີ່ເປັນຍາພີ່ນ້ອງທີ່ແທ້ຈິງຫຼືຜູ້ອື່ນທີ່ບໍ່ແມ່ນຍາດພີ່ນ້ອງ ແຕ່ຜູ້ເວົ້າປຽບທຽບວ່າຄືເປັນຍາດພີ່ນ້ອງຂອງຕົນເຊັ່ນ: ໃຊ້ຄຳຮຽກເອີ້ນຍາດພີ່ນ້ອງແທ້ເພື່ອເອີ້ນມີ: ພໍ່, ແມ່, ປ້າ, ເອື້ອຍ ເປັນຕົ້ນ. ໃຊ້ຄຳປຽບເໝືອນຍາດພີ່ນ້ອງແທ້ເພື່ອເອີ້ນມີ: ສ່ຽວ ເປັນຕົ້ນ. ຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກຍາດໃຊ້ເອີ້ນຜູ້ຟັງຈະຢູ່ໃນສາກ ແລະບັນຍາກາດແບບສະບາຍໆຫຼາຍກວ່າແບບສະພິດສະພີ້ມຄືກັບການເອີ້ນຊື່ ແຕ່ຜູ້ມີສ່ວນຮ່ວມໃນການເອີ້ນຈະຕ່າງກັບການເອີ້ນຊື່ ເພາະວ່າຄຳຮຽກຍາດຈະໃຊ້ເອີ້ນລະຫວ່າງຄົນທີ່ບໍ່ຮູ້ຈັກກັນຫຼາຍກວ່າຄົນອື່ນການຮຽກຍາດໃນນີ້ມີວັດຖຸປະສົງເພື່ອເອີ້ນຫາເທົ່ານັ້ນ, ການໃຊ້ນ້ຳສຽງຂອງຜູ້ເອີ້ນກໍເປັນແບບກາງໆບໍ່ມີແບບເຄັ່ງຄຽດຫຼືຢ້ານກົວຄືກັບການເອີ້ນຊື່;ວັດຖຸປະສົງຂອງຜູ້ເອີ້ນກໍເພື່ອຮ້ອງຫາ ແລະພາສາທີ່ໃຊ້ເອີ້ນທັ້ງໝົດກໍລ້ວນແລ້ວແຕ່ເປັນຄຳລາວ ໂດຍມີບັນທັດຖານທາງສັງຄົມຄື ເປັນໄປຕາມປົກກະຕິ.

3) ເລືອກຄຳຮຽກຍົດໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳຮຽກຍົດໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະບາຍໆ ແລະແບບສະພິດສະພີ້ມຄືກັນກັບການຮຽກຊື່ ແລະການຮຽກຍາດເຊັ່ນ: ຍາອ້າຍ, ຍາພໍ່, ຊຸງ ແຕ່ບ່ອນຕ່າງກັນແມ່ນຢູ່ທີ່ຜູ້ມີສ່ວນຮ່ວມ, ໃນການເອີ້ນນັ້ນຈະເປັນການເອີ້ນລະຫວ່າງເພື່ອນກັບເພື່ອນ ແລະຄູ່ຮັກທີ່ມີໄວອາຍຸຕ່າງກັນຫຼາຍສິບປີ ເພາະສະນັ້ນ, ການຮຽກຍົດໃນທີ່ນີ້ຈຶ່ງມີວັດຖຸປະສົງເພື່ອເອີ້ນຫາແລະຂໍຮ້ອງ. ຜູ້ເອີ້ນກໍໃຊ້ນ້ຳສຽງເປັນແບບກາງໆ ແລະມີຄວາມພໍອົກພໍໃຈ ເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງໃນແຕ່ລະໂອກາດນັ້ນເອງ. ຄຳຮຽກຍົດທີ່ຜູ້ເອີ້ນໃຊ້ເອີ້ນຜູ້ຟັງກໍເປັນຄຳລາວ ໂດຍມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

4) ເລືອກຄຳຮຽກອາຊີບໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກອາຊີບໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະບາຍແລະແບບສະພິດສະພີ້ມຄືກັນກັບຄຳຮຽກຍົດເຊັ່ນ: ຕຳຫຼວດ, ໂຊເຟີ, ຄູ ແຕ່ຜູ້ມີສ່ວນຮ່ວມໃນການເອີ້ນຈະມີຄວາມແຕກຕ່າງກັບການຮຽກຍົດເຊັ່ນ: ໃຊ້ເອີ້ນລະຫວ່າງຄົນທີ່ບໍ່ຮູ້ຈັກກັນກັບຄົນທີ່ບໍ່ຮູ້ຈັກກັນ, ຄົນຮູ້ຈັກກັບຄົນຮູ້ຈັກ. ການຮຽກອາຊີບໃນນີ້ເຫັນວ່າຜູ້ເອີ້ນມີວັດຖຸປະສົງເພື່ອເອີ້ນຫາແລະຂໍຮ້ອງ ໂດຍໃຊ້ນ້ຳສຽງເປັນແບບກາງໆ ແລະມີຄວາມດີອົກ

ດີໃຈ, ການຮຽກອາຊີບເພື່ອເອີ້ນຜູ້ຟັງນີ້ມີທັງຄຳທີ່ເປັນພາສາລາວ ແລະມີຄຳທີ່ເປັນພາສາຕ່າງປະເທດເຊັ່ນ: ຕຳຫຼວດ, ໂຊເຟີ ເຊິ່ງມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

5) ເລືອກຄຳຮຽກຕຳແໜ່ງໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກຕຳແໜ່ງໃຊ້ເອີ້ນຜູ້ຟັງກໍຢູ່ໃນສາກແລະບັນຍາກາດແບບສະບາຍ ແລະແບບສະໜິດສະໜົມຄືກັນກັບຄຳຮຽກອາຊີບເຊັ່ນ: ຫົວໜ້າ, ນາຍບ້ານ, ເຈົ້ານາຍ ແຕ່ຜູ້ມີສ່ວນຮ່ວມໃນການເອີ້ນຈະຕ່າງກັບຄຳຮຽກອາຊີບເຊັ່ນ: ໃຊ້ເອີ້ນລະຫວ່າງລູກນ້ອງກັບຫົວໜ້າ, ຄົນທີ່ຮູ້ຈັກກັນ. ຜູ້ເອີ້ນໃຊ້ຄຳຮຽກຕຳແໜ່ງໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະໃຊ້ນ້ຳສຽງແບບກາງໆຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນ, ຄຳຮຽກຕຳແໜ່ງທີ່ຜູ້ເອີ້ນໃຊ້ລ້ວນແລ້ວແຕ່ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

6) ເລືອກຄຳສັບພະນາມໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳສັບພະນາມໃຊ້ເອີ້ນຜູ້ຟັງກໍຢູ່ໃນສາກ ແລະບັນຍາກາດແບບສະບາຍໆ ແລະແບບສະໜິດສະໜົມຄືກັນກັບຄຳຮຽກຕຳແໜ່ງເຊັ່ນ: ພວກເຮົາ, ພວກເຈົ້າ, ສູ ແຕ່ຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນເພື່ອນກັບເພື່ອນ ແລະຫົວໜ້າກັບລູກນ້ອງຫຼາຍກວ່າຄົນອື່ນ. ຜູ້ເອີ້ນໃຊ້ຄຳສັບພະນາມເອີ້ນຜູ້ຟັງໃນນີ້ມີວັດຖຸປະສົງເພື່ອເອີ້ນຫາໂດຍໃຊ້ນ້ຳສຽງແບບກາງໆ ຂຶ້ນກັບວັດຖຸປະສົງຂອງຜູ້ຮຽກ ແລະຄຳສັບພະນາມທີ່ຜູ້ເອີ້ນໃຊ້ນີ້ລ້ວນແຕ່ເປັນຄຳລາວ ໂດຍມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

7) ເລືອກຄຳນຳໜ້າບອກເພດໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳນຳໜ້າບອກເພດໃຊ້ເອີ້ນຜູ້ຟັງມີພຽງຄຳດຽວຄື 'ນາງ' ເຊິ່ງຢູ່ໃນສາກ ແລະບັນຍາກາດແບບສະບາຍໆ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຄົນທີ່ບໍ່ຮູ້ຈັກກັນກັບຄົນທີ່ບໍ່ຮູ້ຈັກກັນ; ຜູ້ເອີ້ນໃຊ້ຄຳນຳໜ້າບອກເພດໃນນີ້ມີວັດຖຸປະສົງເພື່ອບັງຄັບ ແລະໃຊ້ນ້ຳສຽງທີ່ມີອາລົມທາງເພດໃຊ້ຮຽກຜູ້ຟັງ; ຜູ້ຮຽກໃຊ້ຄຳນຳໜ້າບອກເພດພົບວ່າເປັນຄຳລາວ ໂດຍມີບັນທັດຖານທາງສັງຄົມເປັນໄປແບບບໍ່ປົກກະຕິ.

8) ເລືອກອະລິສະແດງຄວາມຮູ້ສຶກໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກອະລິສະແດງຄວາມຮູ້ສຶກໃຊ້ເອີ້ນຜູ້ຟັງຄືຢູ່ໃນສາກ ແລະບັນຍາກາດແບບສະບາຍໆເຊັ່ນ: ທີ່ຮັກຂອງນ້ອງ, ຄົນງາມເອີຍ, ຊາຍງາມເອີຍ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະແມ່ນຫົວໜ້າກັບລູກນ້ອງ; ຜູ້ເອີ້ນໃຊ້ອະລິສະແດງຄວາມຮູ້ສຶກໃນນີ້ມີວັດຖຸປະສົງເພື່ອຮຽກຫາ ແລະໃຊ້ນ້ຳສຽງທີ່ມີອາລົມໂມໂຫ, ອະລິສະແດງຄວາມຮູ້ສຶກທີ່ຜູ້ເອີ້ນໃຊ້ເອີ້ນກໍເປັນຄຳລາວ ໂດຍມີບັນທັດຖານທາງສັງຄົມເປັນໄປແບບບໍ່ປົກກະຕິ.

ການໃຊ້ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນ ເຫັນວ່າຜູ້ເອີ້ນເລືອກຮູບແບບທີ່ມີສ່ວນປະກອບດ່ຽວເພື່ອເອີ້ນຜູ້ຟັງນັ້ນເປັນໄປຕາມປັດໄຈສອງຢ່າງຄື: (1) ສາມາດໃຊ້ຢູ່ໃນສາກ ແລະບັນຍາກາດແບບສະບາຍໆ ແລະສະໜິດສະໜົມເທົ່ານັ້ນ. (2) ຜູ້ມີສ່ວນຮ່ວມໃນການເອີ້ນຈະຂຶ້ນຢູ່ກັບສາຍພົວພັນລະຫວ່າງຄູ່ສົນທະນາ, ໝາຍຄວາມວ່າຜູ້ເອີ້ນຈະແນມເບິ່ງຜູ້ຟັງໄດ້ໃນຫຼາຍສະຖານນະການທີ່ແຕກຕ່າງກັນ ໂດຍອີງຕາມສາກ ແລະບັນຍາກາດເປັນສິ່ງຕັດສິນໃຫ້ຜູ້ເອີ້ນເລືອກໃຊ້ຄຳ

ຮຽກຂານຕາມສ່ວນປະກອບດ່ຽວ. ສ່ວນປັດໄຈອື່ນໆຈະເປັນສຳຮອງ ແລະມີຄວາມໜັກຫຼືເບົາແຕກຕ່າງກັນໄປ.

3.2 ຮູບແບບທີ່ມີສ່ວນປະກອບ 2 ສ່ວນ

1) ເລືອກຄຳຮຽກຊື່+ອະລິສະແດງຄວາມຮູ້ສຶກໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກຊື່+ອະລິສະແດງຄວາມຮູ້ສຶກໃຊ້ເອີ້ນຜູ້ຟັງຢູ່ໃນສາກ ແລະບັນຍາກາດແບບສະໜິດສະໜົມດັ່ງຄຳວ່າ: ພີ່ງທີ່ຮັກ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນນັ້ນຈະເປັນຄູ່ຮັກກັບຄູ່ຮັກ. ຜູ້ເອີ້ນໃຊ້ຊື່+ອະລິສະແດງຄວາມຮູ້ສຶກເອີ້ນເພື່ອວັດຖຸປະສົງຄືເອີ້ນຫາ ແລະໃຊ້ນ້ຳສຽງທີ່ມີຄວາມພໍອົກພໍໃຈ ເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງໃນສະຖານະການທີ່ບໍ່ຄືກັນ. ຄຳຮຽກຊື່+ອະລິສະແດງຄວາມຮູ້ສຶກທີ່ຜູ້ເອີ້ນໃຊ້ເອີ້ນຜູ້ຟັງລ້ວນແຕ່ເປັນຄຳລາວ ໂດຍມີບັນທັດຖານທາງສັງຄົມເປັນໄປແບບປົກກະຕິ ແລະແບບບໍ່ປົກກະຕິ.

2) ເລືອກຄຳຮຽກຍາດ+ຊື່ໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກຍາດ+ຊື່ໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມຫຼາຍກວ່າແບບສະບາຍເຊັ່ນ: ພໍ່ໃຫຍ່ແກ້ວ, ພໍ່ແດງ, ພໍ່ແອ ໂດຍຜູ້ມີສ່ວນຮ່ວມໃນການຮຽກຍາດ+ຊື່ຈະເປັນຄົນຮູ້ຈັກກັນກັບຄົນຮູ້ຈັກກັນ, ຜູ້ໃຫຍ່ກັບຜູ້ນ້ອຍ, ລູກນ້ອງກັບຫົວໜ້າຫຼາຍກວ່າຄົນອື່ນ. ຜູ້ເອີ້ນໃຊ້ຄຳຮຽກຍາດ+ຊື່ໃນນີ້ມີວັດຖຸປະສົງເພື່ອເອີ້ນຫາທັງນັ້ນ ແລະມີການໃຊ້ນ້ຳສຽງແບບກາງໆເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກຍາດ+ຊື່ທີ່ຜູ້ເອີ້ນໃຊ້ລ້ວນແຕ່ເປັນຄຳລາວ ແລະມີບັນທັດຖານທາງສັງຄົມແມ່ນເປັນໄປຕາມແບບປົກກະຕິ.

3) ເລືອກຄຳຮຽກຍາດ+ຍົດໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກຍາດ+ຍົດໃຊ້ເອີ້ນຜູ້ຟັງຢູ່ໃນສາກ ແລະບັນຍາກາດແບບສະໜິດສະໜົມ ແລະແບບທາງການເຊັ່ນ: ອ້າຍບ່າວ, ອ້າຍຊຽງ, ອ້າຍທິດໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຄົນທີ່ຮູ້ຈັກກັນຫົວໜ້າກັບລູກນ້ອງ. ຜູ້ເອີ້ນໃຊ້ຄຳຮຽກຍາດ+ຍົດໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບກາງໆ, ແບບວິຕິກາງວົນເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກຍາດ+ຍົດທີ່ຜູ້ເອີ້ນໃຊ້ລ້ວນແຕ່ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ ແລະແບບບໍ່ປົກກະຕິ.

4) ເລືອກຄຳຮຽກຍາດ+ອາຊີບໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກຍາດ+ອາຊີບໃຊ້ເອີ້ນຜູ້ຟັງແມ່ນຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມ ແລະແບບກາງໆເຊັ່ນ: ອ້າຍຕຳຫຼວດ, ອ້າຍໂຊເຟີ, ອ້າຍຄູ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນການເອີ້ນຜູ້ຟັງໄດ້ກ້ວ້າງກວ່າຜູ້ມີສ່ວນຮ່ວມໃນຮູບແບບອື່ນຄື: ຄົນຮູ້ຈັກກັນ, ຄົນບໍ່ຮູ້ຈັກກັນ, ລູກສິດກັບຄູ ເປັນຕົ້ນ. ຜູ້ເອີ້ນໃຊ້ຄຳຮຽກຍາດ+ອາຊີບໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບກາງໆ ເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກຍາດ+ອາຊີບທີ່ຜູ້ເອີ້ນໃຊ້ມີທັງຄຳທີ່ເປັນພາສາລາວ ແລະຄຳທີ່ເປັນພາສາຕ່າງປະເທດ, ມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ ແລະແບບບໍ່ປົກກະຕິ.

5) ເລືອກຄຳຮຽກຍາດ+ສັບພະນາມໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກຍາດ+ສັບພະນາມໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມເຊັ່ນ: ພໍ່ມັນ, ແມ່ມັນ, ເຖົ້າອັນນີ້ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນພັນລະຍາກັບສາມີນຳກັນ. ຜູ້ເອີ້ນໃຊ້ຄຳຮຽກຍາດ+ສັບພະນາມໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບກາງໆ, ແບບດີອົກດີໃຈເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກຍາດ+ສັບພະນາມທີ່ຜູ້ເອີ້ນໃຊ້ລ້ວນແຕ່ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມປົກກະຕິ.

6) ເລືອກຄຳຮຽກຍົດ+ຍາດໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກຍົດ+ຍາດໃຊ້ເອີ້ນຜູ້ຟັງມີພຽງແຕ່ຄຳດຽວຄື 'ຍາພໍ່ອ້າຍ' ຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມຄືກັນກັບຄຳຮຽກຍາດ+ສັບພະນາມ. ຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຄູ່ຮັກທີ່ມີໄວອາຍຸແຕກຕ່າງກັນຫຼາຍສິບປີ. ຜູ້ເອີ້ນໃຊ້ຄຳຮຽກຍົດ+ຍາດໃນນີ້ມີວັດຖຸປະສົງເພື່ອຍົກຍ້ອງ ແລະມີການໃຊ້ນ້ຳສຽງແບບດີອົກດີໃຈເປັນພິເສດເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກຍົດ+ຍາດທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບບໍ່ປົກກະຕິ.

7) ເລືອກຄຳຮຽກອາຊີບ+ຊື່ໃຊ້ເອີ້ນຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນເລືອກຄຳຮຽກອາຊີບ+ຊື່ໃຊ້ເອີ້ນຜູ້ຟັງແມ່ນຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມຄືກັນກັບຄຳຮຽກຍົດ+ຍາດເຊັ່ນ: ຄູຜັນ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນກໍເປັນຮູ້ຈັກກັນ. ຜູ້ເອີ້ນໃຊ້ຄຳຮຽກອາຊີບ+ຊື່ມີວັດຖຸປະສົງໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບກາງໆເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກອາຊີບ+ຊື່ທີ່ຜູ້ຮຽກເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

8) ເລືອກຄຳຮຽກຕຳແໜ່ງ+ຊື່ໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳຮຽກຕຳແໜ່ງ+ຊື່ໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມຄືກັນກັບຄຳຮຽກອາຊີບ+ຊື່ເຊັ່ນພໍ່ໃຫຍ່ແກ້ວ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຄົນທີ່ຮູ້ຈັກກັນ, ຜູ້ເອີ້ນໃຊ້ຄຳຮຽກຕຳແໜ່ງ+ຊື່ໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບດີອົກດີໃຈ ເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກຕຳແໜ່ງ+ຊື່ທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

9) ເລືອກຄຳສັບພະນາມ+ຊື່ໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳສັບພະນາມ + ຊື່ໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະບາຍໆເຊັ່ນ: ອ້າຍຕຸ້ຍ, ທ່ານສຸສານ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຄົນທີ່ຮູ້ຈັກກັນ, ຜູ້ເອີ້ນໃຊ້ຄຳຮຽກສັບພະນາມ+ຊື່ໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບກາງໆເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກສັບພະນາມ+ຊື່ທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

10) ເລືອກຄຳສັບພະນາມ+ຍົດໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າຜູ້ເອີ້ນ ເລືອກຄຳສັບພະນາມ +ຍົດໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະບາຍໆ ແລະແບບທາງການເຊັ່ນ: ທ່ານພັນຕີ,

ບັກຊຽງ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນລູກນ້ອງກັບຫົວໜ້າ, ຜູ້ເອີ້ນໃຊ້ຄຳຮຽກສັບພະນາມ+ຍົດໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບກາງໆ ແລະແບບໂມໂຫ ເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກສັບພະນາມ+ຍົດທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ ແລະແບບບໍ່ປົກກະຕິ.

11) ເລືອກຄຳສັບພະນາມ+ອາຊີບໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳສັບພະນາມ+ອາຊີບໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະບາຍໆເຊັ່ນທ່ານໝໍໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຄົນບໍ່ຮູ້ຈັກກັນ, ຜູ້ເອີ້ນໃຊ້ຄຳຮຽກສັບພະນາມ+ອາຊີບໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບກາງໆເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກສັບພະນາມ+ອາຊີບທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

12) ເລືອກຄຳສັບພະນາມ+ຕຳແໜ່ງໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳສັບພະນາມ+ຕຳແໜ່ງໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບທາງການເຊັ່ນທ່ານຫົວໜ້າບ້ານ ໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຄົນບໍ່ຮູ້ຈັກກັນ, ຜູ້ເອີ້ນໃຊ້ຄຳຮຽກສັບພະນາມ+ຕຳແໜ່ງໃນນີ້ມີວັດຖຸປະສົງເພື່ອເອີ້ນຫາ ແລະມີການໃຊ້ນ້ຳສຽງແບບກາງໆເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກສັບພະນາມ+ຕຳແໜ່ງທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

13) ເລືອກຄຳສັບພະນາມ+ອະລິສະແດງຄວາມຮູ້ສຶກໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳສັບພະນາມ+ອະລິສະແດງຄວາມຮູ້ສຶກໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບກາງໆ ເຊັ່ນພວກຜີເວນສູເອີຍໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຫົວໜ້າກັບລູກນ້ອງ, ຜູ້ເອີ້ນໃຊ້ຄຳຮຽກສັບພະນາມ+ອະລິສະແດງຄວາມຮູ້ສຶກໃນນີ້ມີວັດຖຸປະສົງເພື່ອເອີ້ນຫາແບບໃຈຮ້າຍທີ່ສຸດ ແລະມີການໃຊ້ນ້ຳສຽງແບບໂມໂຫເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກສັບພະນາມ+ອະລິສະແດງຄວາມຮູ້ສຶກທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບບໍ່ປົກກະຕິ.

14) ເລືອກຄຳນຳໜ້າບອກເພດ+ຊື່ໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳນຳໜ້າບອກເພດ+ຊື່ໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະບາຍໆ ແລະແບບສະໜິດສະໜົມເຊັ່ນອ້ຽງ, ບັກກີ, ບັກເຜືອກໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນຫຼາຍກຸ່ມຄົນຄື: ຄົນຮູ້ຈັກກັນ, ໝູ່ເພື່ອນ,ພໍ່ກັບລູກ ເປັນຕົ້ນ.ຜູ້ເອີ້ນໃຊ້ຄຳນຳໜ້າບອກເພດ+ຊື່ໃນນີ້ມີວັດຖຸປະສົງເພື່ອເອີ້ນຫາແບບກາງໆເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳນຳໜ້າບອກເພດ+ຊື່ທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

15) ເລືອກຄຳນຳໜ້າ+ຍາດໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳນຳໜ້າ+ຍາດໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະແບບສະໜິດສະໜົມຫຼາຍກວ່າປະເພດອື່ນເຊັ່ນອ້ີພໍ່,

ອີ່ແມ່, ພວກອ້າຍໂດຍຜູ້ມີສ່ວນຮ່ວມໃນການເອີ້ນຈະເປັນລູກກັບພໍ່ແມ່, ຄົນບໍ່ຮູ້ຈັກກັນຜູ້ເອີ້ນໃຊ້ຄຳນຳໜ້າ+ຍາດໃນນີ້ມີວັດຖຸປະສົງເພື່ອເອີ້ນຫາແລະໃຈຮ້າຍ ໂດຍມີການໃຊ້ນ້ຳສຽງແບບກາງໆແລະໂມໂຫເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳນຳໜ້າ+ຍາດທີ່ຜູ້ເອີ້ນໃຊ້ລ້ວນແຕ່ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ ແລະແບບບໍ່ປົກກະຕິ.

16) ເລືອກຄຳນຳໜ້າບອກເພດ+ອະລິສະແດງຄວາມຮູ້ສຶກໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳນຳໜ້າບອກເພດ+ອະລິສະແດງຄວາມຮູ້ສຶກໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະບາຍໆ ແລະແບບມີອາລົມເຄັ່ງຄຽດເຊັ່ນບັກຫ່າມຶງ, ບັກບ້າກາມໂດຍຜູ້ມີສ່ວນຮ່ວມສາມາດເອີ້ນກັບຫຼາຍກຸ່ມຄົນໄດ້ຄື: ຄົນຮູ້ຈັກກັນ, ໝູ່ເພື່ອນ, ຫົວໜ້າກັບລູກນ້ອງ ເປັນຕົ້ນ. ຜູ້ເອີ້ນໃຊ້ຄຳນຳໜ້າບອກເພດ+ອະລິສະແດງຄວາມຮູ້ສຶກໃນນີ້ມີວັດຖຸປະສົງເພື່ອເອີ້ນຫາແບບໃຈຮ້າຍເຊິ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳນຳໜ້າບອກເພດ+ອະລິສະແດງຄວາມຮູ້ສຶກທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປແບບບໍ່ປົກກະຕິ.

ການໃຊ້ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນເຫັນວ່າຜູ້ເອີ້ນເລືອກຮູບແບບທີ່ມີສ່ວນປະກອບ 2 ສ່ວນໃຊ້ເອີ້ນຜູ້ຟັງນັ້ນແມ່ນຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມຫຼາຍກວ່າແບບສະບາຍໆແລະແບບທາງການ. ຜູ້ເອີ້ນສາມາດແນມເບິ່ງຜູ້ຖືກເອີ້ນໄດ້ໃນຫຼາຍສະຖານະການທີ່ຕ່າງກັນໂດຍອີງຕາມສາກແລະບັນຍາກາດເປັນສິ່ງຕັດສິນໃຫ້ຜູ້ເອີ້ນເລືອກຮູບແບບທີ່ມີສ່ວນປະກອບ 2 ສ່ວນນີ້ໃຊ້ເອີ້ນຜູ້ຟັງ ແລະຜູ້ມີສ່ວນຮ່ວມໃນການເອີ້ນກໍເປັນປັດໄຈສຳຄັນຫຼາຍກວ່າປັດໄຈອື່ນໆ.

3.3 ຮູບແບບທີ່ມີສ່ວນປະກອບ 3 ສ່ວນ

1) ເລືອກຄຳຮຽກຍາດ+ອາຊີບ+ຊື່ໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳຮຽກຍາດ+ອາຊີບ+ຊື່ໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມເຊັ່ນອ້າຍຄູຜັນໂດຍຜູ້ມີສ່ວນຮ່ວມສາມາດເອີ້ນຈະເປັນລູກສິດກັບຄູ.ຜູ້ເອີ້ນໃຊ້ຄຳຮຽກຍາດ+ອາຊີບ+ຊື່ໃນນີ້ມີວັດຖຸປະສົງເພື່ອເອີ້ນຫາແລະມີການໃຊ້ນ້ຳສຽງແບບດີອົກດີໃຈ. ຊຶ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກຍາດ+ອາຊີບ+ຊື່ທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປຕາມແບບປົກກະຕິ.

2) ເລືອກຄຳຮຽກຍາດ+ຊື່+ອະລິສະແດງຄວາມຮູ້ສຶກໃຊ້ຮຽກຜູ້ຟັງຈາກຂໍ້ມູນພົບວ່າ ຜູ້ເອີ້ນເລືອກຄຳຮຽກຍາດ+ຊື່+ອະລິສະແດງຄວາມຮູ້ສຶກໃຊ້ເອີ້ນຜູ້ຟັງຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມຄືກັນກັບຄຳຮຽກຍາດ+ອາຊີບ+ຊື່ເຊັ່ນອ້າຍກ້ຽງສະເດັນທີ່ຮັກຂອງນ້ອງໂດຍຜູ້ມີສ່ວນຮ່ວມສາມາດເອີ້ນຈະເປັນຄູ່ຮັກກັບຄູ່ຮັກ.ຜູ້ເອີ້ນໃຊ້ຄຳຮຽກຍາດ+ຊື່+ອະລິສະແດງຄວາມຮູ້ສຶກໃນນີ້ມີວັດຖຸປະສົງເພື່ອຍົກຍ້ອງແລະມີການໃຊ້ນ້ຳສຽງແບບດີອົກດີໃຈ. ຊຶ່ງຂຶ້ນກັບວັດຖຸປະສົງຂອງຜູ້ເອີ້ນໃຊ້ເອີ້ນຜູ້ຟັງ. ຄຳຮຽກຍາດ+ຊື່+ອະລິສະແດງຄວາມຮູ້ສຶກທີ່ຜູ້ເອີ້ນໃຊ້ເປັນຄຳລາວ ແລະມີບັນທັດຖານທາງສັງຄົມເປັນໄປແບບບໍ່ປົກກະຕິ.

ຜູ້ເອີ້ນເລືອກຮູບແບບທີ່ມີສ່ວນປະກອບ 3 ສ່ວນໃຊ້ເອີ້ນຜູ້ຟັງຈາກຂໍ້ມູນມີພຽງແຕ່ 2 ປະເພດ ແລະເຫັນວ່າຜູ້ເອີ້ນໃຊ້ຢູ່ໃນສາກແລະບັນຍາກາດແບບສະໜິດສະໜົມເທົ່ານັ້ນ. ຜູ້ມີສ່ວນຮ່ວມໃນນີ້ ຈະເປັນຄົນທີ່ມີຄວາມໃກ້ຊິດກັນຫຼາຍເປັນພິເສດ, ສະນັ້ນຈຶ່ງເຫັນວ່າຜູ້ມີສ່ວນຮ່ວມເປັນປັດໄຈສຳຄັນກວ່າປັດໄຈອື່ນໆໃນການເລືອກໃຊ້ຄຳຮຽກຂານທີ່ມີຮູບແບບສ່ວນປະກອບ 3 ສ່ວນ.

ສະຫຼຸບແລະອະພິປາຍຜົນ

ຜ່ານການສຶກສາການໃຊ້ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນຄັ້ງນີ້ ສາມາດສະຫຼຸບຜົນໄດ້ວ່າ: ຄຳຮຽກຂານຖືກປະກອບຂຶ້ນດ້ວຍຄຳຫຼືອະລິ 9 ປະເພດ ໄດ້ແກ່ຊື່, ຍາດ, ຍົດ, ອາຊີບ, ຕຳແໜ່ງ, ສັບພະນາມ, ຄຳນຳໜ້າ, ອະລິສະແດງຄວາມຮູ້ສຶກ ແລະຄຳລົງທ້າຍ ໂດຍນຳມາສ້າງເປັນຮູບແບບໄດ້ທັງໝົດ 26 ປະເພດ, ແຍກເປັນ 3 ໝວດເຊັ່ນ: ໝວດຄຳຮຽກຂານທີ່ມີສ່ວນປະກອບດ່ຽວມີ 8 ປະເພດ, ໝວດຄຳຮຽກຂານທີ່ມີສ່ວນປະກອບ 2 ສ່ວນມີ 16 ປະເພດ, ໝວດຄຳຮຽກຂານທີ່ມີສ່ວນປະກອບ 3 ສ່ວນມີ 2 ປະເພດ.

ຈາກການສຶກສາຂໍ້ມູນຄຳຮຽກຂານໃນພາສາລາວເຮັດໃຫ້ເຫັນວ່າ ການໃຊ້ຄຳຮຽກຂານປະເພດຕ່າງໆໃນພາສາລາວສະໄໝປັດຈຸບັນ ມີລັກສະນະດັ່ງນີ້:

1. ຄຳຮຽກຂານທີ່ຜູ້ເອີ້ນໃຊ້ເອີ້ນຜູ້ຟັງໃນຮູບແບບຕ່າງໆນັ້ນຈະແປປ່ຽນໄປຕາມບໍລິບົດທາງສາຍສຳພັນ ແລະຖານະທາງສັງຄົມເປັນເຈົ້າກຳນົດຊຶ່ງເຫັນວ່ານອກຈາກທີ່ໄດ້ສະຫຼຸບເປັນຕົວຢ່າງມາແລ້ວຍັງມີບາງກໍລະນີເຊັ່ນ: ລະຫວ່າງໝູ່ເພື່ອນກັບໝູ່ເພື່ອນຖ້ຽງ, ຜິດກັນຫຼືເອີ້ນກັນບາງຄັ້ງມັກຈະເລືອກໃຊ້ຄຳຮຽກຂານແບບຄຳນຳໜ້າບອກເພດ+ອະລິສະແດງຄວາມຮູ້ສຶກຕົວຢ່າງວ່າບັກຈ້າ, ບັກໂງ່, ບັກຮ່າມຶງດັ່ງນີ້ເປັນຕົ້ນ; ແລະຍາດຜູ້ໃຫຍ່ເອີ້ນຍາດຜູ້ນ້ອຍຫຼືຫົວໜ້າເອີ້ນລູກນ້ອງໃນເມື່ອມີອາລົມຮ້າຍຈະເລືອກໃຊ້ກໍຈະເລືອກໃຊ້ຄຳນຳໜ້າ+ອະລິສະແດງຄວາມຮູ້ສຶກຕົວຢ່າງວ່າບັກຂີ້ກາກ, ບັກລູກທໍລະພີດັ່ງນີ້ເປັນຕົ້ນ.

2. ການໃຊ້ຄຳຮຽກຂານໃນພາສາລາວສະໄໝປັດຈຸບັນສະທ້ອນໃຫ້ເຫັນລັກສະນະທາງສັງຄົມບາງປະການຂອງຄົນໃນສັງຄົມເຊັ່ນ: ຄວາມຜູກພັນກັນໃນຄວາມເປັນຍາດ, ການໃຫ້ຄວາມເຄົາລົບນັບຖືບຸກຄົນທົ່ວໄປເຊິ່ງແບ່ງເປັນສອງກໍລະນີຄື: 1)ໃຊ້ເອີ້ນຍາດພີ່ນ້ອງທີ່ຮູ້ຈັກຮັກແພງ ນັບຖືກັນເຊັ່ນ: ໝູ່ຂອງແມ່ເປັນເພດຍິງ ແລະມີອາຍຸໄລ່ເລ່ຍຫຼືຫຼາຍກວ່າແມ່ກໍຈະເອີ້ນວ່າ ແມ່ຫຼືແມ່ປ້າ, ບຸລຸດອາວຸໂສທີ່ນັບຖືຈະເອີ້ນວ່າພໍ່ເຖົ້າຫຼືພໍ່ຕູ້ ເປັນຕົ້ນ. 2)ໃຊ້ເອີ້ນກັບບຸກຄົນທີ່ບໍ່ຮູ້ຈັກ ແຕ່ເອີ້ນເພື່ອຄວາມຮັກແພງສະໜິດສະໜົມເຊັ່ນ: ເອີ້ນແມ່ຄ້າຂາຍເຄື່ອງຢູ່ໃນຕະຫຼາດທີ່ມີອາຍຸຮຸ່ນຣາວຄາວດຽວກັບເອື້ອຍວ່າ ເອື້ອຍຫຼືປ້າ.

ຈາກການສຶກສາຮູບແບບຄຳຮຽກຂານຊ່ວຍໃຫ້ເຫັນພາບການໃຊ້ຄຳຮຽກຂານໃນແຕ່ລະຮູບແບບນັ້ນຊັດເຈນຍິ່ງຂຶ້ນຈຶ່ງສະຫຼຸບໄດ້ວ່າການໃຊ້ຄຳຮຽກຍາດເປັນຄຳຮຽກຂານນີ້ມີຢູ່ 2 ກໍລະນີຄື (1) ໃຊ້ຄຳເອີ້ນຍາດໂດຍກົງເຊັ່ນ: ພໍ່, ແມ່, ລູກ, ລຸງ, ປ້າ, ອາວ, ອາ, ອ້າຍ, ເອື້ອຍ, ນ້ອງ ເປັນຕົ້ນ.

(2)ໃຊ້ຄຳຮຽກຍາດ+ຊື່ເພື່ອສະແດງເຖິງຄວາມເປັນຍາດ ແລະມີຄວາມໃກ້ຊິດກັນຫຼາຍເຊັ່ນ: ນ້າສາວ ນວນ, ປ້າແจ่ມ, ລຸງພິມ, ແມ່ແດງ ເປັນຕົ້ນ.

3. ການເລືອກຊື່ເປັນຄຳຮຽກຂານໃນພາສາລາວສະໄໝປັດຈຸບັນຈາກແຫ່ງຂໍ້ມູນພົບວ່າການທີ່ຜູ້ເອີ້ນເລືອກຊື່ໃຊ້ເອີ້ນຜູ້ຟັງມີຄວາມກ່ຽວຂ້ອງກັບປັດໄຈຕ່າງໆຫຼາຍກໍລະນີເຊັ່ນ: ຜູ້ເວົ້າເອີ້ນຜູ້ຟັງ ໂດຍການເອີ້ນເຕັມຊື່ຫຼືມີການເອີ້ນແບບຫຍໍ້ຊື່ຫຼືມີການເອີ້ນຊື່ຫຼິ້ນເຊັ່ນ: ກິ, ຕຸ້ຍ, ຈ່ອຍ, ເສືອ, ຊ້າງ, ສິງ ແລ້ວແต่ຄວາມເໝາะสົมຫຼືຂຶ້ນกับสะถานะภานของผู้เอิ้นหมายถึงว่าการเลือกใช้ชื่อจะมีการปรับเปลี่ยนไปตามบริบทของผู้เอิ้นและผู้ถูกเอิ้น.

ผลของการศึกษาคำร้องขอในภาษาลาวสมัยปัจจุบันของผู้ศึกษาครั้งนี้ผู้ศึกษาหวังว่าคงจะเป็นประโยชน์และมีคุณค่าทางด้านการศึกษาค้นคว้าภาษาศาสตร์ภาษาลาว โดยเฉพาะในด้านการศึกษาเกี่ยวกับคำร้องขอของภาษาลาวบ่ายหน้อย.

เอกะสานอ้างอิง

ພาสาลาว:

ສີລາ ວີລະວົງ. *ວັດຈະນານຸກົມພາສາລາວ*,ພິມ ປີ 1960.

———— ໄວຍາກອນລາວພາກທີສອງ*ວະຈີວິພາກ*, ພິມເທື່ອທີໜຶ່ງ, ຄະນະกำมะการ ວັນນະຄະດີ.ພິມ ປີ 1935

ທອງຄຳ ອ່ອນມະນີສອນ, *ວັດຈະນານຸກົມລາວ*, ພິມ ປີ 2002.

ບົວລີ ປະພາພັນ ພ້ອມຄະນະ, ໄວຍາກອນລາວປັດຈຸບັນພາກທີສາມ*ວາກະຍະສຳພັນ*ກະຊວງສຶກສາທິການ, ສະถาบันค้นคว้าวิทยาศาสตร์การศึกษา แห่งชาติพิมปี 2000.

———— ພ້ອມຄະນະ, ພາສາລາວ. ວິທະຍາໄລວິທະຍາສາດພື້ນຖານ, ມະหาวิทยาไล แห่งชาติ พิม ปี 2002.

ປົງຄຳສີສຸວັນ ພ້ອມຄະນະ ໄວຍາກອນລາວປັດຈຸບັນພາກທີສອງ*ວາກະຍະສຳພັນ*ກະຊວງສຶກສາທິการ,สะถาบันค้นคว้าวิทยาศาสตร์การศึกษา แห่งชาติพิมปี 2000.

ພູມີວົງວິຈິດ. ປຶ້ມໄວຍາກອນລາວ, ພິມ ປີ 1967.

ภาษาไทย:

กันละยาตีงสะพัดม.ธ.อ. และอำมะลาปะสิดทิธัดถะสิน. การใช้คำร้องขอในภาษาไทสมัยรัตนโกสินทร์. กรุงเทพ: จุลาลงกรณ์มหาวิทยาไล, พส 2531.

จุดารัด โล่ตะกุนอัน. การปรับปรุงการใช้คำร้องขอในภาษาไทกับภาษาฝรั่ง. วิทยานิพนธ์ ค.ม. กรุงเทพ: จุลาลงกรณ์มหาวิทยาไล, พส 2536.

สุไธธัด ทานไชโยพูม. การใช้คำยืมภาษาของข้าราชการทหารบกไทในกรุงเทบมหานะคอม. วิทะยานิพิน. สส.ม. กรุงเทบ: มะหาวิทะยาไลทำมะสาด, พส 2536.

สุวิไล เปธมสิธัด และคะนะ. พาสาสาดเชิงสังคม, พิมที่โธงพิมสะถาบันวิทะยาสาดและเต็กโนโลยีแห่งปะเทดไท, พส2531.

คะธุนีปะกอบแสง. การใช้คำยืมภาษาในเมืองอุบินราชะทานี แขวงอุบินราชะทานี. วิทะยานิพิน กส.ม. มะหาสาธะคาม: มะหาวิทะยาไลมะหาสาธะคาม. พส 2542.

ปะธีชาดวังสะง่า. การใช้คำยืมภาษาในหมู่บ้านผู้ายพาสาที่บ้านสำโธงธะวี เขดสีแก้ว เมืองสีธัดตะนะ แขวงสีสะเกด, ลายงานการสึกสาค้นคว้าอิดสะฎะกส.ม. มะหาสาธะคาม: มะหาวิทะยาไลมะหาสาธะคาม. พส 2545.

อำมะธา ปะสิดทิธัดถะสิน. พาสาสาดสังคัม, กรุงเทบ: จุลาลังกอนมะหาวิทะยาไล, พส 2533.

———— พาสาในสังคัมไท ดอามผูากาผูาย การปุ่งแปง และการพัดทะนา, กรุงเทบ: สำนักพิมจุลาลังกอนมะหาวิทะยาไล, พส 2540.

———— พาสาในสังคัมไท ดอามผูากาผูาย การปุ่งแปง และการพัดทะนา, พิมถังที่ 3, กรุงเทบ: สำนักพิมจุลาลังกอนมะหาวิทะยาไล, พส 2540.

พาสาอังกิด:

Hymes, D.H. (1974)Foundations in Socialinguistics: An Ethnographic: Approach. Philadelphia: University of Pennsylvania press.

ภาษาที่ใช้ในนิทานสำหรับเด็ก[1]

โดย ดวงตา มะนิวัง[2]

ບົດຄັດຫຍໍ້

ບົດຄວາມນີ້ ມີຈຸດປະສົງສຶກສາການໃຊ້ຄຳໃນນິທານສຳລັບເດັກ ຈຳນວນ 44 ເລື່ອງ ໂດຍເລັ່ງໃສ່ການສຶກສາສອງດ້ານຄື ປະລິມານ ແລະຊະນິດຄຳທີ່ໃຊ້ໃນນິທານສຳລັບເດັກ. ຈາກການສຶກສາພົບວ່າ ປະລິມານຄຳໃຊ້ໃນນິທານສຳລັບເດັກທີ່ນຳມາວິເຄາະມີຄວາມເໝາະສົມຕາມລະດັບອາຍຸໂດຍແບ່ງເປັນດັ່ງນີ້: ກຸ່ມທີໜຶ່ງ: ມີປະລິມານການໃຊ້ຄຳບໍ່ເກີນ 500 ຄຳ, ມີຈຳນວນແຕ່ 158-493 ຄຳ ມີຈຳນວນ16 ເລື່ອງ ຊຶ່ງນິທານກຸ່ມນີ້ສອດຄ່ອງກັບເດັກອາຍຸ5-6ປີ (ເດັກນ້ອຍກ່ອນໄວຮຽນ) ເພາະກຸ່ມນີ້,ມີຄວາມອົດທົນຕໍ່ການກະທຳກິດຈະກຳໃດໜຶ່ງຂ້ອນຂ້າງສັ້ນ. ກຸ່ມທີສອງ, ມີປະລິມານການໃຊ້ຄຳສັບຫຼາຍກວ່າ 500 ຄຳ ມີຈຳນວນຄຳແຕ່ 517-1298ຄຳ ມີຈຳນວນ28 ເລື່ອງ ນິທານກຸ່ມນີ້, ສອດຄ່ອງກັບເດັກອາຍຸ7-8ປີ(ປະຖົມສຶກສາ) ດ້ວຍເຫດຜົນວ່າ ເດັກກຸ່ມນີ້ມີຄວາມອົດທົນຕໍ່ການກະທຳກິດຈະກຳໃດໜຶ່ງໄດ້ຍາວຂຶ້ນກວ່າກຸ່ມແຮກ. ສຳລັບການສຶກສາຊະນິດຄຳພົບວ່າ ຜູ້ຂຽນໃຊ້ຄຳເຄົ້າລາວ 90.11% ແລະຄຳປະສົມ 9.89%. ໃນນັ້ນ,ຍັງພົບຄຳປະສົມແບບລາວຈຳນວນຫຼາຍກວ່າຄຳປະສົມແບບປາລິສັນສະກິດ ແລະເປັນຄຳທີ່ເດັກເຄີຍໄດ້ສຳຜັດແລ້ວໃນຊີວິດປະຈຳວັນ. ສະຫຼຸບໄດ້ວ່າຜູ້ຂຽນນິທານສຳລັບເດັກໃນນິທານທີ່ນຳມາວິເຄາະໃຊ້ຄຳໄດ້ເໝາະສົມກັບຜູ້ອ່ານ ໂດຍສະເພາະເດັກນ້ອຍອາຍຸ8-9ປີຫຼືເດັກນັກຮຽນປີທີ 2 ແລະ3.

ABSTRACT

The purpose of this study was to analyze the words in tales for children. This study selected on forty-four stories focused on two aspect: analyze the numbers of word, and Kind of words usaged in tales for children.

The study number of words in tales selected for study found that divide two group for suitable following:

Group one, the tales have had not over 500 words. the tales selected for study found that, 16 stories to used 158-493 words, this groups were suitable with children age 5-6 year old(kindergarten and before elementary education), because this group they were to be interest very short on to do something. Group two, the

---

[1] ບົດຄວາມນີ້ ເປັນສ່ວນໜຶ່ງຂອງວິທະຍານິພົນ ປະລິນຍາໂທ ສາຂາວິຊາພາສາລາວຫົວຂໍ້"ວິເຄາະວິທີຂຽນ ແລະພາສາໃນນິທານສຳລັບເດັກ" ຊຶ່ງຢູ່ລະວ່າງການດຳເນີນການຄົ້ນຄວ້າຢູ່

[2] ນິສິດປະລິນຍາໂທ ສາຂາວິຊາພາສາລາວ,ພາກວິຊາພາສາລາວ-ສື່ສານມວນຊົນ ຄະນະອັກສອນສາດ ມະຫາວິທະຍາໄລແກ່ງຊາດ ວິທະຍາເຂດດົງໂດກ.

tales have words in tales over 500, the tales selected for study found that, 28 stories to used In 517-1298,this groups were suitable with children age 7-8 year old (elementary education:2-3 year), reason that, this group they were to be interest for to do something long more than first group. The kind of words in tales, found author using common-words 90.11% and 9.89% for compound-words. Inside, found that most compound-words Lao style and found minority of compound-words Pali-sanskrit style. The resold that, the Authors using kind easy words to tales suitable for reader, particularly, the children group 8-9 year old or elementary education:2-3 year.

1. ຄວາມເປັນມາຂອງບັນຫາ

ການພັດທະນາປະເທດຊາດ, ບໍ່ວ່າຈະດ້ານການເມືອງ, ເສດຖະກິດ, ສັງຄົມ ຫຼືດ້ານອື່ນໆ ຈຳເປັນຕ້ອງພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນະພາບທັງໃນດ້ານແນວຄິດ, ຄຸນສົມບັດ, ທັດສະນະຄະຕິ ແລະ ຄວາມຮູ້ຄວາມສາມາດ ຊຶ່ງການພັດທະນາຄົນນັ້ນຈະຕ້ອງເລີ່ມພັດທະນາຕັ້ງແຕ່ໄວເດັກ ໂດຍໃຫ້ຄວາມຈະເລີນງອກງາມທາງດ້ານຄວາມຮູ້, ຄວາມຄິດ, ສະຕິປັນຍາ, ວິຈາລະນະຍານ ແລະ ມີສະພາບຈິດໃຈ ພ້ອມທີ່ຈະເປັນຜູ້ໃຫຍ່ໃນອະນາຄົດ, ເປັນກຳລັງແຮງຂອງຊາດ, ເປັນຫຼັກໃຫ້ຕົນເອງ ແລະ ສັງຄົມ(ວິລະວັນ ມີສັນພະວົງ 2536,1). ດ້ວຍເຫດນັ້ນ, ທຸກອົງກອນໃນສັງຄົມຕ່າງກໍມີເຈດຕະນາລົມທີ່ຈະສົ່ງເສີມການພັດທະນາເດັກເພື່ອເປັນການວາງຮາກຖານທີ່ໜັ້ນຄົງ-ຖາວອນໃຫ້ກັບເດັກນ້ອຍ ໂດຍການໃຫ້ເຂົາເຈົ້າໄດ້ຮຽນໜັງສືຢ່າງ ຕໍ່ເນື່ອງ ແລະທົ່ວເຖິງຕາມໂຄງຫຼັກສູດການສຶກສາໃນໂຮງຮຽນ. ເຖິງຢ່າງໃດກໍດີ, ໃນປະມວນຄວາມຮູ້ທີ່ເດັກໄດ້ຮຽນຮູ້ຢູ່ໂຮງຮຽນນັ້ນ ອາດຈະບໍ່ສາມາດສະໜອງໃນຫຼາຍສິ່ງທີ່ເດັກນ້ອຍຄວນຈະໄດ້ຮັບ ຫຼືເຂົາເຈົ້າຄວນຈະມີຢ່າງຄົບຖ້ວນ ຊຶ່ງສິ່ງທີ່ຈະຊ່ວຍຕໍ່ເຕີມເພີ່ມພູນໃຫ້ເດັກນ້ອຍມີຄວາມຮູ້, ຄວາມຄິດ ແລະ ທັກສະດ້ານຕ່າງໆໃຫ້ສົມບູນຍິ່ງຂຶ້ນນັ້ນ; ການໃຫ້ເຄື່ອງມືໃນການສະແຫວງຫາຄວາມຮູ້ ແລະ ປະສົບການທີ່ມີຄຸນະພາບນັ້ນ ກໍຄື ປຶ້ມອ່ານ ເພາະປຶ້ມອ່ານເປັນສິ່ງທີ່ຈະຊ່ວຍສົ່ງເສີມການພັດທະນາຄົນທີ່ດີທີ່ສຸດຢ່າງໜຶ່ງ ແລະ ປຶ້ມອ່ານເປັນສື່ທີ່ຈະສົ່ງເສີມຄວາມຮູ້, ຄວາມຄິດ ແລະ ຈິນຕະນາການໃຫ້ແກ່ເດັກ; ຍິ່ງເດັກອ່ານຫຼາຍ, ຄົ້ນຄວ້າຫຼາຍເທົ່າໃດຄວາມຮູ້, ຄວາມຄິດຂອງເດັກກໍກວ້າງໄກຫຼາຍຂຶ້ນເທົ່ານັ້ນ (ສຸກມົງຄົນ ພົດທິຣະມົນຕຣີ (2542,1).

ຂະບວນການສົ່ງເສີມການອ່ານໃນ ສປປ ລາວເມື່ອຫຼາຍທົດສະວັດຜ່ານມານີ້,ໄດ້ເປັນຮູບປະທຳຫຼາຍຂຶ້ນເຊັ່ນ ໂຄງການສົ່ງເສີມການອ່ານແຫ່ງຊາດທີ່ສະໜັບສະໜູນໂດຍອົງການຊ່ວຍເຫຼືອເດັກນ້ອກແວ, ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງປະເທດຍີ່ປຸ່ນ, ອົງການຮູມທູຣິດ ແລະ ອື່ນໆ ຄຽງຄູ່ກັນນັ້ນ ການສ້າງປຶ້ມອ່ານສຳລັບເດັກກໍໄດ້ຮັບການເອົາໃຈໃສ່ຈາກຫຼາຍຝ່າຍ,ມີປຶ້ມອ່ານສຳລັບເດັກຈຳນວນຫຼວງຫຼາຍປາກົດອອກມາ. ນອກຈາກນີ້,ຍັງມີນັກຂຽນເລື່ອງສຳລັບເດັກຈຳນວນບໍ່ໜ້ອຍທີ່ສ້າງສັນຜົນງານອອກວາງຈຳໜ່າຍຕາມຮ້ານຂາຍປຶ້ມທົ່ວໄປ. ຈາກການຂະບວນການສົ່ງເສີມການອ່ານດັ່ງທີ່ກ່າວມານັ້ນເຮັດໃຫ້ປຶ້ມອ່ານຖືກພິມອອກຮັບໃຊ້ສັງຄົມນັບມື້ນັບຫຼາຍ ອັນເຮັດໃຫ້

ປະລິມານປຶ້ມອ່ານສຳລັບເດັກ ບໍ່ວ່າຈະເປັນນິທານ, ປຶ້ມຮູບພາບ, ການຕູນ, ຕະຫຼອດເຖິງປຶ້ມສົ່ງເສີມການເຝິກທັກສະດ້ານຕ່າງໆໄດ້ເພີ່ມຈຳນວນຂຶ້ນ ແລະສື່ສິ່ງພິມເຫຼົ່ານັ້ນ ມີຮູບແບບ ແລະ ສີສັນສວຍງາມ, ຮູບເຫຼັ້ມແຂງແຮງ, ທົນທານ ແລະມີເນື້ອຫາສາລະອັນ ຫຼາກຫຼາຍ ນັບວ່າເປັນຄວາມໂຊກດີຂອງເດັກນ້ອຍລາວທີ່ຈະມີປຶ້ມໃຫ້ເລືອກອ່ານໄດ້ຕາມໃຈມັກ.

ຈາກຄວາມຫຼາກຫຼາຍຂອງປຶ້ມອ່ານສຳລັບເດັກດັ່ງກ່າວນັ້ນ ຫາກເບິ່ງໃນທາງຄຸນະພາບ ກໍຍັງບໍ່ທັນມີຂໍ້ມູນທີ່ຢືນຢັນເປັນລາຍລັກອັກສອນວ່າ ປຶ້ມທີ່ເດັກນ້ອຍໄດ້ອ່ານຜ່ານມາ ຫຼືກຳລັງຈະເປີດອ່ານຢູ່ນັ້ນ ມີຄຸນຄ່າດ້ານຕ່າງໆເໝາະສົມກັບເດັກນ້ອຍໜ້ອຍຫຼາຍປານໃດ, ປຶ້ມນິທານລຳລັບເດັກເຫຼັ້ມໃດ, ເລື່ອງໃດທີ່ເດັກນ້ອຍນິຍົມຊົມຊອບ ຫຼືເລື່ອງໃດເຫຼັ້ມໃດທີ່ເດັກອ່ານໜ້ອຍ ຫຼືບໍ່ມັກ, ດ້ວຍເຫດຜົນໃດດັ່ງນີ້ເປັນຕົ້ນ ຊຶ່ງຄຳຕອບຂອງຄຳຖາມເຫຼົ່ານັ້ນ ກໍຕ້ອງໄດ້ມາຈາກຜົນແຫ່ງການສຶກສາຄົ້ນຄວ້າຕາມຂະບວນການທາງວິທະຍາສາດ. ແຕ່ໃນ ສປປ ລາວ ຍັງນັບວ່າຂາດແຄນນັກຄົ້ນຄວ້ານັກວິໄຈໃນດ້ານນີ້ ຊຶ່ງກໍແນ່ນອນວ່າເອກະສານ ຫຼືບົດວິໄຈທີ່ກ່ຽວຂ້ອງກັບປຶ້ມອ່ານສຳລັບເດັກກໍຫາຍາກດັ່ງດຽວກັນ ຈຶ່ງບໍ່ສາມາດເວົ້າໄດ້ວ່າປຶ້ມນິທານທີ່ມີໃນປັດຈຸບັນມີຄວາມເໝາະສົມ ຫຼືບໍ່ປະການໃດ ຊຶ່ງການສົ່ງເສີມການອ່ານໃຫ້ເດັກນ້ອຍເຍົາວະຊົນລາວແມ່ນສິ່ງທີ່ຈຳເປັນ ແຕ່ຈະຕ້ອງມີສື່ສິ່ງພິມຫຼືປຶ້ມອ່ານທີ່ດີ ແລະ ມີຄຸນະພາບຈຶ່ງຈະເຮັດໃຫ້ເຈຕະນາລົມແຫ່ງການສົ່ງເສີມນັ້ນບັນລຸເປົ້າໝາຍຢ່າງມີປະສິດທິຜົນ, ການກ້າວໄປສູງຄຸນະພາບຂອງປຶ້ມອ່ານສຳລັບເດັກນັ້ນ ກໍຍ່ອມອີງອາໄສຫຼາຍປັດໄຈມີຄວາມກ່ຽວຂ້ອງພົວພັນກັບພາກສ່ວນຫຼາຍອົງການຈັດຕັ້ງສັງຄົມ; ບໍ່ວ່າດ້ານນັກວິຊາການ, ນັກຄິດນັກຂຽນ, ນັກພັດທະນາ, ນັກຜະລິດ ຕະລອດເຖິງຜູ້ສະໜັບສະໜູນ ແລະ ທີ່ຂາດບໍ່ໄດ້ອີກປະການໜຶ່ງຄື ນັກຄົ້ນຄວ້າ ຊຶ່ງແຕ່ລະຝ່າຍທີ່ກ່າວມານັ້ນຈະຕ້ອງມີຫຼັກການ ແລະແນວທາງໃນການດຳເນີນການອັນດຽວກັນຄື ສ້າງປຶ້ມອ່ານໃຫ້ມີຄຸນຄ່າ ແລະຍຶດໝັ້ນຄວາມເໝາະສົມລະຫວ່າງຜູ້ສື່ສານຜູ້ຂຽນ)-ສານ(ເນື້ອຫາສາລະ) ແລະ ຜູ້ຮັບສານ(ຜູ້ອ່ານ)ດັ່ງນີ້ເປັນຕົ້ນ.

2. ຄວາມໝາຍຂອງປຶ້ມອ່ານສຳລັບເດັກ

ການໃຫ້ຄວາມໝາຍປຶ້ມນິທານສຳລັບເດັກທີ່ຈະແຈ້ງ ແລະ ປົກຄຸມນັ້ນຈະໃຫ້ຄວາມເຂົ້າໃຈກ່ຽວກັບເນື້ອແທ້ຂອງສື່ຊະນິດນີ້ຢ່າງແທດເຖິງຈະເປັນສິ່ງກະຕຸ້ນເຕືອນໃຫ້ຜູ້ຂຽນ ຫຼືຜູ້ສ້າງປຶ້ມສຳລັບເດັກໄດ້ປະຈັກໃນລັກສະນະສະເພາະໂຕຂອງມັນ ເພື່ອຫຼີກລ່ຽງການຂຽນປຶ້ມໃຫ້ເດັກອ່ານຢ່າງໄຮ້ຫຼັກເກນ, ຫຼີກຫ່າງປຶ້ມສຳລັບເດັກພຽງແຕ່ຊື່ທີ່ເປັນຂໍ້ຂຽນໄວ້ໜ້າປົກປຶ້ມອ່ານທີ່ປະກອບດ້ວຍຮູບພາບທີ່ສວຍງາມແຕ່ມີພາສາທີ່ເດັກນ້ອຍເຂົ້າໃຈຍາກຫຼືມີອົງປະກອບດ້ານອື່ນໆທີ່ບໍ່ເໝາະສົມ.

ໃນປັດຈຸບັນໄດ້ມີນັກຄົ້ນຄວ້າ ແລະ ນັກວິຊາການສົນໃຈສຶກສາຄົ້ນຄວ້າກ່ຽວກັບປຶ້ມອ່ານສຳລັບເດັກ ແລະ ພະຍາຍາມໃຫ້ຄວາມໝາຍຂອງປຶ້ມສຳລັບເດັກໄວ້ກວ້າງໆ ແລະມີຄວາມໝາຍໃກ້ຄຽງກັນວ່າ ປຶ້ມສຳລັບເດັກໝາຍເຖິງໜັງສືທີ່ຂຽນໃຫ້ເດັກ ໄດ້ເລືອກອ່ານເພື່ອຄວາມຮູ້, ຄວາມມ່ວນຊື່ນ ຫຼືເພື່ອໃຊ້ປະກອບການສຶກສາ; ມີເນື້ອໃຈຄວາມທີ່ເປັນປະໂຫຍດ, ໃຊ້ພາສາງ່າຍ ແລະເໝາະສົມກັບໄວຂອງເດັກ (ວິລະວັນ ສັນມີວົງ,2536:9-10) ແລະຈະຕ້ອງຂຽນໃຫ້ເດັກອ່ານຢ່າງມ່ວນຊື່ນ,

ອ່ານຢ່າງສົນໃຈ, ເພີ່ມພູນຄວາມສາມາດຈາກການອ່ານ ແລະເຂົ້າໃຈພາສາຈົນເກີດນິດໄສຮັກການອ່ານປຶ້ມ, ມີໂຄງເລື່ອງ ແລະການໃຊ້ພາສາບໍ່ສັບຊ້ອນເພື່ອໃຫ້ເດັກ ໄດ້ຂໍ້ຄິດແນວທາງທີ່ຖືກຕ້ອງ ເປັນປະໂຫຍດແກ່ຕົນເອງ ແລະສັງຄົມ; ພ້ອມທັງໄດ້ຮັບຄວາມສະໜຸກສະໜານໄປພ້ອມກັນ(ສຸພັດ ຊາ ບຸນປັນຍະໂຣດ,2544:9). ສະຫຼຸບແລ້ວ,ປຶ້ມອ່ານສຳລັບເດັກໝາຍ ເຖິງປຶ້ມທີ່ຂຽນຂຶ້ນເພື່ອໃຫ້ເດັກອ່ານ ຫຼືຟັງ, ມີເນື້ອໃນເລື່ອງທີ່ເປັນປະໂຫຍດ, ມີຮູບການແຕ່ງບໍ່ສັບສົນ, ມີຄວາມມ່ວນຊື່ນ; ພາສາທີ່ໃຊ້ໃນບົດເປັນພາສາງ່າຍ ແລະເໝາະສົມກັບເດັກ.

ຈາກຄວາມໝາຍຂອງປຶ້ມອ່ານສຳລັບເດັກດັ່ງທີ່ກ່າວມາຂ້າງເທິງນັ້ນສາມາດເວົ້າໄດ້ວ່າການຂຽນປຶ້ມອ່ານສຳລັບເດັກເປັນເລື່ອງທີ່ບໍ່ງ່າຍປານໃດ ເພາະນອກຈາກຜູ້ຂຽນຈະມີຄວາມຮູ້ໃນດ້ານພາສາ ແລະ ຫຼັກການຂຽນແຕ່ລະປະເພດບົດແລ້ວ ຍັງຕ້ອງມີຄວາມຮູ້ກ່ຽວກັບເດັກພໍສົມຄວນ ບໍ່ວ່າຈະເປັນດ້ານພັດທະນາການ, ການຮັບຮູ້, ຄວາມມັກຄວາມຕ້ອງການ, ລັກສະນະທາງສັງຄົມ ແລະ ຈິດຕະສາດຂອງເດັກນຳອີກ.

3. ພັດທະນາການຮັບຮູ້ພາສາຂອງເດັກນ້ອຍ

ການຮັບຮູ້ພາສາຂອງມະນຸດເປັນພັດທະນາການດ້ານການຮັບຮູ້ ແລະເຂົ້າໃຈພາສາຈາກການຟັງ, ການອ່ານ, ການເຫັນສີໜ້າທ່າທາງ. ການພັດທະນາຄວາມເຂົ້າໃຈດ້ານພາສາເກີດຈາກການທີ່ເດັກນ້ອຍເຊື່ອມສຳພັນສຽງທີ່ໄດ້ຍິນກັບສິ່ງທີ່ເຂົາເບິ່ງເຫັນ ແລະສຳຜັດຮັບຮູ້ໄດ້ໃນຂະນະດຽວກັນ ເຮັດໃຫ້ເກີດການຈື່ຈຳ ແລະເມື່ອໄດ້ຍິນຊ້ຳອີກຫຼາຍໆຄັ້ງກໍພັດທະນາຄວາມຄິດຮວມຍອດຂຶ້ນ.

ການຮັບຮູບພາສາຂອງເດັກນ້ອຍເປັນພັດທະນາການທີ່ເກີດຂຶ້ນບົນພື້ນຖານການພັດທະນາທາງດ້ານມັນສະໝອງ ອັນມີສະພາບແວດລ້ອມອ້ອມຕົວເດັກເປັນສິ່ງກະຕຸ້ນໃຫ້ເກີດການພັດທະນາຕາມໄວອາຍຸ ຊຶ່ງການພັດທະນາທີ່ນັກຈິດຕະສາດ ແລະນັກພາສາສາດໃຫ້ຄວາມສົນໃຈຢ່າງກວ້າງຂວາງມີສອງຢ່າງຄື(1) ການພັດທະນາດ້ານສະຕິປັນຍາແລະ (2)ການມີປະຕິສຳພັນທາງສັງຄົມ.

ການພັດທະນາດ້ານພາສາ ມີຄວາມສຳພັນກັບພັດທະນາການດ້ານອຸດທິປັນຍາ, ເດັກນ້ອຍຮຽນຮູ້ພາສາດ້ວຍຕົນເອງ.ໃນນັ້ນ,ຄວາມສາມາດຮຽນຮູ້ພາສາຂອງເດັກກໍມີຄວາມແຕກຕ່າງກັນ ຊຶ່ງຂຶ້ນກັບໄວອາຍຸເຊັ່ນ ເດັກນ້ອຍໃນໄວອາຍຸ2-4ປີເປັນໄວທີ່ເລີ່ມສ້າງສົມມຸດຖານກ່ຽວກັບສັນຍະລັກ ແລະປະສົບການກົງ (Symbolic stage)ເຊັ່ນ ເດັກອາບນ້ຳໃຫ້ຕຸກກະຕາເພາະເຫັນແບບຢ່າງຈາກພໍ່ແມ່ອາບນ້ຳໃຫ້ຕົນ; ເດັກນ້ອຍໄວນີ້ຍັງບໍ່ທັນເຂົ້າໃຈຄຳສັບ, ຄວາມໝາຍ ແລະ ສັນຍະລັກ (ວຣຣณธิภา ອຸนรัตน์ ອ້າງເຖິງPiaget,ແລະ Vigotsky,2551:8-9) ພັດທະນາການທາງພາສາຈະເກີດຂຶ້ນເມື່ອເດັກນ້ອຍມີການປະຕິສຳພັນ ລະຫວ່າງ ປະສົບການກັບສິ່ງແວດລ້ອມທີ່ກະຕຸ້ນໃຫ້ເດັກເປັນຜູ້ສະແຫວງຫາຄວາມຮູ້ດ້ວຍຕົນເອງຂຶ້ນມາ ໂດຍມີແມ່ເປັນຜູ້ຊ່ວຍເຫຼືອ. ລະບົບພາສາຂອງເດັກຈະຄ່ອຍໆພັດທະນາຂຶ້ນເລື້ອຍໆ. ຖ້າເດັກໄດ້ຢູ່ໃນສິ່ງແວດລ້ອມທີ່ເປັນຕົວຢ່າງທີ່ດີໃນການໃຊ້ພາສາ ເຊັ່ນ ການໃຊ້ຄຳເວົ້າທີ່ເໝາະສົມ, ການໃຊ້ພາສາຂຽນທີ່ຖືກຕ້ອງ, ສະອາດຮຽບຮ້ອຍ ສິ່ງດັ່ງກ່າວຈະສົ່ງຜົນສະທ້ອນໃຫ້ການພັດທະນາຄວາມສາມາດທາງພາສາຂອງເດັກນ້ອຍເພີ່ມພູນຂຶ້ນ.

4. ລັກສະນະພາສາໃນນິທານສຳລັບເດັກ

ປຶ້ມນິທານສຳລັບເດັກເປັນສື່ສິ່ງພິມທີ່ປະກອບດ້ວຍພາສາຂຽນ, ຮູບພາບປະກອບ ແລະສັນຍະລັກ ອັນມີຈຸດປະສົງເພື່ອໃຫ້ຄວາມມ່ວນຊື່ນ, ໃຫ້ຄວາມຮູ້ ເພື່ອເນັ້ນຢ້ຳທັກສະຊີວິດທີ່ເດັກນ້ອຍຍັງຂາດໄປໃຫ້ຄົບຖ້ວນສົມບູນຍິ່ງຂຶ້ນ ຊຶ່ງກໍແນ່ນອນວ່າຢາກບັນລຸຈຸດປະສົງທີ່ກ່າວມານີ້, ອົງປະກອບທີ່ສຳຄັນ ກໍຄືພາສາ. ໃນນັ້ນ,ສັບພາສາໃນນິທານສຳລັບເດັກຈະສະທ້ອນຄຸນຄ່າການສື່ຄວາມໝາຍຢ່າງເຕັມປ່ຽມນັ້ນ, ກໍຕໍ່ເມື່ອຜູ້ສົ່ງສານ(ຜູ້ຂຽນ)ມີທັກສະໃນການໃຊ້ມັນໃຫ້ເໝາະສົມກັບເນື້ອໃນເຫດການ ແລະ ເງື່ອນໄຂສະເພາະກຸ່ມຜູ້ຮັບສານ(ຜູ້ອ່ານ).

"ຄຳສັບ"ເປັນຫົວໜ່ວຍພື້ນຖານທີ່ສຳຄັນຍິ່ງໃນການຂຽນເລື່ອງສຳລັບເດັກ ແລະໃຊ້ຄຳສັບໃນວັນນະຄະດີສັບລັບເດັກນັ້ນ ຕ້ອງໃຊ້ຄຳທີ່ງ່າຍ, ເໝາະສົມກັບໄວຂອງເດັກນ້ອຍ, ໃຊ້ຄຳກົງຄວາມໝາຍ, ສັ້ນໆ, ງ່າຍໆ ຮັດກຸມ ແລະຖືກຕ້ອງຕາມຄວາມນິຍົມ. ພ້ອມນັ້ນ,ຍັງຄວນໃຊ້ຄຳໃຫ້ເໝາະສົມກັບເນື້ອເລື່ອງ, ການະເທສະຂອງບຸກຄົນ, ບໍ່ຄວນໃຊ້ພາສາຕະຫຼາດ, ພາສາສະແລງ ແລະພາສາຖິ່ນ(ຈັນທາ ພູ່ເງິນ ອ້າງ ສມศักดิ์ ศรีมาโนชน์,2549:69). ສະນັ້ນ, ຜູ້ຂຽນວັນນະກຳລັບເດັກຈຳເປັນຕ້ອງຮູ້ຈັກໃຊ້ພາສາໃຫ້ເໝາະກັບໄວ ແລະສັກກະຍະພາບຂອງເດັກນ້ອຍ ເພາະເດັກນ້ອຍແຕ່ລະໄວອາຍຸ ຍ່ອມເຂົ້າໃຈວົງຄຳສັບຫຼາຍ-ໜ້ອຍຕ່າງກັນ; ເດັກທີ່ອາຍຸຍັງອ່ອນຕ້ອງການພາສາທີ່ງ່າຍ-ອ່ານແລ້ວເຂົ້າໃຈທັນທີ,ແຕ່ເດັກທີ່ອາຍຸໃຫຍ່ຂຶ້ນວົງຄຳສັບກໍກວ້າງຂຶ້ນ,ພາສາກໍຍາກຂຶ້ນຕາມລຳດັບ;ເດັກນ້ອຍໄວອະນຸບານ 5-6 ປີ ສ່ວນຫຼາຍມີຄວາມສົນໃຈເລື່ອງໃດເລື່ອງໜຶ່ງບໍ່ດົນ. ການຂຽນເລື່ອງສຳລັບເດັກນ້ອຍເລື່ອງຈະຍືດຍາວບໍ່ໄດ້, ຄວນຈັບໃນເວລາອັນສັ້ນປະມານ2-3ໜ້າ ເພື່ອໃຫ້ຜູ້ອ່ານເກີດຄວາມຮູ້ສຶກວ່າຕົນສາມາດອ່ານຈົບໄດ້ໃນເລວາ2-3ນາທີ ແລະໄດ້ອ່ານເລື່ອງໆໃໝ່ແລ້ວ ແລະເກີດຄວາມກະຫາຍທີ່ຈະອ່ານຕໍ່ໄປດ້ວຍຄວາມພູມໃຈ.ດັ່ງນັ້ນ,ການຂຽນເລື່ອງສຳລັບເດັກໃນໄວນີ້, ຖ້າຈະໃຫ້ຍາວທີ່ສຸດກໍບໍ່ຄວນໃຫ້ເກີນ500ຄຳ; ສ່ວນເດັກນ້ອຍທີ່ມີອາຍຸສູງຂຶ້ນເລື່ອງຍ່ອມຍາວຂຶ້ນ ແລະຄຳສັບຫຼາຍຂຶ້ນ ຊຶ່ງອາດຈະມີຄຳສັບຍາວເຖິງ2000ຄຳ ຫຼື5000ຄຳ(ทวีศักดิ์ ญาณประทีป, 2537:65) ແຕ່ກໍຍັງມີບາງທັດສະນະເຫັນວ່າຈຳນວນຄຳບໍ່ສຳຄັນ,ແຕ່ຈຳນວນຄຳທັງໝົດທີ່ໃຊ້ທຸກຄຳຈະຕ້ອງມີຄວາມໝາຍຢ່າງປະທັບໃຈ, ພະລັງຂອງຄຳທີ່ເລືອກໃຊ້ຢ່າງຖືກຕ້ອງນັ້ນຍິ່ງໃຫຍ່ຫຼາຍ; ສິ່ງທີ່ສະແດງຄວາມແຈ່ມແຈ້ງໄດ້ດີທີ່ສຸດ ກໍຄືໃຊ້ຄຳຢ່າງປະຢັດ, ເລືອກໃຊ້ຖ້ອຍຄຳທີ່ຖືກຕ້ອງເທົ່ານັ້ນ; ອະລັຍາວຸບໍ່ຄວນນຳໄປໃຊ້ຫາກມີຄຳໂດດທີ່ໃຊ້ແທນໄດ້ນັ້ນກໍໝາຍວ່າ ອະລິບໍ່ຈຳເປັນ ແລະຖ້ອຍຄຳໄຮ້ປະໂຫຍດບໍ່ຄວນນຳມາໃຊ້ເລີຍ(ไพรถ เลิศพิริยกมล,ອ້າງເຖິງ ວິธะ สิธิสิง,2543:170). ໃນທັດສະນະທີສອງບໍ່ໄດ້ໃຫ້ຄວາມສຳຄັນກັບປະລິມານຄຳສັບໃນບົດແຕ່ສົນໃຈດ້ານຄຸນະພາບແລະຄວາມເໝາະສົມຂອງຄຳທີ່ໃຊ້ ຊຶ່ງເປັນການເບິ່ງບັນການດ້ານດຽວເພາະປະລິມານຄຳທີ່ໃຊ້ໃນບົດເປັນສິ່ງທີ່ຊ່ວຍຈຳກັດຄວາມຍືດຍາວຂອງບົດນິທານ ແລະ ຍັງເປັນຫຼັກໃຫ້ຄິດໃນເລື່ອງການໃຊ້ຄຳໃຫ້ປະຢັດແລະມີປະສິດທິພາບໄດ້ດີນຳອີກ.ອີກຢ່າງໜຶ່ງ,ພັດທະນາການຮັບຮູ້

ພາສາແມ່ຂອງເດັກນ້ອຍນັ້ນເລີ່ມຈາກການຮູ້ຄຳພຽງບໍ່ພໍເທົ່າໃດຄຳ ແລະຄ່ອຍໆຂະຫຍາຍວົງກວ້າງ ຂຶ້ນຕາມໄວອາຍຸ, ປະສົບການ ແລະສິ່ງກະຕຸ້ນຕ່າງໆຊຶ່ງການພັດທະນາ ຄຳສັບໃນເດັກແຕ່ລະໄວ ນັ້ນ, ດຳເນີນໄປຄຽງຄູ່ກັນລະຫວ່າງສຽງພາສາ, ຮູບຄຳ ແລະ ຄວາມໝາຍ; ນັ້ນກໍໝາຍຄວາມວ່າ ຂອບເຂດການເຂົ້າໃຈຄວາມໝາຍຂອງສັບພາສາຂອງເດັກນັ້ນຍ່ອມມີຂອບເຂດຈຳກັດ.

ສະຫຼຸບແລ້ວ, ການໃຊ້ຄຳໃນນິທານສຳລັບເດັກນັ້ນ, ຕ້ອງມີປະລິມານຄຳທີ່ເໝາະສົມກັບໄວ, ງ່າຍ, ສັ້ນໆ, ກົງຄວາມໝາຍ, ຄວາມໝາຍຖືກຕ້ອງ, ບໍ່ໃຊ້ຄຳຟຸມເຟືອຍລັກສະນະຄຳສ່ວນຫຼາຍມັກ ເປັນຄຳໂດດ,ແຕ່ຖ້າເປັນຄຳປະສົມກໍຕ້ອງເປັນຄຳທີ່ເດັກຮູ້ຈັກ ແລະ ຄຸ້ນເຄີຍ.

5. ວິເຄາະການໃຊ້ຄຳໃນນິທານສຳລັບເດັກ

ການໃຊ້ຄຳສັບໃນນິທານສຳລັບເດັກນັ້ນ,ຕ້ອງຄຳນຶງເຖິງຄວາມເຂົ້າໃຈຂອງເດັກເປັນປັດໄຈ ສຳຄັນ ເພາະວ່າເດັກນ້ອຍເປັນກຸ່ມຜູ້ອ່ານທີ່ມີປະສົບການດ້ານພາສານ້ອຍ; ຫາກຜູ້ຂຽນເລືອກໃຊ້ຄຳ ທີ່ງ່າຍ ແລະເໝາະສົມກັບໄວ, ໃຊ້ຄຳສັບທີ່ມີຄວາມໝາຍກົງ, ສັ້ນໆ, ງ່າຍໆມີຄວາມໝາຍແຈ່ມແຈ້ງ ແລະ ຖືກຕ້ອງຕາມຫຼັກໄວຍາກອນ ກໍຈະເຮັດໃຫ້ເດັກນ້ອຍເຂົ້າໃຈຂໍ້ຄວາມ ຫຼືສານທີ່ຜູ້ຂຽນສົ່ງໃຫ້ ໄດ້ງ່າຍຂຶ້ນ. ການວິສຶກສາການໃຊ້ຄຳສັບໃນປຶ້ມນິທານສຳລັບເດັກຄັ້ງນີ້, ຜູ້ວິໄຈຈະວິເຄາະບາງ ດ້ານເຊັ່ນ ປະລິມານຄຳສັບທີ່ໃຊ້ໃນນິທານແຕ່ລະເລື່ອງ ແລະຊະນິດຂອງຄຳ ອັນໄດ້ແກ່ ຄຳເຄົ້າ ແລະຄຳປສົມ. ທັງນີ້,ກໍເພື່ອສຶກສາເບິ່ງຄວາມສ່ອດຄ່ອງລະຫວ່າງຄຳສັບໃນປຶ້ມນິທານສຳລັບເດັກກັບ ທິດສະດີການໃຊ້ຄຳໃນການຂຽນປຶ້ມສຳລັບເດັກ ດັ່ງຈະວິເຄາະຕາມລຳດັບດັ່ງຕໍ່ໄປນີ້:

5.1 ປະລິມານຄຳສັບ

ປະລິມານຄຳສັບໝາຍເຖິງຈຳນວນຄຳທີ່ຜູ້ຂຽນນຳມາຮຽງເປັນຂໍ້ຄວາມເພື່ອສື່ຄວາມໝາຍ ຢ່າງໃດຢ່າງໜຶ່ງໃຫ້ຜູ້ອ່ານເຂົ້າໃຈກົງກັບຄວາມໝາຍທີ່ຜູ້ເວົ້າຕ້ອງການສື່. ປະລິມານຄຳສັບທີ່ໃຊ້ໃນນິ ທານເລື່ອງໃດເລື່ອງໜຶ່ງມີຄວາມສຳພັນກັບຄວາມສັ້ນຍາວຂອງບົດນິທານເລື່ອງໜຶ່ງໆ. ໃນທາງ ຈິດຕະສາດ ແລະ ພັດທະນາການຂອງເດັກ ເຊື່ອວ່າ ເດັກແຕ່ລະໄວມີຄວາມອົດທົນ ຫຼືຄວາມຕັ້ງ ໃຈຕໍ່ສິ່ງໃດສິ່ງໜຶ່ງໄດ້ຍາວນານ ຫຼື ສັ້ນຕ່າງກັນ; ຫາກບົດນິທານມີເນື້ອໃນຍາວເກີນໄປເດັກນ້ອຍໃນ ກຸ່ມເກນອາຍຸທີ່ມີຄວາມອົດທົນໜ້ອຍ ແລະມີຄວາມຕັ້ງໃຈສັ້ນ ກໍອາດຈະຢຸດກ່ອນຈະອ່ານຈົບຈະເຖິງ ຕອນຂອງເລື່ອງ ຊຶ່ງສອດຄ່ອງກັບ ທະວີສັກ ຍານປະທີບ(2537,46-47) ໄດ້ກ່າວເຖິງເລື່ອງນີ້ໄວ້ ໃນປຶ້ມ "ການຂຽນວັນນະກຳສຳລັບເດັກ"ວ່າບໍ່ວ່າຈະຂຽນເລື່ອງບັນເທີງຄະດີ(Fiction) ຫຼື ເລື່ອງ ສາລະຄະດີ(Non-fiction) ຜູ້ຂຽນຈະຕ້ອງຮູ້ຈັກຜູ້ອ່ານຂອງຕົນກ່ອນລົງມືຂຽນ; ໝາຍຄວາມວ່າຈະ ຕ້ອງເຂົ້າໃຈຈິດໃຈຂອງຜູ້ອ່ານວ່າຈະມັກຫຍັງຫຼາຍໜ້ອຍຢ່າງໃດ, ຈິດຕະວິທະຍາສຳລັບເດັກຈຶ່ງນັບ ເປັນສິ່ງຄວນຄຳນຶງເຖິງເຊັ່ນຮູ້ວ່າເດັກນ້ອຍໄວ 5-6 ປີ ສ່ວນຫຼາຍຈະມີຄວາມສົນໃຈເລື່ອງໃດເລື່ອງ ໜຶ່ງບໍ່ດົນ. ສະນັ້ນ,ການຂຽນເລື່ອງສຳລັບເດັກໄວນີ້ເລື່ອງຈະຍາວຫຼາຍບໍ່ໄດ້; ຄວນໃຫ້ຈົບລົງໃນ ເວລາອັນສັ້ນ(2-3ໜ້າ)ເພື່ອໃຫ້ຜູ້ອ່ານເກີດຄວາມຮູ້ສຶກວ່າຕົນສາມາດອ່ານຈົບໄດ້ໃນເວລາ2-3ນາທີ

ກໍໄດ້ເປີດອ່ານເລື່ອງໃໝ່ອີກແລ້ວ, ກະຕືລືລົ້ນທີ່ຈະອ່ານຕໍ່ໄປດ້ວຍຄວາມພໍໃຈ ແລະພູມໃຈ; ການຂຽນຈຶ່ງຂຽນຢ່າງງ່າຍທີ່ສຸດ. ເລື່ອງສຳລັບເດັກໄວນີ້, ຖ້າຈະໃຫ້ຍາວທີ່ສຸດກໍບໍ່ຄວນເກີນ 500ຄຳ. ສຳລັບດັກອາຍຸສູງຂຶ້ນຍ່ອມຈະສົນໃຈເລື່ອງຍາວຂຶ້ນໄດ້ເຊັ່ນ ເລື່ອງອາດຈະຍາວເຖິງ 2000ຄຳ ຫຼື 5000ຄຳ. ຈາກການວິເຄາະນິທານສຳລັບເດັກ 44 ເລື່ອງພົບວ່າ ນິທານແຕ່ລະເລື່ອງມີຈຳນວນການໃຊ້ຄຳສັບບໍ່ເທົ່າກັນດັ່ງນີ້:

ກຸ່ມທີໜຶ່ງ, ເປັນນິທານທີ່ມີຄຳສັບບໍ່ເກີນ 500ຄຳ; ມີຈຳນວນ 16 ເລື່ອງຊຶ່ງເປັນປະລິມານຄຳທີ່ເໝາະແກ່ຜູ້ອ່ານອາຍຸ 5-6ປີ (ກ່ອນໄວຮຽນ ຫຼື ໄວອະນຸບານ) ດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ (1)

ຈ.ນ	ຊື່ເລື່ອງ	ຈ.ນ	ຊື່ເລື່ອງ
158	ປາຄໍ່ນ້ອຍບໍ່ຟັງຄວາມ	424	ຄາຖາໃຈປ່ອງ
260	ໝູແລະແມວ	424	ຈາວາຊອກເຂັ້ມ
303	ແຮ້ງຄໍຄຳ	429	ແມ່ກົບຊອກລູກ
317	ຊ່ວຍສັດຕູເປັນມິດມີພິດແກ່ຕົນ	452	ຫອຍໃຈເພັດເປັດໃຈຄົດ
369	ກະຕ່າຍກະຕັນຍູ	457	ລໍຄອຍຄຳຕອບ1
386	ໝີນ້ອຍບໍ່ມັກສະອາດ	488	ຄວາມຄິດຂອງເປັດນ້ອຍ
394	ເສືອໃຈຮ້າຍນົກອົ່ງໃຈດີ	492	ພະຍາແມ່ງກະເບື້ອ
409	ທ້າວກ່ຳກັບຝູງນົກແອ່ນ	493	ແກະນ້ອຍສະຫຼາດ

ຈາກຕາຕະລາງ(1) ເຫັນວ່ານິທານທັງ16 ເລື່ອງມີການໃຊ້ຄຳໃນປະລິມານທີ່ເໝາະສົມກັບເດັກກ່ອນໄວຮຽນ5-6 ປີ ແລະ ເໝາະທີ່ຈະເປັນປຶ້ມນິທານສຳລັບອ່ານໃຫ້ເດັກນ້ອຍຟັງຫຼາຍກວ່າໃຫ້ເດັກນ້ອຍອ່ານດ້ວຍຕົນເອງ. ໃນຈຳນວນ 16 ເລື່ອງ,ໃນນັ້ນເປັນປຶ້ມນິທານສຳລັບເດັກນ້ອຍປະກອບພາບເພື່ອລະບາຍສີ 05ເລື່ອງ ໂດຍມີຜູ້ອ່ານກຸ່ມເປົ້າໝາຍເປັນເດັກນັກຮຽນປະຖົມປີທີ 1 ແລະ ປີທີ2. ເຖິງຢ່າງໃດກໍຕາມ, ການວິເຄາະປະລິມານຄຳສັບການໃຊ້ຄຳສັບໃນນິທານສຳລັບເດັກໃນບົດຄົ້ນຄວ້ານີ້, ເປັນພຽງການຄົ້ນຫາຄວາມເໝາະສົມລະຫວ່າງປະລິມານການໃຊ້ຄຳ ແລະຄວາມເໝາະສົມດ້ານພັດທະນາການທີ່ກ່ຽວພັນກັບຈິດຕະວິທະຍາເດັກແຕ່ລະໄວຕາມທິດສະດີເທົ່ານັ້ນ, ແຕ່ຍັງບໍ່ສາມາດຊີ້ຂາດໄດ້ວ່າ ນິທານສຳລັບເດັກຈຳນວນ 16 ເລື່ອງທີ່ໃຊ້ຄຳບໍ່ເກີນ 500 ຄຳ ທີ່ປາກົດໃນທີ່ນີ້, ເປັນນິທານທີ່ເໝາະກັບຜູ້ອ່ານຕາມຜົນທີ່ວິເຄາະແທ້ຫຼືບໍ່ ເພາະວ່າຫາກກ່າວເຖິງຄວາມເໝາະສົມກໍຕ້ອງໄດ້ກ່າວເຖິງຄວາມເຂົ້າໃຈ;ຫາກເວົ້າເຖິງຄວາມເຂົ້າໃຈກໍບໍ່ອາດຈະລະເລີຍຕໍ່ອົງປະກອບຕ່າງໆທາງດ້ານພາຫະນະພາສາ ນັບທັງສະພາບແວດລ້ອມຂອງເດັກນຳອີກ ແລະ ການສຶກສາຄັ້ງນີ້ບໍ່ໄດ້ເຮັດການສຳຫຼວດ ຫຼື ແບບສອບຖາມຕາມແບບການຄົ້ນຄວ້າພາກສະໜາມ.

ກຸ່ມທີສອງ,ເປັນກຸ່ມນິທານທີ່ມີການໃຊ້ຄຳຫຼາຍກວ່າ 500 ຄຳສັບ ມີຈຳນວນ 28 ເລື່ອງ ຊຶ່ງເໝາະກັບຜູ້ອ່ານໃນເກນອາຍຸ 7-8 ປີ (ປະຖົມປີທີ1 ແລະປີ2) ໄດ້ແກ່ເລື່ອງລຸ່ມນີ້:

ຕາຕະລາງ (2)

ຈ.ນ	ຊື່ເລື່ອງ	ຈ.ນ	ຊື່ເລື່ອງ
517	ງູເປັນນາຍກະຕ່າຍເປັນເຈົ້າ	678	ກະຕ່າຍອວດເກັ່ງ
518	ຜີແມງໄມ້	702	ທ້າວຫຳນ້ອຍ
526	ກວາງກັບກະຕ່າຍ	771	ເປັດໂລພາປາສະຫຼາດ
533	ລູກນົກກັບແມວໂພງ	791	ເສືອຕາຍຍ້ອນງູເຫຼືອມ
539	ແມ່ນ້ຳຫາຍຕົວ	800	ນ້ອຍກໍດາຍແຕ່ຮ້າຍກວ່າເສືອ
545	ວຸງກທີ່ບໍ່ຊຳນານ	820	ໝູນ້ອຍຂີ້ອວດ
556	ເສືອແລະແມວ	919	ສອງສ່ຽວ
579	ຊາວນາກັບພະຍາງູ	890	ລາຊາສາມຫົວ
578	ນົກເຈົ່າແລະປູ	975	ກວາງຜູ່ເສຍສະຫຼະ
612	ໂກນໄມ້ຂອງໃຜ	1039	ແມ່ທັບເອກ
615	ເຕົ່າວິເສດ	1057	ເລື່ອງຂອງເວນກຳ
618	ທ່ານກັບງູເຫົ່າ	1122	ເສືອແມ່ລູກອ່ອນສອນຄົນ
647	ຂີ້ເຂັບຊ່ວຍເພື່ອນ	1246	ຄ່າຂອງຄົນ
687	ເພື່ອນຮັກ	1298	ເສືອແຕກຝູງ

ຈາກຕາຕະລາງ(2) ເຫັນວ່າປະລິມານການໃຊ້ຄຳໃນນິທານສຳລັບເດັກທີ່ຫຼາຍກວ່າ 500ຄຳ ນັ້ນ,ເລີ່ມທີ 517 ຄຳສັບ ແລະ ສູງສຸດຄື 1298 ຄຳ;ຫາກອີງທັດສະນະຂອງທະວີສັກ ຍານປະທິບ ວ່າ"ສຳລັບເດັກອາຍຸສູງຂຶ້ນຍ່ອມຈະສົນໃຈເລື່ອງຍາວຂຶ້ນໄດ້ເຊັ່ນ ເລື່ອງອາດຈະຍາວເຖິງ2000ຄຳ ຫຼື 5000ຄຳ "ຊຶ່ງພົບວ່າເປັນປະລິມານຄຳທີ່ເໝາະສົມກັບເດັກທີ່ມີອາຍຸໃຫຍ່ກວ່າຜູ່ອ່ານກຸ່ມທີໜຶ່ງ.

ຈາກການສຶກສາມີປະລິມານຄຳສັບທີ່ປາກົດປຶ້ມນິທານສຳລັບເດັກ 44 ເລື່ອງ ເໝາະສົມກັບ ເດັກນ້ອຍໃນເກນອາຍຸສອງລະດັບ. ສິ່ງທີ່ໜ້າສົນໃຈ ປຶ້ມນິທານທີ່ນຳມາວິເຄາະສ່ວນຫຼາຍບໍ່ໄດ້ລະບຸ ເກນອາຍຸຂອງຜູ້ອ່ານ15 ເລື່ອງ(ນິທານສຳລັບເດັກປະກອບພາບເພື່ອລະບາຍສີ)ວ່າເປັນນິທານສຳ ລັບເດັກຊັ້ນອະນຸບານ ແລະ ປະຖົມປີທີ1-2 ແລະໃນຈຳນວນສິບຫ້າເລື່ອງນີ້ກໍມີການປະລິມານຄຳທີ່ ໃຊ້ສອດຄ່ອງກຸ່ມອາຍຸ5-6ປີ ຈຳນວນ04 ເລື່ອງ; ສ່ວນອີກ11ເລື່ອງສອດຄ່ອງກັບກຸ່ມອາຍຸ7-8ປີ.

5.2 ຊະນິດຄຳໃນນິທານສຳລັບເດັກ

ຄຳສັບເປັນຫົວໜ່ວຍພື້ນຖານຂອງພາສາ, ມີບົດບາດໃນການປະກອບສ່ວນເຂົ້າໃນການ ສ້າງຄວາມໃນຄວາມເວົ້າເພື່ອຕອບສະໜອງເຈດຕະນາໃນການຕິດຕໍ່ສື່ສານລະຫວ່າງກັນຂອງມະ

ນຸດ. ຄຳສັບໃນພາສາລາວມີຢ່າງຫຼວງຫຼາຍ ຄຳຈຳນວນໜຶ່ງກໍມີຄວາມໝາຍກົງ, ງ່າຍຕໍ່ການເຂົ້າໃຈ; ໃນນັ້ນກໍມີຄຳອີກຈຳນວນບໍ່ໜ້ອຍທີ່ມີຄວາມໝາຍຊ້ອນແຝງຊຶ່ງອາດເຂົ້າໃຈຍາກ ໂດຍສະເພາະເດັກນ້ອຍທີ່ມີຄວາມຮູ້ ແລະ ປະສົບການທາງພາສາບໍ່ກວ້າງ. ສະນັ້ນ,ການຂຽນນິທານໃຫ້ເດັກນ້ອຍອ່ານຈຶ່ງຈຳເປັນຕ້ອງເລືອກເຟັ້ນຖ້ອຍຄຳມາໃຊ້ໃຫ້ເໝາະກັບໄວ ແລະສັກກະຍະພາບຂອງເດັກ ຊຶ່ງສອດຄ່ອງກັບ ທະວີສັກ ຍານປະທີບ(2531,60) ກ່າວເຖິງການໃຊ້ພາສາໃນການຂຽນວັນນະກຳສຳລັບເດັກໄວ້ໃນປຶ້ມການຂຽນວັນນະກຳສຳລັບເດັກວ່າຜູ້ຂຽນວັນນະກຳສຳລັບເດັກຈຳເປັນຕ້ອງຮູ້ຈັກໃຊ້ພາສາໃຫ້ເໝາະສົມແກ່ໄວ ແລະສັກກະຍະພາບຂອງເດັກດ້ວຍ ໝາຍຄວາມວ່າເດັກໄວກ່ອນເຂົ້າໂຮງຮຽນ ແລະ ອະນຸບານພາສາທີ່ໃຊ້ຄວນເປັນພາສາທີ່ເຂົ້າໃຈງ່າຍ, ມັກເປັນຄຳໂດດ ຫຼືຄຳປະສົມທີ່ເດັກຄຸ້ນເຄີຍ; ຮູບຂອງຖ້ອຍຄຳພາສາຄວນສັ້ນ, ກະທັດຮັດ ແລະວາງໄລຍະຫ່າງຂອງແຖວ, ຕົວອັກສອນໂຕໃຫຍ່ ແລະ ມີຮູບພາບຫຼາຍກວ່າຖ້ອຍຄຳ". ຈາກການສຶກສາວິເຄາະນິທານສຳລັບເດັກ 44ເລື່ອງພົບວ່າ ຊະນິດຄຳເວົ້າທີ່ປາກົດໃນບົດນິທານທີ່ນຳມາວິເຄາະດັ່ງນີ້:



ຈາກແຜນວາດ(chart) ສະແດງເຖິງຈຳນວນຊະນິດຄຳທີ່ປາກົດໃນນິທານ 44 ເລື່ອງທີ່ນຳມາວິເຄາະພົບວ່າ ຜູ້ຂຽນນິຍົມໃຊ້ເດົ້າ 90.11% ແລະ ໃນຂະນະດຽວກັນກໍມີການໃຊ້ຄຳປະສົມ 9.89% ຂອງຈຳນວນຄຳທີ່ໃຊ້ທັງໝົດ. ຈາກຕົວເລກດັ່ງກ່າວສະແດງໃຫ້ເຫັນເຖິງພາບລວມຂອງການໃຊ້ຄຳໃນນິທານສຳລັບເດັກທີ່ນຳມາວິເຄາະວ່າ ຜູ້ຂຽນໃຊ້ຄຳທີ່ເຂົ້າໃນເກນງ່າຍຕໍ່ການເຂົ້າໃຈຂອງເດັກຫຼາຍກວ່າຄຳທີ່ຍາກຊຶ່ງຈະໄດ້ວິເຄາະການການໃຊ້ຄຳແຕ່ລະຊະນິດຄຳຕາມລຳດັບລຸ່ມນີ້:

1) ການໃຊ້ຄຳເດົ້າໃນນິທານສຳລັບເດັກ

ຄຳເດົ້າເປັນປະມວນຄຳສັບທີ່ນອນຢູ່ໃນຄັງຄຳສັບຂອງພາສາລາວຊຶ່ງນັກໄວຍາກອນ ກໍຄືນັກພາສາສາດລາວຕ່າງກໍຮັບຮູ້ໃນຄວາມເປັນເອກະລັກດ້ານໂຄງສ້າງຂອງຄຳ, ຮັບຮູ້ໃນຄວາມຫຼາກຫຼາຍໃນແງ່ຄວາມໝາຍນຳໃຊ້ ແລະຮັບຮູ້ໃນຄວາມກະທັດຮັດ, ງ່າຍດາຍ ແຕ່ຄວາມມີປະສິດທິ

ພາບ ເມື່ອມັນປະກອບສ່ວນເຂົ້າເພື່ອສ້າງຄວາມໝາຍໃນບໍລິບົດໃດບໍລິບົດໜຶ່ງຂອງການສື່ສານ. ຕໍ່ກັບເລື່ອງນີ້,ປິງຄຳ ສີສຸວັນ(2000,4)ໄດ້ກ່າວເຖິງຄວາມໝາຍຂອງຄຳເຄົ້າໄວ້ໃນປຶ້ມໄວຍາກອນປັດຈຸບັນສຳລັບໂຮງຮຽນສາມັນສຶກສາວ່າ " ຄຳເຄົ້າ ແມ່ນຄຳເວົ້າໜຶ່ງທີ່ມີຄວາມໝາຍຢ່າງໜຶ່ງມາຕັ້ງແຕ່ດັ້ງເດີມ; ການຜັນສຽງ ຫຼືການຂຽນບາງຄຳອາດຈະຄືກັນ ແຕ່ດ້ານຄວາມໝາຍບໍ່ແມ່ນອັນດຽວກັນ ເຮົາຈຳແນກໄດ້ໂດຍອາໄສຂໍ້ ຄວາມ ຫຼືເນື້ອໃນທີ່ກ່ຽວຂ້ອງກັບຄວາມເວົ້ານັ້ນ. ໃນນັ້ນ,ຄຳເຄົ້າແບ່ງເປັນສອງຊະນິດຄື ຄຳເຄົ້າລາວເດີມ ແລະຄຳເຄົ້າທີ່ມາຈາກພາສາປາລີສັນສະກິດ ໂດຍໃຫ້ຄວາມໝາຍແຕ່ລະຊະນິດໄວ້ ຄື ຄຳເຄົ້າລາວເດີມແມ່ນຄຳທີ່ເປັນມໍລະດົກຕົກທອດມາຈາກບັນພະບຸລຸດລາວເຮົາ. ຄຳເຄົ້າລາວເດີມສ່ວນຫຼາຍເປັນຄຳປ່ຽວ ຫຼືຄຳໂດດມີພະຍາງດຽວເຊັ່ນ ພໍ່, ແມ່, ອ້າຍ, ນ້ອງ, ບ້ານ, ເມືອງ, ດິນນ້ຳ, ໄຟ, ລົມ, ງົວ, ຄວາຍ...ສ່ວນຄຳເຄົ້າມາຈາກພາສາປາລີ-ສັນສະກິດເປັນຄຳທີ່ມີຄຳທີ່ມີແຕ່ສອງພະຍາງຂຶ້ນໄປເຊັ່ນ ນະຄອນ, ອາໄສ, ປະເທດ, ລາຊາ,...

ການໃຊ້ຄຳເຄົ້າໃນນິທານສຳລັບເດັກດັ່ງປາກົດແຜນວາດ ສະແດງໃຫ້ເຫັນວ່າຄຳສ່ວນຫຼາຍເປັນຄຳເຄົ້າ ກວມເຖິງ 90.11% ຂອງຈຳນວນຄຳທີ່ໃຊ້ທັງໝົດໃນນິທານສຳລັບເດັກຈຳນວນ 44 ເລື່ອງ. ຄຳສ່ວນຫຼາຍກໍເປັນຄຳເຄົ້າລາວເດີມທີ່ມີຄວາມໝາຍງ່າຍ ແລະຖືກນຳໃຊ້ໃນຊີວິດປະຈຳວັນຢ່າງກວ້າງຂວາງ. ໃນນັ້ນ,ກໍມີຄຳເຄົ້າຈາກພາສາປາລີ-ສັນສະກິດປາກົດແດ່ເລັກນ້ອຍ, ແຕ່ຄຳເຫຼົ່ານັ້ນກໍເປັນຄຳທີ່ຖືກນຳໃຊ້ກັນຢ່າງກວ້າງຂວາງແລ້ວເຊັ່ນດຽວກັນ. ສະນັ້ນ,ຜູ້ອ່ານກຸ່ມເປົ້າໝາຍທີ່ເລີ່ມມີການຮຽນຮູ້ພາສາຈາກການຕິດຕໍ່ສື່ສານໃນສັງຄົມ, ຄອບຄົວ ແລະ ໂຮງຮຽນຈະສາມາດຮັບຮູ້, ເຂົ້າໃຈຄວາມໝາຍຂອງຄຳ ແລະຖ້ອຍຄຳເຫຼົ່ານັ້ນໄດ້ບໍ່ຍາກປານໃດຊຶ່ງຈະຍົກມາວິເຄາະໃນທີ່ນີ້ຈຳນວນໜຶ່ງດັ່ງນີ້:

(1) ຍ້ອນເສືອຢາກມີວິຊາໃນການຈັບສັດມາເປັນອາຫານຈຶ່ງອ້ອນວອນນຳແມວວ່າ:"ແມວເອີຍ! ເຮົາເປັນເພື່ອນກັນມາກໍດົນແລ້ວ,ທຸກມື້ນີ້ ເຮົາອາໄສກິນນຳແຕ່ເຈົ້າ,ຖ້າເຮົາຮູ້ວິທີຈັບສັດ ເຮົາຈະໄປຊອກຫາອາຫານທີ່ແຊບກວ່ານີ້ມາສູ່ເຈົ້າກິນ.

(ເສືອແລະແມວ.2004,3)

(2) ...ຫຼັງຈາກນັ້ນລາຊາເສືອ ກໍປະກາດຕໍ່ໜ້າຝູງເສືອວ່າ:" ພວກເຮົາຕ້ອງໄດ້ປະຕິບັດຕາມເງື່ອນໄຂຂອງການລອງປັນຍາກັບປາຄໍ່, ດຽວນີ້ພວກເຮົາບໍ່ແພ້ປາຄໍ່ແລ້ວ. ຕໍ່ໄປນີ້ພວກເຮົາບໍ່ຕ້ອງລົງໄປອາບນ້ຳໃນໜອງນັ້ນອີກ ແລະ ພວກເຮົາກໍບໍ່ຕ້ອງກິນຫຍ້າ ແລະ ພືດຜັກເປັນອາຫານອີກ".

(ເສືອແຕກາຝູງ.2007,18)

2) ການໃຊ້ຄຳປະສົມ

ຄຳປະສົມກໍເປັນຄຳອີກຊະນິດໜຶ່ງທີ່ຜູ້ຂຽນນຳໃຊ້ເຂົ້າໃນນິທານສຳລັບເດັກຂອງຕົນ ຊຶ່ງຄຳຊະນິດນີ້,ຈັດໄດ້ວ່າມີຄວາມສັບຊ້ອນກວ່າຄຳເຄົ້າ ເພາະວ່າເປັນການນຳຄຳເຄົ້າສອງຄຳມາປະສົມກັນເພື່ອໃຫ້ໄດ້ຄວາມໝາຍຢ່າງໃດຢ່າງໜຶ່ງ, ອາດຈະເພື່ອໃຫ້ຄວາມໝາຍແຈ້ງຂຶ້ນ ຫຼືໃຫ້ໄດ້ຄວາມໝາຍ

ใหม่ที่ต่างจากเดิม ดั่งปิงคำ สิสุวัน(2000,13)ได้ก่าวเถิงความพายคำปะสมไว้ว่า“ คำปะสมแม่นการเอาสองคำมาปะสมกันให้เป็นคำดุง แต่คำปะสมอาดมีพายลักสะนะแตกต่างกัน; บางเที่ออาดเอาคำเค้าพึ่งมาเป็นกิก แล้วเอาคำป่งอื่นมาติ่มใส่เพื่อเร็ดให้ความพายของคำเดิมแจ้งขึ้น. คำปะสมนี้, เป็นคำที่มีสองพะยางขึ้นไป(สะเพาะคำลาวเดิม); ถ้าเป็นคำปะสมที่มาจากพาสาปาลิ-สันสะกิดนั้น,เป็นคำที่มีแต่สามพะยางขึ้นไป”. เอ้าลอมแล้อ, คำปะสมเป็นคำที่มีพายพะยางซึ่งการจะนำใช้คำขะนิดนี้,ในนิทานสำสับเด็กจึ่งต้องคำนึงเถิงความเข้าใจของกุ่มผู้อ่านเป็นสำคัน; ถ้าใช้คำที่เด็กบ่คุ้นเคย หรือคำสับที่เด็กน้อยบ่รู้จักก็จะเร็ดให้เด็กเข้าใจยาก หรืออาดจะบ่เข้าใจความพายของคำนั้นๆ ได้ตามเจดตะนาที่ผู้ขียนต้องการสื่ความพายให้.

จากการวิเถาะนิทานสำลับเด็กทั่ง 44 เลื่อง พิบว่าใช้คำปะสมพียงแต่ 9.89% และ คำปะสมส่วนพายก็เป็นคำที่ได้มาจากคำเค้าลาวเดิมปะสมกัน หรือ ปะสมละหว่างคำเค้าลาวเดิมกับคำเค้าปาลิ-สันสะกิด; ส่วนคำปะสมพาสาปาลิ-สันสะกิดด้วยกันก็พิบแด่เล็กพ้อยในบางเลื่อง แต่คำเพื่านั้นส่วนพายก็เป็นคำที่ถืกนำใช้กันย่างกว้างขวางในชิวิดปะจำวันของผู้อ่านจึ่งบ่พ้าจะเป็นบันหาต่ำกับการเข้าใจของเด็กน้อย ดั่งต๊อย่างลุ่มนี้:

(3) พ้สยงงบสะหงัดลิงก่ำเห็นผีแมงไม้โตบักใหย่ดำปึกเต็มไปด้วยขนยาว ตาใหย่สอด และแดงจ่ายอ่ายปากพากเผ็ดสุกโปโลออกมาจากผา

(วงกที่บ่ชำนาน.2007,9)

(4) ยู่ในป่าแห่งหึ่ง,มีเสือ,กะต่าย และงูเหลือมใหย่เถียกาก็นร่วมกันเป็นเอลาถ่ินนานแล้อ.

(เสือตายย้อนงูเหลือม.2008,4)

(5) มีบ้านแห่งหึ่งตั้งยู่แถมน้ำ,ชาวบ้าน พากันถิ้มขี้เหยื่อ และเปิ่งน้ำเปื้อนลิงแม่น้ำ. นอกจากนั้น ก่ำยังมีคนลักแกว่างละเบิดใส่ปา,เป็นสาเหดเร็ดให้แม่น้ำเปิเปื้อน.

(แม่น้ำหายต๊อ.2007,1)

(6) จากนั้น,หมูก็พาเต่าเข้าไปในเรือนถ้อ ซึ่งเต็มไปด้วยอาหานพายย่างมีทั่ง พาก ก้อยที่เจ้าของเพิ่นก็นเหลือปะไว้ในตู้.

(หมูน้อยขี้ออด.2007,7)

นอกจากคำปะสมลาวเดิมแล้อ,ยังปากดมีคำเค้าที่มาจากพาสาอื่นอีกาจำนอนหึ่ง. ดั่งต๊อย่างลุ่มนี้:

(7) ຫຼັງຈາກໝໍຜີເປົ່າ,ແດງກໍຊວ່າງເຊົ້າຊົ່ວຄາວ.ຢູ່ມາບໍ່ພໍຄາວກໍ່ໄຂ້ຄືນຄືເກົ່າ.ພໍ່ຂອງແດງມີຄວາມກັງວົນ ແລະ ຢ້ານຈຶ່ງພ້າວໄປເອີ້ນ<u>ແພດບ້ານ</u>ມາຊ່ວຍ...

(ນ້ອຍກໍດາຍແຕ່ຮ້າຍກວ່າເສືອ.2007,9)

(8) ສ່ວນໆເທົ່າ,ເມື່ອບໍ່ພົບທ່ານອອກມາຫາກິນຫຼາຍມື້ແລ້ວກໍ່ເກີດຄວາມສົງໃສວ່າທ່ານເປັນຫຍັງໄປ ຫຼືວ່າມີ<u>ຈິດໃຈ</u>ປ່ຽນແປງບໍ່ຢາກເປັນເພື່ອນກັບໆເທົ່າອີກແລ້ວບໍ່

(ທ່ານກັບໆເທົ່າ.2008,7)

(9) ຈາກນັ້ນໆເຫຼືອມໃຫຍ່ ແລະກະຕ່າຍກໍ່ຍັງເປັນເພື່ອນຮັກແພງກັນ ແລະຝູງສັດນ້ອຍໆຊະນິດກໍ່ກັບຄືນມາ<u>ດຳລົງຊີວິດ</u>ຮ່ວມກັນຢູ່ໃນປ່າດົງແຫ່ງນັ້ນຄືນອີກດ້ວຍຄວາມສະຫງົບສຸກ.

(ເສືອຕາຍຍ້ອນໆເຫຼືອມ.2008,12)

ຈາກຕົວຢ່າງ(6) ຄຳວ່າ“ ແພດບ້ານ ” ປະສົມລະຫວ່າງ ແພດ+ບ້ານ.ຄຳວ່າ “ແພດ”ເປັນພາສາສັນສະກິດ; ມີຄວາມວ່າ: ທ່ານໝໍ,ທ່ານໝໍປົວພະຍາດ; ເມື່ອເອົາຄຳສອງຄຳປະສົມກັນມີຄວາມໝາຍວ່າ: ທ່ານໝໍປະຈຳບ້ານ.(7) ຄຳວ່າ“ ຈິດໃຈ ” ປະສົມລະຫວ່າງ ຈິດ+ໃຈ.ຄຳວ່າ “ ຈິດ ”ເປັນຄຳປາລິ ໃນ“ ຈິຕຕ ” ມີຄວາມໝາຍວ່າສິ່ງທີ່ມີໜ້າທີ່ຮູ້, ຄິດ ແລະ ນຶກ.ສ່ວນຄຳວ່າ“ ໃຈ ”ເປັນຄຳເຄົ້າລາວ; ເມື່ອເອົາສອງຄຳມາປະສົມກັນມີຄວາມໝາຍວ່າ: ອາລົມທາງໃຈ. (8)ຄຳວ່າ “ ດຳລົງຊີວິດ ” ປະສົມລະຫວ່າງ ດຳລົງ+ຊີວິດ.ຄຳວ່າ “ ດຳລົງ ” ເປັນຄຳເຄົ້າໃນພາສາຂະແມ ຊຶ່ງມີຄວາມໝາຍວ່າ: ຊູໄວ້, ທຳໃຫ້ຄົງຢູ່; ສ່ວນຄຳວ່າ“ ຊີວິດ ”ມາຈາກຄຳວ່າ “ ຊີວິຕະ ” ມາຈາກຄຳພາສາປາລີສັນສະກິດມີຄວາມໝາຍວ່າ: ຄວາມເປັນຢູ່, ຊີວິດ,ຊີພະ ຫຼື ຊີບ ກໍ່ວ່າ; ເມື່ອເອົາສອງຄຳມາປະສົມກັນມີຄວາມໝາຍວ່າການໃຊ້ຊີວິດຢູ່ ຫຼື ດຳເນີນຊີວິດ.

ສະຫຼຸບວ່າ ການໃຊ້ຄຳໃນນິທານສຳລັບເດັກທີ່ນຳມາວິເຄາະ ນອກຈາກຈະປາກົດມີຄຳປະສົມບໍ່ຫຼາຍແລ້ວ, ດ້ານຄວາມໝາຍກໍຍັງເຫັນວ່າ ຄຳສ່ວນຫຼາຍເດັກນ້ອຍຈະສາມາດເຂົ້າໃຈໄດ້ເພາະຄຳປະສົມເຫຼົ່ານັ້ນ, ເປັນຄຳທີ່ເດັກຮູ້ຈັກ ແລະຄຸ້ນເຄີຍດີແລ້ວ ແຕ່ໃນນັ້ນກໍມີບາງຄຳທີ່ອາດຈັດຢູ່ໃນລະດັບຍາກດັ່ງຕົວຢ່າງລຸ່ມນີ້:

(10) ໜູກຸ່ມທີສາມ ມີ ເມຍ ລູກ ແລະທະຫານຊັ້ນຈຳຂອງນາຍພົນມານັດໄດ້ບຸກເຂົ້າ<u>ຫ້ອງບັນທົມ</u>ຂອງລາຊາກູລີ ແລ້ວພາກັນເລືອກເສື້ອຜ້າອາພອນ ຕະຫຼອດຮອດເຄື່ອງປະດັບເອ້ທີ່ເປັນເພັດ ພອຍ ມຸກ ຄຳທີ່ພວກເຂົາມັກ ມານຸ່ງມາເອ້ ຄື ລາຊາ ແລະລາຊິນີ ສ່ວນສິ່ງຂອງທີ່ເຫຼືອກໍ່ພາກັນກັດຖິ້ມຈົນມຸ່ນອຸ້ຍປຸ້ຍ.

(ແມ່ທັບເອກ,2007,5)

(11) ຍ້ອນແນວນັ້ນ ຄົນລາວເຮົາຈຶ່ງນິຍົມປູກຕົ້ນໝາກພ້າວໄວ້ຕາມຮົ້ວຕາມສວນ ຕາມເດີ່ນບ້ານເພື່ອເອ້ຍ້ອງໃຫ້ສວຍງາມ,ເປັນອາຫານທີ່ມີທາດບຳລຸງແກ່<u>ສຸຂະພາບ</u>ເປັນ

ยาใช้ทิดแทนน้ำในเวลาถ่ายท้องๆ. ใบพ้าว, เด็กน้อยก่เอามาปะดิดเป้น เถื่องหิ้นได้หายย่างๆ. ถ้าปูกต้นพ้าวหายๆก่จะขายเป้นสินค้าป้อนอุดสาหะกำได้ เพาะหากพ้าวสามาดผะลิดเถื่องใช้สอยเพื่อแก้บันหาในชีวิดปะจำอันได้ตั้งหายย่างอีก.

(ค่าของถิ่น,2007,15)

(12) ตามทางที่ลาอย่างกับบ้าน ลาอมีอามอิดสาลิดสะหยาคำแดงผู้เป้น น้อง ที่ธั่ง และ ล้ำลอยกว่าติ้น ดั่งนั้น ลาอตั้งใจว่าต้องพะยายามหอกล้ำให้คำแดงกับถืนมาหาติ้นอีกให้ได้แล้วจึ่งข้าคำแดงให้ตาย.

(เลื่องของเอนกำ.2007,14)

จากต้อย่าง (9)-(11) คำว่า " ห้องบันทึม ", " สันติสุก ", "สุขะพาบ" " อุดสาหะกำ " และ"อิดสาลิดสะหยา"เป้นคำปะสมที่มาจากคำลาอเดิม-ปาลิสันสะกิด และคำปะสมจากพาสาปาลิ-สันสะกิดด้อยกัน ซึ่งกำนับว่าเป้นคำปะสมที่ข้อนข้างยากสำลับเด็ก โดยสะเพาะเด็กน้อยไออะนุบานถึงสำนึกอามหายยาก; เถิงว่าในนิทานสำลับเด็กที่นำมาวิเคาะปากิดการใช้คำปะสมลักสะนะนี้เห้นห้อย และอาดจะบ่สะท้อนต่ำอามเข้าใจของผู้อ่านต่เนื้อในทั้งหิดของบิดนั้นๆ แต่กำเป้นสิ่งที่ผู้ขฺยนได้คำนึงเถิงให้หาย ถ้าหิกล่างๆได้กำจะเป้นการดีเพาะว่าผู้อ่านกุ่มเป้าหายย่อมมีสักกะยะพาบ และสิ่งแอดล้อมที่สร้างอามธฺยนธู้บ่เท่าทฺยมกัน.

สะหุบ

จากการวิเคาะนิทานสำลับเด็ก 44 เลื่องพิบว่า นิทานแต่ละเลื่องมีปะลิมานคำที่นำใช้คำสับสูงสุดเถิง 1298 และต่ำสุด 158 คำสามาดจัดกุ่มผู้อ่านตามไออายุได้ 2 กุ่ม คื กุ่มทิหึ่ง,เป้นกุ่มนิทานที่ใช้คำสับบ่เกิน 500 คำมีจำนอน 16 เลื่องซึ่งเพาะกับกุ่มผู้อ่านอายุ5-6ปี(ไออะนุบาน หือก่อนปะถิ่ม). กุ่มทิสองมี 28 เลื่องที่ใช้คำสับหายกว่า 500 คำ ซึ่งเป้นอิงคำสับที่เพาะสิมกับกุ่มผู้อ่านที่มีอายุ8-9 ปี หือสูงกว่านี้.

ด้านขะนิดของคำ,ในนิทานสำลับเด็กที่นำมาวิเคาะพิบว่าผู้ขฺยนนิยิมใช้คำเถ้าหายกว่าคำปะสม.ในนั้น,คำปะสมที่ใช้ส่อนหายเป้นคำปะสมจากพาสาลาอเดิมด้อยกัน ซึ่งนับว่าผู้ขฺยนเลือกใช้คำที่จะเอื้ออำนอยต่การเข้าใจของกุ่มผู้อ่านได้ดีเถิงจะมีคำปะสมจากพาสาปาลิ-สันสะกิดจำนอนทึ่งป้นยู่นำแต่กำมีจำนอนห้อย สะนั้น, นิทานสำลับเด็กที่นำมาวิเคาะจึ่งมีอามเพาะสิมกับผู้อ่านด้านปะลิมานตามกุ่มอายุของผู้อ่าน และด้านปะเพดคำพิบว่าผู้ขฺยนใช้คำที่มีโถงสร้าง และ อามหายง่ายเพาะสิมกับผู้อ่านกุ่มเป้าหาย.

เอกะสานอ้างอิง

ทองคำ อ่อนมะนิสอน(1992).วัดจะนานุกมพาสาลาว,กมพิมจำหน่าย

ปิงคำ สิสุวัน,พ้อมคะนะ.(2000)ไวยากอนลาวปัดจุบัน(สำลับโธงธงนสามันสึกสา)พากที 2 อะจีวิพาก, กะซวงสึกสาทิการ.

สิวงแขก กอนนิวิง(2005) วัดทะนะนุกมพาสาลาว,กมพิมจำหน่าย

ทะวิสัก ยานปะทิบ(ทวีศักดิ์ ญาณประทีป : 2531)การขงนอันมะกำสำลับเด็ก. พากวิชาพาสาไท และพาสาตาเอ้นออก, คะนะมะนุดสาด, มะหาวิทะยาไลลามคำแหง.

วิละวัน มิสันพะวิง(วิรวรรณ มีสรรพวงศ์ : 2536) การนเลือกซื้หังสือสำลับเด็กของผู้ปกคอง นักธงนปะถมสึกสาในเขดเทดสะบานเมือง, เขดการสึกสา12, มะหาวิทะยาไลสินะคะธินวิโลดปะสานมิด

พินทิบ ทอยจะเลิน(พิณทิพย์ ทวยเจริญ : 3539).พาสาสาดเชิงจิดตะนะสิละปะสาด, มะหาวิทะยาไลทำมะสาด

สุพะมิงคิน ฮิละมินติ(ศุภมงคล พจน์ธีรมนตรี : 2542)การวิเคาะหังสือส่งเสิมการอ่านละดับปะถมสึกสา, มะหาวิทะยาไลมะหาสาละคาม,

ไพธิด เลิดพิธียะกะมิน(ไพรถ เลิศพิริยกมล.: 2543) การขงนหยั้ดอาม,สำนักส่งเสิมวิชาการสะถาบันลาดชะพัดชินบุลิ

สุพัดทะธา บุนปันยะโลด(สุภัทรา บุญปัญญโรจน์ : 2544)การสึกสาวิเคาะนิทานเด็กจากโดงการปะกอดนิทานมูนนิทิเด็กพ.ส2536-2544",มะหาวิทะยาไลลามคำแหง

จันทา พู่เงิน(จันทรา ภู่เงิน : 2549) การสึกสาอันมะกำสำลับเด็กของปิดา ปันยาจัน,มะหาวิทะยาไลสินะ คะธินวิโลด

อันทิพา อุนาลัด(วรรณธิภา อุนารัตน์: 2551)การสึสาห่อยคำ"ที่"ในปะโทยดอามดงอ และปะโทยก ดอามช้อนที่ปากิดในหังสืออันมะกำสำลับเด็กอายุ3-5ปีที่ได้ธับลางวันในงานสับปะดาหังสีแห่งชาดปีพ.ส.2538-2548"มะหาวิทะยาไลสินะคะธินวิโลด.

ทัดสะนะคะติตายติอ
กับการยงมพาสาต่างปะเทด

โดย ทอมมาลา เพ้นสีซะนะอ้าง

จุดปะสงลอมต้นต่อของการยงมรู้พาสาต่างปะเทดใดหึ่งแม่นเพื่อพัดทะนาถอาม อาดสามาดในการพ้อพันติดต่สื่สานกับใผผู้หึ่ง ด้อยพาสาต่างปะเทดเป้าหมายดั่งก่าอ. ในด้านถอามเป้นจิง เพื่อเร้ดให้การพ้อพันติดต่สื่สานดั่งก่าอนั้นปะสิบผินสำเล้ดย่างหน้า เพิงพ่อใจ ผู้ยงมจำเป้นต้องพัดทะนาทั้งถอามเข้าใจทางด้านอิถีชีวิด, ถอามเชื่อ, คุนค่า และพึดติกำทางด้านอัดทะนทำของพาสาต่างปะเทดเป้าหมายดั่งก่าอนั้นด้วย. เพาะสะนั้น เป้าหมายถอามสามาดจากการยงมรู้พาสาต่างปะเทดใดหึ่งจะบ่จำกัดยู่พิงแต่ในขอบเขดของพาสาเท่านั้น, มันยังยงกร้องให้ผู้ยงมได้ยงมรู้ทั้งทางด้านถอามสามาดในการพ้อพันติดต่สื่สานข้ามอัดทะนะทำ หื้อนที่เอิ้นว่า สะติรู้สึกอัดทะนะทำของพาสาต่างปะเทดเป้าหมายนั้นอีกด้วย. นอกจากนี้ ผู้ยงมพาสาต่างปะเทดบ่พิงแต่จะต้องมีสะติรู้สึก และเข้าใจอัดทะนะทำของพาสาต่างปะเทดที่ตินเองกำลังยงมเท่านั้น, แต่ยังจะต้องมีสะติรู้สึก และเข้าใจอัดทะนะทำของพาสาตินเองอีกด้วย; เซิ่งนี้พายถอามว่า ผู้ยงมจะมีโอกาดได้รับทัดสะนะอิไสที่ปะสมกมกืน และ พาบสะท้อนจุดป่วนแปงของติน และสังคมที่ตินอาไสยู่นั้นไปพ้อมๆกัน. สิ่งเฮ้านี้เป้นจุดหึ่ง เซิ่งผู้ยงมพาสาต่างปะเทดถอนนำไปพิจาละนา เพื่อหิกเอ้นจากสิ่งกีดขางที่เป้นอันลายในการยับยั้งถอามก้าวหน้าในการยงม หื้ ที่เอิ้นว่า ทัดสะนะคะติตายติอนั้นเอง; บ่ว่าจะเป้นต่พาสาต่างปะเทดเป้าหมายโดยกิง กคือต่อัดทะนะทำสังคม ของการใช้พาสาต่างปะเทดเป้าหมายนั้นโดยลอม.

ทัดสะนะคะติตายติอแม่นจินตะพาบท่อไปที่คิงติอใดหึ่ง หื้ปะมอนของบุกคะลิกกะพาบ ที่หลายๆคนเชื่อว่า มันสามาดสะแดงให้เห้นเถิงปะเพดที่แน่นอนใดหึ่ง ของคน, สัด หื้อัดถุสิ่งของต่างๆว่า คน, สัด หื้อัดถุสิ่งของต่างๆเฮ้านั้นถิกจัดยู่ในปะเพดใด. ถ้าว่าบุกคนใดหึ่งมีทัดสะนะคะติตายติอ เขาผู้นั้นมีแนอโน้มว่าเป้นผู้ที่มีแนอถอามคิดท่อไปที่ถิกกำนิดแน่นอน และมักจะปะพึดปะติบัดตินไปในทิดทางที่สะเพาะเจาะจิงใดหึ่ง เซิ่งยากที่จะนำไปสู่การป่วนแปงใหม่ได้. ทัดสะนะคะติตายติอบ่พิงแต่จะเป้นอันตะลายทางด้านการส่งต่อการกะทำถอามผิด ของกุ่มคนที่มักทำผิดในเอลาเร้ดอันใดอันหึ่ง แต่ยังเป้นสิ่งกีดขางในการยงมรู้สิ่งใหม่ๆ และซ้ำยังสามาดเป้นผินกะทบทะอิถูนด้านลบอันยาวนานต่ชีวิดมะนุดอีกด้วย.

การมีทัดสะนะคะติตายติอสามาดเป้นได้ทั้งในด้านบอก และด้านลบ โดย ขึ้นยู่กับกำละนิแอดล้อมของมัน. กิงกันข้าม ในโลกแห่งถอามเป้นจิง ดั่งที่ถอามยงกร้อง

ຕ້ອງການດ້ານການພົວພັນຕິດຕໍ່ສື່ສານຂອງມະນຸດໃນຍຸກໂລກາພິວັດມີບົດບາດສຳຄັນ, ຈຳເປັນ ແລະ ເປັນສາກົນຍິ່ງຂຶ້ນກວ່າເດີມນີ້, ມັນເປັນແຮງຍູ້ດັນໃຫ້ມະນຸດຕ້ອງໄດ້ພັດທະນາປະສິດທິພາບສ່ວນຕົວໃນການຮັບມືກັບການພົວພັນຕິດຕໍ່ສື່ສານກັບເພື່ອນຮ່ວມໂລກ ແຕ່ຕ່າງຊາດ, ຕ່າງສາສະໜາ, ຕ່າງວັດທະນະທຳ ແລະຕ່າງພາສາໃຫ້ນັບມື້ນັບສູງຂຶ້ນຢ່າງບໍ່ຢຸດຢັ້ງ. ການປະຕິບັດງານຢູ່ໃນໜ່ວຍງານທີ່ປະກອບດ້ວຍບຸກຄະລາກອນມາຈາກຫຼາກຫຼາຍວັດທະນະທຳທາງດ້ານພາສາ ຮຽກຮ້ອງຕ້ອງການໃຫ້ມີສາມັນສຳນຶກ ແລະສະຕິຮູ້ສຶກທາງດ້ານວັດທະນະພາສາທີ່ເປັນສາກົນຢ່າງຫຼີກລ່ຽງບໍ່ໄດ້. ການມີທັດສະນະຄະຕິຕາຍຕົວອາດເກີດມີບັນຫາໃນການພົວພັນຕິດຕໍ່ສື່ສານຂ້າມວັດທະນະທຳໂດຍໃຊ້ພາສາເປັນພາຫະນະໃນການສື່ສານ. ເພາະສະນັ້ນ ທັດສະນະຄະຕິຕາຍຕົວໃນເງື່ອນໄຂກໍລະນີແວດລ້ອມຂອງການຮຽນຮູ້ພາສາຕ່າງປະເທດ ເພື່ອໃຫ້ສາມາດຕິດຕໍ່ສື່ສານໄດ້ດ້ວຍພາສາຕ່າງປະເທດທີ່ປະສົງຢາກຮຽນຮູ້ນັ້ນ ຖືວ່າເປັນສິ່ງປະຕິເສດ ແລະມີຜົນກະທົບໃນດ້ານລົບ ເຊິ່ງສົມຄວນແກ່ການຖືກນຳມາພິຈາລະນາເປັນຢ່າງຍິ່ງ. ທັດສະນະຄະຕິຕາຍຕົວມີສ່ວນພົວພັນ ແລະມີບົດບາດສຳຄັນຕໍ່ຂະບວນການຮຽນຮູ້ ແລະຮັບເອົາສິ່ງໃໝ່ເຂົ້າມາໃນຊີວິດຂອງມະນຸດ ໂດຍສະເພາະຢ່າງຍິ່ງໃນຂະບວນການຮຽນຮູ້ ແລະຮັບເອົາພາສາຕ່າງປະເທດເພື່ອມານຳໃຊ້ໃຫ້ເກີດດອກອອກຜົນຢ່າງເປັນທີ່ໜ້າພໍໃຈ. ທັດສະນະຄະຕິຕາຍຕົວສາມາດປາກົດໃຫ້ເຫັນໄດ້ຢ່າງຈະແຈ້ງ ແລະເດັ່ນຊັດໃນຂະບວນການຮຽນຮູ້ພາສາຕ່າງປະເທດ ໂດຍສະເພາະທາງຝ່າຍນັກຮຽນ ຜູ້ເຊິ່ງຖືກຖືວ່າເປັນຝ່າຍຮຽນ ແລະຝ່າຍຮັບ. ທັງນີ້ກໍຍ້ອນວ່າ ໃນຂະນະທີ່ເຮົາຮຽນພາສາຕ່າງປະເທດນັ້ນ ເຮົາໄດ້ມີໂອກາດເຂົ້າໄປກ່ຽວພັນກັບທັດສະນະວິໄສ ຂອງຕ່າງໂລກ ທາງດ້ານພາສາ ແລະວັດທະນະທຳ. ພາສາສາມາດສະທ້ອນໃຫ້ເຫັນພາບ ແລະວັດທະນະທຳຂອງຄວາມເປັນຊາດ, ພາສາສາດສັງຄົມມີບົດບາດສຳຄັນເປັນຢ່າງຍິ່ງຕໍ່ຂະບວນການຮຽນຮູ້ພາສາຕ່າງປະເທດ; ເພາະສະນັ້ນ ຜູ້ຮຽນພາສາຕ່າງປະເທດທັງປວງ ລ້ວນແຕ່ຕ້ອງໄດ້ຮຽນຮູ້ວິຖີຊີວິດຂອງຕ່າງປະເທດໃນເວລາຮຽນພາສາຕ່າງປະເທດ. ພ້ອມກັນນີ້ໃນເວລາຮຽນພາສາຕ່າງປະເທດ ຜູ້ຮຽນຍັງຈະໄດ້ຖືກຊັກຈູງໃຫ້ໃຊ້ທັດສະນະຄະຕິເພື່ອຈັດການກັບສິ່ງທີ່ເຮົາບໍ່ເຄີຍຮູ້ເຫັນ ແລະແປກຕໍ່ວັດທະນະທຳຂອງເຮົາອີກດ້ວຍ. ທັດສະນະຄະຕິດັ່ງກ່າວ ຈະເປັນໃນດ້ານບວກ ຫຼືດ້ານລົບນັ້ນ ແມ່ນຂຶ້ນຢູ່ກັບຕົວຜູ້ຮຽນເອງ ແລະມັນກໍມີຜົນກະທົບອັນສຳຄັນຕໍ່ຂະບວນການຮຽນຮູ້ພາສາຕ່າງປະເທດຂອງຜູ້ຮຽນຢ່າງຫຼີກລ່ຽງບໍ່ໄດ້ອີກດ້ວຍ.

ຈຸດປະສົງສະເພາະຂອງການຮຽນຮູ້ພາສາຕ່າງປະເທດແມ່ນເພື່ອໃຫ້ສາມາດສື່ສານດ້ວຍພາສາຕ່າງປະເທດດັ່ງກ່າວໄດ້ໂດຍດີ ບໍ່ວ່າຈະເປັນທາງດ້ານການຟັງ, ການເວົ້າ, ການອ່ານ ແລະ ການຂຽນ. ການຮຽນພາສາຕ່າງປະເທດສ່ວນໃຫຍ່ເປັນການຮຽນຂອງຜູ້ໃຫຍ່ ຫຼືບໍ່ກໍຕາມຫຼັງການຮຽນພາສາແມ່ ແລະມັກຈະໄດ້ຮັບການຮຽນຮູ້ ແລະເຝິກຝົນທັງສີ່ທັກສະໄປພ້ອມໆກັນ. ການຮຽນຮູ້ສີ່ທັກສະພາສານີ້ມີຄວາມຍາກ-ງ່າຍແຕກຕ່າງກັນ ແລະກໍມີຍຸດທະວິທີໃນການຮຽນທີ່ແຕກຕ່າງກັນ. ໃນດ້ານການຟັງ ຜູ້ຮຽນອາດຈະໄດ້ເລີ່ມຮຽນຈາກການຟັງບົດພາສາປະເພດການທັກທາຍແບບງ່າຍໆ, ສັ້ນໆ ເຊັ່ນ: ສະບາຍດີ, ຂອບໃຈ, ລາກ່ອນ ... ດັ່ງນີ້ເປັນຕົ້ນ. ຫຼັງຈາກນັ້ນ ເມື່ອໄດ້ເຂົ້າສູ່ລາຍລະອຽດຂອງຂະບວນການຮຽນຮູ້ດ້ານທັກສະການຟັງກໍອາດຈະໄດ້ຮຽນ ແລະເຝິກຟັງການອອກສຽງ

ຂອງອັກຂະຫຼະ: ສຽງສະຫຼະ ແລະສຽງພະຍັນຊະນະ; ສຽງຂອງແຕ່ລະປະເພດຄຳສັບ ເຊິ່ງອາດຈະເປັນຄຳສັບທີ່ມີພະຍາງດຽວ, ສອງພະຍາງ, ສາມພະບາງ ..., ຄຳສັບທີ່ມີສຽງສັ້ນ, ສຽງຍາວ, ສຽງສູງ, ສຽງຕ່ຳ; ການອອກສຽງສຳນວນ, ປະໂຫຍກບອກເລົ່າ, ປະ ໂຫຍກຄຳຖາມ ... ດັ່ງນີ້ເປັນຕົ້ນ. ສ່ວນໃນຂັ້ນຕ່ຳໄປ ຜູ້ຮຽນກໍອາດຈະໄດ້ຟັງເພື່ອຈັບໃຈຄວາມສຳຄັນ, ໃຈຄວາມລະອຽດ, ຟັງເພື່ອຕື່ມຄຳທີ່ຂາດໄປ, ຟັງເພື່ອຕອບຄຳຖາມ ແລະອື່ນໆອີກ. ການຟັງນີ້ເປັນທັກສະທຳອິດທີ່ມີບົດບາດສຳຄັນເປັນຢ່າງຍິ່ງ ເຊິ່ງຜູ້ຮຽນຄວນເອົາໃຈໃສ່ເພື່ອໃຫ້ສາມາດຟັງໄດ້ຢ່າງບໍ່ຜິດພຽນ ແລະສາມາດຮຽນແບບສຽງຂອງເຈົ້າຂອງພາສາແມ່ໃຫ້ໄດ້ດີເທົ່າທີ່ຄວາມສາມາດຂອງຜູ້ຮຽນແຕ່ລະຄົນມີ. ຖ້າຟັງຜິດພຽນໄປ ການຮຽນອອກແບບສຽງກໍຈະຜິດພຽນໄປ ແລະຝັງຢູ່ໃນຄວາມຊົງຈຳຜູ້ຮຽນ ແລ້ວກໍຈະກາຍເປັນນິໄສໃນການອອກສຽງນັ້ນໆຜິດພຽນໄປຕະຫຼອດ. ສ່ວນໃນດ້ານທັກສະຂອງການເວົ້າ ຜູ້ຮຽນກໍອາດຈະໄດ້ຮຽນເວົ້າໃນຫຼາຍກໍລະນີແວດບົດທີ່ແຕກຕ່າງກັນ ເຊັ່ນ: ເວົ້າຕາມຫຼັງຄູ, ເວົ້າເພື່ອສື່ສານທົ່ວໄປ ເຊັ່ນ: ທັກທາຍ, ຂອບໃຈ,... ເວົ້າເພື່ອຖາມຄູ, ຖາມເພື່ອນຮ່ວມຫ້ອງ, ເວົ້າໃນລັກສະນະຂອງການສະເໜີບົດ ດັ່ງນີ້ເປັນຕົ້ນ. ຖ້າເຮົາຟັງມາຖືກຕ້ອງດີ, ຮຽນແບບອອກສຽງຖືກຕ້ອງດີ ແລ້ວກໍບໍ່ຄວນລືມວ່າ ໃນເວລາສະແດງອອກດ້ານການເວົ້ານີ້ກໍຄວນໃຫ້ຖືກຕ້ອງທັງທາງດ້ານການອອກສຽງ ແລະທາງເນື້ອໃນຂອງການເວົ້າອີກດ້ວຍ. ທັກສະການອ່ານກໍເປັນອີກທັກສະໜຶ່ງທີ່ຜູ້ຮຽນພາສາຕ່າງປະເທດຈະຕ້ອງໄດ້ເອົາໃຈໃສ່ຢ່າງຈິງຈັງ ໂດຍສະເພາະຢ່າງຍິ່ງການອ່ານອອກສຽງ ເພື່ອເຝິກການອອກສຽງໃຫ້ໄດ້ໃກ້ຄຽງກັບເຈົ້າຂອງພາສາເທົ່າທີ່ຈະເຮັດໄດ້; ສ່ວນການອ່ານໃນໃຈເປັນຂັ້ນຕອນຕໍ່ໄປ ເຊິ່ງອາດເປັນວິທີການອ່ານເພື່ອຈັບໃຈຄວາມສຳຄັນ, ຈັບໃຈຄວາມລະອຽດ ຫຼື ອ່ານເພື່ອຊອກຫາຄວາມຮູ້, ຄວາມຄິດ ຫຼືຄວາມບັນເທີງອື່ນໆ. ອ່ານອອກສຽງດັງໆໃຫ້ຄູ ແລະຜູ້ອື່ນຟັງ ຈະເປັນການດີໃນການພັດທະນາການອອກສຽງ; ສ່ວນການອ່ານໃນໃຈຈະມີບົດບາດສຳຄັນຕໍ່ການເຝິກອ່ານໃຫ້ໄວ ແຕ່ສາມາດຈັບໃຈຄວາມຕ່າງໆໄດ້ດ້ວຍ. ທັກສະການຂຽນເປັນທັກສະສຸດທ້າຍທີ່ຜູ້ຮຽນພາສາຕ່າງປະເທດຍ່ອມຕ້ອງໄດ້ເຝິກ ເຊິ່ງອາດເລີ່ມຕົ້ນຈາກການຮຽນຂຽນ ຫຼືແມ່ນແຕ່ຮຽນວາດແຕ້ມສັນຍະລັກຂອງຕົວອັກສອນແຕ່ລະຕົວ ຈົນເຖິງການຂຽນປະເພດການຈົດກ່າຍ, ການຈົດບັນທຶກຂໍ້ຄວາມຈາກການອ່ານ ຫຼືຈາກການຟັງ, ການຂຽນບົດວຽກບ້ານ, ບົດລາຍງານ, ບົດກວດກາ-ສອບເສັງ ແລະອື່ນໆ. ສິ່ງສຳຄັນທີ່ຜູ້ຮຽນຈະຕ້ອງເອົາໃຈໃສ່ດ້ານທັກສະການຂຽນໃນການຮຽນພາສາຕ່າງປະເທດນີ້ກໍຄື ການສະກົດຄຳ, ໂຄງສ້າງຂອງວະລີ, ໂຄງສ້າງຂອງປະໂຫຍກ ເຊິ່ງອາດຈະມີສ່ວນໃນດ້ານຄວາມແຕກຕ່າງຈາກພາສາແມ່ ແລະອາດເປັນສິ່ງທີ່ສາມາດຊັກຈູງຜູ້ຮຽນໄປສູ່ຄວາມຜິດພາດໃນດ້ານການຂຽນໄດ້. ຕາມຄວາມເປັນຈິງ ໂດຍລວມການຮຽນສີ່ທັກທັກສະໃນແຕ່ລະພາສາລ້ວນແຕ່ມີລັກສະນະທີ່ຄ້າຍຄືກັນ, ແຕ່ລາຍລະອຽດທີ່ແຕກຕ່າງອາດຢູ່ຈຸດທີ່ວ່າ ການຮຽນພາສານັ້ນໆໃນຖານະທີ່ເປັນພາສາຕ່າງປະເທດ ຫຼືພາສາແມ່. ຖ້າໃນຖານະທີ່ເປັນພາສາຕ່າງປະເທດຍ່ອມໜີບໍ່ພົ້ນການປະຈົນໄພອອກໄປສູ່ຕ່າງໂລກຂອງຜູ້ຮຽນ ເຊິ່ງນັ້ນກໍຄື ຕ່າງໂລກທາງດ້ານຮູບແບບສັນຍະລັກຂອງຕົວອັກສອນ, ຂອງວະລີ, ຂອງປະໂຫຍກ, ຂອງສຽງ ລວມທັງຕ່າງໂລກທາງດ້ານວັດທະນະທຳການໃຊ້ພາສານັ້ນໆອີກດ້ວຍ. ການນຳໃຊ້ພາສາມີຄວາມກ່ຽວພັນກັບວັດທະນະທຳ

ຢ່າງແໜ້ນແຟ້ນ ບໍ່ວ່າຈະເປັນດ້ານການຟັງ, ການເວົ້າ, ການອ່ານ ກໍຄືການຂຽນ ເຊິ່ງແນ່ນອນມັນສາມາດບົ່ງບອກໃຫ້ເຫັນເຖິງຄວາມແຕກຕ່າງຕັ້ງແຕ່ມື້ເລີ່ມຕົ້ນຮຽນ. ເພາະສະນັ້ນ ເມື່ອເລີ່ມຕົ້ນຮຽນພາສາຕ່າງປະເທດ ຜູ້ຮຽນຈຶ່ງຄວນເປີດຕົວເອງສູ່ໂລກທາງວັດທະນະທຳ-ສັງຄົມຂອງພາສານັ້ນໆດ້ວຍ ຈຶ່ງຈະສາມາດຮຽນໄດ້, ນຳໃຊ້ເປັນຢ່າງແທ້ຈິງ. ໃນເງື່ອນໄຂ ແລະສະພາວະຂອງການຮຽນຮູ້ພາສາຕ່າງປະເທດ ທັດສະນະຄະຕິຕາຍຕົວອາດໃຫ້ໂທດຫຼາຍກວ່າປະໂຫຍດແກ່ຜູ້ຮຽນ. ໂດຍປົກະຕິຄົນເຮົາເລີ່ມຕົ້ນຮຽນພາສາແມ່ ແລະວັດທະນະທຳການນຳໃຊ້ພາສາແມ່ຕັ້ງແຕ່ມື້ເກີດ ໃນນີ້ອາດຈະທັງດ້ວຍເຈດຕະນາທີ່ສະແດງອອກໃຫ້ເຫັນເປັນຮູປະທຳ ແລະບໍ່ເຈດຕະນາ; ສ່ວນພາສາຕ່າງປະເທດນັ້ນຈະເລີ່ມຕົ້ນຮຽນຕາມຫຼັງໃນເວລາໃດໜຶ່ງ ເຊິ່ງຂຶ້ນກັບເງື່ອນໄຂ ແລະສະພາບຄວາມປັນຈິງຂອງແຕ່ລະບຸກຄົນ. ເພາະສະນັ້ນ ການເລີ່ມຕົ້ນຮຽນພາສາຕ່າງປະເທດ ສ່ວນໃຫຍ່ຈະແມ່ນຊ້າກວ່າ ແລະຢູ່ໃນໄວອາຍຸກະສຽນທີ່ສູງກວ່າການເລີ່ມຕົ້ນຮຽນພາສາແມ່ດັ່ງທີ່ໄດ້ນຳສະເໜີຜ່ານມາ. ຄວາມໝາຍຂອງຄຳວ່າໄວອາຍຸກະສຽນທີ່ສູງກວ່າໃນທີ່ນີ້ ມັກຈະມາກັບປະສົບການໃນດ້ານຕ່າງໆ ພ້ອມທັງທັດສະນະຄະຕິໃນດ້ານຕ່າງໆຝັງປະຈຳຕົວມານຳສູງກວ່າອີກດ້ວຍ ເຊິ່ງອາດຍາກໃນການທີ່ຈະປ່ຽນແປງ ແລະຮັບເອົາສິ່ງໃໝ່ໆ. ທັດສະນະຄະຕິຕາຍຕົວສາມາດເປັນອຸປະສັກໃນການຮຽນຮູ້ພາສາຕ່າງປະເທດ ໂດຍສະເພາະໃນການປ່ຽນແປງຈາກປະສົບການ ຫຼືຄວາມຊິນເຄີຍອັນເກົ່າ ເພື່ອຮັບເອົາສິ່ງໃໝ່. ຕົວຢ່າງຜົນການຮຽນພາສາຕ່າງປະເທດຂອງຜູ້ຮຽນທີ່ມີອາຍຸສູງຈາກຜູ້ທີ່ເຄີຍພົບເຫັນໄດ້ບອກໃຫ້ຮູ້ວ່າ ຜູ້ທີ່ມີອາຍຸສູງມັກຈະມີຈຸດດ້ອຍໃນການຮຽນພາສາຕ່າງປະເທດຫຼາຍ ທັງນີ້ກໍຍ້ອນວ່າ ສະໝອງຂອງເຂົາກ້າວເຂົ້າມາຢູ່ໃນໄລຍະທີ່ວິກິດ ແລະຜູ້ທີ່ມີອາຍຸສູງບໍ່ຄ່ອຍມີໂອກາດໃນການເຝິກຝົນ ບໍ່ວ່າຈະເປັນພາຍໃນຫ້ອງຮຽນ ຫຼືນອກຫ້ອງຮຽນ. ການຮຽນພາສາຕ່າງປະເທດຂອງຜູ້ທີ່ມີອາຍຸສູງຍາກທີ່ຈະສາມາດອອກສຽງໄດ້ເໝືອນກັບເຈົ້າຂອງພາສາ ຫຼືອາດຈະບໍ່ປາກົດໃຫ້ເຫັນເລີຍ. ນີ້ຄືຈຸດໜຶ່ງທີ່ສະແດງໃຫ້ເຫັນເຖິງທຳມະຊາດຂອງມະນຸດທີ່ຈະປັບປ່ຽນຕົນເອງເພື່ອໃຫ້ສາມາດອອກສຽງພາສາທີ່ຮຽນເປັນພາສາຕ່າງປະເທດນັ້ນຍາກ ຫຼືບໍ່ສາມາດເຮັດໄດ້ເໝືອນກັນກັບພາສາແມ່ທີ່ໄດ້ເລີ່ມຮຽນມາຕັ້ງແຕ່ມື້ເກີດນັ້ນໄດ້. ແຕ່ທັງໝົດນີ້ບໍ່ໄດ້ໝາຍຄວາມວ່າ ມະນຸດເຮົາບໍ່ສາມາດເຮັດຫຍັງໃຫ້ໄດ້ດີເລີຍໃນການຮຽນຮູ້ພາສາຕ່າງ ປະເທດ; ກົງກັນຂ້າມ ມະນຸດເຮົາສາມາດຮຽນຮູ້ ແລະນຳໃຊ້ພາສາຕ່າງປະເທດເພື່ອສື່ສານກັນໄດ້ໃນລະດັບທີ່ດີ ແລະໜ້າເພິ່ງພໍໃຈເປັນຢ່າງຍິ່ງ ເຊິ່ງທັງໝົດນີ້ມັນຂຶ້ນຢູ່ກັບຄວາມພ້ອມ, ເງື່ອນໄຂແວດລ້ອມ, ແຮງຈູງໃຈ ຫຼືແມ່ນແຕ່ທັດສະນະຄະຕິຂອງແຕ່ລະບຸກຄົນຕໍ່ການຮຽນພາສາຕ່າງປະເທດເປົ້າໝາຍນັ້ນໆ.

ການມີທັດສະນະຄະຕິຕາຍຕົວສາມາດສ້າງບັນຫາຢ່າງຫຼີກລ່ຽງບໍ່ໄດ້ ໃນເງື່ອນໄຂກໍລະນີຂອງການຮຽນຮູ້ພາສາຕ່າງປະເທດ, ແຕ່ເຮົາອາດສາມາດເຮັດໃຫ້ມັນໜ້ອຍລົງ ແລະປາກົດອອກມາໃຫ້ເຫັນໜ້ອຍທີ່ສຸດໄດ້ ຖ້າເຮົາສາມາດປັບປ່ຽນ ແລະສ້າງສັນໃຫ້ມັນເປັນທັດສະນະຄະຕິທີ່ເໝາະສົມ. ໃນກໍລະນີຂອງການຮຽນຮູ້ພາສາລາວຂອງຄົນຕ່າງປະເທດ ແລະການຮຽນຮູ້ພາສາຕ່າງປະເທດຂອງຄົນລາວ ບໍ່ຄ່ອຍປາກົດພົບເຫັນບັນຫາໃຫຍ່ ຈົນບໍ່ສາມາດແກ້ໄຂໄດ້, ທັງນີ້ກໍຍ້ອນວ່າອາດເປັນເພາະຜູ້ຮຽນທັງຫຼາຍຮັບຮູ້ຈຸດປະສົງ, ເງື່ອນໄຂແວດລ້ອມ ແລະສະພາວະຂອງຕົນດີໃນ

ດ້ານການຫຼຸດຜ່ອນທັດສະນະຄະຕິຕາຍຕົວ ເພື່ອຊ່ວຍຕົນເອງຜ່ານຜ່າອຸປະສັກຕ່າງໆນາໆໃນການຮຽນຈຶ່ງສາມາດບັນລຸເປົ້າໝາຍໄດ້ໂດຍດີ. ບັນຫາລວມທີ່ກ່ຽວພັນເຖິງທັດສະນະຄະຕິຕາຍຕົວໃນເງື່ອນໄຂກໍລະນີຂອງການຮຽນຮູ້ພາສາຕ່າງປະເທດ ທີ່ມັກປາກົດໃຫ້ເຫັນເລື້ອຍໆກໍຄື ບັນຫາດ້ານຄວາມພ້ອມຕໍ່ການຍອມຮັບຄວາມແຕກຕ່າງລະຫວ່າງພາສາແມ່ ແລະພາສາຕ່າງປະເທດທີ່ຜູ້ຮຽນເລືອກຮຽນ. ຄວາມແຕກຕ່າງດັ່ງກ່າວນີ້ ອາດຈະເປັນດ້ານຮູບແບບສັນຍະລັກຂອງຕົວອັກສອນ, ສັນຍະລັກຂອງສຽງ ແລະການຜັນສຽງ, ໂຄງສ້າງຂອງຄຳສັບ, ວະລີ ຫຼືປະໂຫຍກ, ແບບວິທີ ຫຼື ວັດທະນະທຳໃນການໃຊ້ພາສາ ທັງຮູບການເວົ້າ ແລະຮູບການຂຽນ. ພາສາກໍຄືກັນກັບວັດຖຸສິ່ງຂອງອື່ນໆ, ມັນສາມາດສະແດງໃຫ້ເຮົາເຫັນໄດ້ເຖິງຄວາມຫຼາກຫຼາຍ ແລະຄວາມແຕກຕ່າງກັນໄດ້ຢ່າງຊັດເຈນ. ບັນດາຄວາມແຕກຕ່າງດັ່ງກ່າວອາດຊ້ອນແຝງຢູ່ໃນຫຼາກຫຼາຍພາຫະນະ ຂອງພາສາ ເປັນຕົ້ນວ່າ ດ້ານອັກຂະຫຼະ, ດ້ານວັດຈະນາ, ດ້ານໄວຍາກອນ, ດ້ານສັນທະສິນ ຕະຫຼອດຮອດວັດທະນະທຳການໃຊ້ພາສາໃນກໍລະນີແວດບົດ ທີ່ສະເພາະເຈາະຈົງຕ່າງໆທັງປວງ ເຊິ່ງຖືກບັນຈຸໄວ້ໃນສັງຄົມວັດທະນະທຳໃດໜຶ່ງ. ວັດທະນະທຳການໃຊ້ພາສາມີຫຼາຍຈຸດໃຫ້ມະນຸດໄດ້ນຳເອົາໄປພິຈາລະນາໃຫ້ຖີ່ຖ້ວນກ່ອນການຮຽນຮູ້ ແລະນຳໃຊ້ ເປັນຕົ້ນວ່າ ວັດທະນະທຳໃນການທັກທາຍ, ການກ່າວຄຳຂອບໃຈ, ຂໍອະໄພ, ຮັບ ຫຼືປະຕິເສດ ເຊິ່ງເຫັນວ່າຜູ້ຮຽນພາສາຕ່າງປະເທດຄວນຮຽນຮູ້ວັດທະນະທຳດ້ານນີ້ເໝືອນກັນ. ການຮຽນຮູ້ວັດທະນະທຳໃນການໃຊ້ພາສາຍັງສາມາດຊ່ວຍໃຫ້ການໃຊ້ພາສາຖືກຕ້ອງ, ເໝາະສົມ, ສຸພາບ, ຫຼຸດພົ້ນຈາກການເຂົ້າໃຈຜິດ ທັງໃນຖານະຂອງການເປັນຜູ້ສົ່ງສານ ກໍຄືໃນຖານະຂອງຜູ້ຮັບສານອີກດ້ວຍ. ຜູ້ຮຽນບໍ່ສາມາດຄາດຫວັງເອົາໄວ້ກ່ອນວ່າ ພາສາຕ່າງປະເທດທີ່ເຂົາຈະຮຽນຮູ້ນັ້ນ ມັນກໍຄືກັນກັບພາສາແມ່ ທີ່ເຂົາເຈົ້າກຳລັງໃຊ້ຢູ່ຈົນຄຸ້ນເຄີຍ ເພາະນັ້ນກໍຄືໜຶ່ງໃນທັດສະນະຄະຕິຕາຍຕົວນັ້ນເອງ. ພວກເຂົາຄວນເຂົ້າໃຈໃຫ້ດີວ່າ ຈິງຢູ່ວ່າທຸກໆຊາດໃນໂລກນີ້ສາມາດສື່ສານກັນໄດ້ເຖິງແມ່ນວ່າຕ່າງຊາດຕ່າງພາສາ, ແຕ່ວິທີໃນການສື່ສານນັ້ນປະກອບດ້ວຍຫຼາຍປັດໄຈແຕກຕ່າງກັນດັ່ງທີ່ໄດ້ກ່າວມາກ່ອນນີ້ ບໍ່ວ່າຈະເປັນໃນກະໂຕຂອງພາສາເອງ, ໃນເງື່ອນໄຂແວດລ້ອມດ້ານວັດທະນະທຳ ຫຼືແມ່ນແຕ່ໃນຕົວຂອງຜູ້ສົ່ງສານ ແລະຜູ້ຮັບສານນັ້ນໆອີກດ້ວຍ.

ທັດສະນະຄະຕິຕາຍຕົວສາມາດສະແດງອອກໃຫ້ເຫັນ ຜ່ານຂະບວນການຮຽນຮູ້ພາສາຕ່າງປະເທດຂອງຜູ້ຮຽນບາງຄົນທີ່ຍຶດໝັ້ນ ຫຼືມີທັດສະນະຄະນິ້ຈາກຫຼາກຫຼາຍແງ່ມຸມຂອງຂະບວນການຮຽນຮູ້. ໂດຍທົ່ວໄປແລ້ວ ຜູ້ທີ່ມີທັດສະນະຄະຕິຕາຍຕົວມັກຈະມີຄວາມຫຍຸ້ງຍາກໃນການຍອມຮັບແລະຮຽນຮູ້ຮູບແບບຂອງພາສາຕ່າງປະເທດ ບໍ່ວ່າຈະເປັນດ້ານອັກຂະຫຼະ, ວັດຈະນາ, ໄວຍາກອນ ຫຼືສັນທະສິນ ທັງທາງດ້ານການເວົ້າ ແລະການຂຽນ. ການມີທັດສະນະຄະຕິຕາຍຕົວນີ້ເຮັດໃຫ້ຜູ້ຮຽນທຽວຖາມ ແລະຕອບຕົນເອງເລື້ອຍໆວ່າ ຮູບແບບອັກຂະຫຼະ, ວັດຈະນາ, ໄວຍາກອນ ແລະສັນທະສິນຂອງພາສາຕ່າງປະເທດແຕກຕ່າງຈາກພາສາເຂົາ, ເຂົ້າໃຈຍາກ, ຈື່ຍາກ, ແປກ ແລະຄິດທໍ້ຖອຍຕໍ່ການຮຽນ. ທັດສະນະຄະຕິຕາຍຕົວຂອງນັກຮຽນບາງຄົນອາດສະແດງອອກຜ່ານການຮຽນຫຼັກໄວຍາກອນ ໂດຍສະເພາະດ້ານໂຄງສ້າງຄຳສັບ, ວະລີ, ປະໂຫຍກ ຫຼືບົດພາສາທີ່ແຕກຕ່າງຈາກໂຄງສ້າງໃນພາສາແມ່. ເຂົາອາດສ້າງໂຄງສ້າງໃນພາສາຕ່າງປະເທດທີ່ເຂົາກຳລັງຮຽນຢູ່ນັ້ນຜິດຢ່າງ

ຊ້ຳແລ້ວຊ້ຳເລົ່າ ຈົນກາຍເປັນຄວາມຊິນເຄີຍ ແລະເກີດຄວາມຜິດພາດຕະຫຼອດໄປທັງທາງດ້ານການເວົ້າ ແລະການຂຽນໃນເວລາໃຊ້ພາສາຕ່າງປະເທດທີ່ເຂົາຮຽນ. ທັດສະນະຄະຕິຕາຍຕົວຍັງສາມາດສະແດງອອກຜ່ານຂະບວນການຮຽນຮູ້, ເສີມຂະຫຍາຍ ແລະສ້າງຄຳສັບໃໝ່ໆຂອງຜູ້ຮຽນອີກດ້ວຍ ເຊັ່ນ: ຜູ້ມີທັດສະນະຄະຕິຕາຍຕົວມັກຈະຈົ່ມວ່າ ປະມວນຄຳສັບໃນພາສາຕ່າງປະເທດທີ່ຕົນຮຽນຫຼາຍເກີນຄວາມສາມາດໃນການຮຽນຮູ້ ແລະຮັບເອົາຂອງຕົນ, ແລະແລ້ວກໍຈະບອກຕົນເອງວ່າ ພໍແລ້ວ, ໃຊ້ຄຳສັບນີ້ແທນໃຫ້ໂຕອື່ນໆກໍໄດ້. ການມີທັດສະນະຄະຕິແນວນີ້ຈະເຮັດໃຫ້ຜູ້ຮຽນມີຂອບເຂດຄວາມຮູ້ທາງດ້ານວັດຈະນາຈຳກັດ, ບໍ່ອຸດົມ ສົມບູນ, ໃຊ້ຄຳສັບດຽວແທນໃຫ້ຫຼາຍຄວາມໝາຍຈະບໍ່ຖືກຕ້ອງ, ບໍ່ເໝາະສົມ, ບໍ່ຈະແຈ້ງ, ບໍ່ປານີດ, ຄຸມເຄືອ ຫຼືບໍ່ຮັດກຸມ. ການຜັນສຽງກໍເປັນອີກຈຸດໜຶ່ງ ເຊິ່ງສາມາດເຫັນຈາກການມີທັດສະນະຄະຕິຕາຍຕົວຂອງຜູ້ຮຽນ ໂດຍເຂົາອາດຖືວ່າ ພາສາຕ່າງປະເທດນີ້ອອກສຽງຍາກ, ມັນບໍ່ຄືພາສາແມ່ຂອງເຂົາ, ເຂົາບໍ່ສາມາດເຮັດໄດ້, ຊ່າງມັນ, ສຽງນີ້ຍາກບໍ່ເວົ້າ, ຂ້າມໄປ ... ການເຮັດແນວນີ້ຫຼາຍຄັ້ງຫຼາຍຫົນອາດເຮັດໃຫ້ຜູ້ຮຽນເກີດຄວາມຊິນເຄີຍຕໍ່ການຫຼີກລ່ຽງສິ່ງທີ່ເຫັນວ່າຍາກ, ບໍ່ມີຄວາມມານະອົດທົນ, ບໍ່ເຝິກຝົນ ແລ້ວກໍຈະກາຍເປັນນິໄສທີ່ບໍ່ສາມາດປ່ຽນແປງໄດ້ ຈົນກາຍເປັນຈຸດດ້ອຍດ້ານການອອກສຽງສະເພາະດ້ານປະຈຳຕົວຂອງຜູ້ຮຽນບາງຄົນກໍເປັນໄດ້. ຈົ່ງຢູ່ວ່າ ພາສາຕ່າງປະເທດກໍຄືພາສາຕ່າງປະເທດ ມະນຸດເຮົາບໍ່ສາມາດຮຽນຮູ້ໄດ້ໝົດທຸກຢ່າງເໝືອນເຈົ້າຂອງພາສາ, ແຕ່ໃນຄວາມເປັນຈິງເຮົາສາມາດຮຽນຮູ້ ແລະນຳໃຊ້ມັນໄດ້ດີກວ່າ ຖ້າເຮົາສາມາດ ຫຼຸດຜ່ອນ ຫຼືກຳຈັດທັດສະນະຄະຕິຕາຍຕົວອອກໄປໄດ້.

ຈາກປະສົບການຕົວຈິງ ໃນຖານະທີ່ເຄີຍເປັນຄູສອນ ທັງພາສາແມ່ໃຫ້ແກ່ຄົນຕ່າງປະເທດ ແລະທັງພາສາຕ່າງປະເທດໃຫ້ຄົນຊາດຕົນ ເຊິ່ງເຫັນວ່າມີສ່ວນຮ່ວມທີ່ສຳຄັນທາງດ້ານການໃຊ້ພາສາເພື່ອສື່ສານຂ້າມວັດທະນະທຳ ແລະສາມາດພົບເຫັນຫຼາຍວິທີໃນການຊ່ວຍເຫຼືອນັກຮຽນຮູ້ນັກສຶກສາດັ່ງກ່າວ ຈັດການກັບບັນຫາການມີທັດສະນະຄະຕິຕາຍຕົວ ຄື:

1. ແຮງຈູງໃຈ ແລະຄວາມເຊື່ອໝັ້ນຕົນເອງເປັນປັດໄຈທີ່ສຳຄັນຕົ້ນຕໍໃນການຮຽນຮູ້ພາສາຕ່າງປະເທດ. ຜູ້ຮຽນພາສາຕ່າງປະເທດສ່ວນໃຫຍ່ມັກຈະມີຄວາມຫວາດກົວ, ວິຕົກກັງວົນ, ຢ້ານບໍ່ໄດ້, ຂີ້ອາຍ ເຊິ່ງນັ້ນຄືໜຶ່ງຂອງທັດສະນະຄະຕິຕາຍຕົວ. ເມື່ອຜູ້ຮຽນປະເພດນີ້ພົບກັບບັນຫາທີ່ຕ້ອງຄິດ, ສະຖານະການຂອງການຮຽນທີ່ສັບສົນ ຫຼືເຂັ້ມຂຸ້ນ ເຂົາຈະມີຄວາມກັງວົນ ແລະປ່ອຍໃຫ້ຄວາມຢ້ານອອກມາຄວບຄຸມສະພາບຮ່າງກາຍ ແລະຈິດໃຈ ແລ້ວກໍຈະເກີດມີການປະຕິເສດບໍ່ຢາກຮຽນຂຶ້ນມາທັນທີ. ເພາະສະນັ້ນ ສິ່ງສຳຄັນໃນຂໍ້ນີ້ຄືຕ້ອງຫຼຸດຜ່ອນຄວາມຢ້ານ, ຄວາມກັງວົນ, ຄວາມຫວາດລະແວງ, ຄວາມຂີ້ອາຍ ແລະພະຍາຍາມເສີມສ້າງຄວາມໝັ້ນໃຈຂຶ້ນມາແທນໃຫ້ໄດ້.
2. ການເຮັດກິດຈະກຳໃນຫ້ອງກໍເປັນອີກປັດໄຈໜຶ່ງສາມາດຊ່ວຍໃຫ້ການຮຽນຮູ້ພາສາຕ່າງປະເທດໃຫ້ໄດ້ດີໄວຂຶ້ນ ເຊິ່ງລວມມີການເຝິກຟັງ ແລະເວົ້າຫຼຳໄປຫຼຳມາຫຼາຍເທື່ອ, ເຝິກການອອກສຽງໃຫ້ຖືກຕ້ອງ ຫຼືແມ່ນແຕ່ການເຝິກເວົ້າດ່ຽວ ຫຼືເວົ້າເປັນຄູ່, ຫາໂອກາດໃຫ້ຕົນເອງໄດ້ເວົ້າເລື້ອຍໆ, ພະຍາຍາມຫຼີກລ່ຽງການເວົ້າຜິດ ເພາະຈະກາຍເປັນຄວາມຊິນເຄີຍ,

ເວົ້າກັບຄູ ແລະຜູ້ອື່ນໆເພື່ອໃຫ້ເຂົາເຈົ້າຊ່ວຍດັດແປງການເວົ້າຂອງເຮົາ ແລະອື່ນໆ ກໍ ສາມາດຊ່ວຍໃຫ້ການຮຽນພາສາຕ່າງປະເທດມີການພັດທະນາຂຶ້ນໄວໄດ້ເໝືອນກັນ.

3. ການຮຽນພາສາຕ່າງປະເທດຂອງໃຜຜູ້ໜຶ່ງ ແມ່ນເພື່ອຈຸດປະສົງອັນໃດອັນໜຶ່ງຢ່າງ ແນ່ນອນ. ຄຳວ່າອັນໃດອັນໜຶ່ງໃນທີ່ນີ້ໝາຍເຖິງວິຊາການດ້ານໃດດ້ານໜຶ່ງທີ່ຜູ້ຮຽນປະສົງ ຈະເອົາໄປນຳໃຊ້ພາຍຫຼັງທີ່ໄດ້ມັນມາ. ເພາະສະນັ້ນ ຜູ້ຮຽນຄວນຮູ້ສວຍໃຊ້ ແລະເກັບກ່ຽວ ເອົາພາສາຕ່າງປະເທດໃນດ້ານວິຊາການທີ່ຕົນເອງປາຖະໜານັ້ນໃຫ້ຫຼາຍກວ່າດ້ານອື່ນໆ ເຊັ່ນ: ດ້ານການບໍລິຫານການສຶກສາ, ດ້ານກົດໝາຍ, ດ້ານການເມືອງການປົກຄອງ, ດ້ານວິທະຍາສາດການແພດ, ວິທະຍາສາດຄ້ອມພິວເຕີ ດັ່ງນີ້ເປັນຕົ້ນ.
4. ດັ່ງທີ່ໄດ້ນຳສະເໜີຜ່ານມາວ່າ ຜູ້ຮຽນພາສາຕ່າງປະເທດສ່ວນໃຫຍ່ມັກຈະມີປະສົບການ ໃນການຮຽນມາກ່ອນແລ້ວ ເຊັ່ນປະສົບການຈາກການຮຽນວິຊາສະເພາະອື່ນໆ ຫຼືປະສົບ ການໃນການຮຽນພາສາແມ່ ເຊິ່ງນີ້ເປັນເງື່ອນໄຂດີທີ່ສາມາດນຳມາປັບເປັນແນວທາງໃນ ການຮຽນພາສາຕ່າງປະເທດຂອງຜູ້ຮຽນອີກດ້ວຍ. ຜູ້ຮຽນແຕ່ລະຄົນມີຍຸດທະວິທີ ແລະ ໄຫວພິບໃນການຮຽນຮູ້ພາສາຕ່າງປະເທດຢ່າງຫຼາກຫຼາຍ ແລະແຕກຕ່າງກັນ ເຊິ່ງກໍ ສົມຄວນທີ່ແຕ່ລະຄົນຈະຕ້ອງຊອກຮູ້, ແບ່ງປັນ, ຖອດຖອນເອົາເປັນບົດຮຽນ ແລະປັບ ປ່ຽນໃຫ້ເຂົ້າກັບເງື່ອນແວດຂອງຕົນອີກຍິ່ງຈະເປັນການດີ.
5. ຍອມຮັບຈຸດດ້ອຍຂອງຕົນ ໃນດ້ານການຮຽນພາສາຕ່າງປະເທດເປົ້າໝາຍດັ່ງກ່າວນັ້ນໆ ໃຫ້ໄດ້ ແລະພ້ອມທີ່ຈະຮ່ຳຮຽນ ແລະຂໍຄວາມຊ່ວຍເຫຼືອຈາກຄູ ກໍຄືຈາກໝູ່ຄູ່ ເພື່ອໃຫ້ ສາມາດກຳຈັດຈຸດດ້ອຍດັ່ງກ່າວໄດ້; ສ້າງມັນໃຫ້ເປັນຈຸດດີ, ປັບປຸງ ແລະພັດທະນາມັນ ໃຫ້ກາຍເປັນຈຸດເດັ່ນຂຶ້ນໄປເລື້ອຍໆຍິ່ງຈະເປັນການດີ.

ພ້ອມກັນນີ້ ໃນດ້ານຄວາມພ້ອມອື່ນໆ ຜູ້ຮຽນແຕ່ລະຄົນຄວນຮັບຮູ້ຕົນເອງຢ່າງແນ່ນອນເສຍ ກ່ອນວ່າ ຕົນເອງແມ່ນໃຜ ແລະຢູ່ໃນຖານະອັນໃດ. ເປັນທີ່ແນ່ນອນແລ້ວວ່າຄຳຕອບສຳລັບຄຳຖາມ ນີ້ກໍຄື ພວກເຂົາເປັນນັກຮຽນຮູ້ນັກສຶກສາ ເຊິ່ງນີ້ກໍໝາຍຄວາມວ່າຢູ່ໃນຖານະພ້ອມທີ່ຈະຮຽນຮູ້ ແລະ ຮັບເອົາສິ່ງໃໝ່ໆເຂົ້າມາ. ນັກຮຽນຮູ້ນັກສຶກສາຕ້ອງເປັນຜູ້ທີ່ກຽມພ້ອມຮັບເອົາສິ່ງໃໝ່ສະເໝີ; ຢາກ ຮັບເອົາສິ່ງໃໝ່ໄດ້ກໍຕ້ອງລົດລະ ຫຼືປະຖິ້ມທັດສະນະຄະຕິທີ່ຍຶດໝ່ຽວ ຫຼືຕາຍຕົວໃນແງ່ລົບທີ່ຕົນເອງ ເຄີຍຊິນ; ຕ້ອງປັບປ່ຽນ ແລະຮຽນຮູ້ໄປເລື້ອຍໆ ເຊັ່ນຕົວຢ່າງນິໄສຂີ້ຄ້ານປະຈຳຕົວດ້ານການເປີດ ວັດຈະນານຸກົມ, ດ້ານການຂຽນ, ການຈົດທ່ອງ, ການເຝິກອອກສຽງ, ການເຂົ້າຮ່ວມສົນທະນາເປັນ ຄູ່ ຫຼືໃນກຸ່ມ, ການຖາມຄູ ຫຼືໝູ່ຄູ່ເວລາບໍ່ເຂົ້າໃຈ ຫຼືສະແຫວງຫາຄວາມກະຈ່າງແຈ້ງຕ່າງໆ, ການລົງ ກຽດຄູ່ສົນທະນາບາງຄົນ ຫຼືຄູບາງຄົນ ດັ່ງນີ້ເປັນຕົ້ນ. ຂໍ້ສຳຄັນຕໍ່ໄປອີກປະການໜຶ່ງ ພວກເຂົາ ເຫຼົ່ານັ້ນຄວນສາມາດຈຳແນກແຍກແຍະໃຫ້ໄດ້ລະອຽດຄວາມແຕກຕ່າງລະ ຫວ່າງທາດແທ້ ແລະ ເງື່ອນໄຂແວດລ້ອມຂອງພາສາຕົນ ກັບ ທາດແທ້ ແລະເງື່ອນໄຂແວດລ້ອມຂອງພາສາທີ່ຕົນກຳລັງ ຈະຮຽນຮູ້ ແລະຮັບເອົາໄປນຳໃຊ້ນັ້ນໆ ເຊັ່ນຕົວຢ່າງວ່າ ພາສາລາວເປັນພາສາພັນລະນາ ອາໄສ ການສະແດງອອກດ້ວຍຮູບການອະທິບາຍ ຫຼືພັນລະນາແບບທາງອ້ອມ ດັ່ງບັນດາຄຳສັບ *ເຮືອນ*

ຊານບ້ານຊ່ອງ, ຫຍຸ້ງຍາກສັບສົນ, ຫຼວງຫຼາຍພາຍນາກ ... ເຊິ່ງຕ່າງຈາກພາສາຕ່າງປະເທດອື່ນໆທີ່ມັກຈະສະແດງອອກແບບທາງກົງ ເປັນຕົ້ນວ່າ ພາສາອັງກິດ: *house, difficult, a lot ...* ແລະອື່ນໆ. ທາດແທ້ ແລະເງື່ອນໄຂແວດລ້ອມອີກອັນໜຶ່ງຂອງພາສາລາວຄື: ທັງໃນອະດີດ ແລະປັດຈຸບັນ ພາສາລາວຍັງຖືວ່າມີຄວາມຕິດພັນກັບທຳມະຊາດ ໂດຍອາໄສການປູກຝັງ ແລະລ້ຽງສັດແບບທຳມະຊາດເປັນຫົນທາງທຳມາຫາກິນ, ການດຳລົງຊີວິດ ໂດຍອີງໃສ່ງານກະສິກຳເປັນຕົ້ນຕໍ ເຊິ່ງສາມາດເຫັນໄດ້ຈາກການສະແດງອອກດ້ານຄຳສັບ ເຊັ່ນ: ເຂົ້າໜຽວຈ້ຳປາແດກ, ແກງໜໍ່ໄມ້, ເຂົ້າໃນນາ, ປາໃນນ້ຳ; ສຳນວນປຽບທຽບຕ່າງໆມີລັກສະນະກ່ຽວພັນກັບສັດ ເຊັ່ນ: ໄປຢຽບໜາ ມາຢຽບຂຽດ, ເຄື່ອງມືໃນການອອກແຮງງານ: ໜ້າສີ່ວໜ້າຂວານ, ປາກົດການດິນຟ້າອາກາດ: ຝົນຊີຕົກຟ້າແຈ້ງ ຟ້າຊິແລ້ງຟ້າມືດຟ້າມົວ, ອາຫານການກິນ ແລະພືດຜັກຊະນິດຕ່າງໆ ຕະຫຼອດຮອດສະຖານທີ່ພັກພາອາໄສ: ເຮືອນໄມ້, ເຮືອນຮ້ານ ... ດັ່ງນີ້ເປັນຕົ້ນ. ທາດແທ້ ແລະເງື່ອນໄຂແວດລ້ອມຂອງແຕ່ລະພາສາບໍ່ຄືກັນ ແລະຜູ້ຮຽນຄວນກຳໃຫ້ແໜ້ນດ້ານທາດແທ້ ແລະເງື່ອນໄຂແວດລ້ອມຂອງພາສາຕົນໃນຂະບວນການຮຽນຮູ້ພາສາຕ່າງປະເທດອີກດ້ວຍ. ຈົ່ງຢູ່ວ່າ ມະນຸດເຮົາທັງໝົດມີຊີວິດເປັນຢູ່ໃນໂລກດຽວກັນ, ມີສິດທິ ແລະຄວາມເປັນມະນຸດເທົ່າທຽມກັນ; ແຕ່ມັນມີຈຸດແຕກຕ່າງເຊິ່ງສົມຄວນແກ່ການຮຽນຮູ້ຕັ້ງຫຼາຍຢ່າງຫຼາຍແນວ ເຊັ່ນ: ຄວາມເປັນຊາດ, ສາສະໜາ, ພາສາ, ວັດທະນະທຳ, ລະບົບການເມືອງ, ການປົກຄອງ, ເພດ, ໄວ ຕະຫຼອດຮອດວິທີທາງໃນການດຳລົງຊີວິດຂອງແຕ່ລະຄົນອີກດ້ວຍ. ເຮົາບໍ່ສາມາດຄາດເດົາຢ່າງແນ່ນອນໄວ້ກ່ອນວ່າ ເຮົາຈະຕ້ອງໄດ້ປະເຊີນໜ້າກັບບັນຫາໃດແດ່, ສິ່ງທີ່ເຮົາປາຖະໜາ ຫຼືສິ່ງທີ່ເຮົາບໍ່ເພິ່ງປາຖະນາ. ແນ່ນອນແລ້ວວ່າ ມະນຸດເຮົາມີທັກສະ, ຄວາມອາດສາມາດ, ກຳລັງກາຍກຳລັງໃຈ, ຕະຫຼອດຮອດສະຕິປັນຍາບໍ່ເທົ່າທຽມກັນ; ແຕ່ສິ່ງທັງໝົດເຫຼົ່ານັ້ນບໍ່ເປັນເງື່ອນໄຂສຳຄັນ ແລະຕັດສິນຊີວິດຂອງເຮົາ. ບັນຫາສຳຄັນທີ່ສາມາດຕັດສິນຊີວິດ ແລະອະນາຄົດຂອງເຮົາແມ່ນຈຸດທີ່ວ່າ ເຮົາກັກຂັງຕົວເຮົາເອງຢູ່ໃນໂລກແຫ່ງຄວາມໂດດດ່ຽວ ຫຼືເຮົາເປີດຕົວເຮົາເອງສູ່ໂລກພາຍນອກ ແລະພ້ອມທີ່ຈະຮຽນຮູ້ສິ່ງຕ່າງໆ ຫຼືແມ່ນແຕ່ມີຊີວິດຮ່ວມກັບຜູ້ອື່ນໆຢ່າງມີຄວາມສຸກ. ຖ້າຈະລົງເລິກໄປໃນດ້ານວັດທະນະທຳກໍຍິ່ງຈະສາມາດເຫັນໄດ້ເຖິງຄວາມຫຼາກຫຼາຍທີ່ເຮົາບໍ່ສາມາດຫຼີກລ່ຽງໄດ້, ບໍ່ວ່າຈະເປັນວັດທະນະທຳທາງດ້ານການດຳລົງຊີວິດ, ການຢູ່ກິນ, ການນຸ່ງຖື ຫຼືແມ່ນແຕ່ວັດທະນຳທຳທາງພາສາ. ແຕ່ລະຊາດມີພາສາແຕກຕ່າງກັນ ແລະໃນຊາດໜຶ່ງໆກໍຍັງມີຫຼາຍພາສາ ເຊິ່ງລວມມີທັງພາສາແຫ່ງຊາດ ແລະພາສາຖິ່ນ. ບາງຊາດ, ບາງສາສະໜາ, ບາງພາສາ ຫຼືບາງວັດທະນະທຳອາດເປັນປະໂຫຍດ ແລະເປັນເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ບາງກຸ່ມຄົນໃນການດຳລົງຊີບ, ແຕ່ສຳລັບບາງກຸ່ມຄົນອາດຈະບໍ່ແຕ່ສິ່ງທັງໝົດເຫຼົ່ານີ້ຄືຄວາມເປັນຈິງທາງດ້ານພາວະວິໄສ ເຊິ່ງໃຜໆກໍລ້ວນແຕ່ຕ້ອງໄດ້ພົບເຫັນ, ແຕ່ອາດຈະຢູ່ໃນລະດັບທີ່ແຕກຕ່າງກັນ. ທັງໝົດທີ່ກ່າວມານີ້ ຄົນທີ່ບໍ່ມີທັດສະນະຄະຕິຕາຍຕົວຍ່ອມຖືວ່າເປັນໂຊກອຳນວຍ ແລະເປັນໂອກາດທີ່ດີ, ພ້ອມທີ່ຈະຮຽນຮູ້ ແລະຮັບເອົາປະສົບການດັ່ງກ່າວເພື່ອຈະໄດ້ນຳເອົາໄປໃຊ້ໃນກໍລະນີທີ່ຖືກຕ້ອງ ແລະເໝາະສົມ. ຈາກປະສົບການຕົວຈິງຂອງການເຄີຍເປັນນັກຮຽນນັກສຶກສາຜູ້ທີ່ມີໜ້າທີ່ໃນການຮັບ ແລະຂອງການເປັນຄູຜູ້ເຊິ່ງມີໜ້າທີ່ໃນການໃຫ້ ບໍ່ວ່າ

ຈະເປັນຄວາມຮູ້, ຄວາມຄິດ, ປະສົບການ,... ທັງທາງກົງ ແລະທາງອ້ອມສາມາດເຫັນໄດ້ຢ່າງຈະແຈ້ງວ່າ ສິ່ງທີ່ຄູໃຫ້ນັກຮຽນໃນຫ້ອງຮຽນນັ້ນ ມັນເປັນພຽງຕົວຢ່າງທີ່ຖືກກຳນົດວ່າ ຢູ່ໃນປະລິມານທີ່ໜ້ອຍທີ່ສຸດ.

ບົດຮຽນ ແລະປະສົບການຕົວຈິງທີ່ພົບເຫັນໃນຊີວິດຈິງມັນຫຼາກຫຼາຍ, ກວ້າງຂວາງ, ສັບສົນ ແລະຢູ່ໃນເງື່ອນໄຂແວດລ້ອມທີ່ບໍ່ອາດຄາດເດົາ ຫຼືພັນລະນານັບໄດ້. ໃນເວລາສິດສອນ ຄູບໍ່ສາມາດປ້ອນນັກຮຽນຂອງຕົນດັ່ງທີ່ແມ່ປ້ອນເຂົ້າລູກນ້ອຍ, ແຕ່ຈະພະຍາຍາມສອນໃຫ້ເຂົາຮຽນຮູ້ວິທີການກິນດ້ວຍຕົວເຂົາເອງ. ໃນທີ່ນີ້ໝາຍຄວາມໄວ້ວ່າ ເຂົາມີສິດເລືອກທັງທາງດ້ານປະເພດຂອງອາຫານທີ່ເຫັນວ່າເປັນປະໂຫຍດສຳລັບຕົວເຂົາ ແລະທັງທາງດ້ານຍຸດທະວິທີໃນການກິນທີ່ເຫັນວ່າ ມັນດີ, ມີລີລາ ຫຼືມີປະສິດທິພາບ. ວິທີທາງນີ້ເປັນປະໂຫຍດບໍ່ພຽງແຕ່ສຳລັບນັກຮຽນຮູ້ນັກສຶກສາທີ່ຮຽນພາສາຕ່າງປະເທດ ເພື່ອເປົ້າໝາຍໃນການສື່ສານຂ້າມວັດທະນະທຳເທົ່ານັ້ນ ແຕ່ມັນຍັງເປັນປະໂຫຍດສຳລັບນັກຮຽນຮູ້ນັກສຶກສາ ຜູ້ທີ່ປະສົງຢາກປະສົບຜົນສຳເລັດໃນທຸກລະດັບ ແລະທຸກສາຂາວິຊາຮຽນອີກດ້ວຍ.

ດັ່ງທີ່ຮູ້ນຳກັນແລ້ວວ່າ ມະນຸດເປັນສິ່ງທີ່ມີຊີວິດປະເພດໜຶ່ງ ເຊິ່ງແຕກຕ່າງໄປຈາກສິ່ງທີ່ມີຊີວິດປະເພດອື່ນໆ, ແລະມະນຸດແຕ່ລະຄົນກໍເກີດຂຶ້ນມາຈາກຫຼາກຫຼາຍກໍລະນີແວດລ້ອມທີ່ແຕກຕ່າງກັນ. ມະນຸດແຕ່ລະຄົນມີຊີວິດຢູ່ກັບຄຸນຄ່າທາງດ້ານສິລະທຳ, ຈະລິຍະທຳ, ຄວາມສະຫຼຽວສະຫຼາດ, ຄວາມອາດສາມາດ ແລະພອນສະຫວັນຂອງໃຜມັນ. ແຕ່ສິ່ງສຳຄັນໃນທີ່ນີ້ ມະນຸດແຕ່ລະຄົນບໍ່ໄດ້ຄົງຕົວຢູ່ຜູ້ດຽວຢ່າງໂດດດ່ຽວໃນພື້ນໂລກ, ພວກເຮົາດຳລົງຊີວິດຢູ່ຮ່ວມກັບຜູ້ອື່ນໆ, ເຮັດວຽກຮ່ວມກັບຜູ້ອື່ນໆ ຫຼືແມ່ນແຕ່ຜະຈົນໄພໃນຊີວິດກໍຮ່ວມກັບຜູ້ອື່ນໆ; ເພາະສະນັ້ນ ເຮົາຄວນຄຳນຶງໃຫ້ຖີ່ຖ້ວນວ່າ ຈະເຮັດແນວໃດເພື່ອໃຫ້ການດຳລົງຊີວິດຂອງເຮົາເປັນທີ່ໜ້າພໍໃຈ, ມີປະສິດທິພາບ ຫຼືບໍ່ເປັນພິດເປັນໄພຕໍ່ໂລກ ກໍຄືຕໍ່ຜູ້ອື່ນໆ ທີ່ຢູ່ອ້ອມຂ້າງເຮົາ. ດ້ວຍເຫດນີ້ ການຮຽນຮູ້ຜູ້ອື່ນ, ເຂົ້າໃຈຜູ້ອື່ນ, ຮັບຈາກຜູ້ອື່ນ ແລະໃຫ້ຜູ້ອື່ນໆດ້ວຍນັ້ນ ຈຶ່ງເປັນແນວທາງທີ່ດີໃນການດຳລົງຊີບ ເຊິ່ງສົມຄວນແກ່ການກະທຳຂອງມະນຸດ. ມະນຸດຄວນປະພຶດປະຕິບັດຕົນເອງໃຫ້ຢູ່ໃນຂອບເຂດຂອງສິລະທຳ ແລະຈະລິຍະທຳອັນຖືກຕ້ອງເໝາະສົມ ບົນພື້ນຖານຂອງການສະແດງອອກດ້ານຮູບຮ່າງລັກສະນະ, ນິໄສໃຈຄໍ, ຜິວພັນ, ເພດໄວ, ການແຕ່ງຕົວ, ການປາກເວົ້າ, ຕະຫຼອດຮອດວິທີທາງໃນການພົວພັນຕິດຕໍ່ສື່ສານທົ່ວໄປໃນສັງຄົມວັດທະນະທຳທີ່ເຮົາອາໄສຢູ່ ເຊິ່ງເປັນທີ່ແນ່ນອນແລ້ວວ່າ ທັງໝົດເຫຼົ່ານີ້ບໍ່ສາມາດເຮັດໄດ້ໃນຊົ່ວຂ້າມຄືນ. ທຸກຢ່າງຕ້ອງການເວລາໃນການຮຽນຮູ້, ເຝິກຝົນຕະຫຼອດຮອດການລົງເລິກເຖິງພາກປະຕິບັດຕົວຈິງ ໂດຍມີສາສະດາຜູ້ຮູ້ຢູ່ຄຽງຂ້າງໃນຖານະເປັນຜູ້ໃຫ້ຢ່າງປະຕິເສດບໍ່ໄດ້. ຄູ ຫຼືສາສະດາຜູ້ຮູ້ຢູ່ຄູ່ກັບເຮົາໃນທຸກກາລະ-ເທສະ, ທຸກເງື່ອນໄຂ ແລະທຸກກໍລະນີ ຖ້າເຮົາພ້ອມທີ່ຈະຮຽນຮູ້ຈາກພວກເພິ່ນ ເຊິ່ງໃນນີ້ອາດໝາຍເຖິງຄູທີ່ສອນຕົວຈິງຢູ່ໃນຫ້ອງຮຽນ, ທ່ານຜູ້ອາວຸໂສ, ພໍ່ແມ່, ເອື້ອຍນ້ອງ, ເພື່ອນມິດສະຫາຍ ຫຼືແມ່ນແຕ່ເອກະສານຕ່າງໆ ທີ່ຢູ່ອ້ອມຂ້າງເຮົາ ລ້ວນແຕ່ຖືວ່າເປັນຄູຂອງເຮົາໄດ້ ຖ້າເຮົາບໍ່ປະຕິເສດທີ່ຈະຮຽນຮູ້ ຫຼືຢູ່ໃກ້ກັບມັນຢ່າງມີຄວາມໝາຍ. ວິໄສທັດດ້ານບວກສາມາດນຳຜົນກຳໄລອັນຍິ່ງໃຫຍ່ມາສູ່ຊີວິດມະນຸດແຕ່ລະຄົນ ກໍຄືສູ່

ສັງຄົມ; ສ່ວນທັດສະນະຄະຕິຕາຍຕົວນັ້ນເປັນສິ່ງກີດຂວາງໃນການທີ່ຈະປະຈົນໄພຮ່ວມກັບຜູ້ອື່ນຢູ່ໃນສັງຄົມຢ່າງບໍ່ຕ້ອງສົງໄສ.

ທັດສະນະຄະຕິຕາຍຕົວຄືຄວາມເປັນຈິງພາວະໄສ ທີ່ສາມາດເກີດຂຶ້ນໄດ້ໃນທຸກການລະ-ເທ ສະຂອງການພົວພັນຕິດຕໍ່ສື່ສານທົ່ວໄປໃນສັງຄົມມະນຸດ ບໍ່ວ່າຈະເປັນພາຍໃນວັດທະນະທຳດຽວກັນ ຫຼືຂ້າມວັດທະນະທຳ, ແຕ່ຈະໜ້ອຍ ຫຼືຫຼາຍນັ້ນແມ່ນຂຶ້ນຢູ່ກັບພວກເຮົາເອງ. ທັດສະນະຄະຕິຕາຍຕົວອາດເປັນໜຶ່ງໃນຫຼາຍສາເຫດທີ່ສາມາດແຍກຕົວເຮົາໃຫ້ໂດດດ່ຽວຈາກໂລກພາຍນອກ; ທັດສະນະຄະຕິຕາຍຕົວອາດເປັນສິ່ງຊັກຈູງເຮົາອອກຈາກສັງຄົມທີ່ສາມາດຊ່ວຍເຫຼືອເກື້ອກູນ, ໃຫ້ຄວາມຮັກ, ຄວາມອົບອຸ່ນ ແລະໃຫ້ບົດຮຽນອັນລ້ຳຄ່າແກ່ເຮົາ ບໍ່ວ່າໃນຊີວິດຕົວຈິງ ກໍຄືໃນການຮຽນຮູ້ພາສາຕ່າງປະເທດທີ່ເຮົາປາຖະໜາຢາກນຳໃຊ້ມັນໃຫ້ໄດ້ນັ້ນເໝືອນກັນ. ແຕ່ຢ່າລືມວ່າ ທັດສະນະຄະຕິເປັນສິ່ງທີ່ສາມາດປະຖິ້ມ ແລະປັບປ່ຽນໄດ້ໂດຍບໍ່ສຸດວິໄສຂອງມະນຸດ ຖ້າມີຄວາມປະສົງ ແລະຕັ້ງໃຈ. ການຮຽນຮູ້ກ່ຽວກັບວິທີທາງທີ່ຫຼາກຫຼາຍໃນການພົວພັນຕິດຕໍ່ສື່ສານຂອງສັງຄົມ ສາມາດເສີມສ້າງຄວາມອຸດົມສົມບູນໃຫ້ແກ່ຊີວິດ ແລະຍັງສາມາດໃຫ້ຈິນຕະພາບທີ່ເປັນແວ່ນແຍງອັນປະເສີດແກ່ການພັດທະນາຕົວເຮົາເອງອີກດ້ວຍ. ຖ້າເຮົາບໍ່ຢຶດໝ່ຽວ ແລະບໍ່ຕິດແໜ້ນຢູ່ກັບທັດສະນະຄະຕິຕາຍຕົວ, ເຮົາສາມາດເປີດຕົວເຮົາເອງສູ່ໂລກພາຍນອກໄດ້, ສາມາດປົດເປື້ອງຄວາມຢ້ານກົວ ແລະຄວາມຫວາດລະແວງ, ສາມາດລົດລະຄວາມກຽດຄ້ານ, ຄວາມຂີ້ອາຍໃນການຮຽນຮູ້ສິ່ງໃໝ່ໆຈາກສັງຄົມ, ເຮົາກໍຈະບໍ່ໂດດດ່ຽວ, ມີຄວາມຮັກ, ມີຄວາມຫວັງ, ມີພະລັງທີ່ຈະຊ່ວຍໃຫ້ເຮົາໄດ້ຮຽນຮູ້ສິ່ງໃໝ່ ໂດຍສະເພາະພາສາຕ່າງປະເທດເປົ້າໝາຍ ກໍຄືວັດທະນະທຳທາງພາສາຕ່າງປະເທດເປົ້າໝາຍທີ່ເຮົາປາຖະໜາຢາກຮຽນຮູ້ນັ້ນໄດ້ຢ່າງສົມປະສົງ ແລະມີປະສິດ ທິພາບ.

ເອກະສານອ້າງອີງ:

Asher, J., and Garcia, R. 1969. The optimal age to learn a foreign language. Modern language Journal, 38:334-341.

S. Bogdanic i I. Cinfric: Raising awareness of some cultural and linguistic stereotypes.

Weisel, L. P. *Adult Learning Problems: Insights, Instruction, And Implication.* Information Series No. 214) Columbus, OH: ERIC Clearinghouse on Adult, Career, and Vocational Education, 1980.

Winitz, H. *The comprehension Approach To Foreign Language Instruction.* Rowley, MAG Newbury House, 1981.

Internet: Negative Stereotypes Affect Learning, Posted on: September 13, 2010

ອິດທິພົນການສຶບທອດ ດ້ານການສ້າງຕົວລະຄອນຢູ່ໃນວັນນະຄະດີລາວ

ໂດຍ ໄຊຍະສານ ສຸຄັນທະຄະຕິ

ຢູ່ໃນວັນນະຄະດີ, ລັກສະນະຊາດສະແດງອອກຢ່າງຈະແຈ້ງທີ່ສຸດແມ່ນຢູ່ໃນຄຸນລັກສະນະແນວຄິດ ແລະຈິດວິນຍານຂອງຕົວລະຄອນ.ຢູ່ໃນວັນນະຄະດີລາວສະໄໝກ່ອນ ເຖິງວ່າມີການ ພັນລະນາຄົນຫຼາຍປະເພດແຕ່ກໍ່ເຫັນວ່າ ໄດ້ສຸມໃສ່ພັນລະນາຄົນປະເພດໃດປະເພດໜຶ່ງເປັນຕົ້ນຕໍ ເທົ່ານັ້ນ. ຊາດລາວ,ຍ້ອນວ່າປະຊາຊົນສ່ວນໃຫຍ່ເປັນຄົນຖືສາສະໜາພຸດເຊິ່ງເປັນສາສະໜາທີ່ສອນ ໃຫ້ຄົນເຮົາມີຄວາມເອື້ອເຟື້ອເພື່ອແຜ່, ເມດຕາກະລຸນາໂດຍສະເພາະກໍແມ່ນ ຜູ້ຕົກທຸກໄດ້ຍາກ; ດ້ວຍເຫດນັ້ນ, ຮູບພາບຕົວລະຄອນທີ່ໄດ້ຖືກພັນລະນາຢູ່ໃນວັນນະຄະດີລາວສະໄໝກ່ອນສ່ວນໃຫຍ່ຈຶ່ງ ເປັນຄົນທີ່ມີນ້ຳໃຈເອື້ອເຟື້ອເພື່ອແຜ່ ແລະເດັ່ນທີ່ສຸດກໍແມ່ນຮູບພາບຕົວລະຄອນທີ່ເປັນເດັກກຳ ພ້າ ກຳພອຍ ຫຼືເປັນເພດຍິງ. ອີກຢ່າງໜຶ່ງສາສະໜາພຸດໄດ້ສັ່ງສອນໃຫ້ຄົນເຮົາ ຈົ່ງອອກແຮງດັບ ຄວາມ ໂກດ, ຄວາມໂລບ ແລະຄວາມຫຼົງ. ດັ່ງນັ້ນ ຕົວລະຄອນຝ່າຍກົງກັນຂ້າມ (ຕົວລະຄອນອະທຳ) ໃນວັນນະຄະດີສະໄໝກ່ອນມັກຈະເປັນພະຍາທີ່ໃຈດຳອຳມະຫິດ,ເປັນຍັກທີ່ໂຫດຮ້າຍ ແລະ ອື່ນໆ.

ໃນວັນນະຄະດີສະໄໝປັດຈຸບັນຂອງລາວ, ວັນນະຄະດີທີ່ຖືວ່າ ເປັນພື້ນຖານວັນນະຄະດີຂອງ ຊາດໄດ້ນັ້ນແມ່ນວັນນະຄະດີປະຕິວັດທີ່ໄດ້ກຳເນີດ ແລະ ຂະຫຍາຍຕົວໃນທ່າມກາງກະແສຟອງ ແຫ່ງການຕໍ່ສູ້ກູ້ຊາດຂອງປະຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດ ລາວ. ດ້ວຍເຫດນັ້ນຕົວລະຄອນຕົ້ນຕໍໃນເລື່ອງສ່ວນໃຫ່ຍຈະເປັນຜູ້ອຸທິດ ທັ້ງຊີວິດ ແລະ ກາຍໃຈ ໃຫ້ ແກ່ພາລະກິດຕໍ່ສູ້ກູ້ຊາດ ເພື່ອນຳເອົາເອກະລາດ, ເສລີພາບ ແລະຄວາມຢູ່ເຢັນເປັນສຸກມາສູ່ ປະ ຊາຊົນ, ເປັນຕົວລະຄອທີ່ພຽບພ້ອມໄປດ້ວຍທາດແທ້ວິລະຊົນແຫ່ງຍຸກສະໄໝ,ແຕ່ພ້ອມກັນນັ້ນ ກໍຍັງ ເຂັ້ມຂຸ້ນໄປດ້ວຍສີສັນລັກສະນະຊາດ ແ ລ ະ ຮູບແບບຕົວລະຄອນໃນວັນນະຄະດີສະໄໝກ່ອນ ກໍຍັງ ປະກົດມີໃນວັນນະຄະດີສະໄໝປັດຈຸບັນ, ແຕ່ແນ່ນອນວ່າໜ້ອຍບໍ່ຫຼາຍ ມັນກໍມີອັນປ່ຽນແປງໃໝ່, ກ້າວໜ້າທັນສະໄໝກວ່າ.

ເຮົາອາດຈະເອົາຕົວຢ່າງຮູບພາບບັນດາຕົວລະຄອນ “ກຳພ້າ” ; ແຕ່ກໍແນ່ນອນວ່າຢູ່ໃນວັນ ນະຄະດີປະເທດໃດ ກໍມີຕົວລະຄອນກຳພ້າ,ແຕ່ວ່າຢູ່ໃນວັນນະຄະດີລາວເຮົາຈະປາກົດເຫັນມີຫຼາຍ ສົມຄວນ. ເມື່ອເປັນເດັກກຳພ້າແລ້ວ ແນ່ນອນຕ້ອງເປັນເດັກທີ່ຕົກທຸກໄດ້ຍາກ. ຊາວບູຮານໄດ້ແບ່ງ ປັນຄວາມເຫັນອົກເຫັນໃຈໃຫ້ກັບເດັກກຳພ້າກຳພອຍທັ່ງຫຼາຍ ດ້ວຍການຍົກຕົວລະຄອນ “ກຳພ້າ” ໃຫ້ເປັນຜູ້ທີ່ມີຄວາມສະຫຼາດ, ມີປັນຍາພິກໄຫວ, ສາມາດສູ້ເອົາຊະນະກັບພວກມີອຳນາດ, ມີອິດທິ ພົນຄື ດັ່ງ ຢູ່ໃນ ເລື່ອງ *ຊ້າງພ້ຽ*. ເດັກກຳພ້າເປັນຜູ້ທີ່ທຸກຍາກປາກໝອງ ແຕ່ພັດເປັນຄົນມີຈິດໃຈ ກວ້າງຂວາງມີຄວາມເມດຕາກະລຸນາ, ດ້ວຍເຫດນັ້ນພວກເຂົາຈຶ່ງໄດ້ຮັບການປົກປ້ອງເບິ່ງແຍງ ຊ່ວຍເຫຼືອຈາກພະຜູ້ເປັນເຈົ້າ ແລະສິ່ງສັກສິດຢູ່ໃນສະກົນໂລກສະເໝີ, ສາມາດຜາບແພ້ກັບຄວາມ

ໂຫດຮ້າຍປ່າເຖື່ອນນຳເອົາຄວາມຢູ່ເຢັນເປັນສຸກມາໄດ້. ໃນເລື່ອງ *ກຳພ້າຜີນ້ອຍ* ທ້າວກຳພ້າໄປໃສ່ແຮ້ວ, ແລ້ວມີຜີນ້ອຍ, ເງືອກ, ເຫງັນ, ເສືອ... ມາຖືກແຮ້ວຂອງກຳພ້າ. ເມື່ອສັດເຫຼົ່ານັ້ນຮ້ອງຂໍເອົາຊີວິດໄວ້, ກຳພ້າກໍໄດ້ປ່ອຍສັດເຫຼົ່ານັ້ນໄປ ແລະໃນນັ້ນ ພະຍາຊ້າງກໍໄດ້ຖືກປ່ອຍເຊັ່ນດຽວກັນ. ເພື່ອເປັນການຕອບບຸນແທນຄຸນ, ຊ້າງໄດ້ມອບງາໃຫ້ກຳພ້າກິ່ງໜຶ່ງ. ຕໍ່ນັ້ນມາ, ເມື່ອທ້າວກຳພ້າອອກຈາກເຮືອນໄປເຮັດໄຮ່ເຮັດນາກໍມີນາງສາວງາມອອກຈາກງາຊ້າງມາປັດກວາດເຮືອນຊານ ແລະຈັດພາເຂົ້າທິບໄວ້. ເມື່ອທ້າວກຳພ້າກັບມາຮອດເຮືອນເຫັນເຮືອນຊານມີການມ້ຽນມັດເປັນທີ່ຮຽບຮ້ອຍ ແລະມີພາເຂົ້າຈັດປະໄວ້, ທ້າວກໍມີຄວາມອັດສະຈັນໃຈ. ຕໍ່ມາມີມື້ໜຶ່ງທ້າວກຳພ້າລັກຈອບເບິ່ງກໍເລີຍເຫັນມີນາງສາວງາມອອກມາຈາກງາຊ້າງ, ທ້າວຈຶ່ງຈັບໄດ້ ແລະໄດ້ຢູ່ຮ່ວມກັນເປັນຜົວເມຍຢ່າງມີຄວາມສຸກ. ເມື່ອພະຍາຮູ້ເລື່ອງກໍເກີດອິດສາ ແລະກໍເລີຍວາງກົນອຸບາຍເພື່ອຍາດເອົາເມຍກຳພ້າ, ແຕ່ຍ້ອນມີເຫງັນ, ເສືອ, ເງືອກ,...ທີ່ທ້າວກຳພ້າປ່ອຍໄປນັ້ນປອມເປັນໄກ່, ເປັນງົວ, ເປັນເຮືອ... ມາຕໍ່ກັບໄກ່, ຊົນກັບງົວ, ຊ່ວງກັບເຮືອຂອງພະຍາ. ແຕ່ລະຄັ້ງກຳພ້າລ້ວນແຕ່ເປັນຝ່າຍຊະນະ. ສຸດທ້າຍພະຍາກໍໄດ້ໃຊ້ໃຫ້ບ່າງລົ້ວລີ້ນເຂັດໄປເອີ້ນເອົາຂວັນນາງງາເມຍຂອງກຳພ້າ. ແຕ່ຜີນ້ອຍທີ່ກຳພ້າໄດ້ປ່ອຍໃຫ້ເປັນອິດສະຫຼະເມື່ອກ່ອນນັ້ນຮູ້ກ່ອນຈຶ່ງໄດ້ຈັດການສານຂ້ອງ, ຫຼອກໃຫ້ບ່າງລົ້ວເຂົ້າໄປ ແລ້ວລົນໄຟ, ຕັດລີ້ນເຂັດຂອງບ່າງອອກ, ເຮັດໃຫ້ກົນອຸ ບາຍຂອງພະຍາປະລາໄຊຢ່າງສິ້ນເຊີງ, ເຮັດໃຫ້ນາງງາມີຊີວິດຢູ່ເປັນເມຍທ້າວກຳພ້າຢ່າງມີຄວາມ ສຸກ. ເຮົາເຫັນວ່າຢູ່ໃນສັງຄົມສະໄໝກ່ອນ ຜູ້ທີ່ເປັນກຳພ້າກຳພອຍທຸກຍາກຢາກໃຫ້ຊີວິດມີການປ່ຽນແປງໄດ້ ແລະມີຄວາມສຸກກໍຕ້ອງມີສິ່ງສັກສິດ ຫຼືກຳລັງເໜືອທຳມະຊາດມາຊ່ວຍຊູ.

ທັດສະນະຄະຕິກ່ຽວກັບຕົວລະຄອນກຳພ້ານັ້ນ ເຮົາຍັງປະກົດເຫັນມີຢູ່ຢ່າງຫຼວງຫຼາຍໃນວັນນະຄະດີສະໄໝປະຈຸບັນ, ບໍ່ວ່າຈະເປັນຢູ່ ໃນບົດເລື່ອງສັ້ນ, ບົດນະວະນິຍາຍ ບໍ່ວ່າຈະເປັນຕົວລະຄອນທີ່ເປັນຄົນທຳມະດາສາມັນ, ຕົວລະຄອນທີ່ເປັນນັກຮົບວິລະຊົນໃນປະຫວັດສາດ, ຕົວລະຄອນທີ່ນັກປະພັນປັ້ນແຕ່ງຂຶ້ນມາເອງ ແລະອື່ນໆກໍມີຢູ່ໃນເລື່ອງສັ້ນ *ດອກໄມ້ປ່າ* ຂອງສົມບຸນທະວິໄຊ(1968) ໄດ້ເລົ່າກ່ຽວກັບນາງປາຢູ່ບ້ານຫ້ວຍມູນ, ກຳພ້າແມ່ແຕ່ນ້ອຍຍ້ອນເປັນໜີ້ເພຍລີ ນາງກັບພໍ່ຕ້ອງໄດ້ໄປຢູ່ເປັນຂ້ອຍເຮືອນ. ຕໍ່ມາຍ້ອນບໍ່ຍອມເປັນເມຍນ້ອຍຂອງເພຍລີນາງພ້ອມກັບພໍ່ຈຶ່ງໄດ້ຖືກໄລ່ໜີ ແລະຊັດເຊພະເນຈອນໄປ. ຍ້ອນຄວາມເຖົ້າແກ່ ແລະອິດເມື່ອຍ ຜູ້ເປັນພໍ່ກໍໄດ້ຕາຍປະນາງໄປ. ຢູ່ໃນທ່າມກາງປ່າດົງພົງໄພ, ເມື່ອຍແລ້ວ,ແລະຫິວຫລາຍ ນາງກໍ່ໄດ້ສະຫລົບໄປ, ໂຊກດີໄດ້ມີກອງທະຫານຂອງຝ່າຍປະເທດລາວມາພົບ ແລະໄດ້ສົ່ງນາງຄືນສູ່ແມວຫລັງ. ຫລາຍປີຕໍ່ມານາງປາກໍໄດ້ກາຍເປັນພະນັກປະຕິວັດ, ເຄື່ອນໄຫວປະກອບສ່ວນເຂົ້າໃນການປົດປ່ອຍບ້ານເກີດເມືອງນອນ. ໃນນະວະນິຍາຍ *ກອງພັນທີສອງ* ຂອງສຸວັນທອນ ບຸບຜາວົງ (1977) ມີຕົວລະຄອນທ້າວຄຳໝັ້ນກໍເປັນເດັກກຳພ້າຜູ້ໜຶ່ງ. ພໍ່ແມ່ຕາຍປະແຕ່ນ້ອຍ, ອາຍຸຫາກໍໄດ້13 ປີ ທ້າວຕ້ອງໄປຂໍເຂົ້າເຮືອນໃຕ້ເຮືອນເໜືອກິນ, ຕ້ອງໄດ້ໄປຮັບຈ້າງເພື່ອລ້ຽງຊີບ. ຈົນມາເຖິງ1952 ຄຳໝັ້ນຈຶ່ງໄດ້ພົບກັບແສງສະຫວ່າງຂອງການປະຕິວັດ ແລະໄດ້ຮັບເຂົ້າເປັນທະຫານ. ທ້າວຄຳໝັ້ນເຄີຍໄດ້

ເຄື່ອນໄຫວສູ້ຮົບນຳກົມກອງ ຢູ່ພາກໃຕ້ລາວ ຈົນຮອດເວລາໄດ້ຂຶ້ນມາເຕົ້າຮົມສອງແຂວງຊຳເໜືອ ແລະຟອງສາລີ. ຍ້ອນໄດ້ຜ່ານການສູ້ຮົບມາແຕ່ນ້ອຍ ແລະດຽວນີ້ພັດໄດ້ອອກແຮງຮ່ຳ ຮຽນການເມືອງ, ການທະຫານ ແລະວັດທະນະທຳ, ທ້າວຄຳໝັ້ນໄດ້ກາຍເປັນພະນັກງານບັນຊາ ຜູ້ໜຶ່ງທີ່ມີຄວາມອົງອາດກ້າຫານ, ມີຄວາມສາມາດ, ມີຍຸດທະວິທີໄດ້ມີການປະກອບສ່ວນຢ່າງຫລວງຫລາຍ ໃນການຕໍ່ສູ້ຕ້ານຈັກກະພັດອາເມລິກາ.

ພິເສດນະວະນິຍາຍ *ເສັ້ນທາງແຫ່ງຊີວິດ*(1970) ຂອງຈັນທີ ເດືອນສະຫວັນທີ່ດັດແປງມາຈາກເລື່ອງເລົ່າຄືນ *ແສງສະຫວ່າງຂອງການປະຕິວັດ*(1965) ຕົວລະຄອນເອກກໍແມ່ນເດັກກຳພ້າຜູ້ໜຶ່ງ. ຕົວລະຄອນ"ຂ້ອຍ" (ຕົວລະຄອນເອກໃນເລື່ອງ) ພ້ອມກັບແມ່ຊັດເຊພະເນຈອນຫາຮັບຈ້າງກິນ ແລະກໍໄດ້ຕົກໄປເປັນຂ້ອຍເຮືອນເພຍຕົ້ງ. ຍ້ອນຄວາມທຸກທໍລະມານ ຜູ້ເປັນແມ່ກໍ່ພັດຕາຍປະ. ສຸດທ້າຍ "ຂ້ອຍ" ຈຶ່ງໄດ້ພົບກັບກອງທະຫານຂອງຝ່າຍປະເທດລາວ ແລະໄດ້ຖືກຮັບເຂົ້າເປັນທະຫານຢູ່ໃນກົມກອງດັ່ງກ່າວ... ນະວະນິຍາຍ *ພາຍຸຊີວິດ* ຂອງດາວເໜືອກໍຄ້າຍໆຄືແນວນັ້ນ. ທັງໝົດຕົວລະຄອນກຳພ້າກຳພອຍທີ່ໄດ້ກ່າວມາຂ້າງເທິງ ລ້ວນແຕ່ມີຈຸດຄືກັນຢູ່ບ່ອນທຸກຈົນ, ຕ້ອງໄດ້ທຳມາຫາກິນຢ່າງລຳບາກກາກກຳ ແຕ່ຫາກເປັນຄົນສະຫລາດວ່ອງໄວ. ແຕ່ຊາຕາກຳຊີວິດຂອງເຂົາເຈົ້າບໍ່ໄດ້ມີສິ່ງສັກສິດ ຫຼືກຳລັງເໜືອທຳມະຊາດມາຊ່ວຍຊູ, ເຂົາເຈົ້າຫຼຸດພົ້ນຈາກຄວາມທຸກຍາກປາກໜອງໄດ້ ຍ້ອນເຂົາເຈົ້າໄດ້ພົບກັບແສງສະຫວ່າງຂອງການປະຕິວັດ ແມ່ນຍ້ອນຄວາມສູ້ຊົນບຸກໜ້າບືນຕົວ, ຝຶກຝົນຫລໍ່ຫລອມຂອງເຂົາເຈົ້າເອງ.

ຜ່ານຕົວຢ່າງກ່ຽວກັບຮູບແບບຂອງຕົວລະຄອນທີ່ໄດ້ກ່າວມາຂ້າງເທິງ ກໍສາມາດເຫັນ ໄດ້ເຖິງການພົວພັນແບບສັດຈະວິພາກ ລະຫວ່າງອັນທີ່ເປັນມູນເຊື້ອ ກັບອັນທີ່ມີການປ່ຽນແປງໃໝ່ ໄດ້ສ່ອນໃດສ່ອນໜຶ່ງ, ໃນການສ້າງຕົວລະຄອນ ຢູ່ໃນວັນນະຄະດີສະໄໝປັດຈຸບັນຂອງລາວເຮົາ. ແຕ່ທັງໝົດທີ່ໄດ້ກ່າວນີ້ແມ່ນຫາກໍ່ພຽງແຕ່ເປັນຮູບການ ຫລືພາຫະນະທີ່ອ່ຽງໄປທາງດ້ານເນື້ອໃນເທົ່ານັ້ນ. ກ່ຽວກັບການປ່ຽນແປງໃໝ່ນັ້ນ, ຍັງຕ້ອງໄດ້ເບິ່ງຕື່ມ ໃນດ້ານຮູບການທີ່ອ່ຽງໄປທາງດ້ານສິລະປະ. ອາດຈະພໍເວົ້າໄດ້ວ່າ ຢູ່ໃນວັນນະຄະດີສະໄໝກ່ອນ ຕົວລະຄອນມັກຈະເຄື່ອນໄຫວ ແລະດຳລົງຊີວິດ ຢູ່ໃນສະພາບບໍ່ທຳມະດາ, ດັ່ງນັ້ນບໍ່ຫລາຍກໍໜ້ອຍມີລັກສະນະຂອງເທບນິຍາຍ ແລະອະພິທຳມະຊາດ; ຄຸນລັກສະນະຂອງຕົວລະຄອນມີລັກສະນະຕາຍຕົວ ຫຼືຂະຫຍາຍຕົວແບບກ້າວກະໂດດຂັ້ນບໍ່ເປັນລະບົບ, ຂາດຄວາມສົມບຸນດ້ານບຸກຄະລິກພາບ, ຮູບແບບຕົວລະຄອນຂະນິດຕ່າງໆບໍ່ອຸດົມສົມບຸນ. ຄວາມຈຳກັດອັນນັ້ນໃນວັນນະຄະດີສະໄໝກ່ອນມາຮອດດຽວນີ້ກໍຍັງມີຢູ່ໃນວັນນະຄະດີສະໄໝປັດຈຸບັນຂອງລາວ, ແຕ່ສິລະປະດ້ານການປັ້ນແຕ່ງຕົວລະຄອນນີ້ກໍຄ່ອຍໆມີການປ່ຽນແປງໄປສູ່ລະບົບອັນໃໝ່ແຫ່ງຍຸກສະໄໝ.

ໃນວັນນະຄະດີລາວສະໄໝກ່ອນຄືດັ່ງ: *ສັງສິນໄຊ, ກາລະເກດ, ຈຳປາສີ່ຕົ້ນ* ແລະອື່ນໆ. ສະພາບແວດລ້ອມອ້ອມຕົວຂອງຕົວລະຄອນ ແມ່ນຈະມັກເປັນແດນແຫ່ງປ່າດົງພົງໄພທີ່ເຕັມໄປດ້ວຍຜີຮ້າຍ, ສັດຮ້າຍ ແລະຍັກຮ້າຍທີ່ມີອັນຕະລາຍຕໍ່ຊີວິດຂອງຄົນ ຫຼືບໍ່ກໍແມ່ນຈັກກະວານ ອັນ

ກ້ວາງໃຫຍ່ໄພສານທີ່ເຕັມໄປດ້ວຍອະພິກຳລັງ ແລະອຳນາດອັນລຶກລັບຂອງທຳທະຊາດ. ເທສະ ສະຖານທີ່ເຄີຍກ່າວເຖິງຢູ່ໃນວັນນະຄະດີລາວສະໄໝກ່ອນມັກຈະມີແດນສະຫວັນ, ນະຮົກ, ເມືອງ ຟ້າເມືອງຜີ ແລະອື່ນໆ. ເຖິງຢ່າງນັ້ນກໍຕາມແຕ່ຂໍ້ຂັດແຍ່ງ ແລະການປະທະຢູ່ໃນເລື່ອງຕ່າງໆກໍມີ ຄວາມໝາຍສັງຄົມອັນເລິກເຊິ່ງຄື ລະຫວ່າງບຸນ ແລະ ບາບ, ລະຫວ່າງຜິດ ກັບ ຖືກ, ລະຫວ່າງ ຄວາມດີ ແລະຄວາມຖ່ອຍຮ້າຍ ແລະອື່ນໆ; ແຕ່ມັກຈະໄປຕາມແບບສະບັບ (motif) ເຊັ່ນ ຍາດ ບັນລັງ(ສັງສິນໄຊ), ຍາດນາງງາມ (ກາລະເກດ), ດັບຄວາມໂຫດຮ້າຍ (ຈຳປາສີ່ຕົ້ນ) ແລະອື່ນໆ. ດ້ວຍເຫດນັ້ນ, ອັນທີ່ເອີ້ນວ່າບັນຫາຕົວລະຄອນຢູ່ໃນວັນນະຄະດີສະໄໝກ່ອນໃນທີ່ຈິງແລ້ວເຫັນວ່າ ເປັນເຄິ່ງຄົນເຄິ່ງເທບ ຫຼືເຄິ່ງຄົນເຄິ່ງສັດ. ໃນເລື່ອງ*ສັງສິນໄຊ*, ພະຍາກຸດສະຫຼາດ, ນາງສຸມຸນທາ ແມ່ນເປັນຄົນ, ສ່ວນທີ່ ສີໂທ ເປັນຊ້າງ, ສັງທອງເຖິງວ່າເກີດຮ່ວມແມ່ດຽວພໍ່ດຽວກັບສິນໄຊ ແຕ່ ພັດມີຮູບຮ່າງເປັນໂຕຫອຍ; ສ່ວນກຸມພັນພັດເປັນຍັກ. ຢາກມີຊີວິດຢູ່ໄດ້ໃນເງື່ອນໄຂໂລກອ້ອມຕົວ ຄືແນວນັ້ນ, ຄົນທຳມະດາບໍ່ທຳການສູ້ຮົບຕົບຕີໄດ້. ມັນຕ້ອງເປັນຄົນທີ່ມີລິດເດດເກັ່ງກ້າເໜືອຄົນ ທຳມະດາ ແລະຕ້ອງໄດ້ຮັບການຊ່ວຍເຫຼືອຂອງພະອິນ ຫຼືສິ່ງສັກສິດໃນໂລກ. ທ້າວສິນໄຊເປັນຄົນ ສຸພາບອ່ອນໂຍນ, ຂ້ອນຂ້າງເປັນຄົນໜູເປົ້າໃຈງ່າຍ. ແຕ່ໃນຂະນະດຽວກັນນັ້ນ, ສິນໄຊກໍພັດເປັນຜູ້ ທີ່ມີລິດເດດເກັ່ງກ້າສາມາດທຳການຮົບເລວກັບພະຍາຍັກກຸມພັນໄດ້ໄຊຊະນະ. ທ້າວລືນທອງ ໃນ ເລື່ອງ*ລືນທອງ* ກໍສາມາດຍາດເອົາບັນລັງຈາກມືຜີມານກັບຄືນມາໄດ້. ທ້າວກາລະເກດໃນເລື່ອງ *ກາລະເກດ*ກໍສາມາດສູ້ຮົບຍາດເອົານາງມະນີຈັນກັບຄືນມາໄດ້ ແລະອື່ນ.

ກົງກັນຂ້າມ, ຕົວລະຄອນໃນວັນນະຄະດີສະໄໝປັດຈຸບັນເຖິງເຂົາເຈົ້າກໍມີຄວາມເກັ່ງກ້າ ອາດຫານແຕ່ກໍເປັນຄົນທຳມະດາສາມັນຄືໃນຊີວິດຕົວຈິງ. ເຂົາເຈົ້າທັງເປັນໂຕຂອງຕົວເອງ ແລະ ທັງເປັນຜະລິດຕະພັນຂອງວິວັດປະຫວັດສາດແຫ່ງການຕໍ່ສູ້ຕ້ານການຮຸກຮານ, ຕ້ານການກົດຂີ່ຂູດ ຮີດ, ສ້າງສາຊີວິດໃໝ່ຢູ່ບົນດິນແດນລາວໃນຊ່ວງເວລາຫຼາຍກວ່າເຄິ່ງສະຕະວັດຜ່ານມາ. ເທສະ ສະຖານແຫ່ງການເຄື່ອນໄຫວຂອງຕົວລະຄອນກໍແມ່ນສະຖານທີ່ ທີ່ມີຈິງຄັກແນ່. ນັ້ນແມ່ນບ້ານໂຮ່, ບ້ານໂພ, ຫຼືບົນພູພຽງບໍລະເວນ. ນັ້ນແມ່ນເຂດປົດປ່ອຍ (ຊຳເໜືອ, ຟອງສາລີ, ທົ່ງໄຫຫີນຊຽງ ຂວາງ), ຫລືນະຄອນຫລວງວຽງຈັນ ກ່ອນ ແລະຫລັງປົດປ່ອຍ ຫລືຢູ່ຕ່າງປະເທດ(ຮ່າໂນ້ຍ...). ເຂົາເຈົ້າບາງຄົນເປັນເດັກກຳພ້າບໍ່ມີທີ່ເພິ່ງພາອາໄສ ຫຼືຖືກໄປເປັນຂ້ອຍເຮືອນ ຫຼືໄປຮັບຈ້າງກິນ (ສີນ້ອຍ, ຄຳໝັ້ນ, ຄຳສອນ...) ແລະ ຕໍ່ມາໄດ້ກາຍເປັນພະນັກງານນັກຮົບອິດສະລະ, ປະເທດ ລາວ, ແນວລາວຮັກຊາດ(ຄຳໝັ້ນ, ຄຳແດງ, ທ້າວຜາ...), ເປັນນາຍທະຫານ(ທ້າວຄົມ...), ເປັນ ແພດປະຕິວັດ(ສີນ້ອຍ...) ໝາຍຄວາມວ່າເຂົາເຈົ້າເປັນຄົນທຳມະດາທີ່ພວກເຮົາ ອາດຈະໄດ້ພົບໃນ ຊີວິດຕົວຈິງ. ບົນຄວາມໝາຍຢູ່ໃນລະດັບອັນແນ່ນອນໃດໜຶ່ງ, ເຮົາສາມາດເວົ້າໄດ້ວ່າ ວັນນະຄະ ດີສະໄໝປັດຈຸບັນຂອງລາວສາມາດສ້າງຕົວລະຄອນພັນທະຮູບຕົວແບບ ດັ່ງໃນສະພາບແວດລ້ອມ ພັນທະຮູບຕົວແບບທີ່ທ່ານ ອ້ງແກນໄດ້ເວົ້າ. ບັນຫານີ້ພວກເຮົາຈະເຫັນແຈ້ງຕື່ມຢູ່ໃນສ່ວນ ຕໍ່ໄປນີ້.

ໃນການຜັນຂະຫຍາຍຄຸນລັກສະນະຂອງຕົວລະຄອນ, ຍ້ອນວ່າໄດ້ຈັດວາງຕົວລະຄອນຢູ່ໃນສະພາບຄວາມເປັນຈິງ ຂອງປະຫວັດສາດ ແລະສັງຄົມ, ດັ່ງນັ້ນຄຸນລັກສະນະຂອງຕົວລະຄອນຈຶ່ງບໍ່ຕາຍຕົວແບບເກົ່າ ຕ້ອງໄດ້ປ່ຽນແປງໄປຕາມສະພາບສັງຄົມ. ເວົ້າອີກຢ່າງໜຶ່ງ ການປ່ຽນແປງນີ້ບໍ່ແມ່ນຕາມເປັນຕາມເກີດ ຫລືແບບບັງເອີນ ຕາມອັດຕະວິໄສຂອງນັກປະພັນ; ແຕ່ມັນຫາກແມ່ນຍ້ອນສະພາບການແວດລ້ອມອ້ອມຕົວກຳນົດ. ລອງເອົາຕົວຢ່າງ ຕົວລະຄອນນາງວິງເພັດ ໃນນະວະນິຍາຍ *ສອງເອື້ອຍນ້ອງ* ຂອງສຸວັນທອນ ບຸບຜານຸວົງ ນາງເປັນລູກສາວຂອງນາຍທະຫານໃນກຳລັງເປັນກາງຄອບຄົວໜຶ່ງ, ມີນຳກັນສອງເອື້ອຍນ້ອງ, ຜູ້ເປັນນ້ອງຊື່ນາງວິງພັນ ນາງຢູ່ບ້ານເກີດເມືອງນອນທີ່ຊຽງຂວາງ ນຳແມ່, ພາຍຫລັງແຂວງຊຽງຂວາງໄດ້ຮັບການປົດປ່ອຍ ນາງໄດ້ກາຍເປັນພະນັກງານປະຕິວັດຜູ້ໜຶ່ງ. ສ່ວນນາງວິງເພັດ ຜູ້ເປັນເອື້ອຍໄດ້ໄປນຳພໍ່ທີ່ເມືອງວຽງຈັນ ແຕ່ນ້ອຍ. ພາຍຫລັງຮຽນຈົບມັດທະຍົມ ນາງໄດ້ກາຍເປັນນັກຂ່າວ ເຮັດວຽກຢູ່ວິທະຍຸກະຈາຍສຽງ. ນາງໄດ້ຖືກເບື່ອເມົາ ດ້ວຍຂໍ້ຄວາມໂຄສະນາຊວນເຊື່ອຂອງພວກຈັກກະພັດອາເມລິກາ ແລະລູກແຫ້ງຕົນມື. ດ້ວຍເຫດນັ້ນ ນາງວິງເພັດຈຶ່ງມີຄວາມເຂົ້າໃຈຜິດຕໍ່ກັບການປະຕິວັດ, ຕໍ່ກັບແນວລາວຮັກຊາດ, ພິເສດຕໍ່ກັບຂ່າວການຕາຍຂອງພໍ່ ໃນເວລາສູ້ຮົບກັບທະຫານຝ່າຍຂວາ ແລະລູກແຫລ້ງຕົນມືຂອງອາເມລິກາຢູ່ເມືອງພັ້ນໃນຖານະເປັນນາຍທະຫານຂອງກຳລັງເປັນກາງຮັກຊາດຜູ້ໜຶ່ງ ແຕ່ຖືກຈັກກະພັດອາເມລິກາ ແລະລູກແຫລ້ງຕົນມີເສກສັນປັ້ນແຕ່ງວ່າແມ່ນຝ່າຍປະເທດລາວເປັນຜູ້ຂ້າ, ຂ່າວນັ້ນ ຍິ່ງເຮັດໃຫ້ນາງວິງເພັດຄຽດຊັງການປະຕິວັດ, ແຕ່ເມື່ອນາງໄດ້ຕົກເປັນຈຳເລີຍຂອງຝ່າຍປະເທດລາວ, ນາງໄດ້ເຫັນຕົວຈິງຂອງເຂດປົດປ່ອຍດ້ວຍຕາຂອງຕົນເອງ, ໂດຍສະເພາະແມ່ນໄດ້ເຫັນນັກຮົບປະຕິວັດ, ເຖິງວ່າທຸກຍາກ ແຕ່ເຂົາເຈົ້າເປັນຄົນດຳລົງຊີວິດແບບສະບາຍ, ງ່າຍດາຍ ແຕ່ເຕັມໄປດ້ວຍອຸດົມຄະຕິອັນສູງສົ່ງ ແລະມີຈິດໃຈເມດຕາ ເອື້ອເຟື້ອ ຊ່ວຍເຫລືອກັນຢ່າງໝົດອົກໝົດໃຈ, ນັບທັ້ງທີ່ເຫັນເຂົາເຈົ້າປະພຶດຕໍ່ຕົນເອງ, ດ້ວຍເຫດນັ້ນນາງວິງເພັດຈຶ່ງຄ່ອຍໆເຫັນ ໄດ້ສັດຈະທຳ ແລະໄດ້ຕັດສິນໃຈເດີນໄປຕາມເສັ້ນທາງທີ່ຜູ້ເປັນນ້ອງໄດ້ເລືອກ. ນາງສົມພອນຕະ ຫຼອດລູກເມຍຂອງທະຫານຫຸ່ນຈຳນວນໜຶ່ງຄື ນາງຄຳດີ, ນາງຈັນທອມ,..ໃນນະວະນິຍາຍ*ກອງພັນ ທີ່ສອງ* ເຖິງວ່າມັນຕ່າງກັນກັບນະວະນິຍາຍ *ສອງເອື້ອຍນ້ອງ* ແຕ່ວິວັດການ ຂະຫຍາຍຕົວ ຄຸນລັກສະນະຂອງຕົວລະຄອນກໍເໜືອກັນ.

ບັນດາຕົວລະຄອນຢູ່ໃນວັນນະຄະດີປະເພດນະວິນິຍາຍສະໄໝກ່ອນຈະເປັນພຽງຕົວແທນແບບດຽວໃຫ້ແກ່ຄົນດີ ຫຼືຄົນຖ່ອຍຮ້າຍ, ຄົນສົມທຳ ຫຼືຄົນອະທຳເທົ່ານັ້ນ, ດ້ວຍເຫດນັ້ນຈຶ່ງເປັນຕົວລະຄອນທີ່ເປັນຕົວແທນແບບໃດແບບໜຶ່ງເທົ່ານັ້ນຄື ທ້າວສົມໄຊ, ທ້າວກາລະເກດ, ຍັກກຸມພັນ, ນາງອັກຄີ ແລະອື່ນໆ. ກົງກັນຂ້າມບັນດາບົດປະພັນທີ່ເດັ່ນຢູ່ໃນວັນນະຄະດີ ສະໄໝປັດຈຸບັນຂອງລາວ, ຢູ່ໃນລະດັບໃດໜຶ່ງທີ່ແນ່ນອນ " ຕົວລະຄອນແຕ່ລະຕົວເປັນພັນທະຮູບຕົວແບບໜຶ່ງ, ພ້ອມກັນນັ້ນກໍແມ່ນບຸກຄະລິກພາບໜຶ່ງ, ແມ່ນຄົນຜູ້ນັ້ນ" ຄືດັ່ງອ້າງແກນໄດ້ເວົ້າຢູ່ໃນຈົດໝາຍທີ່ຝາກເຖິງມີນາກາສະກີ. ລອງກັບຄືນຫາຕົວລະຄອນທ້າວຄຳໝັ້ນໃນນະວະນິຍາຍ *ກອງພັນທີ່ສອງ* ເຊິ່ງເປັນ

ເດັກກຳພ້າຜູ້ໜຶ່ງທີ່ມີຄວາມສະຫຼາດອາດຫານຢູ່ໃນກອງທັບ; ແຕ່ເປັນຄົນຜູ້ໜຶ່ງທີ່ພິເສດ, ເປັນຄົນ ຂ້ອນຂ້າງຂີ້ອາຍ, ໜັກປາກ ແຕ່ມີມະນຸດສຳພັນດີຕໍ່ກັບທຸກຄົນ. ລາວເປັນຄົນມັກອ່ານປຶ້ມເປັນພິ ເສດ. ຖືກບາດເຈັບນອນປິ່ນປົວຢູ່ໂຮງໝໍເປັນເວລາຫຼາຍອາທິດ, ພໍແຕ່ໄຄແຄມຂຶ້ນມາໜ້ອຍໜຶ່ງ ລາວກໍອ່ານປຶ້ມ ຈົນເຖິງຂັ້ນບໍ່ຮູ້ຮອດວ່າຄົນຮັກຂອງຕົນເອງກໍກຳລັງປິ່ນປົວຢູ່ໂຮງໝໍດຽວກັນ. ລາວ ຮັກກັບນາງສົມພອນ. ເວລາໄປຫານາງສົມພອນ ລາວກໍຖືປຶ້ມໄປນຳເພື່ອກໍລະນີນາງສົມພອນ ບໍ່ຢູ່ກໍ ເອົາ ປຶ້ມອອກມາອ່ານ. ຕໍ່ມານາງ ຈັນທອນ ເພື່ອນສະໜິດສະໜົມຂອງນາງສົມພອນ ໄດ້ເລົ່າວ່າ: ເມື່ອ ຮູ້ວ່າເຈົ້າບໍ່ຢູ່ເຮືອນ ,ອ້າຍຄຳໝັ້ນ ກໍນັ່ງລົງຕັ່ງແລ້ວດຶງເອົາໜັງສືໃນຖົງອອກມາອ່ານຜູ້ດຽວເບິ່ງ ຄືຈັ່ງວ່າ ລາວບໍ່ສົນໃຈເຖິງໂລກອັນນີ້. ລາວຕ້ອງການແຕ່ໃຫ້ມີເວລາອ່ານປຶ້ມ, ບາງເທື່ອການອ່ານ ປຶ້ມອາດຈະເປັນຄວາມສຸກຂອງລາວແທ້ ເຫັນລາວພາຍວິທະຍຸມາພ້ອມ ແຕ່ຫາກບໍ່ເຫັນ ລາວເປີດ ຟັງເພງ, ຟັງລຳຫຍັງ. ຈັ່ງແມ່ນຄົນຜູ້ນັ້ນບໍ່ຄືຜູ້ໃດແທ້ໆ. ໃນນະວະນິຍາຍເລື່ອງນີ້ ຍັງມີຕົວລະຄອນ ທີ່ ເປັນແມ່ຍິງຢ່າງຫຼວງຫຼາຍ.ໃນນັ້ນອາດຈະແບ່ງອອກໄປເປັນແຕ່ລະກຸ່ມຕ່າງກັນ. ກຸ່ມລູກເມຍ ພະນັກ ງານ,ທະຫານເຮົາ ມີນາງໂສພາ, ນາງຟອງສະໝຸດ; ລຸກເມຍ ແລະນາຍພົນທະຫານ ຫຸ່ນມີ ນາງຄຳດີ, ນາງສິນ; ຊຸມຍິງສາວທີ່ມີຈິດໃຈນຳການປະຕິວັດມີ ນາງສົມພອນ, ນາງຍອດສີ; ຍິງສາວທີ່ເປັນນັກ ຮຽນຮູ້ ປັນຍາຊົນມີ ນາງເຂັມເພັດ, ນາງ ດອກເກດ ແລະອື່ນໆ. ພາຍໃຕ້ປາຍປາກກາ ສ. ບຸບຜານຸ ວົງ ຕົວລະຄອນທັງໝົດແມ່ນແບບໃຜແບບມັນພ້ອມດ້ວຍ ບຸກຄະລິກພາບ ແລະຊາຕາກຳຕ່າງ ກັນ.

ໃນວັນນະຄະດີສະໄໝປັດຈຸບັນຂອງລາວ ບັນດາຕົວລະຄອນກໍໄດ້ເ ລີ່ມ ມີການພັນລະນາ ເລິກເຂົ້າໄປທາງດ້ານຈິດຕະສາດ. ກໍລະນີນີ້ບໍ່ຄ່ອຍມີໃຫ້ເຮົາເຫັນຢູ່ໃນວັນນະຄະດີສະໄໝກ່ອນ. ຕົວຢ່າງໃນການປະດິດແຕ່ງຂອງ ສ.ບຸບຜານຸວົງ, ພວກເຮົາມັກຈະພົບເຫັນຕົວລະຄອນທີ່ມີ ການພົ ມ ພຳໃນໃຈຜູ້ດຽວ. ຕົວລະຄອນຢູ່ໃນເລື່ອງ *ຫວນຄືນຫຼັງ* , ຕໍ່ກັບການເຮັດເມີນເສີຍຂອງນາງແກ້ວ ມະນີວັນ, ທ້າວຄົມໄດ້ມີການລະມັດລະວັງ ພ້ອມກັນນັ້ນກໍມີການຄຶດໆຢູ່ໃນໃຈ(ລອງເບິ່ງຈັກບາດ ຊິເປັນແນວໃດ). ໃນນະວະນິຍາຍ *ກອງພັນທີສອງ*: ນາງສົມພອນຕ້ອງໄດ້ຂົ່ມໃຈໄປ ຮ່ວມງານວັນ ເກີດຂອງຮ້ອຍໂທຄຳດີ ນາຍທະຫານຜູ້ໜຶ່ງຂອງກຳລັງເປັນກາງ, ເບື້ອງນອກນາງຍິ້ມແຍ້ມແຈ່ມ ໃສ ແຕ່ໃນໃຈຮ້ອນຄືໄຟລົນເພາະຜິດນັດກັບຄຳໝັ້ນ, ຍິ່ງໄປກ່ວານັ້ນບັງເອີນ ຖ້າອ້າຍຄຳໝັ້ນພົບ ເຫັນ ຕົນເອງກຳລັງຍິ້ມແຍ້ມແຈ່ມໃສຢູ່ກັບຄົນອື່ນແນວນີ້,ແຕ່ກໍບໍ່ຮູ້ວ ່ າ ເວລານີ້ ລາວກຳລັງໄປກັບນາງ ດອກເກດ...ໃນນະວະນິຍາຍ *ສອງເອື້ອຍນ້ອງ*. ເມື່ອໄດ້ຮັບຂ່າວວ່ານາງ ວົງເພັດ ຜູ້ເປັນເອື້ອຍ ໄດ້ກັບ ຄືນມາສູ່ການປະຕິວັດເຊິ່ງແມ່ນບຸນມີຄົນຮັກຂອງຕົນເອງເປັນຜູ້ເອົາໃຈ ໃສ່ເບິ່ງແຍງ. ດັ່ງນັ້ນໃນ ຄວາມດີໃຈນາງວົງພັນ ພັດເກີດມີຄວາມສົງໄສ ຫຼືຫວງ. ບ່ອນທີ່ພັນລະນາເລິກເຂົ້າໄປເຖິງຄວາມ ໃນໃຈແບບນີ້ ໄດ້ເຮັດໃຫ້ການພັນລະນາຕົວລະຄອນມີລວງເລິກ, ມີຄວາມຊື່ຕົງ ແລະມີຊີ ວິດຊີວາ. ເວົ້າລວມແລ້ວ, ຕົວລະຄອນໃນວັນນະຄະດີສະໄໝປັດຈຸບັນຂອງລາວມີຮາກເຫງົ້າມາຈາກວັນ ນະ ຄະດີສະໄໝກ່ອນທີ່ເປັນມູນເຊື້ອມາແລ້ວ, ພ້ອມກັນນັ້ນກໍມີການປ່ຽນແປງໃໝ່ຢ່າງບໍ່ຢຸດຢັ້ງ ບໍ່ວ່າ ທາງດ້ານເນື້ອໃນປະຫວັດສາດສັງຄົມກໍຄືທາງດ້ານສິລະປະການສະແດງອອກອີກດ້ວຍ.

ภะแสอันมะคะดิสัดจะทัดอิจาม: บิดธรรมสอม อันมะคะดิต่างปะเทด ผ่านบิดปะพันที่ดิเด่น(ไลยะ1930-1945) ก่องกับชินมะบิดหวงดนาม

โดย เธืองแสง สุลงมทำ

I ถวามพาย ถวามสำคัน

1. อันมะคะดิหวงดนามไลยะ 1930-1945 ได้มีกานขะหยายตัวอย่างกว้างขวาง และอุดมสมบูนเต็มไปด้อยถวามสับสิน เพาะมีพายกะแสอันมะคะดิเกิดขึ้น เช่น อันมะคะดิเพินจิด, อันมะคะดิเพิ่งตินเอง, อันมะคะดิปะติวัด, ขะบวนกอมใพ่, เด่นกว่าพู่แม่นอันมะคะดิสัดจะทัดอิจาม. เมื่อค้นคว้า "ชินมะบิด" หวงดนามเนื้อ แท้แม่นเว้าเถิง ชาวนา นี้แม่นหัวข้อใหย่กว้าง ขวางกวมพายด้านเป็นหัวข้อที่หน้าสินใจ และจับตามอง ของนักค้นคว้าบ่ ว่าแต่นักค้นคว้าใดๆ ก่ให้ทัดสะมะในกาน ติลาคาสูงต่กับชิวิดกาน เป็นยู่ของชาวนาชินมะบิด, ในนั้น มีพายนักปะพัน, นักอิจามอันมะคะดิได้เร็ดสำเล็ดหน้าที่ของติน เป็นติ้นบิดค้นคว้าอันมะคะดิเพ้ม II ของกุ่ม "เลกุ่ยโดม", เอกกะสามปะหวัด อันมะคะดิเพ้ม V, ตูปื้มมะหาอิหะยาไลสางคูร่าโน้ย, พ้อมกันนี้ ยังมีนักค้นคว้าสะเพาะก่องกับปันหา "ชาวนาชินมะบิด"ของนักปะพัน, นักอิจามเช่น อู้จ้องฝุง, หง้วมกิงธวาม, โงเติดโต้, นามกาว. นอกนี้ยังมีนักค้นคว้าที่สูงอายุถื ฟามก็เดะ, หงวมดึกด่าม, หามิงดึก, หง้วมดังแม้ง, หง้วมแห้งคุง, ฟองเล และผู้อื่นๆ. ปันดากิดจะกามในกานค้นคว้าในหัวข้อ "ชาวนาชินมะบิด" ข้าพะเจ้าเห็นว่าเป็นกานยกสูงอันมะคะดิขึ้นเพื่อส่องแสงชาวนาชินมะบิด.

2. จุดปะสิงต้นตุในกานค้นคว้าหัวบิดนี้ แม่นเป็นกานขอกรู้ และติลาคาขะบวนกาน ที่มียู่ในหัวข้อ "ชาวนาชินมะบิด" ของกะแสอันมะคะดิสัดจะทัดอิจามเว้าลวม เว้าสะเพาะปันดาท่าอ่วงที่นอนในปันดาบิดที่มีลักสะมะค้นคว้าเช่น บิดอิจามของโงเติดโต้ ในหัวข้อ "ชั้นคนถูกปะป่อย" เนื่อในบิดนี้มีตอนหนึ่งท่านก่าวอ่า " ปะเทดหนึ่งคือกวมเพ้มหนึ่ง, ชั้นปันยาชินเป็นง่อแก่, ชั้นชาว ไธ่นาเป็นผู้ขุก, ถ้าพอกขุกมีปันหาใดหนึ่งถูกมัดตินสองเบื้องไว้ย่างแพ้น, แน่นอนว่าพอกที่เป็น ง่อแก่จะมีละดับถวามรู้ถวามสามาดสูงขั้นใดก่ตามก่บ่อาดแก่กวมขึ้นโมนได้".

จากปันหาที่ก่าวมานี้ชี้บอกว่า ปะเทดหนึ่งๆยากมีถวามจะเลินรุ่งเรืองนั้นบ่แม่นว่าจะมี แต่นักธรมรู้ปันยาชิน หรือนักค้นคว้าอิหะยาสาดเท่านั้น แต่กำลังพื้นถานแม่นชาวนา, ปะชาชิน ปันดาเผ่า. ถ้าละดับถวามรับรู้ของเขาเจ้ายังต่ำ. แนวคิดของเขายังถูกถอบง่ำจากฮีดถอง ปะเพนิอันเก่าแก่หล้าหลัง, ชิวิดกานเป็นยู่ของเขาเจ้ายังทุกยากขาดเข็น, บ่ได้รับกานพัดทะนา ขาดนั้นก่จะบ่จะเลินรุ่งเรืองสิวิไลได้ พายว่า โงเติดโต้ ได้เอาใจใส่

ຊາວນາຊົນນະບົດ ເປັນພິເສດ, ຍົກສູງຖານະຂອງຊາວນາຂຶ້ນ, ສາມາດເອົານາເຂົ້າໃນວັນນະຄະດີ ແລ້ວສ້າງເປັນພັນທະຮູບຕົວແບບ.

3. ໃນໂຄງການສິດສອນວັນນະຄະດີຕ່າງປະເທດທີ່ຂຶ້ນກັບຫຼັກສູດການສອນໃນພາກວິຊາພາສາລາວ-ວັນນະຄະດີ, ມະຫາວິທະຍາໄລແຫ່ງຊາດ. ກະແສວັນນະຄະດີສັດຈະທັດວິຈານໄລຍະ 1930-1945 ແມ່ນ ບັນດາເຫດການໜຶ່ງ ທີ່ສອນເປັນຈຳນວນຫຼາຍ. ນອກນີ້ ຍັງສອນຢູ່ໂຮງຮຽນສາມັນສຶກສາໃນຂອງເຂດທົ່ວປະເທດ. ຄົ້ນຄວ້າຫົວບົດນີ້ເປັນໂອກາດໃຫ້ຜູ້ປະຕິບັດຕົວຈິງເພີ່ມຄວາມຮູ້ຄວາມສາມາດເຂົ້າໃນການ ສິດສອນວັນນະຄະດີສັດຈະທັດວິຈານຫວຽດນາມ ໃຫ້ດີຂຶ້ນ ທຽບໃສ່ເວລາກ່ອນທີ່ຍັງບໍ່ທັນໄດ້ຄົ້ນຄວ້າ.

II. ວິທີການຄົ້ນຄວ້າ

ພາຍຫຼັງເກັບກຳຂໍ້ມູນທີ່ກ່ຽວຂ້ອງຫົວຂໍ້ທີ່ຄົ້ນຄວ້າແລ້ວ,ໄດ້ນຳໃຊ້:

1. **ການວິເຄາະຕົວລະຄອນຕິດພັນລະຫວ່າງເນື້ອໃນ ແລະສິລະປະ.** ສຳລັບເນື້ອໃນບົດ "ຊາວນາຊົນນະບົດ" ຂ້າພະເຈົ້າໄດ້ແຍກອອກເປັນສອງພາກສ່ວນໃຫຍ່ຄື ສັງຄົມ ແລະວັນນະຄະດີ, ໝາຍວ່າຄົ້ນຄວ້າວັນນະຄະດີສ່ອງແສງສັງຄົມ.

1.1 ຍັດຕິເຄົ້າທາງສັງຄົມ. ການຄົ້ນຄວ້ານີ້ພື້ນຖານໂຄງສ້າງເສດຖະກິດ, ການພົວພັນການຜະລິດໄປພ້ອມໆກັບການຂະຫຍາຍຕົວຂອງຊົນຊັ້ນລະຫວ່າງຊາວນາກັບເຈົ້າທີ່ດິນສັກດິນາ, ຄົ້ນຄວ້າຂໍ້ຂັດແຍ່ງລະຫວ່າງຊາວນາກັບເຈົ້າທີ່ດິນສັກດິນາ ແລະຄົ້ນຄວ້າເຖິງຄວາມບໍ່ຍຸຕິທຳຂອງສັງຄົມສັກດິນາ, ກົດຂີ່ຂູດຮູດຊາວນາເຮັດໃຫ້ຊີວິດການເປັນຢູ່ ຂອງເຂົາເຈົ້າຕົກສູ່ການຄອບງຳ, ຊາວນາບໍ່ມີອາຊີບ, ຫາເຊົ້າກິນຄ่ำ, ຊັດເຊພະເນຈອນ.

1.2 ຍັດຕິເຄົ້າວັນນະຄະດີ.ເວົ້າເຖິງຫົວຂໍ້"ຊາວນາ" ມີນັກປະພັນເຊັ່ນວ່າ ຫງ້ວງນຢູ, ຕົ້ງທຽນເວືອງມຽນເທົ້ມ,ດັ່ງຮຸຍຈ໊ີ,ຫງ້ວງນຂ້ວງນ...ສະຕະວັດທີ XX ມີບົດປະພັນຕີຫງ້ອກ,ໂຮ່ບ້ຽວແຈ້ງ.

ວັນນະຄະດີສັດຈະທັດວິຈານໄລຍະ1930-1945 ຂຽນກ່ຽວກັບຫົວຂໍ້ "ຊາວນາຊົນນະບົດ" ມີນັກ ປະພັນທີ່ຂຽນດີເດ່ັນ: ວູ້ຈ້ອງຝຸ, ຫງ້ວງນກົງຮວານ, ໂງເຕິດໂຕ ແລະນາມກາວ, ທັງໝົດນັ້ນໄດ້ສ່ອງແສງ ຊີວິດການເປັນຢູ່ຂອງຊາວນາຢູ່ຊົນນະບົດຫວຽດນາມ.

2. ໃຊ້ການປຽບທຽບຄຸນຄ่າວັນນະຄະດີ

2.1 ຄຸນຄ่າຕົວຈິງ. ຫົວຂໍ້ "ຊາວນາຊົນນະບົດ" ໄດ້ສ່ອງແສງຢ່າງມີຊີວິດຊີວາ ເຖິງຄວາມຊົ່ວຊ້າເລວຊາມຂອງພວກ ທ້າວຂຸນມຸນນາຍ ເຈົ້າທີ່ດິນສັກດິນາທີ່ມີຕໍ່ຊາວນາ. ໃນນີ້ຍັງໄດ້ວິໄຈຂໍ້ຂັດແຍ່ງພາຍໃນສັກດິນາເອງ.

2.2 ຄຸນຄ่າມະນຸດສະທຳ. ຫົວຂໍ້ນີ້ຍັງມີຄຸນຄ่າທາງດ້ານມະນຸດສະທຳຢ່າງເລິກເຊິ່ງ ແລະໜ້າຮັກ, ຕົວຈິງແລ້ວຄຸນຄ่າມະນຸດ ສະທຳແມ່ນພື້ນຖານທາງດ້ານແນວຄິດຈິດຕະສາດໃນການສ່ອງ

ແສງຕ໊ອຈິງ. ເມື່ອເວົ້າເຖິງມະນຸດສະທຳຍິ່ງເຫັນແຈ້ງຜ່ານບົດເລື່ອງ "ມອດຕະກຽງ" ຂອງ ໂງເຕິດ ໂຕ້. ຜູ້ອ່ານ ເກີດມີຄວາມສົງສານເມື່ອນັກປະພັນໄດ້ພັນລະນາ "ເອ໊ື້ອຍເຢ້ຳ" ກຳລັງເຈັບປ່ວຍ ແລະ ຖືກມັດຢູ່ໃນກຸຕິ, ຮູບພາບແມ່ລູກ ເອ໊ື້ອຍເຢ້ຳ ໃນຕອນຄ່ຳຄືນຂອງຍາມເດິກວັງເວງອ້າງວ້າງ ແລະ ເປົ່າປ່ຽວ. ຮູບພາບ ຂອງເອ໊ື້ອຍເຢ້ຳ ຂາຍລູກ ແລະໝາແມ່ລູກອ່ອນລາຄາ 2 ດົ່ງ 7 ຮາວ ໃຫ້ ອາດຍາ ຫີງເກວ ຢູ່ບ້ານ ດ່າຍໂທນ. ສຶກສາຄົ້ນຄວ້າພາສິຫ໊ວຄົນ ຊຶ່ງແມ່ນພາສິທີ່ໄຮ້ມະນຸດສະທຳ ສະແດງອອກບ່ອນວ່ຳ (ຜູ້ຕາຍໄປແລ້ວ ກ່ຳຍັງໄດ້ເສຍພາສີ) ພວກອາດຍາຂຸນເສິກຖືໝາສູງກວ່າຄົນ, ຖືຄົນຕ່ຳກວ່າສັດເດຍລະສານ. ສະນັ້ນ ເອ໊ື້ອຍເຢ້ຳ ໃນແຕ່ລະມື້ ເອົາສາຍກາວຊູ (ສາຍຢາງຢືດ) ຮັດນົມຕົນເອງເພື່ອບີບເອົານ້ຳນົມໃຫ້ເຈົ້າເມືອງເກ່ຳອາຍຸ 80 ປີກົນ.

3. ຄຸນຄ່ຳດ້ານສິລະປະ

3.1 ຄຸນຄ່ຳສິລະປະອັນພົ້ນເດັ່ນທີ່ນັກປະພັນໄດ້ເຈາະຄວັດ, ຈ້ອນເຂ້ຳ ແລະເຜີຍແບເພື່ອໃຫ້ ບັນຫາແຈ້ງຂຶ້ນ. ໃຊ້ການວິເຄາະປຽບທຽບ, ເວ້ົາຢ່ຳງໜ່ຳ ສິລະປະການສ້ຳງກະທູ້, ໂຄງເລື່ອງຂອງ ບົດ, ວິທີໃຊ້ສັບພາສາເຂ້ຳໃນບົດປະພັນ, ພາສາທີ່ທັນສະໄໝ, ພາສາຄຳເວ້ົາແບບສາມັນທຳມະດາ ງ່ຳຍດ່ຳຍ ແຕ່ເລິກເຊິ່ງ ແລະມີຊີວິດຊີວຳ.

3.2 ບ່ຳງຮູບພາບສິລະປະທີ່ເດ່ັນ: ຮູບປະພັນທີ່ເດ່ັນ ແມ່ນຮູບປະພັນທີ່ມີຊີວິດຊີວຳອັນດົ່ນນ່ຳນ, ອ່ອນນອມໃນຈິດໃຈຂອງເພື່ອນນັກອ່ຳນ, ຂ້ຳພະເຈ້ົ້ຳເຫັນວ່ຳ ຜ່ຳນບົດປະພັນທີ່ມີຫ໊ວຂໍ້ "ຊົນນະບົດ" ນັກປະພັນໄດ້ສ້ຳງຕ໊ວລະຄອນສອງປະເພດຄື:

3.2.1 ຕ໊ວລະຄອນທີ່ເປັນຕ໊ວແທນໃຫ້ແກ່ສັກດິນຳ ໄດ້ແກ່ (1)ຫງິຫຼ່ຳຍ ໃນເລື່ອງ "ກ້ຳວຕ່ຳມ ເສ້ັນທ່ຳງສຸດທ້ຳຍ" ຂອງຫງ້ວ່ຽນ ກົ່ງຮວ່ຳນ.(2) ຫງິເກວ ໃນເລື່ອງ "ມອດຕະກຽງ" ຂອງ ໂງເຕິດ ໂຕ້ ແລະ(3) ບ້ຳກ່ຽນ ໃນເລື່ອງ "ຈ໊ີແຝ໊ວ" ຂອງ ນ່ຳມກ່ຳວ. ບັນດ່ຳຕ໊ວລະຄອນດັ່ງກ່ຳວໄດ້ສ້ຳງ ຄວ່ຳມຄຸງດແຄ້ນໃຫ້ແກ່ເພື່ອນນັກອ່ຳນກ່ໍຄືປະຊ່ຳຊົນຫວຽດນ່ຳມ ເວ້ົ່ຳສະເພ່ຳະແມ່ນຊ່ຳວຊົນນະບົດ ຕະຫຼອດເທ່ຳໃດໆ.

3.2.2 ຮູບປະພັນຊ່ຳວນ່ຳຊົນນະບົດຖືກກ່ຳນກົດຂ່ີ່ຂູດຮີດຕ໊ວລະຄອນ (ທ້ຳວຟ່ຳ) ໄດ້ຖືກພວກ ສັກດິນຳທຳລ່ຳຍຄວ່ຳມຜ່ຳສຸກໃນຄອບຄົ໊ວ, ຄອບຄົ໊ວໄດຖືກພັ່ງທະລ່ຳຍ ຫ໊ວໂປ່ແມ່ນພວກ"ເຕ໊ນ" ຫ່ຳວິທີສໍ້ໂກ່ຽ, ຍ໊ວະເຍ້ຳ, ລ໊ົ່ງໂທດຕັດສິນຈຳຄຸກ, ຈ່ຳກນັ້ນສະພ່ຳບຄອບຄົ໊ວຕົກເຂ້ຳສູ່ສະພ່ຳບອຶດ ຫ໊ວ, ຂໍເຂ້ຳກິນຢືມເງິນຈ່ຳຍ, ກ່ຳນເຈັບໄຂ້ໄດ້ປ໊ວດເກີດຂຶ້ນ. ພ່ຳຍຫຼັ່ງອອກຄຸກມ່ຳ "ຟ່ຳ" ອົດບໍ່ລ໊ົ່ນ ທ໊ົ່ນບໍ່ໄດ້, ຕອນທ້ຳຍຂອງບົດເລື່ອງຊ່ຽນວ່ຳ "ຈະບໍ່ຢູ່ບ່ອນນ້ີອີກແລ້ວ". ຕ໊ວລະຄອນ "ອ້ຳຍເຢ້ຳ" ແລະເອ໊ື້ອຍເຢ້ຳ" ໃນເລື່ອງ "ມອດຕະກຽງ" ແມ່ນຕ໊ວລະຄອນທີ່ເດ່ັນກ່ຽວ ກັບແມ່ຍິງຊ່ຳວນ່ຳ ຊົນນະບົດທີ່ມີນ້ຳໃຈມະນຸດສະທຳ, ຄອບຄົ໊ວເອ໊ື້ອຍເຢ້ຳເປັນຄອບຄົ໊ວທີ່ທຸກຈົນກວ່ຳໝູ່ໃນຊ້ັ້ນຄົນ. ຜົ໊ວ ຖືກຈັບໄປເມືອງ, ລູກຢູ່ເຮືອນພັດອຶດຫ໊ວກິນມັນຕ່ຳງເຂ້ຳ. ຍ້ອນບໍ່ມີເງິນເສຍຄ່ຳພ່ຳສີຈຳເປັນເອ໊ື້ອຍ ເຢ້ຳຕ້ອງຂ່ຳຍລູກຊ່ື ນ່ຳງ ຕ໊ີ ອ່ຳຍຸ 7 ປີ ລ່ຳຄ່ຳ 1 ດົ່ງ 7 ຮ່ຳວ ບວກໃສ່ໝ່ຳແມ່ລູກອ່ອນ ລວມ 2 ດົ່ງ 7 ຮ່ຳວ ນ້ີແມ່ນພູດໜ່ໍ່ງ. ຍັ່ງພູດທ່ີສອງ "ບັກເທ່ຍ" ນ້ອງຊ່ຳຍຜົ໊ວ. "ເທ່ຍ" ຕ່ຳຍໄປແລ້ວແຕ່ກ່ຳ

ຍັງໄດ້ ເສຍພາສີເຊັ່ນດຽວ. ເອື້ອຍບໍ່ຊ່ຳໆຈະເຮັດແນວໃດເອື້ອຍເຢົ້າຈຳຕ້ອງໄປເປັນແມ່ນົມ. ໝາຍ ວ່າແຕ່ລະມື້, ເອື້ອຍເຢົ້າປັບນ້ຳນົມໃນເຕົ້ານົມຂອງຕົນອອກໃຫ້ໄດ້ 1 ຈອກໃຫ້ເຈົ້າເມືອງເກົ່າອາຍຸ 80 ປີກິນ. ຕອນທ້າຍບົດເລື່ອງຂຽນວ່າ "ຟ້າມືດຄ້ຶມຄືນ້ຳມຶກ ເໝືອນດັ່ງຊີວິດເອື້ອຍຜ່ານມາ" ໝາຍ ວ່າເອື້ອຍເຢົ້າ ໄດ້ຕົກເຂົ້າສູ່ເສັ້ນທາງອັດຕັນ.

ຕົວລະຄອນ "ຈີ້ແຝ້ວ" ໄດ້ສ່ອງແສງໃຫ້ເຫັນຊີວິດຂອງໄວໜຸ່ມ ທີ່ບໍ່ມີຫົວສົ້ນປາຍນອນ, ບໍ່ມີ ພໍ່ແມ່, ບໍ່ຮູ້ວ່າພໍ່ແມ່ແມ່ນໃຜ? ມີແມ່ເຖົ້າຕາມືດຄົນໜຶ່ງໄປຕັກນ້ຳຢູ່ທ່າເລີຍເຫັນຈີ້ແຝ້ວ ນອນຢູ່ໃນພົກ ສົ້ນປະໄວ້ຢູ່ ນອກເຕົາດິນຈີ່. ແມ່ເຖົ້າຕາມືດຄົນນັ້ນເອົາຈີ້ແຝ້ວມາເຮືອນ ແລະຂາຍໃຫ້ພໍ່ເຖົ້າໂກ້ຍ ເມື່ອ "ຈີ້ແຝ້ວ" ໃຫຍ່ຂຶ້ນມາອາຍຸປະມານ 7 ປີ. ຈີ້ແຝ້ວ ໄດ້ໄປເປັນຄົນໃຊ້ "ບ້າກ້ຽນ" ຊີວິດຂອງ ຈີ້ ແຝ້ວ ມີແຕ່ໄປກັບໄປຊອກຫາກິນຕາມກອງຂີ້ເຫຍື້ອ, ແຕ່ລະມື້ມີແຕ່ກິນເຫຼົ້າ, ກິນຈົນເມົາ. ຫຼັງຈາກ ກິນແລ້ວກໍທັບແກ້ວເອົາບີ້ງແກ້ວແຕກມາຊູດໜ້າຕົນເອງ, ຊີວິດຂອງຈີ້ແຝ້ວ ບໍ່ຕ່າງຫຍັງກັບສັດ ເດຍລະສານ ໝາຍວ່າ "ບ້າກ້ຽນ" ໄດ້ຊຸກຈີ້ແຝ້ວ ລົງໜອງແລ້ວລາກຄໍຈີ້ແຝ້ວຂຶ້ນ, ບັງຄັບໃຫ້ຈີ້ແຝ້ວ ຂອບໃຈຕົນເອງ. ບ້າກ້ຽນ, ໄດ້ປັດເຂ່ຍຈີ້ແຝ້ວອອກນອກສັງຄົມ. ດັ່ງນັ້ນ ຕອນທ້າຍບົດເລື່ອງຂຽນ ວ່າ "ຈີ້ແຝ້ນອນຢູ່ໃນພົກສົ້ນປະໄວ້ຢູ່ນອກເຕົາດິນຈີ່ ຖ້າຜູ້ໃດເຫັນກໍ່ຜ່ານກາຍ".

3.2.3 ນອກນີ້ຍັງຄົ້ນຄວ້າກ່ຽວກັບຂໍ້ຈຳກັດຂອງນັກປະພັນທີ່ຍັງບໍ່ທັນໄດ້ຊອກເສັ້ນທາງເພື່ອ ແກ້ໄຂໃຫ້ມີທາງອອກ ໝາຍວ່າຕົວລະຄອນທີ່ກ່າວມາເທິງນີ້ລ້ວນແຕ່ຖືກອັດຕັນ.

III. ຜົນທີ່ໄດ້ຮັບ

1. ກະແສວັນນະຄະດີສັດຈະທັດວິຈານຫວຽດນາມໄລຍະ1930-1945 ໄດ້ເລີ່ມຈາກນ້ຳໃຈມະ ນຸດສະທຳທີ່ສ່ອງແສງຊີວິດຈິງຂອງສັງຄົມ ເປັນຕົ້ນແມ່ນຊີວິດຈິງຂອງຊາວຊົນນະບົດ.

2. ຫົວຂໍ້ "ຊາວນາຊົນນະບົດ" ເມື່ອຄົ້ນຄວ້າເຖິງຫົວຂໍ້ນີ້ໃຫ້ເຮົາຮູ້ບາງຍັດຕິດັ່ງນີ້:

- ຍັດຕິເຄົ້າທາງສັງຄົມ.

- ຍັດຕິທາງວັນນະຄະດີ, ໃນນີ້ຍົກໃຫ້ເຫັນຄຸນຄ່າຂອງວັນນະຄະດີ ທີ່ສ່ອງ ແສງ ໃນສັງຄົມ ຫວຽດນາມໄລຍະນັ້ນ. ພ້ອມທັງຄຸນຄ່າຕົວຈິງ, ຄຸນຄ່າມະນຸດສະທຳ ແລະຄຸນຄ່າສິລະປະ.

3. ຜ່ານການສຶກສາບົດວັນນະຄະດີຫວຽດນາມຕາມກະແສວັນນະຄະດີສັດຈະທັດວິຈານໄລຍະ 1830 - 1945, ໃນກະທູ້ຊີວິດຕົວຈິງຂອງຊາວນາ ສາມາດຖອດຖອນເປັນບົດຮຽນໃຫ້ເຮົາໄດ້ ຫລາຍຢ່າງ. ນອກຈາກເປັນການຍົກຄວາມຮູ້ຄວາມສາມາດເຂົ້າໃນການສິດ ສອນວັນນະຄະດີ ສັດຈະທັດວິຈານຫວຽດນາມ ໃນຖານະວັນນະຄະດີຕ່າງປະເທດຢູ່ໃນບັນດາຊັ້ນຮຽນຕ່າງໆໃນ ສປປ ລາວ; ເປັນຕົ້ນກໍແມ່ນຢູ່ມະຫາວິທະຍາໄລແຫ່ງຊາດ ກໍຄືພາກວິຊາພາສາລາວ-ວັນນະຄະດີ ດີກວ່າ ຖ້າທຽບ ໃສ່ກ່ອນທີ່ຍັງບໍ່ທັນໄດ້ສຶກສາຄົ້ນຄວ້າ ແລ້ວຍັງສາມາດເປັນບ່ອນອີງນຳໃຊ້ເຂົ້າໃນການສຶກ ສາຄົ້ນຄວ້າວັນນະຄະດີລາວນຳອີກ.

ຄວາມເປັນຜູ້ຍິງ ໃນສັງຄົມອານາຈັກລ້ານຊ້າງ

ໂດຍ ບົວພອນ ມະໄລຄຳ

ບົດຄວາມນີ້ ເປັນຄວາມພະຍາຍາມທີ່ຢາກສະເໜີຄວາມ ເປັນຜູ້ຍິງລາວ ທີ່ປາກົດໃນສັງຄົມ ສະໄໝ ອານາຈັກລາວລ້ານຊ້າງ. ກ່າວໄດ້ອີກຢ່າງໜຶ່ງຄືຄວາມຮັບຮູ້ ແລະ ຄວາມຄາດຫວັງທີ່ ສັງຄົມລາວສະໄໝ ອານາຈັກລາວລ້ານຊ້າງມີຕໍ່ຜູ້ຍິງລາວ. ສະທ້ອນຜ່ານທາງສະຖານະພາບ, ບົດບາດ, ຄຸນະທຳ ແລະຄຸນ ສົມບັດທີ່ຜູ້ຍິງຖືກຄາດຫວັງວ່າຄວນຈະເປັນ ຫຼືຄວນຈະມີ. ການສຶກ ສາ ແລະທຳຄວາມເຂົ້າໃຈຕໍ່ຄວາມຮັບຮູ້ ແລະຄວາມຄາດຫວັງເຫຼົ່ານັ້ນໃຫ້ໃກ້ຄຽງກັບຄວາມເປັນຈິງ ຫຼາຍທີ່ສຸດຈຳເປັນຕ້ອງສຶກສາທາງເອກະສານໃນວັນນະຄະດີຄຳສອນຕ່າງໆ ສະໄໝອານາຈັກລາວ ລ້ານຊ້າງ. ແຕ່ໃນບົດຄວາມນີ້ ຈະສຶກສາຄົ້ນຄວ້າໃນວັນນະຄະດີຄຳສອນ "ອິນທິຍານສອນລູກ" ຊຶ່ງ ເປັນຄຳສອນຜູ້ຍິງທີ່ມີຊື່ສຽງຂອງລາວເປັນທີ່ຮູ້ຈັກກັນຫຼາຍມາດົນນານ. ຖ້າມີຊ່ອງວ່າງທາງຄວາມຮູ້ ທີ່ອາດເກີດຂຶ້ນໃນບົດຄວາມນີ້ ຖືເປັນໜ້າທີ່ຂອງ ຜູ້ທີ່ສົນໃຈກ່ຽວກັບຜູ້ຍິງທີ່ຈະວິພາກ, ວິຈານ ແລະ ສຶກສາໃຫ້ເລິກເຊິ່ງ ແລະກວ້າງຂວາງຕໍ່ໄປ.

ສິ່ງໃດຄືຄວາມເປັນຜູ້ຍິງໃນສັງຄົມລາວສະໄໝອານາຈັກລາວລ້ານຊ້າງ

ໃນສັງຄົມສະໄໝອານາຈັກລາວລ້ານຊ້າງມີຈຸດປະສົງ ແລະມີຄວາມຄາດຫວັງໃຫ້ຜູ້ຍິງລາວ ຮູ້ຈັກປະພຶດປະຕິບັດຕົນເອງໃນດ້ານຕ່າງໆຕາມທັດສະນະຂອງສັງຄົມສະໄໝນັ້ນ.ສະນັ້ນເນື້ອໃນຄຳ ສອນໃນ "ອິນທິຍານສອນລູກ" ສະທ້ອນເຖິງຫຼັກທຳຄຳສອນຂອງພະພຸດທະເຈົ້າ, ຄະຕິຊີວິດ, ຂະ ນົບທຳນຽມປະເພນີ ແລະວັດທະນະທຳທາງຈິດໃຈຂອງຄົນລາວ.

ຜູ້ຍິງລາວຄວນປະພຶດປະຕິບັດຕໍ່ຕົນເອງຄືແນວໃດ

ເນື້ອໃນຄຳສອນມີຈຸດປະສົງໃຫ້ຜູ້ຍິງປະພຶດປະຕິບັດຕົນເອງເພື່ອຄວາມເປັນກຸນລະສະຕີ ຫຼື ສ້າງເສີມຄຸນສົມບັດຂອງຕົນໃນດ້ານຕ່າງໆຄື ດ້ານບຸກຄະລິກ ແລະການສະແດງອອກ, ດ້ານຈິດໃຈ ແລະການຕັດສິນໃຈ ແລະດ້ານໜ້າມີ່ຄວາມຮັບຜິດຊອບ.

ດ້ານບຸກຄະລິກ ແລະການສະແດງອອກ: ຜູ້ຍິງຄວນຮູ້ຈັກແຕ່ງຕົວໃຫ້ພໍດີພໍງາມ, ຢ່າແຕ່ງ ຕົວຈົນເກີນໄປ, ການໃສ່ເສື້ອຜ້າ, ເຄື່ອງນຸ່ງຫົ່ມໃຫ້ເໝາະສົມກັບຖານະ ແລະຮູບຮ່າງຈຶ່ງຈະງາມດັ່ງ ຄຳກອນທີ່ ວ່າ:

ການທີ່ທ້າວໂສມເອ້ ໃຫ້ພໍງາມຫວນຄ່ອງ
ຢ່າໄດ້ເຮັດລົ່ນດ້ານ ສະໄບຜ້າລາກດິນ
ຢ່າໄດ້ເອົາໂສມພັ່ງ ເທວີລົ້ງຂ່ວງ
ເຫັນເພິ່ນຍ້ອງແຕ່ລະໜ້ອຍ ກໍ່ຍາຟ້າວ່ອ່າໂຕ

ຢ່າໄດ້ເອ້ລິ່ນບ້ານ ພົ້ນເພິ່ນເປັນກະດັດ
ເຮັດໃຫ້ພໍປະມານໂສມ ແມ່ນຕາຄົນເຖົ້າ
ກໍ່ຈິ່ງໄດ້ວ່າໃຈໃສຕັ້ງ ມະຫາເຖນອັນປະເສີດ
ນັບມື້ໃສສິ່ງແກ້ວ ທັ້ງຄ້າຍຫາກກະສັນ

ກິລິຍາມາລະຍາດຄວນຝຶກຝົນ ການສະແດງອອກໃນທ່າທາງຕ່າງໆໃຫ້ສຸພາບຮຽບຮ້ອຍຈິ່ງ ຈະເໝາະສົມກັບການທີ່ເກີດມາເປັນຜູ້ຍິງ, ຫາກຜູ້ຍິງໃດສະແດງກິລິຍາ ທ່າທາງບໍ່ສຸພາບຮຽບຮ້ອຍ ຜົນທີ່ຕາມມາຄືບໍ່ມີຜູ້ໃດຄົບຄ້າສະມາຄົມດ້ວຍການສອນເລື່ອງນີ້ໄດ້ແກ່:ການເວົ້າຄວນເວົ້າສຽງດັງໃຫ້ພໍສົມຄວນ, ບໍ່ຄວນເວົ້າສຽງດັງເກີນໄປ ດັ່ງຄຳສອນທີ່ວ່າ:

ຍາມເມື່ອວາຈາຕ້ານ ໃຫ້ພໍຫວນຫອມມ່ວນ
ຢ່າໄດ້ໄປປາກຕ້ານ ແຮງພົ້ນເພິ່ນໝາຍ

ນອກນີ້ຍັງໄດ້ສອນໃຫ້ລະມັດລະວັງຄຳເວົ້າຄື ໃຫ້ຄິດກ່ອນເວົ້າ ບໍ່ໃຫ້ເປີດເຜີຍຄວາມ ລັບຂອງຕົນ ແລະຄອບຄົວ, ຄວາມລັບທີ່ບໍ່ຄວນເວົ້າກໍ່ຢ່າຟ້າວເວົ້າ, ຈະເຮັດໃຫ້ມີຜູ້ນຳເອົາໄປນິນທາດັ່ງ ຄຳສອນທີ່ວ່າ:

ຊື່ວ່າຄຳລະຫັດນີ້ ຢ່າໄວແອນມໍ່
ເພິ່ນຊິໄປກ່າວເວົ້າ ກາງບ້ານເຫືອດໜູ

ການຍ່າງ: ສອນວ່າເມື່ອຍ່າງຄວນລະມັດລະວັງທ່າທາງໃຫ້ສວຍງາມຢ່າຍ່າງຄະໂຢ່ງຄະເຢ່ງ ຄືຊະນີ ດັ່ງຄຳສອນວ່າ:

ຍາມເມື່ອລີລາຍ້າຍ ແປງໂສມໃຫ້ມັນຄ່ອງ
ຢ່າໄດ້ເປັນດັ່ງເຊື້ອ ຊະນີເຕັ້ນຄ່ວງໄປ

ການນອນ: ຄວນນອນໃຫ້ຮຽບຮ້ອຍ, ຄວນເໜັບຕີນສົ້ນໃຫ້ດີ ດັ່ງຄຳສອນທີ່ວ່າ:

ຍາມນອນໃຫ້ ແປງໂສມໃຫ້ມັນຄ່ອງ
ໃຫ້ຄ່ອຍປົກຫໍ່ຕູ້ມ ຕີນສົ້ນໄວ້ຢ່າງດີ

ການກິນ: ເມື່ອກິນອາຫານ ຢ່າເລືອກກິນແຕ່ອາຫານທີ່ຕົນມັກຄື ຢ່າເລືອກກິນແຕ່ຊີ້ນ, ປາກໍ ຄວນກິນ ດັ່ງຄຳສອນທີ່ວ່າ:

ອາຫານເຕັມພາເຂົ້າ ມີອັນໃດເລືອກເບິ່ງ
ຢ່າໄດ້ກິນແຕ່ຊີ້ນ ປານັ້ນກໍ່ເລົ່າກິນ

ການຟັງເທດສະໜາ: ເມື່ອຟັງພຸທະທຳມະເທສະໜາໃຫ້ຍົກມືພຽງຫົວແລ້ວນ້ອມລົງນົບໄຫວ້, ບໍ່ຄວນລົມກັນເລື່ອງ ຊູ້ສາວ, ໃຫ້ຕັ້ງໃຈຟັງຈິ່ງຈະໄດ້ບຸນ ດັ່ງຄຳສອນທີ່ວ່າ:

ຍາມເມື່ອມະຫາເຖນເວົ້າ ຕັ້ງສູດມະຫາໄຊ
ໃຫ້ເຈົ້າຍົກກະພຸມມື ໃສ່ຫົວປະສົງນ້ອມ
ຢ່າໄດ້ເຫັນແກ່ເວົ້າ ເຊີງຊູ້ສວາກສະເໜ່
ແມ່ນວ່າໃຈປະສົງດ້ວຍ ຜິວຂວັນຜູ້ປະເສີດ
ກໍ່ບໍ່ຄວນທີ່ຮ້ອນ ປະສົງຕັ້ງຕໍ່ບຸນ

ດ້ານຈິດໃຈ, ຄວາມຄິດ ແລະການຕັດສິນໃຈ ເປັນການສອນທີ່ເນັ້ນໜັກທາງດ້ານຄຸນະທຳ ແລະຈະລິຍະທຳໃຫ້ຮູ້ຈັກຄິດ ແລະມີເຫດຜົນ ເພື່ອນຳ ໄປສູ່ການປະຕິບັດ.

ການຮັກນວນສະຫງວນຕົວ ແລະຮັກສາພົມມະຈັນ: ສອນໃຫ້ຜູ້ຍິງທັງຫຼາຍຮູ້ຈັກລະມັດ ລະວັງຕົວ ໂດຍສະເພາະໃນຕອນກາງຄືນຄວນເຮັດວຽກເຊັ່ນ ປັ່ນຝ້າຍ ແລະຕຳຫູກ ຕ້ອງມີເພື່ອນຢູ່ນຳບໍ່ຄວນປະໝາດເຮັດວຽກຕາມລຳພັງ ເພາະອາດເກີດເລື່ອງບໍ່ດີ, ບ່ຽງມຂຶ້ນມາໄດ້ ດັ່ງຄຳສອນທີ່ວ່າ:

ພໍເມື່ອຕາເວັນຄ້ອຍ ຍາມແລງໃກ້ຊິຄ່ຳ
ຮີດຫາກຕັ້ງແຕ່ງໄວ້ ມາແທ້ແຕ່ປະຖົມ
ກາງຄືນນັ້ນ ເຂັນໄນໃຫ້ມີຄູ່
ຢ່າໄດ້ເຮັດອວດອ້າງ ທອນທໍ້ຢູ່ຜູ້ດຽວ

ການເປັນຄົນມີຈິດໃຈສົມທຳ ແລະຄວາມຄິດເລິກເຊິ່ງຄື ເປັນຜູ້ຍິງບໍ່ຄວນເປັນຄົນໃຈດຳ ແລະໃຈຄັບ ແຄບໂດຍປຽບໃສ່ພີ່ດ ແລະສິ່ງຂອງຄື ຢ່າເປັນຍິງໃຈດຳຄືເຄືອເຂົາຮໍ ຊຶ່ງເປັນພືດທີ່ມີລົດຂົມ ແລະຢ່າມີ ໃຈຕື້ນຄື ໜໍ້ປາກບານໃຫ້ມີຄວາມຄິດດັ່ງຄຳສອນທີ່ວ່າ:

ເຈົ້າຢ່າທຳໃຈພັ່ງ ເຂົາຮໍຂົມຂື່ນ
ຄວາມຄິດເຈົ້າຢ່າຕື້ນ ເໝືອນໜໍ້ປາກບານ

ນອກຈາກນີ້ ສອນໃຫ້ເປັນຄົນມີຈິດໃຈທີ່ໃສສະອາດເໝືອນນ້ຳໃນແມ່ນ້ຳອະໂນມາທີ່ກວ້າງໃຫຍ່ໄພສານ, ຢ່າເປັນຄົນໃຈດຳ, ບໍ່ມີຄວາມເມດຕາກະລຸນາເໝືອນກັບໜໍ້ທີ່ຖືກຂີ້ເຖົ່າໄຟຈັບເປັນສີດຳດັ່ງໜໍ້ ດັ່ງຄຳສອນທີ່ວ່າ:

ໃຈໃຫ້ໃສສະເໝີນ້ຳ ອະໂນມາກວ້າງໃຫຍ່
ຢ່າໄດ້ເປັນດັ່ງໜໍ້ ໝອງມົ້ວທົ່ວຄົງ

ການຮູ້ຈັກຄິດພິຈາລະນາ ແລະຮູ້ການກະທຳຂອງຕົນ: ສອນວ່າກ່ອນນອນໃຫ້ຄິດທົບທວນວ່າ ມື້ນີ້ເຮົາໄດ້ ເຮັດຫຍັງທີ່ດີ ຫຼືບົກພ່ອງເພື່ອຈະໄດ້ປະຕິບັດ ແລະແກ້ໄຂໃຫ້ຖືກຕ້ອງແລ້ວຈຶ່ງນອນ ດັ່ງຄຳສອນທີ່ວ່າ:

ຍາມໃດເຈົ້າ ລີລາເຂົ້າບ່ອນ
ໃຫ້ເຈົ້າຄິດແຈ່ມແຈ້ງ ດີແລ້ວຈຶ່ງຄ່ອຍນອນ

ການປະຕິບັດຕົນໃຫ້ມີຄຸນຄ່າ: ສອນວ່າຄົນທີ່ມີຄຸນຄວາມດີນັ້ນ ເມື່ອສິ້ນຊີວິດໄປແລ້ວ ຄວາມດີທີ່ມີ ໄວ້ຍັງຄົງຈາລຶກຢູ່ໃນຄວາມຊົງຈຳຂອງຄົນທັ້ງຫຼາຍຕະຫຼອດໄປ ເໝືອນກັບຜ້າໄໝ ເຊິ່ງມີຄ່າລາຄາສູງ ເຖິງແມ່ນຈະຂາດ ແຕ່ຜູ້ມີສະຕິປັນຍາຈະເກັບຮັກສາໄວ້ໃຊ້ປະໂຫຍດຕໍ່ໄປ ດັ່ງຄຳສອນທີ່ວ່າ:

ວັດຖັງຜ້າ ແພຂາວຜືນຂາດ
ນັກປາດເຈົ້າ ແພງໄວ້ຫໍ່ຄຳ

ການມີຈິດໃຈເຂັ້ມແຂງບໍ່ຫຍໍ້ທໍ້ຕໍ່ອຸປະສັກ: ສອນໃຫ້ມີຄວາມຄິດ ແລະຈິດໃຈເຂັ້ມແຂງ-ໜັກແໜ້ນ, ບໍ່ໄດ້ຫຍໍ້ຖໍ້ຕໍ່ອຸປະສັກຕ່າງໆທີ່ເກີດຂຶ້ນໃນຊີວິດ ແລະສອນວ່າເກີດເປັນຄົນກໍ່ຕ້ອງຢູ່ດ້ວຍຄວາມຫວັງ, ຕັ້ງໃຈ, ຂະຫຍັນໝັ່ນພຽນທຳມາຫາກິນຈຶ່ງຈະສົມກັບການເປັນມະນຸດຜູ້ທີ່ມີຄວາມຄິດ ແລະມີວັດທະນະທຳ ດັ່ງຄຳສອນທີ່ວ່າ: ໄຟຫາກໄໝ້ປ່າແລ້ວ ຂອນເນື້ອຫາກຊິຍັງ ດອກນາ

ການປະຕິບັດທາງສາສະໜາ: ຄືການທຳບຸນຖວາຍທານ ມີການສອນສະຕິກ່ຽວກັບການທຳບຸນຖວາຍທານຕ່າງໆຄື ໃຫ້ທຳບຸນຖວາຍທານເປັນກິດຈະວັດປະຈຳວັນ, ສອນໃຫ້ມີສະຕິຕື່ນແຕ່ເຊົ້າ, ອາບນ້ຳໃຫ້ສະອາດ, ຫວີຜົມໃຫ້ຮຽບຮ້ອຍ, ກະກຽມເຂົ້າປາອາຫານເພື່ອນຳໄປຖວາຍພະສົງຢູ່ວັດ ແລະກ່ອນຈະຈັດສິ່ງຂອງໄປຖວາຍພະນັ້ນໃຫ້ລ້າງມືໃຫ້ສະອາດ, ຕ້ອງຄ່ອຍໆເຮັດຢ່າງລະມັດລະວັງ, ຢ່າໃຫ້ຕົນສິ້ນໄປຖືກາເຂົ້າປາອາຫານທີ່ຈະເອົາໄປຖວາຍທານ. ໝາຍຄວາມວ່າເຄື່ອງທີ່ຈະເອົາໄປຖວາຍນັ້ນຕ້ອງເຮັດໃຫ້ດີທີ່ສຸດ ແລະເຮັດດ້ວຍຄວາມຕັ້ງໃຈຈຶ່ງຈະບໍ່ເປັນບາບດັ່ງຄຳສອນທີ່ວ່າ:

ໃຫ້ເຈົ້າລຸກແຕ່ເຊົ້າ ປະສົງແຕ່ງຈັ່ງຫັນ ພໍ່ເນີ
ຍາມເມື່ອບາຍຂອງທານ ໃຫ້ສ່ອຍສີສົ່ງລ້າງ
ຊື່ວ່າກິນທານນີ້ ທຳຕົວໃຫ້ປາໜິດ
ອັນວ່າຜົມເກດເກົ້າ ຄຽນໄວ້ຢ່າໃຫ້ມາຍ ແທ້ເນີ
ໃຫ້ຄ່ອຍທຳພຽນຕູ້ມ ສະເໝີຍຸງຊົ່ມເຫຍື່ອ
ຢ່າໄດ້ເຮັດຕູ້ເຕື້ອ ຕົນສິ້ນຄ່ອຍພາ ນັ້ນເນີ
ບາດວ່າບາບຊອດດັ້ນ ໃຜບໍ່ທ່ອນຫວນເຫັນ ລູກເອີຍ
ເໝືອນດັ່ງເງົ້າທຽມຕົວ ບໍ່ທ່ອນບາຍເອົາໄດ້
ອັນວ່າຂອງທານໃຫ້ ແວນດີປົກຫໍ່
ໃຫ້ເຈົ້າສະສ່ອຍລ້າງ ດີແລ້ວຈຶ່ງຄ່ອຍບາຍ ພໍ່ເນີ

ການຮູ້ຈັກເລືອກ ແລະພິຈາລະນາຄົນ: ສອນໃຫ້ຮູ້ຈັກເລືອກ ແລະພິຈາລະນາຄົນໂດຍຍົກເອົາສັດບາງຊະນິດມາປຽບທຽບແລ້ວໃຫ້ຄິດພິຈາລະນາຄື ເສືອ, ແມວ, ຊ້າງ ໂດຍສະເພາະບໍ່ໃຫ້ເອົາແບບຢ່າງ ເສືອ, ອາດດ້ວຍເຫດຜົນທີ່ວ່າ ເສືອເປັນສັດທີ່ຮ້າຍ ແລະຢ້ານກົວ, ແຕ່ໃຫ້ເອົາ

ແບບຢ່າງຊ້າງ ເຊິ່ງເປັນສັດທີ່ໃຫຍ່ ແຕ່ເປັນສັດທີ່ໜ້າຮັກ ແລະສາມາດຊ່ວຍຄົນເຮັດວຽກໜັກໄດ້ ດັ່ງຄຳສອນທີ່ວ່າ:

ຊາດທີ່ພາສາເຊື້ອ ແນວເສືອຢ່າໄດ້ແອບ
ໃຫ້ເຈົ້າແອບເອົາແຕ່ເຊື້ອລູກຊ້າງ ມາສ້າງສືບເຮືອນ

ນອກຈາກນີ້ ຍັງສອນໃຫ້ເອົາແບບຢ່າງຜູ້ຍິງທີ່ດີ ໂດຍໄດ້ປຽບທຽບກັບນົກເຈົ່າເຊິ່ງສາມາດອະທິບາຍໄດ້ວ່າ: ນົກເຈົ່າເປັນສັດທີ່ຫາກິນຢູ່ຕາມບຶງ, ໜອງ, ສີຂອງມັນເປັນສີເທົາ ເມື່ອເວລາມັນຫາກິນ ເຮົາຈະບໍ່ເຫັນມັນຊັດເຈນ ເພາະສີຂອງມັນຄ້າຍກັບສີຂີ້ຕົມ, ແຕ່ເມື່ອເວລາມັນບິນຂຶ້ນທ້ອງຟ້າຈຶ່ງຈະເຫັນຂົນໃຕ້ປີກເປັນສີຂາວບໍລິສຸດ. ດັ່ງນັ້ນ, ນົກເຈົ່າຈຶ່ງປຽບໄດ້ກັບຜູ້ຍິງທີ່ດີ, ສຸພາບ, ມີຄວາມຄິດ ແລະຈິດໃຈ ຂາວສະອາດ ເຊິ່ງໄດ້ຮັບການຍ້ອງຍໍ ສັນລະເສີນຕະຫຼອດມາ ດັ່ງຄຳສອນທີ່ວ່າ:

ເປັນຍິງໃຫ້ ທຳນຽມດັ່ງນົກເຈົ່າ ນັ້ນເນີ
ຍາມເມື່ອບິນແອ່ວພ່າຍ ຂາວແຈ້ງກໍ່ຈຶ່ງເຫັນ

ການເລືອກຄູ່ຄອງ: ການທີ່ຜູ້ຍິງຈະຈາກບິດາມານດາໄປຢູ່ກັບສາມີ ນັບວ່າເປັນບັນຫາສຳຄັນຂອງຊີວິດ ເພາະເມື່ອແຕ່ງງານມີຄອບຄົວແລ້ວ ຜູ້ຍິງຈະມີຄວາມສຸກ ຫຼືລຳບາກຂຶ້ນຢູ່ກັບສາມີ, ຫາກແຕ່ງງານກັບຜູ້ຊາຍທີ່ບໍ່ດີ ຈະເຮັດໃຫ້ຊີວິດໄດ້ຮັບຄວາມທຸກຕ່າງໆ; ຫາກແຕ່ງງານກັບຜູ້ຊາຍດີໆກໍຈະເຮັດໃຫ້ຊີວິດມີຄວາມສຸກ. ດັ່ງນັ້ນ, ຈຶ່ງສອນບໍ່ໃຫ້ເຊື່ອຄຳເວົ້າ(ອາລົມ)ຂອງຜູ້ຊາຍໂດຍງ່າຍ, ໃຫ້ເລືອກຊາຍທີ່ດີມາ ເປັນຄູ່ຄອງ, ຢ່າເລືອກຊາຍຊົ່ວມາເປັນຄູ່ຄອງ ແລະຢ່າຈັບປາສອງມື ດັ່ງລາຍລະອຽດຕໍ່ໄປນີ້:

ຢ່າເຊື່ອຄຳເວົ້າຂອງຜູ້ຊາຍໂດຍງ່າຍ: ສອນວ່າເມື່ອຊາຍຄົນຮັກລົມ ຫຼືເວົ້າດ້ວຍຄຳອ່ອນຫວານ ຢ່າຟ້າວເຊື່ອ ດັ່ງຄຳສອນທີ່ວ່າ:

ຫາກວ່າສັດຈາເຈົ້າ ເປັນຄຳຈາງຈືດ ເສຍນໍ
ແກ້ມຫາກຈຸປາກແລ້ວ ໃຈນ້ອຍຢ່າຫຼົງ ພໍເນີ

ແລະສອນວ່າ ເມື່ອໃດຮູ້ສຶກວ່າຖືກຕາຖືກໃຈຊາຍໃດກໍ່ບໍ່ຄວນຮີບເຂົ້າໃກ້ ແລະຕົກລົງໃຈວ່າຮັກ ເພາະຜູ້ຊາຍຍ່ອມມີຫຼາຍໃຈຢູ່ສະເໝີ, ອາດຈະເຮັດໃຫ້ຜູ້ຍິງເຈັບຊ້ຳນ້ຳໃຈ ດັ່ງຄຳສອນທີ່ວ່າ:

ເຫັນວ່າດີກະຕາແລ້ວ ຫົວໃຈເຈົ້າຢ່າມໍ່ ຫຼາຍເດີ
ຊາດທີ່ແນວຕໍ່ຕູ້ມ ກາຍໃກ້ບໍ່ທ່ອນດີ

ນອກຈາກນີ້ ຍັງສອນຜູ້ຍິງວ່າ ຢ່າເປັນຄົນອວດອ້າງ ຫຼືອວດເກ່ງກວ່າຄົນອື່ນ ແລະເຮັດສິ່ງນີ້ບໍ່ດີ ອັນຈະເປັນການເສື່ອມເສຍຊື່ສຽງ ແລະສັກສີຂອງລູກຜູ້ຍິງ. ເປັນຜູ້ຍິງຕ້ອງຫັກຫ້າມອາລົມໃຝ່ຝັນຂອງຕົນ,ບໍ່ຄວນປ່ອຍໃຈ, ປ່ອຍກາຍ ແລະອາລົມຂອງຕົນເພາະຄວາມຮັກທີ່ເກີດຈາກຄວາມເຮ່ງ

ຮ້ອນນັ້ນ ບໍ່ແມ່ນຄວາມຮັກແທ້, ເມື່ອໄດ້ຮັກກັນແລ້ວອີກບໍ່ດົນກໍ່ຈາກກັນໄປ, ຫາກຜູ້ຍິງຫຼົງໃຫຼໄປຕາມຄຳຫຼອກລວງແລ້ວຍິງຄົນນັ້ນກໍ່ຈະພົບກັບຄວາມຜິດຫວັງ ດັ່ງຄຳສອນທີ່ວ່າ:

ຢ່າວ່າໂຕກະດັດຮູ້ ອຸນອູບໍ່ຫາຮ່ອມ
ເຮັງແຕ່ໄດ້ກ່ອມກີ້ງ ໃຈຮ້ອນຮີບປະສົ່ງ
ຢຸງວບໍ່ຄົ່ງເມືອໜ້າ ສະເໜນຫາເຫີນຫ່າງ ກັນນັ້ນ
ຮັກແຕ່ຄາວເມື່ອຮ້ອນ ຍາມໜ້ອຍໜຶ່ງກໍເທີຍ

ເລືອກຊາຍດີມາເປັນຄູ່ຄອງ: ສອນໃຫ້ເລືອກຊາຍດີມາເປັນຄູ່ຄອງຄື ຊາຍທີ່ຢູ່ບ້ານຢູ່ເຮືອນ, ມີກິລິຍາມາລະຍາດຮຽບຮ້ອຍ, ຂະຫຍັນຕໍ່ວຽກງານ. ເມື່ອມີຍາດພີ່ນ້ອງມາຢ້ຽມຢາມກໍຍິນດີຕ້ອນຮັບ, ຮູ້ຈັກເວົ້າຈາປາໄສ, ເປັນພໍ່ບ້ານ, ພໍ່ເຮືອນທີ່ດີ, ມີຈິດໃຈກວ້າງຂວາງ, ຮູ້ຈັກເວລາ, ບໍ່ພົວພັນຍິງໄວລຸ້ນ, ສຶກສາຫາຄວາມຮູ້ເລື່ອງຂະນົບທຳນຽມປະເພນີ, ຮູ້ຈັກເບິ່ງລຶກເບິ່ງຍາມກັບຜູ້ເຖົ້າທຸກເມື່ອທຸກເວລາ. ເມື່ອເຖິງຕອນຄ່ຳກໍຮູ້ໄຕ້ທູບໄຕ້ທຽນໄຫວ້ພະ ດັ່ງຄຳສອນທີ່ວ່າ:

ຊາຍໃດເນົາສະຖານຫ້ອງ ເຮືອນຕົນມີວາດ
ວຽກສ້າງໄວ້ ປ່ຳໄມ້ສືບໄປ
ຍາມເມື່ອວົ່ງສາເຊື້ອ ທາງໄກມາຮອດ
ມັນກໍປູສາດໄວ້ ຈຳໃຫ້ນັ່ງເທິງ
ແລ້ວຄ່ອຍເວົ້າ ຕາງແມ່ມານດາ
ມັນກໍທຳກະບວນເໝືອນ ພໍ່ເຮືອນໃຈກວ້າງ
ມັນກໍ່ຫວນຫາຫຼິ້ນ ພໍຫວນຫາເມື່ອ
ມັນບໍ່ມີສະຫງວນກ້ວ ຍິງຊາຍຝູງໜຸ່ມ
ກໍ່ທໍ່ນຳຜູ້ເຖົ້າ ຮຽນຮູ້ຮີດຄອງ
ລັກຂະນາຮູ້ ວັນຍາມທຸກສິ່ງ
ຍາມເມື່ອວັນຄ່ຳແລ້ວ ມັນໄຕ້ຖູບທຽນ
ຕາມແຕ່ຄວາມຮູ້ໜ້ອຍ ມັນແຜ່ສັງຄະຫະ
ເອົາແຕ່ປັນຍາເປັນ ຄ່ອຍພຽນຄວາມຮູ້

ການເລືອກຊາຍທີ່ດີມາເປັນຄູ່ຄອງນີ້ ມີການສະແດງເຫດຜົນວ່າ ຫາກຍິງໃດໄດ້ສາມີເປັນຜູ້ຮູ້ແລະຜູ້ດີ, ມີຄວາມຮູ້, ມີສະຕິປັນຍາເໝືອນນັກປາດກໍ່ຈະມີຜູ້ຍ້ອງຍໍສັນລະເສີນ ແລະຍິງຜູ້ນັ້ນກໍ່ຈະມີຄວາມສຸກສະບາຍທາງກາຍ ແລະໃຈ, ຄົນບ້ານໃກ້ເຮືອນຄຽງ, ຍາດພີ່ນ້ອງກໍມີຄວາມນິຍົມຊົມຊອບແລະຍິນດີ ດັ່ງຄຳສອນທີ່ວ່າ:

ຍິງໃດໄດ້ ຜົວແນວນາມນັກປາດ
ເປັນທີ່ຄົນກ່າວເວົ້າ ຍໍຍ້ອງທົ່ວແດນ

ຈັກໄດ້ມີສຸກລົ້ນ ຢູ່ສະບາຍບານຍິ່ງ
ຝຸງພີ່ນ້ອງ ສະຫງວນສູ້ຊື່ນດອມ
ເປັນດັ່ງຍຸຄັນນະລິຕັ້ງ ຮຽງສະເໜນເຂົາໃຫຍ່
ຝຸງໝູ່ມີກຄະລາດເນື້ອ ເດີນເຂົ້າຂາບຖວາຍ

ຢ່າເລືອກຊາຍທີ່ມີລັກສະນະຊົ່ວມາເປັນຄູ່ຄອງ: ລັກສະນະຊາຍຊົ່ວຄືມັກໄປທ່ຽວ ບໍ່ຮູ້ຈັກເວລາ, ມັກແຕ່ງຕົວ, ກິນແຕ່ເຫຼົ້າ, ການເວົ້າຈາບໍ່ສຸພາບ, ບໍ່ຮູ້ຈັກອາຍ, ເວລາເຮັດວຽກກໍ່ຕ້ອງໃຫ້ຄົນອື່ນເຫັນ, ມັກນອນຄ້າງຄືນບ່ອນອື່ນ, ປະຕິບັດຕົນຮ້າຍກາດຄືກັບເສືອ ຊາຍແບບນີ້ເຖິງວ່າມີຮູບຮ່າງໜ້າຕາທີ່ດີ ແລະເຈົ້າຊູ້ກໍ່ບໍ່ຄວນສົນໃຈ ດັ່ງຄຳສອນທີ່ວ່າ:

ຊາຍໃດໃຈໂຖງຫຼີ້ນ ບໍ່ມີຫວນຫາເມື່ອ
ຜົມມິດກ້ຽງ ນ້ຳມັນໄລ້ລູບເລີ່ງ
ແລ້ວເລົ່າບາຍເອົາເຫຼົ້າ ມາກິນບໍ່ມີເຫືອດ
ຄຳປາກຮ້າຍຟູ່ຟູ່ ຄວາມເວົ້າບໍ່ອາຍ
ແລ້ວເລົ່າເຊີມເຊີຂຶ້ນ ຫຼາຍເຮືອນເປື້ອງໝິດ
ທຳເພດມີໜ້ຳຊູ້ ຄວາມເວົ້າວ່າໂຕ
ເຮັດວຽກໃຫ້ເພີ່ນຍ້ອງ ຫາຮ່ວມສາວເຫັນ
ກາງຄືນເປັນກາງເວັນ ທ່ຽວສະເລນອນຄ້າງ
ມັນກໍໂອໂອເວົ້າ ຄຳຈາບໍ່ເຫັນແກ່ ໃຜນັ້ນ
ທຳເພດພ້ຽງ ສະກຸນເຊື້ອລູກເສືອ
ຝຸງນີ້ ນັກປາດເຈົ້າ ໜີຫລີກແວນໄກ
ແມ່ນວ່າເຊີມເຊີໂສມ ໃຫ້ຄ່ອຍເອົາໃຈເວັ້ນ

ພ້ອມກັນນີ້ ກໍ່ຍັງໃຫ້ເຫດຜົນວ່າ: ຫາກຍິງໃດໄດ້ສາມີບໍ່ດີ ຍ່ອມເປັນທີ່ແນ່ນອນວ່າ ຍິງຄົນນັ້ນຈະຕ້ອງໄດ້ຮັບຄວາມທຸກທໍລະມານໃຈຕະຫຼອດຊີວິດ ດັ່ງຄຳສອນທີ່ວ່າ:

ຍິງໃດໄດ້ ຜົວຊົ່ມຄົນຖ່ອຍ
ຢ້ານແຕ່ທຸກບໍ່ມ້ວ ເຖິງເທົ້າຊົ່ວຊີວັ້ງ ແທ້ແລ້ວ

ຢ່າຈັບປາສອງມື: ຜູ້ຍິງບໍ່ຄວນພົວພັນຜູ້ຊາຍຫຼາຍຄົນພ້ອມກັນເພື່ອເລືອກ, ໃຫ້ເລືອກ ແລະພິຈາລະນາເອົາພຽງຄົນດຽວ ດັ່ງຄຳສອນທີ່ວ່າ:

ຢ່າໄດ້ທຳໂຖງຫຼີ້ນ ຫຼາຍຊາຍມັກພາບ ກັນເນີ
ຕາມວາດໄວ້ ປາຊີເຕັ້ນໃສ່ຂຸມ
ສິບຄົນໃຫ້ ຄະນຶງນຳແຕ່ຜູ້ໜຶ່ງ ນັ້ນເນີ
ບໍ່ກ່ວາແລ້ວ ຕາເຈົ້າຊີຮ່ຳເພິ່ງ ພໍ່ເນີ

ນອກຈາກນີ້ ຍັງປຽບທຽບວ່າ ຜູ້ຍິງປະພຶດຕົວເປັນຄົນຫຼາຍໃຈ ຫຼືຮັກຊາຍຫຼາຍຄົນ ຫຼືສາມີຫຼາຍຄົນ ນັ້ນເໝືອນກັບສາລາຫຼັງໃຫຍ່ທີ່ປຸກໄວ້ຮີມຖະໜົນຫຼວງ, ມີຜູ້ເດີນໄປມາ ແລະພັກເອົາແຮງ, ແຕ່ແລ້ວກໍຈາກໄປ ດັ່ງຄຳສອນທີ່ວ່າ:

ເປັນດັ່ງສາລາກວ້າງ ທາງຫຼວງຫຼັງໃຫຍ່
ສູ່ຄົນສູ່ແວ່ເຂົ້າ ເຊົາແລ້ວກໍ່ເລົ່າໜີ

ດ້ານໜ້າທີ່ຄວາມຮັບຜິດຊອບ: ເປັນຜູ້ຍິງຕ້ອງຂະຫຍັນຂັນແຂງ, ສ້າງຄອບຄົວໃຫ້ໝັ້ນຄົງ, ໂດຍ ປຽບທຽບວ່າ ເປັນຜູ້ຍິງໃຫ້ຂະຫຍັນພຽນເຮັດວຽກງານຄືກັບປອກສ້າງຮັ່ງໃຫ້ສູງຂຶ້ນ ດັ່ງຄຳສອນທີ່ວ່າ:

ເປັນຄົນໃຫ້ ລັກສະນ໋ະນາມປອກ
ຫາກຊ່າງຢູ່ຫາກຊ່າງອົ້ນ ຄູນຂຶ້ນໃຫ້ໃຫຍ່ສູງ

ດ້ານຄວາມເປັນແມ່ບ້ານແມ່ເຮືອນນີ້ ຜູ້ຍິງຄວນພະຍາຍາມສ້າງຄວາມໝັ້ນຄົງໃຫ້ຄອບຄົວຄືແຕນ ແລະເຜິ້ງສ້າງຮັ່ງ ດັ່ງຄຳສອນທີ່ວ່າ:

ໃຫ້ຄ່ອຍທຳພຽນສ້າງ ສະເໝີແຕນແປງຂໍ່
ໃຫ້ສ້າງກໍ່ສືບໄວ້ ສະເໝີເຜິ້ງສືບຮັ່ງ ພໍ່ເນີ

ນອກນີ້ ຍັງສອນວ່າ ເປັນຍິງຄວນຮູ້ຕ່ຳຫູກທຳໄໝ, ປັ່ນຝ້າຍ ດັ່ງຄຳສອນທີ່ວ່າ:

ຊາດທີ່ເປັນແນວຍິງ ກໍ່ຢ່າວາງຫູຝ້າຍ

ພ້ອມນີ້ ກໍ່ໄດ້ແນະນຳເລື່ອງການທາລາຍໄດ້ວ່າ: ຜ້າແພທີ່ຕ່ຳສຳເລັດແລ້ວແຕ່ຍັງບໍ່ທັນເອົາອອກຈາກຫູກ, ກ່ອນຈະຕັດອອກຕ້ອງໄປ ຫາໝໍໄປຫາເບິ່ງລຶກຍາມ,ເພື່ອໃຫ້ທ່ານບອກວ່າວັນໃດຄວນຕັດຜ້າແພນັ້ນ, ເກັບຮັກສາໄວ້ເພື່ອຊາວຄ້າຂາຍມາຖາມຊື້ ຫາກໄດ້ລາຄາດີກໍຈຶ່ງຂາຍ ດັ່ງຄຳສອນທີ່ວ່າ:

ວັດຖັງເຂົ້າ ອາພອນຜືນໃໝ່
ນາງຫາກພຽນຕ່ຳໄວ້ ຫຼາຍມື້ພ່ຳນານ
ຄັນວ່າເຈົ້າຕ່ຳແລ້ວ ໃຫ້ຮີບແລ່ນຖາມໝໍ
ເຖິງຍາມດີ ປາດເອົາມາມ້ຽນ
ຍາມໃດມີຊາວຄ້າ ມາເຖິງຖາມຄ່າ
ຄັນວ່າໄດ້ແມ່ນແມ້ງ ມະໂນເຈົ້າຈຶ່ງຄ່ອຍຂາຍ ພໍ່ເນີ

ການມີນິດໄສລະມັດລະວັງຮອບຄອບ: ສອນໃຫ້ເປັນຄົນມີນິດໄສລະມັດລະວັງຮອບຄອບໃນເລື່ອງຕ່າງໆເຊັ່ນ ໃຫ້ເປັນຄົນມີສະຕິ ກ່ອນຈະອອກຈາກບ້ານໄປໃສມາໃສຕ້ອງກວດກາເຄື່ອງໃຊ້ໄມ້ສອຍໃຫ້ດີ,ໃສ່ກຸນແຈປະຕູບ້ານ,ປະຕູເຮືອນໃຫ້ຮຽບຮ້ອຍເພື່ອຄວາມປອດໄພ ໂດຍປຽບທຽບໃຫ້ເປັນ

ຄົນຮອບຄອບເອົາແບບຢ່າງເຕົ່າ ເມື່ອໄຂ່ແລ້ວ ມັນຈະຖົມໄຂ່ໄວ້ຢ່າງດີກ່ອນຈະຈາກໄປ ດັ່ງຄຳສອນທີ່ວ່າ:

ຊື່ວ່າເປັນຍິງໃຫ້ ທຳນຽມນາມເຕົ່າ
ມັນຫາກມ້ຽນໄຂ່ໄວ້ ດີແລ້ວຈິ່ງຄ່ອຍໄປ

ການຮູ້ຈັກເວລາ: ຜູ້ຍິງຕ້ອງຝຶກຝົນຕົນເອງໄປຕາມລະບຽບແບບແຜນ ການດຳລົງຊີວິດທີ່ເໝາະສົມ ຄື ໃຫ້ຮູ້ຈັກເວລາໃດຄວນຈະນອນ, ເວລາໃດຄວນຈະເຮັດຫຍັງ, ບໍ່ຄວນນອນແຕ່ຫົວຄ່ຳ ແລະບໍ່ໃຫ້ນອນເດິກຈົນເກີນໄປ. ຕອນຫົວຄ່ຳເມື່ອກິນເຂົ້າແລ້ວ ຜູ້ຍິງຄວນເຮັດວຽກເຮືອນຕ່າງໆເຊັ່ນ ຕຳຫູກ, ປັ່ນຝ້າຍ ເມື່ອເຖິງເວລາໄກ່ຂັນຄັ້ງທີ 3 (ເວລາ 11 ໂຮງ) ຈິ່ງເຂົ້ານອນ.

ຍາມນອນໃຫ້ ຫາຍາມຊອບເມື່ອ
ໃຫ້ຟັງສຽງໄກ່ຜູ້ ຂັນຊັ້ນເທື່ອສາມ ນັ້ນເນີ

ການປະຢັດ: ຜູ້ຍິງຕ້ອງຮູ້ຈັກປະຢັດສິ່ງຂອງໃຊ້ສອຍຕ່າງໆເຊັ່ນ ເມື່ອໃດໄດ້ສິ່ງໃໝ່ມາຢ່າຟ້າວຖິ້ມເຄື່ອງເກົ່າໃຫ້ເກັບຮັກສາໄວ້ ເມື່ອເວລາຈຳເປັນຈະໄດນຳມາໃຊ້ອີກ ດັ່ງຄຳສອນທີ່ວ່າ:

ຍາມໃດເຈົ້າ ມາມືອັນໃໝ່
ຂອງເກົ່ານັ້ນ ແພງໄວ້ຢ່າວາງ ແທ້ເນີ

ນອກຈາກນີ້ ຜູ້ຍິງຕ້ອງຮູ້ຈັກ ຈັບຈ່າຍເງິນຄຳຄື ເມື່ອເວລາມີເງິນ, ຄຳຫຼາຍຢ່າອວດອ້າງ ຫຼື ຢ່າຮີບໃຊ້ຈ່າຍຟຸມເຟືອຍ, ໃຫ້ປະຢັດມັດທະຍັດ, ເມື່ອເວລາຂັດສົນຈິ່ງນຳເງິນຈຳນວນນັ້ນມາໃຊ້ຈ່າຍ ດັ່ງຄຳສອນທີ່ວ່າ:

ຍາມໃດ ເຈົ້າຫາກມີເງິນລົ້ນ ເຕັມຖົງຢ່າຟ້າວອົ່ງ
ຍາມເມື່ອ ທຸກຂະມອດໄຮ້ ເງິນນັ້ນຈິ່ງຄ່ອຍບາຍ

ການເປັນມານດາທີ່ດີ: ເປັນຜູ້ຍິງທີ່ເປັນມານດາຄວນຮູ້ຈັກລ້ຽງດູເບິ່ງແຍງລູກໃຫ້ຈະເລີນເຕີບໂຕໂດຍຍົກເອົາທຳມະຊາດຂອງສັດບາງຊະນິດມາເປັນອຸທາຫອນສອນໃຈຄືໃຫ້ເບິ່ງແບບຢ່າງແມ່ໄກ່ທີ່ຮູ້ຈັກຟັກໄຂ່, ຮູ້ຈັກປົກປັກຮັກສາ ແລະລ້ຽງລູກ ຈົນເຕີບໃຫຍ່ ດັ່ງຄຳສອນທີ່ວ່າ:

ເປັນຍິງນີ້ ທຳນຽມນາມໄກ່
ໄກ່ມັນຊ່າງຟັກຊ່າງປ້ອງ ປອງລ້ຽງໃຫ້ໃຫຍ່ສູງ

ເລື່ອງຄວາມເປັນມານດານີ້ ຍັງໄດ້ສອນອີກວ່າ ບໍ່ໃຫ້ເອົາແບບຢ່າງມານດາທີ່ບໍ່ດີຄື ມານດາທີ່ເກີດລູກແລ້ວ ແຕ່ບໍ່ສົນໃຈລ້ຽງດູເບິ່ງແຍງ ຫຼືລ້ຽງລູກບໍ່ເປັນ, ປ່ອຍປະລະເລີຍບໍ່ສົນໃຈວ່າລູກຈະຢູ່ໃນແນວໃດ, ຈິ່ງປຽບເໝືອນເປັດ ແລະທ່ານ ເມື່ອອອກໄຂ່ແລ້ວກໍ່ຖົ້ມໄຂ່ໄວ້, ບໍ່ຮູ້ຈັກຟັກໄຂ່ ແລະບໍ່ຮູ້ຈັກລ້ຽງລູກ ດັ່ງຄຳສອນທີ່ວ່າ:

ຢ່າໄດ້ທຽມຜູ້ໃບ້ ເປັນທ່ານຫົວຂຽວ

ມັນກໍ່ໄລລາປະ ໄຂ່ເສຍກາງບ້ານ
ມັນກໍ່ໄລລາຖິ້ມ ເສຍໃຈດອມເພື່ອນ
ລູກແຕກອອກຈາກທ້ອງ ມັນລັ່ງກໍ່ບໍ່ເປັນ

ນອກຈາກນີ້ ຜູ້ຍິງຕ້ອງຮູ້ຈັກໄປວັດຟັງທຳຕາມຮີດຄອງປະເພນີຄື ຮູ້ກັກປະຕິບັດຕາມຮີດຄອງປະເພນີເຊັ່ນ ເຖິງເວລາຕອນແລງ ເມື່ອໄດ້ຍິນສຽງກອງຈາກວັດ, ຢູ່ຮູ້ແຕ່ແຕ່ງຕົວ, ຄວນຄິດວ່າເຮົາຄວນຈະເຮັດຫຍັງແດ່ ດັ່ງຄຳສອນທີ່ວ່າ:

ເຖິງເມື່ອຍາມແລງຕັ້ງ ກອງງາຍໃຫ້ຫາຮີດ ດີເນີ
ຢ່າໄດ້ລູບແຕ່ເກົ້າ ນ້ຳມັນຍ້ອຍຊຸ່ມເລີງ

ນອກຈາກ ສັງຄົມສະໄໝນັ້ນຄາດຫວັງໃຫ້ຜູ້ຍິງຕ້ອງປະພຶດປະຕິບັດຕໍ່ຕົນເອງໃນຫຼາຍໆຢ່າງ ແລ້ວ ກໍຍັງຕ້ອງປະພຶດປະຕິບັດຕໍ່ຄົນອື່ນໆອີກ.

ດ້ານບຸກຄະລິກ ແລະການສະແດງອອກ: ຄື ໃຫ້ລະມັດລະວັງຄຳເວົ້າ, ຢ່າເປັນຄົນມັກເວົ້າເລື່ອງລາວຕ່າງໆໃຫ້ຄົນທັ້ງຫຼາຍຮູ້ກັນໄປທົ່ວຄືກັບອີກາທີ່ຮ້ອງສຽງດັງເວລາກິນໄຂ່, ເພາະທຳມະດາກາຂີ້ລັກໄກ່ໄປກິນຢູ່ເທິງປາຍໄມ້ນັ້ນ ມັນຈະຮ້ອງກາໆດັງທີ່ສຸດ ເພື່ອເປັນການອວດອ້າງໃຫ້ກາຕົວອື່ນຮູ້ວ່າ ມັນໄດ້ກິນ ອາຫານແຊບຊ້ອຍ ແລະຜູ້ຍິງບໍ່ຄວນເວົ້າແບບອອກຄຳສັ່ງ ຫຼືເວົ້າແນວທາງທີ່ບໍ່ດີຄື ນົກໄສ່ທີ່ຮ້ອງເປັນລາງຮ້າຍແກ່ຄົນທີ່ຍ່າງຜ່ານປ່າ ແລະລວມກັນຫຼາຍຕົວຮ້ອງພ້ອມກັນ, ເຮັດໃຫ້ຄົນຕົກໃຈ ແລະຄິດວ່າ ອາດຈະມີເຫດຮ້າຍ ຫຼືລາງຮ້າຍເກີດຂຶ້ນກັບຕົນ. ດັ່ງນັ້ນ, ຜູ້ຍິງກໍ່ບໍ່ຄວນຮຽນແບບກາກັບນົກໄສ່ ຄືໃຫ້ດຳລົງຊີວິດໄປໃນທາງທີ່ດີ, ຕາມຈາຮີດປະເພນີເພາະຫາກຕິດນິດໄສທີ່ບໍ່ດີຈະກາຍເປັນຄົນບໍ່ເພິ່ງປາຖະໜາ ດັ່ງຄຳສອນທີ່ວ່າ:

ຢ່າໄດ້ຂົວຂົວຮ້ອງ ສະເໝີກາກິນໄຂ່
ຢ່າໄດ້ເປັນດັ່ງນົກໄສ່ຮ້ອງ ລາງເຂັ້ມຂົ່ມແຂງ
ໃຜບໍ່ຍິນດີດ້ວຍ ດອມລາງສຽງປາກ
ຕັ້ງວ່າຄອງຖ່ອຍຮ້າຍ ຝຸງນີ້ຢ່າຮຽນ ແທ້ເນີ

ນອກຈາກນີ້ ຜູ້ຍິງບໍ່ຄວນສະແດງຄວາມຄຽດ ຫຼືບໍ່ພໍໃຈຕໍ່ສາມີຫາກມີສາມີທີ່ເຮັດວຽກນອກບ້ານ, ກັບມາບ້ານດ້ວຍຄວາມອິດເມື່ອຍ ບໍ່ຄວນໃຊ້ຄຳເວົ້າທີ່ບໍ່ມ່ວນຫູສາມີ ຫຼືເຮັດໜ້າບູດບຶ້ງໃສ່ສາມີ, ຄວນເອົາອົກເອົາໃຈໂດຍການຫາເຂົ້າປາອາຫານມາໃຫ້ສາມີກິນ ດັ່ງຄຳສອນທີ່ວ່າ:

ຍາມໃດ ຜົວຫາກເຮັດວຽກດ້ວຍ ຂອງເຮືອນແຄນຍິ່ງ ມານັ້ນ
ເມຍຢ່າຂ້ຽວ ຄຳຮ້າຍສຽດສີ
ຊາດທີ່ກຳລັງນີ້ ແຮງຄົນຮູ້ອ່ອນ
ເຫັນວ່າໄປບໍ່ໄດ້ ຫົວຄໍ້ວເຈົ້າຢ່າຕອມ

ຢ່າໄດ້ອຸນອູໜ້າ ອູດອູບູດໃຄ່
ໃຫ້ຫາພາເຂົ້າໄວ້ ດາຖ້າຮຽບຮຽງ

ດ້ານຈິດໃຈ, ຄວາມຄິດ ແລະການຕັດສິນໃຈ: ຄືເປັນຜູ້ຍິງຕ້ອງນັບຖື ແລະເຊື່ອຟັງຄຳສັ່ງສອນຂອງພໍ່ແມ່ ເພາະຄຳຕັກເຕືອນຂອງພໍ່ແມ່ນັ້ນມີຄຸນຄ່າຫຼາຍ, ຫາກເຄົາລົບເຊື່ອຟັງຊີວິດກໍ່ຈະຈະເລີນຮຸ່ງເຮືອງ.

ຄຳປາກພໍ່ແມ່ນີ້ ໜັກເກິ່ງທໍລະນີ
ໃຜຜູ້ຢ້ານຢ່ານບໍ ຫາກຊິດີເມືອໜ້າ

ເມື່ອທ່ານ(ພໍ່ແມ່) ເສຍຊີວິດໄປແລ້ວ ຢ່າລືມບຸນຄຸນ, ໃຫ້ທານໄຫວ້ບູຊາ

ພໍ່ຫາກຈຸຕິແລ້ວ ມໍລະນາລົດຊົ່ວ ໄປນັ້ນ
ຄຸນພໍ່ລ້ຽງແຕ່ນ້ອຍ ໃຫ້ຍໍຂຶ້ນໃສ່ຫົວ ນັ້ນເນີ

ນອກນີ້ ເມື່ອຜູ້ຍິງທີ່ມີສາມີແລ້ວເທົ່າກັບວ່າເປັນການປ່ຽນຜູ້ປົກຄອງຈາກບິດາມານດາມາຢູ່ໃນການຄອບຄອງຂອງສາມີ. ເພາະສະນັ້ນພັນລະຍາຕ້ອງຍ້ອງຍໍ ແລະນັບຖືສາມີເຊັ່ນ ເມື່ອເວລາສາມີຈະອອກເດີນທາງໄປຄ້າຂາຍ, ພັນລະຍາຄວນສະແດງກິລິຍານົບນອບ ແລະກ່າວຄຳອວຍພອນໃຫ້ສາມີປະສົບຄວາມສຳເລັດໃນການຄ້າຂາຍ ດັ່ງຄຳສອນທີ່ວ່າ:

ຜົວໄປຄ້າ ຂອງຄວນໃຫ້ຮີບແຕ່ງ
ເມຍນອບນ້ອ ປະສົ່ງຊ້ຳສົ່ງພອນ
ກໍຈົ່ງມີໄຊໄດ້ ເຫຼືອທຶນອອກເຄິ່ງ
ເມຍຄະລຳບໍ່ໄດ້ ທຶນຄ້າຊິຈຸ່ມເສຍ

ພ້ອມນີ້ ຜູ້ຍິງກໍຕ້ອງຮູ້ຈັກຮັກຍາດຕິພີ່ນ້ອງ ເພາະພີ່ນ້ອງຍ່ອມມີຈິດໃຈ ແລະນິດໄສທີ່ບໍ່ຄືກັນ, ມີທັງດີ ແລະບໍ່ດີ ຢ່າງໃດກໍ່ຕາມຄວນຮັກແພງກັນໄວ້ ດັ່ງຄຳສອນທີ່ວ່າ:

ສາຂາໄມ້ ລຳດຽວປ້ອງຍັງຕ່າງ ກັນດາຍ
ຫາກວ່າເປັນພີ່ນ້ອງ ໃຈລ້ຽວກໍຫາກມີ

ນອກຈາກນີ້, ດ້ານໜ້າທີ່ຄວາມຮັບຜິດຊອບ ຜູ້ຍິງທີ່ມີຄອບຄົວແລ້ວຫາກສາມີຫາເງິນຄຳມາໄດ້ກໍໃຫ້ຄິດພິຈາລະນາ ແລ້ວແບ່ງເປັນສາມສ່ວນ. ສ່ວນທີໜຶ່ງຮັກສາໄວ້ໃຊ້ໃນຄອບຄົວ, ສ່ວນທີ່ສອງເກັບໄວ້ເພື່ອເຮັດບຸນກິນທານ ແລະສ່ວນທີສາມສຳລັບຊ່ວຍເຫຼືອຍາດພີ່ນ້ອງຝ່າຍຂອງສາມີ ດ້ວຍເຊິ່ງເປັນໄປຕາມຮີດຄອງປະເພນີທີ່ສະໄໜ້ຂອງຄອບຄົວຈະຕ້ອງຕອບແທນຄອບຄົວຂອງສາມີ ແລະບົວລະບັດລ້ຽງດູ ພໍ່ແມ່ສາມີຄືດັ່ງພໍ່ແມ່ຂອງຕົນ ດັ່ງຄຳສອນທີ່ວ່າ:

ຍາມໃດ ຜົວຫາກຂົນຂວາຍໄດ້ ມາເຮືອນໃຫ້ເຈົ້າເບິ່ງ

ໃຫ້ເຈົ້າຄິດຖີ່ຖ້ວນ
ທັງມວນນັ້ນ
ສ່ວນໜຶ່ງນັ້ນ
ສ່ວນໜຶ່ງເວນວາງໄວ້
ສ່ວນໜຶ່ງຢາຍພີ່ນ້ອງ
ຢາຍເມືອເບືອງ
ໃຫ້ເຈົ້າແບ່ງພູດໄວ້
ຖົມຄຸນໃຫ້
ຖະໜອມຍິ່ງແມ້ງ
ເຫັນແລ້ວແບ່ງບາຍ
ໃຫ້ປັນເປັນສາມສ່ວນ
ຖະໜອມໄວ້ສືບເຮືອນ
ມະຫາເຖນທານທອດ
ຝຸງໃກ້ຄູ່ເຮືອນ
ວົງສາຫຼາຍແຫ່ງ
ເມືອເບື້ອງແມ່ຜົວ
ຕາມຄອງໃພ້ເພິ່ນ
ສະເໝີພ້ຽງແມ່ຕົນ

ຈາກການສຶກສາສາມາດເວົ້າໄດ້ວ່າ ຄວາມເປັນຜູ້ຍິງໃນສັງຄົມສະໄໝອານາຈັກລາວລ້ານຊ້າງ ຊຶ່ງສະແດງອອກໃນວັນນະຄະດີ "ອິນທິຍານສອນລູກ" ມີຄວາມຄາດຫວັງໃຫ້ຜູ້ຍິງສະເພາະທີ່ເປັນສາມັນຊົນທົ່ວໄປທັງທີ່ຍັງເປັນສາວ ແລະແຕ່ງງານແລ້ວເພື່ອໃຫ້ເປັນກຸນລະສະຕີທີ່ດີຕາມຮີດຄອງຊຶ່ງຍຶດຖື ແລະປະຕິບັດກັນມາແຕ່ບູຮານນະການ.

ຄວາມຮັບຮູ້ ແລະຄາດຫວັງທີ່ສັງຄົມມີຕໍ່ຄວາມເປັນຜູ້ຍິງໃນສັງຄົມລາວສະໄໝອານາຈັກລາວລ້ານຊ້າງທີ່ປາກົດໃນຄຳສອນ "ອິນທິຍານສອນລູກ" ໄດ້ມີການສືບທອດມາຈົນເປັນຄວາມຮັບຮູ້ໃນປັດຈຸບັນນີ້ ແຕ່ມີບາງຄຳສອນກໍ່ມີການປັບປຸງປ່ຽນແປງໃຫ້ແທດເໝາະກັບສັງຄົມໃໝ່. ເຖິງແມ່ນວ່າຈະເປັນສິ່ງສືບທອດໃນອະດີດ ຫຼືມີການປ່ຽນແປງຄວາມເປັນຜູ້ຍິງລາວທີ່ເປັນທີ່ຮັບຮູ້ຄືຜູ້ທີ່ຕ້ອງປະພຶດປະຕິບັດຕໍ່ຕົນເອງ ແລະຕໍ່ຄົນອື່ນດັ່ງກ່າວໄວ້ຂ້າງເທິງນັ້ນ.

ເອກະສອນອ້າງອີງ

ກົມວັນນະຄະດີ ອິນທິຍານສອນລູກ, 2507, ພິມຄັ້ງທີ 3, ວຽງຈັນ, ກະຊວງສຶກສາທິການ
ບົວພອນ ມະໄລຄຳ ການສຶກສາປຽບທຽບວັນນະກຳຄຳສອນສະຕີຂອງໄທ ແລະລາວ, 2544.

ອັດຕະລັກຂອງຊົນເຜົ່າທາງດ້ານຄວາມເຊື່ອ ແລະພິທີກຳໃນເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝ

IDENTITY OF ETHNIC GROUP'S BELIEF AND CEREMONY IN LAO SHORT STORY AND NOVEL CONTEMPORARY

ໂດຍ ໄມພອນ ດວງພະສີ

ບົດຄັດຫຍໍ້

ບົດຄວາມນີ້ ສຶກສາອັດຕະລັກຂອງຊົນເຜົ່າດ້ານຄວາມເຊື່ອ ແລະພິທີກຳໃນເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝ. ຜົນການສຶກສາພົບວ່າ ອັດຕະລັກຂອງຊົນເຜົ່າມີວິຖີຊີວິດທີ່ມີຄະຕິຄວາມເຊື່ອ ແລະສາສະໜາແບບດັ້ງເດີມ, ມີການນັບຖືຜີ ແລະອຳນາດເໜືອທຳມະຊາດເຊັ່ນ ຜີບັນພະບຸລຸດ, ຜີທີ່ເກີດຈາກສິ່ງແວດລ້ອມ ເປັນຕົ້ນແມ່ນຢູ່ໃນທ້ອງຟ້າ, ພູເຂົາ, ແມ່ນ້ຳ ແລະປ່າໄມ້. ສິ່ງເຫລົ່ານີ້ເປັນສ່ວນ ໜຶ່ງຂອງພະລັງທາງສັງຄົມທີ່ມີອິດທິພົນຕໍ່ວິຖີຊີວິດຂອງບັນດາຊົນເຜົ່າ. ຊົນເຜົ່າມີຄວາມຜູກພັນ ແລະ ເຊື່ອເລື່ອງຜີ, ອຳນາດເໜືອທຳມະຊາດ ແລະມີຄວາມເຊື່ອວ່າ ການເຈັບເປັນເກີດຈາກການກະທຳຂອງຜີ

Abstract

This article aims to study the belief and ceremony identity of ethnic group in Lao contemporary short stories and novels. The study found that the identity of ethnic group has the way of life which owns primary believe and religion, respects spirit and supernatural such as ancestor spirit and environment spirit from the sky, mountain, river and forest. These are a part of the social power which influence over the way of life of ethnic group related with the life of people. Ethnic group relate and believe in spirit, supernatural and believe that the ill occurs from the action of spirit.

ບົດນຳ

ປະເທດລາວເປັນປະເທດທີ່ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ແລະມີຫຼາຍຊົນເຜົ່າ. ຈາກການສຶກສາຄົ້ນຄວ້າຂອງຄະນະຄົ້ນຄວ້າສັງຄົມລາວໃນປີ 1970 ວ່າ ໃນປະເທດລາວ ໄດ້ຈັດເປັນ 3 ຊົນຊາດເຊັ່ນ ລາວເທິງ, ລາວສູງ ແລະລາວລຸ່ມ ແລະມີ 68 ຊົນເຜົ່າ ຊຶ່ງເອີ້ນຊົນເຜົ່າເຫລົ່ານັ້ນຕາມຖິ່ນທີ່ຢູ່ອາໄສ, ພາສາ ແລະວັດທະນະທຳ. ນອກຈາກນີ້ ກົມຊົນເຜົ່າສູນກາງແນວລາວສ້າງຊາດໄດ້ອີງໃສ່ດ້ານພາສາເພື່ອຈຳແນກ ແລະຈັດກຸ່ມຂອງຊົນເຜົ່າຕ່າງໆໃນລາວ ຊຶ່ງໄດ້

ຈັດອອກເປັນ 4 ໝວດພາສາ ແລະມີ 49 ຊົນເຜົ່າ ຄື ໝວດພາສາລາວ-ໄຕ ມີ 7 ຊົນເຜົ່າ, ໝວດພາສາມອນ-ຂະແມມີ 32 ຊົນເຜົ່າ, ໝວດພາສາຈີນ-ຕິເບດມີ 8 ຊົນເຜົ່າ ແລະໝວດພາສາມົ້ງ-ອີ້ວມຽນມີ 2 ຊົນເຜົ່າ. (ກົມຊົນເຜົ່າ, 2005 : ນ-ບ).

ຄຳວ່າ "ຊົນເຜົ່າ" ໃນບົດຄວາມນີ້ ໝາຍເຖິງກຸ່ມຊົນເຜົ່າທີ່ບໍ່ໄດ້ເວົ້າພາສາຕະກຸນລາວ-ໄຕ ຊຶ່ງແມ່ນຊົນເຜົ່າທີ່ເວົ້າພາສາຕະກຸນມອນ-ຂະແມ, ຈີນ-ຕິເບດ ແລະມົ້ງ-ອີ້ວມຽນ. ບັນດາກຸ່ມຊົນເຜົ່າເຫຼົ່ານີ້ ຊຶ່ງອາໄສຢູ່ຢ່າງກະແຈກກະຈາຍທົ່ວໄປໃນດິນແດນຕ່າງໆຂອງປະເທດລາວ, ຕັ້ງແຕ່ເໜືອຕະຫຼອດໃຕ້. ພວກເຮົາເອີ້ນວ່າບັນດາກຸ່ມຊົນເຜົ່ານັ້ນ, ກໍເພາະວ່າມີຄວາມຫຼາກຫຼາຍ ນັບທັງພາສາເວົ້າ, ວັດທະນະທຳ, ການເປັນຢູ່ ລວມທັງລະບົບໂຄງສ້າງທາງສັງຄົມ, ເສດຖະກິດທີ່ມີຄວາມແຕກຕ່າງຈາກກຸ່ມທີ່ເວົ້າພາສາລາວ-ໄຕ ທີ່ມັກອາໄສຢູ່ທີ່ງພຽງໂດຍທົ່ວໄປ. ຄຳວ່າ ບັນດາຊົນເຜົ່າໃນບົດນີ້ ອາດໃຊ້ຄຳວ່າກຸ່ມຊົນເຜົ່າທີ່ມີລັກສະນະແຕກຕ່າງທາງດ້ານວັດທະນະທຳ.

ຖ້າພິຈາລະນາພາບຊີວິດຂອງບັນດາຊົນເຜົ່າໃນສັງຄົມລາວ ພົບວ່າຮູບພາບຂອງຊົນເຜົ່າຕ່າງໆ ມີອິດທິພົນຕໍ່ການປະດິດແຕ່ງວັນນະກຳຂອງນັກຂຽນ, ນັກຂຽນລາວຫຼາຍຄົນໄດ້ສ້າງຕົວລະຄອນຊົນເຜົ່າຂຶ້ນມາຫຼາຍເລື່ອງ ເພື່ອສະທ້ອນໃຫ້ເຫັນພາບຊີວິດໃນຫຼາຍແງ່ມຸມ; ໂດຍສະເພາະທາງດ້ານສັງຄົມການ ປົກຄອງ ແລະວັດທະນະທຳ. ນັບແຕ່ປີ 1975 ເປັນຕົ້ນມາ ນັກຂຽນໄດ້ສ້າງຜົນງານໃນການປະດິດແຕ່ງອອກມາຢ່າງຫຼວງຫຼາຍ ແລະໃນວົງວິຊາການລາວກໍຍອມຮັບວ່າ ໃນປີ 1975 ເປັນຕົ້ນມາ, ວັນນະກຳປະເພດເລື່ອງສັ້ນ ແລະນະວະນິຍາຍໄດ້ພັດທະນາ ແລະມີປະລິມານຫຼາຍຂຶ້ນກວ່າໃນອະດີດ, ຍັງມີການ ປາກົດຂອງຕົວລະຄອນຊົນເຜົ່າເພີ່ມຫຼາຍຂຶ້ນ. ດັ່ງເຊັ່ນ ນະວະນິຍາຍເລື່ອງ "ໄມບະເລຍ" (2007) ຂອງດວງໄຊ ຫຼວງພະສີ ຊຶ່ງໄດ້ເວົ້າເຖິງເດັກຍິງຊົນເຜົ່າຜູ້ໜຶ່ງມີຖານະທຸກຍາກ ແລະໄດ້ກາຍເປັນທາດຮັບໃຊ້ໃຫ້ຄົນທີ່ມີຖານະທາງເສດຖະກິດດີ ແຕ່ຕອນທ້າຍກໍສາມາດເອົາຊະນະອຸປະສັກຕ່າງໆໄດ້. ນະວະນິຍາຍເລື່ອງ "ເສັ້ນທາງແຫ່ງຊີວິດ" (2002) ຂອງຈັນທີ ເດືອນສະຫວັນ. ນອກຈາກນີ້ກໍຍັງມີເລື່ອງສັ້ນ "ຄ້າງຄືນທີ່ປ່າເລີກ" (1999) ແລະ"ປະເພນີ ແລະຊີວິດ" (2005) ທີ່ມີເນື້ອໃນເວົ້າເຖິງພາບຊີວິດຂອງບັນ ດາຊົນເຜົ່າເຊັ່ນດຽວກັນ.

ການສຶກສາຮູບພາບຊີວິດຂອງກຸ່ມຊົນ ເຜົ່າໃນຖານະທີ່ເປັນຕົວລະຄອນສຳຄັນທາງດ້ານຄວາມເຊື່ອ ແລະພິທີກຳຂອງຊົນເຜົ່າທີ່ປາກົດໃນເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝ. ໃນບົດຄວາມນີ້ສະທ້ອນໃຫ້ເຫັນຄວາມຫຼາກຫຼາຍທາງຊາດພັນໃນວັດທະນະທຳລາວຜ່ານຄວາມເຊື່ອ ແລະພິທີກຳຂອງຊົນເຜົ່າ ແຕ່ລະຊົນເຜົ່າຊຶ່ງນັກຂຽນໄດ້ນຳມາປະດິດແຕ່ງເປັນເລື່ອງ ແລະໃຊ້ເປັນວັດຖຸດິບໃນການປຸງແຕ່ງສ້າງສັນເລື່ອງຕ່າງໆທາງວັນນະສິນຂຶ້ນມາ.

ວັດຖຸປະສົງ

ເພື່ອສຶກສາອັດຕະລັກຂອງຊົນເຜົ່າທາງດ້ານຄວາມເຊື່ອ ແລະພິທີກຳທີ່ປາກົດອອກໃນເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝ.

ວິທີການສຶກສາ

ຜູ້ຂຽນໃຊ້ວິທີການເກັບຮວບຮວມຂໍ້ມູນຕາມເອກະສານ ແລະສຶກສາວິເຄາະຊໍ້ມູນທີ່ຮວບຮວມໄວ້ຢ່າງລະອຽດ ແລ້ວນຳມາຕີຄວາມໂດຍໃຊ້ແນວຄິດທິດສະດີເລື່ອງອັດຕະລັກຂອງຕົວລະຄອນໃນເລື່ອງສັ້ນ ແລະນະວະນິຍາຍເປັນແນວທາງໃນການສຶກສາ.

ຜົນການສຶກສາ

ອັດຕະລັກຂອງຊົນເຜົ່າວ່າດ້ວຍຄວາມເຊື່ອ ແລະພິທີກຳ ໂດຍແທ້ຈິງແລ້ວກໍຄືອັດຕະລັກຂອງຄວາມຄິດຄວາມເຊື່ອເລື່ອງຜີ ແລະອຳນາດເໜືອທຳມະຊາດໃນແງ່ຕ່າງໆ ທີ່ບັນດາຊົນເຜົ່າເຄົາລົບນັບຖື ແລະຢ້ານກົວ ຈຸທາພັນ (ຈາມຈຸຮີ) ຜະດຸງຊີວິດ (ພ.ສ 2550 : 157-158) ເວົ້າວ່າ ສາສະໜາແທ້ຈິງ ຄືໂລກະທັດແບບໜຶ່ງ(world view)ແລະດ້ານວັດທະນະທຳທີ່ເປັນໂຄງສ້າງຢັ່ງເລິກຂອງວັດທະນະທຳໃດໜຶ່ງ, ໃນເລື່ອງຂອງພະເຈົ້າ, ມະນຸດ, ທຳມະຊາດ, ການຄົງຢູ່ຂອງມະນຸດ, ຈັກກະວານ, ຄວາມຕາຍ, ຊີວິດ, ການເຈັບປວດ, ທຸກທໍລະມານ ແລະແງ່ມຸມອື່ນໆທີ່ເປັນປັດຊະຍາໃນຊີວິດ, ສາສະໜາຈະມີຜົນກະທົບຕໍ່ອັດຕະລັກຢ່າງຫຼວງຫຼາຍຕໍ່ຄົນໃນວັດທະນະທຳໜຶ່ງໆ.

ຈາກການສຶກສາຄົ້ນຄວ້າເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝ ພົບວ່າມີພາບສະທ້ອນ ອັດຕະລັກທາງດ້ານຄວາມເຊື່ອ ແລະສາສະໜາຂອງຕົວລະຄອນຊົນເຜົ່າດັ່ງນີ້:

ການນັບຖືຜີ ແລະອຳນາດເໜືອທຳມະຊາດ

ຜີເປັນຄວາມເຊື່ອໃນລະບົບແນວຄິດດັ້ງເດີມຂອງກຸ່ມຄົນຫຼາຍແຫ່ງໃນໂລກ ອາດມີການເອີ້ນຊື່ ແຕກຕ່າງກັນອອກໄປ. ປະຄອງ ນິມມານເຫມິນ(2-1:2542) ໄດ້ເວົ້າເຖິງຜີໃນສັງຄົມໃນວັດທະ ນະທຳໄທ-ໄຕ ຊຶ່ງຮວມເຖິງວັດທະນະທຳລາວວ່າ ອາດຈຳແນກຜີເປັນ 3ປະເພດຄື ຜີຟ້າ ,ຜີຄົນຕາຍ ແລະຜີທີ່ປະຈຳຢູ່ກັບສິ່ງຕ່າງໆໃນທຳມະຊາດ.

ຜີຟ້າ ໝາຍເຖິງຜີທີ່ຢູ່ເທິງຟ້າ ມີຊື່ເອີ້ນແຕກຕ່າງກັນອອກໄປຕາມແຕ່ລະທ້ອງຖິ່ນ, ອາດຈະຫຼາຍ ອົງ ແຕ່ລະອົງມີໜ້າທີ່ແຕກຕ່າງກັນ; ອົງທີ່ຍິ່ງໃຫຍ່ທີ່ສຸດຊຶ່ງເປັນຜູ້ດູແລໂລກ ແລະສິ່ງຕ່າງໆ ລວມ ທັງກຳນົດຊະຕາຊີວິດຂອງມະນຸດ ມີລັກສະນະຄ້າຍຄືພະເຈົ້າໃນບາງສາສະໜາ ບາງທ້ອງຖິ່ນເອີ້ນວ່າ ແຖນຫຼວງ ຫຼືແຖນຟ້າຂື່ນ.

ສ່ວນຜີຄົນຕາຍ ໝາຍເຖິງຜີທີ່ເປັນວິນຍານຂອງຜູ້ທີ່ຕາຍໄປແລ້ວ ມີທັງຜີຮ້າຍ ແລະຜີດີ ຊຶ່ງແບ່ງ ອອກເປັນ 3 ລະດັບຄື (1ຜີເຮືອນ ບາງທີເອີ້ນວ່າ ຜີດ້ຳ ໝາຍເຖິງຜີບັນພະບຸລຸດຄື ຜີປູ່ຍ່າຕາຍາຍພໍ່ແມ່ທີ່ລ່ວງລັບໄປ; ຄອຍຄຸ້ມຄອງດູແລ, ຊ່ວຍເຫຼືອລູກຫຼານ(2ຜີບ້ານ ບາງທ້ອງຖິ່ນເອີ້ນວ່າ ເສື້ອບ້ານ ໝາຍເຖິງຜີປະຈຳບ້ານຊຶ່ງໄດ້ແກ່ວິນຍານຂອງຜູ້ທີ່ເຄີຍເປັນຄົນສຳຄັນຂອງບ້ານ ຫຼືເມືອງ(3 ຜີເມືອງ ບາງທີເອີ້ນວ່າເສື້ອເມືອງ ໝາຍເຖິງຜີປະຈຳເມືອງ ຊຶ່ງໄດ້ແກ່ວິນຍານຂອງເຈົ້າເມືອງອົງກ່ອນໆ ຫຼືວິລະບຸລຸດຂອງກຸ່ມຄົນຄອຍຄຸ້ມຄອງ ແລະໃຫ້ຄວາມຊ່ວຍເຫຼືອຄົນໃນເມືອງ)ປະມິນ ຈາຣຸວອນ (228-227:2549).

ຈາກບັນຫາທີ່ກ່າວມາຂ້າງເທິງ. ຖ້າພິຈາລະນາເນື້ອໃນຂອງເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝທີ່ສະທ້ອນໃຫ້ເຫັນພາບອັດຕະລັກດ້ານຄວາມເຊື່ອທີ່ກ່ຽວຂ້ອງກັບເລື່ອງຜີ ແລະອຳນາດເໜືອທຳມະຊາດຂອງບັນດາຊົນເຜົ່າວ່າ ໃນວັດທະນະທຳຂອງກຸ່ມຊົນເຜົ່າຫຼາຍກຸ່ມມີຄວາມຄິດຄວາມເຊື່ອໃນເລື່ອງອຳນາດເໜືອທຳມະຊາດທີ່ນັບຖືກັນຢູ່ໃນແຕ່ລະທ້ອງຖິ່ນ ໂດຍສະເພາະຄວາມເຊື່ອເລື່ອງຜີທີ່ມີລັກສະນະທີ່ເປັນທັງຜີດີ ແລະຜີຮ້າຍ ຊຶ່ງມີອຳນາດໃນການດົນບັນດານໃຫ້ເກີດຄວາມທຸກ ຫຼືສຸກແກ່ມວນມະນຸດໄດ້.

ພາບສະທ້ອນທີ່ສະແດງໃຫ້ເຫັນອັດຕະລັກທາງດ້ານຄວາມເຊື່ອທີ່ກ່ຽວຂ້ອງກັບເລື່ອງຜີ ແລະອຳນາດເໜືອທຳມະຊາດຈາກເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝນັ້ນ. ດັ່ງເຊັ່ນ ຄວາມເຊື່ອໃນເລື່ອງການເຈັບໄຂ້ ແລະການປິ່ນປົວເຊັ່ນ ໃນເລື່ອງສັ້ນ ໄມບະເລຍ ຕອນທະຫານຜູ້ເປັນລູກນ້ອງຂອງຮ້ອຍໂທຢົງຊາ ທະຫານຊົນເຜົ່າມົ້ງທີ່ສັງກັດຝ່າຍວຽງຈັນໄດ້ຮັບບາດເຈັບ ທີ່ຖືກທ້າວຕູ້ເອົາມີດຟັນ ແລະໄດ້ມີການປະກອບພິທີກຳການປິ່ນປົວດ້ວຍພິທີກຳແບບດັ້ງເດີມ ດັ່ງຕອນໜຶ່ງໄດ້ກ່າວວ່າ:

"ສຽງຄ້ອງທອງຂະໜາດນ້ອຍດັງມ່ອງໆຢູ່ຢ່າງບໍ່ຂາດສາຍ ພ້ອມກັບສຽງຂອງໝໍຜີ ມືຖືກະດິ່ງສັ່ນໄປເລື້ອຍໆ ໃບໜ້າຂອງໝໍຜີທີ່ປົກດ້ວຍຜ້າແພສີດຳປິດເອົາໄວ້, ປາກກໍຈົ່ມໄປເລື້ອຍໆ ລັກສະນະຄື ກັບມ້າທີ່ກຳລັງແລ່ນໄປຢ່າງວ່ອງໄວ ພ້ອມກັບຕົນຕົວກໍສັ່ນຢູ່ຕະຫຼອດເວລາ..." (ດວງໄຊ ຫຼວງພະສີ, 2007 : 16-17).

ຈາກຕົວຢ່າງທີ່ຍົກມາຂ້າງເທິງນັ້ນ, ສະແດງໃຫ້ເຫັນວ່າ ຄວາມເຈັບໄຂ້ໄດ້ປ່ວຍເປັນວິກິດການຂອງຊີວິດທີ່ປາກົດແກ່ບັນດາຊົນເຜົ່າໃນສັງຄົມລາວເຮົາ ໄດ້ຖືເປັນລະບົບແນວຄິດຂອງຄົນຢູ່ໃນສັງຄົມ ເພື່ອໃຊ້ເປັນວິທີປັດເປົ່າ ຫຼືປິ່ນປົວການເຈັບປ່ວຍໂດຍໃຊ້ທາງດ້ານຄວາມເຊື່ອ ແລະຈິດວິນຍານຂອງຄວາມເປັນຊົນເຜົ່າທີ່ຕິດພັນກັບພະລັງເໜືອທຳມະຊາດ ໃນກໍລະນີຂອງວັດທະນະທຳເຜົ່າມົ້ງກັບການປິ່ນປົວການເຈັບປ່ວຍ. ສະລາດຊາຍ ຣະມິຕານິນ (2539 : 365-366) ໄດ້ກ່າວວ່າ ໃນບ້ານມົ້ງທຸກໆ ບ້ານຈະມີຜູ້ຮຽນຮູ້ເລື່ອງພິທີກຳການຮັກສາພະຍາບານບໍ່ຫຼາຍກໍໜ້ອຍ, ຄົນເຫຼົ່ານີ້ມີທັງຜູ້ຊາຍ ແລະຜູ້ຍິງທີ່ໄດ້ຮຽນຮູ້ພິທີກຳທີ່ໄດ້ຖ່າຍທອດຈາກຮຸ່ນຄົນໜຶ່ງຫາອີກຮຸ່ນຄົນໜຶ່ງ ຄົນເຫຼົ່ານີ້ກັບໝໍຜີມີຄວາມແຕກຕ່າງກັນຄື ບໍ່ມີຜີເຂົ້າມາສິງໃນຕົວຂອງພວກເຂົາ ແຕ່ສາມາດປະກອບພິທີກຳ ແລະການນົບໄຫວ້ບາງຢ່າງເພື່ອຮັກສາໂລກໄພໄຂ້ເຈັບ ແລະໄລ່ຜີໄດ້. ພິທີກຳສ່ວນຫຼາຍໃນດ້ານນີ້ຂອງເຜົ່າມົ້ງຄືການກຳນົດ ສົມມຸດຕິຖານ ຫຼືສາເຫດຂອງການເຈັບເປັນ ແລະຫຼັງຈາກນັ້ນກໍເລີ່ມຕົ້ນປິ່ນປົວ .ຖ້າຄົນໃດຄົນໜຶ່ງເຈັບປ່ວຍລົງ ແລະຄົນໃນຄອບຄົວຄິດວ່າ ສາເຫດເກີດຈາກຜິດຜີ ຫຼືລ່ວງລະເມີດຜີ ໃນກໍລະນີນີ້, ພວກເຂົາກໍຈະໄປຕາມໝໍຜີມາ ເພື່ອເຮັດພິທີປິ່ນປົວ. ພວກເຂົາເຊື່ອວ່າຜີທີ່ຖືກລົບກວນ ຫຼືຖືກລ່ວງລະເມີດຈະມາ ແກ້ແຄ້ນ ແລະອາດຈະເອົາຂວັນຂອງຄົນເຈັບໄປ ຫຼືສະກັດກັ້ນບໍ່ໃຫ້ຂວັນຂອງຄົນເຈັບກັບມາເຂົ້າຮ່າງ. ດັ່ງນັ້ນ, ເມື່ອອຳນາດເໜືອທຳມະຊາດເປັນຜູ້ເຮັດໃຫ້ເກີດການເຈັບເປັນການຮັກສາກໍຕ້ອງໃຊ້ອຳນາດເໜືອທຳມະຊາດ. ໝໍຜີຖືເປັນບຸກຄົນທີ່ມີບົດບາດສຳຄັນໃນພິທີກຳການປິ່ນປົວຄົນເຈັບ, ໝໍຜີຈະເປັນຜູ້ຕິດຕໍ່ສື່ສານກັບບັນດາຜີຫຼືອຳນາດສັກສິດ ແລະຮູ້ວ່າສາເຫດຂອງການ

ເຈັບເປັນເກີດຈາກຫຍັງແລະຕ້ອງແກ້ໄຂບັນຫານັ້ນແນວໃດ ດັ່ງນະອະນິຍາຍເລື່ອງ ເສັ້ນທາງແຫ່ງຊີວິດ ກ່າວວ່າ: "ມີຄົນລົ້ມຄົນເຈັບຫຼືບ້ານໃດຢາກເຊັ່ນໄຫວ້ຜີບ້ານຜີເມືອງກໍຕ້ອງມາເຊື່ອເຊີນເພຍຕົ້ງໃຫ້ໄປເຍົາໄປເສັນ ເພື່ອແກ້ລາງຮ້າຍດັ່ງກ່າວ ເພາະຊາວບ້ານໃຜໆກໍຖືວ່າຍາຫຼວງເພຍຕົ້ງເປັນຄົນມີອຳນາດໜ້າເກງຂາມ, ມີລິດເດດໃນດ້ານວິຊາປາບຜີ" ຈັນທີ ເດືອນສະຫວັນ(30:2000).

ໃນສາລານຸກົມວັດທະນະທຳໄທ ພາກເໜືອ ເຫຼັ້ມ10(5422:2542)ໄດ້ກ່າວວ່າ ຊາວມົ້ງເຊື່ອວ່າມະນຸດມີທັງສ່ວນຂອງຮ່າງກາຍ ແລະຂວັນວິນຍານ; ຖ້າວ່າຂວັນອອກຈາກຮ່າງກາຍໄປດ້ວຍສາເຫດໃດກໍຕາມຈະພາໃຫ້ຄົນຜູ້ນັ້ນລົ້ມເຈັບລົງ; ຈຶ່ງຈຳເປັນຕ້ອງຫາວິທີນຳຂວັນກັບມາຫາຮ່າງກາຍຂອງຄົນເຈັບນັ້ນເພື່ອຈະເຮັດໃຫ້ສວ່າງເຊົ້າເປັນປົກກະຕິ. ນອກຈາກນີ້ ພວກເຂົາຍັງເຊື່ອໃນການກັບຊາດມາເກີດອີກ, ດັ່ງນັ້ນ ພິທີກຳທີ່ສຳຄັນຈຶ່ງມັກຈະກ່ຽວຂ້ອງກັບສຸຂະພາບຂອງຄົນໂດຍກົງເຊັ່ນ ການເອີນຂວັນ ເອີ້ນວ່າ "ຮູບລີ່" ເປັນການເອີ້ນໃຫ້ຂວັນຜູ້ເຈັບກັບມາເຂົ້າຮ່າງເດີມ, ການລ້ຽງຜີງົວ ເອີ້ນວ່າ "ອົວຢູ່ດ໊າ" ໂດຍເຊື່ອວ່າພໍ່ ຫຼືແມ່ທີ່ຕາຍໄປຕ້ອງການໃຫ້ລູກຫຼານທີ່ຍັງຢູ່ປະກອບພິທີສົ່ງໄປໃຫ້. ການເຮັດຜີ ເອີ້ນວ່າ "ອົວເນັ້ງ" ເປັນການບຳບັດຮັກສາຄົນເຈັບ ຊຶ່ງແບ່ງເປັນ 2 ລັກສະນະຄື ການເຮັດຜີເຂົ້າສິ່ງ ເອີ້ນວ່າ "ອົ້ວ ເນັ້ງເທີ" ກັບການເຮັດຜີເຮືອນ ເອີ້ນວ່າ "ອົວເນັ້ງເກ" ; ລັກສະນະທຳອິດເປັນການເຊີນເຂົ້າສິ່ງຮ່າງໜ່ຜີ ສ່ວນລັກສະນະທີສອງເປັນການເຊີນຜີມາຊ່ວຍເຮັດໃຫ້ຄາຖາໄດ້ຜົນຍິ່ງຂຶ້ນໃນການປິ່ນປົວຄົນເຈັບ. ນອກຈາກນີ້ ເຜົ່າມົ້ງຍັງມີການນັບຖືຜີບັນພະບຸລຸດ ,ຜີບ້ານຜີເຮືອນເປັນສຳຄັນ ຊຶ່ງເປັນຜີສະມາຊິກໃນຄອບຄົວທີ່ໄດ້ລ່ວງລັບໄປແລ້ວ ແລະຜີບັນພະບຸລຸດຈະເປັນຜູ້ປົກປ້ອງ ແລະຄຸ້ມຄອງຄົນໃນຄອບ ຄົວໃຫ້ມີຄວາມສຸກຄວາມຈະເລີນ. ດັ່ງນັ້ນ ເມື່ອລູກຫຼານຈະເຮັດຫຍັງກໍຕ້ອງບອກຕ້ອງເລົ່າ ຫຼືເຊັ່ນໄຫວ້ ບອກຜີກ່ອນ. ນອກຈາກນີ້ ຫາກມີຜູ້ທີ່ບໍ່ແມ່ນສະມາຊິກໃນຄອບຄົວເສຍຊີວິດໃນບໍລິເວນບ້ານຂອງຄົນ ອື່ນກໍຖືເປັນການເຮັດຜິດຮີດຜິດຄອງ ແລະຕ້ອງມີການຄອບຜີບ້ານຜີເຮືອນໃຫ້ຮັບຮູ້ ດັ່ງບົດເລື່ອງໄດ້ກ່າວວ່າ:

> "ຖ້າແມ່ເຈົ້າຕາຍຢູ່ເຂດເຮືອນນີ້ຈະເກີດເລື່ອງບໍ່ດີກັບຜີຢ້າວຜີເຮືອນຂອງພວກເຮົາ ເພາະເຈົ້າເປັນຄົນຕ່າງເຜົ່າ, ປະເພນີຮີດຄອງແຕກຕ່າງກັນ. ສະນັ້ນ ເຮົາຈະໃຫ້ພວກເຂົາແປງເຮືອນຮ້າງຫຼັງໜຶ່ງຢູ່ແຄມບ້ານ ແລ້ວສອງແມ່ລູກພວກເຈົ້າໃຫ້ໄປຢູ່ບ່ອນນັ້ນຊົ່ວຄາວກ່ອນ; ຖ້າແມ່ຫາກມີອາການດີຂຶ້ນຈຶ່ງຄ່ອຍກັບມາ" (ຈັນທີ ເດືອນສະຫວັນ, 2000 : 40-41).
>
> ນອກຈາກການນັບຖືຜີບັນພະບຸລຸດ, ຜີບ້ານຜີເຮືອນເປັນສຳຄັນແລ້ວ ເຜົ່າມົ້ງຍັງນັບຖືຜີປ່າຜີພູ, ຜີເຈົ້າຖິ່ນເຈົ້າຖານ, ຜີຕົ້ນໄມ້, ຜີຈອມປອກ, ຜີແມ່ນ້ຳລຳເຊ. ເມື່ອມະນຸດເຮົາຈະເຮັດສິ່ງໃດສິ່ງໜຶ່ງຕ້ອງຄຳນຶງເຖິງເຈົ້າປ່າເຈົ້າເຂົາ, ດັ່ງທະຫານຂອງຝ່າຍແນວລາວຮັກຊາດທີ່ຕ້ອງອາໄສປ່າເຂົາລຳເນົາໄພເປັນທີ່ຢູ່ອາໄສທັງເວັນ ແລະຄືນຄື ລີຈູ ແລະບ່າຕົ່ວນອນໃນປ່າ, ໃນຂະນະນັ້ນ ທະຫານເຜົ່າລາວເອົາປູມາຈີ່ ບ່າຕົ່ວໄດ້ຫ້າມເອົາໄວ້ ພ້ອມທັງໃຫ້ເຫດຜົນວ່າ:
>
> > "ເວລານອນປ່າດົງພົງໄພຫ້າມບໍ່ໃຫ້ຈີ່ກະປູ, ສິ່ງທີ່ຄາວ ເພາະກິ່ນຂອງກະປູເຮັດໃຫ້ຜີຍ່າຫ້າງຜີ ຍະວາຍ ແລະຜີກ່ອງກ່ອຍມາອາລະວາດມະນຸດ" (ຈັນທີ ເດືອນສະຫວັນ, 2004 : 4)

"ບ່າຕໍ່ເອົາກິ່ງໄມ້ປົກລົ່ງທີ່ຈອມປອກແລ້ວມັນກໍຍ່າງອ້ອມສາມຮອບ, ຄຸເຂົ່າ ແລະກົ້ມຫົວລົ່ງ ສາທຸ! ສາທຸ! ຂໍໃຫ້ສິ່ງສັກສິດທັ້ງຫຼາຍຈົ່ງຊ່ວຍຄຸ້ມຄອງພວກຜູ້ຂ້າໃຫ້ຕະຫຼອດປອດໄພເຖີດ!" (ຈັນທີ ເດືອນສະຫວັນ, 2004:31).

ໃນວັດທະນະທຳຊົນເຜົ່າເຮົາຈະເຫັນຄະຕິການນັບຖືຜີຕ່າງໆຢ່າງຫຼວງຫຼາຍເຊັ່ນ ຜີບ້ານຜີເຮືອນ ເຈົ້າປ່າເຈົ້າເຂົາ ຜີທີ່ສຳຄັນຫຼາຍຄື ຜີບ້ານຜີເຮືອນ ຊຶ່ງຊາວບ້ານກໍຈະຈັດພິທີນົບໄຫວ້ເປັນປະຈຳທຸກປີ ທັ້ງນີ້ການລ້ຽງຜີຊຶ່ງເປັນກິດຈະກຳທີ່ກ່ຽວຂ້ອງກັບວິຖີຊີວິດຄວາມເປັນຊົນເຜົ່າໃນສັງຄົມ ລາວ. ດັ່ງກໍລະນີ ໃນວັດທະນະທຳຂອງຊາວມົ້ງ ຊຶ່ງຜີມີບົດບາດສຳຄັນໃນການດົນບັນດານຄວາມຢູ່ດີມີສຸກ; ພ້ອມທັ້ງມີອຳນາດສາມາດທຳຮ້າຍຜູ້ຄົນຈົນເສຍຊີວິດໄດ້. ສະນັ້ນ ຫາກເກີດການເຈັບໄຂ້ໄດ້ປ່ວຍ ບາງເທື່ອພວກເຂົາກໍຈະເຮັດພິທີ "ບະຜີ" ໄວ້ວ່າ ຖ້າເຮັດໃຫ້ອາການເຈັບໄຂ້ສ່ວງເຊົາ ກໍຈະຂ້າສັດຊະນິດນັ້ນຊະນິດນີ້ ລ້ຽງຜີເພື່ອເປັນການຕອບບຸນແທນຄຸນ, ຖ້າບໍ່ບະຜີໄວ້ອຳນາດຂອງຜີກໍສາມາດດົນບັນດານໃຫ້ບຸກຄົນນັ້ນ ອາດເຖິງແກ່ຊີວິດກໍໄດ້. ຍ້ອນແນວນີ້ວິຖີຊີວິດວັດທະນະທຳຂອງບັນດາເຜົ່າຈຶ່ງຍຶດຖືເປັນຮີດຄອງປະເພນີທີ່ສັກສິດ ເໝືອນເປັນ"ກົດ"ຂອງສັງຄົມ ດັ່ງເຊັ່ນ

"ພໍ່ເຈັບໜັກ ເອົາໝໍຜີມາດູມໍເບິ່ງວ່າ ຜິດຜີຍ້ານຜີເຮືອນ ເອົາຄົນຕາຍໄປຝັງບໍ່ຖືກມື້, ນ້ອງຊາຍຫຼ້າຍັງມີຊີວິດຢູ່ກໍບໍ່ມາຫຼຽວແລ, ຢາກໃຫ້ດີ ແລະທັ້ງຊ່ວຍໃຫ້ວິນຍານຂອງອ້າຍລີຊົ່ງໄດ້ໄປເຖິງເມືອງຟ້າພະຍາແຖນກໍຕ້ອງເສັນເຢົ້າ, ລົ້ມໝູສູ່ໄກ່ ຖ້າບໍ່ເຮັດແນວນັ້ນແນ່ນອນຜູ້ທີສອງຈະເປັນ ພໍ່ຈະໄດ້ເອົາໄປຝັງອີກ"(ບຸນເສີນ ແສງມະນີ, 2005:19).

"ເທິງຫີ້ງລ້ຽງຜີຂອງເພຍຕົງ ນອກຈາກປະດັບໄປດ້ວຍເຈ້ຍເງິນເຈ້ຍຄຳ ມີເຂົ້າແບ້ 4 ຄູ່ ແລ້ວຍັງມີກະດູກຄາງໝູທີ່ຮ້ອຍໄວ້ເໝືອນພວງມະລາ ມີຄາງໝູ 37 ຄາງ ນັ້ນພຽງແຕ່ສາມເດືອນຕົ້ນປີນີ້ເທົ່ານັ້ນ"(ຈັນທີ ເດືອນສະຫວັນ, 2002:30). ໃນວິຖີວັດທະນະທຳຂອງບັນດາຊົນເຜົ່ານັ້ນ, ເຫັນວ່າການນັບຖືຜີບັນພະບຸລຸດຕາມສາຍຕະກຸນ ພໍ່ທີ່ລ່ວງລັບໄປແລ້ວ, ແຕ່ລະເຮືອນມີຮ້ານບູຊາຢູ່ກາງເຮືອນ ຢູ່ເທິງຮ້ານບູຊາຈະມີຈອກນ້ຳ, ທູບ, ທຽນ, ເຈ້ຍເງິນເຈ້ຍຄຳ ຊຶ່ງເປັນເຄື່ອງໃຊ້ສຳລັບບູຊາບັນພະບຸລຸດຂອງຄອບຄົວ. ຈຳນວນເຄື່ອງບູຊາຫຼາຍ ຫຼື ໜ້ອຍຂຶ້ນຢູ່ກັບແຕ່ລະຕະກຸນທີ່ຕົນນັບຖື. ທຸກໆວັນສິນຈະຕ້ອງປ່ຽນນ້ຳຢູ່ເທິງຮ້ານບູຊາ ການນັບຖືບັນພະບຸລຸດເພື່ອທີ່ຈະໃຫ້ລູກຫຼານມີຄວາມຈະເລີນກ້າວໜ້າຕໍ່ໄປ.

ຈາກບັນຫາທີ່ກ່າວມາຂ້າງເທິງນັ້ນ, ສະແດງໃຫ້ເຫັນຄວາມເຊື່ອເລື່ອງຜີ ແລະອຳນາດເໜືອທຳມະຊາດຖືເປັນອັດຕະລັກດັ່ງທີ່ຕົວລະຄອນຊົນເຜົ່າທີ່ຖືກນຳສະເໜີໃນເນື້ອໃນເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝ ແລະພົບວ່າຄະຕິຜີໃນວັດທະນະທຳຊົນເຜົ່ານັ້ນເປັນເໝືອນລະບົບສາສະໜາຫຼັກ ທີ່ປາກົດຢູ່ໃນສັງຄົມໃຫຍ່ໆທົ່ວໄປຄື ຄະຕິຜີເປັນສ່ວນຄ້ຳຈູນຜູ້ຄົນໃນຊຸມຊົນສັງຄົມ ເພາະຄະຕິຜີໄດ້ພະຍາຍາມອະທິບາຍສິ່ງຕ່າງໆກ່ຽວກັບຊີວິດ ຊຶ່ງບາງເທື່ອຄົນເຮົາບໍ່ສາມາດເຂົ້າໃຈ ຫຼືແກ້ໄຂບັນຫາຕ່າງໆ ໄດ້ດ້ວຍຕົນເອງ Nanda & Warms ອ້າງເຖິງໃນ ຈຸທາພັນຈາມຈຸຣີ(ຜະດຸງຊີວິດ ,166:2550) ໄດ້ສັງເກດວ່າ ສາສະໜາສອນໃຫ້ຮູ້ເຖິງການຕົກລົ່ງກັບທຳມະຊາດຂອງຊີວິດ ແລະ

ຄວາມຕາຍ, ການກຳເນີດຂອງຈັກກະວານ, ການກຳເນີດຂອງຜູ້ຄົນໃນສັງຄົມ, ຄວາມສຳພັນລະຫວ່າງບຸກຄົນ ແລະກຸ່ມ ຄົນຊຶ່ງກັນ ແລະກັນ ແລະຄວາມສຳພັນລະຫວ່າງມະນຸດກັບທຳມະຊາດ, ບໍ່ວ່າຈະເປັນຄວາມເຂົ້າໃຈກ່ຽວກັບເຫດການ, ປາກົດການທຳມະຊາດເຊັ່ນ ດາວຕົກ, ນ້ຳຖ້ວມ, ຟ້າເຫຼື່ອມ, ຟ້າຜ່າ ຫຼືໄພອັນຕະລາຍຕ່າງໆເຊັ່ນ ຄວາມແຫ້ງແລ້ງ, ຄວາມທຸກຍາກ, ການເຈັບໄຂ້ໄດ້ປ່ວຍ ຫຼືຄວາມອຸດົມສົມບູນຂອງອາຫານ ແລະພືດພັນ ຊຶ່ງຜູ້ຄົນຍັງຕ້ອງການຄຳອະທິບາຍຈາກສາສະໜາ ຊຶ່ງສາສະໜາຢູ່ທີ່ນີ້ ກໍຄື"ຄະຕິຜີ"ໃນວັດທະນະທຳຂອງບັນດາຊົນເຜົ່ານັ້ນເອງ.

ສຸວັນນາ ກຸງໄກເພັນ (2544 : 54) ໄດ້ສຶກສາຄວາມເຊື່ອເລື່ອງຜີກັບພິທີກຳຂອງຊົນເຜົ່າໃນແຂວງເຊກອງ ປະເທດລາວ ພົບວ່າ ບັນດາຊົນເຜົ່າໃນແຂວງເຊກອງເປັນກຸ່ມຊົນທີ່ນັບຖືຜີ ຫຼືເອີ້ນສັ້ນໆ "ຖືຜີ" ຫຼື "ຖືຮີດຜີ" ຄືປະເພນີປະຕິບັດຕ່າງໆໃນການດຳລົງຊີວິດທຸກດ້ານຂອງຊົນເຜົ່າ. ສະນັ້ນ ຜີກັບພິທີກຳ ແລະຊີວິດຂອງຊົນເຜົ່າຈຶ່ງກ່ຽວຂ້ອງກັນ ຊຶ່ງບໍ່ສາມາດແຍກອອກຈາກກັນໄດ້. ເຖິງແມ່ນວ່າປັດຈຸບັນ ບາງຊົນເຜົ່າຈະຮັບເອົາຄວາມເຊື່ອທາງສາສະໜາຜ່ານທາງກຸ່ມລາວລຸ່ມ ເຮັດໃຫ້ຄວາມເຊື່ອເລື່ອງຜີໃນຮູບແບບເດີມຂອງເຜົ່າຫຼຸດຄວາມສຳຄັນລົງ ແຕ່ກໍຍັງມີລັກສະນະການປະສົມປະສານຄວາມເຊື່ອຜີບາງຮູບແບບກັບຄວາມເຊື່ອທາງສາສະໜາພຸດເຊັ່ນດຽວກັບສັງຄົມທີ່ນັບຖືພຸດ. ສ່ວນຫຼາຍໃນອາຊີຕາເວັນ ອອກສ່ຽງໃຕ້ເຊັ່ນ ລາວ, ໄທ, ພະມ້າ ແລະກຳປູເຈຍ ພຽງແຕ່ບໍ່ປະກອບພິທີກຳກ່ຽວກັບຜີທີ່ມີລັກສະນະ ການດຳເນີນພິທີຂັດກັບແນວທາງປະຕິບັດຂອງສາສະໜາພຸດເຊັ່ນ ການແປງຮີດຜີຄອຍນັ້ນມີການຂ້າຄວາຍ ຊຶ່ງເປັນແຮງງານສຳຄັນຂອງການເຮັດນາ ດ້ວຍເຫດທີ່ລະບົບຄວາມເຊື່ອຫຼັກ ແລະຄວາມເຊື່ອພື້ນຖານດັ້ງເດີມຂອງບັນດາຊົນເຜົ່າເຫຼົ່ານີ້ເປັນລະບົບຄວາມເຊື່ອເລື່ອງຜີ. ພິທີກຳທັ້ງຄວາມເຊື່ອທີ່ສະ ແດງອອກໃນຮູບແບບຕ່າງໆເຊັ່ນ ຂໍ້ຫ້າມ, ຂໍ້ນິຍົມຂອງເຜົ່າ, ການສ້າງກ້ວານບ້ານເພື່ອເປັນສະຖານທີ່ປະກອບພິທີກຳລ້ຽງຜີຂອງບ້ານເປັນຕົ້ນ. ດ້ວຍເຫດດັ່ງກ່າວ ຈຶ່ງເວົ້າໄດ້ວ່າ ເປັນພິທີກຳທີ່ມີຜີເປັນແກນກາງຄວາມເຊື່ອດັ້ງເດີມນັ້ນເອງ.

2. ຂະນົບທຳນຽມປະເພນີ ແລະພິທີກຳ

ນອກຈາກລະບົບຄວາມຄິດຄວາມຊື່ອກ່ຽວກັບຜີແລະອຳນາດເໜືອທຳມະຊາດທີ່ບົ່ງບອກຄວາມເປັນອັດຕະລັກທາງຊາດພັນຂອງບັນດາຊົນເຜົ່າຕ່າງໆ ໃນວັດທະນະທຳລາວທີ່ປາກົດໃນເນື້ອຄວາມ ເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝແລ້ວ ຜູ້ວິໄຈພົບວ່າມີເນື້ອຄວາມຫຼາຍຕອນໃນວັນນະກຳຫຼາຍໆເລື່ອງທີ່ນຳມາເປັນກໍລະນີສຶກສາໄດ້ສະທ້ອນພາບກ່ຽວກັບເລື່ອງຂະນົບທຳນຽມປະເພນີ ແລະພິທີກຳຂອງບັນດາຊົນເຜົ່າໄວ້ຊຶ່ງເປັນໜ້າສົນໃຈ.

ຈາກການຄົ້ນຄວ້າເລື່ອງສັ້ນ ແລະນະວະນິຍາຍ ພົບວ່າ ມີການນຳສະເໜີພາບຊີວິດກ່ຽວກັບປະເພນີສຳຄັນຫຼາຍຢ່າງເຊັ່ນ ປະເພນີບຸນປີໃໝ່ ຫຼືໃນເນື້ອໃນເລື່ອງກ່າວວ່າເປັນປະເພນີບຸນກິນຈຽງ ຊຶ່ງເປັນງານສະເຫຼີມສະຫຼອງທີ່ສຳຄັນໃນຮອບປີ ຊຶ່ງຈັດຂຶ້ນຫຼັງເວລາເກັບກ່ຽວພືດພັນທັນຍາຫານ, ເພື່ອໃຫ້ທຸກຄົນໃນຊຸມຊົນໄດ້ຮ່ວມສະແດງຄວາມລື່ນເລີງສະໜຸກສະໜານ ແລະພົບປະກັນ ແລະກັນ ໂດຍສະເພາະ ຈະມີການກ້ຽວພາລາສີລະຫວ່າງໜຸ່ມສາວ ດັ່ງເລື່ອງໄດ້ກ່າວວ່າ:

"ຄ່ຳຄືນມື້ນັ້ນເປັນມື້ທີສີ່ຂອງບຸນກິນຈຽງ ເຖິງພະອາທິດຈະລັບພູໄປແລ້ວກໍຕາມ ແຕ່ຢູ່ໃນສະໜາມຫຍ້າອ່ອນ ຊຶ່ງບ່ໄກຈາກເຮືອນຂອງເພຍຕົງເທົ່າໃດ ຜູ້ຄົນທັງໜາຍທັງຍິງ ແລະຊາຍ ກໍຍັງຫຼິ້ນໝາກປໍລ້(ໝາກຄອນ)ແລະຂັບລຳຢ່າງບ່ຢຸດ ໂດຍສະເພາະບ່າວສາວກ່ອນເຂົາຈະອຳລາ ຈາກັນເຂົາ ເຈົ້າກໍໄດ້ຝາກສັນຍາຕໍ່ກັນໃນມື້ໜ້າດ້ວຍບົດຂັບທີ່ໜ້າປະທັບໃຈ" (ຈັນທິ ເດືອນ ສະຫວັນ, 2002:34).

ໃນບຸນປີໃໝ່ຈະເປັນງານສະຫຼອງທີ່ມີຄວາມສຳຄັນທີ່ສຸດ ງານບຸນປີໃໝ່ຈະເລີ່ມຕັ້ງແຕ່ວັນແຮມ 15 ຄ່ຳ ຂອງເດືອນທັນວາຂອງທຸກໆປີ ຊຶ່ງຈະເປັນເວລາຫຼັງການເກັບກ່ຽວ. ຫຼັງຈາກທີ່ຊາວມົ້ງໄດ້ທຳມາຫາກິນຢ່າງຂະຫຍັນຂັນແຂງມາຕະຫຼອດປີ, ການຢຸດເຮັດວຽກ ແລະຮ່ວມສະຫຼອງປີໃໝ່ຢ່າງພ້ອມພຽງ ຈຶ່ງມີຄວາມໝາຍ ແລະມີຄວາມສຳຄັນສຳລັບພວກເຂົາຢ່າງຍິ່ງ; ໃນມື້ທຳອິດຂອງບຸນມີການນົບໄຫວ້ບັນພະບຸລຸດ, ຜີເຮືອນ ຫຼັງຈາກນັ້ນ ຊາວມົ້ງຈະເດີນທາງໄປພົບປະຢ້ຽມຢາມຜູ້ໃຫຍ່ ແລະພີ່ນ້ອງ, ມີງານລ້ຽງ ດື່ມເຫຼົ້າ, ການຫຼິ້ນ ໂດຍໜຸ່ມໆສາວໆຫຼິ້ນໝາກຄອນ ແລະມີການກ້ຽວພາລາສີລະຫວ່າງຊາຍໜຸ່ມກັບຍິງ ສາວ; ການສະຫຼອງຕິດຕໍ່ກັນເຖິງໜຶ່ງອາທິດ ຫຼືຫຼາຍກວ່ານັ້ນ. (ສຸນທະຣີ ພິມເມດ, 2534:39).

ສຸນທະຣີ ພິມເມດໄດ້ກ່າວໄວ້ວ່າ ການກ້ຽວພາລາສີຫຼັງຈາກວ່າງງານຫຼັງລະດູເກັບກ່ຽວນັ້ນ, ໜຸ່ມສາວມົ້ງຈະຫາທາງກ້ຽວພາລາສີໃນເວລາຄ່ຳຄືນ ໂອກາດທີ່ຈະມີການກ້ຽວພາລາສີຫຼາຍທີ່ສຸດຄື ໃນເວລາກາງເວັນເຊັ່ນ ວັນຂຶ້ນປີໃໝ່ທັງບ່າວ ແລະສາວຈະແຕ່ງຕົວດ້ວຍເສື້ອຜ້າທີ່ສວຍສົດງົດງາມ ຈັບຄູ່ກັນ ໂຍນໝາກຄອນ, ຍິງສາວຄົນໃດຍັງບ່ມີຄູ່ໝັ້ນໝາຍກໍຈະເລືອກຜູ້ບ່າວທີ່ຕົນເອງມັກ, ມີການເວ້ົາຢອກໄຍ ກັນ ຖ້າຊາຍຄົນໃດຫາກບ່ມັກຄູ່ໂຍນໝາກຄອນຂອງຕົນກໍຫາທາງອອກໂດຍບ່ໃຫ້ເສຍມາລະຍາດ; ໃນເວລາໂຍນຖ້າຜູ້ໃດຮັບບ່ໄດ້ອາດຈະເສຍຄ່າປັບໃໝເປັນເຄື່ອງປະດັບ ຫຼືສິ່ງຂອງ, ການເສຍຄ່າປັບໃໝ ໃຫ້ແກ່ກັນ ແລະກັນເປັນການເປີດທາງໃຫ້ມີການກ້ຽວພາລາສີກັນຕອນກາງຄືນ; ໃນເວລາຄ່ຳຄືນ ໜຸ່ມສາວມົ້ງຈະອອກກ້ຽວພາລາສີຢູ່ໃນບໍລິເວນປ່າໃກ້ໆບ້ານ ເຂົາຈະບ່ກ້ຽວພາລາສີໃນເຮືອນ ເພາະຖືວ່າເປັນການຜິດຜີ. ເມື່ອຊາຍໜຸ່ມແນ່ໃຈວ່າພໍ່ແມ່ຂອງຍິງສາວນອນຫຼັບແລ້ວຊາຍໜຸ່ມຈະເຂົ້າໄປຊັກຊວນຍິງສາວໂດຍການເອີ້ນຄ່ອຍໆ ຫຼືເປົ່າແຄນ. ດັ່ງເລື່ອງໄດ້ກ່າວວ່າ:

"ຕາມປະເພນີການລົມສາວຂອງຊາວເຜົ່າມົ້ງ ຊາຍໜຸ່ມ ກໍຈະມາຫາສາວຕອນເດິກ ແລ້ວກໍເປົ່າແຄນຢູ່ນອກເຮືອນ ເພື່ອຂໍຄວາມເຫັນໃຈຈາກສາວ ອາດຈະເປົ່າແຄນຈົນແຈ້ງ ຫຼືຫຼາຍຄືນຕິດຕໍ່ກັນຈຶ່ງໄດ້ຍິນສຽງເຕີ່ນຈາກສາວຕອບອອກມາ" (ດວງໄຊ ຫຼວງພະສີ, 2007: 46).

"ສຽງແຄນຂອງອ້າຍບ່າວກໍຍັງດັງຢູ່ຟາກຝານອກເຮືອນເພື່ອເອີ້ນຫາຄົນທີ່ຕົນຮັກຕື່ນຂຶ້ນມາລົມ ກັນຕາມພາສາຂອງໜຸ່ມສາວມົ້ງ" (ດວງໄຊ ຫຼວງພະສີ, 1995: 240).

ສົມໂຊດ ອ່ອງຕະກຸນ(2542: 5419-5429) ເວ້ົາເຖິງປະເພນີການກ້ຽວບ່າວກ້ຽວສາວຂອງຊົນເຜົ່າມົ້ງໃນສັງຄົມທາງພາກເໜືອຂອງໄທວ່າ: ການໄປທ່ຽວສາວຂອງຊາວເຜົ່າມົ້ງ ມີຂະນົບທຳນຽມຕ່າງຈາກຊາວເຂົາເຜົ່າອື່ນໆຄື ຊາຍໜຸ່ມໄປຫາຍິງສາວໂດຍບ່ຍອມຂຶ້ນໄປລົມກັນຢູ່ໃນເຮືອນ, ມັກຈະ

ໄປຮ້ອງເພງຢູ່ນອກເຮືອນໃຫ້ຍິງສາວໄດ້ຍິນ ຫຼືບາງເທື່ອເຫັນຍິງສາວເອົາອາຫານໃຫ້ໝູ, ມ້າ, ໄກ່ ຫຼື ກຳລັງ ຕຳເຂົ້າຈະເອົາກ້ອນຫີນໄປໃກ້ໆ ເວລາຍິງສາວໜຽວມາເບິ່ງກໍເຮັດສັນຍານມືບອກໃຫ້ຍິງສາວ ໄປລົມກັບຕົນເອງໃນປ່າ; ຖ້າຍິງສາວກຳລັງເຮັດວຽກຢູ່ບໍ່ສາມາດປະໄປໄດ້ກໍເຮັດສັນຍານມືບອກວ່າ ຍັງເຮັດວຽກບໍ່ແລ້ວ ຫຼືບາງເທື່ອກໍໄປຊຶມໃສ່ຫູຂອງຝ່າຍຊາຍໃຫ້ໄປຖ້າຢູ່ບ່ອນນັ້ນບ່ອນນີ້ ຊາຍໜຸ່ມຈຳ ຕ້ອງໄປຖ້າຢູ່ໃນປ່າ. ຖ້າຍິງສາວບໍ່ໄປຕາມນັດຝ່າຍຊາຍກໍກັບມາ ແລະເຮັດສັນຍານມືອີກ ຖ້າເປັນເວ ລາກາງຄືນຊາຍໜຸ່ມກໍຈະຖືໄຟສາຍແກວ່ງໄປແກວ່ງມາເປັນສັນຍານໃຫ້ຍິງສາວຕາມໄປນັ່ງສົນທະນາ ກັນຢູ່ໃນປ່າ, ບາງເທື່ອຊາຍໜຸ່ມເດີນທາງມາຈາກບ້ານທີ່ຢູ່ໄກກັນຄົນລະພູເຂົາ ຂີ່ມ້າມາທ່ຽວສາວກໍມີ.

ໃນສາລານຸກົມວັດທະນະທຳໄທພາກເໜືອເຫຼັ້ມທີ 10 (2542 : 5422) ກ່າວວ່າ ເຖິງແມ່ນສັງ ຄົມຂອງຊາວມົ້ງຈະອະນຸຍາດໃຫ້ໜຸ່ມສາວມີຄວາມສຳພັນທາງເພດກ່ອນແຕ່ງງານໄດ້ ແຕ່ກໍຕ້ອງ ລະມັດລະວັງບໍ່ໃຫ້ເປັນການລົບຫຼູ່ຜູ້ໃຫຍ່ ຫຼືຜີເຮືອນ; ການແຕ່ງງານມີຫຼາຍວິທີເຊັ່ນ ການໝັ້ນກັນ ຕັ້ງແຕ່ຍັງນ້ອຍ ລະຫວ່າງພໍ່ແມ່ທັງສອງຝ່າຍ; ການສົ່ງເຖົ້າແກ່ໄປສູ່ຂໍໂດຍກົງ ຈົນເຖິງການລັກພາໜີ ໂດຍຝ່າຍຊາຍເປັນຜູ້ເຮັດ. ຈາກນັ້ນຈຶ່ງສົ່ງຜູ້ໃຫຍ່ມາຕິດຕໍ່ແຈ້ງໃຫ້ຝ່າຍຍິງ ໂດຍທົ່ວໄປແລ້ວການ ແຕ່ງງານຕາມປະເພນີຈະ ເກີດຂຶ້ນຫຼັງຈາກຄູ່ໜຸ່ມສາວໄດ້ຢູ່ກິນກັນມາໄລຍະໜຶ່ງແລ້ວ ປະມານໜຶ່ງຫາ ສອງປີແລ້ວແຕ່ຈະຕົກລົງກັນ ມີຄູ່ສາມີພັນລະຍາບາງຄູ່ທີ່ຢູ່ກິນກັນຈົນລູກອາຍຸ 3-4 ປີແລ້ວຍັງບໍ່ເຂົ້າ ພິທີແຕ່ງ ງານຕາມປະເພນີກໍມີ ແຕ່ກໍຮູ້ກັນດີວ່າ ເປັນຄູ່ສາມີພັນລະຍາທີ່ຈະຕ້ອງເຮັດພິທີແຕ່ງງານໃນ ໂອກາດຕໍ່ໄປ; ການແຕ່ງດອງນັ້ນ ຝ່າຍຊາຍຈະເປັນຜູ້ຈ່າຍຄ່າສິນສອດທັງໝົດໃຫ້ແກ່ພໍ່ແມ່ຂອງເຈົ້າ ສາວ ຊຶ່ງໃນພິທີແຕ່ງດອງຈະຕ້ອງມີເຖົ້າແກ່ ທັງສອງຝ່າຍເຂົ້ານັ່ງເຈລະຈາຕໍ່ລອງຄ່າສິນສອດ ຈົນເຫັນ ເປັນເອກະພາບກັນ.

ນອກຈາກການກ້ຽວພາລາສີຂອງໜຸ່ມສາວຊົນເຜົ່າມົ້ງແລ້ວ ຍັງມີເຜົ່າອື່ນອີກທີ່ມີປະເພນີ ຄ້າຍຄືກັນເຊັ່ນ ເຜົ່າກໍ່, ເຜົ່າມອງກອງ ສອງຊົນເຜົ່ານີ້ໄດ້ມີການຈັດສະຖານທີ່ໄວ້ສຳລັບບ່າວສາວໄດ້ ຂອດຮັກກັນ ສະຖານທີ່ນັ້ນອາດຈະເປັນສາລາ ຫຼືຫາດຊາຍແຄມແມ່ນ້ຳເປັນຕົ້ນ. ດັ່ງສຸນທະຣີ ພິມ ເມດ (2534 : 107) ກ່າວວ່າ ການກ້ຽວພາລາສີໜຸ່ມສາວຈະພິບປະໂດຍເສລີ, ການໄດ້ເສຍກັນກ່ອນ ແຕ່ງດອງກໍບໍ່ເປັນໜ້າລັງກຽດ ແຕ່ເຜົ່າກໍ່ຫ້າມການກ້ຽວພາລາສີພາຍໃນເຮືອນ ເພາະຖືວ່າບໍ່ເຄົາລົບຕໍ່ ຜີບັນພະລຸລຸດ ບ່າວ ແລະສາວຈຶ່ງພໍໃຈຈະນັດພົບກັນນອກເຮືອນ ຊຶ່ງເປັນລານໃນບ້ານທີ່ເອີ້ນວ່າ ລານ ສາວກອດ ຈະມີການຮ້ອງເພງເຕັ້ນລຳເປັນຄູ່ໆ ດັ່ງເຊັ່ນ

"ຕອນຄ່ຳບ່າວສາວລົງໄປຫຼິ້ນຢູ່ຫາດຊາຍແຄມນ້ຳຈົນເດິກ ແລ້ວຈຶ່ງພາກັນຂຶ້ນບ້ານ" (ສ. ບຸບ ຜານຸວົງ, 1982: 50).

"ຈາເຍະ ແລະເກຍລໍພາກັນໄປທີ່ຫໍບ່າວສາວທີ່ຫ້ວຍບ້ານຈົນພະຈັນໃກ້ຈະຕົກທັງສອງຈຶ່ງ ຈາກ ລາກັນ" (ສຸຂີ ນໍລະສິນ, 2004: 22).

ນອກຈາກການກ້ຽວບ່າວກ້ຽວສາວແລ້ວ ຍັງມີເນື້ອໃນທີ່ບັນລະຍາຍເຖິງປະເພນີກ່ຽວກັບການ ແຕ່ງດອງຂອງບັນດາຊົນເຜົ່າ. ການແຕ່ງດອງເປັນການເລີ່ມຕົ້ນຂອງການຕັ້ງຄອບຄົວ ແລະການສ້າງ

ຮູບແບບຄອບຄົວໃນຊຸມຊົນ; ການແຕ່ງດອງນັ້ນຖືວ່າ ຈະປະກອບດ້ວຍຄວາມສຳພັນທາງເພດ (sexual- intercourse)ເປັນຫຼັກ ແຕ່ການແຕ່ງງານກໍບໍ່ແມ່ນຄວາມສຳພັນທາງເພດ ເພາະການທີ່ຍິງ ແລະຊາຍໄດ້ເສຍກັນນັ້ນ ຖືເປັນການສົມສູ່ທາງຮ່າງກາຍ ແລະເກີດຈາກຄວາມຮູ້ສຶກທາງເພດຕາມທຳ ມະຊາດຂອງມະນຸດທຸກຄົນ. ໃນສັງຄົມດັ້ງເດີມບາງຊົນເຜົ່າ ແລະຫຼາຍໆເຜົ່າ ການແຕ່ງດອງນັ້ນຖືເປັນ ຮູບແບບ ທາງວັດທະນະທຳ, ເປັນປາກົດການທາງວັດທະນະທຳທີ່ກ່ຽວກັບທາງເພດໂດຍສະເພາະ (ນິ ຍະພັນ ວັນນະສີ, 2550 : 181).

ສຸວັນນາ ກຽງໄກເພັນ (2544: 36) ກ່າວວ່າ ເລື່ອງຂອງເພດສຳພັນເປັນເລື່ອງທຳມະດາຂອງ ຊົນເຜົ່າບໍ່ໄດ້ໝາຍຄວາມວ່າຈະເປັນລັກສະນະເສລີນິຍົມທາງເພດ ຫຼືສາມາດມີຄວາມສຳພັນໄດ້ຕາມ ຄວາມພໍໃຈ ເພາະລະບົບຄ່ານິຍົມຂອງເຜົ່າມັກຈະກຳນົດໃຫ້ການຢູ່ກິນເປັນສາມີພັນລະຍາໂດຍຊຸມ ຊົນຂອງຕົນຮັບຮູ້ນັ້ນເປັນຄ່ານິຍົມສຳຄັນ. ເມື່ອພິຈາລະນາຈາກຂັ້ນຕອນພິທີກຳການແຕ່ງດອງຈະ ເຫັນການສະໜັບສະໜູນ ຫຼືການເປີດໂອກາດໃຫ້ຫຼາຍຮູບແບບເຊັ່ນ ຖ້າຝ່າຍຊາຍທຸກກໍບໍ່ມີຄ່າສິນ ສອດ.

ຈາກການສຶກສາເລື່ອງສັ້ນແລະນະວະນິຍາຍລາວຮ່ວມສະໄໝເຫັນວ່າມີການພັນລະນາໃຫ້ ເຫັນ ເຖິງລະບົບຄວາມຄິດກ່ຽວກັບການແຕ່ງດອງໃນວັດທະນະທຳຊົນເຜົ່າ ດັ່ງເລື່ອງໄດ້ກ່າວວ່າ:

"ຮີດຄອງປະເພນີຂອງເຜົ່າມອງກອງຜູ້ຮັ່ງມີສາມາດເອົາເມຍໄດ້ເຖິງ 10 ກວ່າຄົນ ເມື່ອຜົວ ຕາຍໄປກໍໃຫ້ລູກຊາຍເປັນຜູ້ສືບ, ຖ້າຍັງບໍ່ມີລູກ ເມື່ອຜົວຕາຍໄປກໍໃຫ້ຍາດພີ່ນ້ອງຂອງຜົວເປັນຜູ້ສືບ ໝາຍຄວາມວ່າຕ້ອງເປັນເມຍຂອງຄົນໃນເຮືອນນັ້ນໄປຕະຫຼອດຊີວິດ, ສ່ວນການເຮັດວຽກຮັບໃຊ້ປູ່ຍ່າ ແລະຜົວນັ້ນ ບໍ່ໃຫ້ເວົ້າເຖິງ ຜົວບອກຕ້ອງໄດ້ເຮັດຕາມຕໍ່ວ່າຕໍ່ຂານບໍ່ໄດ້"(ສ. ບຸບຜານຸວົງ,1982: 56).

"ຕາມປະເພນີເຜົ່າມົ້ງແລ້ວ ແມ່ນອ້າຍຕາຍອ້າຍຍັງ ຜົວຕາຍຜົວຍັງ ອັນນີ້ກໍໝາຍຄວາມວ່າ ອ້າຍຕາຍກໍຍັງແມ່ນນ້ອງຊາຍແທນ ເພື່ອບໍ່ໃຫ້ເສຍເລືອດເສຍເນື້ອຂອງຜູ້ເປັນອ້າຍ. ລີຈູເອີຍ! ຕ້ອງ ແຕ່ງງານກັບເອື້ອຍໃພ ແລະຮັບພາລະລ້ຽງລູກລ້ຽງເມຍເໝືອນເລືອດເນື້ອເຊື້ອໄຂຂອງຕົນ" (ບຸນເສີນ ແສງມະນີ, 2005 : 20).

ຈາກບັນຫາຂ້າງເທິງສະແດງໃຫ້ເຫັນວ່າ ການແຕ່ງດອງໃນວັດທະນະທຳຂອງບັນດາຊົນເຜົ່າທີ່ ປາກົດໃນເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝ ຊີ້ໃຫ້ເຫັນເຖິງຮີດຄອງປະເພນີກ່ຽວກັບການ ແຕ່ງດອງ ເພື່ອຫາຜູ້ມາສືບທອດວົງຕະກຸນ ຊຶ່ງສະແດງໃຫ້ເຫັນເຖິງກົດກ່ຽວກັບຈຳນວນຄູ່ຄອງໃນ ສັງຄົມ ຊົນເຜົ່າທີ່ບໍ່ເປັນໄປຕາມລັກສະນະ "ຜົວດຽວເມຍດຽວ" (monogamy) ສະເໝີໄປ, ແຕ່ເປັນ ໄປໃນຮູບ ແບບຂອງລັກສະນະຫຼາຍເມຍ (polygyny) ຄືເປັນການແຕ່ງດອງລະຫວ່າງຝ່າຍຊາຍໜຶ່ງ ຄົນກັບຝ່າຍຍິງ ຫຼາຍກວ່າໜຶ່ງຄົນ ຊຶ່ງນິຍົມກັນຕັ້ງແຕ່ສະໄໝກ່ອນຈົນມາເຖິງປັດຈຸບັນນີ້. ສາເຫດກໍຄື ການຕ້ອງການແຮງງານທາງເສດຖະກິດ(ນິຍະພັນ ວັນນະສີ, 2550: 191) ສະແດງໃຫ້ເຫັນວ່າ ການ ມີເມຍຫຼາຍຄົນໃນວັດທະນະທຳຊົນເຜົ່ານັ້ນມີຄວາມສຳພັນກັບເລື່ອງວິຖີຊີວິດຄວາມເປັນຢູ່ ລວມເຖິງ ການທຳມາຫາກິນທີ່ຈະຕ້ອງອາໄສແຮງງານທີ່ບໍ່ແມ່ນພຽງແຕ່ການສືບທອດທາຍາດເທົ່ານັ້ນເຖິງແມ່ນ

ວ່າ ໃນຕົວຈິງບົ່ງບອກໃຫ້ເຫັນວ່າສັງຄົມຊົນເຜົ່ານິຍົມການແຕ່ງດອງແບບຜົວດຽວເມຍດຽວ ແຕ່ເນື້ອໃນຂອງເລື່ອງກໍສະແດງໃຫ້ເຫັນວ່າ ມີການອະນຸຍາດໃຫ້ຜູ້ຊາຍມີພັນລະຍາຫຼາຍຄົນ ເນື່ອງຈາກເຫດຜົນສຳຄັນຄື ຕ້ອງການລູກໄວ້ສືບທອດຕະກຸນ ແລະຄວາມຕ້ອງການແຮງງານທາງເສດຖະກິດເພີ່ມຂຶ້ນ ແລະອີກຢ່າງໜຶ່ງໃນວັດທະນະທຳຂອງຊົນເຜົ່າຫຼາຍກຸ່ມໃຫ້ຄວາມສຳຄັນຕໍ່ເພດຊາຍ ດັ່ງເນື້ອໃນບາງເລື່ອງກ່າວວ່າ "ເມື່ອຜົວຕາຍໄປແລ້ວກໍຕ້ອງໃຫ້ຍາດພີ່ນ້ອງຝ່າຍຜົວເປັນຜູ້ສືບທອດ".

ໃນລະບົບການແຕ່ງດອງຂອງເຜົ່າມົ້ງ ໂດຍປົກກະຕິແລ້ວ ຜູ້ຊາຍມັກຈະມີພັນລະຍາຜູ້ດຽວ ແຕ່ ການແຕ່ງງານກັບພັນລະຍາທີສອງກໍອາດຈະເຮັດໄດ້ ຊຶ່ງການແຕ່ງດອງກັບພັນລະຍາໝ້າຍຂອງ ອ້າຍ ຫຼືນ້ອງຊາຍ ຊຶ່ງປະຕິບັດຢູ່ໃນຄົນມົ້ງດ້ວຍກັນ ແຕ່ເປັນຄວາມສະໝັກໃຈຫຼາຍກວ່າການບັງຄັບ, ການແຕ່ງ ງານກັບພັນລະຍາໝ້າຍຂອງພໍ່ຈະເຮັດບໍ່ໄດ້ເດັດຂາດ, ການແຕ່ງດອງລະຫວ່າງບຸກຄົນທີ່ເປັນສະມາຊິກໃນຄອບຄົວທີ່ໃຊ້ນາມສະກຸນດຽວກັນກໍຖືກຫ້າມເຊັ່ນດຽວກັນ, ການແຕ່ງດອງກັບອ້າຍ ນ້ອງຮ່ວມພໍ່ຮ່ວມ ແມ່, ລູກຂອງອ້າຍ, ນ້ອງ ຫຼືອ້າຍນ້ອງຂ້າງຄຽງກໍຫ້າມຄືກັນ. ການແຕ່ງດອງກັບລູກສາວຂອງເອື້ອຍ ຫຼືນ້ອງສາວຂອງພໍ່ເປັນສິ່ງທີ່ນິຍົມກັນ ແຕ່ການແຕ່ງດອງດັ່ງກ່າວບໍ່ບັງຄັບ ແລະການແຕ່ງດອງກັບລູກສາວຂອງອ້າຍ ຫຼືນ້ອງຊາຍຂອງແມ່ກໍຖືວ່າເປັນການຖືກຕ້ອງຕາມປະເພນີນິຍົມເຊັ່ນດຽວກັນ(ຂະຈັດໄພ ບຸລຸ ພັນ, 2518: 39)

ນອກຈາກປະເພນີຄວາມເຊື່ອກ່ຽວກັບການແຕ່ງດອງແລ້ວ ເຫັນວ່າເລື່ອງສັ້ນ ແລະນະວະນິຍາຍຍັງເວົ້າເຖິງປະເພນີຄວາມເຊື່ອກ່ຽວກັບການເກີດຂອງຊົນເຜົ່າກໍ່. ເມື່ອຄອບຄົວໜຶ່ງໆຫາກມີການເກີດລູກຝາແຝດເຂົາຈະຖືວ່າຄອບຄົວນັ້ນໂຊກຮ້າຍ ເພາະພວກເຂົາຖືວ່າພໍ່ແມ່ຂອງເດັກນ້ອຍເປັນພໍ່ແມ່ເຂັດຂວາ ແລະລູກແຝດນັ້ນກໍເປັນຜີມາເກີດ, ເຂົາຈະເຮັດພິທີຂ້າເດັກນ້ອຍທັງສອງນັ້ນ, ຈູດເຮືອນ ແລະໄລ່ພໍ່ແມ່ອອກໄປຢູ່ປ່າທີ່ຫ່າງໄກຈາກຜູ້ຄົນ ດັ່ງສຸນທະຣີ ພົມເມດ (2534: 110-111)ກ່າວວ່າ ຖ້າເດັກນ້ອຍເກີດມາພິການ ຫຼືເປັນລູກຝາແຝດຈະຕ້ອງຖືກຂ້າທັນທີ ເພາະຖືວ່າຜີມາເກີດ ເຂົາຈະເອົາຂີ້ເຖົ່າຖົມຕົນຕົວຂອງເດັກນ້ອຍຈົນຕາຍ ຖືວ່າຜູ້ເປັນພໍ່ແມ່ມີຄວາມຜິດ ແລະມີບາບຫຼາຍທີ່ເຮັດໃຫ້ເກີດຄວາມບໍ່ດີບໍ່ງາມ ແບບນີ້ຕ້ອງອອກຈາກບ້ານ ແລະຕ້ອງໄປເຮັດພິທີລ້າງບາບໃນປ່າກ່ອນ ແລ້ວຈຶ່ງຈະໄດ້ຮັບການຍອມ ຮັບໃຫ້ກັບເຂົ້າມາບ້ານໄດ້ອີກ ແລະຈະເຮັດໃຫ້ບ້ານບໍ່ມີເຄາະຮ້າຍ ດັ່ງເລື່ອງໄດ້ກ່າວວ່າ:

"ຊົນເຜົ່າກໍ່ຖ້າໃຜເກີດລູກຝາແຝດຄອບຄົວນັ້ນມະຫາຊວຍທີ່ສຸດ ເພາະຈະກາຍເປັນພໍ່ແມ່ເຂັດຂວາງທີ່ຜີມາເກີດນຳ, ຕ້ອງຖືກໄລ່ໜີອອກຈາກບ້ານບໍ່ໃຫ້ເຂົ້າບ້ານ, ບໍ່ໃຫ້ຄົບຄ້າສະມາຄົມກັບໃຜ ເປັນເວລາ 3 ປີ ໄປຢູ່ໃນປ່າຈົນໝົດກຳນົດທີ່ປະເພນີຖືກັນມາຕັ້ງແຕ່ດຶກດຳບັນ" (ສຸຂີ ນໍລະ ສິນ, 2004 : 24-25).

"ປະເພນີຂອງເຜົ່າກໍ່ຖ້າຄອບຄົວໃດເກີດລູກຝາແຝດປາກແວ່ງ, ດັ່ງວ່ານີ ຫຼືບໍ່ຄົບອະໄວຍະວະ 32 ຢ່າງ ຄືຄົນທົ່ວໆໄປຈະຖືວ່າຜີມາເກີດນຳ ຕ້ອງໄດ້ຂ້າຖິ້ມ ທັງໝົດບ້ານຈະເຮັດພິທີຂ້າເດັກນ້ອຍ

ໂດຍເອົາຂີ້ເຖົ່າເດືອດ ຫຼືມີດແດງໂພະໃສ່ເດັກນ້ອຍຜູ້ໜ້າສົງສານນັ້ນ ຈົນເດັກນ້ອຍໃຈຂາດຕາຍ " (ສຸຂີ ນໍລະສິນ, 2004: 26).

ຈາກບັນຫາທີ່ກ່າວມາຂ້າງເທິງນັ້ນ ສະແດງໃຫ້ເຫັນວ່າ ຊົນເຜົ່າກໍ່ເປັນຊົນເຜົ່າໜຶ່ງທີ່ນັບຖືຜີ, ສິ່ງສັກສິດ, ສິ່ງເໜືອທຳມະຊາດ. ສະນັ້ນ ໃນກໍລະນີການເກີດລູກຝາແຝດຖືວ່າເປັນສິ່ງທີ່ບໍ່ດີ ແຕ່ໃນປັດຈຸບັນນີ້, ໃນສັງຄົມລາວໂດຍທົ່ວໄປຖືວ່າ ພໍ່ແມ່ທີ່ໃຫ້ກຳເນີດລູກຝາແຝດເປັນສິ່ງທີ່ດີ, ວິເສດ ແລະ ເປັນໂຊກຂອງຜົວເມຍຄູ່ນັ້ນ ແຕ່ສຳລັບຊົນເຜົ່າກໍ່ເປັນເລື່ອງທີ່ບໍ່ດີ ເປັນລູກຜີມາເກີດ ຍ້ອນຄວາມເຊື່ອໃນເລື່ອງນີ້ໄດ້ຝັງເລິກຢູ່ໃນແນວຄິດຈິດໃຈຂອງເຂົາມາຕັ້ງແຕ່ປູ່ຍ່າຕາຍາຍ ແລະເຄີຍປະຕິບັດກັນມາຕະຫຼອດ, ເຮັດໃຫ້ປ່ຽນແປງຄວາມເຊື່ອນີ້ໄດ້ຍາກ ແລະກາຍເປັນຮີດຄອງປະເພນີຂອງຊົນເຜົ່ານຳ.

ນອກຈາກປະເພນີຄວາມເຊື່ອກ່ຽວກັບການເກີດແລ້ວ ຍັງພົບວ່າ ເລື່ອງສັ້ນ ແລະນະວະນິຍາຍຫຼາຍເລື່ອງທີ່ນຳສະເໜີຮີດຄອງປະເພນີ ແລະວິທີຄິດກ່ຽວກັບຄວາມຕາຍຂອງຄົນໃນສັງຄົມຊົນເຜົ່າ. ດັ່ງເລື່ອງໄດ້ກ່າວວ່າ:

"ມີສຽງຮ້ອງໄຫ້ຕີກອງ ແລະເປົ່າແຄນດັງອຶກກະທຶກຢູ່ໃນເຮືອນມຸງດ້ວຍໄມ້ຫຼັງໃຫຍ່ນັ້ນ ຂ້ອຍໄດ້ຫຼຽວໄປທີ່ມີສຽງຮ້ອງໄຫ້ ຊຶ່ງເປັນສຽງຮ້ອງໄຫ້ທີ່ສະທ້ອນໃຈຄົນ ພາບຂອງຄົນຕາຍນຸ່ງເສື້ອສີດຳໃໝ່ໆ ແອວພັນດ້ວຍແພສີແດງ ຕີນຖືເກີບຫອມໄກ່ ແຕ່ໃບໜ້າຂອງຄົນຕາຍນັ້ນສີດຳຊ້ຳ ຈົນບໍ່ເປັນຮູບໜ້າຄົນອີກ ຢູ່ຂ້າງຄົນຕາຍມີເສົາເຮືອນ ມີກອງຫ້ອຍຢູ່ ໂດຍມີຊາຍຄົນໜຶ່ງກຳລັງໃຊ້ຄ້ອນສອງອັນຕີເປັນຈັ່ງຫວະກັບຜູ້ເປົ່າແຄນຢູ່ທາງຂ້າງ"(ຈັນທີ ເດືອນສະຫວັນ, 2002: 27-28).

ສຳລັບຂະນົບທຳນຽມກ່ຽວກັບການຕາຍໃນວັດທະນະທຳຊົນເຜົ່ານັ້ນ ຜູ້ວິໄຈພົບວ່າ ໃນສັງຄົມຂອງຊົນເຜົ່າບາງກຸ່ມເຊັ່ນ ເຜົ່າມົ້ງ ຖ້າຄົນໃດຄົນໜຶ່ງຕາຍໄປ ພວກເຂົາຈະປ່ຽນເຄື່ອງຊຸດໃໝ່ແລ້ວເອົາໄວ້ເທິງຕຽງທີ່ເຮັດດ້ວຍໄມ້ໄຜ່. ເຈົ້າຂອງເຮືອນໃຫ້ຄົນໃດຄົນໜຶ່ງໃນບ້ານໄປຊື້ງົວຄວາຍຈາກບ້ານອື່ນເພື່ອເອົາໄປຂ້າລ້ຽງແຂກມື້ໜຶ່ງສາມຄາບ ໃນເວລາທີ່ສົບຄົນຕາຍຍັງຢູ່ໃນເຮືອນ ຖ້າເປັນຄົນບໍ່ສຳຄັນຫຼາຍເຊັ່ນ ລູກຄົນນ້ອຍຕາຍ ກໍຈະຂ້າໝູແທນງົວຄວາຍ ແລະເອົາຊີບໄວ້ໃນເຮືອນ 3-4 ມື້ ຂ້າໝູມື້ລະໜຶ່ງໂຕ ລ້ຽງຊາວບ້ານທີ່ມາຊ່ວຍວຽກທັ້ງຍິງ ແລະຊາຍ ຖ້າເປັນສົບຫົວໜ້າຄອບຄົວ ພີ່ນ້ອງມີຄວາມອາໄລອາວອນຫຼາຍ ກໍເອົາໄວ້ຫຼາຍມື້ປະໃຫ້ຊີບໃຄ່ພອງ ແລະມີນ້ຳຢາງເຫຼືອງໄຫຼອອກມາ ແມງວັນຈັບເປັນກຸ່ມໆ ມີກິ່ນເໝັນໄປທົ່ວບ້ານ; ພີ່ນ້ອງທີ່ໄປງານສົບຕ້ອງເອົາມືໄປແຕະສົບທີ່ມີນ້ຳຢາງເຫຼືອງນັ້ນແລ້ວຮ້ອງໄຫ້ຫາຜູ້ຕາຍຜູ້ໃດຈະເວົ້າວ່າ "ເໝັນ" ບໍ່ໄດ້ ເຈົ້າຂອງເຮືອນຈະຮ້າຍຖືວ່າຜິດຜີ, ບໍ່ຮັກບໍ່ແພງກັນ ເພາະວ່າເວລາຍັງເປັນຄົນຮັກແພງກັນ, ບາດຕາຍເປັນຜີພັດລັງກຽດເປັນຄົນບໍ່ດີ. ຖ້າຜູ້ໃດຮ້ອງໄຫ້ ແລະຈົ່ມຫາຄວາມຫຼັງອັນດີຂອງຜູ້ຕາຍເປັນທີ່ຈັບອົກຈັບໃຈຂອງເຈົ້າເຮືອນ ເຂົາຈະຕັດຊີ້ນງົວໃຫ້ໄປກິນຢູ່ເຮືອນ(ສາລານຸ ກົມວັດທະນະທຳໄທ ພາກເໜືອ ເຫຼັ້ມ 10, 2542: 5428).

ຍ້ອນວ່າຄົນຊົນເຜົ່າມີຄວາມເຊື່ອຫຼາຍຢ່າງເຊັ່ນ ຄວາມເຊື່ອເລື່ອງຜີ, ສິ່ງສັກສິດ ແລະສິ່ງທີ່ເໜືອທຳມະຊາດແລ້ວ ຊົນເຜົ່າມົ້ງຍັງມີຂໍ້ຫ້າມຕ່າງໆທີ່ໄດ້ປະຕິບັດກັນມາເປັນເວລາດົນເຊັ່ນ ການ

ຫ້າມບໍ່ໃຫ້ຜູ້ຊາຍເຂົ້າຫ້ອງນອນຂອງຍິງສາວ ດັ່ງກໍລະນີໃນນະວະນິຍາຍ"ໄມບະເລຍ" ຊຶ່ງເນື້ອເລື່ອງເວົ້າເຖິງທ້າວຕູ່ຜູ້ເປັນທະຫານແນວລາວຮັກຊາດປອມຕົວເຂົ້າມາເປັນສາຍລັບໃນເຂດຂອງຝ່າຍສັດຕູ ຖືກຕິດຕາມຈັບ. ໃນທີ່ສຸດເຂົາກໍໄດ້ຮັບການຊ່ວຍເຫຼືອຈາກໄມບະເລຍໃຫ້ໄປລີ້ຢູ່ໃນຫ້ອງນອນຂອງນາງ. ເມື່ອຝ່າຍສັດຕູຕິດຕາມມາ ແລະຫວັງຈະກວດຄົ້ນຫ້ອງນອນຂອງນາງ ແຕ່ລຸງໄຊເກີໄດ້ຫ້າມເອົາໄວ້ ດັ່ງເລື່ອງໄດ້ກ່າວວ່າ:

"ທ່ານເປັນຄົນມົ້ງຄົງຈະຮູ້ດີແລ້ວວ່າ ປະເພນີຂອງພວກເຮົາເປັນຄືແນວໃດ ຕັ້ງແຕ່ຜູ້ເປັນພໍ່ແທ້ ກໍຍັງເຂົ້າຫ້ອງລູກສາວບໍ່ໄດ້" (ດວງໄຊ ຫຼວງພະສີ, 2007: 73).

ສີລາພອນ ຖິຕະຖານ ແລະຄະນະ (2539:1-40)ກ່າວວ່າ ຄວາມເຊື່ອສາສະໜາເປັນວັດທະນະທຳສ່ວນໜຶ່ງຊ່ວຍຕອບສະໜອງຄວາມຕ້ອງການດ້ານຈິດໃຈຂອງມະນຸດ, ຊ່ວຍໃຫ້ມະນຸດມີຄວາມສະບາຍໃຈ ແລະມີຄວາມໝັ້ນຄົງທາງຈິດໃຈໃນພາວະທີ່ຕ້ອງສ່ຽງ ຫຼືມີຄວາມບໍ່ແນ່ໃຈໃນຊີວິດ; ລະບົບສາສະໜາຕ່າງຈາກລະບົບອື່ນໃນວັດທະນະທຳໃນບັນຫາທີ່ເປັນລະບົບທີ່ກ່ຽວຂ້ອງກັບຄວາມເຊື່ອ ແລະພິທີກຳໃນເລື່ອງອຳນາດເໜືອທຳມະຊາດ. ໃນແງ່ນີ້ ເລື່ອງຄວາມເຊື່ອຜີສາງເທວະດາ, ໄສຍາສາດ ຈຶ່ງຍ່ອມຕ້ອງມີ "ສາສະໜາ" ເປັນສ່ວນໜຶ່ງໃນລະບົບວັດທະນະທຳຂອງສັງຄົມ.

ສະຫຼຸບຜົນ

ຈາກການສຶກສາເລື່ອງອັດຕະລັກຄວາມເຊື່ອ ແລະພິທີກຳຂອງຊົນເຜົ່າໃນເລື່ອງສັ້ນ ແລະນະວະນິຍາຍລາວຮ່ວມສະໄໝ ພົບວ່າຊົນເຜົ່າມີຄວາມເຊື່ອ ແລະພິທີກຳແບບດັ້ງເດີມ; ສ່ວນຫຼາຍຈະມີຄວາມເຊື່ອເລື່ອງຜີທີ່ມີຄວາມລີ້ລັບ, ມີຄວາມເຊື່ອເລື່ອງໂຊກລາງ ແລະສິ່ງສັກສິດ ເຊື່ອວ່າສິ່ງຕ່າງໆໃນໂລກນີ້ ມີວິນຍານຢູ່ໃນທຸກແຫ່ງທຸກທີ່ນ ຊຶ່ງມີທັງຜີບັນພະບຸລຸດ ແລະຜີທີ່ເກີດຂຶ້ນຈາກສະພາບແວດລ້ອມເຊັ່ນ ທ້ອງຟ້າ, ລົມ, ແມ່ນ້ຳ, ປ່າໄມ້, ພູເຂົາ, ໄຮ່ນາ ແລະບ້ານເຮືອນ ສິ່ງເຫຼົ່ານີ້ເປັນສ່ວນໜຶ່ງຂອງພະລັງສັງຄົມ ຊຶ່ງມີອິດທິພົນຕໍ່ວິຖີຊີວິດຂອງພວກເຂົາໃຫ້ມີຄວາມສົມຫວັງ, ເປັນທີ່ເພິ່ງໃນຍາມເຈັບໄຂ້ ແລະເປັນທີ່ເພິ່ງທາງໃຈຂອງພວກເຂົາຕະຫຼອດມາ. ນອກຈາກນີ້ບັນດາຊົນເຜົ່າຍັງມີຂະນົບທຳນຽມປະເພນີ ແລະ ພິທີກຳທີ່ມີລັກສະນະສະເພາະບົ່ງບອກໃຫ້ເຫັນເຖິງລັກສະນະທາງອັດຕະລັກຂອງກຸ່ມຊົນ.

ເອກະສານອ້າງອີງ

ພາສາລາວ

ກົມຊົນເຜົ່າ(2005). ບັນດາຊົນເຜົ່າໃນ ສປປ.ລາວ. ວຽງຈັນ. ໂຮງພິມມັນທາຕຸລາດ.

ຈັນທີ ເດືອນສະຫວັນ(2002). ເສັ້ນທາງແຫ່ງຊີວິດເຫຼັ້ມ1. ວຽງຈັນ. ໂຮງພິມນະຄອນຫຼວງວຽງຈັນ.

_____ (2004). ໄປຢູ່ນຳທ່ານຕູ່. ວຽງຈັນ. ໂຮງພິມແຫ່ງລັດ.

ສ. ບຸບຜານຸວົງ. (1982). ລູກສາວຂອງພັກ ເຫຼັ້ມ1. ວຽງຈັນ. ໂຮງພິມແຫ່ງຊາດ.

ສຸຂີ ນໍລະສິນ. (2004). ຈາເຍະ. ໂຮມເລື່ອງສັ້ນ ດອກຕິດໝາບານ. ວຽງຈັນ; ວັນນະສິນ.
ດວງໄຊ ຫຼວງພະສີ. (2007). ໄມບະເລຍ. ວຽງຈັນ. ໂຮງພິມແຫ່ງລັດ.
ບຸນເສີນ ແສງມະນີ. (2005). ປະເພນີ ແລະຊີວິດ. ວຽງຈັນ. ສີສະຫວາດການພິມ.

ภาษาไทย

แกรนท์ อีแวนส์ .(2549) .*ประวัติศาสตร์สังเขปประเทศลาว.* กรุงเทพฯ : ซิลค์เวอร์ม .

จุฑาพรรธ์.(2550).ผดุงชีวิต (จามจุรี)*วัฒนธรรม การสื่อสาร และอัตลักษณ์.* กรุงเทพฯ : จุฬาลงกรณ์มหาวิทยาลัย.

นิยะพรรณ วรรณศิริ กรุงเทพฯ .มานุษยวิทยาสังคมและวัฒนธรรม.(2550) .: เอ็กซเปอร์เน็ท

ปรมินท์ จารุวร .(2549).*ในความขัดแย้งและการประนีประนอมในตำนานปรัมปราไทย.*กรุงเทพฯ : ภาควิชาภาษาไทย คณะอักษรศาสตร์ จุฬาลงกรณ์มหาวิทยาลัย .

ประคอง นิมมานเหมินท์ .(2542) .*"พระพุทธเจ้าในตำนานและนิทานพื้นบ้านไทย,ไท-" ใน ปริทรรศน์วรรณกรรมพุทธศาสนา.* ภาควิชาภาษาไทย คณะอักษรศาสตร์ จุฬาลงกรณ์มหาวิทยาลัย .

สมโชติ อ่องสกุล .(2542) .*"แม้ว," ใน สารานุกรมวัฒนธรรมไทย ภาคเหนือ เล่ม .10* กรุงเทพฯ : มูลนิธิสารานุกรมวัฒนธรรมไทย ธนาคารไทยพานิชย์.

สารานุกรมวัฒนธรรมไทย ภาคเหนือ เล่ม (2542) .*10.* กรุงเทพฯ : มูลนิธิสารานุกรมวัฒนธรรมไทย ธนาคารไทยพาณิชย์ .

สุนทรี พรหมเมศ) .2534). *ชาวเขาในประเทศไทย.* กรุงเทพฯ : มหาวิทยาลัยรามคำแหง .

สุวรรณา เกรียงไกรเพ็ชร์ .(2544).*13 ชนเผ่าในลาวตอนใต้ วิถีชีวิตและวัฒนธรรม* .กรุงเทพฯ : โครงการวิจัยภาษาและวัฒนธรรมชนเผ่าในแขวงเซกอง สปปลาว..

ລະບົບຄວາມເຊື່ອຖື
ແບບດັ້ງເດີມຂອງຊົນເຜົ່າລາວ

ໂດຍ ຄຳຜຸຍ ພົນລືຊາ

1. ຄວາມເຊື່ອຖືແບບດັ້ງເດີມຂອງຊົນເຜົ່າລາວໂດຍສັງເຂບ

ຊົນເຜົ່າລາວເປັນຊົນເຜົ່າທີ່ເກົ່າແກ່ ເຊິ່ງມີຊື່ປາກົດຢູ່ໃນທະວີບອາຊີມາເປັນເວລາເທິ່ງນານ. ຊົນເຜົ່າລາວເປັນຊົນເຜົ່າທີ່ມີຮີດຄອງປະເພນີ ແລະວັດທະນະທຳອັນອຸດົມສົມບູນ. ລະບົບຄວາມເຊື່ອເປັນວັດທະນະທຳ ແລະຮີດຄອງປະເພນີແບບໜຶ່ງ ເຊິ່ງຜູກພັນກັບວິຖີຊີວິດຂອງຊົນເຜົ່າມາເປັນເວລານານ. ຄວາມເຊື່ອຖືຜີເປັນຄວາມເຊື່ອດັ້ງເດີມ ແລະເປັນຮາກຖານການດຳເນີນຊີວິດເບື້ອງຕົ້ນຂອງຊົນເຜົ່າລາວ. ຄວາມເຊື່ອຖືຜີປະກອບດ້ວຍສອງລັດທິຄື ລັດທິຜີຟ້າ-ຜີແຖນ ຫຼື ລັດທິແຖນຟ້າ ແລະລັດທິຄວາມເຊື່ອຜີນາກ ຫຼື ຜີເງືອກ (ຄວາມເຊື່ອແຜ່ນດິນ ແລະທ້ອງຟ້າ).

ຄົນສະໄໝບູຮານມີຄວາມເຊື່ອວ່າ: ໃນຈັກກະວານທີ່ມະນຸດດຳລົງຊີວິດຢູ່ນີ້ປະກອບດ້ວຍສອງໂລກຄື ໂລກມະນຸດ ແລະໂລກຂອງຜີ. ໃນສ່ວນໂລກຂອງຜີມີສອງລະບົບຄື ຜີຢູ່ເທິງທ້ອງຟ້າເອີ້ນວ່າ ແຖນ ຫຼື ຜີແຖນ (ພະຍາແຖນ). ສະເພາະຜີທີ່ຢູ່ເທິງພື້ນດິນເອີ້ນລວມກັນວ່າ ຜີ. ໂລກຜີ-ແຖນມີຄວາມສຳພັນກ່ຽວຂ້ອງໂລກມະນຸດຄື ຄົນລາວເຊື່ອວ່າອັນທີ່ເອີ້ນວ່າ ຜີ ແລະ ແຖນ ນີ້ກໍມີທັງ ຜີ-ແຖນດີ ແລະ ຜີ-ແຖນຮ້າຍ. ຜີ-ແຖນດີຈະເປັນຜູ້ເບິ່ງແຍງ ແລະຊ່ອຍເຫຼືອມະນຸດໃຫ້ມີຄວາມສຸກ, ຄວາມສົມຫວັງ, ບໍ່ມີໂລກໄພໄຂ້ເຈັບ. ສ່ວນວ່າ ຜີ-ແຖນຮ້າຍຈະເປັນຜູ້ຄອຍທ້ວງຖາມມະນຸດ ແລະລົງໂທດມະນຸດໃນເວລາມະນຸດກະທຳຜິດ.

ຜີ ແລະ ແຖນ, ໃນຄວາມເຊື່ອຂອງຄົນລາວ, ເປັນຜູ້ທີ່ມີອຳນາດສູງສຸດ ເໜືອທຸກສິ່ງທຸກຢ່າງທີ່ມີຢູ່ໃນໂລກ; ຕະຫຼອດຮອດມະນຸດກໍເກີດມາຈາກອຳນາດຂອງຜີ-ແຖນເປັນຜູ້ບັນດານໃຫ້ເກີດ. ຄວາມເຊື່ອຖືຜີເກີດມາຈາກຄວາມຢ້ານກົວສິ່ງປາກົດຕ່າງໆ ທີ່ເກີດມາຈາກທຳມະຊາດເທິງແຜນດິນ ແລະທ້ອງຟ້າ. ຄຳ ຈຳປາແກ້ວມະນີ (1973: 11~13) ໄດ້ເວົ້າວ່າ ຄົນລາວສະໄໝບູຮານອາໄສຢູ່ແຄມແມ່ນ້ຳ, ຫ້ວຍໜອງ ແລະແຄມທະເລສາບ ທີ່ມີປ່າໄມ້ອຸດົມສົມບູນ ມີຝົນຕົກໜັກ ຟ້າຮ້ອງ ລົມພັດແຮງ ເຊິ່ງປາກົດການດັ່ງກ່າວນີ້ຄົນລາວສະໄໝບູຮານເຊື່ອວ່າ ເກີດມາຈາກອຳນາດ ຂອງຜີ ແລະແຖນ. ຝົນຕົກແຮງ, ຟ້າຜ່າ, ຫຼືເຈັບເປັນ ແມ່ນກະທັ້ງວ່າ ຕາຍ ກໍເຊື່ອວ່າ ມະນຸດກະທຳຜິດຜີ-ແຖນ. ບົນພື້ນຖານຄວາມເຊື່ອດັ່ງກ່າວນີ້ ຈຶ່ງມີການບູຊາ ແລະເຄົາລົບຜີ-ແຖນ.

2. ຊື່ແລະຕຳແໜ່ງຂອງຜີ-ແຖນໃນລະບົບຄວາມເຊື່ອຜີຂອງຊົນເຜົ່າລາວ

ຄຳ ຈຳປາແກ້ວມະນີ (1973:13) ໄດ້ຂຽນໄວ້ວ່າ: ສາສະໜາຜີເປັນສາສະໜາດັ້ງເດີມຂອງຊົນເຜົ່າລາວ ເປັນສາສະໜາພະຫຸເທວະນິຍົມຄື ນັບຖືເທບພະເຈົ້າຫຼາຍອົງ. ເທບພະເຈົ້າທີ່ສຳຄັນໃນ ສາ

ສະໜາຜີຂອງຊົນເຜົ່າລາວຄື ແຖນ ແລະ ຜີ. ເທບພະເຈົ້າປະຈຳແຜ່ນດິນເອີ້ນວ່າ ຜີນາກ/ຜີເງືອກ/ພະຍານາກ; ເທບພະເຈົ້າປະຈຳທ້ອງຟ້າເອີ້ນວ່າ ແຖນ/ຜີແຖນ/ພະຍາແຖນ. ປັດຈຸບັນນີ້ຄົນລາວມັກເອີ້ນວ່າ "ພະຍາແຖນ ແລະພະຍານາກ" ໃນລະບົບຄວາມເຊື່ອຖືຜີ-ແຖນຂອງຄົນລາວ, ເທບພະເຈົ້າປະຈຳທ້ອງຟ້າ ແລະແຜ່ນດິນ. ນອກຈາກພະຍານາກ ແລະ ພະຍາແຖນແລ້ວ ຍັງມີຜີ ແລະແຖນ ຫຼາຍອົງທີ່ມີໜ້າທີ່ ແລະບົດບາດຕ່າງກັນດັ່ງນີ້ (ຕາຕາລາງທີ 1 ແລະ 2) ລຸ່ມນີ້.

ຕາຕາລາງ 1 ເທບພະເຈົ້າປະຈຳທ້ອງຟ້າໃນລະບົບຄວາມເຊື່ອຖືຜີ.

ລຳດັບ	ຊື່ຂອງແຖນ	ໜ້າທີ່ຮັບຜິດຊອບ
1	ແຖນຟ້າ/ແຖນຫຼວງ (ແຖນຟ້າຄື່ນ)	ເປັນເຈົ້າໃຫຍ່ (ເປັນຜູ້ສູງສຸດ) ເປັນເຈົ້າແຫ່ງແຖນທັງ ຫຼາຍຢູ່ເທິງເມືອງຟ້າ.
2	ແຖນແຕ່ງ/ແຖນຫຼໍ່	ເປັນເທບພະເຈົ້າແຫ່ງການຊ່າງ (ການສ້າງສາ) ສ້າງທຸກສິ່ງທຸກຢ່າງລວມທັງມະນຸດ, ຕາມຄຳສັ່ງ ຂອງແຖນຄື່ນ.
3	ແຖນຄົມ	ເປັນເທບພະເຈົ້າແຫ່ງສົງຄາມ (ການທະຫານ) ສາມາດບັນດານໃຫ້ມະນຸດຊະນະ ແລະປະລາໄຊໃນສົງຄາມ.
4	ແຖນຊັ່ງ	ເປັນເທບພະເຈົ້າແຫ່ງຄວາມຍຸຕິທຳ (ເບິ່ງຄົນດີ ແລະຄົນຊົ່ວ) ເປັນຜູ້ໃຫ້ໂຊກແກ່ຜູ້ທຳດີ ແລະລົງໂທດຜູ້ທຳຜິດ.
5	ແຖນເຊືອກ(ເຖືອກ)	ເປັນເທບພະເຈົ້າແຫ່ງຄວາມຮັ່ງມີ, ຮັບຜິດຊອບຄັງເງິນ ຂອງແຖນຟ້າຄື່ນ, ສາມາດບັນດາໃຫ້ມະນຸດມີເງິນມີຄຳໄດ້.
6	ແຖນຫູທິ່ງ	ເປັນເທບພະເຈົ້າແຫ່ງປັນຍາ. ສາມາດບັນດານໃຫ້ມະນຸດມີຄວາມຮູ້ຄວາມສາມາດຕ່າງໆ.
7	ແຖນລົມ	ເປັນເທພະເຈົ້າແຫ່ງພະຍຸ, ສາມາດບັນດານໃຫ້ເກີດຝົນ, ລົມ ແລະແດດໄດ້.
8	ແຖນແພນ	ເປັນເທພະເຈົ້າແຫ່ງດົນຕີ, ການຟ້ອນ ແລະຂັບລຳ.
9	ແຖນນາ	ເປັນເທພະເຈົ້າແຫ່ງການກະສິກຳ (ເຂົ້າ, ເຄື່ອງມືການຜະລິດຕ່າງ.....)
10	ແຖນສົ່ວ	ມີໜ້າທີ່ສົ່ວໜາການ້ຳເຕົ້າປຸງໜ່ວຍອ້າຍ.
11	ແຖນຊີ	ມີໜ້າທີ່ຊີໜາການ້ຳເຕົ້າປຸງໜ່ວຍນ້ອງ.

ຕາຕາລາງ 2 ເທບພະເຈົ້າປະຈຳແຜ່ນດິນໃນລະບົບຄວາມເຊື່ອຖືຜີ.

ລຳດັບ	ຊື່ຂອງຜີ	ໜ້າທີ່ຮັບຜິດຊອບ
1	ຜີນາກ (ຜີເງືອກ)	ເປັນເທບທິດາຮັກສາແຜນດິນ, ນ້ຳ ແລະເວລາ
2	ຜີເສື້ອເມືອງ (ສີເມືອງ)	ເປັນເທບທິດາຮັກສາເມືອງ
3	ຜີປູ່ຕາ	ເປັນເທບພະເຈົ້າຮັກສາບ້ານ.
4	ຜີຕາແຮກ	ເປັນເທບພະເຈົ້າຮັກສາໄຮ່ນາ.

5	ຜີພໍ່ແມ່	ເປັນເທບພະເຈົ້າຮັກສາຄອບຄົວ.
6	ປູ່ເຍີ ແມ່ຍ່າງາມ	ເປັນຜີບັນພະບຸລຸດຜູ້ມີຄຸນງາມຄວາມດີຕໍ່ຄົນລາວ.
7	ຜີເຖົ້າໄລ່ແມ່ມົດ	ເປັນຜີຮັກສາແຜ່ນດິນແຕ່ລະທິດ.
8	ຜີພູ, ຜີຖ້ຳ	ເປັນຜີຮັກສາພູ ແລະຖ້ຳຕ່າງໆໃນປະເທດລາວ.
9	ຜີນ້ຳ(ຜີເຊື້ອນ້ຳ)	ເປັນຜີຮັກສາຫ້ວຍນ້ຳລຳເຊຕ່າງໆ.
10	ຜີສຸມຫີກ, ກີກໄມ້	ເປັນຜີຮັກສາສຸມໄມ້, ຕົ້ນໄມ້ ແລະປ່າໄມ້.

ແຫ່ງຂໍ້ມູນ: ຄຳ ຈຳປາແກ້ວມະນີ (1973: 11-13)

ຈາກຕາຕາລາງໜຶ່ງ ແລະສອງສະແດງໃຫ້ເຫັນຊື່ ແລະໜ້າທີ່ຮັບຜິດຊອບຂອງຜີ ແລະແຖນໃນລະບົບຄວາມເຊື່ອຖືຜີ ແລະສະແດງໃຫ້ເຫັນວ່າ ລະບົບຄວາມເຊື່ອຖືຜີຂອງຄົນລາວ ແມ່ນມີລະບົບທີ່ໜາແໜ້ນ ມີໂຄງສ້າງທາງສັງຄົມທີ່ແນ່ນອນ ເພາະຢູ່ເທິງຟ້ານຳມີແຖນຫຼາຍອົງທີ່ມີໜ້າທີ່ປົກປັກຮັກສາວຽກງານແຕ່ລະຢ່າງ ແລະຢູ່ພື້ນດິນກໍມີຜີຮັກສາທຸກບ່ອນ ໂດຍສະເພາະແມ່ນມີຜູ້ປົກຄອງເມືອງ, ບ້ານ ແລະຄອບຄົວ. ເພື່ອໃຫ້ເຫັນໜ້າທີ່ຂອງຜີຊັດເຈນຂຶ້ນຕື່ມຈຶ່ງຂໍຍົກເອົາໜ້າທີ່ຂອງຜີບ້ານ, ຜີເມືອງ ແລະ ຜີປະຈຳຄອບຄົວມາກ່າວດັ່ງນີ້:

+ ຜີເສື້ອເມືອງ: ຕາມຄວາມເຊື່ອຂອງຄົນລາວວ່າເປັນເທວະດາ (ແມ່ຍິງ) ເຊິ່ງໄດ້ຮັບການມອບໝາຍຈາກແຖນຟ້າຄື່ນລົງມາປະຈຳເມືອງ; ມາສະຖິດຢູ່ນຳຫໍເສື້ອເມືອງທີ່ມີຊາວເມືອງສ້າງຖວາຍ. ເມືອງໃດຢູ່ດີກິນດີຈະເລີນຮຸ່ງເຮືອງກໍ່ແມ່ນຜີເສື້ອເມືອງບັນດານໃຫ້ເປັນໄປ ແລະຄອຍພິທັກຮັກສາ. ຜີເສື້ອເມືອງປັດຈຸບັນນີ້ກໍກາຍມາເປັນສີເມືອງ ດັ່ງຕົວຢ່າງ ຍ່າແມ່ສີເມືອງ.

+ ຜີປູ່ຕາ: ເປັນຜີປະຈຳບ້ານ ແລະໄດ້ຮັບມອບໝາຍຈາກແຖນຟ້າຄື່ນລົງມາສະຖິດຢູ່ຫໍປະຈຳບ້ານຄອຍພິທັກຮັກສາຄົນໃນບ້ານໃຫ້ຢູ່ເຢັນເປັນສຸກ ແລະເປັນສື່ຊ່ວຍຊາວບ້ານໃນການຕິດຕໍ່ພົວພັນກັບແຖນ.

+ ຜີພໍ່ແມ່: ແມ່ນຜີປະຈຳຄອບຄົວ. ທຸກຄອບຄົວຄົນລາວສະໄໝບູຮານໄດ້ມີຫິ້ງນ້ອຍປະຈຳຄອບຄົວ. ຫິ້ງນີ້ຈະມີໄວ້ຕິດຝາເທິງຫົວບ່ອນນອນ ຫຼືຫ້ອງສະເພາະ (ຫ້ອງກ້ອນ) ໄວ້ຫິ້ງຫໍ. ຊາວລາວເຊື່ອກັນວ່າພໍ່ແມ່ຕາຍໄປແລ້ວດວງວິນຍານຂອງເພິ່ນຈະກາຍເປັນຜີເຮືອນ ຢູ່ນຳຄອບຄົວຄອຍເບິ່ງແຍງລູກຫຼານບໍ່ໃຫ້ກະທຳຄວາມຊົ່ວ.

ຄວາມເຊື່ອຖືຜີຂອງຄົນບູຮານທີ່ກ່າວມານັ້ນ ມີບົດບາດສຳຄັນຕໍ່ການຮ່ວມກຸ່ມຂອງຊົນເຜົ່າລາວ ແລະຊ່ວຍໃນການທ້ອນໂຮມລາວເຂົ້າມາເປັນກຸ່ມເຊັ່ນ ນະໂຍບາຍການທ້ອນໂຮມລາວເຂົ້າເປັນອານາຈັກລາວລ້ານຊ້າງໃນສະໄໝເຈົ້າຟ້າງຸ່ມໄລຍະຕົ້ນ. ໃນປີ ຄ.ສ. 1357 ເຈົ້າຟ້າງຸ່ມໄດ້ໃຊ້ລະບົບຄວາມເຊື່ອຖືຜີ ເປັນນະໂຍບາຍການປົກຄອງ (ການຄຸ້ມຄອງຄົນ ແລະສັງຄົມ) ດັ່ງຄຳໂອວາດຂອງເຈົ້າຟ້າງຸ່ມໃນເວລາສະຫຼອງໄຊຊະນະ ໃນການທ້ອນໂຮມລາວເປັນເອກະລາດທີ່ວຽງຈັນວ່າ: ແຕ່ລະເດືອນໃຫ້ຄົນໄປກາບທູນເຮົາທຸກບ້ານທຸກເມືອງ ໃຫ້ເຮົາຮູ້ເລື່ອງຮ້າຍເລື່ອງດີ. ສາມປີໃດຈຶ່ງໃຫ້ຕົວເຈົ້າທ້າວຫຼາຍຂຶ້ນ ໄປໄຫວ້ເຮົາຢູ່ຊຽງດົງທອງພຸ້ນ ແລ້ວພວກເຮົາຈະໄປບູຊາແຖນຟ້າຄື່ນ, ແຖນຄົມ, ແຖນ

ແຕ່ງ, ແຖນຊັ່ງ, ແຖນເຊືອກ ທັງເຖົ້າເຍີແມ່ຍ່າງ່າມ, ເຖົ່າໄລ່ແມ່ມົດ ແລະເທວະດາຜູ້ຮັກສາຜາຕ່ຶງ, ສົບ ຮູ, ພ້ອມທັງຫຼັກໝັ້ນທ້າຍຂັນ, ນາໄຮ່ດຽວພູເຂົາກ້າ. ອ້າຍມາທ້າວຄອງຜູ້ຢູ່ໜອງລຸ່ມພູເຂົາກ້າ... (ສີ ລາ ວິລະວົງ, 1990: 49).

ບັນດາຜີ ຫຼື ແຖນຕ່າງໆທີ່ເຈົ້າຟ້າງຸ່ມໄດ້ກ່າວເຖິງລ້ວນແຕ່ແມ່ນຜີແຖນ ແລະຜີນາກໃນລະບົບ ຄວາມເຊື່ອຖືຜີຂອງຊົນເຜົ່າລາວ. ຄົນລາວມີຄວາມເຊື່ອວ່າແຜ່ນດິນທີ່ຕົນອາໄສຢູ່, ຊັບສົມບັດທີ່ຕົນ ໃຊ້ສອຍ, ຕະຫຼອດຮອດຊີວິດຂອງຕົນເອງລ້ວນແຕ່ແມ່ນຜີເປັນຜູ້ສ້າງຂຶ້ນມາ. ດັ່ງນັ້ນຈຶ່ງພາກັນເຊື່ອຖື ຜີ ແລະເຄົາລົບບູຊາຜີ. ຈາກຄວາມເຊື່ອນີ້ພາໃຫ້ເກີດມີປະເພນີພິທີກຳການລ້ຽງຜີຕ່າງໆ. ບັນດາພິທີ ກຳການລ້ຽງຜີຂອງຊົນເຜົ່າລາວໄດ້ມີການພົວພັນກັບການການບູຊາພະຍານາກ ແລະພະຍາແຖນ (ບູຊາແຜ່ນດິນ ແລະທ້ອງຟ້າ).

3 ການບູຊາພະຍານາກ ແລະພະຍາແຖນໃນພິທີກຳຕ່າງໆຂອງຊົນເຜົ່າລາວ

ພິທີກຳແມ່ນແບບຢ່າງຂອງພຶດຕິກຳທີ່ໄດ້ມາຈາກຄວາມເຊື່ອ, ດັ່ງໄດ້ກ່າວມາແລ້ວວ່າໃນລະບົບ ຄວາມເຊື່ອຖືຜີຂອງຄົນລາວມີສອງລັດທິຄື ລັດທິແຖນຟ້າ ແລະລັດທິພະຍານາກ ເຊິ່ງເປັນລະບົບ ຄວາມເຊື່ອຖືຟ້າ ແລະແຜ່ນດິນ. ລະບົບຄວາມເຊື່ອຖືຜີ ໄດ້ຜູກພັນກັບວິຖີຊີວິດຂອງຊົນເຜົ່າລາວມາ ເປັນເວລາຍາວນານ. ອາດເວົ້າໄດ້ວ່າຄວາມເຊື່ອຖືຜີ (ຄວາມເຊື່ອຟ້າ ແລະແຜ່ນດິນ) ຂອງຊົນເຜົ່າ ລາວໄດ້ກຳນົດໃຫ້ເກີດມີປະເພນີພິທີກຳຫຼາຍຢ່າງ ທີ່ກ່ຽວຂ້ອງກັບວິຖີຊີວິດຂອງຄົນຊົນເຜົ່າລາວ.

3.1 ການບູຊາພະຍານາກ-ແຖນໃນພິທີກຳຕ່າງໆ ທີ່ກ່ຽວຂ້ອງກັບວັດຕະຈັກຊີວິດຂອງຊົນເຜົ່າລາວ

3.1.1 ພິທີກຳການບາສີສູ່ຂວັນ

ພິທີກຳການບາສີສູ່ຂວັນເປັນພິທີກຳທີ່ໄດ້ຮັບຄວາມນິຍົມແຜ່ຫຼາຍໃນສັງຄົມລາວ ໃນສະໄໝອະ ດີດ, ປັດຈຸບັນ ແລະມີທ່າອ່ຽງທີ່ມີການພັດທະນາໄປຕາມອະນາຄົດທີ່ຍາວໄກ. ການສູ່ຂວັນເຮັດໄດ້ ທຸກໆເວລາຂອງການດຳເນີນຊີວິດ ເພາະສາເຫດທີ່ຈະມີການສູ່ຂວັນປົກກະຕິມີຢູ່ 2 ກໍລະນີຄື: ສູ່ຂວັນ ໃນກໍລະນີທີ່ດີ ແລະສູ່ຂວັນໃນກໍລະນີທີ່ບໍ່ດີ.

ກໍລະນີທີ່ດີແມ່ນໄດ້ແກ່ພິທີສູ່ຂວັນເນື່ອງໃນໂອກາດໄດ້ຮັບໂຊກລາບ ຫຼືໄດ້ສິ່ງທີ່ພໍອົກພໍໃຈເຊັ່ນ: ໄດ້ເງິນ, ຄຳ, ຍົດສັກຕຳແໜ່ງ, ແຕ່ງງານໃໝ່, ຂຶ້ນບ້ານໃໝ່, ເຈົ້ານາຍຜູ້ໃຫຍ່ທີ່ຮັກແພງ ຫຼືຄົນຮັກແພງ ຈາກກັນດົນນານແລ້ວກັບມາຢ້ຽມຢາມ ຫຼືຍາດຕິພີ່ນ້ອງມາຢ້ຽມຢາມກັນ ຄົນລາວກໍນິຍົມເຮັດຂວັນ ເພື່ອເປັນສິລິມຸງຄຸນເຮັດໃຫ້ໂຊກລາບໝັ້ນຄົງ ແລະຈະເລີນງອກງາມຢູ່ກັບຕົນເອງສະເໝີໄປ. ໃນກໍລະ ນີນີ້ນິຍົມເອີ້ນວ່າສູ່ຂວັນ.

ກໍລະນີທີ່ບໍ່ດີແມ່ນໄດ້ແກ່ການຈັດພິທີສູ່ຂວັນເພື່ອເປັນການສະເດາະເຄາະ ຫຼືເສຍເຄາະ ເຊິ່ງ ເກີດຂຶ້ນໃນກໍລະນີພົບພໍ້ສິ່ງທີ່ບໍ່ດີເຊັ່ນ ເຈັບໄຂ້ໄດ້ປ່ວຍ, ໄດ້ຮັບຄວາມຕົກໃຈ (ອົກສັ່ນຂວັນຫາຍ) ຈາກ ເຫດການຢ່າງໃດຢ່າງໜຶ່ງເຊັ່ນ ອຸບັດເຫດລົດຂວ້ຳ, ລົດຕຳກັນ, ເສຍຊັບສົມ, ຖືກຄຸກຖືກຂັງ ແລະ

ອື່ນໆ ກໍຈະຈັດພິທີເຮັດຂວັນ ແລະເອີ້ນຂວັນມາເພື່ອໃຫ້ຂວັນຜູ້ນັ້ນຢູ່ກັບເນື້ອກັບຕົວ, ເຮັດໃຫ້ຈິດໃຈຜູ້ນັ້ນ ມາຢູ່ກັບເນື້ອກັບຕົວ, ເຮັດໃຫ້ຈິດໃຈຜູ້ນັ້ນມີຄວາມສຸກສະບາຍ ຫາຍຈາກເຄາະຮ້າຍຕ່າງໆ. ການສູ່ຂວັນແບບນີ້ນິຍົມເອີ້ນວ່າສູດຂວັນ.

ການສູ່ຂວັນມີຕົ້ນເຫດມາຈາກໃສ? ແມ່ນໃຜເປັນຜູ້ແຕ່ງຂຶ້ນ? ບັນຫານີ້ບໍ່ທັນມີຂໍ້ວິເຄາະ ແລະ ສະຫຼຸບຢ່າງແນ່ນອນ. ຕາມທັດສະນະຂອງທ່ານ ສີລາ ວີລະວົງ (1900: 39) ແລະສານສາຣະທັດ ນາ ນັ້ນ (ບໍ່ປະກົດປີພິມ: 166). ໄດ້ໃຫ້ທັດສະນະວ່າ ພິທີກຳສູ່ຂວັນ ຫຼືສູດຂວັນຄົງມີວິວັດທະນາການມາຈາກພິທີກຳຂອງພາມ ຫຼືຄວາມເຊື່ອຖືສາສະໜາພາມ. ຕາມທັດສະນະຂອງຜູ້ສຶກສາເຫັນວ່າ ກ່ອນສາສະໜາພາມຈະແຜ່ກະຈາຍມາ, ຊົນເຜົ່າລາວກໍມີຄວາມເຊື່ອຖືຜີຢ່າງເປັນລະບົບແໜ້ນໜາຢູ່ແລ້ວ ເມື່ອສາສະໜາພາມເຂົ້າມາ ຄົນລາວກໍຮັບເຂົ້າມາປະສົມປະສານກັບປະເພນີທີ່ມີຢູ່ແລ້ວ. ການປະສົມປະສານຄວາມເຊື່ອຕ່າງໆເປັນທາງເລືອໜຶ່ງເພື່ອການຮ່ວມກຸ່ມ. ໃນທີ່ນີ້ຜູ້ສຶກສາຂໍຍົກໃຫ້ເຫັນຄວາມເຊື່ອຖືຜີ (ພະຍານາກ ແລະພະຍາແຖນ) ໄດ້ມີຄວາມກ່ຽວຂ້ອງກັບການເຮັດຂວັນ.

ວິເຄາະຄວາມໝາຍຕາມຣາກສັບ

ຕາມຄວາມໝາຍຂອງຄຳ ຫຼືພະຍາງຕ່າງໆທີ່ປະກອບຢູ່ຄຳສັບທີ່ວ່າ "ບາສີສູ່ຂ້ວນ" ມີຄວາມກ່ຽວຂ້ອງກັບຄວາມເຊື່ອຖືຜີ (ພະຍານາກ ແລະພະຍາແຖນ) ຢູ່ສອງຄຳຄື "ສີ" ແລະ "ຂ້ວນ" ຄຳວ່າ ສີ ມີຄວາມກ່ຽວຂ້ອງກັບເງືອກ (ພະຍານາກ). ສ່ວນຂວັນມີຄວາມກ່ຽວຂ້ອງກັບພະຍາແຖນ (ຜີແຖນ) ດັ່ງນີ:

ຄຳວ່າ "ສີ" ມີຄວາມໝາຍເຖິງງູ (ນາກ) ເພາະຄຳວ່າ "ສີ" ມີຣາກສັບໃນພາສາລາວເດີມເຊິ່ງພົບເຫັນຢູ່ໃນລະບົບການນັບເວລາ. "ສີ" ໃນການນັບເວລາໃນຮອບປີນັກສັດຂອງລາວດັ້ງເດີມກົງກັບປີມະໂລງ ຫຼື ງູໃຫຍ່ໃນລະບົບການນັບເວລາໃນຮອບປີນັກສັດຂອງຂອມ (ອິນເດຍບູຮານ) ດັ່ງນີ້ເຊັ່ນ:

ປີນັກສັດຂອງລາວ		ປີນັກສັດຂອງຂອມໂບຮານ
1. ປີໄຈ້	ກົງກັບ	ປີຊວດ.
2. ປີເປົ້າ	ກົງກັບ	ປີສະລູ.
3. ປີຍີ	ກົງກັບ	ປີຂານ.
4. ປີເມົ້າ	ກົງກັບ	ປີເຖາະ.
5. ປີສີ	ກົງກັບ	ປີມະໂລງ.
6. ປີໃຮ້	ກົງກັບ	ປີມະເສັງ.
7. ປີຊະງ້າ	ກົງກັບ	ປີມະເມ້ຍ.
8. ປີເມັດ	ກົງກັບ	ປີມະແມ.
9. ປີສັນ	ກົງກັບ	ປີວອກ.
10. ປີເລົ້າ	ກົງກັບ	ປີລະກາ.

11.	ປີເສັດ	ກົງກັບ	ປີຈໍ.
12.	ປີໄກ່	ກົງກັບ	ປີກຸນ.

ການນັບເວລາແບບນີ້ປາກົດຢູ່ໃນຕຳນານລ້ານຊ້າງ ແລະຕຳນານພິມມະຊາດຂອງຄົນລາວ, ມີຄວາມສຳຄັນຫຼາຍຕໍ່ການຫາເວລາໃນການເຮັດພິທີກຳຕ່າງໆເຊັ່ນ ການປູກຟ້ງ, ການສູດຂວັນ, ການລ້ຽງຜີ ແລະອື່ນໆ.

ຄຳວ່າ "ສີ" ຕາມຄວາມໝາຍຂອງຮາກສັບໃນພາສາລາວ (ທອງຄຳ ອ່ອນມະນີສອນ,1992: 247-248) ໄດ້ອະທິບາຍຄວາມໝາຍຂອງຄຳວ່າ "ສີ" ມີ 5 ຄວາມໝາຍຄື 1. ໂຮງສີ, 2. ການຖູໄປຖູມາ, 3. ຄວາມດີ, ຄວາມຈະເລີນຮຸ່ງເຮືອງ, 4. ງູ (ນາກ) ແລະ 5. ລັກສະນະຂອງແສງສະຫວ່າງທີ່ມີສີຕ່າງໆ. ຕາມຄວາມເຊື່ອໃນການເຮັດພິທີສູຂ້ວນຂອງຄົນລາວອາດຈະບໍ່ແມ່ນສີໃນຄວາມໝາຍຂໍ້ທີ 1 ແລະ 2 ແນ່ນອນ. ສ່ວນຄວາມໝາຍທີ 3, 4, 5 ເປັນຄວາມໝາຍທີ່ກ່ຽວຂ້ອງສຳພັນກັນເພາະຄົນລາວເຊື່ອກັນວ່າ ຖ້າຄົນໃດເກີດປີສີ (ປີມະໂລງ) ຄົນນັ້ນຈະເປັນຄົນທີ່ມີວາດສະໜາດີ ຈະມີຄວາມສຸກຄວາມຈະເລີນ. ເພາະສັດທີ່ມີຄົບໝົດທຸກສີກ່ຄື ພະຍານາກ. ດັ່ງຄຳວ່າ ສີ ໃນນີ້ຈຶ່ງໝາຍເຖິງຄວາມດີ ຄວາມຮຸ່ງເຮືອງຈະເລີນ. ສ່ວນຄຳວ່າ ບາ ເປັນຄຳຍົກມານຳໜ້າ ສີ ກ່ເພາະວ່າຄຳວ່າ "ບາ" ໃນພາສາບູຮານລາວ ເປັນຄຳນຳໜ້າຜູ້ຊາຍໜຸ່ມທີ່ເປັນລູກຂອງເຈົ້າພະຍາມະຫາກະສັດ ທີ່ພຽບພ້ອມໄປດ້ວຍຄວາມງາມ, ຄວາມຮູ້ຄວາມສາມາດ ແລະຊັບສົມບັດເຊັ່ນ ບາຄາມ, ບາທ້າວ, ບາບ່າວ, ບາບ່າວທ້າວ ເປັນຕົ້ນ. ເພາະສະນັ້ນ ຄຳວ່າ "ບາສີ" ຈຶ່ງມີຄວາມໝາຍເຖິງຄວາມດີ, ຄວາມງາມ, ຄວາມສຸກ, ຄວາມຈະເລີນສູງສຸດ.

ຄຳວ່າ "ຂວັນ" ຕາມຄວາມໝາຍຂອງຮາກສັບ ມີສອງຄວາມໝາຍທັງສິ່ງທີ່ເປັນຮູປະທຳ ແລະ ນາມະທຳ. ຮູປະທຳໝາຍເຖິງຂົນທີ່ເກີດເປັນວົງມົນຂຶ້ນຕາມຕົວ, ຫົວ ຫຼື ຕົນໂຕຂອງຄົນ ຫຼື ສັດ ເຊິ່ງຄົນລາວເອີ້ນວ່າ "ຈອມຂວັນ ຫຼື ຂວັນ". ຂວັນທີ່ເປັນນາມະທຳແມ່ນໝາຍເຖິງສິ່ງທີ່ບໍ່ມີຕົນໂຕ ບໍ່ສາມາດເຫັນ ຫຼືຈັບບາຍໄດ້, ແຕ່ມີຄວາມເຂົ້າໃຈວ່າ ຄ້າຍຄືກຳລັງໃຈ ຫຼືຈິດໃຈ. ຄົນລາວເຊື່ອກັນວ່າມີ 32 ຂວັນຄື ຂວັນຫົວ, ຂວັນຕາ, ຂວັນຕົນ, ຂວັນມື, ... ຊາວລາວເຊື່ອກັນວ່າ ຄົນເຮົາຈະຢູ່ດີມີສຸກໄດ້ກ່ຕໍ່ເມື່ອມີຂວັນທຸກພາກສ່ວນຢູ່ກັບເນື້ອກັບກາຍ. ຖ້າຂວັນຢູ່ກັບເນື້ອກັບກາຍທຸກພາກສ່ວນແລ້ວກຳຈະເປັນມຸງຄຸນ ມີຄວາມສຸກກາຍສະບາຍໃຈ; ເຮັດວຽກອັນໃດກ່ມີຜົນສຳເລັດເພາະມີຈິດໃຈໝັ້ນຄົງ. ຄຳວ່າ "ສູ່" ມີຄວາມໝາຍວ່າ ຢູ່ຮ່ວມກັນ, ຢູ່ນຳກັນ, ກິນນຳກັນ. ຄຳວ່າ ສູ່ຂວັນ ຈຶ່ງມີຄວາມໝາຍເຖິງການເອີ້ນເອົາຂວັນທຸກພາກສ່ວນຂອງຮ່າງກາຍມາຢູ່ນຳກັນ.

ຄຳວ່າ "ຂວັນ" ມີຄວາມກ່ຽວຂ້ອງກັບຄວາມເຊື່ອຜີ ຫຼືຜີແຖນຄື ຄົນລາວນິຍົມເອີ້ນຂວັນໃນຮ່າງກາຍຂອງຄົນແຕ່ລະພາກສ່ວນນັ້ນວ່າ ຜີຂວັນ. ຕາມຄວາມເຊື່ອຂອງຄົນລາວວ່າຕົນເອງເປັນລູກເຕົ້າເຫງົ້າແຖນ, ຜີແຖນ ຫຼື ພະຍາແຖນເປັນຜູ້ແຕ່ງລົງມາເກີດ. ພະຍາແຖນຜູ້ປັ້ນແຕ່ງມະນຸດລົງມາເກີດນັ້ນຊື່ວ່າ ແຖນຫຼໍ່ ມີພັນລະຍາຊື່ວ່າ ແມ່ເບົ້າ ດັ່ງນິທານການສ້າງໂລກຂອງແຖນ (ນິທານພື້ນເມືອງ

ລາວ). ຕາມນິທານກ່າວວ່າ ມະນຸດ ສັດສາວາສິ່ງຕ່າງໆໃນໂລກແມ່ນພະຍາແຖນເປັນຜູ້ສ້າງ. ແຖນສ້າງມະນຸດໃນເບື້ອງຕົ້ນ ແມ່ນເອົາດິນລົງມາປັ້ນເປັນແຕ່ລະພາກສ່ວນ ແລ້ວເອົາຜີຂວັນໃສ່ແຕ່ລະສ່ວນ ແລ້ວກໍຕໍ່ເຂົ້າກັນ. ໃນທ້ອງກໍເກີດມີວິນຍານ ໃນຄໍເກີດມີສຽງດັງເປັນພາສາ ແລ້ວຈຶ່ງສົ່ງລົງມາເກີດ. ເວລາທີ່ຈະສົ່ງລົງມາເກີດເມືອງລຸ່ມແມ່ເບົ້າໄດ້ສັ່ງໄວ້ວ່າ ເວລາລົງໄປຢູ່ເມືອງລຸ່ມແລ້ວ ຫ້າມບໍ່ໃຫ້ກິນເກັດປາຝາ, ຫ້າມບໍ່ໃຫກິນຕາໂຕລິ່ນ, ຫ້າມບໍ່ໃຫ້ກິນຕັກຕິນຕິນຄວາຍ ເພາະຈະລືມເສຍແມ່ເບົ້າ; ຈະບໍ່ໄດ້ຂຶ້ນເມືອງສະຫວັນອີກ. ຄວາມຄິດນີ້ໄດ້ມີຄວາມກ່ຽວຂ້ອງກັບພິທີກຳການສູ່ຂວັນອອກລູກໃໝ່ເຊິ່ງຈະໄດ້ກ່າວໃນຂໍ້ຕໍ່ໄປ.

ສະຫຼຸບຄວາມວ່າ: ພິທີກຳ "ບາສີສູຂວັນ" ເປັນປະເພນີດັ້ງເດີມເກົ່າແກ່ຂອງຄົນລາວມີມາແຕ່ສະໄໝບູຮານ ມີຄວາມກ່ຽວຂ້ອງສຳພັນກັບຄວາມເຊື່ອຖືຜີ ໂດຍສະເພາະແມ່ນກ່ຽວຂ້ອງກັບພະຍານາກ ແລະພະຍາແຖນເຊິ່ງເປັນຄວາມເຊື່ອຖືດັ້ງເດີມຂອງຄົນລາວ. ພິທີກຳດັ່ງກ່າວນີ້ມີຄວາມໝາຍເຖິງການເອີ້ນເອົາຂວັນມາຢູ່ນຳກາຍທຸກພາກສ່ວນແລ້ວຈະເກີດມີຄວາມດີ, ຄວາມງາມ, ຄວາມສຸກ, ຄວາມຈະເລີນສູງສຸດຂອງຊີວິດ.

3.1.2. ພິທີກຳການເກີດ

ຊົນເຜົ່າລາວໃຫ້ຄວາມສຳຄັນກ່ຽວກັບການເກີດຂອງເດັກຫຼາຍທີ່ສຸດ ເພາະຫວັງຈະໃຫ້ລູກເກີດມາເປັນຄົນດີ ສາມາດເພິ່ງຕົນເອງໄດ້ ແລະຢູ່ຮ່ວມກັບໝູ່ໃນສັງຄົມໄດ້ຢ່າງມີຄວາມສຸກ ພ້ອມທັ້ງຈະໄດ້ເພິ່ງພາຍາມພໍ່ແມ່ເຖົ້າແກ່. ດັ່ງນັ້ນ, ຊາວລາວຈະມີພິທີກຳການເກີດຫຼາຍເຊັ່ນ ພິທີກຳການຕັດສາຍແຮ່, ພິທີກຳການເຜາະເດັກໃຫ້ຜີ, ພິທີກຳຈອມເດັກ, ພິທີຢູ່ກຳ, ພິທີອອກກຳ ແລະພິທີບາສີສູ່ຂວັນໃຫ້ແກ່ແມ່ ແລະເດັກ (ພິທີບາສີສູ່ຂວັນອອກລູກໃໝ່). ບັນດາພິທີກຳທີ່ກ່າວມານີ້ ຫຼາຍພິທີກໍໄດ້ລະຖິ້ມ ບໍ່ໄດ້ປະຕິບັດແລ້ວ. ພິທີກຳທີ່ໄດ້ຮັບຄວາມນິຍົມຢູ່ຄື ພິທີບາສີສູ່ຂວັນອອກລູກໃໝ່. ດັ່ງນັ້ນຈຶ່ງຂໍນຳສະເໜີພິທີກຳດັ່ງກ່າວນີ້:

ພິທີກຳອອກລູກໃໝ່

ການນຳສະເໜີພິທີສູ່ຂວັນອອກລູກໃໝ່ ກໍຈະນຳສະເໜີແຕ່ສ່ວນກ່ຽວຂ້ອງສຳພັນກັບຄວາມເຊື່ອຜີ (ພະຍານາກ ແລະພະຍາແຖນ) ເທົ່ານັ້ນ.

ພິທີສູ່ຂວັນອອກລູກໃໝ່ໄດ້ມີຄວາມສຳພັນກ່ຽວຂ້ອງກັບຄວາມເຊື່ອຖືຜີ (ພະຍານາກ ແລະພະຍາແຖນ) ສະແດງອອກຄື ຕາມປະເພນີດັ້ງເດີມຂອງຄົນເຮົາ ຫຼັງຄອດລູກໄດ້ປະມານ 30 ວັນຂຶ້ນໄປ ຍາດພີ່ນ້ອງ ພໍ່ແມ່ ແລະສາມີຈະຫາລືກ່ຽວກັນຍາມດີ ເພື່ອເຮັດພິທີບາສີສູ່ຂວັນໃຫ້ແກ່ແມ່ ແລະເດັກ. ພິທີດັ່ງກ່າວນີ້ມີຈຸດປະສົງເອີ້ນຂວັນຂອງແມ່ ແລະລູກທີ່ພາກັນຜ່ານມໍລະສຸມຄັ້ງຍິ່ງໃຫຍ່ຂອງຊີວິດ ເພາະຊາວລາວຖືວ່າ ຖ້າຄອດລູກອອກມາໄດ້ຖືວ່າ ເປັນຄວາມໂຊກດີທີ່ສຸດ ດັ່ງຄຳເວົ້າຂອງຊາວບູຮານມັກກ່າວວ່າ "ລູກເຂົ້າທ້ອງຄອງຖ້າແຕ່ມື້ຕາຍ". ຈຸດປະສົງທີສອງແມ່ນເພື່ອຕັ້ງຊື່ໃຫ້ແກ່ເດັກ ແລະຈຸດປະສົງທີສາມແມ່ນເພື່ອຈອມນ້ຳໃສ່ປາກເດັກ ເຊິ່ງການຈອມນ້ຳໃສ່ປາກເດັກນີ້ມີຄວາມກ່ຽວ

ຂ້ອງສຳພັນກັບຄວາມເຊື່ອເລື່ອງພະຍານາກ ແລະພະຍາແຖນຄື ນ້ຳທີ່ຈະເອົາມາຈອມນັ້ນຊາວລາວນິຍົມເອົາ "ນ້ຳສ້າງແກ້ວ".

ຊາວລາວເຊື່ອກັນວ່າ ນ້ຳທີ່ໄຫຼອອກມາເປັນນ້ຳສ້າງນັ້ນ ໄຫຼອອກຈາກພື້ນບາດານ, ເປັນນ້ຳຂອງພະຍານາກ. ເມື່ອມີພິທີສຳຄັນທີ່ຕ້ອງໃຊ້ນ້ຳປະກອບ ຕ້ອງຂອກເອົານ້ຳໃຫ້ໄດ້ 7 ສ້າງ. ພິທີຈອມເດັກກໍມີລັກສະນະຄ້າຍຄືກັນຄື ຕ້ອງຂອກເອົານ້ຳ 7 ສ້າງມາຮວມໄວ້ໃນຈອກດຽວກັນ. ຈາກນັ້ນ, ເອົາເກັດປາຝາ, ຕາໂຕລິ່ນ, ຕັກຕິນຕິນຄວາຍມາຝົນລົງໃສ່ນ້ຳໃນຈອກ ແລ້ວຈຶ່ງຈອມເດັກ. ສາເຫດທີ່ເອົາເກັດປາຝາ, ຕາໂຕລິ່ນ, ຕັກຕິນຕິນຄວາຍມາຝົນລົງນ້ຳກໍຍ້ອນມີຄວາມເຊື່ອກັນວ່າ ມະນຸດຂອງເຮົາມີສອງແມ່, ແມ່ທີ 1 ແມ່ນຢູ່ເມືອງຟ້າເອີ້ນວ່າ ແມ່ເບົ້າ ເປັນຜູ້ປັ້ນແຕ່ງເຮົາມາ. ກ່ອນຈະລົງມາ ແມ່ເບົ້າສັ່ງຫ້າມບໍ່ໃຫ້ກິນ 3 ຢ່າງນັ້ນ ຖ້າກິນຈະລືມແມ່ຢູ່ເມືອງຟ້າ (ແມ່ເບົ້າ) ຈະບໍ່ໄດ້ຂຶ້ນເມືອຢູ່ເມືອງຜີແຖນ. ດັ່ງນັ້ນ, ເພື່ອໃຫ້ລູກມີອາຍຸຍືນບໍ່ເຈັບໄຂ້ໄດ້ປ່ວຍ ແລະຄິດເຖິງແມ່ຢູ່ເທິງຟ້າ ຈຶ່ງເອົາສິ່ງດັ່ງກ່າວມາຝົນໃສ່ນ້ຳສ້າງແກ້ວໃນຈອກສຳລັບຢອດໃສ່ປາກໃຫ້ເດັກເວລາເຮັດບາສີສູ່ຂວັນ. ເຮັດແນວນັ້ນເຊື່ອກັນວ່າຈະເຮັດໃຫ້ລູກມີອາຍຸຍືນບໍ່ເຈັບໄຂ້ໄດ້ປ່ວຍ ແລະມີຄວາມສຸກ, ເມື່ອໃຫຍ່ຂຶ້ນກໍຈະກາຍເປັນຄົນຮູ້ຜູ້ດີ ມີຄວາມສະຫຼຽວສະຫຼາດ.

3.1.3. ພິທີກຳການແຕ່ງດອງ ຫຼືກິນດອງ

ພິທີກຳການກິນດອງເປັນພິທີກຳການກິນລ້ຽງໃນງານແຕ່ງດອງ ຫຼືຮູ້ຈັກກັນໂດຍທົ່ວໄປວ່າ "ເອົາຜົວ-ເອົາເມຍ" ຂອງຊາວລາວ. ຊາວລາວມີຂັ້ນຕອນໃນການມັກຮັກ, ການສູ່ຂໍ ແລະການກິນດອງຕາມປະເພນີມີຫຼາຍຂັ້ນຕອນ ແລະມີຂໍ້ຫ້າມຫຼາຍຢ່າງ ແຕ່ຢູ່ບ່ອນນີ້ຈະຂໍກ່າວແຕ່ຂັ້ນຕອນທີ່ກ່ຽວຂ້ອງກັບຄວາມເຊື່ອຖືຜີ (ພະຍານາກ ແລະພະຍາແຖນ) ເທົ່ານັ້ນ. ປະເພນີການກິນດອງ ສິ່ງທີ່ສຳຄັນທີ່ສຸດສຳລັບການເຮັດດອງນັ້ນແມ່ນຄ່າດອງ. ຄ່າດອງ ຕາມປະເພນີແມ່ນສິ່ງທີ່ຈະເຮັດພາເຂົ້າຜີ (ເຮັດພາເຂົ້າເພື່ອຄອບຜີຟ້າ ແລະຜີດິນ). ສິ່ງທີ່ຈຳເປັນໃນການເຮັດພາເຂົ້າຜີມີ 3 ຢ່າງຄື 1. ໄກ່ ຫຼື ໝູ, 2. ເຫຼົ້າໄຫ ແລະ 3. ເງິນອ້າຍເງິນນ້ອງ. ຖ້າລະດັບນ້ອຍແມ່ນ ເຫຼົ້າໄຫ ໄກ່ໂຕ ແລະເງິນຮາວ ເພື່ອແຈກໃຫ້ພີ່ນ້ອງຊັ້ນຈຳ. ຖ້າລະດັບໃຫຍ່ກໍມີເຫຼົ້າໄຫ ແລະໝູ 1 ໂຕ, ເງິນກີບຫົວໜາມ (ກີບເກົ່າ) ຕາມອ້າຍນ້ອງຊັ້ນຈຳມີຈັກຄົນກໍຈະເອົາເທົ່ານັ້ນກີບ.

ຄ່າດອງນີ້ແມ່ນຈະມາໃຊ້ໃນມື້ກິນດອງເຊິ່ງກ່ຽວຂ້ອງກັບຄວາມເຊື່ອເລື່ອງຜີ ເພາະຄ່າດອງນີ້ຈະເອົາມາເຮັດພາເຂົ້າໃຫ້ຜີເຮືອນ 1 ພາ ແລະອີກ 1 ພາຈະເຮັດໄປໃຫ້ເຈົ້າແຜ່ນດິນ (ພະຍານາກ) ຕາມຄວາມເຊື່ອດັ້ງເດີມ. ປັດຈຸບັນປ່ຽນເປັນນາງທໍລະນີ.

3.1.4. ພິທີກຳການຕາຍ

ຄົນລາວມີຂັ້ນຕອນຂອງການຈັດງານສົບຫຼາຍຢ່າງເຊັ່ນ ການອາບນ້ຳສົບ, ການແຕ່ງຕົວສົບ ແລະການແກ່ສົບໄປຈູດ (ເອີ້ນວ່າການສົ່ງສະການ). ປະເພນີການສົ່ງສະການສົບນັບວ່າເປັນປະເພນີມີມາເປັນເວລາດົນນານ ຊາວລາວນິຍົມມ້ຽນສົບດ້ວຍການຈູດ ຫຼື ເຜົາສົບບໍ່ວ່າຈະຕາຍໃນກໍລະນີໃດ

ກໍຕາມ; ເວັ້ນເສຍແຕ່ວ່າຜູ້ຕາຍແມ່ນເດັກນ້ອຍກໍຈະຝັງໂລດ. ຊາວລາວມີຄວາມເຊື່ອກ່ຽວກັບຄົນຕາຍ ທຸງ ແລະຄົນຕາຍນອກບ້ານຈະບໍ່ນຳເອົາເຂົ້າມາໃນບ້ານ ຫຼືເຮືອນເດັດຂາດ ເພາະເຊື່ອວ່າຈະກາຍ ເປັນຜີບໍ່ດີ ມັກຈະຫຼອກຊາວບ້ານ ເຮັດໃຫ້ຄອບຄົວ ແລະບ້ານເມືອງບໍ່ມີຄວາມສຸກ.

ພິທີກຳການຕາຍໄດ້ມີຄວາມກ່ຽວຂ້ອງກັບຄວາມເຊື່ອຖືຜີຫຼາຍຢ່າງເຊັ່ນ ຫຼັງຈາກມີຄົນເສຍຊີວິດ ໃນຄອບຄົວຍາດພີ່ນ້ອງກໍ່ອາບນ້ຳ, ແຕ່ງຕົວຕາມຂັ້ນຕອນຂອງຄວາມເຊື່ອຕ່າງໆ ແລ້ວນຳສົບເຂົ້າໂລງ ແລະນຳມາດອຍໄວ້ກາງເຮືອນ ໂດຍເອົາຫົວໄປທາງທິດຕາເວັ້ນຕົກ. ຈາກນັ້ນກໍ່ເອົາເມນທີ່ຕົກແຕ່ງ ດ້ວຍລວດລາຍຫຼາຍຢ່າງ ແຕ່ລວດລາຍທີ່ສຳຄັນແມ່ນລາຍນາກ, ສະໄໝກ່ອນບໍ່ທັນມີເມນສຳເລັດຮູບ ຄືປັດຈຸບັນ ກໍຈະເອົາໄມ້ມາແປງແຕ່ງເປັນຮູບນາກໃສ່ຂ້າງເທິງໂລງ. ຫຼັງຈາກເຜົາແລ້ວ ການແຈກທານ ໃຫ້ຄົນຕາຍຕ້ອງມີທຸງພັນຊັ້ນ ເພື່ອເປັນຂັ້ນໄດກ່າຍໃຫ້ວິນຍານຂຶ້ນໄປສູ່ສະຫວັນ. ປາຍຫຼັກທີ່ຈະຮ້ອຍ ທຸງພັນຊັ້ນໃສ່ນັ້ນຕ້ອງເຮັດດ້ວຍຮູບພະຍານາກ ເຊື່ອກັນວ່າພະຍານາກຈະຊ່ວຍນຳທາງໄປເຖິງຄວາມ ສຸກຄວາມຈະເລີນໄດ້. ການຕິດດ້ວຍຮູບນາກ (ພະຍານາ**ກ**) ໃສ່ໂລງສົບ ແລະນຳໂລງສົບໄປຈູດເຜົານີ້ ໃຊ້ກັບຄົນລາວທຸກລະດັບ ນັບແຕ່ຂັ້ນເຈົ້າຊີວິດຈົນເຖິງສາມັນຊົນຄົນທຳມະດາ ພຽງແຕ່ໃຊ້ຮູບນາກໃນ ລະດັບທີ່ແຕກຕ່າງກັນເທົ່ານັ້ນ. ສາມາດເບິ່ງໄດ້ໃນຫໍລາຊະລົດເຊິ່ງເປັນພາຫະນະທີ່ອັນເຊີນສົບຂອງ ພະເຈົ້າແຜ່ນດິນລາວສະໄໝກ່ອນຂຶ້ນສູ່ສະຫວັນທີ່ເຮັດດ້ວຍນາກ 7 ຕົວຢູ່ວັດຊຽງທອງ ຫຼວງພະບາງ.

ນອກຈາກນີ້ຄົນລາວຍັງມີຄວາມເຊື່ອວ່າ ເມື່ອຄົນເຮົາຕາຍໄປແລ້ວກໍຈະກາຍເປັນຜີແຖນຂຶ້ນ ເມືອຢູ່ເມືອງຟ້າ ເມືອງແຖນ ຂຶ້ນຢູ່ນຳແມ່ເບ້ົາ ນຳຫ້ຳ ນຳຈາວ. ຖ້າຄົນເຖົ້າແກ່ມີເຮືອນຊານເປັນຫຼັກ ແຫ່ງ ມີລູກຫຼານສິບຕະກູນ ວິນຍານສ່ວນໜຶ່ງຈະກາຍເປັນຜີເຮືອນ ມາຢູ່ນຳຄອບຄົວ ຄອຍປົກປັກ ຮັກສາລູກຫຼານຕະຫຼອດໄປ.

ສະຫຼຸບວ່າ ພິທີກຳທີ່ສຳຄັນສຳລັບວັດຕະຈັກຊີວິດນັ້ນ ລ້ວນແຕ່ມີຄວາມກ່ຽວຂ້ອງສຳພັນກັບ ຄວາມເຊື່ອຖືຜີ (ພະຍານາກ ແລະພະຍາແຖນ) ເຊິ່ງເປັນຄວາມເຊື່ອຖືດັ້ງເດີມຂອງຄົນລາວ ແລະ ມີ ອິດທິພົນຕໍ່ຄົນລາວມາຕັ້ງແຕ່ກ່ອນເຖິງປັດຈຸບັນ. ຄວາມເຊື່ອຖືເລື່ອງຜີບໍ່ພຽງແຕ່ກ່ຽວຂ້ອງກັບພິທີກຳທີ່ ເກີດຂຶ້ນສຳລັບວົງຈອນຊີວິດເທົ່ານັ້ນ ຫາກຍັງມີການກ່ຽວພັນໃນພິທີກຳຕ່າງໆທີ່ມີໃນຮີດ **12** ເດືອນ ຂອງລາວອີກດ້ວຍ.

3.2 ການບູຊາພະຍານາກ-ພະຍາແຖນໃນພິທີກຳຕ່າງໆຂອງຮີດ 12 ເດືອນຂອງຄົນລາວ

ຕາມປະເພນີໃນຮີດ 12 ເດືອນດັ້ງເດີມຂອງຄົນລາວໄດ້ກ່າວໄວ້ວ່າ: ເດືອນຈຽງ ແມ່ນເຮັດບຸນ ລ້ຽງຟ້າລ້ຽງແຖນ (ສຸເນດ ໂພທິສານ, ໜູໄຊ ພິມມະຈັນ, 2000:267). ແຕ່ພິທີກຳທີ່ຄົນລາວປະຕິບັດ ນີ້ ເດືອນ 1 ເຮັດບຸນເຂົ້າກຳ ຊຶ່ງເປັນບຸນປະເພນີທາງພຸດທະສາສະໜາ ຊາວລາວໄດ້ຮັບມາໃນໄລຍະ ພຸດທະສາສະໜາແພ່ເຂົ້າລາວ. ປະເພນີລາວສະໄໝກ່ອນ ເດືອນໜຶ່ງເອີ້ນວ່າ ເດືອນອ້າຍ ຫຼືເດືອນຈຽງ , ຄົນລາວສະໄໝກ່ອນຈະຖືເອົາ ວັນຂຶ້ນ 1 ຄ່ຳຂອງເດືອນອ້າຍ ຫຼື ເດືອນຈຽງ ເປັນມື້ຂຶ້ນປີໃໝ່ (ສີລາ ວິລະວົງ 1974:1). ຕາມຕຳນານລ້ານຊ້າງບູຮານກ່າວວ່າ ເດືອນຈຽງເປັນວັນຂຶ້ນປີໃໝ່; ພັກ, ບໍ່ເຮັດ

ວຽກເພາະຄະລຳພື້ນດິນ. ໝາຍຄວາມວ່າ ບໍ່ເຮັດວຽກ ເພື່ອເຮັດບຸນບູຊາແຜ່ນດິນ ແລະທ້ອງຟ້າ (ບູຊາ ພະຍານາກ ແລະພະຍາແຖນ). ສ່ວນເດືອນຍີ່ (ເດືອນສອງ) ເຮັດບຸນລານເຂົ້າ (ບຸນຄູນລານ) ແລະປະເພນີຫາຟືນໄວ້, ເດືອນສາມເຮັດບຸນເຂົ້າຈີ່, ເປັນປະເພນີບູຮານຂອງລາວແທ້.

- ບຸນເດືອນຈຽງຂຶ້ນປີໃໝ່ລ້ຽງຟ້າ ແລະແຜ່ນດິນ, ບຸນຫາຟືນ ແລະບຸນເຂົ້າຈີ່ມີຄວາມກ່ຽວຂ້ອງກັນ ແລະເປັນປະເພນີດັ້ງເດີມຊຶ່ງມີປາກົດໄວ້ໃນນິທານ ພື້ນເມືອງລາວເລື່ອງ "ທ້າວຍ່າ ແລະທ້າວ ຍີ່" ນິທານດັ່ງກ່າວນີ້ມີກ່າວໄວ້ດັ່ງນີ້:

ກາລະຄັ້ງໜຶ່ງນານມາແລ້ວ ຍັງມີຊາວນາຜົວເມຍຄູ່ໜຶ່ງເປັນຄົນຮັ່ງມີດ້ວຍຊັບສົມບັດ ມີໄຮ່ນາ, ງົວ, ຄວາຍຫຼາຍ ຈົນກາຍເປັນເຈົ້າທີ່ດິນ (ເປັນກະສັດ) ປົກຄອງບ້ານເມືອງດ້ວຍຄວາມຮົ່ມເຢັນເປັນສຸກຕະຫຼອດມາ. ຜົວເມຍຄູ່ນີ້ມີລູກຊາຍສອງຄົນ, ຜູ້ອ້າຍເອີ້ນວ່າ "ທ້າວຍ່າ" ຜູ້ນ້ອງເອີ້ນວ່າ "ທ້າວ ຍີ່".

ເມື່ອລູກຊາຍທັງສອງໃຫຍ່ກ້າໜ້າບານ, ເປັນບ່າວເປັນແພວ, ພໍ່ແມ່ກໍ່ເຖົ້າແກ່ຊະລາການລົງ. ຜົວເມຍເຖົ້າລົມກັນວ່າ ຈະມອບມໍລະດົກໄຮ່ນາທີ່ກວ້າງຂວາງ, ງົວຄວາຍທີ່ຫຼວງຫຼາຍໃຫ້ແກ່ລູກຜູ້ໃດຈຶ່ງຈະຮັກສາໄວ້ໄດ້ຍືນຍາວ ໃຫ້ລູກໃຫ້ຫຼານໄດ້ສືບຕໍ່ໄປໃນພາຍພາກໜ້າ. ຕົກມາມື້ໜຶ່ງຂອງລະດູເດືອນສາມ ອາກາດໃນລະດູເດືອນ 3 ຈະມີລົມພັດໜາວເຢັນໃນເວລາຕອນເຊົ້າ. ພໍ່ແມ່ ແລະລູກພາກັນນັ່ງອ້ອມເຕົາໄຟ. ໄດ້ໂອກາດດີ, ຜູ້ເປັນພໍ່ຈຶ່ງຕັ້ງຄຳຖາມເພື່ອລອງໃຈລູກຊາຍວ່າ ເຂົ້າໃນໄຮ່ນາກໍເກັບກ່ຽວມ້ຽນມັດໝົດແລ້ວ ພໍ່ບໍ່ມີວຽກໜັກອັນໃດແລ້ວ. ດັ່ງນັ້ນ, ພໍ່ຈຶ່ງຂໍພະນັນກັບລູກທັງສອງວ່າ ລູກທັງສອງມີຄວາມປາຖະໜາຢາກກິນຢາກໄດ້ອັນໃດ ພໍ່ຈະຫາມາໃຫ້ໄດ້ຕາມໃຈປະສົງ. ຄິດຢູ່ຄາວໜຶ່ງ ທ້າວຍ່າຜູ້ເປັນອ້າຍກໍບອກພໍ່ວ່າ "ລູກຍາກກິນເຂົ້າຈີ່ໃຫຍ່ເທົ່າຄັນນາ ນ້ຳມັນໝູຫາໄກວສູນນ້ຳອ້ອຍ" (ມີຄວາມໝາຍວ່າຢາກກິນເຂົ້າຈີ່ກ້ອນກົມໆໃຫຍ່ເທົ່າກັບຄັນນາ ຫຼັງຈາກຈີ່ແທ້ມແລ້ວເອົານ້ຳມັນມາທາ ແລະນຳເອົາໄປຈີ່ອີກຈັກໜ້ອຍໜຶ່ງ ຈາກນັ້ນ ເອົານ້ຳອ້ອຍເປັນນ້ຳມາທາໃສ່ເຂົ້າຈີ່ ເອີ້ນວ່າ "ໄກວສູນນ້ຳອ້ອຍ").

ສ່ວນທ້າວຍີ່ຜູ້ເປັນນ້ອງບອກພໍ່ວ່າ "ລູກຢາກແຂນສອກເທົ້ານິ່ມນາງ" (ມີຄວາມໝາຍວ່າ ຢາກຫຼິ້ນນຳຜູ້ສາວ ແລະຢາກນອນນຳຜູ້ສາວ).

ເພື່ອປະຕິບັດຕາມສັນຍາທີ່ເວົ້າກັບລູກໄວ້ ພໍ່ຈຶ່ງຈັດແຈງຫາເວລາທີ່ເໝາະສົມໃຫ້ຄື ເພື່ອສ້າງເງື່ອນໄຂໃຫ້ທ້າວຍີ່ໄດ້ມີໂອກາດໄດ້ຢູ່ກັບຜູ້ສາວຕາມໃຈປາຖະໜາ ພໍ່ຈຶ່ງປະກາດປ່າວໃຫ້ບ່າວໄພ່ລາສະດອນໃນເດືອນສອງໃຫ້ເຂົ້າປ່າຫາຟືນກຽມໄວ້ເຮັດບຸນເຂົ້າຈີ່ເດືອນສາມ ແລະໄວ້ໃຊ້ໃນຍາມຝົນ. ກ່ານໄປຫາຟືນສະໄໝກ່ອນ ບ່າວສາວຈະກຽມເຂົ້າປາອາຫານໄປກິນຢູ່ໃນປ່າຢ່າງສະໜຸກສະໜານ ເປັນໂອກາດທີ່ບ່າວສາວຈະໄດ້ກ້ຽວພາລາສີກັນຢ່າງເພີດເພີນ ເປັນໂອກາດດີໃຫ້ທ້າວຍີ່ຈະໄດ້ລົມສາວຕາມໃຈປາຖະໜາ. ເຖິງເດືອນ 3 ພໍ່ແມ່ ແລະຊາວບ້ານຊາວເມືອງກໍ່ຈັດເຮັດບຸນເຂົ້າຈີ່ໃຫຍ່ເທົ່າຄັນນາ ເອົາມັນໝູຫາໄກວສູນນ້ຳອ້ອຍໃຫ້ທ້າວຍ່າໄດ້ເລາະຫຼິ້ນຊິມເຂົ້າຈີ່ຕາມໃຈປາຖະໜາ. ນັບແຕ່

ນັ້ນມາກໍ່ກາຍເປັນບຸນປະເພນີຫາຟືນໃນເດືອນສອງ ແລະເຮັດບຸນເຂົ້າຈີ່ໃນເດືອນສາມສືບຕໍ່ກັນມາຈົນເຖິງປັດຈຸບັນ.

ຜີອເມຍຊາວນາຄູ່ນັ້ນ ກ່ອນສິ້ນສັງຂານໄດ້ຍົກມໍລະດົກໄຮ່ນາ, ງົວຄວາຍໃຫ້ແກ່ທ້າວຍ່າຜູ້ເປັນອ້າຍ ພ້ອມທັງມອບເມືອງໃຫ້ທ້າວຍ່າເປັນຜູ້ປົກຄອງແຜ່ນດິນສືບຕໍ່ມາ ເພາະເຫດຜົນວ່າ ແນວຄິດ ແລະທາງປະຕິບັດຂອງທ້າວຍີ່ຜູ້ເປັນນ້ອງບໍ່ສອດຄ່ອງກັບການສືບມູນສົມບັດ ມັກທ່ຽວຫຼິ້ນນຳຜູ້ສາວ ອັນຈະເປັນທາງໄປສູ່ການເຜົາຜານຊັບສົມບັດ. ດັ່ງນັ້ນ, ພໍ່ແມ່ຈຶ່ງບໍ່ມອບຊັບສົມບັດໃຫ້ຄອບຄອງ (ພໍ່ສຸລິນທອງ ອາຍຸ 70 ປີ).

ທ້າວຍ່າຂຶ້ນປົກຄອງແຜ່ນດິນໃນມື້ 1 ຄ່ຳເດືອນຈຽງ (ຈຽງໝາຍເຖິງແຜ່ນດິນ). ດັ່ງນັ້ນ, ຄົນລາວຈຶ່ງມັກເອີ້ນ ເດືອນຈຽງວ່າ ເດືອນອ້າຍ ຫຼືວ່າເດືອນ 1. ບຸນປະເພນີເດືອນຈຽງມີຄວາມກ່ຽວຂ້ອງກັບຄວາມເຊື່ອຖືຜີ (ພະຍານາກ ແລະພະຍາແຖນ) ເພາະວ່າ ກ່ອນທ້າວຍ່າຈະຂຶ້ນປົກຄອງບ້ານເມືອງກໍຈັດພິທີບູຊາແຜ່ນດິນ ແລະທ້ອງຟ້າ ດ້ວຍການລ້ຽງຟ້າລ້ຽງແຖນ. ສຳລັບບຸນເດືອນ 2 ບໍ່ໄດ້ມີຄວາມ ໝາຍກ່ຽວຂ້ອງກັບຟ້າກັບແຖນ.

ສ່ວນພິທີເດືອນ 3 ເຮັດບຸນເຂົ້າຈີ່ແມ່ນມີຄວາມກ່ຽວຂ້ອງກັບຄວາມເຊື່ອຖືຜີຄື ເມື່ອທ້າວ ຍ່າຕາຍໄປກໍ່ຂຶ້ນໄປຢູ່ເມືອງຟ້າ ເມືອງແຖນ ກາຍເປັນຜີແຖນ ຫຼື ພະຍາແຖນ. ເຖິງລະດູເດືອນ 3 ທຸກໆປີ ກໍຈະລົງເມືອງລຸ່ມ (ເມືອງມະນຸດ) ເພື່ອກິນເຂົ້າຈີ່. ຕາມຄວາມເຊື່ອຂອງຄົນລາວໃນສະໄໝກ່ອນ, ແຜ່ນດິນເປັນຂອງພະຍານາກ, ທ້ອງຟ້າເປັນຂອງພະຍາແຖນ. ເມື່ອພະຍານາກ ແລະພະຍາແຖນພົບກັນຍາມໃດຈະມີຝົນຕົກ. ດັ່ງນັ້ນ, ໃນລະດູເດືອນ 3 ຈະມີຝົນຕົກປີໃໝ່ຄົນລາວເອີ້ນວ່າ "ຝົນຮຳດອກມ່ວງ" ຫຼື "ນ້ຳຢາມທ່າ" ດັ່ງຄຳຜະຫຍາທີ່ວ່າ "ເດືອນ 3 ນ້ຳຢາມທ່າເດືອນ 5 ນ້ຳລາຄອນ".

- ບຸນເດືອນ 4: ປັດຈຸບັນນີ້ຄົນລາວປະຕິບັດແມ່ນບຸນພະເຫວດ ແຕ່ບຸນພະເຫວດເປັນບຸນທີ່ມີເຄົ້າມາຈາກສາສະໜາພຸດ. ໃນສະໄໝບູຮານບຸນເດືອນ 4 ແມ່ນເກັບດອກໄມ້ມາບູຊາຜີ. ຄົນລາວບາງທ້ອງຖິ່ນເອີ້ນວ່າ ບຸນດອກໄມ້, ບາງທ້ອງຖິ່ນກໍ່ເອີ້ນວ່າ ປະເພນີຫຼິ້ນແມ່ນາງມ້ອນ. ປະເພນີນີ້ກ່ຽວຂ້ອງກັບຄວາມເຊື່ອຖືຜີໂດຍສະເພາະ ແຕ່ປະຊາຊົນລາວບໍ່ໄດ້ເຮັດພິທີກຳນີ້ມາເປັນເວລາດົນນານແລ້ວ. ສຳລັບຢູ່ເຂດນອກບໍ່ໄດ້ປະຕິບັດມາປະມານ 10 ກວ່າປີແລ້ວ; ປັດຈຸບັນກໍ່ຫັນມາເຮັດບຸນພະເຫວດ.

- ບຸນເດືອນ 5: ໃນສະໄໝອະດີດເດືອນ 5 ບໍ່ມີບຸນປະເພນີທາງຄວາມເຊື່ອຖືຜີ; ປັດຈຸບັນຄົນລາວນິຍົມເຮັດບຸນປີໃໝ່ລາວເຊິ່ງເປັນສັນຍະລັກຂອງຄວາມເຊື່ອທາງສາສະໜາພຸດ.

- ບຸນເດືອນ 6: ໃນບຸນເດືອນ 6 ມີພິທີກຳທີ່ສຳຄັນຄື ບຸນບັ້ງໄຟ ແລະ ບຸນລ້ຽງຜີປະຈຳບ້ານ. ບຸນລ້ຽງຜີປະຈຳບ້ານ ແລະບຸນບັ້ງໄຟເປັນບຸນປະເພນີດັ້ງເດີມຂອງຄົນລາວ ເຊິ່ງມີຄວາມກ່ຽວຂ້ອງສຳພັນກັບຄວາມເຊື່ອໃນສາສະໜາຜີໂດຍສະເພາະ. ພິທີກຳບຸນເດືອນ 6 ນີ້ມີຄວາມສຳຄັນຕໍ່ກັບການເຮັດນາ ເຊິ່ງຄົນລາວຫຼາຍທ້ອງຖິ່ນໃນປັດຈຸບັນນີ້ຍັງຮັກສາຢູ່.

ປະເພນີການລ້ຽງຜີປະຈຳບ້ານ, ຜີປະຈຳບ້ານແມ່ນຜີບັນພະບຸລຸດຜູ້ສ້າງບ້ານ, ຢູ່ຕາມບ້ານລາວຕ່າງໆສ່ວນຫຼາຍຍັງມີຫໍຜີປະຈຳບ້ານ. ການລ້ຽງຜີປະຈຳບ້ານຈະມີຂຶ້ນໃນໄລຍະຕົ້ນຂອງການເຮັດນາ, ຈັດຂຶ້ນຕາມຫຼັງຂອງບຸນບັ້ງໄຟໂດຍສ່ວຍໃຫຍ່ຈະຈັດຂຶ້ນໄລຍະເດືອນ 7 ອອກໃໝ່ປະມານ 1-9 ຄ່ຳ ໂດຍເລືອກເອົາວັນໃດກໍ່ໄດ້ ແຕ່ຊາວບ້ານນິຍົມຈັດໃສ່ວັນພຸດຈະເປັນການດີ. ພິທີກຳດັ່ງກ່າວນີ້ແມ່ນເພື່ອແກ້ບະ, ສ່ຽງຊະຕາຂອງບ້ານໃນປີນັ້ນ ພ້ອມທັງໄລ່ຜີຮ້າຍ. (ຄຳຜຸຍ ພົນລືຊາ, 2000:148-152). ໄດ້ອະທິບາຍຂັ້ນຕອນ ແລະວິທີເຮັດບຸນລ້ຽງຜີບ້ານວ່າ ຊາວລາວເຊື່ອກັນວ່າເຮັດພິທີນີ້ຜີບ້ານຈະຊ່ວຍຄຸ້ມຄອງໃຫ້ຊີວິດມີຄວາມສຸກ ແລະໂຊກດີຕະຫຼອດຊີວິດ.

ປະເພນີບຸນບັ້ງໄຟ ພິທີກຳບຸນບັ້ງໄຟມີຄວາມກ່ຽວຂ້ອງກັບຄວາມເຊື່ອຖືຜີ (ພະຍານາກ ແລະ ພະຍາແຖນ) ເພາະຈຸດປະສົງຂອງການເຮັດບຸນບັ້ງໄຟແມ່ນເພື່ອຖວາຍພະຍາແຖນ ຂໍຝົນຈາກພະຍາແຖນ ເພື່ອຈະມາເຮັດນາ ດັ່ງກອນເຊີ້ງບຸນບັ້ງໄຟຕອນໜຶ່ງວ່າ:

ບັ້ງໄຟໝື່ນ	ຈູດຂຶ້ນຖວາຍແຖນ
ບັ້ງໄຟແສນ	ຈູດຂຶ້ນຖວາຍຟ້າ
ຝົນບໍ່ຕົກ	ເຂົ້າໄຮ່ຕາຍຄາ
ຝົນບໍ່ມາ	ເຂົ້ານາຕາຍແລ້ງ
ຟົ້ນນາແຫ້ງ	ເຮົາແຮ່ງໂຫຍຫົວ
ຍໍມືນົບ	ນຳອ້ຽແຖນເຖົ້າ
ຜູ້ເປັນເຈົ້າ	ຕົກແຕ່ງຝົນມາ

(ຄຳຜຸຍ ພົນລືຊາ, 2000: 245)

ໃນເວລາຕົກແຕ່ງບັ້ງໄຟ ຊາວລາວໄດ້ນຳເອົາຮູບນາກ ຫຼືພະຍານາກມາຕິດໄວ້ທີ່ຫົວບັ້ງໄຟຊາວລາວເຊື່ອກັນວ່າ ພະຍານາກເປັນຕົວແທນຂອງເຈົ້າແຜ່ນດິນນຳບັ້ງໄຟຂຶ້ນເມືອຖວາຍພະຍາແຖນລາຍລະອຽດຈະໄດ້ກ່າວໄວ້ໃນຂໍ້ຄວາມໝາຍ ແລະໜ້າທີ່ຂອງພະຍານາກ ແລະ ພະຍາແຖນ.

- ເດືອນ 7: ພິທີກຳບູຊາຜີມະເຫສັກຫຼັກເມືອງ. ຕາມຕຳລາສະໄໝບູຮານຂອງນະຄອນຫຼວງພະບາງ ແລະນະຄອນຫຼວງວຽງຈັນພົບວ່າ ໃນເດືອນ 7 ຕ້ອງລ້ຽງຜີມະເຫສັກຫຼັກເມືອງ, ຫູເມືອງ, ຕາເມືອງ, ທ້ຽງເມືອງ. ຜີມະເຫສັກຫຼັກເມືອງທີ່ຊາວນະຄອນຫຼວງພະບາງນັບຖືວ່າ ເປັນຫຼັກເມືອງ, ຫູເມືອງ, ຕາເມືອງນັ້ນມີ ພະຍານາກ 15 ຕະກຸນທີ່ຮັກສາເຂດນ້ຳແດນດິນໃນເຂດທີ່ສຳຄັນ 15 ແຫ່ງຄື 7 ສິບ, 7 ຊຽງ ແລະຫຼັກເມືອງ 1 ແຫ່ງ ລວມເປັນ 15 ແຫ່ງ. ສຳລັບຢູ່ນະຄອນຫຼວງວຽງຈັນຖືສະຖານທີ່ສຳຄັນມີ ສ້າງສອງ, ໜອງສາມ, ຮາມສີ່, ສີ 5 ແລະຫຼັກເມືອງອີກ 1 ລວມເປັນ 15 ແຫ່ງ. ສະຖານທີ່ສຳຄັນຂອງນະຄອນຫຼວງສອງແຫ່ງນີ້ທຸກໆປີແມ່ນຕ້ອງໄດ້ລ້ຽງໃນເດືອນ 7 ອອກໃໝ່ 7 ຄ່ຳ. ສະໄໝກ່ອນສະຖານທີ່ 15 ແຫ່ງນີ້ມີຫໍຜີປະຈຳຢູ່ ແລະຕ້ອງໄດ້ລ້ຽງດ້ວຍເຄື່ອງ 10 ເຊັ່ນ ພາຫວານ 10, ພາອາຫານ 10, ດອກໄມ້ ທູບ ທຽນ ແລະ ຄຳໝາກ ກອກຢາ ແລ້ວນຳໄປໄຫວ້ຜີ ເອີ້ນວ່າ ພິທີກຳລ້ຽງຜີມະເຫສັກຫຼັກເມືອງ (ຄຳຜຸຍ ພົນລືຊາ, 2000:174).

- ເດືອນ 8: ໃນລະບົບຄວາມເຊື່ອຖືຜີເດືອນ 8 ບໍ່ປາກົດມີພິທີກຳອັນໃດ ເພາະເປັນໄລຍະເວລາທີ່ຊຸ້ນຊ້ອງໃນການເຮັດໄຮ່ເຮັດນາ.

- ເດືອນ 9 ດັບ (ມື້ແຮມ 14 ຄ່ຳ ເດືອນ 9), ເດືອນ 10 ເພັ້ງ (ມື້ຂຶ້ນ 15 ຄ່ຳເດືອນ 10) ສອງເດືອນນີ້ເປັນເດືອນທີ່ມີພິທີກຳລ້ຽງຜີພໍ່ຜີແມ່ ແລະຍາດພີ່ນ້ອງທີ່ຕາຍໄປແລ້ວ. ບຸນເດືອນ 9 ເອີ້ນວ່າ ບຸນເຂົ້າປະດັບດິນ, ເດືອນ 10 ເອີ້ນວ່າ ບຸນເຂົ້າສະຫຼາກ. ປະເພນີບຸນເດືອນ 9 (ເຂົ້າປະດັບດິນ) ແລະ ບຸນເດືອນ 10 (ເຂົ້າສະຫຼາກ) ນີ້ ເປັນປະເພນີໃນລະບົບຄວາມເຊື່ອຖືຜີຄື ລ້ຽງຜີພໍ່ຜີແມ່. ຕາມຄວາມເຊື່ອດັ້ງເດີມເຊື່ອວ່າ ໃນເດືອນ 9 ດັບທຸກປີ ພະຍາແຖນຈະເປີດປະຕູໃຫ້ຜີຕ່າງໆໃນເມືອງຟ້າ ເມືອງແຖນໃຫ້ລົງມາໂລກມະນຸດ. ດັ່ງນັ້ນ, ຜູ້ເປັນລູກຫຼານຈະຕ້ອງກຽມອາຫານຫວານຄາວທຸກຊະນິດທີ່ຫາມາໄດ້ ແລ້ວຈັດແຈງຫາພາເຂົ້າໄວ້ຢູ່ກ້ອງຮ້ານຫົ້ງຜີບັນພະບູຫຼຸດ ແລ້ວຈະກ່າວເຊີນຜີພໍ່ແມ່ຍາດພີ່ນ້ອງທີ່ເຮົາຕັ້ງໃຈເຮັດໃຫ້ນັ້ນມາກິນໃນຕອນເຊົ້າຂອງມື້ດັບເດືອນ 9 (ແຮມ 14 ຄ່ຳເດືອນ 9).

ສຳລັບເພັ້ງ 15 ຄ່ຳເດືອນ 10, ຕາມຄວມເຊື່ອຖືຂອງຊາວບ້ານວ່າ ເປັນວັນທີ່ພະຍາແຖນຮັບຂອງຝາກ. ສະນັ້ນ, ອາຫານການກິນເຄື່ອງຂອງທີ່ໄດ້ຕັ້ງໃຈ ເຮັດໃຫ້ພໍ່ແມ່ຍາດພີ່ນ້ອງທີ່ຕາຍໄປແລ້ວ ຕ້ອງທໍ່ ຫຼື ໃສ່ຖົງ ຫຼືພາຖາດຕ່າງໆ ແລ້ວຂຽນສະຫຼາກ (ຂຽນຊື່ຂອງຜູ້ຝາກ ແລະຜູ້ຮັບໃສ່) ແລ້ວຝາກເມືອໃຫ້ພໍ່ແມ່ ແລະຍາດພີ່ນ້ອງທີ່ຕາຍໄປ. ປັດຈຸບັນນີ້ ປະເພນີສ່ວນຫຼາຍໄດ້ກາຍເປັນປະເພນີທາງສາສະໜາ.

- ປະເພນີເດືອນ 11 ແມ່ນປະເພນີຊ່ວງເຮືອ ແລະ ໄຫຼເຮືອໄຟ. ປະເພນີບຸນຊ່ວງເຮືອ ແລະ ໄຫຼເຮືອໄຟເປັນສອງບຸນປະເພນີທີ່ແຕກຕ່າງກັນ ແຕ່ມີຄວາມໝາຍກ່ຽວຂ້ອງກັນຄື ປະເພນີບຸນຊ່ວງເຮືອຈັດຂຶ້ນໃນໄລຍະເດືອນ 10 ເພັ້ງເຖິງເດືອນ 11 ເພັ້ງຂອງທຸກປີ. ແຕ່ເດືອນ 11 ເພັ້ງຈະແມ່ນບຸນຊ່ວງເຮືອມື້ສຸດທ້າຍ ເປັນບຸນຊ່ວງເຮືອລະດັບຊາດ ເຊິ່ງແມ່ນນະຄອນຫຼວງວຽງຈັນເປັນຜູ້ຈັດງານ. ດັ່ງນັ້ນ, ທຸກບ້ານ ແລະເມືອງຕ່າງໆໃນນະຄອນຫຼວງວຽງຈັນ ຕ້ອງຈັດການແຂ່ງຂັນກ່ອນມື້ເພັ້ງເດືອນ 11 ເພື່ອຄັດເລືອກເອົາລຳຊະນະໃນການຊ່ວງເຮືອຂອງແຕ່ລະເມືອງ ມາແຂ່ງຂັນຊະນະເລີດຂັ້ນນະຄອນຫຼວງວຽງຈັນ ໃນມື້ເພັ້ງ 15 ຄ່ຳເດືອນ 11 ແລະຕອນຄ່ຳຂອງມື້ດຽວກັນນີ້ຈະມີການໄຫຼເຮືອໄຟ. ໃນປັດຈຸບັນ, ການຊ່ວງເຮືອຂັ້ນນະຄອນຫຼວງວຽງຈັນຈັດຂຶ້ນໃນມື້ແຮມຄ່ຳໜຶ່ງ ເດືອນສິບເອັດ.

ພິທີກຳຊ່ວງເຮືອ ແລະ ໄຫຼເຮືອໄຟກໍມີຄວາມກ່ຽວຂ້ອງກັບພະຍານາກ ເພາະກ່ອນຈະເອົາເຮືອລົງຊ່ວງ ຈະຕ້ອງຈັດພິທີຄອບຜີເຈົ້າບ້ານ ແລະພະຍານາກເສຍກ່ອນ. ສ່ວນພິທີກຳໄຫຼເຮືອໄຟກໍມີຄວາມກ່ຽວຂອງກັບພະຍານາກ ແລະພະຍາແຖນຄື ຈຸດປະສົງການເຮັດບຸນຊ່ວງເຮືອ ແລະໄຫຼເຮືອໄຟ ແມ່ນເພື່ອບູຊາພະຍານາກ ແລະພະຍາແຖນ ເປັນພິທີກຳຕອບບຸນແທນຄຸນພະຍານາກ ແລະພະຍາແຖນທີ່ໃຫ້ນ້ຳໃນການເຮັດນາ ເຮັດໃຫ້ມີເຂົ້າປາອາຫານອຸດົມສົມບູນ. ພ້ອມກັນນັ້ນກໍຂໍໃຫ້ພະຍານາກ ແລະພະຍາແຖນຊ່ວຍບໍ່ໃຫ້ຝົນຕົກລົງມາຮຳເຂົ້າແກ່ ຂໍໃຫ້ແດດອອກມາ ຕົ້ນເຂົ້າຈະສຸກເຫຼືອງສະໝ່ຳສະເໝີ ແລະເລີ່ມເຂົ້າສູ່ລະດູເກັບກ່ຽວເຂົ້າ; ຖ້າຝົນຕົກມາ ເຂົ້າໃນນາຈະເສຍຫາຍ. ດັ່ງນັ້ນ, ໃນພິທີໄຫຼເຮືອໄຟເພິ່ນຈຶ່ງເຮັດເປັນຮູບນາກ ແລະປ່ອຍພະຍານາກລົງນ້ຳໄປ.

- ພິທີກຳເດືອນ 12 ແມ່ນພິທີກຳໄຫວ້ພະທາດຕ່າງໆ. ຢູ່ວຽງຈັນກໍຈະເປັນພິທີກຳບຸນທາດຫຼວງ. ວັນບຸນດັ່ງກ່າວນີ້ກໍຈະມີຄວາມເຊື່ອຖືຜີເຈືອປົນຢູ່ຄື ກ່ອນຈັດພິທີບຸນທາດຫຼວງ ເຈົ້ານະຄອນຫຼວງວຽງຈັນ ທັງສະໄໝເກົ່າກໍຄືປັດຈຸບັນຕ້ອງເຮັດພິທີກຳຄອບລາຜີມະເຫສັກຫຼັກເມືອງທີ່ສຳຄັນໃນເມືອງ ຫຼືນະຄອນຫຼວງວຽງຈັນເສຍກ່ອນຈຶ່ງສາມາດຈັດພິທີກຳບຸນທາດຫຼວງໄດ້.

ສະຫຼຸບແລ້ວ ລະບົບຄວາມເຊື່ອສາສະໜາຜີເປັນຄວາມເຊື່ອດັ້ງເດີມຂອງຄົນລາວ ເຊິ່ງເລີ່ມມີມາແຕ່ເອລາເທິງນານ. ແມ່ນວ່າໃນບາງໄລຍະປະຫວັດສາດໄດ້ມີການປະກາດລົບລ້າງຄວາມເຊື່ອຖືຜີ ເຊັ່ນ ໃນລັດຊະການຂອງພະເຈົ້າໂພທິສາລະລາດ ພະອົງໄດ້ປະກາດໃຫ້ບ່າວໄພ່ພົນລະເມືອງເລີກນັບຖືຜີຟ້າຜີແຖນ (ສີລາ ວີລະວົງ, 2001:63), ແຕ່ການປະກາດດັ່ງກ່າວນັ້ນກໍບໍ່ໄດ້ຮັບການປະຕິບັດເທົ່າທີ່ຄວນ. ປະຊາຊົນລາວຫຼາຍທ້ອງຖິ່ນກໍຍັງຄົງຄວາມເຊື່ອຖືຜີ ເຊິ່ງເປັນຄວາມເຊື່ອດັ້ງເດີມຂອງຕົນໄວ້ຢ່າງໜັກແໜ້ນ. ຢູ່ຕາມບ້ານຍັງມີຫໍຜີປະຈຳບ້ານ ແລະຍັງມີພິທີກຳຕ່າງໆຕາມຮີດ 12 ເດືອນ ໄດ້ຮັບການສືບທອດປະຕິບັດເລື້ອຍມາ. ຄຽງຄູ່ກັນນີ້, ພິທີກຳຕ່າງໆທີ່ກ່ຽວຂ້ອງກັບຊີວິດຂອງຊົນເຜົ່າລາວ ເປັນຕົ້ນວ່າ ການເກີດ, ການແຕ່ງດອງ, ການເຈັບເປັນ, ການຕາຍ ກໍຍັງມີຄວາມກ່ຽວຂ້ອງກັບລະບົບຄວາມເຊື່ອຖືຜີ ແລະຄວາມເຊື່ອຖືຜີນີ້ກໍຍັງຄົງຖືກນຳມາປະສົມກົມກຽວກັບຄວາມເຊື່ອຕ່າງໆທີ່ເຂົ້າມາໃໝ່ ນັ້ນກໍຄືຄວາມເຊື່ອມໃນສາສະໜາພາມ ແລະສາສະໜາພຸດ.

4 ຄວາມໝາຍ ແລະໜ້າທີ່ຂອງພະຍານາກແລະພະຍາແຖນ ໃນລະບົບຄວາມເຊື່ອຖືຜີຂອງຊົນເຜົ່າລາວ

4.1 ຄວາມໝາຍຂອງພະຍານາກ ແລະພະຍາແຖນ

ຈາກການສຶກສາຄວາມເຊື່ອຖືຜີຂອງຄົນລາວ ໂດຍຜ່ານການບູຊາພະຍານາກ ແລະພະຍາແຖນໃນພິທີກຳຕ່າງໆ ທີ່ຊາວລາວໄດ້ປະຕິບັດກັນມາເຊັ່ນ ພິທີກຳສຳລັບການບາສີສູ່ຂວັນ, ການເກີດ, ການແຕ່ງດອງ, ການຕາຍ ແລະພິທີກຳຕ່າງໆໃນຮີດ 12 ເດືອນ ສາມາດສະຫຼຸບຄວາມໝາຍຂອງພະຍານາກ ແລະພະຍາແຖນໃນລະບົບຄວາມເຊື່ອຖືຜີຂອງຄົນລາວໄດ້ຄື 1) ພະຍານາກໝາຍເຖິງເທພະເຈົ້າປະຈຳແຜ່ນດິນ ແລະນ້ຳ; ສ່ວນພະຍາແຖນໝາຍເຖິງເທພະເຈົ້າປະຈຳທ້ອງຟ້າ; 2) ພະຍານາກໝາຍເຖິງແມ່ຍິງ ແລະຄວາມສັກສິດ; ສ່ວນພະຍາແຖນໝາຍເຖິງຜູ້ຊາຍ ແລະອຳນາດ; 3) ພະຍານາກ ແລະພະຍາແຖນເປັນສັນຍະລັກແຫ່ງການຮ່ວມກຸ່ມຂອງຄົນລາວ ແລະ 4) ພະຍານາກ ແລະພະຍາແຖນໝາຍເຖິງໄພທຳມະຊາດເທິງແຜ່ນດິນ ແລະທ້ອງຟ້າ.

(1) ຄວາມຄິດຄວາມເຊື່ອທີ່ວ່າ ຟ້າ ຫຼື ທ້ອງຟ້າເປັນທີ່ຢູ່ຂອງແຖນ (ພະຍາແຖນ) ແລະແຜ່ນດິນເປັນທີ່ຢູ່ຂອງພະຍານາກ ໂດຍສະເພາະແມ່ນຄວາມຄຶດທີ່ວ່າ ແຜ່ນດິນເປັນທີ່ຢູ່ຂອງພະຍານາກ ຫຼື ພະຍານາກເປັນເຈົ້າແຜ່ນດິນ ແລະນ້ຳນັ້ນ ປັດຈຸບັນໄດ້ຈາງຫາຍໄປຈາກຄວາມຄິດຄວາມເຊື່ອຂອງຄົນລາວແລ້ວ. ຄົນລາວປັດຈຸບັນສ່ວນໃຫຍ່ເຂົ້າໃຈວ່າ ເຈົ້າແຜ່ນດິນ ແລະນ້ຳແມ່ນນາງທໍລະນີ. ແນວໃດກໍຕາມ, ໃນວິຖີຊີວິດຂອງຄົນລາວບາງຢ່າງເຊັ່ນ ຄຳຜະຫຍາ ເປັນຕົ້ນ ຍັງຄົງສະທ້ອນໃຫ້ເຫັນ

ຄວາມເຊື່ອດັ້ງເດີມທີ່ວ່າ ເຈົ້າຂອງແຜ່ນດິນ ແລະນ້ຳຄືພະຍານາກ; ເຈົ້າທ້ອງຟ້າຄືພະຍາແຖນ ດັ່ງຄຳ ຜະຫຍາລຸ່ມນີ້:

ສຸດແຕ່ເງືອກ (ພະຍານາກ) ຢູ່ນ້ຳ ບໍ່ຂ່າງປັນແດນ
ສຸດແຕ່ແຖນ (ພະຍາແຖນ) ຢູ່ຟ້າ ບໍ່ຂ່າງແປງເບ້ຳ
ເຮັດໃຫ້ຂ້ອຍແລະເຈົ້າ ໄດ້ຫ່າງໄກກັນ

ຄຳຜະຫຍາບົດນີ້ສະທ້ອນໃຫ້ເຫັນຄວາມເຊື່ອທີ່ວ່າ ຄົນເຮົາຈະເກີດມາ ຫຼືປ່ຽນແປງໄປແນວໃດ ນັ້ນ ແມ່ນໜ້າທີ່ຂອງພະຍາແຖນເປັນຜູ້ແຕ່ງ; ເມື່ອສ້າງເປັນຄົນສິ່ງມາເມືອງມະນຸດແລ້ວ ແມ່ນໜາທີ ຂອງພະຍານາກເປັນຜູ້ແບ່ງປັນເຂດນ້ຳແດນດິນໃຫ້ຢູ່ອາໄສ. ຄຳຜະຫຍາບົດນີ້ກໍໄດ້ບອກຈະແຈ້ງວ່າ ພື້ນດິນເປັນຂອງພະຍານາກ, ທ້ອງຟ້າເປັນຂອງພະຍາແຖນ. ນອກຈາກນີ້, ໃນການສຶກສາກ່ຽວກັບ ຄວາມເຊື່ອເລື່ອງ ນາກກັບການເຮັດນາ ຂອງ ຄຳຜຽ ພົນລືຊາ (2000: 169~173) ກໍສະຫຼຸບໃຫ້ເຫັນ ວ່າ ພະຍານາກເປັນເຈົ້າແຜ່ນດິນ ແລະ ພະບູລີສີສັດຕະນາກ (ບໍ່ປາກົດປີຈານ, 06.04.14.09.02 ເລື່ອງທີ 14) ໄດ້ອະທິບາຍ ພະຍານາກ 15 ຕະກຸນທີ່ຮັກສາແຜ່ນດິນນະຄອນຫຼວງພະບາງ ກໍສະແດງ ໃຫ້ເຫັນເຊ່ຳດຽວກັນວ່າ ພະຍານາກເປັນເຈົ້າແຜ່ນດິນ.

(2) **ພະຍານາກໝາຍເຖິງແມ່ຍິງ ແລະຄວາມສັກສິດ, ພະຍາແຖນໝາຍເຖິງຜູ້ຊາຍ** ແລະອຳ ນາດ ຢູ່ໃນລະບົບຄວາມເຊື່ອຖືຂອງຄົນລາວ ເຫັນໄດ້ໃນບຸນບັ້ງໄຟ ແລະບຸນໄຫຼເຮືອໄຟ. ສັນຍະລັກທີ່ ຊາວບ້ານເອົາມາປະດັບບັ້ງໄຟ ແລະເຮືອໄຟນັ້ນມີຄວາມໝາຍເຖິງແມ່ຍິງ (ເຈົ້າແຜ່ນດິນ) ເຊິ່ງ ກົງກັນ ຂ້າມກັບພະຍາແຖນ ເຊິ່ງໝາຍເຖິງຜູ້ຊາຍ (ເປັນເຈົ້າທ້ອງຟ້າ). ຕາມຄວາມເຊື່ອດັ້ງເດີມກ່ຽວ ກັບຟ້າ ແລະດິນ (ພະຍານາກ ແລະພະຍາແຖນ) ຂອງຄົນລາວ, ຟ້າແລະດິນ (ພະຍາແຖນແລະພະຍານາກ) ພົບກັນຍາມໃດຈະພາໃຫ້ເກີດມີຝົນຕົກ. ກໍລະນີຝົນຕົກໃນເດືອນສາມຖືວ່າມີສາເຫດມາຈາກ ທ້າວຍ່າ ເຊິ່ງເປັນເຈົ້າຊາວນາລາວສະໄໝກ່ອນ ເມື່ອຕາຍໄປໄດ້ກາຍເປັນຜີແຖນ ຫຼືພະຍາແຖນຢູ່ເທິງຟ້າ; ສ່ວນເມຍຕາຍໄປແລ້ວໄດ້ກາຍເປັນເຈົ້າແຜ່ນດິນ ຫຼືພະຍານາກ. ທ້າວຍ່າມັກກິນເຂົ້າຈີ່. ເມື່ອຮອດ ລະດູເດືອນສາມຂອງທຸກໆປີ, ທ້າວຍ່າຈະລົງມາກິນເຂົ້າຈີ່ທີ່ເມືອງມະນຸດ. ການລົງມາກິນເຂົ້າຈີ່ຂອງ ທ້າວຍ່າເປັນໂອກາດພົບກັນຂອງແຜ່ນດິນ ແລະຟ້າ (ນາກກັບແຖນ)ຈຶ່ງພາມໃຫ້ເກີດມີຝົນຕົກ. ຊາວ ລາວເອີ້ນຝົນເດືອນສາມວ່າ "ນ້ຳຢາມທ່າ" ເຊິ່ງມີໄວ້ເປັນກອນພະຫຍາວ່າ "ເດືອນສາມນ້ຳຢາມທ່າ ເດືອນຫ້ານ້ຳລາຄອນ".

ຄຳວ່າ "ນ້ຳຢາມທ່າ" ບໍ່ພຽງແຕ່ມີຄວາມໝາຍວ່າ ຝົນຕົກເຮັດໃຫ້ນ້ຳເຕັມທ່າເຕັມວັງເທົ່ານັ້ນ ຫາກຍັງມີຄວາມໝາຍເຖິງຄວາມສຳພັນລະຫວ່າງຄູ່ຜົວເມຍອີກດ້ວຍ. ເມື່ອຮູ້ ແລະ/ຫຼືເຫັນຄູ່ຄອງຂອງ ໝູ່ຄູ່ທີ່ໃກ້ຊິດສະໜິດສະໜົມຂອງຕົນມາຢາມຄອບຄົວ ຫຼັງຈາກທີ່ໄປເຮັດວຽກຢູ່ບ່ອນອື່ນ ກໍມັກຈະທັກ ວ່າ "ມາຢາມນ້ຳຢາມທ່ານໍ". ໃນຄວາມຄຶດຂອງຊາວລາວບູຮານຖືວ່າ ພະຍານາກ ແລະພະຍາແຖນ (ແຜ່ນດິນແລະທ້ອງຟ້າ) ເປັນຜົວເມຍກັນ. ສາຍຝົນໄດ້ກາຍເປັນສື່ສຳພັນລະຫວ່າງດິນແລະຟ້າ.

ສະຫຼຸບວ່າ ສັນຍະລັກນາກໃນພິທີກຳບຸນບັ້ງໄຟມີຄວາມໝາຍເຖິງແມ່ຍິງ ແລະສິ່ງສັກສິດ ເຊິ່ງເປັນແຫຼ່ງທີ່ໃຫ້ກຳເນີດນ້ຳ. ກົງກັນຂ້າມ, ພະຍາແຖນໝາຍເຖິງຜູ້ຊາຍ ເຊິ່ງເປັນຜູ້ມີພະລັງອຳນາດສາມາດສ້າງນ້ຳໃຫ້ເປັນຝົນຕົກລົງມາ. ໝາຍຄວາມວ່າ ຝົນທີ່ຕົກລົງມາຈາກຟ້າເປັນນ້ຳນັ້ນໄດ້ມາຈາກແຜ່ນດິນ. ຍ້ອນແນວນັ້ນ, ການເອົາສັນຍະລັກນາກມາໃສ່ບັ້ງໄຟມີຈຸດປະສົງເພື່ອເຊື່ອມຕໍ່ໃຫ້ແຜ່ນດິນ ແລະທ້ອງຟ້າ (ພະຍານາກ ແລະພະຍາແຖນ)ໄດ້ພົບກັນ ເພື່ອຈະໃຫ້ຝົນຕົກລົງມາຖືກຕ້ອງຕາມລະດູການ ເພາະນ້ຳຝົນເປັນປັດໄຈສຳຄັນໃນການເຮັດນາ.

ສະເພາະບຸນໄຫຼເຮືອໄຟ, ຊາວລາວໄດ້ເອົາສັນຍະລັກນາກມາໃຊ້ເປັນເຄື່ອງປະກອບ. ຈຸດປະສົງຂອງການກະທຳເຊັ່ນນັ້ນກໍເພື່ອ ແຍກພະຍານາກກັລພະຍາແຖນ (ແຜ່ນດິນແລະທ້ອງຟ້າ) ອອກຈາກກັນ ໂດຍເອົາສັນຍະລັກນາກປ່ອຍລົງແມ່ນ້ຳ. ນີ້ສະທ້ອນໃຫ້ເຫັນວ່າ ຊາວບ້ານບໍ່ຕ້ອງການຝົນ, ຕ້ອງການແດດຈຶ່ງແຍກພະຍານາກອອກຈາກພະຍາແຖນ. ພະຍານາກໝາຍເຖິງແມ່ຍິງ ແລະຄວາມສັກສິດ, ພະຍາແຖນໝາຍເຖິງຜູ້ຊາຍ ແລະອຳນາດ; ຄຳຜູນ ພົນລືຊາ (2000: 175~181) ໄດ້ອະທິບາຍໃຫ້ເຫັນຄວາມເຊື່ອດັ່ງກ່າວວ່າ ຊາວລາວເຊື່ອແມ່ຍິງເປັນສິ່ງສັກສິດ; ນ້ຳທີ່ໃຫຍ່ເອີ້ນ ແມ່ນ້ຳ, ຜູ້ບັນຊາກອງທັບທີ່ໃຫຍ່ມີຄວາມສາມາດເອີ້ນ ແມ່ທັບ; ນອກຈາກນີ້, ຍັງມີຄວາມນິຍົມເຮັດຮູບອະໄວຍະວະເພດຍິງໃສ່ໃນເຄື່ອງມືຕ່າງໆເຊັ່ນ ຈຽງໜ້າ ເປັນຕົ້ນ.

(3) ພະຍານາກ ແລະພະຍາແຖນລ້ວນແຕ່ເປັນສັນຍະລັກຮ່ວມກຸ່ມຂອງສັງຄົມລາວ ແຕ່ເມື່ອສຶກສາລົງເລິກຊ້ຳພັດເຫັນວ່າ ສັນຍະລັກນາກມີຄວາມກ່ຽວຂ້ອງສຳພັນກັບຄົນລາວຢ່າງເຫັນໄດ້ຈະແຈ້ງ. ນີ້ອາດເກີດມາຈາກວ່າ ພະຍານາກເປັນເຈົ້າແຜ່ນດິນ ເຊິ່ງຢູ່ໃກ້ຊິດກັບວິຖີຊີວິດຂອງຂອງລາວຫຼາຍກວ່າ. ຕາມພົງສາວະດານ ຫຼືຕຳນານຕ່າງໆກ່ຽວກັບລາວໄດ້ຍົກໃຫ້ເຫັນວ່າ ເມືອງຕ່າງໆທີ່ຄົນລາວອາໄສຢູ່ລ້ວນແຕ່ມີຊື່ກ່ຽວຂ້ອງກັບນາກ (ຄຳຜຽ ພົນລືຊາ, 2000: 182~194) ເຊັ່ນ ເມືອງລຸງ, ເມືອງປາ, ເມືອງງ້ຽວ ໃນເຂດເສສວນອັນເປັນດິນແດນຂອງຈີນປັດຈຸບັນ. ການສ້າງອານາຈັກ ຫຼືເມືອງທີ່ໃຫຍ່ເຊັ່ນ ອານາຈັກໜອງແສ, ອານາຈັກແຖນ, ເມືອງຊວາ (ຫຼວງພະບາງ) ແລະເມືອງວຽງຈັນ ກໍລ້ວນແລ້ວແຕ່ມີເລື່ອງກ່ຽວຂ້ອງກັບ "ນາກ" ທັງໝົດ. ເບິ່ງຄືກັບວ່າ ພະຍານາກເປັນເຈົ້າແຜ່ນດິນທີ່ຄົນລາວອາໄສຢູ່ ແລະຜູກພັນກັບຄົນລາວຢ່າງສະໜິດແໜ້ນ. ສະເພາະຄົນລາວເອງກໍເຊື່ອວ່າ ຕົນເອງສືບເຊື້ອສາຍມາຈາກ "ນາກ" ແລະພ້ອມກັນນິຍົມນັບຖືນາກ ທັງຍັງມີການນຳເອົາ "ນາກ" ມາເປັນການຈຳຊາດໃນສະໄໝອານາຈັກລ້ານຊ້າງ.

ນາກເປັນສັນຍະລັກຮ່ວມກຸ່ມຂອງຄົນລາວ ຍັງປາກົດອອກໃນຄວາມເຄົາລົບ ແລະນັບຖືກະສັດລາວຜູ້ມີຊື່ສຽງໃນປະຫວັດສາດເຊັ່ນ ເຈົ້າຟ້າງຸ່ມມະຫາລາດ ແລະເຈົ້າໄຊຍະເຊດຖາທິລາດ ເປັນຕົ້ນ. ເລື່ອງທີ່ກ່ຽວຂ້ອງກັບຊີວະປະຫວັດຂອງກະສັດລາວທັງສອງພະອົງນີ້ ບໍ່ພຽງແຕ່ມີຢູ່ໃນປະຫວັດສາດ ແລະພົງສາວະດານເທົ່ານັ້ນ ຫາກຍັງເປັນເລື່ອງທີ່ຊາວລາວຮູ້ຈັກດີ ແລະເລົ່າສືບຕໍ່ກັນມາເຖິງປັດຈຸບັນ. ທັງນີ້ກໍເພາະວ່າ ທ່ານທັງສອງນີ້ເປັນຜູ້ມີຄວາມສາມາດສະຫຼາດແຫຼມຄົມ. ເຈົ້າຟ້າງຸ່ມມະຫາລາດເປັນຜູ້ທ້ອນໂຮມຫົວເມືອງລາວເປັນອານາຈັກລາວລ້ານຊ້າງເອກະພາບ. ສ່ວນເຈົ້າໄຊຍະເຊດຖາທິລາດກໍ

ເປັນກະສັດທີ່ມີຄວາມສະຫຼາດ ປົກຄອງສອງອານາຈັກຄື ອານາຈັກລ້ານນາ ແລະອານາຈັກລ້ານຊ້າງ. ພ້ອມດຽວກັນນີ້, ພະອົງຍັງໄດ້ຍ້ານນະຄອນຫຼວງຂອງອານາຈັກລ້ານຊ້າງ ຈາກຫຼວງພະບາງມາຕັ້ງຢູ່ ວຽງຈັນອີກດ້ວຍ.

ເຈົ້າຟ້າງຸ່ມມະຫາລາດ ແລະເຈົ້າໄຊຍະເຊດຖາທິລາດປະຕິບັດໜ້າທີ່ສຳຄັນ ແລະມີຊື່ສຽງໂດ່ງ ດັງມາຈາກຫຼາຍສາເຫດ. ໃນນັ້ນ, ຜູ້ສຶກສາເຫັນວ່າ ເຈົ້າຟ້າງຸ່ມເກີດປີມະໂລງ (ປີງໃຫຍ່) ຈ.ສ. 678 (ພ.ສ. 1859). ຕາມຫຼັກຕຳລາ, ຊາວລາວເຊື່ອວ່າ ຄົນເກີດປີມະໂລງເປັນຄົນໂຊກດີ ມີຄວາມສາມາດ, ເຈລະຈາຫຼັກແຫຼມ, ໃຈບຸນ, ມີຄວາມເມດຕາ, ເຮັດວຽກກ່ຽວກັບການເມືອງ ຫຼືການປົກຄອງດີຫຼາຍ. ເຈົ້າຟ້າງຸ່ມມະຫາລາດເປັນກະສັດລາວເປັນກະສັດລາວໂດຍສາຍເລືອດ ຈຶ່ງໄດ້ຮັບຄວາມເຊື່ອຖື ແລະ ບູຊາຈາກຊາວລາວຟດຍທົ່ວໄປ ອັນໄດ້ເຮັດໃຫ້ພະອົງມີພະລັງອຳນາດທີ່ຍິ່ງໃຫຍ່ ສາມາດທ້ອນໂຮມ ຫົວເມືອງລາວຕ່າງໆເຂົ້າເປັນອານາຈັກລາວລ້ານຊ້າງເອກະພາບໄດ້ຢ່າງສົມບູນ.

ສະເພາະເຈົ້າໄຊຍະເຊດຖາທິລາດ, ແມ່ນວ່າພະອົງບໍ່ໄດ້ເກີດໃນປີມະໂລງກໍຕາມ ແຕ່ພະອົງຊ້ຳ ພັດເກີດໃນເດືອນອ້າຍ ແຮມ 9 ຄ່ຳ ວັນອາທິດ ຈ.ສ. 896 (ພ.ສ. 2077). ຕາມຄວາມເຊື່ອດັ້ງເດີມ, ຄົນລາວຖືວ່າ ເດືອນອ້າຍ ຫຼືເດືອນຈຽງເປັນເດືອນຂອງແຜ່ນດິນ. ຕາມປະເພນີສະໄໝກ່ອນ, ຈະຄ້ຳ ຟ້າຄ້ຳດິນຕ້ອງເຮັດໃນເດືອນ ຈຽງ. ພ້ອມກັນນີ້, ເລກ 9 ກໍເປັນເລກປະຈຳຕົວຂອງພະຍານາກ. ຄົນ ລາວຖືເລກຕົວນີ້ເປັນເລກສັກສິດ ເພາະເມື່ອພະຍານາກໂຕໃດມີຫອນຮອດ 9 ຫອນແລ້ວ ນາກໂຕນັ້ນ ກໍຈະມີລິດເດດຫຼາຍທີ່ສຸດ ສາມາດແປງເພດເປັນຫຍັງກໍໄດ້. ເຈົ້າໄຊຍະເຊດຖາທິລາດເກີດມາໃນມື້ ແລະຍາມທີ່ສັກສິດ ຈຶ່ງເຮັດໃຫ້ພະອົງມີຄວາມເກັ່ງກ້າສາມາດເປັນພິເສດ ຄອງອານາຈັກໃຫຍ່ສອງ ອານາຈັກຄື ລ້ານນາ ແລະລ້ານຊ້າງ. ອານາຈັກທັ້ງສອງນີ້ຕ່າງກໍຝາກຮ່ອງຮອຍຄວາມຜູກພັນໃກ້ຊິດ ກັນໄວ້ໃນຕຳນານທີ່ເກົ່າແກ່. ການກຳເນີດຂອງອານາຈັກທັ້ງສອງກໍຕິດພັນກັບການຂຸດຄົ້ນແຜ່ນດິນ ແລະສາຍນ້ຳຂອງເງືອກ (ພະຍານາກ) ດັ່ງບົດກອນລຸ່ມນີ້:

ສອງອານາຈັກສັກສິດ — ສອງນາກເນລະມິດເປັນລຳຂອງ
ໜຶ່ງສີສັດຕະນາກອັນຈັນໂລງ — ສອງທຸດຕະນາກໂຍງແຜ່ນດິນ
ຄືສີສັດຕະນາຄະນະທຸດ — ເຂັ່ນຂຸດຄອັດແດນແຜ່ນສິງຫິນ
ເປັນສາຍນ້ຳຕຳນານແລະນະຄອນ — ອັນກະສ່ອນເລືອງລືຊື່ລ້ານຊ້າງ
ບັງເກີດໂຍນິກນາກນະຄອນ — ສິງຫິນວັດບໍ່ອອນວຽງກວ້າງ
ປູ່ເຂົ້າລາວຈົກແຕ່ຜາງກ່ອນ — ຈອບຫີລັນເງິນຍາງສະຫວ່າງວຽງ
ແລສຸວັນນະໂຄມຄຳຕຳນານທ່າ — ເຊື່ອງລ້ານນາລ້ານຊ້າງເປັນຢ່າງຢ່ຽງ
ມີງມະຫາອານາຈັກແຫ່ງວຽງຊຽງ — ຊ່ວຍສະບຽງລ້ຽງຟ້າລ້ຽງແຜ່ນດິນ
ສອງມະຫາອານາຈັກສັກສິດ — ອາລະຍະທຳສຳລິດທັ້ງສາດຕະສິນ

ຫຼໍ່ຫຼອມຍຸກທອງຂອງທໍລະນີນ ຖະເຫຼີງຖິ່ນລ້ານນາລ້ານຊ້າງນິລັນດອນ

(ເນົາວະລັດ ພົງໄພບູນ, ສິລະປະວັດທະນະທຳ, ປີທີ 16, ສະບັບທີ 9 ເດືອນ 7, ພ.ສ. 2538:30)

ຄວາມໝາຍຂອງພະຍານາກທີ່ເປັນຕົວແທນຂອງກຸ່ມຄົນລາວ ຍັງປາກົດອອກຢ່າງຈະແຈ້ງໃນ ບົດກະວີຂອງ ສົມສີ ເດຊາຄຳພູ (2527:30) ດັ່ງລຸ່ມນີ້:

ປຸກໃຫ້ຄົນລາວຄິດຮູ້ ເຫັນໜ້າຄະນິງຫຼັງ
ຄຳວ່າ ນາກ ຄືຫຍັງ ຂໍຕອບເຕັມປາກ
ລາວນີ້ແຫຼະທີ່ເຂົາເອີ້ນວ່າ ນາກ ນາຄະນາໂຄ
ເວົ້າໃຫ້ຖືກຕາມໂຕ ນາໂຄແປວ່າ ຊ້າງ
ຄົນເຂົ້າໃຈສອງຢ່າງ ເປັນທັງຊ້າງທັງງູ
ພວກເຮົາຟັງຊົນຫູ ວ່າວຽງຈັນສີສັດຕະນາກ
ພວກເຮົາເວົ້າຊົນປາກ ວ່າລ້ານຊ້າງຮີ່ມຂາວ

(4) ເງືອກ (ພະຍານາກ) ແລະພະຍາແຖນໝາຍເຖິງໄພທຳມະຊາດໃນແຜ່ນດິນ ແລະທ້ອງຟ້າ. ການດຳເນີນຊີວິດຂອງຄົນລາວໃນອະດີດແມ່ນເພິ່ງພາອາໄສທຳມະຊາດເປັນຫຼັກ. ແມ່ນວ່າທຳມະຊາດໄດ້ເອື້ອອຳນວຍໃຫ້ມະນຸດດຳເນີນຊີວິດດ້ວຍຄວາມຜາສຸກກໍຕາມ, ແຕ່ປາກົດການຫຼາຍຢ່າງຂອງທຳມະຊາດກໍເປັນຕາຢ້ານກົວເຊັ່ນ ຝົນຕົກແຮງ, ລົມແຮງ, ຟ້າຮ້ອງ, ຟ້າຜ່າ ເປັນຕົ້ນ. ປາກົດການເຫຼົ່ານີ້ໄດ້ນາບຂູ່ຊີວິດຂອງຄົນເຮົາ ເຮັດໃຫ້ຄົນເຮົາເກີດຄວາມຢ້ານກົວ ແລ້ວນົບໄຫວ້. ໃນທີ່ສຸດກໍເຂົ້າໃຈວ່າ ມີສິ່ງສັກສິດບັນດານໃຫ້ປາກົດການເຫຼົ່ານັ້ນເກີດ ແລະສິ່ງສັກສິດທີ່ມີອຳນາດເຮັດໄດ້ແນວນັ້ນກໍຄື "ຜີ". ຍິ່ງກວ່ານີ້ຍັງເຊື່ອວ່າ ມະນຸດເຮັດຜິດ ຜີຈຶ່ງລົງໂທດເຊັ່ນ ຖ້າປີໃດຟ້າແລ້ງ (ຝົນບໍ່ຕົກ) ກໍເຊື່ອກັນວ່າ ມີຄົນເຮັດຜິດຮີດ ໃນບ້ານຕ້ອງມີຄົນມານທາງ (ມີລູກກ່ອນແຕ່ງດອງ) ຫຼືວ່າ ຖ້າຝົນຕົກໜັກນ້ຳນອງຫຼາຍ ກໍເຊື່ອວ່າ ງູໃຫຍ່ຢູ່ເທິງພູ ຫຼືພື້ນດິນຈະລົງນ້ຳ ແລ້ວກາຍເປັນເງືອກ ເປັນຕົ້ນ.

ນອກຈາກບັນຫາເທິງນີ້, ການເຈັບເປັນຕ່າງໆ, ມີຄົນຕາຍຍ້ອນພະຍາດ ກໍເຊື່ອກັນວ່າເກີດມາຈາກການກະທຳຜິດຂອງຄົນເຮົາເອງ ແລ້ວຜີລົງໂທດ. ຈາກພິທີກຳຕ່າງໆໃນຮອບປີ, ຈະເຫັນວ່າ ການບູຊາຜີສ່ວນຫຼາຍຈະຈັດຂຶ້ນໃນໄລຍະເດືອນ 6~7 ແລະໄລຍະເດືອນ 10~11 ເຊິ່ງໄລຍະນີ້ແມ່ນຕອນທີ່ມີການປ່ຽນແປງຂອງດິນຟ້າອາກາດ. ໄລຍະເດືອນ 6~7 ແມ່ນໄລຍະເວລາປ່ຽນຈາກລະດູແລ້ງເຂົ້າສູ່ລະດູຝົນ ແລະໄລຍະເດືອນ 10~11 ແມ່ນໄລຍະເວລາປ່ຽນຈາກລະດູ ຝົນເຂົ້າສູ່ລະດູແລ້ງ. ໂດຍທົ່ວໄປ, ເມື່ອມີການປ່ຽນແປງຂອງດິນຟ້າອາກາດ ກໍຈະມີຜົນກະທົບຕໍ່ສຸຂະພາບຂອງຄົນ ແລະສັດຕະຫຼອດຮອດສິ່ງທີ່ມີຊີວິດ ແລະບໍ່ມີຊີວິດທັງໝົດ; ຄົນ ແລະສິ່ງທີ່ມີຊີວິດເຈັບເປັນລົ້ມຕາຍ. ຕາມຄວາມເຊື່ອຖືຜີກໍບອກວ່າ ແມ່ນຜີເປັນຜູ້ເຮັດໃຫ້ເກີດໃຫ້ເປັນ ຈຶ່ງມີພິທີກຳບູຊາຜີເກີດຂຶ້ນ ເພື່ອວິງວອນນົບໄຫວ້ຂໍຊີວິດອິນຊີ ພ້ອມທັງໄລ່ຜີຮ້າຍອອກຈາກບ້ານ. ກໍລະນີຮອດຍາມຝົນ ແຕ່ບໍ່ມີຝົນ (ຝົນບໍ່ຕົກ) ກໍມີພິທີກຳເພື່ອຂໍຝົນ ເພາະເຊື່ອກັນວ່າ ໄພຕ່າງໆທາງທຳມະຊາດແມ່ນເກີດມາຈາດອຳນາດຂອງຜີ.

4.2 ໜ້າທີ່ຂອງພະຍານາກ ແລະພະຍາແຖນ

ຈາກການອະທິບາຍຄວາມໝາຍຂອງພະຍານາກ ແລະພະຍາແຖນທີ່ຜ່ານມານັ້ນ ສາມາດ ສະຫຼຸບໜ້າທີ່ຂອງພະຍານາກ ແລະພະຍາແຖນໃນລະບົບຄວາມເຊື່ອຖືຜີຂອງຊົນເຜົ່າລາວໄດ້ດັ່ງນີ້:

- ພະຍານາກ (ເງືອກ) ມີໜ້າທີ່ຮັກສາແຜ່ນດິນ ແລະນ້ຳ; ສ່ວນພະຍາແຖນມີໜ້າທີ່ຮັກສາ ທ້ອງຟ້າ.
- ພະຍານາກ ແລະພະຍາແຖນມີໜ້າທີ່ສ້າງຄວາມເປັນປຶກແຜ່ນແໜ້ນໜາໃຫ້ແກ່ຄົນລາວ ແລະສັງຄົມລາວ.
- ພະຍານາກ ແລະພະຍາແຖນມີໜ້າທີ່ຄວບຄຸມພຶດຕິກຳທີ່ບໍ່ດີຂອງຄົນລາວໃນຄາວອະດີດ ຄື ຖ້າເຮັດຜິດຈະຖືກຜີລົງໂທດ.

ຈາກການອະທິບາຍການພົວພັນລະຫວ່າງວິຖີຊີວິດຂອງຄົນລາວກັບຄວາມເຊື່ອຖືຜີ ໂດຍຜ່ານ ພິທີກຳການບູຊາພະຍານາກ ແລະພະຍາແຖນ ສາມາດສະຫຼຸບໄດ້ວ່າ ເງືອກ (ພະຍານາກ) ແລະຜີ ແຖນ (ພະຍາແຖນ) ເປັນສັນຍະລັກທີ່ເປັນຕົວແທນຂອງຊົນເຜົ່າລາວ. ທັງນາກແລະແຖນໄດ້ກາຍ ເປັນບັນພະບຸລຸດ ຫຼືເທພະເຈົ້າປະຈຳເຜົ່າລາວ ແລະເປັນທີ່ມາຂອງຄວາມເຊື່ອທາງສາສະໜາຜີ ເຊິ່ງ ເປັນຄວາມເຊື່ອ ຫຼືສາສະໜາດັ້ງເດີມຂອງຊົນເຜົ່າລາວ ແລະໄດ້ຜູກພັນກັບວິຖີຊີວິດຂອງຊົນເຜົ່າລາວ ມາເປັນເວລາເທິງນານ.

ຜ່ານໄລຍະປະຫວັດສາດອັນຍາວນານ, ຄົນລາວໄດ້ຮັບເອົາຄວາມເຊື່ອຕ່າງໆເຂົ້າມາເຊັ່ນວ່າ ລະບົບຄວາມເຊື່ອທາງສາສະໜາພາມ ແລະຄວາມເຊື່ອທາງສາສະໜາພຸດ. ສິ່ງເຫຼົ່ານີ້ໄດ້ເຮັດໃຫ້ ລະບົບຄວາມເຊື່ອຖືຜີ ເຊິ່ງເປັນຄວາມເຊື່ອແບບດັ້ງເດີມນັ້ນມີການປັບຕົວປ່ຽນແປງ ໂດຍມີການຮັບ ເອົາປັດຊະຍາຂອງສາສະໜາພາມ ແລະສາສະໜາພຸດປະສົມປະສານເຂົ້າກັບຄວາມເຊື່ອຖືດັ້ງເດີມ

ເອກະສານອ້າງອີງ

ພາສາລາວ

ຄຳ ຈຳປາແກ້ວມະນີ 1973, *ປະຫວັດພຸດທະສາສະໜາໃນລາວ*, ວຽງຈັນ, ສະຖາບັນການສຶກສາພຸດທະສາສະ ໜາ.

ຄຳຜຸຍ ພົນລືຊາ 1991, *ວັນນະຄະດີພື້ນເມືອງລາວ*, ພະແນກວັນນະຄະດີ-ພາສາສາດ, ມະຫາວິທະຍາໄລສ້າງ ຄູວຽງຈັນ.

—— 2000, *ຄວາມເຊື່ອຖືເລື່ອງພະຍານາກກັບການເຮັດນາ*, ວິທະຍານິພົນປະລິນຍາໂທ ພາກວິຊາ ສັງຄົມວິທະຍາການພັດທະນາ ມະຫາວິທະຍາໄລຂອນແກ່ນ.

ສິລາ ວິລະວົງ 1990, *ປະຫວັດແລະຜົນງານ*, ວຽງຈັນ, ໂຮງພິມແຫ່ງລັດ.

—— 2001, *ປະຫວັດສາດລາວ ແຕ່ບູຮານເຖິງ 1945*, ຫໍສະໝຸດແຫ່ງຊາດ.

ສຸເນດ ໂພທິສານ ແລະ ໜູໄຊ ພູມມະຈັນ 2000, *ປະຫວັດສາດລາວດຶກດຳບັນ-ປັດຈຸບັນ*, ກະຊວງຖະແຫຼງ ຂ່າວແລະວັດທະນະທຳ, ໂຮງພິມແຫ່ງລັດ.

ສູນກາງແນວລາວສ້າງຊາດ 2005, *ບັນດາຊົນເຜົ່າໃນ ສ.ປ.ປ.ລາວ*, ກົມຊົນເຜົ່າ, ສູນກາງແນວລາວສ້າງຊາດ.

ສົມສີ ເດຊາຄຳພູ 1984, *ກອນລຳລາວດວງເດືອນ: ບັນນາກາສະດຸ້າພຸ່ງຂຶ້ນສູ່ດວງຈັນ*, ວຽງຈັນ, ສ.ປ.ປ.ລາວ.

ຜົງກ ຈຸນລະມຸນຕີ 1969, *ພຸດທະສາສະນະສຶກສາ*, ວຽງຈັນ, ພຸດທະສາສະໜາໂສກປ່າໝາກ, ໂຮງພິມສົມບູນ ສຸວັນນະວົງ.

ພາສາໄທ

ສານສາຣະທັດ ນາມັນ (ບໍ່ປາກົດປີພິມ), *ຊີວິດໄທຊຸດບູຊາພະຍາແຖນ*, ສຳນັກງານຄະນະກຳມະການ ວັດທະນະທຳແຫ່ງຊາດ, ກະຊວງສຶກສາທິການ.

ສຸເທບ ສູນທອນເພສັດ 1996, *ທິດສະດີສັງຄົມວິທະຍາຮ່ວມສະໄໝ*, ພາກວິຊາສັງຄົມວິທະຍາ ແລະມະນຸດມິ ທະຍາ ຄະນະສັງຄົມສາດ, ມະຫາວິທະຍາໄລຊຽງໃໝ່.

ສຸເມນ ຊຸມສາຍ ນະ ອະຍຸດທະຍາ 1986, *ນ້ຳບໍ່ເກີດແຫ່ງວັດທະນະທຳໄທ*, ກຸງເທບ, ໄທວັດທະນາພານິດ.

ເນົາວະລັກ ພິງໄພບູນ 1985, *ສິລະປະວັດທະນະທຳ*, ວາລະສານປີທີ 16, ສະບັບທີ 9.

ย่อยวัดทะนะทำ

ปะเพนิบาสีสู่ขวัน

ໂดย ธส.ดธ.บุนยံ พิมมะบุด

ปะเพนิสูดขวัน ทลือสู่ขวันแม่นทานเซินขวันมาอยู่เนื้อยู่ถิง,แม่นปะพนิอันดิงาม และถืนลาวเชื่อถือมาแต่บูฮานมะทาน..สะนั้น,ปะเพนิบาสีสู่ขวันจิ่งเป็นที่นิยมชื่มชอบ และแผ่หลายอยู่ในสปปลาว บ่อ่าชิ้นเผ่าใดๆก่ได้ปะติบัดสืบต่ำกันมาย่างต่เนื่อง. ทานจัดพิธีบาสีสู่ขวันเนื่องในโอกาดดั่งต่ลิงไปนี้:

- ผู้นำขึ้นปกครองบ้านเมือง
- เลื่อนชั้นเลื่อนตำแหน่งหน้าที่ใหม่
- แขกผู้มียงดชั้นสูงมาย้ำมยาม
- ส่งท้ายปีเก่า และต้อนรับปีใหม่
- ถืกไปสึกสาร่ำรยนต่ ทลือไปปะติบัดหน้าที่องกางานอยู่ต่างปะเทด
- ชาวหนุ่มสะหมักไปเป็นทะหานพันทะ
- ขึ้นเรือนใหม่
- ออกกำ (ออกคำ)
- งานกินดอง
- หายจากทานเจ็บไข้ได้ป่วย
- พ้นจากอุปะติเหดที่อันตะลายต่ชีวิดอินชี และอื่นๆ

1.จุดปะสงค์ต้นต่ของการบาสีสู่ขวัน:

- เพื่อย้องยໍสันละเสิน และชื่มเชย
- เพื่อรໍถามอยู่ดีมีแรง
- เพื่อให้มีโชกมิลาบ
- เพื่อให้กำลังใจแก่ผู้ถืกสูดข้อม
- เพื่อเต้าโรมถามสามักคี
- เพื่ออะนุลักปกปักรักสา และเสิมขะหยายมูนเชื้อทางด้านมໍละดีกวัดทะนะทำรีดคองปะเพนิอันดิงามให้ถิงอยู่คู่กับชาดลาว และถืนลาวตะหลอดไป.

2.การเลือกมื้เลือกยามในการเร้ดพิธีบาสีสู่ขวัน:

- หาผู้เถ้าผู้แก่เป็นผู้เลือกมื้ดีลีกดี
- ส่วนยามนั้นแม่นตอนเช้าแต่ 10:00 โมง หา 12:00 โมง ตอนลางบ่ให้กาย 16:00 โมง.นี้แม่นละบบอิไน หลือหลักการที่เคียปะติบัดมา.

3.ການຫ້າງຫາກະກຽມເຮັດພິທີບາສີສູ່ຂວັນ:

- ມີພາຂວັນໃຫຍ່ຫຼືນ້ອຍ(ຫຍິບຫມາກເບັ້ງ ແລະຫາດອກໄມ້ມາເຫນັບພາຂວັນໃຫ້ຈົບງາມ.
- ຢູ່ໃນພາຂວັນຈະປະກອບດ້ວຍຝ້າຍຜູກແຂນ,ມີເຂົ້າຕົ້ມເຂົ້າຫນົມວາງໃສ່ຖ້ວຍສີ່ໃບ,ມີຫມາກກ້ວຍ,ດອກໄມ້,ທູບທຽນ,ມີໄຂ່ ແລະໄກ່ຕົ້ມສຸກ 1 ໂຕ.
- ອ້ອມພາຂວັນມີຕີບເຂົ້າ, ເຕົ້ານ້ຳ, ຈອກ,ເຫລົ້າຂາວ1 ແກ້ວ,ຂັນຫ້າ ແລະຄາຍຫມໍພອນ.

4.ສິ່ງປະກອບໃນການວາງຫມາກເບັ້ງພາຂວັນ

- ຂັນ ຫລື ໂອເງິນ ໂອທອງ (ເອົາເຂົ້າສານໃສ່)
- ພາເຂົ້າ ສຳລັບຕັ້ງຂັນຫມາກເບັ້ງ
- ແພຜືນໃຫຍ່ ຫລື ຜ້າພົມໃຊ້ສຳລັບປູພື້ນ

5.ການນຸ່ງຖືຂອງຜູ້ທີ່ຈະຖືການນຳມາສູ່ຂວັນ

- ນຸ່ງເຄື່ອງສຸພາບຮຽບຮ້ອຍ ບໍ່ວ່າຍິງ ຫລືຊາຍ
- ໃສ່ຜ້າບ່ຽງບ້າຍ (ບ່ຽງເຕັ່ງບ່ານ້ຳຊ້າຍ)

6.ການນຸ່ງຖືຂອງຄົນທົ່ວໄປທີ່ເຂົ້າຮ່ວມ

- ນຸ່ງເຄື່ອງສຸພາບ

ເມື່ອຫາໄດ້ລືກງາມຍາມດີແລ້ວ, ເຈົ້າຂອງເຮືອນກໍ່ເລີ່ມບອກເລົ່າຍາດຕິພີ່ນ້ອງ, ຫມູ່ຄູ່, ໄປຫາຫມໍພອນໄວ້ ແລະຕຽມເຂົ້າປາອາຫານໃຫ້ພຽງພໍ. ພໍເຖິງວັນເວລາແລ້ວ ກໍ່ເຊີນຫມໍພອນມາສູດຂວັນຕາມຮີດຄອງປະເພນີ,ສູດຂວັນແລ້ວ ຫມໍ ພອນກໍ່ມັດແຂນໃຫ້ຜູ້ຖືກສູດຂວັນກ່ອນ, ເຈົ້າຂອງເຮືອນ... ຈາກນັ້ນຈຶ່ງແມ່ນຍາດຕິພີ່ນ້ອງຊັ້ນຈຳ ຫລື ແຂກຮັບເຊີນເຂົ້າຮ່ວມກໍ່ທະຍອຍກັນຜູກ,ຂະນະທີ່ຜູກແຂນແຕ່ລະຄົນກໍ່ອວຍໄຊໃຫ້ພອນເຊິ່ງກັນ ແລະກັນ.ເມື່ອຜູກແຂນແລ້ວ,ເຈົ້າພາບກໍ່ເຊີນຜູ້ເຂົ້າຮ່ວມຮັບປະທານອາຫານຕາມອັດທະຍາໄສ ທັງກິນທັງດື່ມໄປພ້ອມໆກັນ.ສະໄຫມປັດຈຸບັນ,ບາງຄອບຄົວ ກໍ່ເອົາດົນຕີມາເສບຟ້ອນລຳວົງສາມັກຄີສົມຄວນແກ່ເວລາແລ້ວ ກໍ່ເລີກລາກັນ. ສູດຂວັນບໍ່ພຽງແຕ່ເຊີນຂວັນມາຢູ່ເນື້ອຢູ່ຄ້ຽທ່ໍນັ້ນ ຍັງແມ່ນການໃຫ້ກຳລັງໃຈແກ່ຜູ້ຖືກສູດຂ້ວນ ແລະພ້ອມດຽວກັນນັ້ນ ກໍ່ຍັງເປັນການເຕົ້າໂຮມຄວາມສາມັກຄີ,ພົບປະສັງສັນລະຫວ່າງເຈົ້າຂອງເຮືອນ ກັບຍາດຕິພີ່ນ້ອງ,ຫມູ່ເພື່ອນ...ນຳອີກ.ຝ້າຍຜູກແຂນເປັນສັນຍະລັກແຫ່ງໄມຕີຈິດ ມິດຕະພາບ, ສາຍສຳພັນ ແລະເປັນຕົວແທນໃຫ້ຈິດສຳນຶກທີ່ຜູກພັນຕໍ່ກັນ.

ເອກະສານອ້າງອີງ

1. ມະຫາສີລາ ວິລະວົງ,ຮີດສິບສອງຂອງລາວ
2. ຄຳຜຸນ ພິລາວົງ, ວັດທະນະທຳລາວ
3. ສຳລິດ ບົວສີສະຫວັດ,ພິທີກຳປະຈຳຊີວິດ
4. ຫນັງສືພິມປະຊາຊົນ
5. ຫນັງສືພິມປະເທດລາວ...

ສື່ມວນຊົນສຶກສາ

ໂດຍ ວຽງຄຳ ບົວຄຳວົງສາ

ໃນປັດຈຸບັນເລື່ອງກ່ຽວກັບຂໍ້ມູນຂ່າວສານເປັນທີ່ຍອມຮັບຂອງສັງຄົມມະນຸດ, ເປັນປັດໄຈທີ່ມີຄວາມສຳຄັນຕໍ່ກັບການດຳລົງຊີວິດການເປັນຢູ່ຂອງມະນຸດສຳລັບການຕັດສິນໃຈໃນການປະກອບອາຊີບ, ການສຶກສາ, ການພັດທະນາເສດຖະກິດ, ການຄ້າຂາຍ, ການບໍລິການ ແລະອື່ນໆ. ຂໍ້ມູນຂ່າວສານກ່ຽວກັບບັນຫາເຫຼົ່ານີ້ເປັນສິ່ງທີ່ທຸກຄົນມີຄວາມຕ້ອງການແລະໄດ້ຊອກສະແຫວງຫາຈາກແຫຼ່ງຂໍ້ມູນຕ່າງໆຈາກບຸກຄົນ, ກຸ່ມຄົນ, ໜ່ວຍງານ, ອົງການ, ສະຖານທີ່ປະຕິບັດວຽກງານຕ່າງໆ ແລະສື່ມວນຊົນ. ສື່ມວນຊົນປະກອບດ້ວຍສື່ສິ່ງພິມເຊັ່ນ: ໜັງສືພິມ ແລະວາລະສານ, ສື່ເອເລັກໂທຣນິກມີ: ວິທະຍຸກະຈາຍສຽງ, ໂທລະພາບ, ອິນເຕີເນັດ, ຮູບເງົາ, ໂທລະສັບ, ໂທລະໂຄ່ງ, ໂທລະເລກ...ສິ່ງເຫຼົ່ານີ້ນັບວ່າເປັນສະຖາບັນໜຶ່ງທີ່ປະກອບຢູ່ໃນສັງຄົມຂອງມະນຸດເຊັ່ນດຽວກັນກັບບຸກ ຄົນຫຼືປະຊາຊົນທົ່ວໄປ.

ສື່ມວນຊົນ ໄດ້ຮັບການພັດທະນາຮູບແບບການນຳສະເໜີຂ່າວສານໃຫ້ມີຄວາມວ່ອງໄວ ທັນກັບເຫດການ ແລະໄດ້ມີການປັບປຸງເນື້ອໃນຂອງຂ່າວໃຫ້ມີຄຸນະພາບດີຂຶ້ນ ໂດຍສະເພາະການຊອກສະແຫວງຫາແຫຼ່ງຂໍ້ມູນ, ການເຈາະເລິກບັນຫາຂອງເຫດການທີ່ເກີດຂຶ້ນໃນແຕ່ລະວັນ ແລະມີການເພີ່ມທະວີບົດວິເຄາະ, ບົດວິຈານ, ບົດໃຫ້ຄວາມຮູ້ທີ່ເປັນປະໂຫຍດ ແລະສາ ລະບັນເທີງຕ່າງໆໃຫ້ມີຄວາມຫຼາກຫຼາຍຂຶ້ນ. ສື່ມວນຊົນມີພາລະບົດບາດທີ່ສຳຄັນຕໍ່ກັບການພັດ ທະນາສັງຄົມຫຼາຍດ້ານ, ເປັນກະບອກສຽງໃຫ້ແກ່ອົງການຈັດຕັ້ງຂອງພັກ, ລັດຖະບານ ແລະສັງຄົມໃນການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ,ລະບຽບກົດໝາຍຂອງລັດ, ສຶກສາອົບຮົມ, ປຸກລະດົມນ້ຳໃຈຮັກຊາດ, ສະໜອງຂໍ້ມູນຂ່າວສານທາງດ້ານການເມືອງ, ເສດຖະກິດ, ສັງຄົມ, ວິທະຍາສາດ, ເທັກໂນໂລຢີ,ສາລະຄວາມຮູ້,ສາລະບັນເທີງໃຫ້ແກ່ສັງຄົມ,ປະກອບສ່ວນຕ້ານປາກົດການຫຍໍ້ທໍ້ໃນສັງຄົມ, ຕ້ານຖ້ອຍທຳນອງບິດເບືອນຄວາມຈິງ, ເປັນເວທີເສີມຂະຫຍາຍປະຊາທິປະໄຕ ແລະສິດເປັນເຈົ້າຂອງປະເທດຊາດຂອງປະຊາຊົນບັນດາເຜົ່າ. ສະນັ້ນ ເພື່ອໃຫ້ມີຄວາມເຂົ້າໃຈກ່ຽວກັບສື່ມວນຊົນ ພວກເຮົາຄວນໄດ້ສຶກສາເຖິງສິ່ງຕ່າງໆດັ່ງຕໍ່ໄປນີ້:

1. **ສື່ມວນຊົນສຶກສາ**

ຄຳວ່າ "ສື່ມວນຊົນສຶກສາ" ໝາຍເຖິງການສຶກສາໃຫ້ມີຄວາມສາມາດໃນການອ່ານສື່ອອກ ແລະຂຽນສື່ໄດ້ຫຼືການຮູ້ໃຫ້ທັນສື່, ໃຫ້ມີຄວາມສຳນຶກຮູ້ໃນການເລືອກຮັບສື່. ແນວຄິດກ່ຽວກັບສື່ມວນຊົນສຶກສາຫຼືການຮູ້ເທົ່າທັນສື່ໃນຄວາມໝາຍທີ່ຮູ້ຈັກກັນຢ່າງຫຼວງຫຼາຍນັ້ນໝາຍເຖິງແນວຄິດທີ່ຈະສົ່ງເສີມການອ່ານສື່ອອກຫຼືສ້າງຄວາມສາມາດໃນການອ່ານສື່ໃຫ້ເຂົ້າໃຈແລະປະເມີນຄຸນຄ່າຂອງສື່, ສາມາດວິເຄາະຂ່າວສານຈາກສື່ປະເພດຕ່າງໆໄດ້. ສ້າງຄວາມສາມາດໃນການຂຽນສື່ ແລະສື່ສານໄດ້,

ສາມາດສະແດງອອກທາງດ້ານຂໍ້ມູນຂ່າວສານ,ຄວາມຄິດເຫັນ,ອາລົມ, ຄວາມຮູ້ສຶກຕ່າງໆໂດຍຜ່ານສື່ຫຼາຍປະເພດ ແລະຫຼາຍຮູບແບບ. ສຶກສາໃຫ້ເຂົ້າໃຈວ່າສື່ມວນຊົນເປັນຜູ້ສ້າງພາບຄວາມຈິງຂຶ້ນມາໄດ້ແນວໃດ. ນອກຈາກນີ້ ສື່ມວນຊົນສຶກສາຍັງມີເປົ້າໝາຍສຳລັບການສົ່ງເສີມການຮຽນຮູ້ຈັກກັບສື່ເພື່ອໃຫ້ມີຄວາມເຂົ້າໃຈ, ສຶກສາເຖິງຄວາມເປັນມະນຸດ ແລະວິຖີຊີວິດການເປັນຢູ່ຂອງຄົນໃນສັງຄົມ, ມີຄວາມຊື່ນຊົມຕໍ່ມໍລະດົກທາງດ້ານວັດທະນະທຳ, ສຶກສາໃຫ້ມີຄວາມສຳນຶກຮູ້ກ່ຽວກັບການຜະລິດສື່.

ສື່ມວນຊົນສຶກສາຫຼືການຮຽນຮູ້ໃຫ້ທັນກັບສື່ນັ້ນເປັນທັກສະທີ່ມີຄວາມສຳຄັນ ແລະຈຳເປັນທີ່ທຸກຄົນໃນຍຸກສະໄໝນີ້ຕ້ອງໄດ້ສຶກສາ, ວິເຄາະ ແລະວິໄຈ. ຍ້ອນວ່າສື່ໄດ້ຄອບຄອງຕຳແໜ່ງໃນໃຈກາງຊີວິດຂອງມະນຸດເກືອບທຸກໆດ້ານ, ສື່ມີອິດທິພົນຕໍ່ສະຖາບັນທາງສັງຄົມມາຕັ້ງແຕ່ດົນນານເຊັ່ນ: ຄອບຄົວ, ໂຮງຮຽນ, ວັດ ແລະສະຖານທີ່ຕ່າງໆ. ທຸກສິ່ງທີ່ເຮົາຮູ້ກ່ຽວກັບໂລກເຊິ່ງຢູ່ຫ່າງໄກເກີນກວ່າປະສົບການຂອງເຮົາຈະສຳຜັດໄດ້ໂດຍກົງລ້ວນແລ້ວແຕ່ແມ່ນການຮັບຮູ້ຜ່ານສື່ທັງນັ້ນ. ສະນັ້ນ ກ່ຽວກັບການສຶກສາກ່ຽວກັບສື່ມວນຊົນເຮົາຈຶ່ງມີຄວາມຈຳເປັນຕ້ອງໄດ້ໝັ່ນເຝິກຝົນ ແລະພັດທະນາທັກສະໃນການອ່ານສື່ໃຫ້ມີຄວາມສາມາດສູງເພື່ອຊ່ວຍໃຫ້ເຮົາເປັນຄົນສະຫຼາດໃນການຮັບສື່, ເປັນນາຍຂອງສື່, ຄວບຄຸມຄວາມຄິດ,ຄວາມເຊື່ອ ແລະພຶດຕິກຳຕ່າງໆທີ່ສອດແຊກມາກັບເນື້ອຫາຂອງສື່ໄດ້. ສຶກສາໃຫ້ມີຄວາມສາມາດໃນການຈຳແນກໂລກແຫ່ງຄວາມຈິງກັບໂລກແຫ່ງຈິນຕະນາການໄດ້ຊັດເຈນຂຶ້ນ.

ທັກສະດັ່ງກ່າວນີ້ ເປັນທັກສະທີ່ຕ້ອງໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ເພາະວ່າ ຮູບແບບ ແລະເນື້ອຫາຂອງສື່ມີການປ່ຽນແປງຕະຫຼອດເວລາ. ເພື່ອຈະເຮັດໃຫ້ຮູ້ທັນສື່ນັ້ນເຮົາຕ້ອງມີຄວາມຮູ້ທີ່ເປັນ "ພື້ນຖານໃນການຄິດ" ໜຶ່ງຊຸດ ແລະມີ "ວັດຖຸດິບ" ທີ່ເປັນຂໍ້ມູນທົ່ວໄປກ່ຽວກັບສື່ ແລະໄດ້ສະສົມມາຈາກປະ ສົບການໃນຊີວິດຈິງເຊັ່ນ: ໂຄງສ້າງຂອງອົງການ, ໃຜເປັນເຈົ້າຂອງ, ການປົກຄອງຂອງລັດ ແລະກົດ ໝາຍ, ຂະບວນການຜະລິດ,ງົບປະມານຈາກການໂຄສະນາທີ່ໝູນວຽນພາຍໃນວົງການຂອງສື່. ສິ່ງເຫຼົ່ານີ້ແມ່ນວັດຖຸດິບສຳລັບຜູ້ທີ່ສຶກສາກ່ຽວກັບສື່ ຖ້າຜູ້ໃດມີວັດຖຸດິບຫຼາຍກໍ່ຍ່ອມມີພື້ນຖານທີ່ດີໃນການວິເຄາະ. ຈາກນັ້ນຈຶ່ງໃຊ້ "ທັກສະ" ຂອງແຕ່ລະຄົນທີ່ມີຢູ່ແລ້ວ ນຳເອົາສານເຫຼົ່ານັ້ນໃສ່ລົງໄປໃນຂອບຂອງຄວາມຮູ້ ແລ້ວໃຊ້ຄວາມຮູ້ນັ້ນເປັນພື້ນຖານໃນການຕີຄວາມໝາຍ, ວິເຄາະສື່ດ້ວຍຫຼາຍແງ່ຫຼາຍມຸມຈາກຫຼາກຫຼາຍມິຕິ.

2. **ຄວາມຄິດຫຼັກຂອງສື່ມວນຊົນສຶກສາ** ໃນການທີ່ຈະຮຽນຮູ້ທັນສື່ຜູ້ຮັບສານ ຫຼືຜູ້ບໍລິໂພກສື່ຄວນມີພື້ນຖານຄວາມຄິດທີ່ເປັນຫຼັກດັ່ງນີ້:

2.1 **ສື່ທຸກຊະນິດເປັນສື່ທີ່ຄົນສ້າງຂຶ້ນ** ຖ້າຕ້ອງການເຂົ້າໃຈສື່ກໍຕ້ອງຮັບຄວາມຈິງວ່າ "ສື່ທຸກຊະນິດເປັນສິ່ງທີ່ຄົນສ້າງຂຶ້ນ". ສື່ບໍ່ແມ່ນແວ່ນສະທ້ອນພາບຄວາມຈິງຕາມທີ່ເປັນຈິງ. ແຕ່ກົງກັນຂ້າມ "ສື່" ແມ່ນຄົນມີຄວາມພະ ຍາຍາມໃຊ້ເທັກນິກທຸກຢ່າງຕາມຂະບວນການຜະລິດມາເຮັດ ເພື່ອເຮັດໃຫ້ຜົນອອກມາເປັນທຳມະຊາດທີ່ສຸດຈົນສາມາດເວົ້າໄດ້ວ່າຄວາມສຳເລັດຂອງສື່ໜຶ່ງໆວັດແທກກັນຢູ່

ທີ່ "ຄວາມສົມ ຈິງ" ເປັນອັນດັບໜຶ່ງ. ດັ່ງນັ້ນການບໍລິໂພກສື່ທີ່ເຮົາມີຄວາມຊຶນເຄີຍມາຕະຫຼອດນັ້ນ ແມ່ນຄວາມຊຳນານທາງດ້ານເທັກນິກຂອງຜູ້ສ້າງສື່, ແມ່ນຜົນຜະລິດຂັ້ນສຸດທ້າຍທີ່ເກີດມາຈາກ ຄວາມຄິດ ແລະການຕັດສິນໃຈຂອງມະນຸດຜູ້ຜະລິດສື່.

2.2 **ສື່ເປັນຜູ້ສ້າງພາບຄວາມຈິງ.** ເຮົາສ້າງພາບຂຶ້ນມາໃນສະໝອງຕາມທີ່ເຮົາໄດ້ເຫັນ ແລະໄດ້ຍິນມາຕັ້ງແຕ່ກຳເນີດ ແຕ່ຍ້ອນວ່າໂລກນີ້ ມີຄວາມກວ້າງໃຫຍ່ໄພສານ ເກີນກວ່າທີ່ເຮົາຈະ ສາມາດເຫັນດ້ວຍຕາຂອງຕົນເອງ, ຄວາມຄິດ, ການອ່ານ, ການຮັບຮູ້, ຄວາມເຂົ້າໃຈຂອງເຮົາຕໍ່ ໂລກ ແລະສິ່ງຕ່າງໆທີ່ເກີດຂຶ້ນໃນໂລກທັງໝົດເປັນການກະທຳຜ່ານສື່ທັງນັ້ນ. ສື່ເປັນຜູ້ຄັດເລືອກ, ຈັດລຳດັບຄວາມສຳຄັນ, ປະເມີນຄຸນຄ່າ ແລະຕີຄວາມໝາຍສິ່ງຕ່າງໆກ່ອນທີ່ຈະສົ່ງມາເຖິງເຮົາ ສ່ວນເຮົາກໍຮັບໄປຕາມຄວາມເຊື່ອ. ຜູ້ທີ່ຮູ້ທັນສື່ຈຶ່ງຄວນຕັ້ງຄຳຖາມກັບສື່ທີ່ເອີ້ນວ່າ "ຄວາມຈິງຜ່ານສື່" ນັ້ນແມ່ນສິ່ງທີ່ເກີດຂຶ້ນຈິງຫຼືບໍ່? ເພື່ອບໍ່ໃຫ້ສື່ສົ່ງອິດທິພົນຕໍ່ທັດສະນະຄະຕິ ແລະຄວາມຄິດຂອງເຮົາ ຫຼາຍເກີນໄປ.

2.3 **ຜູ້ຮັບສານສາມາດປັບປ່ຽນຄວາມໝາຍຂອງສື່** ດັ່ງທີ່ຮູ້ນຳກັນແລ້ວວ່າສື່ບໍ່ແມ່ນຜູ້ສ້າງ " ຄວາມຈິງ" ແຕ່ຝ່າຍດຽວຜູ້ຮັບສານກໍມີສິດເລືອກຕີຄວາມ ໝາຍຂອງສານຈາກສື່ດຽວກັນດ້ວຍ ທັດສະນະທີ່ແຕກຕ່າງກັນ. ແຕ່ລະຄົນຈະໃຊ້ສິດປັບປ່ຽນຄວາມໝາຍຂອງສື່ໂດຍມີປັດໄຈສຳຄັນເປັນ ຕົວກຳນົດເຊັ່ນ: ອາຍຸ, ເພດ, ການສຶກສາ, ຊົນຊັ້ນ, ຊົນຊາດ, ສາສະໜາ, ສັງຄົມ, ພື້ນຖານທາງ ດ້ານຮີດຄອງປະເພນີ, ວັດທະ ນະທຳ, ຄວາມຕ້ອງການ ແລະຄວາມເພິ່ງພໍໃຈສ່ວນຕົວ.

2.4 **ສື່ມີທຸລະກິດແອບແຝງ.** ເຮົາຈະເຂົ້າໃຈສື່ຫຼາຍຂຶ້ນ ເມື່ອເຮົາຄິດສື່ໃນທຸກວັນນີ້ເປັນ ອົງການທາງທຸລະກິດທັງໝົດ. ສື່ທຸກຊະນິດມີໜ້າທີ່ຕ້ອງເຮັດໃຫ້ມີຜົນກຳໄລສູງສຸດກັບອົງການການ ຜະລິດເນື້ອຫາຕ່າງໆຂອງສື່ ແລະຕ້ອງໄດ້ຄຳນຶງເຖິງຈຳນວນຂອງຜູ້ຮັບສານເປັນອັນດັບທີໜຶ່ງ. ອົງການທີ່ຜະລິດສື່ຈະຕີລາຄາສື່ບໍ່ແຕກຕ່າງຫຍັງກັບ "ສິນຄ້າ"ທົ່ວໄປ. ການທີ່ສື່ເປັນທຸລະກິດຈຶ່ງສົ່ງ ຜົນສະທ້ອນຕໍ່ເນື້ອຫາຂອງສານ, ການຜະລິດຕ້ອງໄດ້ໃຊ້ເທັກນິກໃນການຜະລິດ ແລະຈັດຂະບວນ ການຈຳໜ່າຍແຈກຢາຍສື່ອອກໄປທົ່ວສັງຄົມ. ສິ່ງທີ່ເປັນໜ້າສົນໃຈຫຼາຍກວ່ານີ້ ສື່ມີທ່າອ່ຽງທີ່ຈະເປັນ ທຸລະກິດຜູກຂາດຫຼາຍຂຶ້ນ ແລະສົ່ງອິດທິພົນຕໍ່ຜູ້ບໍລິໂພກທົ່ວໂລກ.

2.5 **ສື່ສອດແຊກຄວາມຄິດ, ອຸດົມການຂອງຜູ້ຜະລິດມາກັບເນື້ອຫາຂອງສານ** ສື່ເຮັດໜ້າທີ່ໃນການໂຄສະນາເຜີຍແຜ່ຄ່ານິຍົມ ແລະວິທີການດຳເນີນຊີວິດການເປັນຢູ່ໃຫ້ກັບຄົນໃນ ສັງຄົມມີປະສິດທິພາບຫຼາຍຂຶ້ນ. ໃນສັງຄົມຂອງບັນດາປະເທດທຶນນິຍົມສື່ເຮັດໜ້າທີ່ເປັນກະແສຫຼັກ ໃນການສ້າງຄ່ານິຍົມ. ສະນັ້ນ ຈຶ່ງມີຄວາມກະຕືລືລົ້ນທີ່ຈະຊ່ວຍໃຫ້ນາຍທຶນບໍ ລິໂພກສິນຄ້າຢ່າງຟູມ ເຟືອຍ ແລະບໍ່ມີສາລະໃຫ້ກັບປະຊາຊົນ. ການໂຄສະນາ ເປັນພາບລວງຕາໃຫ້ສິນຄ້າທຳມະດາ ກາຍເປັນຂອງວິເສດ, ສາມາດແກ້ບັນຫາຂອງຜູ້ບໍລິໂພກໄດ້ຢ່າງທັນອົກທັນໃຈ ແລະເປັນກົນໄກ ສ້າງຄວາມໄຝ່ຝັນຂະໜາດໃຫຍ່ທີ່ມີບົດບາດຕໍ່ລະບົບເສດຖະກິດ,ການ ເມືອງ ແລະປະຊາຊົນໃນ ສັງຄົມ.

2.6 ສື່ມີລັກສະນະສັງຄົມ ແລະການເມືອງ ສື່ມອິດທິພົນຕໍ່ການປ່ຽນແປງທາງດ້ານການເມືອງ ແລະສັງຄົມຢ່າງມະຫາສານ. ສື່ຊ່ວຍເສີມກຳລັງໃຫ້ກັບຄ່ານິຍົມທາງສັງຄົມແບບໃໝ່ ແລະສ່ວນຫຼາຍມັກຖືເອົາແບບຢ່າງຈາກປະເທດຕາເວັນຕົກມາເປັນຄ່ານິຍົມທີ່ສັງຄົມຍອມຮັບວ່າແມ່ນສິ່ງທີ່ມີຄວາມຖືກຕ້ອງ. ປັດຈຸບັນສິ່ງດັ່ງກ່າວນີ້ໄດ້ເຮັດໃຫ້ທັດສະນະຄະຕິຕໍ່ຄອບຄົວ, ຕໍ່ຄວາມສຸກໃນຊີວິດ,ຕໍ່ເພື່ອນຕ່າງເພດ,ຕໍ່ວັດທະນະທຳຂອງຊາດໄດ້ມີການປ່ຽນແປງຢ່າງວ່ອງໄວ. ທາງດ້ານການເມືອງສື່ສາມາດສ້າງພາບຂອງຜູ້ນຳໃຫ້ເປັນໜ້າສົນໃຈຢູ່ສະເໝີ. ໃນເວລາດຽວກັນກໍສາມາດເຮັດໃຫ້ບຸກຄົນທີ່ດ້ອຍໂອກາດ ແລະປະເທດດ້ອຍພັດທະນາໃຫ້ຫັນໄປສົນໃຈດ້ານການເມືອງ ແລະສັງຄົມ.

2.7 ສື່ແຕ່ລະປະເພດມີຮູບແບບ, ຂະບົບທຳນຽມ ແລະສຸນທະລີຍະພາບຂອງຕົນເອງ

ມາຣ໌ແຊລ ແມັກ ລູ ຮານ (Marshal Mc Lu Han)ໄດ້ກ່າວວ່າ "ສື່ແມ່ນຕົວສານ" (The medium is the message) -ໝາຍຄວາມວ່າສື່ທຸກຊະນິດມີວິທີການນຳສະເໜີສານເພື່ອສ້າງຄວາມເປັນຈິງໃຫ້ກັບຜູ້ຮັບສານ ແລະມີຄວາມແຕກຕ່າງກັນ ດ້ວຍເລື່ອງຫຼືເຫດການດຽວກັນ.

- ສື່ແຕ່ລະຊະນິດຈະສື່ສານຕ່າງກັນ, ສ້າງຄວາມຮູ້ສຶກທີ່ດີ ແລະມີຄວາມງາມທາງດ້ານສິລະປະທີ່ແຕກຕ່າງກັນໃຫ້ກັບຜູ້ຮັບສານ.

- ຮູບແບບຂອງສື່ກັບເນື້ອຫາຂອງສື່ຈະມີຄວາມກ່ຽວຂ້ອງກັນຢ່າງໃກ້ຊິດ ແລະຮູບແບບຂອງສື່ຈຶ່ງເປັນສ່ວນໜຶ່ງຂອງສານໄປໃນຕົວ.

ແນວຄິດກ່ຽວກັບສື່ມວນຊົນສຶກສາ ໄດ້ຂະຫຍາຍຕົວອອກໄປຢ່າງກວ້າງຂວາງໃນຫຼາຍປະເທດທົ່ວໂລກ ແລະເປັນສ່ວນໜຶ່ງຂອງຂະບວນການເຄື່ອນໄຫວທາງດ້ານວັດທະນະທຳ (Cultural Movement) ທີ່ມີຄວາມສຳຄັນຫຼາຍ. ການຮູ້ເທົ່າທັນສື່ມີຄວາມຈຳເປັນຕ້ອງດຳ ເນີນໄປໃຫ້ກວ້າງຂວາງ ແລະວ່ອງໄວຄຽງຄູ່ໄປກັບການປ່ຽນແປງຂອງເທັກໂນໂລຢີການສື່ສານສະໄໝໃໝ່ ເພື່ອໃຫ້ເຍົາວະຊົນຄົນລຸ້ນໃໝ່ທີ່ເຕີບໂຕທ່າມກາງສິ່ງແວດລ້ອມຂອງການສື່ສານແບບໃໝ່ (Medias cape) ມີທັກສະໃນການວິເຄາະສື່ ແລະການຜະລິດສື່, ມີຄວາມສາມາດໃນການວິຈານ ແລະມີຄວາມກ້າຫານໃນການສະແດງຄວາມຄິດເຫັນຢ່າງອິດສະລະໄດ້.

ສື່ມວນຊົນສຶກສາເຊື່ອວ່າ ຄົນທີ່ພັດທະນາທັກສະການຮຽນຮູ້ສື່ເຖິງລະດັບສູງຈະມີມຸມມອງຕໍ່ສານທີ່ຕົນເອງໄດ້ຮັບກວ້າງຂວາງຂຶ້ນ. ການມີທັກສະຫຼາຍກໍຍິ່ງມີອິດສະລະທີ່ຈະເລືອກຕີຄວາມໝາຍໄດ້ຫຼາຍມິຕິແຕກຕ່າງກັນ ແລະຮູ້ເທົ່າທັນສື່, ສາມາດຄວບຄຸມເນື້ອຫາຂອງສື່ໄດ້ດີ. ຫຼີກເວັ້ນການຮັບໄດ້ຮັບຜົນກະທົບທີ່ບໍ່ເພິ່ງປາຖະໜາ ແລະເລືອກຂະຫຍາຍຜົນກະທົບຕາມຄວາມຕ້ອງການ. ການເປີດຮັບສື່ກໍມີສະຕິ ເຖິງແມ່ນວ່າຈະຍອມຮັບຄວາມໝາຍຕາມທີ່ສື່ສ້າງຂຶ້ນມາໃຫ້ກໍຕາມ ແຕ່ເປັນການຮັບແບບຄົນທີ່ມີຄວາມຮູ້ ແລະໃຊ້ເຫດຜົນພິຈາລະນາທີ່ດີ.

3. ອິດທິພົນ ແລະຜົນກະທົບຂອງສື່ມວນຊົນ

ເປັນສິ່ງທີ່ໄດ້ຮັບຄວາມສົນໃຈຈາກສັງຄົມ, ຂັ້ນນຳ, ລັດຖະບານ, ຜູ້ປົກຄອງຕະຫຼອດເຖິງນັກວິຊາການສາຂາຕ່າງໆຕັ້ງແຕ່ເລີ່ມມີການຜະລິດສື່ໜັງສືພິມ, ສື່ສິ່ງພິມຫຼາຍປະເພດມາຈົນເຖິງສື່

ເອເລັກໂທຣນິກເຊັ່ນ: ຮູບເງົາ(Cinema), ວິທະຍຸກະຈາຍສຽງ, ໂທລະພາບ, ອິນເຕີເນັດ ແລະມັລຕິມີເດຍ (Multimedia).

ໃນປັດຈຸບັນນັກສື່ສານມວນຊົນໄດ້ຄຳນຶງເຖິງອິດທິພົນ ແລະຜົນກະທົບຂອງສື່,ມີຄວາມຮູ້, ຄວາມເຂົ້າໃຈໃນລັກສະນະບວກ ແລະລົບຈາກການປະຕິບັດວຽກງານຂອງສື່ທີ່ມີຕໍ່ຊັ້ນຄົນ, ກຸ່ມຄົນ, ສະຖາບັນທາງສັງຄົມ, ການເມືອງ ແລະວັດທະນະທຳ. ແຕ່ດ້ວຍເຫດວ່າສື່ສານມວນຊົນຜະລິດຂ່າວສານ, ສິ່ງທີ່ເປັນຄວາມຮູ້, ຖ່າຍສິລະປະ, ວັດທະນະທຳ, ຄວາມບັນເທີງ, ການ ໂຄສະນາ ພາຍໃຕ້ປັດໄຈ ແລະຂໍ້ຈຳກັດພາຍໃນ,ພາຍນອກອົງການຫຼາຍປະການຈຶ່ງ ບໍ່ສາມາດຄວບຄຸມຫຼືຈຳກັດອິດທິພົນ ແລະຜົນກະທົບຂອງວຽກງານສື່ສານມວນຊົນໄດ້ດ້ວຍຕົນເອງຕາມລຳພັງ.

ດັ່ງນັ້ນ ສື່ມວນຊົນຈຳນວນຫຼວງຫຼາຍຈະມີຜົນງານທີ່ສ້າງສັນ, ເສີມສ້າງການຮຽນຮູ້ ແລະ ການມີສ່ວນຮ່ວມໃນສັງຄົມ. ແຕ່ກໍມີຈຳນວນບໍ່ໜ້ອຍຖືກຕັ້ງຄຳຖາມ, ມີການກວດກາຈາກສັງຄົມສະເໝີວ່າມີອິດທິພົນ ແລະຜົນກະທົບຢ່າງສູງຕໍ່ທັດສະນະຄະຕິ, ພຶດຕິກຳທາງດ້ານການ ເມືອງ, ສັງຄົມ, ວັດທະນະທຳ ແລະການບໍລິໂພກຂອງສະມາຊິກໃນສັງຄົມ ໂດຍສະເພາະ ມີຜົນກະທົບໃນທາງລົບຕໍ່ແນວຄິດຈິດໃຈຂອງຊັ້ນຄົນ, ເດັກ ແລະເຍົາວະຊົນໃນການຮຽນແບບຫຼືເອົາແບບຢ່າງຂອງບຸກຄົນ ຫຼືການສ້າງຄ່ານິຍົມທາງດ້ານຄວາມຮຸນແຮງ, ແບບຢ່າງທາງເພດທີ່ມີອະຄະຕິ. ນອກຈາກນີ້ກໍຍັງຖືກຫາວ່າເປັນຜູ້ມີອິດທິພົນໃນການກຳນົດລະບຽບຂອງສັງຄົມ, ການສ້າງປະຊາມະຕິ ແລະການສ້າງຄວາມຊອບທຳໃຫ້ແກ່ກຸ່ມອຳນາດທາງດ້ານການເມືອງ.

3.1 ທິດສະດີ, ອິດທິພົນ ແລະຜົນກະທົບຂອງສື່ມວນຊົນ ຖ້າເຮົານຳເອົາຫຼັກຖານການວິໄຈຕ່າງໆມາພິຈາລະນາໄປຕາມລຳດັບເວລາຈະເຫັນວ່າ ຄວາມກ່ຽວຂ້ອງລະຫວ່າງສື່ສານມວນຊົນກັບອິດທິພົນ ແລະຜົນກະທົບຂອງສື່ນັ້ນໄດ້ປ່ຽນແປງ ໄປຕາມປະຫວັດສາດ ແລະເງື່ອນໄຂທາງສັງຄົມຕ່າງໆ. ໃນບາງໄລຍະສັງຄົມເຊື່ອວ່າສື່ມີອິດທິ ພົນກໍ່ໃຫ້ເກີດຜົນກະທົບຢ່າງຫຼວງຫຼາຍແຕ່ບາງໄລຍະຊ້ຳພັດບໍ່ມີອິດທິພົນຕໍ່ສັງຄົມຫຼາຍເທົ່າໃດ. ການປ່ຽນແປງກ່ຽວກັບທັດສະນະຄະຕິຄວາມເຊື່ອເລື່ອງອິດທິພົນ ແລະຜົນກະທົບຂອງສື່ສ່ວນໜຶ່ງເກີດມາຈາກຄວາມເຊື່ອຂອງສັງຄົມ ແລະຜົນກະທົບທີ່ເກີດຂຶ້ນຈິງຈາກການປະຕິບັດວຽກງານຂອງສື່. ຄວາມສຳພັນລະຫວ່າງສື່ມວນຊົນກັບຜົນກະທົບຂອງສື່ບໍ່ໄດ້ມີລັກສະນະເປັນເສັ້ນຊື່ ແຕ່ມີປັດໄຈອື່ນໆເຂົ້າມາສອດແຊກຢູ່ລະຫວ່າງສອງບັນຫານີ້ສະເໝີ.

3.2 ອິດທິພົນຂອງສື່ມວນຊົນພັດທະນາການກ່ຽວກັບການສຶກສາວິໄຈທິດສະດີໃນດ້ານອິດທິພົນແລະຜົນກະທົບຂອງສື່ສານມວນຊົນໃນຕ່າງປະເທດສາມາດແບ່ງອອກເປັນ 5 ຍຸກດັ່ງນີ້:

3.2.1 ຍຸກທີ່ສື່ມີພະລານຸພາບ(ຄ.ສ.1920-1930). ໃນໄລຍະນີ້ເປັນໄລຍະສົງຄາມໂລກຄັ້ງທີ I ບັນດາສື່ຕ່າງໆເຊັ່ນ: ໜັງສືພິມ, ຮູບເງົາ ແລະວິທະຍຸກະຈາຍສຽງ ໄດ້ຖືກນຳເອົາມາໃຊ້ເປັນເຄື່ອງມືເພື່ອການໂຄສະນາຊວນເຊື່ອໃນຢູໂຣບ ຮວມເຖິງປະເທດຣັດເຊຍກໍໄດ້ມີການນຳເອົາສື່ມາ

ເປັນເຄື່ອງມືເພື່ອປະຕິຮູບການປ່ຽນ ແປງໂຄງສ້າງລະບົບການປົກຄອງຂອງສັງຄົມນິຍົມພາຍຫຼັງ ການປະຕິວັດ. ພາຍໃຕ້ການປ່ຽນ ແປງໂຄງສ້າງການປົກຄອງໃນສະໄໝສົງຄາມໂລກເຫັນວ່າສື່ ມວນຊົນມີບົດບາດສູງໃນການປຸກ ລະດົມມວນຊົນ, ສ້າງຄວາມຄິດເຫັນ ແລະຄວາມເຊື່ອ ຮວມທັງ ສາມາດຫຼໍ່ຫຼອມພຶດຕິກຳໃໝ່ໆຕາມຈຸດປະສົງຂອງລັດຖະບານທີ່ຄວບຄຸມສື່ໃໝ່ເຊັ່ນ: ວິທະຍຸ. ວິທີ ການດຳເນີນການໃຊ້ສື່ລັກ ສະນະນີ້ເປັນການໃຊ້ສື່ເພື່ອລ້າງສະໝອງແນໃສ່ການປ່ຽນຄວາມຄິດ ແລະຄວາມ ເຊື່ອທາງດ້ານການເມືອງຂອງບຸກຄົນຈາກແບບໜຶ່ງໄປສູ່ອີກແບບໜຶ່ງ.

ທິດສະດີເຂັ້ມສັກຢາ ເປັນທິດສະດີທີ່ມີຜົນກະທົບຂອງສື່ໄດ້ຮັບການພັດທະນາຂຶ້ນມາໃນຍຸກ ນີ້ ໂດຍມີທັດສະນະວ່າ ສື່ມວນຊົນມີອິດທິພົນໂດຍກົງຕໍ່ຜູ້ຮັບສານ. ເມື່ອສັກຢາຫຼືໃຫ້ຂ່າວສານ ແນວໃດເຂົ້າໄປໃນໂຕຂອງຜູ້ຮັບສານແລ້ວ ກໍຈະມີທັດສະນະຄະຕິ ແລະພຶດຕິກຳ ເໝືອນກັນ ກັບຜູ້ສັກຢາໄດ້ກຳນົດໄວ້. ທິດສະດີນີ້ຖືວ່າຜູ້ຮັບສານເປັນບຸກຄົນທຳມະດາທີ່ຢູ່ໂດດ ດ່ຽວຫຼາຍກວ່າ ເປັນບຸກຄົນທີ່ຢູ່ຮ່ວມກັນເປັນກຸ່ມຫຼືເປັນຊຸມຊົນ ແລະສັງຄົມ. ດັ່ງນັ້ນ ສື່ຈຶ່ງມີອິດ ທິພົນສູງຕໍ່ກັບ ບຸກຄົນແຕ່ລະຄົນໄດ້ງ່າຍ.

ໃນຍຸກນີ້ ເຖິງແມ່ນວ່າສື່ຈະຖືກນຳໃຊ້ເປັນເຄື່ອງມືຫຼັກທາງດ້ານການເມືອງຂອງລັດຖະ ບານ ເພື່ອໂຄສະນາຊວນເຊື່ອກໍຕາມ ແຕ່ກໍຍັງໃຊ້ສື່ໃນລັກສະນະສ້າງສັນຢູ່ ເຊັ່ນ: ການໃຊ້ສື່ເພື່ອການສຶກ ສາ, ການຕໍ່ສູ້ກັບສິ່ງທີ່ເປັນອະຄະຕິໃນສັງຄົມ ແລະເຜີຍແຜ່ຂໍ້ມູນຂ່າວສານສູ່ປະຊາຊົນ.

3.2.2 ຍຸກອຳນາດຂອງສື່ຖືກທ້າທາຍ (ຄ.ສ.1940-1950). ໃນໄລຍະນີ້ອິດທິພົນຂອງສື່ຖື ວ່າບໍ່ມີຜົນກະທົບຕໍ່ເດັກນ້ອຍ ແລະເຍົາວະຊົນໂດຍກົງທາງດ້ານພຶດຕິກຳທີ່ດີ້ດ້ານ ເຮັດໃຫ້ມີການທົບ ທວນສາລະສຳຄັນຂອງທິດສະດີເຂັ້ມສັກຢາຄືນ ໃໝ່ ວ່າຍັງສາມາດນຳເອົາມາໃຊ້ອະທິບາຍເລື່ອງ ຂອງອິດທິພົນ ແລະຜົນກະທົບຂອງສື່ທີ່ມີຕໍ່ສັງຄົມໄດ້ຫຼືບໍ່. ການສຶກສາດັ່ງກ່າວນີ້ເຮັດໃຫ້ມີການ ຈຳແນກຜົນກະທົບໃນລັກສະນະຕ່າງໆທີ່ເປັນປັດໄຈກ່ຳໃຫ້ ເກີດຜົນກະທົບຫຼາກຫຼາຍເຊັ່ນ: ຜົນກະທົບ ລະຫວ່າງສື່ກັບບຸກຄົນ(Personal contract), ສິ່ງ ແວດລ້ອມທາງສັງຄົມ (Social environment) ແລະປະເພດຂອງແຮງຈູງໃຈ (Motive) ໃນການເປີດຮັບສື່ຂອງບຸກຄົນທົ່ວໄປ. ສິ່ງທີ່ໄດ້ກໍຄື ມີພຽງແຕ່ສື່ຢ່າງດຽວບໍ່ສາມາດເຮັດໃຫ້ເກີດຜົນກະທົບຕໍ່ບຸກຄົນທົ່ວໄປໄດ້ ແຕ່ສື່ມີໜ້າທີ່ ເປັນຕົວກາງໃນການປະສານງານປັດໄຈຕ່າງໆເຂົ້າມາຢູ່ດ້ວຍກັນ.

ດັ່ງນັ້ນ ທິດສະດີການນຳຄວາມຄິດ ແລະການສື່ສານທັງສອງຂັ້ນຕອນ ຈຶ່ງໄດ້ຮັບການສະເ ໜີເຂົ້າມາເພື່ອອະທິບາຍຂະບວນການສື່ສານທີ່ມີບຸກຄົນເປັນຜູ້ນຳຄວາມຄິດ, ມີຄວາມເປັນ ໜ້າເຊື່ອ ຖືຂອງກຸ່ມ ແລະເຮັດໜ້າທີ່ໃນການໃຫ້ຂ່າວສານເພີ່ມເຕີມແກ່ສະມາຊິກຂອງຕົນ. ລັກ ສະນະແບບນີ້ ເອີ້ນວ່າການສື່ສານສອງຂັ້ນຕອນ ໂດຍຄົນທົ່ວໄປທີ່ເປັນສະມາຊິກຂອງກຸ່ມຈະບໍ່ໄດ້ຮັບຂໍ້ມູນ ຂ່າວສານໂດຍກົງຈາກສື່ມວນຊົນ ແຕ່ຈະໄດ້ຮັບຈາກຜູ້ທີ່ເປັນຫົວໜ້າກຸ່ມຫຼືຜູ້ທີ່ນຳເອົາຄວາມຄິດມາ ຈາກຫຼາຍແຫຼ່ງພ້ອມທັງເພີ່ມທັດສະນະຄະຕິ ແລະຂໍ້ຄິດເຫັນຂອງຜູ້ນຳຄວາມຄິດລົງໄປໃນຂໍ້ມູນ ຂ່າວສານນັ້ນ. ນອກຈາກນີ້ຍັງມີການສະເໜີທິດສະດີກ່ຽວກັບການເລືອກຮັບຮູ້ ແລະເລືອກຈື່ຈຳຂອງ

ບຸກຄົນທົ່ວໄປທີ່ເຮັດໃຫ້ເກີດມີຄວາມເຂົ້າໃຈເພີ່ມເຕີມວ່າ ຈິດຕະສາດຂອງຄົນແຕ່ລະຄົນຈະເລືອກຮັບເລືອກຈື່ຈຳ ແລະເນັ້ນໄປໃນເລື່ອງທີ່ມີຄວາມສອດຄ່ອງກັບທັດສະນະຄະຕິເດີມທີ່ມີຢູ່ແລ້ວນັ້ນ ຫຼາຍກວ່າຈະເນັ້ນໄປສະແຫວງຫາທັດສະນະຄະຕິໃໝ່ໆທີ່ຂັດແຍ່ງກັບທັດສະນະຄະຕິເດີມຂອງຕົນ.

3.2.3 ຍຸກທີ່ສື່ຟື້ນກັບມາມີອິດທິພົນ (ຄ.ສ.1950-1960). ໃນທົດສະວັດນີ້ເປັນໄລຍະຫຼັງຂອງສົງຄາມໂລກຄັ້ງທີ II ເສດຖະກິດຂອງສະຫະລັດ ອາເມຣິກາໄດ້ມີການຂະຫຍາຍຕົວ ແລະເກີດມີສື່ໃໝ່ຂຶ້ນມາ ເຊັ່ນ: ໂທລະພາບໄດ້ມີບົດບາດໃນສັງຄົມເຮັດໃຫ້ອິດທິພົນ ແລະຜົນກະທົບຂອງສື່ມີການປ່ຽນແປງໄປດ້ວຍ. ໃນໄລຍະນີ້ຍັງໄດ້ ມີການຂະຫຍາຍຕົວຂອບເຂດການສຶກສາກ່ຽວກັບຜົນກະທົບອອກໄປຢ່າງກວ້າງ ຂວາງຫຼາຍຂຶ້ນ ໂດຍສະເພາະການສຶກສາຜົນກະທົບທີ່ມີຕໍ່ການປ່ຽນແປງດ້ານຄວາມຄິດ ແລະຄວາມເຂົ້າ ໃຈເພີ່ມເຕີມຈາກການສຶກສາສະເພາະທັດສະນະຄະຕິ, ຄວາມຮູ້ສຶກເໝືອນໃນຍຸກກ່ອນ ແລະມີການຂະຫຍາຍຄວາມສົນໃຈໄປສູ່ປະເດັນຜົນກະທົບໃນດ້ານຄວາມຄິດເຫັນທົ່ວ ໄປ, ໂຄງສ້າງຄວາມເຊື່ອ, ອຸດົມການ ແລະແບບແຜນທາງດ້ານວັດທະນະທຳ.

ການຂະຫຍາຍປະເດັນການສຶກສາດັ່ງກ່າວ ໄດ້ນຳໄປສູ່ການນຳສະເໜີທິດສະດີໃໝ່ໆທີ່ສະໜັບສະໜູນວ່າ ສື່ມວນຊົນມີອິດທິພົນຕໍ່ບຸກຄົນ ແລະກໍ່ໃຫ້ເກີດຜົນກະທົບທາງດ້ານການ ເມືອງ, ສັງຄົມ ແລະວັດທະນະທຳເຊັ່ນ: ທິດສະດີການຮຽນຮູ້ທາງສັງຄົມ ແລະທິດສະດີການກຳນົດວາລະທາງສັງຄົມ ແລະ ການເມືອງ.

ທິດສະດີການຮຽນຮູ້ທາງສັງຄົມເຊື່ອວ່າເບື້ອງຫຼັງທາງສັງຄົມ, ວັດທະນະທຳ ແລະບົດ ບາດທາງສັງຄົມຂອງບຸກຄົນທົ່ວໄປມີຄວາມສຳຄັນໃນການຮຽນຮູ້ ແລະການພັດທະນາທັດສະ ນະຄະຕິ, ຄ່ານິຍົມ ແລະຄວາມເຊື່ອຂອງບຸກຄົນ. ຂໍ້ມູນຂ່າວສານທີ່ມາຈາກລະບົບສື່ສານມວນຊົນມີຖານະເປັນສ່ວນໜຶ່ງຂອງ ສິ່ງແວດລ້ອມທາງສັງຄົມທີ່ມີອິດທິພົນຕໍ່ບຸກຄົນທົ່ວໄປຈຶ່ງບໍ່ໄດ້ມີຜົນໂດຍກົງຕໍ່ທັດສະນະຄະຕິ ແລພຶດຕິກຳຕາມແງ່ມຸມຂອງທິດສະດີເຂັ້ມສັກຢາ. ແຕ່ບຸກຄົນທົ່ວໄປຈະຮຽນຮູ້ ແລະກັ່ນຕອງຂໍ້ມູນຂ່າວສານທີ່ມາຈາກລະບົບສື່ສານມວນຊົນ. ດັ່ງນັ້ນ ອິດທິພົນ ແລະຜົນກະທົບຈາກສື່ມວນຊົນຈຶ່ງເປັນຜົນກະທົບໄລຍະຍາວຈາກການຮຽນຮູ້ແບບສະສົມປະສົບການ.

ສຳລັບທິດສະດີການກຳນົດວາລະທາງດ້ານສັງຄົມ ແລະການເມືອງ ສື່ມວນຊົນໄດ້ເຕີບໂຕຂຶ້ນມາມີບົດບາດ ແລະມີອຳນາດໃນຕົວເອງ ແລະມີຄວາມແຕກຕ່າງໄປຈາກເມື່ອກ່ອນທີ່ສະຖາບັນດ້ານການເມືອງ, ສາສະໜາຫຼືສັງຄົມອື່ນໆເຂົ້າມາມີອິດທິພົນຢ່າງສູງ. ການປະຕິບັດວຽກງານຂອງສື່ໄດ້ເຮັດໃຫ້ເຫັນແຈ້ງວ່າສາມາດເລືອກສະເໜີປະເດັນຂອງບຸກຄົນຫຼືເລື່ອງຕ່າງ ແລະ ເຮັດໃຫ້ເປັນເລື່ອງທີ່ມີຄວາມສຳຄັນໃນລັກສະນະຂອງການກຳນົດວາລະທາງດ້ານການເມືອງຫຼືສັງຄົມໄດ້.

3.2.4 ຍຸກສື່ມີອິດທິພົນ ແລະຜົນກະທົບໃນວົງກວ້າງ (ຄ.ສ.1970-1980). ທິດສະດີໃນການກຳນົດວາລະທາງສັງຄົມ ແລະການເມືອງໄດ້ຮັບຄວາມສົນໃຈ ແລະມີການສຶກສາວິໄຈຢ່າງກວ້າງຂວາງ. ການຂະຫຍາຍຕົວຂອງສື່ ເຫັນວ່າມີອິດທິພົນເຂົ້າມາຄອບຄອງຊີວິດ ແລະສິ່ງ ແວດລ້ອມຂອງສະມາຊິກໃນສັງຄົມຫຼາຍເກີນໄປ. ນັກວິຊາການສື່ມວນຊົນ ຈອດຣ໌ ເກີຣບ໌ເນີ ໄດ້ໃຫ້

ຄວາມສົນໃຈກ່ຽວກັບເລື່ອງອິດທິພົນ ແລະຜົນກະທົບຂອງສື່ມວນຊົນໄດ້ສະເໜີທິດສະດີການປູກຝັງທາງສັງຄົມ ແລະວັດທະນະທຳວ່າ ສື່ໂທລະພາບມີອິດທິພົນຕໍ່ເຍົາວະຊົນໃນການນຳສະເໜີຂ່າວ ແລະຮູບເງົາທີ່ມີຄວາມຮຸນແຮງຈຳນວນຫຼວງຫຼາຍ. ເຖິງແມ່ນວ່າຜູ້ຮັບຫຼືຜູ້ຊົມຈະບໍ່ໄດ້ຮຽນແບບພຶດຕິກຳຄວາມຮຸນແຮງໂດຍກົງກໍຕາມ ແຕ່ຜົນທີ່ເກີດມາຈາກການເບິ່ງໂທລະພາບທຸກໆວັນນັ້ນກໍເຮັດໃຫ້ສື່ມີອິດທິພົນໃນການປູກຝັງໃຫ້ເດັກ ແລະເຍົາວະຊົນເກີດມີທັດສະນະຄະຕິຄວາມເຊື່ອໃນການໃຊ້ຄວາມຮຸນແຮງ. ນອກຈາກນີ້ກໍຍັງເຮັດໃຫ້ມີຄວາມຮູ້ສຶກວ່າໃນໂລກອ້ອມຕົວເປັນໂລກທີ່ເຕັມໄປດ້ວຍຄວາມຮຸນແຮງນຳໄປສູ່ທັກສະນະຄະຕິທີ່ມີຄວາມຢ້ານກົວ ແລະມີຄວາມແຕກແຍກກັບສັງຄົມຂອງຕົນເອງ.

3.2.5 ຍຸກທີ່ຜູ້ຮັບສື່ມີບົດບາດໃນອຳນາດຂອງສື່ມວນຊົນ (ຄ.ສ.1980-1990). ໃນໄລຍະນີ້ສື່ມີບົດບາດກວ້າງຂວາງແຜ່ຂະຫຍາຍອຳນາດ ແລະອິດທິພົນອອກໄປທົ່ວໂລກແຕ່ ໄດ້ມີການປ່ຽນແປງທິດສະດີເພື່ອໃຫ້ມີຄວາມສົມດູນລະຫວ່າງອິດທິພົນຂອງສື່ກັບອຳ ນາດໃນການໃຊ້ສື່ ແລະຕີຄວາມໝາຍສື່ຂອງຜູ້ຮັບສານ. ການສຶກສາວິໄຈໄດ້ເນັ້ນເຖິງກຸ່ມວັດທະນະທຳທາງສັງຄົມວ່າມີຄວາມສາມາດໃນການໃຊ້ສື່ແນວໃດ ແລະມີການສ້າງຄວາມໝາຍຕາມລັກສະນະເບື້ອງຫຼັງຂອງບົດ ບາດທາງສັງຄົມ ແລະວັດທະນະທຳຂອງກຸ່ມແນວໃດ. ລັກສະນະນີ້ອາດຈະເຮັດໃຫ້ຜູ້ຮັບສານມີຄວາມສາມາດໃນການຕ້ານທານກັບອິດທິພົນ ແລະການຄອບງຳຂອງສື່ແນວໃດ.

4. ທິດສະດີສື່ສານມວນຊົນ

ຄຳວ່າ "ທິດສະດີ" ໝາຍເຖິງການບັນທຶກອະທິບາຍປາກົດການຫຼືສິ່ງຕ່າງໆທີ່ເກີດຂຶ້ນຈິງໂດຍໄດ້ຜ່ານການກວດແກ້ແລ້ວ ແລະຖືກຍອມຮັບກັນແລ້ວຕາມຄວາມເໝາະສົມ. ການສຶກສາທິດສະດີຈະຊ່ວຍກະຕຸ້ນຄວາມຄິດໄປສູ່ການສຶກສາຄົ້ນຄວ້າຕາມຄວາມຈິງໂດຍນຳໃຊ້ວິ ທີການໃໝ່ໆໃນທິດສະດີ ແລະສາມາດກຳນົດວິທີການທົດລອງຫຼືພິສູດທາງດ້ານວິທະຍາສາດ. ສຳລັບ "ທິດສະດີທາງການສື່ສານ" ໝາຍເຖິງການອະທິບາຍກ່ຽວກັບການສື່ສານ ໂດຍອີງໃສ່ທິດສະດີທາງດ້ານວິທະຍາສາດສາຂາວິຊາຕ່າງໆມາໃຊ້ ເຊັ່ນ: ທິດສະດີທາງດ້ານຈິດຕະສາດ, ປັດຊະຍາ, ລັດຖະສາດ, ຄະນິດສາດ ແລະອື່ນໆ. ສະນັ້ນໃນການປະຕິບັດວຽກງານຂອງສື່ມວນຊົນຈຶ່ງດຳເນີນງານຕາມຄວາມຄິດທີ່ຜູກພັນຢ່າງສະໜິດແໜ້ນກັບລະບອບການປົກຄອງຂອງແຕ່ລະປະເທດ.

5. **ລະບົບສື່ສານມວນຊົນ** ການປະຕິບັດວຽກງານສື່ສານມວນຊົນຕັ້ງແຕ່ອາດີດຈົນມາເຖິງປັດຈຸບັນສາມາດຈຳ ແນກລະບົບສື່ສານມວນຊົນອອກເປັນ 4 ລະບົບດັ່ງນີ້:

- ລະບົບສື່ສານມວນຊົນຕາມທິດສະດີອຳນາດນິຍົມ (The authoritarian theory)
- ລະບົບສື່ສານມວນຊົນຕາມທິດສະດີເສລີນິຍົມ (The libertarian theory)
- ລະບົບສື່ສານມວນຊົນຕາມທິດສະດີຄອມມູນິດສ໌ໂຊວຽດ(The Soviet communism theory)

- ລະບົບສື່ສານມວນຊົນຕາມທິດສະດີຄວາມຮັບຜິດຊອບທາງສັງຄົມ (The social responsibility theory)

5.1 ທິດສະດີອຳນາດນິຍົມ ກຳເນີດຂຶ້ນໃນສະໄໝຟື້ນຟູສິລະປະວິທະຍາ (Renaissance) ພາຍຫຼັງທີ່ມີການປະດິດເຄື່ອງພິມໃນລະຫວ່າງສັດຕະວັດທີ XVI-XVII ທີ່ປະເທດອັງກິດ, ຍັງ ມີ ອິດທິພົນຢູ່ຫຼາຍປະເທດໃນປັດຈຸບັນ ແລະຖືວ່າເປັນທິດສະດີທີ່ເກົ່າແກ່ທີ່ສຸດ. ການກຳເນີດທິດສະດີ ນີ້ມີຫຼາຍປັດໄຈເຊັ່ນ:

- ເກີດມາຈາກແນວຄິດທາງດ້ານສາສະໜາ ໂດຍກະສັດມີອຳນາດເດັດຂາດໃນການ ປົກຄອງ. ລັດຖະບານເປັນຕົວແທນຂອງກະສັດ. ປະຊາຊົນຕ້ອງໄດ້ເພິ່ງພາອາໄສລັດຖະບານໃນ ການປະກອບກິດຈະການຕ່າງໆ.

- ເກີດມາຈາກແນວຄິດທາງດ້ານສາສະໜາທີ່ຖືວ່າພະເປັນຜູ້ນຳເອົາຄຳສັ່ງສອນຈາກພະເຈົ້າ ມາສູ່ມະນຸດ ແລະມີໜ້າທີ່ເບິ່ງແຍງໃຫ້ຄຳສັ່ງສອນ.

- ເກີດມາຈາກປັດຊະຍາຂອງເປລໂຕ (Pleto) ເປັນນັກຄິດເລື່ອງທິດສະດີກ່ຽວກັບການ ປົກຄອງຂອງລະບອບອຳນາດນິຍົມຄິດວ່າລັດຖະບານມີຄວາມປອດໄພໄດ້ກໍຕໍ່ເມື່ອມີການຄວບຄຸມ ດ້ວຍອຳນາດແຫ່ງສິນທຳຂອງນັກປາດ ແລະເຈົ້າໜ້າທີ່ການປົກຄອງ. ການໃຊ້ອຳ ນາດນັ້ນໄດ້ຄວບ ຄຸມຊົນຊັ້ນຕ່ຳກວ່າໃຫ້ຢູ່ໃນທາງທີ່ຖືກຕ້ອງ.

5.1.1 ຈຸດປະສົງຫຼັກ

-ເພື່ອເປັນເຄື່ອງມືສະໜັບສະໜູນ ແລະສົ່ງເສີມນະໂຍບາຍຂອງລັດຖະບານທີ່ຢູ່ໃນອຳນາດ.

-ເພື່ອໃຫ້ການບໍລິການແກ່ລັດໃນຮູບແບບການໃຫ້ຂ່າວສານ,ການສຶກສາ ແລະຄວາມບັນ ເທີງ ໂດຍທີ່ບໍ່ແມ່ນກຳມະສິດຂອງລັດສະເໝີໄປ.

5.1.2 ເຈົ້າຂອງສື່ມວນຊົນ. ໃນຍຸກອຳນາດນິຍົມເຈົ້າຂອງສື່ມວນຊົນ ແມ່ນລັດຫຼືເອກະຊົນທີ່ ໄດ້ຮັບການສຳປະທານຈາກກະສັດ ແລະຮັບອະນຸຍາດຕາມເງື່ອນໄຂທີ່ໄດ້ກຳນົດໄວ້.

5.1.3 ການຄວບຄຸມ

- ຕ້ອງມີໜັງສືອະນຸຍາດຈາກລັດຖະບານ ແລະຜູ້ສະໜັບສະໜູນດ້ານສື່ມວນຊົນ.

- ອະນຸຍາດໃຫ້ພິມຈຳໜ່າຍດ້ວຍລະບົບສົ່ງສັນຍານທີ່ມີຄວາມໄວຕໍ່ແສງ (Sensor).

- ຖ້າມີການພິມວິພາກວິຈານທີ່ຂັດຕໍ່ແນວທາງນະໂຍບາຍການເມືອງຂອງລັດກໍຈະຖືກກ່າວ ຫາວ່າເປັນການກະບົດ ຫຼືການກໍ່ຄວາມວຸ້ນວາຍໃນບ້ານເມືອງ ແລະຈະຖືກລົງໂທດຕາມກົດໝາຍ.

5.2 ທິດສະດີເສລີນິຍົມ

ທິດສະດີເສລີນິຍົມໄດ້ກຳເນີດຂຶ້ນໃນປະເທດອັງກິດພາຍຫຼັງທີ່ມີລະບົບລັດຖະສະພາຢູ່ ເໜືອ ພະມະຫາກະສັດໃນປີ ຄ.ສ.1688 ປັດຈຸບັນຍັງນຳໃຊ້ຢູ່ໃນບັນດາປະເທດປະຊາທິປະໄຕ ໂດຍ ສະເພາະປະເທດສະຫະລັດອາເມຣິກາ.

5.2.1 ການກຳເນີດທິດສະດີເສລີນິຍົມ. ປັດໄຈທີ່ເຮັດໃຫ້ເກີດທິດສະດີເສລີນິຍົມມີດັ່ງຕໍ່ໄປນີ້:

- ເກີດມາຈາກແນວຄິດຂອງບຸກຄົນສຳຄັນໄດ້ແກ່ ຈອນ ມິລຕັນ (John Milton ຄ.ສ. 1608-1644) ເປັນນັກປະພັນຂອງອັງກິດ, ຈອນລອຄ໌ (John Locke ຄ.ສ.1632-1704) ນັກປັດຊະຍາດ້ານການເມືອງ ແລະຈອນເອີກສະກິນ (John Erskine 1950-1823) ນັກກົດໝາຍ."

- ເກີດມາຈາກປັດຊະຍາທົ່ວໄປຂອງຍຸກແຫ່ງຄວາມຮູ້ແຈ້ງ.

- ເກີດມາຈາກປັດຊະຍາ ແລະແນວຄິດທີ່ມະນຸດເປັນສັດໂລກທີ່ມີເຫດຜົນ,ສາມາດແຍກສັດຈະອອກຈາກຄວາມບໍ່ຈິງໄດ້ດ້ວຍຕົນເອງວ່າອັນໃດດີ ແລະອັນໃດບໍ່ດີ. ສິດໃນການສະແຫວງຫາສັດຈະນັ້ນຈະບໍ່ໄດ້ມີສະເພາະແຕ່ຜູ້ຢູ່ໃນອຳນາດເທົ່ານັ້ນມະນຸດຕ້ອງ ມີອິດສະລະຈາກການຄວບຄຸມ ແລະຊອກສະແຫວງຫາສັດຈະຈາກຕະຫຼາດເສລີ.

- ເກີດມາຈາກການຈະເລີນເຕີບໂຕຂອງຫຼັກປະຊາທິປະໄຕທາງດ້ານການເມືອງ ແລະການມີບົດບາດຂອງຊົນຊັ້ນກາງ.

- ເກີດມາຈາກການຍອມຮັບທາງດ້ານເສດຖະກິດເສລີນິຍົມ, ມີການຂະຫຍາຍຕົວທາງດ້ານການຄ້າ ແລະການທ່ອງທ່ຽວຢ່າງເສລີ.

- ເກີດການປະຕິຮູບສາສະໜາ ແລະເສລີພາບທາງສາສະໜາ.

5.2.2 ຈຸດປະສົງຫຼັກ

- ເປັນເຄື່ອງມືໃນການປະຕິບັດວຽກງານຂອງລັດຖະບານ ແລະຕອບສະໜອງຮຽກຮ້ອງຕ້ອງການຂອງສັງຄົມ.

- ເພື່ອຊ່ວຍມະນຸດໃນການສະແຫວງຫາສັດຈະທຳໃຫ້ພົບ.

- ເພື່ອແຈ້ງຂ່າວສານ, ໃຫ້ຄວາມບັນເທີງ ແລະການຄ້າ.

5.2.3 ເຈົ້າຂອງສື່ມວນຊົນ

- ເອກະຊົນເປັນເຈົ້າຂອງ ແລະເປັນຜູ້ທີ່ມີຖານະທາງດ້ານການເງິນພຽງພໍໃນການດຳເນີນງານທັງວຽກງານໜັງສືພິມ ແລະຮູບເງົາ. ຖ້າບໍ່ມີທ່າແຮງທາງດ້ານເສດຖະກິດການເງິນກໍບໍ່ສາມາດກ້າວເຂົ້າສູ່ວົງການໄດ້. ສຳລັບວິທະຍຸກະຈາຍສຽງ ແລະໂທລະພາບສ່ວນຫຼາຍຈະແມ່ນລັດຖະບານເປັນເຈົ້າຂອງຫຼືເປັນຮູບແບບຂອງລັດວິສາຫະກິດ ແຕ່ລັດຖະບານເປັນຜູ້ຄວບຄຸມເລື່ອງການຈັດສັນຄື້ນຄວາມຖີ່ໃນການອອກອາກາດ.

5.2.4 ການຄວບຄຸມ. ສື່ມວນຊົນຄວບຄຸມຕົນເອງໂດຍ "ຂະບວນການພິສູດຕົນເອງຂອງສັດຈະ" (Self righting process) ໃນຕະຫຼາດເສລີກ່ຽວກັບຄວາມຄິດເຫັນ (Free market place of ideas) ຄື: ສື່ມວນຊົນມີການແຂ່ງຂັນກັນຢ່າງເສລີ ເພື່ອໃຫ້ສື່ມວນຊົນຂອງຕົນເໜືອນກັນກັບວ່າເປັນຕະ ຫຼາດຂ່າວສານທີ່ເຕັມໄປດ້ວຍຂ່າວ, ຄວາມຄິດ, ຄວາມເຫັນ ແລະອື່ນໆເຮັດປະຊາຊົນສາມາດໃຊ້ການພິຈາລະນາ ແລະມີເຫດຜົນໃນການຕັດສິນດ້ວຍຕົນເອງ.

ຖ້າຫາກວ່າມີການດຳເນີນງານທີ່ມີຄວາມພິດພາດຢ່າງຮ້າຍແຮງກໍຈະໄດ້ປະຕິບັດຕາມຂະບວນການຍຸຕິທຳໂດຍການຕັດສິນຂອງສານ.

5.3 ທິດສະດີຄອມມູນິດໂຊວຽດ. ທິດສະດີຄອມມູນິດໂຊວຽດໄດ້ກຳເນີດຂຶ້ນໃນປີ ຄ.ສ. 1917 ພາຍຫຼັງທີ່ການປະຕິວັດໃນສະຫະພາບໂຊວຽດເມື່ອມີພັກຄອມມູນິດເຂົ້າມາບໍລິຫານປະເທດ ແລະມີການປົກຄອງແບບລະບອບສັງຄົມນິຍົມຄອມມູນິດ. ການນຳໃຊ້ທິດສະດີນີ້ເກີດມາຈາກຄວາມຄິດຂອງລັດທິ ມາກ ຊິສມ໌-ເລນິນິສມ໌ (Markcism-Leninism) ປະສົມປະສານກັບທິດສະດີຂອງ ອັງແກນ (Engel) ແລະຄວາມຄິດຂອງຣັດເຊຍ ໃນສັດຕະວັດທີ XIX.

5.3.1 ຈຸດປະສົງຫຼັກ

- ເປັນເຄື່ອງມືຂອງລັດເພື່ອຊ່ວຍໃນການສ້າງຄວາມສຳເລັດ ແລະການສືບທອດລະ ບອບການປົກຄອງສັງຄົມນິຍົມໂຊວຽດທີ່ເກີດມາຈາກຊົນຊັ້ນກຳມະຊີບ (Working class).

- ການດຳເນີນວຽກງານສື່ມວນຊົນແມ່ນແນໃສ່ການສະເໜີຂ່າວສານ, ຄວາມຄິດເຫັນ ແລະການສຶກສາພາຍໃນຂອບເຂດອຸດົມການສັງຄົມນິຍົມ.

5.3.2 ເຈົ້າຂອງສື່ມວນຊົນ

- ແມ່ນພັກຄອມມູນິດ, ລັດຖະບານ ແລະໜ່ວຍງານສື່ມວນຊົນທີ່ຢູ່ພາຍໃຕ້ການຄວບຄຸມຢ່າງໃກ້ຊິດແລະການເຄື່ອນໄຫວວຽກງານໃນຖານະເປັນສ່ວນໜຶ່ງຂອງລັດຖະບານ.

5.3.3 ການຄວບຄຸມ ແລະຂໍ້ຫ້າມ

- ລັດຖະບານໄດ້ຄວບຄຸມຢ່າງໃກ້ຊິດທັງທາງດ້ານເສດຖະກິດ ແລະການໃຊ້ກຳນົດກົດລະບຽບທາງດ້ານການເມືອງຂອງລັດຖະບານ.

- ຫ້າມວິພາກວິຈານ ແລະເຜີຍແຜ່ຂ່າວສານທີ່ຂັດກັບແນວທາງນະໂຍບາຍທາງດ້ານ ການ ເມືອງຂອງພັກຄອມມູນິດ.

5.4 ທິດສະດີຄວາມຮັບຜິດຊອບຕໍ່ສັງຄົມ. ກຳເນີດຂຶ້ນພາຍຫຼັງສົງຄາມໂລກຄັ້ງທີ II ຫຼືກາງ ສັດຕະວັດທີ XIX ໃນລະຫວ່າງປີຄ.ສ.1940 ແລະໄດ້ພັດທະນາມາຈາກທິດສະດີເສລີນິຍົມ. ສິ່ງທີ່ ເຮັດໃຫ້ເກີດມີທິດສະດີນີ້ໄດ້ມາຈາກບົດຂຽນ ແລະຄວາມຄິດຕ່າງໆດັ່ງຕໍ່ໄປນີ້:

- ຄະນະກຳມາທິການດ້ານສື່ມວນຊົນໄດ້ສຶກສາ ແລະຂຽນບົດລາຍງານ "ເລື່ອງສື່ສານມວນ ຊົນທີ່ມີເສລີພາບ ແລະຄວາມຮັບຜິດຊອບ" (A free responsible press) ຂຶ້ນໃນປີ ຄ.ສ.1947 ຂຽນໂດຍ R. Hutchins ແລະເປັນທີ່ຮູ້ຈັກກັນດີໃນນາມ Hutchins Commission ຂອງ ສະຫະລັດອາເມຣິກາ.

- ວິລລຽມ ອີ.ຮອກຄິງ (William E. Hocking) ໄດ້ສະເໜີຄວາມຄິດໃນປຶ້ມຊື່ "ເສລີພາບ ເປັນສິດ ທາງສິນທຳ" (Freedom of the press: A frame work of principle) ໃນ ສະຫະລັດອາເມຣິກາ ໄດ້ພິຈາລະນາວ່າ "ສື່ມວນຊົນມີຂໍ້ຂາດຕົກບົກຜ່ອງດ້ານຈັນຍາບັນ ແລະ ເສລີພາບ. ດັ່ງນັ້ນ ເສລີ ພາບຈຶ່ງມີພັນທະຜູກພັນຢູ່.

- ຄະນະກຳມາທິການວ່າດ້ວຍການໜັງສືພິມຂອງອັງກິດ (Royal Commission of the press) ໄດ້ສຶກສາບັນຫາການຮວມຕົວກັນຂອງໜັງສືພິມ,ໄດ້ພິຈາລະນາວິທີການຈະປັບ ປຸງການ

ປະຕິບັດວຽກງານຂອງໜັງສືພິມໃນປະເທດໃຫ້ດີຂຶ້ນ ແລະສະເໜີໃຫ້ມີການຈັດຕັ້ງສະພາການໜັງສືພິມ (General Council of the press).

5.4.1 ຈຸດປະສົງຫຼັກ

- ເພື່ອສະໜັບສະໜູນລະບົບການເມືອງດ້ວຍການນຳສະເໜີຂ່າວສານ, ການອະພິປາຍ ແລະໂຕ້ແຍ່ງກ່ຽວກັບກິດຈະກຳຕ່າງໆຂອງສ່ວນລວມ.

- ເພີ່ມພູນສະຕິປັນຍາຂອງປະຊາຊົນເພື່ອໃຫ້ມີຄວາມສາມາດປົກຄອງຕົນເອງ.

- ປົກປ້ອງສິດຕ່າງໆຂອງປະຊາຊົນ, ຜູ້ປະກອບວິຊາຊີບໜັງສືພິມ ດ້ວຍການເຮັດໜ້າທີ່ຂອງລັດຖະບານ.

- ສະໜັບສະໜູນລະບົບເສດຖະກິດໂດຍການຈັດໃຫ້ຜູ້ຊື້ຜູ້ຂາຍສິນຄ້າ ແລະບໍລິການຕ່າງໆ ໄດ້ມາພົບກັນດ້ວຍການໃຊ້ສື່ໃນການໂຄສະນາສິນຄ້າ.

- ເປັນສື່ໃຫ້ຄວາມບັນເທີງທີ່ດີ.

- ຮັກສາທາງດ້ານການເງິນຂອງຕົນໃຫ້ໝັ້ນຄົງເພື່ອບໍ່ໃຫ້ຖືກກົດດັນຈາກບັນດາກຸ່ມຜົນປະໂຫຍດກຸ່ມໃດກຸ່ມໜຶ່ງ.

- ສື່ມວນຊົນຕ້ອງຍອມຮັບພັນທະຄວາມຮັບຜິດຊອບທາງສັງຄົມ.

5.4.2 ເຈົ້າຂອງສື່ມວນຊົນ. ປົກກະຕິແລ້ວສື່ມວນຊົນໃນລະບົບນີ້ແມ່ນເອກະຊົນເປັນເຈົ້າຂອງ ແຕ່ລັດຖະບານສາມາດເຂົ້າມາດຳເນີນງານແທນໄດ້ຖ້າຫາກວ່າເອກະຊົນດຳເນີນງານບໍ່ເໝາະສົມເພື່ອຮັບປະ ກັນການບໍລິການໃຫ້ແກ່ປະຊາຊົນ.

5.2.3 ການຄວບຄຸມ ແລະຂໍ້ຫ້າມ. ການຄວບຄຸມສື່ມວນຊົນປະຕິບັດໄດ້ໂດຍມະຕິຂອງປະຊາຊົນ(Community Opinion), ປະຕິກິລິຍາຂອງຜູ້ບໍລິໂພກ (Consumer action) ແລະຈັນຍາບັນວິຊາຊີບສື່ມວນຊົນ (Professional ethics).

ການຈັດແບ່ງລະບົບສື່ມວນຊົນທັງ 4 ແບບເປັນການໃຫ້ແນວຄິດກ່ຽວກັບລະບົບການສື່ສານມວນຊົນ (Mass media system) ເຊິ່ງໝາຍເຖິງເຄື່ອງມືອຸປະກອນ (Hard ware), ບຸກຄະລາກອນ (Personal) ແລະຮູບແບບການດຳເນີນງານ (Model of operation)ຂອງສື່ມວນຊົນຮວມທັງໜັງສືພິມ, ສິ່ງພິມຕ່າງໆ, ວິທະຍຸກະຈາຍສຽງ, ໂທລະພາບ, ຮູບເງົາ ແລະສຳນັກຂ່າວຕ່າງໆ. ລະບົບສື່ສານມວນຊົນຂອງແຕ່ລະປະເທດຈະສະທ້ອນອກໃນລັກສະນະການເມືອງ, ເສດຖະກິດ, ສັງຄົມ ຕະຫຼອດເຖິງພູມສາດຂອງແຕ່ລະປະເທດ.

ການສຶກສາກ່ຽວກັບສື່ສານມວນຊົນຕ້ອງເຂົ້າໃຈວ່າມີຄວາມເໝາະສົມກັບສະພາບແວດລ້ອມທາງສັງຄົມທີ່ເປັນການກະທຳຂອງມະນຸດໃນສັງຄົມແຕ່ລະປະເທດນັ້ນຫຼືບໍ່. ສື່ມວນຊົນສາມາດປ່ຽນແປງໃຫ້ເໝາະສົມກັບສັງຄົມໄດ້ຕະຫຼອດເວລາ. ເຖິງແມ່ນວ່າຈະມີຂໍ້ຈຳກັດແຕ່ກໍຕ້ອງໄດ້ພິຈາລະນາເຖິງຮູບແບບຂອງການສື່ສານມວນຊົນໃນປະເທດນັ້ນໆວ່າສື່ມີອິດທິພົນຕໍ່ສັງຄົມແນວໃດ, ຮູບແບບການໃຊ້ສື່, ສື່ມີຜົນປະໂຫຍດ ແລະມີຜົນກະທົບຕໍ່ສັງຄົມແນວໃດ.

6. ການສຶກສາລະບົບສື່ສານມວນຊົນ

ການສຶກສາລະບົບສື່ສານມວນຊົນໃນແຕ່ລະປະເທດຄວນພິຈາລະນາເຖິງ 5 ປັດໄຈທີ່ມີສ່ວນເຮັດໃຫ້ລະບົບສື່ສານມວນຊົນໜຶ່ງແຕກຕ່າງຈາກອີກລະບົບໜຶ່ງຫຼືເອີ້ນວ່າເປັນມິຕິຫຼັກຂອງລະບົບສື່ສານມວນຊົນ. ມິຕິຫຼັກຂອງລະບົບສື່ສານມວນຊົນສະແດງອອກດັ່ງນີ້:

ມິຕິຫຼັກຂອງລະບົບສື່ສານມວນຊົນ
(Key Dimension of Media System)

ລຳດັບ	ມິຕິ (Dimensions)	ທາງເລືອກ (Options)
1	ການຄວບຄຸມ (Control)	- ລັດດຳເນີນກິດຈະການເອງ (State operated) - ບໍລິສັດສາທາລະນະທົ່ວໄປ (Public cooperation) - ລະບົບຫຸ້ສ່ວນ (Partnership) - ເອກະຊົນເປັນຜູ້ດຳເນີນການ (Private enterprise) - ສະຖາບັນຫຼືອົງການອື່ນໆດຳເນີນການ (Institutionally sponsored)
2	ການເງິນ(Finance)	- ການເກັບຄ່າທຳນຽມ (License fees) - ພາສີອາກອນ (General taxation) - ລາຍໄດ້ຈາກການໂຄສະນາ ແລະງົບປະມານຂອງລັດ (Advertising and taxation combination) - ລາຍໄດ້ຈາກການໂຄສະນາຢ່າງດຽວ (Advertising) - ເງິນສະໜັບສະໜູນຈາກເອກະຊົນ
3	ຈຸດປະສົງຂອງການຈັດລາຍການ (Programming Goals)	-ເພື່ອຄວາມບັນເທີງ (Entertainment) - ເພື່ອການສຶກສາ (Education) - ເພື່ອທຸລະກິດການຄ້າ (Sales) - ເພື່ອສົ່ງເສີມວັດທະນະທຳ (Culture) - ເພື່ອອຸດົມການທາງດ້ານການເມືອງ (Polical ideology) - ເພື່ອການໃຊ້ຈ່າຍທີ່ຖືກທີ່ສຸດເທົ່າທີ່ຈະເຮັດໄດ້ (Cheapest possible operation)
4	ກຸ່ມຜູ້ຮັບສານທີ່ເປັນເປົ້າໝາຍ (Target audience)	-ກຸ່ມຊົນຊັ້ນການນຳ (Elite) - ກຸ່ມມວນຊົນ (Mass) - ກຸ່ມສະເພາະ (Specialized)
5	ກົນໄກການສື່ສານກັບ (Feed back mechanism)	-ລາຍງານຈາກຜູ້ປະຕິບັດງານໂດຍກົງ (Report from field workers) - ການມີສ່ວນຮ່ວມຂອງຜູ້ຮັບສານ(Audience participation)

		- ການສຳຫຼວດ ແລະວິໄຈ (Poles and rating) - ການປະເມີນຜົນຈາກຄຳວິຈານ ແລະຜູ້ອຸປະຖຳ (Report from critics and sponsors)

ຈະເຫັນໄດ້ວ່າແນວຄິດກ່ຽວກັບລະບົບສື່ສານມວນຊົນມີຄວາມສະລັບຊັບຊ້ອນ ແລະມີຄວາມແຕກຕ່າງກັນຫຼາຍລັກສະນະ ແຕ່ນັກສື່ສານມວນຊົນນິຍົມແບ່ງອອກ ເປັນ 2 ຮູບແບບຄື: ການສື່ສານມວນຊົນແບບເສລີ (Free system) ຕາມແນວຄິດຂອງບັນດາປະເທດທີ່ຍຶດຖືອຸດົມການເສລີນິຍົມ ໂດຍສະເພາະປະເທດສະຫະລັດອາເມຣິກາ ແລະອັງກິດ. ສ່ວນອີກຮູບແບບໜຶ່ງແມ່ນໃຊ້ລະບົບສື່ສານມວນຊົນແບບສັງຄົມນິຍົມ (Socialism system = Totalitarian system). ຖ້າໃຊ້ຫຼັກການແບ່ງບັນດາປະເທດຕ່າງໆໃນໂລກຕາມລະດັບການພັດທະ ນາປະເທດ ແລະອຸດົມການໃນການພັດທະນາລະບົບສື່ສານມວນຊົນສາມາດແບ່ງອອກເປັນກຸ່ມໃຫຍ່ 3 ກຸ່ມຄື:

6.1 **ກຸ່ມເສລີນິຍົມ** ລະບົບສື່ສານມວນຊົນໃນກຸ່ມນີ້ໄດ້ພັດທະນາອຸດສາຫະກຳຕາມລັດທິທຶນນິຍົມ. ສື່ມວນຊົນຈະເຮັດໜ້າທີ່ໃນການສະແຫວງຫາສັດຈະ, ຊ່ວຍແກ້ໄຂບັນຫາຂອງສັງຄົມໂດຍສະເໜີຫຼັກຖານ ແລະຄວາມຄິດທຸກແງ່ທຸກມຸມເພື່ອໄປສູ່ "ຂະບວນການພິສູດຕົນເອງກ່ຽວກັບສັດຈະ". ສື່ມວນຊົນໃນກຸ່ມນີ້ຈະເປັນລະບົບທີ່ມີເສລີພາບ, ປາສະຈາກການບັງຄັບ, ຄວບຄຸມຈາກລັດຖະ ບານ ແຕ່ຈະມີຈັນຍາບັນ ແລະຄວາມຮັບຜິດຊອບໃນການໃຊ້ເສລີພາບໃຫ້ມີຄວາມຖືກຕ້ອງ ແລະມີຜົນດີຕໍ່ສ່ວນລວມ. ບັນດາປະເທດທີ່ຍຶດຖືອຸດົມການນີ້ມີສະຫະລັດອາເມຣິກາ, ອັງກິດ, ອອສເຕຣເລຍ, ເຢຍລະມັນ, ຍີ່ປຸ່ນ...

6.2 **ກຸ່ມສັງຄົມນິຍົມພາຍໃຕ້ລະບອບສັງຄົມນິຍົມເຕັມຮູບແບບ** ໃນລະບົບສື່ສານມວນຊົນກຸ່ມນີ້ຈະມີພັກ, ລັດຖະບານເປັນຜູ້ຄວບຄຸມ, ເນັ້ນການຖ່າຍທອດລັດທິ ແລະອຸດົມການຄອມມູນິດ, ລະດົມການສະໜັບສະໜູນລັດຖະບານຈາກປະຊາຊົນ ແລະເສີມສ້າງຄວາມນິຍົມທາງດ້ານວັດທະ ນະທຳຂອງມວນຊົນຕາມທີ່ພັກ, ລັດຖະບານກຳນົດໄວ້.

6.3 **ກຸ່ມປະເທດໂລກທີສາມ** ສຳລັບກຸ່ມນີ້ສ່ວນຫຼາຍແມ່ນບັນດາປະເທດທີ່ເຄີຍເປັນຫົວເມືອງຂຶ້ນ ຫຼືເປັນປະເທດອາ ນານິຄົມຂອງປະເທດອື່ນມາກ່ອນ ແລະເປັນກຸ່ມປະເທດທີ່ມີການພັດທະນາທາງດ້ານເສດຖະ ກິດ, ການເມືອງໃນລະດັບຕ່ຳ. ລະບົບສື່ສານມວນຊົນຈະມີຄວາມແຕກຕ່າງໄປຕາມລຳດັບຂຶ້ນກັບປັດໄຈ ແລະສະພາບແວດລ້ອມຫຼາຍຢ່າງນັບຕັ້ງແຕ່ໄດ້ຮັບອິດທິພົນຈາກປະເທດທີ່ຂຶ້ນກັບທັງໃນດ້ານອຸດສາຫະກຳ ແລະຮູບແບບຂອງສື່ສານມວນຊົນໄປຈົນເຖິງສະພາບການຄວາມດ້ອຍພັດທະນາຂອງແຕ່ລະປະເທດ.

ດັ່ງນັ້ນ ລະບົບສື່ສານມວນຊົນຈຶ່ງມີຄວາມແຕກຕ່າງທາງດ້ານເສລີພາບ, ຮູບແບບການດຳເນີນກິດຈະການ, ເນື້ອຫາ, ຜົນກະທົບ ແລະການຖືກໃຊ້ໃນລັກສະນະເປັນເຄື່ອງມືໃນການໂຄສະນາຊວນເຊື່ອຂອງຜູ້ມີອຳນາດທາງດ້ານການເມືອງໃນເວລານັ້ນ.

7. ອົງປະກອບຂອງສື່ມວນຊົນ. ສື່ມວນຊົນປະກອບດ້ວຍສື່ສິ່ງພິມ ແລະສື່ເອເລັກໂທຣນິກ ເຊັ່ນ: ໜັງສືພິມ, ວາລະສານ, ວິທະຍຸກະຈາຍສຽງ, ໂທລະພາບ, ອິນເຕີເນັດ ແລະໂທລະສັບ. ສິ່ງ ເຫຼົ່ານີ້ເປັນສະຖາບັນໜຶ່ງທີ່ປະກອບຢູ່ໃນສັງຄົມເຊັ່ນດຽວກັນກັບບຸກຄົນ ຫຼືປະຊາຊົນທົ່ວໄປ.

8. ພາລະບົດບາດຂອງສື່ມວນຊົນ. ສື່ມວນຊົນມີພາລະບົດບາດໃນການເປັນກະບອກສຽງ ໃຫ້ແກ່ອົງການຈັດຕັ້ງພັກລັດຖະບານ ແລະສັງຄົມໃນການໂຄສະນາເຜີຍແຜ່, ສຶກສາອົບຮົມແນວ ທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ປຸກລະດົມນ້ຳໃຈຮັກຊາດ, ສະໜອງຂໍ້ມູນ ຂ່າວສານທາງດ້ານການເມືອງ, ເສດຖະກິດ, ສັງຄົມ, ວິທະຍາສາດ, ເທັກໂນໂລຢີ, ສາລະຄວາມຮູ້ ສາລະບັນເທີງໃຫ້ແກ່ສັງຄົມ, ປະກອບສ່ວນຕ້ານປາກົດການທຍ້ທ້ໃນສັງຄົມ, ຕ້ານທຸກຖ້ອຍທຳນອງ ບິດເບືອນຄວາມຈິງ, ເປັນເວທີເສີມຂະຫຍາຍປະຊາທິປໄຕ ແລະສິດເປັນເຈົ້າຂອງປະເທດຊາດຂອງ ປະຊາຊົນບັນດາເຜົ່າ.

9. ໜ້າທີ່ຂອງສື່ມວນຊົນ ໜ້າທີ່ຂອງສື່ມວນຊົນທີ່ມີການຍອມຮັບໂດຍທົ່ວໄປປະກອບດ້ວຍ:

9.1 ການລາຍງານຂ່າວສານ ໝາຍເຖິງການສະແຫວງຫາ ແລະເຜີຍແຜ່ຂ່າວສານກ່ຽວກັບ ເຫດການຕ່າງໆທີ່ເກີດຂຶ້ນໃນສັງຄົມ, ເປັນຜູ້ຕິດຕາມເຫດການວ່າມີຫຍັງແດ່ເກີດຂຶ້ນ ແລ້ວລາຍງານ ຜ່ານສື່ມວນຊົນໃຫ້ປະຊາຊົນໃນສັງຄົມໄດ້ຮັບຮູ້.ອີກດ້ານໜຶ່ງເພື່ອເປັນການແຈ້ງ ຫຼືເຕືອນໃຫ້ປະຊາຊົນ ໄດ້ມີສະຕິໃນການດຳເນີນຊີວິດການເປັນຢູ່ປະຈຳວັນຕາມບົດບາດໃນສັງຄົມ.

9.2 ການປະສານງານໃນສັງຄົມເພື່ອໃຫ້ມີຄວາມເປັນເອກະພາບ ເປັນການສະແດງຄວາມ ຄິດຄວາມເຫັນເພື່ອຊີ້ນຳ ຫຼືໃຫ້ຄຳອະທິບາຍກ່ຽວກັບປາກົດການຫຼືສິ່ງທີ່ເກີດຂຶ້ນ. ເປັນການວິເຄາະ ຫຼືແນະນຳປະຊາຊົນວ່າເຫດການທີ່ເກີດຂຶ້ນນັ້ນຄວນຈະເຮັດແນວໃດ ຮວມເຖິງການສ້າງປະຊາມະຕິ ຂອງສັງຄົມໃຫ້ເປັນອັນໜຶ່ງອັນດຽວກັນໃນເລື່ອງໃດເລື່ອງໜຶ່ງ.

9.3 ການຖ່າຍທອດມໍລະດົກທາງວັດທະນະທຳຈາກຄົນຮຸ່ນໜຶ່ງໄປຫາຄົນອີກຮຸ່ນໜຶ່ງ ໜ້າທີ່ ນີ້ເປັນການສຶກສາ, ການເຜີຍແຜ່ຄວາມຮູ້, ການສ້າງຄ່ານິຍົມທາງດ້ານສິລະປະ ວັດທະນະທຳຈາກ ຄົນສະໄໝເກົ່າໄປສູ່ຄົນສະໄໝໃໝ່ເພື່ອໃຫ້ໄດ້ຮັບການສືບທອດ ແລະໄດ້ຮັບການອະນຸລັກຮັກສາ, ເປັນມໍລະດົກອັນລ້ຳຄ່າຂອງຊາດໃຫ້ຍືນຍົງຄົງຕົວຕະຫຼອດໄປ.

9.4 ການໃຫ້ຄວາມບັນເທີງ ໝາຍເຖິງການເຜີຍແຜ່ທາງດ້ານສິລະປະວັນນະຄະດີ, ບົດເພງ ບົດເລື່ອງສັ້ນ,ນິຍາຍ, ຮູບພາບກາຕູນ, ຂວນຫົວ, ການກອນ, ການຈັດກິດຈະກຳໃນການສະແດງ ສິລະປະດົນຕີເພື່ອສ້າງຄວາມມ່ວນຊື່ນແກ່ປະຊາຊົນ ແລະເຮັດໃຫ້ປະຊາຊົນໄດ້ມີໂອກາດພັກຜ່ອນ.

ສະຫຼຸບແລ້ວໜ້າທີ່ຫຼັກຂອງສື່ສານມວນຊົນແມ່ນການລາຍງານຂໍ້ມູນຂ່າວສານກ່ຽວກັບເຫດ ການຕ່າງໆທີ່ເກີດຂຶ້ນໃນສັງຄົມໃຫ້ປະຊາຊົນໄດ້ຮັບຮູ້. ດັ່ງນັ້ນ ການສື່ຂ່າວ ແລະການຂຽນຂ່າວຈຶ່ງ ເປັນໜ້າທີ່ຂອງຜູ້ສື່ຂ່າວຫຼືນັກຂ່າວ. ສຳລັບຜູ້ສື່ຂ່າວຫຼືນັກຂ່າວຕ້ອງມີຄວາມຮູ້, ມີທັກສະໃນການສື່ ຂ່າວຫຼືໄປຊອກເກັບກຳຂໍ້ມູນ ແລະສາມາດຂຽນຂ່າວ ຍ້ອນວ່າການສື່ຂ່າວນັ້ນມີລັກສະນະເໝືອນກັນ

ກັບການຄົ້ນຄວ້າ, ສືບຫາຄວາມຈິງ. ສ່ວນການຂຽນຂຶ້ນກັບຮູບແບບ, ວິທີການ, ເທັກນິກການຂຽນທີ່ເປັນເອກະລັກສະເພາະບໍ່ເໝືອນກັນກັບການຂຽນບົດຄວາມ, ບົດເລື່ອງສັ້ນຫຼືການຂຽນອື່ນໆ.

10. **ການສຶກສາກ່ຽວກັບຂ່າວ.** ການຮຽນຮູ້ກ່ຽວກັບຂ່າວຄວນເລີ່ມທຳຄວາມເຂົ້າໃຈເຖິງຄວາມໝາຍຂອງຂ່າວ, ການແບ່ງປະເພດຂອງຂ່າວ, ການປະເມີນຄຸນຄ່າຂອງຂ່າວ, ການຮູ້ຈັກແຫຼ່ງຂ່າວ, ການສື່ຂ່າວແຕ່ລະປະເພດ, ການສຳພາດ, ສຶກສາກ່ຽວກັບໂຄງສ້າງຂອງຂ່າວ, ຂັ້ນຕອນ ຫຼື ວິທີການຂຽນ ໂດຍຍຶດຖືສິ່ງທີ່ຄົນສົນໃຈຢາກຮູ້, ມີຄວາມສຳຄັນ ແລະນຳເອົາໄປປະກອບອາຊີບຫຼືໝູນໃຊ້ໃນຊີວິດປະຈຳວັນໄດ້. ເມື່ອຕ້ອງການພັດທະນຕົນເອງໃຫ້ເປັນຜູ້ທີ່ມີຄວາມຮູ້ຄວາມສາມາດແນວນັ້ນຕ້ອງໄດ້ໝັ່ນເຝິກຝົນທັກສະໃນການສື່ຂ່າວ ແລະຂຽນຂ່າວເລື້ອຍໆຈຶ່ງຈະປະສົບຜົນສຳເລັດ.

10.1 **ຄວາມໝາຍຂອງຂ່າວ.** "ຂ່າວ" ໝາຍເຖິງການລາຍງານເຫດການຕ່າງໆທີ່ເກີດຂຶ້ນໃນສັງຄົມແຕ່ລະວັນ. ເປັນຄຳບອກເລົ່າກ່ຽວກັບເລື່ອງຕ່າງໆ ໂດຍສະເພາະເລື່ອງຫຼືເຫດການທີ່ເກີດຂຶ້ນໃໝ່ໆ ທັງໃນອາ ດີດ, ປັດຈຸບັນ, ອະນາຄົດທີ່ມີຄວາມເປັນຄວາມຈິງ ແລະເປັນໜ້າສົນໃຈ.

10.2 **ການປະເມີນຄຸນຄ່າຂອງຂ່າວ.** ຕາມຫຼັກວິຊາການພື້ນຖານດ້ານສື່ສານມວນຊົນ ການປະເມີນຄຸນຄ່າຂອງຂ່າວຄວນພິຈາລະນາວ່າເຫດການຕ່າງໆທີ່ເກີດຂຶ້ນຕ້ອງເປັນຄວາມຈິງ, ເປັນໜ້າສົນໃຈ, ມີຄວາມອ່ອງໄວ,ມີຄວາມໃກ້ຊິດ, ມີຄວາມສຳຄັນຫຼືຄວາມເດັ່ນ, ຄວາມແປກປະຫຼາດ, ມີຄວາມກ້າວໜ້າ...ດັ່ງນັ້ນ ການປະເມີນຄຸນຄ່າຂອງຂ່າວຈຶ່ງສາມາດແບ່ງອອກດັ່ງນີ້:

10.2.1 ຄວາມຈິງ (Fact) ໜ້າທີ່ສຳຄັນຂອງຜູ້ສື່ຂ່າວໃນການສື່ຂ່າວຕ້ອງພະຍາຍາມນຳເອົາຄວາມຈິງມາ ສະເໜີຕໍ່ຜູ້ອ່ານ ແລະຄິດສະເໝີວ່າຂ່າວຕ້ອງມີທີ່ມາຈາກຄວາມຈິງຂອງເຫດການຕ່າງໆເຊັ່ນ:

(ກ). ຂ່າວຕ້ອງມາຈາກສະຖານະການ (Situation), ເຫດການ (Occurrence), ຄວາມຄິດ(Thoughts) ແລະຄວາມຄິດເຫັນ(Ideas)ທີ່ເກີດຂຶ້ນຈິງ ບໍ່ແມ່ນສິ່ງທີ່ຂຽນຂຶ້ນຕາມຄວາມຮູ້ສຶກນຶກຄິດຫຼືເສກສັນປັ້ນແຕ່ງຂຶ້ນຈາກຜູ້ສື່ຂ່າວເອງ.

(ຂ). ຄວາມຈິງທີ່ເກີດຂຶ້ນທັງໝົດ ອາດຈະບໍ່ໄດ້ເອົາມານຳສະເໜີເປັນຂ່າວ ຍ້ອນວ່າປະເດັນບາງອັນ ອາດຈະມີຄວາມສຳຄັນໜ້ອຍ ແລະຂາດຄວາມເປັນໜ້າສົນໃຈກໍບໍ່ຈຳເປັນເອົາມາສະເໜີ.

10.2.2 ຂ່າວຕ້ອງເປັນສິ່ງທີ່ໜ້າສົນໃຈ(News must be interesting). ຫຼັກການປະເມີນຄວາມເປັນໜ້າສົນໃຈຂອງຂ່າວມີດັ່ງຕໍ່ໄປນີ້:

ກ. ຄວາມຈິງທີ່ເກີດຂຶ້ນທັງໝົດອາດຈະເປັນໜ້າສົນໃຈນຳມາສະເໜີເປັນຂ່າວກໍໄດ້.

ຂ. ລຳດັບຄວາມເປັນໜ້າສົນໃຈຂອງຄວາມຈິງ, ຄວາມຈິງຈະມີຄວາມແຕກຕ່າງກັນອອກໄປ ຖ້າຄວາມຈິງໃດມີຄວາມເປັນໜ້າສົນໃຈຫຼາຍ ກໍຈະມີຄຸນຄ່າຂອງຂ່າວສູງຕາມໄປດ້ວຍ.

ຄ. ຂ່າວຈະຕ້ອງແມ່ນສິ່ງທີ່ເປັນໜ້າສົນໃຈຂອງຄົນຈຳນວນຫຼາຍ ອາດຈະຢູ່ໃນລະດັບທ້ອງຖິ່ນ, ລະ ດັບຊາດ ແລະລະດັບນານາຊາດ.

ຈາກການປະເມີນຄຸນຄ່າຂອງຂ່າວຖ້າເຫດການໃດເກີດຂຶ້ນແລ້ວ ແຕ່ບໍ່ໄດ້ຮັບຄວາມສົນໃຈ ຫຼືບໍ່ເປັນໜ້າສົນໃຈກໍບໍ່ຈຳເປັນເອົາມາລາຍງານໃຫ້ຜູ້ອ່ານ, ຜູ້ຟັງ ແລະຜູ້ຊົມຮັບຮູ້. ກົງກັນຂ້າມຖ້າຜູ້ສື່ຂ່າວພິຈາລະນາເຫັນວ່າເຫດການທີ່ເກີດຂຶ້ນມີປະໂຫຍດ ແລະຄວນໃຫ້ຜູ້ອ່ານ, ຜູ້ຟັງ ແລະຜູ້ຊົມຮັບຮູ້ກໍຄວນເອົາມານຳສະເໜີເປັນຂ່າວໄດ້.

10.3 ປະເພດຂອງຂ່າວ. ການແບ່ງປະເພດຂອງຂ່າວແມ່ນອີງຕາມລັກສະນະເນື້ອຫາ ແລະ ເປັນຫຼັກການທີ່ສາ ມາດນຳເອົາມາໃຊ້ໃນການແບ່ງປະເພດ. ຍ້ອນວ່າຂ່າວແຕ່ລະປະເພດຈະມີຮູບ ແບບການສື່ຂ່າວ ແລະການຂຽນຂ່າວມີລັກສະນະສະເພາະຕົວ ເຮັດໃຫ້ການນຳສະເໜີມີຄວາມແຕກ ຕ່າງກັນ. ການຈຳແນກປະເພດຂອງເນື້ອຫາຂ່າວມີດັ່ງນີ້: ຂ່າວການເມືອງ, ເສດຖະກິດ, ອຸດສາຫະ ກຳ, ກະສິກຳ, ການສຶກສາ, ການວິໄຈ, ວິທະຍາສາດ, ສິ່ງແວດລ້ອມ, ສັງຄົມ, ສິລະປະ, ວັດທະ ນະທຳ ແລະກິລາ.

ໃນປັດຈຸບັນໜັງສືພິມຂອງລາວມີລັກສະນະການນຳສະເໜີເນື້ອຫາຂອງຂ່າວທຸກປະເພດໃນ ສະບັບດຽວກັນ. ແຕ່ກໍມີບາງໜັງສືພິມປະລິດອອກມາເປັນໜັງສືພິມສະເພາະດ້ານ. ເນື້ອຫາຂອງ ຂ່າວຕ່າງໆທີ່ນຳມາສະເໜີຈະເປັນໄປຕາມສະພາບການປ່ຽນແປງທັງພາຍໃນ ແລະຂອງໂລກປະ ກອບກັບຄວາມນິຍົມຂອງສັງຄົມໃຫ້ຄວາມສົນໃຈປະເດັນຂອງບັນຫາ ແລະສະ ຖານະການຫຼືສົນໃຈ ສະເພາະດ້ານ. ດັ່ງນັ້ນ ການຂຽນຂ່າວຈຶ່ງໄດ້ມີການແບ່ງປັນວຽກງານໃຫ້ຜູ້ສື່ຂ່າວຮັບຜິດຊອບໃນ ການຊອກຫາເກັບກຳຂໍ້ມູນຈາກແຫຼ່ງຂ່າວທີ່ກ່ຽວຂ້ອງມາຂຽນສະເພາະດ້ານເພື່ອນຳສະເໜີໃຫ້ຜູ້ຮັບ ສານຮັບຮູ້ຕໍ່ໄປ.

10.4 ໂຄງສ້າງຂອງຂ່າວ. ການລາຍງານຂ່າວໃນສື່ສິ່ງພິມຈະໃຊ້ຕົວອັກສອນ ແລະຮູບ ພາບເປັນອົງປະກອບທີ່ສຳຄັນໃນການສື່ຄວາມໝາຍ. ສ່ວນການລາຍງານຂ່າວໃນສື່ວິທະຍຸ ກະຈາຍສຽງຈະໃຊ້ສຽງ ແລະສື່ໂທລະພາບຈະໃຊ້ທັງສຽງ-ພາບເຄື່ອນໄຫວໃນການສື່ຄວາມໝາຍ. ການຂຽນຂ່າວເພື່ອເຜີຍແຜ່ໃນແຕ່ລະສື່ຈະມີຄວາມແຕກຕ່າງກັນໄປຕາມແຕ່ລະຊະນິດຂອງສື່ເຊັ່ນ: ສື່ສິ່ງພິມຈະມີຂໍ້ຈຳກັດດ້ານເນື້ອທີ່, ສຳລັບສື່ວິທະຍຸ ແລະໂທລະພາບຈະມີຂໍ້ຈຳກັດດ້ານເວລາ. ການ ຂຽນຂ່າວແມ່ນຂຶ້ນກັບຈຸດປະສົງ ແລະຮູບແບບຂອງການຂຽນແນວໃດຈຶ່ງຈະບັນລຸຈຸດປະສົງໄດ້. ຜູ້ສື່ ຂ່າວຕ້ອງຮູ້ຈັກວ່າປະເດັນໃດແມ່ນປະເດັນສຳຄັນຂອງຂ່າວ, ຂ່າວນີ້ມີຄວາມສຳຄັນອັນໃດແດ່, ມີ ຄວາມກ່ຽວຂ້ອງແນວໃດກັບຜູ້ອ່ານ. ສະນັ້ນ ຮູບແບບການຂຽນຂ່າວຈຶ່ງຂຶ້ນຕົ້ນດ້ວຍການສະຫຼຸບ ປະເດັນສຳຄັນຂອງເລື່ອງ ຈາກນັ້ນຈຶ່ງຂະຫຍາຍປະເດັນສຳຄັນຮອງລົງມາເທື່ອລະປະເດັນຈົນຈົບ ຂ່າວ. ດັ່ງນັ້ນ ການລາຍງານຂ່າວຈຶ່ງມີຮູບແບບ ແລະຫຼັກການພື້ນຖານທີ່ເລີ່ມຈາກໂຄງສ້າງ, ການຮຽບຮຽງ, ວິທີການຂຽນ, ການໃຊ້ຮູບພາບປະກອບຂ່າວ, ຮູບພາບທີ່ເປັນຂ່າວ ແລະຄຳ ອະທິບາຍຮູບພາບ.

ການຂຽນທຸກຢ່າງຕ້ອງເລີ່ມຕົ້ນດ້ວຍໂຄງສ້າງ ການຂຽນຂ່າວມີຮູບແບບໂຄງສ້າງເກືອບວ່າ ຕາຍຕົວ. ອົງປະກອບແຕ່ລະຢ່າງຂອງໂຄງສ້າງສະແດງບົດບາດໜ້າທີ່ແຕກຕ່າງກັນອອກໄປຕາມ

ຈຸດປະສົງ. ຈຸດປະສົງຫຼັກນັ້ນແມ່ນຕ້ອງການສື່ສານໃຫ້ຜູ້ອ່ານເຂົ້າໃຈງ່າຍທີ່ສຸດ ແລະໃຊ້ເວລາໜ້ອຍທີ່ສຸດ. ໂຄງສ້າງຂອງຂ່າວມີອົງປະກອບທີ່ສຳຄັນດັ່ງນີ້:

- ຫົວຂໍ້ຂ່າວ (Headline)
- ຄວາມນຳຂອງຂ່າວ (Lead)
- ສ່ວນເຊື່ອມ (Neck)
- ເນື້ອເລື່ອງ (Body/Detail)

10.4.1 ຫົວຂໍ້ຂ່າວ. ການຂຽນທຸກປະເພດຕ້ອງມີຊື່ເລື່ອງຢູ່ດ້ານເທິງຂອງເນື້ອຫາສະເໝີ. ຊື່ເລື່ອງຂອງການຂຽນທຸກປະເພດມີໜ້າທີ່ເປັນຕົວແທນຂອງເລື່ອງທີ່ຜູ້ອ່ານຈະໄດ້ອ່ານຕໍ່ໄປ. ຊື່ເລື່ອງຈະເປັນປະເດັນທີ່ສຳຄັນຂອງເລື່ອງທັງໝົດມາຮວມກັນ ແຕ່ມີລັກສະນະສັ້ນ, ກະ ທັດຮັດ, ຕົວອັກສອນຈະໃຫຍ່ກວ່າ ຜູ້ອ່ານຈະແນມເຫັນກ່ອນສ່ວນອື່ນໆ ແລະເປັນສ່ວນທີ່ສຳຄັນເຮັດໃຫ້ຜູ້ອ່ານຕັດສິນໃຈວ່າຈະອ່ານເນື້ອໃນຕໍ່ໄປຫຼືບໍ່. ດັ່ງນັ້ນ ການຕັ້ງຊື່ເລື່ອງຄວນພະຍາຍາມຊອກຫາຄຳທີ່ມີຄວາມໝາຍເດັ່ນສະດຸດຕາ, ກົງກັບເນື້ອຫາ. ການຕັ້ງຊື່ເລື່ອງມີວິທີການຫຼາຍຮູບແບບເຊັ່ນ: ແບບສະຫຼຸບຄວາມ, ແບບຕັ້ງຄຳຖາມ, ແບບອ້າງຄຳເວົ້າຂອງແຫຼ່ງຂ່າວ, ແບບໃຊ້ຄຳອຸທານ, ແບບຍົກຍ້ອງ, ແບບປຽບທຽບ, ແບບບອກເລົ່າ, ແບບປິດສະໜາ... ແຕ່ສ່ວນຫຼາຍແລ້ວການຂຽນຫົວຂໍ້ຂ່າວມັກໃຊ້ແບບບອກເລົ່າຫຼາຍກວ່າ.

ຈຸດປະສົງຂອງການຕັ້ງຊື່ຫົວຂໍ້ຂ່າວຫຼືຊື່ເລື່ອງ ເພື່ອຄວາມສວຍງາມ, ດຶງດູດຄວາມສົນ ໃຈຂອງຜູ້ອ່ານ, ປະຢັດເວລາ, ລຳດັບຄວາມສຳຄັນຂອງຂ່າວ ແລະສະແດງໃຫ້ເຫັນເຖິງບຸກຄະລິກຂອງສື່. ນອກຈາກສິ່ງທີ່ກ່າວມານັ້ນຜູ້ຂຽນຫົວຂໍ້ຂ່າວທີ່ດີຕ້ອງເປັນຜູ້ທີ່ອ່ານຫຼາຍ, ຈັບປະເດັນໄດ້ດີ, ໃຊ້ພາສາໃຫ້ຖືກຕ້ອງ ແລະມີປະສົບການ.

10.4.2 ຄວາມນຳຂອງຂ່າວ. ແມ່ນຫຍໍ້ໜ້າທຳອິດຕໍ່ຈາກຫົວຂໍ້ຂ່າວ ມີລັກສະນະເປັນປະເດັນສຳຄັນທີ່ສຸດຂອງເຫດ ການມາຂຽນ ແລະເປັນເລື່ອງດຽວກັນກັບຫົວຂໍ້ຂອງຂ່າວ. ຄວາມນຳທີ່ດີຕ້ອງຕອບຄຳຖາມ 5 W+1 H ໃຫ້ໄດ້ ແຕ່ບໍ່ຈຳເປັນຕ້ອງຕອບໃຫ້ຄົບທຸກໆຄຳຖາມ, ພຽງແຕ່ເລືອກສະເພາະປະເດັນໃດສຳຄັນເທົ່ານັ້ນມານຳສະເໜີ. ສ່ວນປະເດັນຮອງລົງມາໃຫ້ນຳສະເໜີຕາມລຳດັບຄວາມສຳຄັນເພື່ອສະດວກໃນການອ່ານ. ໂດຍປົກກະຕິແລ້ວຄວາມນຳຂອງຂ່າວມີພຽງແຕ່ໜຶ່ງຫຍໍ້ໜ້າ ຖ້າຂ່າວໃດຍາວກໍອາດຈະຫຼາຍກວ່ານີ້ໄດ້. ຄວາມນຳ ແລະຫົວຂໍ້ຂ່າວຈະແຕກກັນທີ່ລາຍລະອຽດ. ຫົວຂໍ້ຂ່າວຈະສະເໜີປະເດັນທີ່ສຳຄັນພຽງແຕ່ 1-2 ປະເດັນ ແຕ່ຄວາມນຳຈະດຶງປະເດັນທີ່ສຳຄັນທັງໝົດທີ່ມີຢູ່ໃນເນື້ອຫາຂອງຂ່າວ ອາດຈະມີ 4-5 ປະເດັນຫຼືຫຼາຍກວ່າມາຂຽນຂະຫຍາຍຫົວຂໍ້ຂ່າວ. ຄວາມນຳມີໜ້າທີ່ໃນການໃຫ້ລາຍລະອຽດທີ່ສັ້ນທີ່ສຸດຂອງເນື້ອຫາ ເມື່ອອ່ານແລ້ວຈະຮູ້ໂຄງສ້າງລາຍລະອຽດທັງໝົດຂອງຂ່າວ. ຫຼັກການຂຽນທີ່ດີນັ້ນຄວນຄິດສະເໝີວ່າຄວາມນຳເປັນສ່ວນທີ່ໃຫ້ລາຍລະອຽດຂອງຂ່າວທັງໝົດ ແລະຕ້ອງສາມາດສື່ຄວາມໝາຍໃຫ້ເຂົ້າໃຈງ່າຍ, ກົງໄປກົງມາ ແລະກວມເນື້ອຫາ ບໍ່ເຮັດໃຫ້ຜູ້ອ່ານເຂົ້າໃຈຜິດຫຼືໃຊ້ຖ້ອຍຄຳບໍ່ສຸພາບ.

10.4.3 ສ່ວນເຊື່ອມ. ສ່ວນເຊື່ອມແມ່ນສ່ວນຕໍ່ລະຫວ່າງຄວາມນຳກັບເນື້ອຫາຂອງຂ່າວ ອາດຈະເປັນຂໍ້ຄວາມບໍ່ເທົ່າໃດຄຳ, ບໍ່ເທົ່າໃດປະໂຫຍກ ຫຼືອາດຈະເປັນຫຍໍ້ໜ້າກໍໄດ້. ສ່ວນເຊື່ອມຈະມີລັກສະນະກົມກືນ ແລະປະສານກັບເນື້ອຫາຂອງຂ່າວບໍ່ໄດ້ແຍກອອກຈາກກັນ. ສ່ວນເຊື່ອມຈະປາກົດສະເພາະຂ່າວທີ່ມີຄວາມສະລັບຊັບຊ້ອນ ຫຼືຂ່າວຕໍ່ເນື່ອງຈາກເຫດການທີ່ເກີດຂຶ້ນກ່ອນໜ້ານັ້ນ. ຖ້າເປັນຂ່າວທີ່ບໍ່ມີຄວາມຊັບຊ້ອນ ຫຼືຈົບລົງດ້ວຍຕົວເອງກໍຈະບໍ່ມີສ່ວນເຊື່ອມ.

ໜ້າທີ່ສຳຄັນຂອງສ່ວນເຊື່ອມແມ່ນການເຊື່ອມໂຍງຈາກຄວາມນຳໄປສູ່ເນື້ອຫາຂອງຂ່າວ ເຮັດໃຫ້ມີການພົວພັນ ແລະດຳເນີນເລື່ອງໄດ້ຢ່າງຕໍ່ເນື່ອງ ໂດຍການໃຊ້ພາສາຄຳວ່າ: “ເຖິງຢ່າງໃດກໍຕາມ, ເຖິງຢ່າງໃດກໍດີ, ເຖິງແມ່ນວ່າ...” ນອກຈາກນີ້ສ່ວນເຊື່ອມຍັງເປັນສ່ວນຂະຫຍາຍຄວາມນຳ ໂດຍນຳເອົາບາງສ່ວນຈາກຄວາມນຳມາຂະຫຍາຍຕໍ່ໃສ່ສ່ວນເຊື່ອມ, ໃຫ້ລາຍລະອຽດພູມຫຼັງຂອງເຫດການໂດຍການບອກເລົ່າຫຍໍ້ວ່າມີຫຍັງເກີດຂຶ້ນກ່ອນໜ້ານີ້.

10.4.4 ເນື້ອຫາຂອງຂ່າວ. ແມ່ນສ່ວນທີ່ສຳຄັນໃນການໃຫ້ລາຍລະອຽດຂອງຂໍ້ມູນຄວາມຈິງທັງໝົດທີ່ຜູ້ສື່ຂ່າວໄດ້ຮວບຮວມມາ ແລະເຫັນວ່າຄວນນຳສະເໜີເປັນຂ່າວ. ເນື້ອຫາອາດຈະເລີ່ມຕົ້ນໃນຫຍໍ້ໜ້າກັບສ່ວນເຊື່ອມໂດຍຂຽນຕໍ່ກັນໄປຫຼືອາດຈະຂຶ້ນຫຍໍ້ໜ້າໃໝ່ກໍໄດ້. ການຂຽນເນື້ອຫາຂ່າວທີ່ດີຕ້ອງມີຂໍ້ມູນພຽງພໍ, ມີປະເດັນທີ່ຕ້ອງການຖ່າຍທອດແຈ່ມແຈ້ງ ແລ້ວຈັດລະບຽບຂອງຂໍ້ມູນທີ່ຜູ້ສື່ຂ່າວໄປເກັບກຳມາ ໂດຍການໃຊ້ຄວາມຮູ້, ປະສົບການ ແລະກຳນົດໂຄງສ້າງຂອງຂ່າວ.

ຫຼັກການສຳຄັນໃນການຂຽນເນື້ອຫາຂອງຂ່າວຄວນໃຫ້ມີປະເດັນສຳຄັນພຽງປະເດັນດຽວໃນແຕ່ລະຫຍໍ້ໜ້າ ແລະມີຄວາມສຳຄັນທີ່ສຸດ. ຫຼັງຈາກນັ້ນຈຶ່ງຂຽນປະເດັນສຳຄັນຮອງລົງມາຕາມລຳດັບໃນແຕ່ລະຫຍໍ້ໜ້າຈົນກວ່າຈະໝົດ ແລະແຕ່ລະຫຍໍ້ໜ້າຄວນໃຊ້ຄຳເຊື່ອມເພື່ອໃຫ້ເນື້ອຄວາມທັງໝົດມີການເຊື່ອມຕໍ່ກັນລະຫວ່າງຫຍໍ້ໜ້າທີໜຶ່ງໄປຫາຫຍໍ້ໜ້າອື່ນໆ ບໍ່ຄວນເຮັດໃຫ້ຄວາມຄິດສະດຸດ. ຄວນກວດແກ້ເນື້ອຫາຂອງຂ່າວໃຫ້ແນ່ໃຈວ່າມີຂໍ້ຄວາມໃດຖືກຕັດອອກໄປ ນັບແຕ່ອະລິດງວກໍຈະເຮັດໃຫ້ເນື້ອຫາທັງໝົດເສຍໄປ ແລະບໍ່ຄົບຖ້ວນ.

ທັງໝົດທີ່ກ່າວມານັ້ນແມ່ນໂຄງສ້າງຂອງຂ່າວ ແລະການຮຽບຮຽງຂ່າວໃນປັດຈຸບັນນິຍົມໃຊ້ຮູບແບບພີຣະມິດຫົວກັບ (Inverted Pyramid). ການຮຽບຮຽງຂ່າວລັກສະນະນີ້ເປັນການໃຫ້ລາຍລະອຽດຂອງເຫດການຕາມລຳດັບຄວາມສຳຄັນຂອງປະເດັນ. ປະເດັນໃດສຳຄັນກວ່າ ກໍຈະເອົາຂຶ້ນມານຳສະເໜີກ່ອນ ສ່ວນປະເດັນໃດມີຄວາມສຳຄັນໜ້ອຍ ກໍຈະຮຽງລຳດັບຄວາມສຳຄັນລົງໄປຈົນເຖິງປະເດັນສຸດທ້າຍຂອງເຫດການທີ່ໄດ້ມາຈາກແຫຼ່ງຂ່າວ.

11. **ແຫຼ່ງຂ່າວ.** ຈາກແນວຄິດໃນການສື່ສານຂອງມະນຸດທີ່ທຸກຄົນເປັນທັງຜູ້ສົ່ງສານ ແລະເປັນທັງຜູ້ຮັບສານຈຶ່ງມີຄວາມຈຳເປັນຕ້ອງໄດ້ຂົນຂວາຍຊອກຫາເພື່ອໃຫ້ໄດ້ຂໍ້ມູນຂ່າວສານ ມາຈາກ “ແຫຼ່ງຂ່າວ” ຫຼື “ແຫຼ່ງຂໍ້ມູນ” ຕ່າງໆ. ຫຼັງຈາກນັ້ນຈຶ່ງນຳເອົາຂໍ້ມູນດິບເຫຼົ່ານັ້ນມາຮຽບຮຽງ ແລະຂຽນເປັນຂ່າວແລ້ວສົ່ງຜ່ານສື່ມວນຊົນ.

11.1 ການເຂົ້າເຖິງແຫຼ່ງຂ່າວ. ໃນການປະຕິບັດໜ້າທີ່ວຽກງານກ່ຽວກັບສື່ສານມວນຊົນຜູ້ທີ່ເຮັດວຽກດ້ານນີ້ຕ້ອງໄດ້ໃຊ້ຄວາມພະຍາຍາມເຂົ້າເຖິງແຫຼ່ງຂ່າວທີ່ເປັນຕົ້ນຕໍຂອງເຫດການ ແລະ ເຫັນວ່າມີຄວາມສຳຄັນ. ໃນການເຂົ້າເຖິງແຫຼ່ງຂ່າວນັ້ນຂຶ້ນກັບການພົວພັນກັນລະຫວ່າງຜູ້ລາຍງານ ຂ່າວກັບແຫຼ່ງຂ່າວ ແລະເປັນສິ່ງຈຳເປັນທີ່ສຸດສຳລັບນັກຂ່າວທີ່ຕ້ອງໄດ້ປະຕິບັດ. ແຫຼ່ງຂ່າວຈະມີຢູ່ ຢ່າງຫຼວງຫຼາຍ ແລະມີຄວາມແຕກຕ່າງກັນອອກໄປນັບຕັ້ງແຕ່ຂັ້ນສູນກາງລົງເຖິງທ້ອງຖິ່ນ ເຊັ່ນ: ລະດັບຜູ້ນຳພັກ-ລັດຖະບານ, ສຳນັກງານ, ອົງການ, ທັງພາກລັດ ແລະເອກະຊົນ, ມີທັງບຸກຄົນ, ກຸ່ມຄົນ, ສະຖານທີ່, ເຫດການ, ເອກະສານ, ອິນເຕີເນັດ ແລະສຳນັກຂ່າວສານຕ່າງໆ.

11.2 ໜ້າທີ່ໃນການເຂົ້າເຖິງແຫຼ່ງຂ່າວນັກຂ່າວຕ້ອງໄດ້ຮັກສາຄວາມເປັນກາງໃນການນຳ ສະເໜີຂ່າວ ບໍ່ຄວນອ່ຽງຊ້າຍຫຼືອ່ຽງຂວາ ເພື່ອໃຫ້ແຫຼ່ງຂ່າວມີຄວາມເຊື່ອໝັ້ນສັດທາ ແລະໄດ້ຮັບຂໍ້ ມູນຄວາມຈິງມານຳສະເໜີເປັນຂ່າວໃຫ້ປະຊາຊົນຮັບຮູ້ຕໍ່ໄປ. ການເຂົ້າເຖິງແຫຼ່ງຂ່າວເປັນສິ່ງທີ່ນັກ ຂ່າວຕ້ອງໄດ້ພັດທະນາຕົນເອງໃຫ້ມີຄວາມຮູ້, ມີຄວາມສາມາດຮອບດ້ານໃນເລື່ອງຕ່າງໆ.

11.3 ຄວາມເປັນໜ້າເຊື່ອຖືຂອງແຫຼ່ງຂ່າວ. ລັກສະນະຂອງຄວາມເປັນໜ້າເຊື່ອຖືມີດັ່ງນີ້:

11.3.1 ຄວາມເປັນໜ້າໄວ້ວາງໃຈ(Trust worthiness): ມີຄວາມຈິງໃຈ,ໄວ້ໃຈໄດ້, ຊື່ສັດ ບໍລິສຸດ, ມີຄວາມຍຸຕິທຳ.

11.3.2 ຄວາມຊ່ຽວຊານ (Expertness): ໄດ້ຮັບການສຶກສາ, ຜ່ານການຝຶກອົບຮົມ, ມີ ປະສົບການ, ມີຄວາມຮູ້, ມີຄວາມຊຳນານ, ມີທັກສະ ແລະຄວາມຮູ້ດ້ານອື່ນໆ.

11.3.3 ຄວາມຄ່ອງແຄ້ວ (Dynamism): ມີຄວາມຕື່ນຕົວ, ວ່ອງໄວ, ມີຊີວິດຊີວາບໍ່ໜ້າ ເບື່ອ, ມີມະນຸດສຳພັນທີ່ດີ, ສຸພາບ ຮຽບຮ້ອຍ ແລະເປັນກັນເອງ.

12. **ຄຸນສົມບັດຂອງນັກສື່ສານມວນຊົນ.** ນັກຂ່າວທີ່ດີຕ້ອງໄດ້ພັດທະນາຕົນເອງຢູ່ສະເໝີ ເພື່ອຊ່ວຍເພີ່ມປະສິດທິພາບໃນການສື່ສານ. ການພັດທະນາຕົນເອງຄວນປະຕິບັດດັ່ງຕໍ່ໄປນີ້:

12.1 **ທັກສະໃນການສື່ສານ** (Communication skills). ທັກສະໃນການສື່ສານຂອງນັກ ສື່ສານມວນຊົນ ໝາຍເຖິງການມີຄວາມສາມາດ, ມີຄວາມຄ່ອງແຄ້ວ, ວ່ອງໄວ, ມີຄວາມຊຳນານໃນ ການອ່ານ, ການຟັງ, ການເວົ້າ, ການຂຽນ, ການຄິດ ແລະການໃຊ້ເຫດຜົນ.

12.1.1 ການອ່ານ. ໝາຍເຖິງຄວາມຄ່ອງແຄ້ວວ່ອງໄວໃນການອ່ານ ແລະສາມາດອ່ານ ເປັນ. ຈາກການອ່ານຈະເຮັດໃຫ້ໄດ້ຂໍ້ມູນ, ໄດ້ຂ່າວສານ ແລະໄດ້ຄວາມຄິດທີ່ເປັນປະໂຫຍດມາ ຮຽບຮຽງຄືນໃໝ່ໃຫ້ຄ່ອງແຄ້ວຂຶ້ນ.

12.1.2 ການຟັງ. ເປັນການສະແຫວງຫາຄວາມຮູ້, ຂໍ້ມູນ ແລະຕ້ອງຟັງໃຫ້ເປັນ. ນັກ ສື່ສານມວນຊົນຫຼືຄົນທົ່ວໄປຄວນພະຍາຍາມສ້າງທັກສະໃນການຟັງ ໂດຍການຟັງໃຫ້ເຂົ້າໃຈ, ຟັງ ໃຫ້ຮູ້ຄຸນຄ່າ, ຟັງແລ້ວຮູ້ຈັກວິເຄາະ ແລະປະເມີນຜົນ. ການຟັງຈາກຫຼາຍແຫຼ່ງຂໍ້ມູນຈະເຮັດໃຫ້ມີ ຄວາມເຂົ້າ ໃຈຕໍ່ຄວາມຄິດ, ຄວາມຮູ້ຕ່າງໆຫຼາຍຂຶ້ນ.

12.1.3 ການເວົ້າ. ການປະຕິບັດໜ້າທີ່ວຽກງານສື່ສານມວນຊົນມີຄວາມກ່ຽວຂ້ອງກັບການເວົ້າຕະຫຼອດເວ ລາເພາະວ່າການເວົ້າແມ່ນການຖ່າຍທອດແລກປ່ຽນຂ່າວສານ, ຄວາມຮູ້, ປະສົບການ, ຄວາມຄິດ, ຄວາມເຫັນຈາກແຫຼ່ງຂໍ້ມູນ. ດັ່ງນັ້ນ ການເວົ້າຈຶ່ງມີລັກສະນະເປັນການຖາມ, ປາຖະກະຖາ, ສົນທະນາ ແລະບໍ່ມີໃຜຈະຮູ້ທຸກສິ່ງທຸກຢ່າງ ຕ້ອງໄດ້ຊອກສະແຫວງຫາຄວາມຮູ້ຈາກການຖາມ. ການຖາມເປັນການສອບສວນເບື້ອງຕົ້ນໃນສິ່ງທີ່ເຮົາບໍ່ຮູ້, ບໍ່ເຂົ້າໃຈຈາກການຟັງ, ການອ່ານ. ສາມາດຖາມຜູ້ທີ່ເຮົາຟັງເຂົ້າເຈົ້າ, ຖາມຜູ້ຂຽນໜັງສືທີ່ເຮົາອ່ານ, ຖາມຄູອາຈານຜູ້ທີ່ເຮົາຮຽນນຳຫຼືສອນເຮົາຫຼືຖາມຜູ້ອື່ນໆທີ່ກ່ຽວຂ້ອງກັບເລື່ອງທີ່ເຮົາບໍ່ທັນເຂົ້າໃຈ ແລະສົງໄສ.

ສິ່ງທີ່ນັກສື່ສານມວນຊົນຄວນປະຕິບັດບໍ່ຄວນເປັນຄົນຂີ້ອາຍໃນການຖາມສິ່ງທີ່ເຮົາບໍ່ຮູ້. ສິ່ງທີ່ບໍ່ຄວນເຮັດນັ້ນຄື "ການອວດອົ່ງທະນົງໂຕ" ເຊັ່ນ: ເປັນຄົນຮູ້ຫຼາຍ, ດູຖູກຜູ້ອື່ນວ່າບໍ່ຮູ້ເທົ່າຕົນເອງ ແລະຖືກຸດຜູ້ອື່ນວ່າຕ່ຳຕ້ອຍດ້ອຍກວ່າຕົນເອງ. ສິ່ງເຫຼົ່ານີ້ເປັນການກະທຳຂອງຄົນທີ່ຂາດຄວາມຮູ້ ເຖິງແມ່ນວ່າຈະມີຄວາມຮູ້ສູງປານໃດກໍຕາມບຸກຄົນນັ້ນຖືວ່າເປັນຜູ້ຂາດສະຕິສຳປະຊັນຍະ. ສະນັ້ນ ນັກສື່ສານມວນຊົນຕ້ອງໄດ້ເພິ່ງພາອາໄສບຸກຄົນ, ໝູ່ຄະນະ ແລະການຖາມຈຶ່ງຄວນເປັນຄົນມີມາລະຍາດ,ສຸພາບຮຽບຮ້ອຍ, ມີຈັນຍາບັນ, ມີສົມມາຄາລະວະ, ເຄົາລົບນັບຖື ແລະຮູ້ຈັກຕ່ຳຈັກສູງ.

12.1.4 ການຂຽນ. ການປະຕິບັດວຽກງານສື່ສານມວນຊົນສ່ວນຫຼາຍຈະກ່ຽວຂ້ອງກັບການຂຽນ. ການຂຽນເປັນການບັນທຶກຂໍ້ມູນທີ່ຄວນຮູ້, ຄວນຈື່ຈຳໄວ້, ເປັນການສະແດງຜົນຂອງການຟັງ, ການອ່ານ, ການໃຊ້ຄວາມຄິດ, ການຖາມ ເຮັດນັກສື່ສານມວນຊົນໄດ້ຖອດລະຫັດ, ຕີຄວາມໝາຍ ແລະເຂົ້າລະຫັດໃໝ່, ສ້າງສານຂຶ້ນມາເພື່ອໃຫ້ເປັນປະໂຫຍດແກ່ຜູ້ຮັບສານຕໍ່ໄປ. ດັ່ງນັ້ນ ວຽກງານການຂຽນຜູ້ຂຽນຕ້ອງຂຽນໃຫ້ເປັນ, ຂຽນໃຫ້ອ່ານເຂົ້າໃຈງ່າຍ, ເລືອກໃຊ້ຄຳສັບງ່າຍໆ, ສະ ແດງຄວາມໝາຍໄດ້ແຈ່ມແຈ້ງ. ການຂຽນອາດຈະສະແດງອອກເປັນສັນຍະລັກດ້ວຍຕົວອັກ ສອນ ແລະ ຮູບແຕ້ມ.

12.1.5 ການຄິດ.ໝາຍເຖິງການໃຊ້ຄວາມຄິດໃນສິ່ງທີ່ເຮົາໄດ້ຍິນ, ໄດ້ຟັງ, ໄດ້ເຫັນ ແລະ ໄດ້ອ່ານເລື່ອງຕ່າງໆໃຫ້ທັນກັບຄຳເວົ້າຫຼືຂໍ້ຂຽນເພື່ອຈະໄດ້ມີຄວາມເຂົ້າໃຈແນ່ນອນຂຶ້ນ.

12.2 **ທັດສະນະຄະຕິ**. ໝາຍເຖິງທ່າທີຄວາມຮູ້ສຶກຂອງບຸກຄົນທີ່ມີຕໍ່ສິ່ງໃດສິ່ງໜຶ່ງຫຼືເລື່ອງໃດເລື່ອງໜຶ່ງ. ໃນການສື່ສານຂອງມະນຸດນັ້ນທັດສະນະຄະຕິຂອງຜູ້ສົ່ງສານເປັນປັດໄຈໜຶ່ງທີ່ສາມາດເພີ່ມຫຼືຫຼຸດປະສິດທິພາບຂອງການສື່ສານ. ດັ່ງນັ້ນ ນັກສື່ສານມວນຊົນຕ້ອງໄດ້ພິຈາລະນາກ່ຽວກັບທັດສະ ນະຄະຕິ 3 ປະເພດຄື:

12.2.1 ທັດສະນະຄະຕິຕໍ່ຕົນເອງ. ນັກສື່ສານມວນຊົນຈະປະສົບຜົນສຳເລັດໄດ້ນັ້ນຂຶ້ນກັບທັດສະນະຄະຕິທີ່ມີຕໍ່ຕົນເອງ, ເປັນການປະເມີນຕົນເອງກ່ອນທີ່ຈະປະຕິບັດການສື່ສານ. ຖ້ານັກສື່ສານມີຄວາມໝັ້ນໃຈ ແລະເຊື່ອໝັ້ນວ່າຕົນເອງມີຄວາມສາມາດໂອກາດທີ່ຈະປະສົບຜົນສຳເລັດກໍຫຼາຍຂຶ້ນ. ແຕ່ໃນທາງກົງກັນຂ້າມ ຖ້າມີທັດສະນະຄະຕິບໍ່ດີຕໍ່ຕົນເອງ, ຂາດຄວາມເຊື່ອໝັ້ນຕໍ່ຕົນເອງກໍບໍ່ສາມາດທີ່ຈະປະສົບຜົນສຳເລັດໄດ້.

12.2.2 ທັດສະນະຄະຕິຕໍ່ເລື່ອງທີ່ຈະສື່ສານ. ເລື່ອງທີ່ຈະສື່ສານໝາຍເຖິງເນື້ອຫາຂອງສານທີ່ນັກສື່ສານມວນຊົນຈະຜະລິດເປັນຜົນ ງານຂອງຕົນເອງອອກມາ. ຖ້າມີທັດສະນະຄະຕິດີຕໍ່ເລື່ອງທີ່ຈະສື່ສານແລ້ວກໍຈະມີຄວາມກະຕືລືລົ້ນ, ເພິ່ງພໍໃຈ,ມີຄວາມໝັ້ນໃຈໃນການຊອກຫາຄວາມຮູ້ ແລະຂໍ້ມູນ, ພະຍາຍາມເຂົ້າເຖິງແຫຼ່ງ ຂ່າວ,ແຫຼ່ງຂໍ້ມູນມາຮຽບຮຽງຂຽນເປັນສານຫຼືສ້າງສານແລ້ວສົ່ງຜ່ານສື່ມວນຊົນໄປຍັງຜູ້ຮັບສານ. ແຕ່ຖ້າມີທັດສະນະຄະຕິບໍ່ດີຕໍ່ເລື່ອງທີ່ຕົນເອງຈະເຮັດການສື່ສານແລ້ວ ຜູ້ສົ່ງສານກໍຈະຂາດຄວາມໝັ້ນໃຈບໍ່ຢາກເຮັດການສື່ສານຫຼືເຮັດກໍບໍ່ໄດ້ດີ.

12.2.3 ທັດສະນະຄະຕິຕໍ່ຜູ້ຮັບສານ. ທັດສະນະຄະຕິຂອງຜູ້ຮັບສານຈະມີອິດທິພົນຫຼາຍຕໍ່ພຶດຕິກຳໃນການສື່ສານຂອງຜູ້ສົ່ງສານ. ຖ້ານັກສື່ສານມວນຊົນມີຄວາມຮູ້ສຶກທີ່ດີ, ມີຄວາມພໍໃຈໃນຕົວຂອງຜູ້ຮັບສານຕ້ອງໄດ້ພະ ຍາຍາມຊອກຫາຄຳເວົ້າທີ່ເໝາະສົມໃຫ້ມີຄວາມພໍໃຈຂອງຜູ້ຮັບສານ ແລະການສື່ສານກໍມີໂອກາດປະສົບຜົນສຳເລັດ. ຖ້າວ່າຜູ້ສົ່ງສານມີອະຄະຕິ, ບໍ່ມັກ, ບໍ່ພໍໃຈ, ບໍ່ຢາກເຮັດການສື່ສານ ກໍຈະສ້າງສານຫຼືເວົ້າໄປໂດຍບໍ່ຄິດວ່າຜູ້ຮັບສານຈະມີຄວາມຮູ້ສຶກແນວໃດ ແລະໂອກາດທີ່ຈະປະສົບຜົນສຳເລັດກໍມີໜ້ອຍ.

12.3 **ຄວາມຮູ້** (Knowledge). ນັກສື່ສານມວນຊົນທີ່ມີຄວາມຮູ້, ມີການສຶກສາ ຫຼືໄດ້ຜ່ານການເຝິກອົບຮົມມາ ກໍຈະສາ ມາດພັດທະນາຕົນເອງໃຫ້ມີທັກສະໃນການສື່ສານ ແລະປ່ຽນແປງທັດສະນະຄະຕິຂອງຕົນເອງ ເຮັດໃຫ້ການປະຕິບັດໜ້າທີ່ວຽກງານດີຂຶ້ນ. ສະນັ້ນ ນັກສື່ສານມວນຊົນ ຄວນມີຄວາມຮູ້ດັ່ງຕໍ່ໄປນີ້:

12.3.1 ຄວາມຮູ້ເລື່ອງທີ່ຈະສື່ສານ. ໝາຍເຖິງຄວາມຮູ້, ຄວາມເຂົ້າໃຈກ່ຽວກັບເນື້ອຫາຂອງເລື່ອງທີ່ຈະເຮັດການສື່ສານ ຫຼືເລື່ອງທີ່ໄດ້ຮັບການມອບໝາຍເພື່ອສ້າງສານໃຫ້ມີເນື້ອຫາຖືກຕ້ອງ. ຕົວຢ່າງ: ນັກຂ່າວທີ່ປະຈຳຢູ່ໃນສຳນັກງານອົງການໃດໜຶ່ງ ນັກຂ່າວຜູ້ນັ້ນກໍຕ້ອງມີຄວາມຮູ້ກ່ຽວກັບສຳນັກງານອົງການທີ່ຕົນເອງສັງກັດຢູ່ນັ້ນ ເພື່ອຈະໄດ້ນຳເອົາຂໍ້ມູນລາຍລະອຽດນັ້ນມາຂຽນໃຫ້ເປັນເນື້ອຫາສາລະທີ່ຖືກຕ້ອງກົງກັບຈຸດປະສົງ. ຖ້າຫາກວ່າບໍ່ມີຄວາມຮູ້ກ່ຽວກັບເລື່ອງທີ່ຕົນເອງຈະຂຽນກໍຕ້ອງໄດ້ຊອກສະແຫວງຫາຂໍ້ມູນກ່ອນທີ່ຈະລົງມືປະຕິບັດຕາມໜ້າທີ່ ທີ່ຖືກມອບໝາຍໃຫ້.

12.3.2 ຄວາມຮູ້ເລື່ອງການສື່ສານ. ໝາຍເຖິງ ຄວາມຮູ້ກ່ຽວກັບວົງຈອນການປະຕິບັດວຽກງານທີ່ຜູ້ສົ່ງສານຕ້ອງໄດ້ສຶກສາ ແລະເປັນປັດໄຈທີ່ມີສ່ວນກ່ຽວຂ້ອງກັບວຽກງານຂອງຕົນເອງຕາມລຳດັບຫຼືເປັນຄວາມຮູ້ກ່ຽວກັບຂັ້ນຕອນການປະຕິບັດວຽກງານການສື່ສານ. ການຮຽນຮູ້ກ່ຽວກັບຂະບວນການສື່ສານຈະເຮັດໃຫ້ນັກສື່ສານໄດ້ປັບຕົວໃນການສ້າງສານໃຫ້ເໝາະສົມກັບຜູ້ຮັບສານ ແລະເໝາະສົມກັບສື່ຊະນິດນັ້ນໆ.

12.4 **ສະຖານະພາບທາງສັງຄົມ ແລະວັດທະນະທຳ.** ມະນຸດທຸກຄົນທີ່ຢູ່ໃນສັງຄົມມີຕຳແໜ່ງ, ບົດບາດ, ຄວາມນິຍົມ, ຄວາມເຊື່ອທາງວັດ ທະນະທຳຂອງແຕ່ລະສັງຄົມ. ການສື່ສານຈຶ່ງເຮັດຕາມວັດທະນະທຳທີ່ມີອິດທິພົນຕໍ່ຄວາມຄິດ ແລະພຶດຕິກຳໃນການສື່ສານ. ສະຖານະພາບທາງສັງຄົມ ແລະວັດທະນະທຳຈະມີອິດທິພົນຕໍ່ການກຳນົດຈຸດປະສົງ, ຄວາມໝາຍ, ການເລືອກໃຊ້ສື່

ແລະການເລືອກຜູ້ຮັບສານ. ດັ່ງນັ້ນ ຜູ້ສົ່ງສານ ຫຼືນັກສື່ສານມວນຊົນມີຄວາມສະດວກ, ຍິນດີທີ່ຈະສື່ສານກັບຜູ້ທີ່ມີວັດທະນະທຳໃກ້ຄຽງກັນກັບຕົນເອງ. ແຕ່ຈະມີບັນຫາ ຫຼືມີອຸປະສັກໃນເມື່ອການຕິດຕໍ່ສື່ສານກັບຜູ້ຮັບສານທີ່ມີສັງຄົມ ຫຼືວັດທະນະທຳແຕກຕ່າງກັນ.

ຄຸນສົມບັດອີກດ້ານໜຶ່ງຂອງນັກສື່ສານມວນຊົນທີ່ຈະຕ້ອງໄດ້ພັດທະນາຕົນເອງນັ້ນຄື: ເປັນຄົນທີ່ມີຄວາມອ່ອງໄວ, ຫ້າວຫັນ, ຮູ້ສັງເກດ, ສົນໃຈກິດຈະກຳຂອງມະນຸດ, ມີຄວາມຈື່ຈຳດີ, ເປັນຄົນມີທັດສະນະກວ້າງຂວາງ, ເປີດເຜີຍ ແລະສຸພາບ. ທັງໝົດທີ່ກ່າວມານີ້ແມ່ນທັດສະນະຂອງນັກສື່ສານມວນຊົນທີ່ດີ, ເປັນນັກສື່ສານມວນຊົນທີ່ມີດັ່ງສຳລັບຂ່າວ (Nose for News).

ນັກສື່ສານມວນຊົນ ນອກຈາກຈະເປັນຜູ້ມີຄຸນສົມບັດທີ່ດີແລ້ວ ສິ່ງທີ່ຄວນສຶກສາ ແລະຄວນເອົາໃຈໃສ່ອີກດ້ານໜຶ່ງຄື "ຈັນຍາບັນ".

13. **ຈັນຍາບັນຂອງນັກສື່ສານມວນຊົນ.** ຈັນຍາບັນຂອງນັກສື່ສານມວນຊົນຄວນປະຕິບັດດັ່ງນີ້:

13.1 ຄວນສົ່ງເສີມ ແລະຮັກສາເສລີພາບຂອງສື່ມວນຊົນສຳລັບຜູ້ປະກອບວິຊາຊີບສື່ສານມວນຊົນ.

13.2 ການສະເໜີຂ່າວ, ຮູບພາບຫຼືການສະແດງຄວາມຄິດເຫັນຕ້ອງປະຕິບັດດ້ວຍຄວາມສຸພາບ ແລະສຸດຈະລິດ.

13.3 ປາສະຈາກຜົນປະໂຫຍດສ່ວນຕົວຫຼືໄດ້ຮັບການຊີ້ຈ້ຳ.

13.4 ການສະເໜີຂ່າວຕ້ອງສະເໜີແຕ່ຄວາມຈິງ ຫຼືການເວັ້ນການຕໍ່ເຕີມເສີມແຕ່ງ.

13.5 ການທີ່ຈະໄດ້ຂ່າວ, ຮູບພາບຫຼືຂໍ້ມູນຕ່າງໆມາເປັນຂອງຕົນເອງຕ້ອງໃຊ້ວິທີການທີ່ສຸພາບ ແລະຊື່ສັດບໍລິສຸດ.

13.6 ຕ້ອງເຄົາລົບຕໍ່ຄວາມໄວ້ເນື້ອເຊື່ອໃຈທີ່ຖືກມອບໝາຍຈາກການປະຕິບັດໜ້າທີ່ໃນວິຊາຊີບຂອງຕົນ.

13.7 ຕ້ອງປະຕິບັດໜ້າທີ່ຂອງຕົນເອງ ໂດຍຖືເອົາຜົນປະໂຫຍດສ່ວນລວມເປັນສິ່ງສຳ ຄັນ, ບໍ່ໃຊ້ຕຳແໜ່ງໜ້າທີ່ສະແຫວງຫາສິດຜົນປະໂຫຍດສ່ວນຕົວຫຼືໝູ່ຄະນະ.

13.8 ບໍ່ຄວນເຮັດສິ່ງໃດໆທີ່ເປັນການບັ່ນຮອນກຽດຊື່ສຽງຂອງວິຊາຊີບຫຼືຄວາມສາມັກ ຄີຂອງເພື່ອນຮ່ວມວິຊາຊີບ.

13.9 ຄວາມເປັນຊາດ ແມ່ນຄວາມເປັນຕົວເອງບໍ່ເປັນຫາດຂອງໃຜທັງທາງກາຍ ແລະຈິດໃຈ ໂດຍບໍ່ຮັບສິນບົນຊີ້ຈ້ຳໃດໆ.

13.10 ຄວາມຈິງໃຈ ແມ່ນການບໍ່ມີເຈດຕະນາປິດເບືອນ, ຖ້າມີການຜິດພາດກໍຄວນຮີບແກ້ໄຂ ແລະຂໍອະໄພ.

13.11 ຄວາມທ່ຽງທຳ ແມ່ນການບໍ່ມີຄວາມລຳອຽງຫຼືບໍ່ເຂົ້າຂ້າງອອກຂາໃຜ ແລະບໍ່ພ້ອມພຸ້ນ ພ້ອມພີ.

13.12 ຄວາມມີນ້ຳໃຈເປັນນັກກິລາ ແມ່ນການປະຕິບັດໃນສິ່ງທີ່ດີງາມ, ບໍ່ລະເມີດສິດທິສ່ວນຕົວຂອງບຸກຄົນ.

13.13 ຄວາມມີມາລະຍາດ ແມ່ນການໃຊ້ພາສາ ແລະຮູບພາບບໍ່ຫຍາບຄາຍ, ລາມົກ ແລະອາບາຈາມ.

ວຽກງານສື່ສານມວນຊົນ ເປັນວຽກງານທີ່ມີຄວາມສຳຄັນ ແລະມີກຽດສູງໃນການປະ ສານ ງານ, ສ້າງຄວາມເຂົ້າໃຈທີ່ດີລະຫວ່າງຄົນໃນຫຼາຍປະເທດ,ຫຼາຍຊັ້ນຄົນ ແລະມີຄວາມຮັບ ຜິດຊອບ ທີ່ຍິ່ງໃຫຍ່ໃນການສ້າງສັນຕິພາບໃຫ້ແກ່ໂລກ. ດັ່ງນັ້ນ ນັກສື່ສານມວນຊົນຄວນຄຳນຶງ ສະເໝີ ວ່າການເຜີຍແຜ່ຂໍ້ມູນຂ່າວສານ ຖ້າຫາກຂາດຄວາມລະມັດລະວັງ ຫຼືໃຊ້ພາສາຜິດພາດພຽງໜ້ອຍ ດຽວກໍສາມາດທຳລາຍສິ່ງດີໆທີ່ມະນຸດໄດ້ພະຍາຍາມສ້າງຂຶ້ນມາເປັນເວລາດົນນານນັ້ນໄດ້ໃນຊົ່ວພິບ ຕາ. ບາງກໍລະນີສິ່ງທີ່ເກີດຂຶ້ນເປັນສິ່ງນ້ອຍໆກໍບໍ່ຄວນເກັບຫຼືຍົກຂຶ້ນມາເປັນເລື່ອງໃຫຍ່ໄດ້ ເພາະວ່າ ເປັນສິ່ງທີ່ບໍ່ຖືກຕ້ອງຕາມຫຼັກຈັນຍາບັນຂອງນັກສື່ສານມວນຊົນ.

14. ສະຫຼຸບ

ໃນປັດຈຸບັນເລື່ອງກ່ຽວກັບຂໍ້ມູນຂ່າວສານ ເປັນທີ່ຍອມຮັບຂອງສັງຄົມມະນຸດ, ເປັນປັດໄຈທີ່ ມີຄວາມສຳຄັນຕໍ່ກັບການດຳລົງຊີວິດການເປັນຢູ່ຂອງມະນຸດສຳລັບການຕັດສິນໃຈໃນການປະກອບ ອາຊີບ, ການສຶກສາ, ການພັດທະນາເສດຖະກິດ, ການຄ້າຂາຍ, ການບໍລິການ ແລະອື່ນໆ. ຂໍ້ມູນ ຂ່າວສານກ່ຽວກັບບັນຫາເຫຼົ່ານີ້ ເປັນສິ່ງທີ່ທຸກຄົນມີຄວາມຕ້ອງການ ແລະໄດ້ຊອກສະແຫວງຫາຈາກ ແຫຼ່ງຂໍ້ມູນຕ່າງໆຈາກບຸກຄົນ, ກຸ່ມຄົນ, ໜ່ວຍງານ,· ອົງການ, ສະຖານທີ່ປະ ຕິບັດວຽກງານຕ່າງໆ ຕະຫຼອດເຖິງສຳນັກງານອົງການສື່ມວນຊົນ.

ສື່ມວນຊົນປະກອບດ້ວຍສື່ສິ່ງພິມເຊັ່ນ: ໜັງສືພິມ ແລະ ວາລະສານ, ສື່ເອເລັກໂທຣນິກມີ: ວິທະຍຸກະຈາຍສຽງ, ໂທລະພາບ, ອິນເຕີເນັດ, ຮູບເງົາ, ໂທລະສັບ, ໂທລະໂຄ່ງ,ໂທລະເລກ...ສິ່ງ ເຫຼົ່ານີ້ນັບວ່າເປັນສະຖາບັນໜຶ່ງທີ່ປະກອບຢູ່ໃນສັງຄົມຂອງມະນຸດເຊັ່ນດຽວ ກັບບຸກຄົນ ຫຼືປະຊາຊົນ ທົ່ວໄປ.

ສື່ມວນຊົນ ໄດ້ຮັບການພັດທະນາຮູບແບບການນຳສະເໜີຂ່າວສານໃຫ້ມີຄວາມວ່ອງໄວ, ທັນກັບເຫດການ ແລະໄດ້ມີການປັບປຸງເນື້ອໃນຂອງຂ່າວໃຫ້ມີຄຸນະພາບດີຂຶ້ນ ໂດຍສະເພາະການ ຊອກສະແຫວງຫາແຫຼ່ງຂໍ້ມູນ, ການເຈາະເລິກບັນຫາຂອງເຫດການທີ່ເກີດໃນແຕ່ລະວັນ ແລະການ ເພີ່ມທະວີບົດວິເຄາະ, ບົດວິຈານ, ບົດໃຫ້ຄວາມຮູ້ທີ່ເປັນປະໂຫຍດ ແລະສາລະບັນເທີງຕ່າງໆໃຫ້ມີ ຄວາມຫຼາກຫຼາຍຂຶ້ນ. ສື່ມວນຊົນມີພາລະບົດບາດທີ່ສຳຄັນຕໍ່ກັບການພັດທະນາສັງຄົມຫຼາຍດ້ານເປັນ ກະບອກສຽງໃຫ້ແກ່ອົງການຈັດຕັ້ງຂອງພັກ, ລັດຖະບານ ແລະສັງຄົມໃນການໂຄສະນາເຜີຍແຜ່ ແນວທາງນະໂຍບາຍຂອງພັກ,ລະບຽບກົດໝາຍຂອງລັດ, ສຶກສາອົບ ຮົມ, ປຸກລະດົມນ້ຳໃຈຮັກ ຊາດ, ສະໜອງຂໍ້ມູນຂ່າວສານທາງດ້ານການເມືອງ, ເສດຖະກິດ, ສັງຄົມ, ວິທະຍາສາດ, ເທັກໂນ ໂລຢີ, ສາລະຄວາມຮູ້, ສາລະບັນເທີງໃຫ້ແກ່ສັງຄົມ, ປະກອບສ່ວນຕ້ານປາກົດການທຍ້ທ້ໃນສັງຄົມ,

ຕ້ານຖ້ອຍທຳນອງບິດເບືອນຄວາມຈິງ, ເປັນເວທີເສີມຂະຫຍາຍປະ ຊາທິປະໄຕ ແລະສິດເປັນເຈົ້າ ຂອງປະເທດຊາດຂອງປະຊາຊົນບັນດາເຜົ່າ.

ຄຳວ່າ "ສື່ມວນຊົນສຶກສາ" ໝາຍເຖິງການສຶກສາໃຫ້ມີຄວາມສາມາດໃນການອ່ານສື່ອອກ ແລະຂຽນສື່ໄດ້ຫຼືການຮູ້ໃຫ້ທັນສື່, ໃຫ້ມີຄວາມສຳນຶກຮູ້ໃນການເລືອກຮັບສື່. ແນວຄິດກ່ຽວກັບສື່ມວນ ຊົນສຶກສາຫຼືການຮູ້ເທົ່າທັນສື່ໃນຄວາມໝາຍທີ່ຮູ້ຈັກກັນຢ່າງຫຼວງຫຼາຍນັ້ນ ໝາຍເຖິງແນວຄິດທີ່ຈະ ສົ່ງເສີມການອ່ານສື່ອອກຫຼືສ້າງຄວາມສາມາດໃນການອ່ານສື່ໃຫ້ເຂົ້າໃຈແລະ ປະເມີນຄຸນຄ່າຂອງສື່, ສາມາດວິເຄາະຂ່າວສານຈາກສື່ປະເພດຕ່າງໆໄດ້. ສ້າງຄວາມສາມາດໃນການຂຽນສື່ ແລະສື່ສານ ໄດ້,ສາມາດສະແດງອອກທາງດ້ານຂໍ້ມູນຂ່າວສານ,ຄວາມຄິດເຫັນ, ອາລົມ, ຄວາມຮູ້ສຶກຕ່າງໆໂດຍ ຜ່ານສື່ຫຼາຍປະເພດ ແລະຫຼາຍຮູບແບບ. ສຶກສາໃຫ້ເຂົ້າໃຈວ່າສື່ມວນຊົນເປັນຜູ້ສ້າງພາບຄວາມຈິງ ຂຶ້ນມາໄດ້ແນວໃດ. ນອກຈາກນີ້ ສື່ມວນຊົນສຶກສາຍັງມີເປົ້າໝາຍສຳລັບການສົ່ງເສີມການຮຽນຮູ້ຈັກ ກັບສື່ເພື່ອໃຫ້ມີຄວາມເຂົ້າໃຈ, ສຶກສາເຖິງຄວາມເປັນມະນຸດ ແລະວິຖີຊີວິດການເປັນຢູ່ຂອງຄົນໃນ ສັງຄົມ, ມີຄວາມຊື່ນຊົມຕໍ່ມໍລະດົກທາງດ້ານວັດທະນະທຳ, ສຶກສາໃຫ້ມີຄວາມສຳນຶກຮູ້ກ່ຽວກັບການ ຜະລິດສື່.

ສື່ມວນຊົນສຶກສາ ຫຼືການຮຽນຮູ້ໃຫ້ທັນກັບສື່ນັ້ນ ເປັນທັກສະທີ່ມີຄວາມສຳຄັນ ແລະຈຳເປັນ ທີ່ທຸກຄົນໃນຍຸກສະໄໝນີ້ຕ້ອງໄດ້ສຶກສາ, ວິເຄາະ ແລະວິໄຈ. ຍ້ອນວ່າສື່ໄດ້ຄອບຄອງຕຳແໜ່ງໃນ ໃຈກາງຊີວິດຂອງມະນຸດເກືອບທຸກໆດ້ານ, ສື່ມີອິດທິພົນຕໍ່ສະຖາບັນທາງສັງຄົມມາຕັ້ງແຕ່ດົນນານ ເຊັ່ນ: ຄອບຄົວ,ໂຮງຮຽນ,ວັດ ແລະສະຖານທີ່ຕ່າງໆ. ທຸກສິ່ງທີ່ເຮົາຮູ້ກ່ຽວກັບໂລກເຊິ່ງຢູ່ຫ່າງໄກ ເກີນກວ່າປະສົບການຂອງເຮົາຈະສຳຜັດໄດ້ໂດຍກົງລ້ວນແລ້ວແຕ່ແມ່ນການຮັບຮູ້ຜ່ານສື່ທັງນັ້ນ. ສະນັ້ນ ກ່ຽວກັບການສຶກສາກ່ຽວກັບສື່ມວນຊົນ ເຮົາຈຶ່ງມີຄວາມຈຳເປັນຕ້ອງໄດ້ໝັ່ນເຝິກຝົນ ແລະ ພັດທະນາທັກສະ ໃນການອ່ານສື່ ໃຫ້ມີຄວາມສາມາດສູງ ເພື່ອຊ່ວຍໃຫ້ເຮົາເປັນຄົນສະຫຼາດໃນ ການຮັບສື່, ເປັນນາຍຂອງສື່, ຄວບຄຸມຄວາມຄິດ,ຄວາມເຊື່ອ ແລະພຶດຕິກຳຕ່າງໆທີ່ສອດແຊກມາ ກັບເນື້ອຫາຂອງສື່ໄດ້. ສຶກສາໃຫ້ມີຄວາມສາມາດໃນການຈຳແນກໂລກແຫ່ງຄວາມຈິງກັບໂລກແຫ່ງ ຈິນຕະນາການໄດ້ຊັດເຈນຂຶ້ນ. ຖ້າຕ້ອງການເຂົ້າໃຈສື່ກໍຕ້ອງຮັບຄວາມຈິງວ່າ "ສື່ທຸກຊະນິດເປັນສິ່ງ ທີ່ຄົນສ້າງຂຶ້ນ". ສື່ບໍ່ແມ່ນແວ່ນສະທ້ອນພາບຄວາມຈິງຕາມທີ່ເປັນຈິງ. ແຕ່ກົງກັນຂ້າມ "ສື່" ແມ່ນ ຄົນມີຄວາມພະ ຍາຍາມໃຊ້ເທັກນິກທຸກຢ່າງຕາມຂະບວນການຜະລິດມາເຮັດ ເພື່ອເຮັດໃຫ້ຜົນອອກ ມາເປັນທຳມະຊາດທີ່ສຸດຈົນສາມາດເວົ້າໄດ້ວ່າຄວາມສຳເລັດຂອງສື່ໜຶ່ງໆວັດແທກກັນຢູ່ທີ່ "ຄວາມ ສົມ ຈິງ" ເປັນອັນດັບໜຶ່ງ. ດັ່ງນັ້ນ ການບໍລິໂພກສື່ທີ່ເຮົາມີຄວາມຊຶມເຄີຍມາຕະຫຼອດນັ້ນແມ່ນ ຄວາມຊຳນານທາງດ້ານເທັກນິກຂອງຜູ້ສ້າງສື່, ແມ່ນຜົນຜະລິດຂັ້ນສຸດທ້າຍທີ່ເກີດມາຈາກຄວາມຄິດ ແລະການຕັດສິນໃຈຂອງມະນຸດຜູ້ຜະລິດສື່.

ເຮົາສ້າງພາບຂຶ້ນມາໃນສະໝອງຕາມທີ່ເຮົາໄດ້ເຫັນ ແລະໄດ້ຍິນມາຕັ້ງແຕ່ກຳເນີດ ແຕ່ຍ້ອນ ວ່າໂລກນີ້ ມີຄວາມກວ້າງໃຫຍ່ໄພສານເກີນກວ່າທີ່ເຮົາຈະສາມາດເຫັນດ້ວຍຕາຂອງຕົນເອງ, ຄວາມ

ຄິດ, ການອ່ານ, ການຮັບຮູ້, ຄວາມເຂົ້າໃຈຂອງເຮົາຕໍ່ໂລກ ແລະສິ່ງຕ່າງໆທີ່ເກີດຂຶ້ນໃນໂລກທັ້ງໝົດເປັນການກະທຳຜ່ານສື່ທັ້ງນັ້ນ. ສື່ເປັນຜູ້ຄັດເລືອກ,ຈັດລຳດັບຄວາມສຳຄັນ, ປະເມີນຄຸນຄ່າ ແລະຕີຄວາມໝາຍສິ່ງຕ່າງໆກ່ອນທີ່ຈະສົ່ງມາເຖິງເຮົາ ສ່ວນເຮົາກໍຮັບໄປຕາມຄວາມເຊື່ອ. ຜູ້ທີ່ຮູ້ທັນສື່ຈຶ່ງຄວນຕັ້ງຄຳຖາມກັບສື່ທີ່ເອີ້ນວ່າ "ຄວາມຈິງຜ່ານສື່" ນັ້ນແມ່ນສິ່ງທີ່ເກີດຂຶ້ນຈິງຫຼືບໍ່? ເພື່ອບໍ່ໃຫ້ສື່ສົ່ງອິດທິພົນຕໍ່ທັດສະນະຄະຕິ ແລະຄວາມຄິດຂອງເຮົາຫຼາຍເກີນໄປ.

ດັ່ງທີ່ຮູ້ນຳກັນແລ້ວວ່າ ສື່ບໍ່ແມ່ນຜູ້ສ້າງ"ຄວາມຈິງ"ແຕ່ຝ່າຍດຽວຜູ້ຮັບສານກໍມີສິດເລືອກຕີຄວາມໝາຍຂອງສານຈາກສື່ດຽວກັນດ້ວຍທັດສະນະທີ່ແຕກຕ່າງກັນ. ແຕ່ລະຄົນຈະໃຊ້ສິດປັບປ່ຽນຄວາມໝາຍຂອງສື່ໂດຍມີປັດໄຈສຳຄັນເປັນຕົວກຳນົດເຊັ່ນ: ອາຍຸ, ເພດ, ການສຶກສາ,ຊົນຊັ້ນ, ຊົນຊາດ, ສາສະໜາ, ສັງຄົມ, ພື້ນຖານທາງດ້ານຮີດຄອງປະເພນີ, ວັດທະນະທຳ, ຄວາມຕ້ອງການ ແລະຄວາມເພິ່ງພໍໃຈສ່ວນຕົວ. ເຮົາຈະເຂົ້າໃຈສື່ຫຼາຍຂຶ້ນ ເມື່ອເຮົາຄິດສື່ໃນທຸກວັນນີ້ເປັນອົງການທາງທຸລະກິດທັງໝົດ. ສື່ທຸກຊະນິດມີໜ້າທີ່ຕ້ອງເຮັດໃຫ້ມີຜົນກຳໄລສູງສຸດກັບອົງການການຜະລິດເນື້ອຫາຕ່າງໆຂອງສື່ ແລະຕ້ອງໄດ້ຄຳນຶງເຖິງຈຳນວນຂອງຜູ້ຮັບສານເປັນອັນດັບທີໜຶ່ງ. ອົງການທີ່ຜະລິດສື່ຈະຕີລາຄາສື່ບໍ່ແຕກຕ່າງຫຍັງກັບ "ສິນຄ້າ"ທົ່ວໄປ. ການທີ່ສື່ເປັນທຸລະກິດຈຶ່ງສົ່ງຜົນສະທ້ອນຕໍ່ເນື້ອຫາຂອງສານ, ການຜະລິດຕ້ອງໄດ້ໃຊ້ເທັກນິກໃນການຜະລິດ ແລະຈັດຂະບວນການຈຳໜ່າຍແຈກຢາຍສື່ອອກໄປທົ່ວສັງຄົມ. ສິ່ງທີ່ເປັນໜ້າສົນໃຈຫຼາຍກວ່ານີ້ ສື່ມີທ່າອ່ຽງທີ່ຈະເປັນທຸລະກິດຜູກຂາດຫຼາຍຂຶ້ນ ແລະສົ່ງອິດທິພົນຕໍ່ຜູ້ບໍລິໂພກທົ່ວໂລກ.

ສື່ເຮັດໜ້າທີ່ໃນການໂຄສະນາເຜີຍແຜ່ຄ່ານິຍົມ ແລະວິທີການດຳເນີນຊີວິດການເປັນຢູ່ໃຫ້ກັບຄົນໃນສັງຄົມມີປະສິດທິພາບຫຼາຍຂຶ້ນ. ໃນສັງຄົມຂອງບັນດາປະເທດທຶນນິຍົມສື່ເຮັດໜ້າທີ່ເປັນກະແສຫຼັກໃນການສ້າງຄ່ານິຍົມ. ສະນັ້ນ ຈຶ່ງມີຄວາມກະຕືລືລົ້ນທີ່ຈະຊ່ວຍໃຫ້ນາຍທຶນບໍລິໂພກສິນຄ້າຢ່າງຟຸມເຟືອຍ ແລະບໍ່ມີສາລະໃຫ້ກັບປະຊາຊົນ. ການໂຄສະນາ ເປັນພາບລວງຕາໃຫ້ສິນຄ້າທຳມະດາກາຍເປັນຂອງວິເສດ, ສາມາດແກ້ບັນຫາຂອງຜູ້ບໍລິໂພກໄດ້ຢ່າງທັນອົກທັນໃຈ ແລະເປັນກົນໄກສ້າງຄວາມໄຝ່ຝັນຂະໜາດໃຫຍ່ທີ່ມີບົດບາດຕໍ່ລະບົບເສດຖະກິດ,ການ ເມືອງ ແລະປະຊາຊົນໃນສັງຄົມ. ສື່ມີອິດທິພົນຕໍ່ການປ່ຽນແປງທາງດ້ານການເມືອງ ແລະສັງຄົມຢ່າງມະຫາສານ. ສື່ຊ່ວຍເສີມກຳລັງໃຫ້ກັບຄ່ານິຍົມທາງສັງຄົມແບບໃໝ່ ແລະສ່ວນຫຼາຍມັກຖືເອົາແບບຢ່າງຈາກປະເທດຕາເວັນຕົກມາເປັນຄ່ານິຍົມທີ່ສັງຄົມຍອມຮັບວ່າແມ່ນສິ່ງທີ່ມີຄວາມຖືກຕ້ອງ. ປັດຈຸບັນສິ່ງດັ່ງກ່າວນີ້ໄດ້ເຮັດໃຫ້ທັດສະນະຄະຕິຕໍ່ຄອບຄົວ, ຕໍ່ຄວາມສຸກໃນຊີວິດ, ຕໍ່ເພື່ອນຕ່າງເພດ, ຕໍ່ວັດທະນະທຳຂອງຊາດໄດ້ມີການປ່ຽນແປງຢ່າງວ່ອງໄວ. ທາງດ້ານການເມືອງສື່ສາມາດສ້າງພາບຂອງຜູ້ນຳໃຫ້ເປັນໜ້າສົນໃຈຢູ່ສະເໝີ. ໃນເວລາດຽວກັນນັ້ນກໍສາມາດເຮັດໃຫ້ບຸກຄົນທີ່ດ້ອຍໂອກາດ ແລະປະເທດດ້ອຍພັດທະນາໃຫ້ຫັນໄປສົນໃຈດ້ານການເມືອງ ແລະສັງຄົມ.

- ສື່ທຸກຊະນິດມີວິທີການນຳສະເໜີສານເພື່ອສ້າງຄວາມເປັນຈິງໃຫ້ກັບຜູ້ຮັບສານ ແລະມີຄວາມແຕກຕ່າງກັນ ດ້ວຍເລື່ອງຫຼືເຫດການດຽວກັນ.

- ສື່ແຕ່ລະຊະນິດຈະສື່ສານຕ່າງກັນ, ສ້າງຄວາມຮູ້ສຶກທີ່ດີ ແລະມີຄວາມງາມທາງດ້ານສິລະປະທີ່ແຕກຕ່າງກັນໃຫ້ກັບຜູ້ຮັບສານ.

- ຮູບແບບຂອງສື່ກັບເນື້ອຫາຂອງສື່ຈະມີຄວາມກ່ຽວຂ້ອງກັນຢ່າງໃກ້ຊິດ ແລະຮູບແບບຂອງສື່ຈຶ່ງເປັນສ່ວນໜຶ່ງຂອງສານໄປໃນຕົວ.

ແນວຄິດກ່ຽວກັບສື່ມວນຊົນສຶກສາ ໄດ້ຂະຫຍາຍຕົວອອກໄປຢ່າງກວ້າງຂວາງໃນຫຼາຍປະເທດທົ່ວໂລກ ແລະເປັນສ່ວນໜຶ່ງຂອງຂະບວນການເຄື່ອນໄຫວທາງດ້ານວັດທະນະທຳ (Cultural Movement) ທີ່ມີຄວາມສຳຄັນຫຼາຍ. ການຮູ້ເທົ່າທັນສື່ມີຄວາມຈຳເປັນຕ້ອງດຳ ເນີນໄປໃຫ້ກວ້າງຂວາງ ແລະວ່ອງໄວຄຽງຄູ່ໄປກັບການປ່ຽນແປງຂອງເທັກໂນໂລຢີການສື່ສານສະໄໝໃໝ່ ເພື່ອໃຫ້ເຍົາວະຊົນຄົນລຸ້ນໃໝ່ທີ່ເຕີບໂຕທ່າມກາງສິ່ງແວດລ້ອມຂອງການສື່ສານແບບໃໝ່ (Medias cape) ມີທັກສະໃນການວິເຄາະສື່ ແລະການຜະລິດສື່, ມີຄວາມສາມາດໃນການວິຈານ ແລະມີຄວາມກ້າຫານໃນການສະແດງຄວາມຄິດເຫັນຢ່າງອິດສະລະໄດ້.

ສື່ມວນຊົນສຶກສາເຊື່ອວ່າ ຄົນທີ່ພັດທະນາທັກສະການຮຽນຮູ້ສື່ເຖິງລະດັບສູງ ຈະມີມຸມມອງຕໍ່ສານທີ່ຕົນເອງໄດ້ຮັບກວ້າງຂວາງຂຶ້ນ. ການມີທັກສະຫຼາຍກໍຍິ່ງມີອິດສະລະທີ່ຈະເລືອກຕີຄວາມໝາຍໄດ້ຫຼາຍມິຕິແຕກຕ່າງກັນ ແລະຮູ້ເທົ່າທັນສື່, ສາມາດຄວບຄຸມເນື້ອຫາຂອງສື່ໄດ້ດີ. ຫຼີກເວັ້ນການໄດ້ຮັບຜົນກະທົບທີ່ບໍ່ເພິ່ງປາຖະໜາ ແລະເລືອກຂະຫຍາຍຜົນກະທົບ ຕາມຄວາມຕ້ອງການ. ການເປີດຮັບສື່ກໍມີສະຕິ ເຖິງແມ່ນວ່າຈະຍອມຮັບຄວາມໝາຍຕາມທີ່ສື່ສ້າງຂຶ້ນມາໃຫ້ກໍຕາມ ແຕ່ເປັນການຮັບແບບຄົນທີ່ມີຄວາມຮູ້ ແລະໃຊ້ເຫດຜົນພິຈາລະນາທີ່ດີ.

ຄຳວ່າ "ທິດສະດີ" ໝາຍເຖິງການບັນທຶກອະທິບາຍປາກົດການຫຼືສິ່ງຕ່າງໆທີ່ເກີດຂຶ້ນຈິງ ໂດຍໄດ້ຜ່ານການກວດແກ້ແລ້ວ ແລະຖືກຍອມຮັບກັນແລ້ວຕາມຄວາມເໝາະສົມ. ການສຶກສາທິດສະດີຈະຊ່ວຍກະຕຸ້ນຄວາມຄິດໄປສູ່ການສຶກສາຄົ້ນຄວ້າຕາມຄວາມຈິງໂດຍນຳໃຊ້ວິທີການໃໝ່ໆໃນທິດສະດີ ແລະສາມາດກຳນົດວິທີການທົດລອງຫຼືພິສູດທາງດ້ານວິທະຍາສາດ.

ສຳລັບ "ທິດສະດີທາງການສື່ສານ" ໝາຍເຖິງການອະທິບາຍກ່ຽວກັບການສື່ສານໂດຍອີງໃສ່ທິດສະດີທາງດ້ານວິທະຍາສາດສາຂາວິຊາຕ່າງໆມາໃຊ້ ເຊັ່ນ: ທິດສະດີທາງດ້ານຈິດຕະສາດ, ປັດຊະຍາ, ລັດຖະສາດ, ຄະນິດສາດ ແລະອື່ນໆ. ສະນັ້ນໃນການປະຕິບັດວຽກງານຂອງສື່ມວນຊົນຈຶ່ງດຳເນີນງານຕາມຄວາມຄິດທີ່ຜູກພັນຢ່າງສະໜິດແໜ້ນກັບລະບອບການປົກຄອງ ຂອງແຕ່ລະປະເທດ.

ແນວຄິດກ່ຽວກັບລະບົບສື່ສານມວນຊົນມີຄວາມສະລັບຊັບຊ້ອນ ແລະມີຄວາມແຕກຕ່າງກັນຫຼາຍລັກສະນະ ແຕ່ນັກສື່ສານມວນຊົນນິຍົມແບ່ງອອກ ເປັນ 2 ຮູບແບບຄື: ການສື່ສານມວນຊົນແບບເສລີ (Free system) ຕາມແນວຄິດຂອງບັນດາປະເທດທີ່ຍຶດຖືອຸດົມການເສລີນິຍົມ ໂດຍສະເພາະປະເທດສະຫະລັດອາເມຣິກາ ແລະອັງກິດ. ສ່ວນອີກຮູບແບບໜຶ່ງແມ່ນໃຊ້ລະບົບສື່ສານມວນຊົນແບບສັງຄົມນິຍົມ (Socialism system = Totalitarian system).

ສື່ມວນຊົນມີພາລະບົດບາດໃນການເປັນກະບອກສຽງໃຫ້ແກ່ອົງການຈັດຕັ້ງພັກລັດຖະບານ ແລະສັງຄົມໃນການໂຄສະນາເຜີຍແຜ່, ສຶກສາອົບຮົມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ປຸກລະດົມນ້ຳໃຈຮັກຊາດ, ສະໜອງຂໍ້ມູນຂ່າວສານທາງດ້ານການເມືອງ, ເສດຖະກິດ, ສັງຄົມ, ວິທະຍາສາດ, ເທັກໂນໂລຢີ, ສາລະຄວາມຮູ້, ສາລະບັນເທີງໃຫ້ແກ່ສັງຄົມ, ປະກອບ ສ່ວນຕ້ານປາກົດການຫຍໍ້ທໍ້ໃນສັງຄົມ, ຕ້ານທຸກຖ້ອຍທຳນອງບິດເບືອນຄວາມຈິງ, ເປັນເວທີເສີມຂະຫຍາຍປະຊາທິປະໄຕ ແລະສິດເປັນເຈົ້າຂອງປະເທດຊາດຂອງປະຊາຊົນບັນດາເຜົ່າ.

ສະຫຼຸບແລ້ວໜ້າທີ່ຫຼັກຂອງສື່ສານມວນຊົນແມ່ນການລາຍງານຂໍ້ມູນຂ່າວສານກ່ຽວກັບເຫດການຕ່າງໆທີ່ເກີດຂຶ້ນໃນສັງຄົມໃຫ້ປະຊາຊົນໄດ້ຮັບຮູ້. ດັ່ງນັ້ນ ການສື່ຂ່າວ ແລະການຂຽນຂ່າວຈຶ່ງເປັນໜ້າທີ່ຂອງຜູ້ສື່ຂ່າວຫຼືນັກຂ່າວ. ສຳລັບຜູ້ສື່ຂ່າວຫຼືນັກຂ່າວຕ້ອງມີຄວາມຮູ້, ມີທັກສະໃນການສື່ຂ່າວຫຼືໄປຊອກເກັບກຳຂໍ້ມູນ ແລະສາມາດຂຽນຂ່າວ ຍ້ອນວ່າການສື່ຂ່າວນັ້ນມີລັກສະນະເໝືອນກັນກັບການຄົ້ນຄວ້າ, ສືບຫາຄວາມຈິງ. ສ່ວນການຂຽນຂຶ້ນກັບຮູບແບບ, ວິທີການ, ເທັກນິກການຂຽນທີ່ເປັນເອກະລັກສະເພາະບໍ່ເໝືອນກັນກັບການຂຽນບົດຄວາມ, ບົດເລື່ອງສັ້ນຫຼືການຂຽນອື່ນໆ. ການຂຽນຂ່າວຂຶ້ນກັບຈຸດປະສົງວ່າຈະຂຽນກ່ຽວກັບຫຍັງ, ຮູບແບບການຂຽນຈະຂຽນແບບໃດຈຶ່ງຈະບັນລຸຈຸດປະສົງໄດ້. ດັ່ງຄຳວ່າ “ບໍ່ມີການຂຽນໃດທີ່ຈະດີ ຫຼືບໍ່ດີຢ່າງແທ້ຈິງ ບັນຫາສຳຄັນຄື ຮູບແບບການຂຽນສາມາດບັນລຸຈຸດປະສົງໄດ້ຫຼືບໍ່. ບັນຫາຂອງການຂຽນຂຶ້ນກັບການປະສົມຄຳ, ອະລິ ແລະປະໂຫຍກແນວໃດຈຶ່ງຈະນຳເອົາຄວາມຈິງ, ຄວາມຄິດ, ອາລົມ, ຄວາມຮູ້ສຶກຈາກຜູ້ຂຽນໄປສູ່ຜູ້ອ່ານໄດ້ຢ່າງມີພະລັງ ແລະມີປະສິດທິພາບ”.

ສະພາບ ແລະບັນຫາການບໍລິຫານວິຊາການ ຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົ່ງໂດກ

ໂດຍ ພິດສະໜົ່ງ ວົ່ງພະຈັນ

ບົດຄັດຫຍໍ້

ການສຶກສາຄັ້ງນີ້ ມີວັດຖຸປະສົງເພື່ອ 1)ສຶກສາສະພາບ ແລະບັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົ່ງໂດກ 2)ປຽບທຽບສະພາບ ແລະ ບັນຫາການບໍລິຫານງານວິຊາການ ຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົ່ງໂດກ ຈຳແນກຕາມສາຍຄະນະວິຊາທີ່ອາຈານສັງກັດ, ປະສົບການໃນການເຮັດວຽກ ແລະວຸດທິການສຶກສາ ກຸ່ມຕົວຢ່າງຄື ອາຈານ ສັງກັດຢູ່ໃນມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົ່ງໂດກ ລວມທັງໝົດມີ246 ຄົນ ເຄື່ອງມືທີ່ໃຊ້ເຂົ້າໃນການ; ລວບລວມ ຂໍ້ມູນໃນຄັ້ງນີ້ ເປັນແບບສອບຖາມ ມີລັກສະນະເປັນແບບກວດສອບລາຍການ (Checklist) ແລະເປັນແບບມາດຕາສ່ວນປະເມີນຄ່າ (Rating Scale) ວິເຄາະຂໍ້ມູນໂດຍຫາຄ່າຄວາມຖີ່, ຄ່າຮ້ອຍລະ, ຄ່າພິກພັນ (ຜິດປ່ຽງ) ມາດຖານ ແລະສະຖິຕິທີ່ໃຊ້ທົດສອບສົມມຸດຖານຄື ສະຖິຕິ ທົດສອບທີ່ (t-test) ແລະສະຖິຕິທົດສອບເອຟ (F-test)

ຜ່ານການສຶກສາຄົ້ນຄວ້າເຫັນວ່າ:

1. ສະພາບການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ,ວິທະຍາເຂດດົ່ງໂດກ ໂດຍພາບລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາສະເພາະດ້ານ ເຫັນວ່າດ້ານທີ່ມີການບໍລິຫານງານວິຊາການສູງສຸດ3 ອັນດັບຄື ດ້ານການຈັດການຮຽນການສອນ,ດ້ານການວັດ ແລະປະເມີນຜົນດ້ານຫຼັກສູດ, ສ່ວນດ້ານທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ດ້ານການຄົ້ນຄວ້າ.

2. ບັນຫາການບໍລິຫານວິຊາການຂອງມະຫາວິທະຍາໄລແຫ່ງາດລາວ ວິທະຍາເຂດ ດົ່ງໂດກໂດຍພາບລວມຢູ່ໃນລະດັບປານກາງ ເມື່ອພິຈາລະນາສະເພາະດ້ານເຫັນວ່າດ້ານທີ່ມີບັນຫາການ ບໍລິຫານງານວິຊາການສູງສຸດ 3 ອັນດັບຄື ດ້ານການຈັດການຮຽນການສອນ, ດ້ານການວັດ ແລະປະເມີນຜົນ ແລະດ້ານຫຼັກສູດ ສ່ວນດ້ານທີ່ມີຄ່າສະເລຍຕ່ຳສຸດແມ່ນ ດ້ານການວິໄຈ.

3.ຜົນການປຽບທຽບສະພາບແລະບັນຫາການບໍລິຫານວິຊາການ ຂອງມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກ ເມື່ອຈຳແນກຕາມສາຍຄະນະວິຊາທີ່ອາຈານສັງກັດ ໂດຍພາບລວມ ແລະສະເພາະດ້ານ ເຫັນວ່າ ມີຄວາມແຕກຕ່າງກັນ ທາງດ້ານ ສະຖິຕິທີ່ລະດັບ 0,05.

4. ຜົນການປຽບທຽບສະພາບ ແລະປັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົ່ງໂດກ ໂດຍຈຳແນກຕາມວຸດທິການສຶກສາ ໂດບພາບລວມ ແມ່ນ ບໍ່ມີຄວາມແຕກຕ່ງກັນທາງສະຖິຕິທີ່ລະດັບ 0,05.

5. ຜົນການປຽບທຽບສະພາບການບໍລິຫານງານວິຊາການ ຂອງມະຫາວິທະຍາໄລແຫ່ງຊາດ

ລາວ ວິທະຍາເຂດດົ່ງໂດກ ຈຳແນກຕາມປະສົບການໃນການເຮັດວຽກ ໂດຍພາບລວມ ແລະ ສະເພາະດ້ານແມ່ນບໍ່ມີຄວາມແຕກຕ່າງກັນທາງສະຖິຕິທີ່ລະດັບ 0,05 ແລະຜົນການປຽບທຽບ ບັນຫາການບໍລິຫານງານວິຊາການ ຂອງມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກ ຈຳແນກຕາມປະສົບການໃນການເຮັດວຽກໂດຍລວມ ແລະສະເພາະດ້ານແມ່ນແຕກຕ່າງກັນທາງ ສະຖິຕິທີ່ລະດັບ 0,05.

ການສຶກສາລະດັບອຸດົມສຶກສາ ເປັນການສຶກສາລະດັບສູງທີ່ມຸ່ງພັດທະນາເພື່ອ ເຂົ້າສູ່ວິຊາ ຊີບຕ່າງໆທີ່ເປັນພື້ນຖານສຳຄັນຂອງການພັດທະນາປະເທດລວມເຖິງການພັດທະນາຄວາມຮູ້ໃໝ່ໆ ໃຫ້ເກີດຂຶ້ນ ນະໂຍບາຍການສຶກສາແຫ່ງຊາດ, ກະຊວງສຶກສາທິການຂອງສາທາລະນະລັດປະຊາ ທິປະໄຕປະຊາຊົນລາວໄດ້ກຳນົດ ແຜນງານຕ່າງໆເຊັ່ນ ການປະຕິຮູບອະຊີວະສຶກສາ ແລະມະຫາວິ ທະຍາໄລ ໂດຍສະເພາະການສຶກສາຊັ້ນສູງ ແລະມະຫາວິທະຍາໄລທີ່ເນັ້ນປັບປຸງຄຸນນະພາບນັກ ວິຊາການດ້ານຕ່າງໆ ໃຫ້ດີຂຶ້ນເພື່ອສະໜອງຄວາມຕ້ອງການດ້ານກຳລັງແຮງງານຕໍ່ການພັດທະນາ ເສດຖະກິດ ແລະສັງຄົມຂອງຊາດ ແຜນການຍຸດທະສາດການສຶກສາດແຫ່ງຊາດ (2544-2563) ໄດ້ເນັ້ນການສ້າງປະຊາກອນລາວໃຫ້ເປັນພົນລະເມືອງດີ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ລະບອບປະຊາທິປະໄຕ, ປັບປຸງລະບົບການສຶກສາແຫ່ງຊາດໃຫ້ບັນລຸມາດຖານສູງຂຶ້ນເພື່ອສ້າງກຳ ລັງແຮງງານໃຫ້ມີຄວາມຮູ້ຄວາມສາມາດເຮັດວຽກຢ່າງມີປະສິດທິພາບໂດຍແນໃສ່ ການຍົກລະດັບ ດ້ານຄຸນນະພາບເປັນສຳຄັນໂດຍນຳເທັກນິກວິຊາການທາງວິທະຍາສາດ ແລະເທັກໂນໂລຍີທີ່ທັນ ສະໄໝມາໃຊ້ໃນການພັດທະນາຫຼັກສູດ ແລະສົ່ງເສີມໃຫ້ທຸກພາກສ່ວນມີສ່ວນຮ່ວມເຂົ້າໃນການພັດ ທະນາດ້ານການສຶກສາ ກຳນົດການສຶກສາເປັນໜ້າທີ່ຂອງໝົດທຸກຄົນໃນສັງຄົມ. ສະນັ້ນ,ແຜນການ ຍຸດທະສາດແຫ່ງຊາດໄດ້ກຳນົດນະໂຍບາຍ 5 ດ້ານຄື: 1)ກຳນົດການສຶກສາເປັນສູນກາງຂອງການ ພັດທະນາຊັບພະຍາກອນມະນຸດເພື່ອສ້າງສາປະເທດລາວໃຫ້ເປັນຄົນທີ່ມີຄວາມຮູ້ດ້ານວິທະຍາສາດ ເທັກນິກມີຄວາມສາມາດສື່ສານກັບຕ່າງປະເທດ, ມີຄຸນນະທຳ, ມີລະບຽບວິໄນ ມີສຸກຂະພາບແຂງ ແຮງ ແລະມີຄວາມຈະເລີນທາງດ້ານຈິດໃຈ. 2) ກຳນົດການສຶກສາເປັນໜ້າທີ່ຂອງໝົດທຸກຄົນໃນ ສັງຄົມ. 3) ສົ່ງເສີມການສຶກສາເອກະຊົນໃຫ້ມີການຂະຫຍາຍຕົວຢ່າງວ່ອງໄວ. 4) ດຳເນີນມາດຕະ ການບັງຄັບການສຶກສາລະດັບປະຖົມໃຫ້ສຳເລັດ, ຂະຫຍາຍມັດທະຍົມຕົ້ນ, ມັດທະຍົມປາຍຢ່າງຮີບ ດ່ວນຢ່າງມີແຜນການ. 5) ພັດທະນາດ້ານວິຊາຊີບ ແລະການສຶກສາຊັ້ນສູງໃຫ້ສອດຄອງກັບຄວາມ ຕ້ອງການຂອງການພັດທະນາດ້ານເສດຖະກິດ ແລະສັງຄົມ(ກະຊວງສຶກສາທິການ,2542:19).ມະ ຫາວິທະຍາໄລແຫ່ງຊາດລາວເປັນສະຖາບັນທີ່ຂຶ້ນກັບລັດຖະບານ ແລະ ດຳເນີນງານພາຍໃຕ້ການດູ ແລຂອງກະຊວງສຶກສາເປັນສູນກາງການສຶກສາ ແລະວັດທະນະທຳຂອງຊາດຊຶ່ງມີການເສີມສ້າງ ນັກວິຊາການ ແລະຄົ້ນຄວ້າວິທະຍາສາດດ້ານຕ່າງໆອະນຸລັກ ແລະສົ່ງເສີມສິລະປະວັດທະນະທຳ ຮີບຄອງປະເພນີອັນງົດງາມຂອງຊາດຂອງປະຊາຊົນລາວບັນດາເຜົ່າ ແລະໃຫ້ການບໍລິການດ້ານ ວິຊາການແກ່ສັງຄົມ(ນາຍົກລັດຖະມົນຕີ ສາທາລະນະລັດປະຊາທິປະໄຕປະ ຊາຊົນລາວ,2542:1)

ຝ່າຍວິຊາການດຳເນີນໄປຕາມທິດທາງ ແລະແຜ່ນນະໂຍບາຍດ້ານວິຊາການຂອງມະຫາວິທະຍາໄລ ແຫ່ງຊາດລາວ ທັ້ງນີ້ເພື່ອຕ້ອງການສ້າງນັກບັນດິດໃຫ້ເປັນຜູ້ທີ່ມີຄຸນສົມບັດເປັນນັກວິຊາການທີ່ດີ ເປັນຄົນດີໃນການດຳເນີນງານການປັບປຸງ ແລະພັດທະນາດ້ານການບໍລິຫານວິຊາການ (ບົດສະຫຼຸບ ການປະຕິບັດການແຜນພັດທະນາ10 ປີ,2549:17)ໄດ້ສະຫຼຸບວ່າມີນັກສຶກສາບາງກຸ່ມຍັງບໍ່ເອົາໃຈໃສ່ ເຂົ້າໃນການສຶກສາຄົ້ນຄວ້າ, ຍັງມີຄູອາຈານຈຳນວນໜຶ່ງຂາດຄວາມຮັບ ຜິດຊອບຕໍ່ກັບໜ້າທີ່ການ ງານຂອງຕົນ, ຕຳລາ, ຫ້ອງຮຽນ, ຫ້ອງທົດລອງ, ຫ້ອງສະມຸດຍັງບໍ່ທັນໄດ້ມາດຕະຖານ; ການຄົ້ນ ຄວ້າວິທະຍາສາດ, ການຕິດຕາມຜູ້ສຳເລັດການສຶກສາ ຄວາມຮັບຜິດຊອບພາກສ່ວນຕ່າງໆ ຍັງເຮັດ ບໍ່ໄດ້ດີເທົ່າທີ່ຄວນ, ຂາດຄວາມເຂັ້ມງວດໃນການປະຕິບັດງານຂາດເງື່ອນໄຂທີ່ຈຳເປັນສຳລັບການ ຄົ້ນຄວ້າວິໄຈ ງົບປະມານທີ່ໄດ້ຮັບ ຍັງບໍ່ສາມາດຕອບສະໜອງຕາມຄວາມຕ້ອງການຢ່າງແທ້ຈິງໃນ ການພັດທະນາມະຫາວິທະຍາໄລແຫ່ງຊາດ. ດ້ານການປະສານງານຍັງລ້າຊ້າບໍ່ຄ່ອງຕົວສັບສົນທາງ ວິທະຍາເຂດ ຍັງມີບັນຫາເກີດຂຶ້ນໃຫ້ເຫັນຢູ່ເລື້ອຍໆເຊັ່ນ ບັນຫາຄຸ້ມຄອງທີ່ດິນອາຄານຫ້ອງຮຽນ ໂຕະຕັ່ງບໍ່ໄດ້ມາດຖານເກົ່າແກ່ ແລະຊຸດໂຊມ ບໍ່ພຽງພໍຕໍ່ກັບຄວາມຕ້ອງການ. ສະພາບນ້ຳປະປາ, ໄຟຟ້າຍັງບໍ່ປົກກະຕິ; ເຫັນວ່າບັນຫາເຫຼົ່ານີ້ມີຜົນກະທົບຕໍ່ກັບການຮຽນການສອນຫຼາຍ ແລະສົ່ງຜົນຕໍ່ ກັບຜົນການຮຽນຂອງບັນດາສິດນັກສຶກສາ ງານວິຊາການນັບວ່າເປັນວຽກງານທີ່ມີບົດບາດ ແລະມີ ຄວາມສຳຄັນເປັນຫົວໃຈຂອງການບໍລິຫານການສຶກສາໃນລະດັບອຸດົມສຶກສາສະຖາບັນອຸດົມສຶກສາ ເປັນສະຖາບັນທາງວິຊາການເຮັດໜ້າທີ່ໃນການຜະລິດຜົນງານວິຊາການ, ການສ້າງນັກວິຊາການ ແລະໃຊ້ຜົນງານວິຊາການໃຫ້ເກີດປະໂຫຍດກັບສັງຄົມເປັນສຳຄັນ (ໄພທູນ ສິລາລັດ 2542:13) ມາດຕະຖານ ແລະຄຸນນະພາບຂອງສະຖາບັນສຶກສາອາດພິຈາລະນາໄດ້ຈາກຜົນງານດ້ານວິຊາການ ເປັນສຳຄັນຜົນງານດ້ານວິຊາການຈະເປັນສື່ໃຫ້ເຫັນເຖິງຄຸນນະພາບຂອງສະຖາບັນການສຶກສານັ້ນໆ ສະຖາບັນການສຶກສາຈະດີ ຫຼືບໍ່ດີແມ່ນຂຶ້ນຢູ່ກັບງານວິຊາການທີ່ຈະສ້າງນັກສຶກສາໃຫ້ມີຄຸນນະພາບ, ມີຄວາມຮູ້, ມີຈະລິຍະທຳ ແລະຄຸນສົມບັດຕາມທີ່ຕ້ອງການເພື່ອນຳໄປໃຊ້ໃນການດຳລົງຊີວິດໃນສັງ ຄົມຕໍ່ໄປໄດ້ເປັນຢ່າງດີ.

ຜູ້ວິໄຈໄດ້ເຫັນເຖິງຄວາມສຳຄັນຂອງງານວິຊາການທີ່ມີຕໍ່ການພັດທະນາຄຸນນະພາບນັກສຶກ ສາແຕ່ບັນຫາດັ່ງກ່າວ ຍັງບໍ່ສາມາດລະບຸໄດ້ວ່າອາຈານມີຄວາມຄິດເຫັນຫຼາຍ-ຫນ້ອຍພຽງໃດ ຫຼືຢູ່ ໃນລະດັດໃດຕໍ່ກັບສະພາບ ແລະບັນຫາການບໍລິຫານງານວິຊາການຈຶ່ງນຳມາສູ່ຄວາມສົນໃຈໃນການ ສຶກສາວິໄຈເພື່ອນຳຜົນໄປປັບປຸງ ແລະພັດທະນາການບໍລິຫານງານວິຊາການໃຫ້ມີປະ ສິດທິພາບ ຫຼາຍຂຶ້ນ.

1. **ວັດຖຸປະສົງຂອງການຄົ້ນຄວ້າ**

1.1 ເພື່ອສຶກສາສະພາບ ແລະບັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງ ຊາດລາວ ວິທະຍາເຂດຕົ້ງໂດກ.

1.2 ເພື່ອປຽບທຽບສະພາບ ແລະບັນຫາການບໍລິຫານງານວິຊາການ ຂອງມະຫາວິທະຍາໄລ ແຫ່ງຊາດລາວ ວິທະຍາເຂດດົງໂດກ ຈຳແນກຕາມສາຍຄະນະວິຊາທີ່ອາຈານສັງກັດປະສົບ ການໃນການເຮັດວຽກ ແລະວຸດທິການສຶກສາ.

2. ປະຊາກອນ ແລະກຸ່ມຕົວຢ່າງ

ປະຊາກອນໄດ້ແກ່ອາຈານມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົງໂດກຈຳນວນ 2 ກຸ່ມສາຍວິຊາສຶກສຶກສາ 2551 ຈຳນວນ 648 ຄົນ ຈຳແນກເປັນ 2 ລະດັບ: ປະລິນຍາຕີ 405 ຄົນ ແລະລະດັບສູງກວ່າປະລິນຍາຕີ 279 ຄົນ.

ກຸ່ມຕົວຢ່າງ ຄື ອາຈານມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ. ຜູ້ສຶກສາ ກຳນົດເຂດກຸ່ມຕົວຢ່າງໂດຍໃຊ້ຕາລາງ Krejcie and Morgan (ພວງລັດ ທະວີລັດ, 2540:303) ຈາກ ປະຊາກອນທັງໝົດ 684 ຄົນ ໄດ້ກຸ່ມຕົວຢ່າງ 246 ຄົນໂດຍການສຸ່ມແບບແບ່ງຊັ້ນ (Stratified random sampling) ໂດຍໃຊ້ສາຍຄະນະວິຊາ ແລະວຸດທິການສຶກສາເປັນຊັ້ນໃນການສຸ່ມແລ້ວທຳ ການແບ່ງສັດສ່ວນຕາມສັດສ່ວນທີ່ອາຈານ ສັງກັດໃນສາຍຄະນະວິຊາ ແລະວຸດທິການສຶກສາ.

3. ເຄື່ອງມືທີ່ໃຊ້ໃນການສຶກສາ

ເປັນແບບສອບຖາມກ່ຽວກັບສະພາບ ແລະບັນຫາການບໍລິການງານ ວິຊາການ ຕາມຄວາມ ຄິດເຫັນຂອງອາຈານມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ ແບ່ງອອກເປັນ 2 ຕອນດັ່ງນີ້:

ຕອນທີ1: ເປັນແບບສອບຖາມກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມ ເປັນແບບກວດ ສອບລາຍການ(Check List) ປະກອບດ້ວຍ ສາຍຄະນະວິຊາທີ່ອາຈານສັງກັດ ປະສົບການໃນການເຮັດ ວຽກ ແລະວຸດທິການສຶກສາ ການວິເຄາະຂໍ້ມູນຕອນທີ່ 1 ວິເຄາະ ຂໍ້ມູນໂດຍການແຈກແຈງຄວາມຖີ່ (Frequency) ແລະຫາຄ່າຮ້ອຍລະ (Percentage)

ຕອນທີ2: ເປັນແບບສອບຖາມກ່ຽວກັບສະພາບ ແລະບັນຫາການບໍລິຫານງານວິຊາການ ມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ ທັງ 5 ດ້ານເປັນແບບມາດຕາສ່ວນປະເມີນຄ່າ (Rating Scale) 5 ລະດັບ ວິເຄາະຂໍ້ມູນຕອນທີ່ 2 ເປັນຂໍ້ມູນກ່ຽວກັບສະພາບແລະບັນຫາການບໍລິຫານ ງານວິຊາການ ຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກວິເຄາະຂໍ້ມູນ ໂດຍຄ່າສະເລ່ຍ ($\overline{X}$) ແລະຄ່າພິກພັນມາດຖານ (S.D.) ເປັນລາຍຂໍ້, ລາຍດ້ານ ແລະນຳຄ່າສະເລ່ຍທີ່ ໄດ້ມາທຽບເທນວິ ເຄາະປຽບທຽບຄວາມແຕກຕ່າງຂອງຄ່າສ່ຽງຕາມຄວາມຄິດເຫັນຂອງອາຈານຕໍ່ ສະພາບ ແລະບັນຫາການ ບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງ(t-Test) ແລະຈຳແນກຕາມ ປະສົບການໃນການເຮັດວຽກໃຊ້ການວິເຄາະຄວາມແປປຽນທາງດຽວ (One-way Anova) ໂດຍໃຊ້ສະຖິຕິ ທົດສອບເອຟ (F-Test) ແລະພົບຄວາມແຕກຕ່າງຂອງ ຄ່າສະເລຍຜູ້ສຶກສາຈຶ່ງໄດ້ທຳການທົດສອບ ຄວາມ ແຕກຕ່າງຂອງຄ່າສະເລຍເປັນລາຍຄູ່ດ້ວຍວິທີການ ຂອງ “Scheffe”

ສະລຸບຜົນການຄົ້ນຄວ້າ

ຜົນການສຶກສາຈາກແບບສອບຖາມຕອນທີ່ 1 ເຫັນວ່າຜູ້ຕອບແບບສອບຖາມສ່ວນຫຼາຍເປັນອາຈານທີ່ສັງກັດຢູ່ຄະນະວິທະຍາສາດສັງຄົມ ຮ້ອຍລະ 58,9 ມີປະສົບການເຮັດວຽກໜ້ອຍກວ່າ 10 ປີ ຄິດເປັນ 38,2 ມີວຸດທິການສຶກສາລະດັບປະລິນຍາຕີ ຄິດເປັນຮ້ອຍລະ 59,3 ແລະຜົນການຄົ້ນຄວ້າຈາກແບບທົດສອບທີ່ 2 ພົບວ່າ 1 ໂດຍພາບລວມ ອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກມີຄວາມຄິດເຫັນກ່ຽວກັບສະພາບການບໍລິຫານງານວິຊາການທັ້ງ 5 ດ້ານຢູ່ໃນລະດັບຫຼາຍ, ດ້ານທີ່ມີຄ່າສະເລ່ຍສູງສຸດ 3 ອັນດັບທຳອິດແມ່ນດ້ານການຈັດການຮຽນ ການສອນ, ດ້ານການວັດແລະປະເມີນຜົນ ແລະດ້ານຫຼັກສູດ; ສ່ວນດ້ານທີ່ມີຄ່າສະເລ່ຍຕ່ຳສຸດແມ່ນການສຶກສາ ເຊິ່ງຢູ່ໃນລະດັບປານກາງ 2 ໂດຍພາບລວມ ອາຈານຢູ່ໃນມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກ ມີຄວາມຄິດເຫັນກ່ຽວກັບປັນຫາການບໍລິຫານງານວິຊາການທັ້ງ 5 ດ້ານ ຢູ່ໃນລະດັບກາງ; ດ້ານທີ່ມີຄ່າສູງສຸດ 3 ອັນດັບ ແມ່ນດ້ານຈັດການຮຽນການສອນ ຢູ່ໃນອັນດັບທຳອິດ ຮອງລົງມາແມ່ນ ດ້ານການວັດ ແລະປະເມີນຜົນ ຕ່ຳຈາກນັ້ນແມ່ນດ້ານຫຼັກສູດສ່ວນດ້ານ ການສຶກສາມີຄ່າສະເລ່ຍນ້ອຍທີ່ສຸດ.

ຜົນການປຽບທຽບເຫັນວ່າ ອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກທີ່ສັງກັດຢູ່ໃນສາຍວິຊາທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບສະພາບ ແລະບັນຫາການບໍລິຫານງານວິຊາການໂດຍພາບລວມ ແລະສະເພາະດ້ານແຕກຕ່າງກັນຢ່າງມີໄນສຳຄັນທາງສະຖິຕິທີ່ລະດັບ 0,05 ເຊິ່ງພົບວ່າ ອາຈານທີ່ສັງກັດໃນຄະນະວິຊາສາຍທຳມະຊາດມີຄວາມຄິດເຫັນກ່ຽວກັບສະພາບ ແລະບັນຫາການບໍລິຫານງານວິຊາການຫຼາຍກ່ວາອາຈານທີ່ສັງກັດໃນພາກວິຊາສັງຄົມ.

ຜົນການປຽບທຽບສະພາບການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົ່ງໂດກ ຈຳແນກວຸດທິການສຶກສາ ໂດຍພາບລວມ ແລະສະເພາະດ້ານແມ່ນບໍ່ມີຄວາມແຕກຕ່າງກັນທີ່ລະດັບໄນສຳຄັນທາງສະຖິຕິ 0,05 ແລະຜົນການປຽບທຽບບັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດ, ວິທະຍາເຂດດົ່ງໂດກຈຳແນກຕາມວຸດທິການສຶກສາ ໂດຍພາບລວມແມ່ນບໍ່ແຕກຕ່າງກັນທີ່ລະດັບໄນສຳຄັນທາງສະຖິຕິ 0,05 ເມື່ອພິຈາລະນາເປັນລາຍດ້ານພົບວ່າອາຈານທີ່ມີວຸດທິການສຶກສາຕ່າງກັນ ມີຄວາມຄິດເຫັນກ່ຽວກັນການບລິຫານງານວິຊາການດ້ານຫຼັກສູດແຕກຕ່າງກັນຢ່າງມີໄນສຳຄັນທາງສະຖິຕິ 0,05. ນອກຈາກນັ້ນແມ່ນບໍ່ມີຄວາມແຕກຕ່າງກັນອາຈານທີ່ມີລະດັບວຸດທິການສຶກສາລະດັບປະລິນຍາຕີ ມີຄວາມຄິດເຫັນກ່ຽວກັບປັນຫາການບໍລິຫານງານວິຊາການຫຼາຍກ່ວາອາຈານທີ່ມີວຸດທິການສຶກສາສູງກ່ວາລະດັບປະລິນຍາຕີ.

ຜົນການປຽບທຽບສະພາບການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົ່ງໂດກ ຈຳແນກຕາມປະສົບການໃນການເຮັດວຽກໂດຍພາບລວມ ແລະສະເພາະດ້ານແມ່ນບໍ່ມີຄວາມແຕກຕ່າງກັນທີ່ລະດັບໄນສຳຄັນທາງສະຖິຕິ 0,05 ແລະຜົນການປຽບທຽບບັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກ ຈຳແນກຕາມປະສົບການໃນການເຮັດວຽກໂດຍພາບລວມ ແລະສະເພາະດ້ານແຕກຕ່າງກັນຢ່າງມີໄນສຳຄັນທາງສະຖິຕິທີ່ລະດັບ 0,05

ອະທິບາຍຜົນການຄົ້ນຄວ້າ

ຈາກການຜົນການຄົ້ນຄວ້າທີ່ສະຫຼຸບຂ້າງເທິງເຫັນມີບັນຫາຄວາມສຳຄັນທີ່ໜ້າສົນໃຈ ແລະ ຄວນນຳມາອະທິບາຍດັ່ງຕໍ່ໄປນີ້:

ສະພາບການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ ອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ ມີຄວາມຄິດເຫັນກ່ຽວກັບສະພາບການບໍລິຫານງານວິຊາການໂດຍພາບລວມຢູ່ໃນລະດັບ ຫຼາຍ; ເນື່ອງຈາກວ່າອາຈານທັງໝົດພາຍໃນມະຫາວິທະຍາໄລແຫ່ງຊາດລາວວິທະຍາເຂດດົງໂດກ ເຫັນໄດ້ວ່າມີຄວາມສຳຄັນ ແລະ ມີຄວາມສົນໃຈໃນການບໍລິຫານທັງ 5 ວຽກ; ທັງນີ້ ເປັນຍ້ອນຜູ້ບໍລິຫານມີວິໄສທັດກວ້າງໄກ, ມີການນຳປັດໄຈທາງພາຍໃນ ແລະພາຍນອກມະຫາວິທະຍາໄລມາປັບໃຊ້ໃນການກຳນົດແຜນຍຸດທະສາດ ແລະການບໍລິຫານງານວິຊາການພາຍໃນມະຫາວິທະຍາໄລຢ່າງສອດຄອງກັບສະພາບຄວາມເປັນຈິງ. ອີກບັນຫາໜຶ່ງ ອາດເປັນຍ້ອນຜູ້ບໍລິຫານໃຫ້ຄວາມສຳຄັນດ້ານບໍລິຫານງານວິຊາການຫຼາຍກວ່າດ້ານອື່ນໆ ແລະເລືອກວຽກວິຊາການເປັນຫຼັກສອດຄ່ອງກັບແນວຄິດຂອງ(ສົມນຶກ ພະຈະເລີນ, 2544:1) ການບໍລິຫານງານວິຊາການມີຄວາມສຳຄັນທີ່ສຸດເພາະການບໍລິຫານງານວິຊາການນັ້ນຈະເປັນຕົວຊີ້ໃຫ້ເຫັນເຖິງມາດຕະຖານ ແລະຄຸນນະພາບຂອງການສຶກສາ. ດັ່ງນັ້ນ, ຜູ້ບໍລິຫານການສຶກສາຈະຕ້ອງເອົາໃຈໃສ່ເຖິງໜ້າທີ່ ແລະຄວາມຮັບຜິດຊອບໃນການບໍລິຫານງານວິຊາການເພື່ອປະ ໂຫຍດຂອງອາຈານຜູ້ສອນ ແລະນັກສຶກສາຫຼາຍທີ່ສຸດ

ເມື່ອພິຈາລະນາເປັນລາຍດ້ານເຫັນວ່າ ອາຈານໃນມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ ມີຄວາມຄິດເຫັນສະພາບການບໍລິຫານງານວິຊາການຫຼາຍເປັນອັນດັບທຳອິດຄື ດ້ານຈັດການຮຽນການສອນ ເຊິ່ງສອດຄອງກັບບົດສະຫຼຸບການປະຕິບັດແຜນພັດທະນາ10 ປີ (2549:2). ມະຕິກອງປະຊຸມໃຫ່ຍຄັ້ງທີ8 ຂອງສູນກາງພັກ ໂດຍສືບຕໍ່ການປ່ຽນແປງໃໝ່ການພັດທະນາການສຶກສາແຫ່ງຊາດໃຫ້ມີຄຸນນະພາບ ແລະມີການປ່ຽງແປງໄປສູ່ຄວາມທັນສະໄໝນັ້ນ ມະຫາວິທະຍາໄລໄດ້ຖືເອົາວຽກງານການຮຽນການສອນເປັນວຽກສຳຄັນ ແລະເປັນສູນກາງຂອງການພັດທະນາອາດເປັນ ເພາະວ່າການຈັດການຮຽນການສອນເປັນວຽກທີ່ສຳຄັນປະການທຳອິດທີ່ຜູ້ບໍລິຫານຈະຕ້ອງຈັດຂຶ້ນເພື່ອໃຫ້ການຮຽນການສອນດຳເນີນໄປຢ່າງມີຄຸນະພາບ ແລະບຸກຄະລາກອນໃນສາຍວິຊາການໃຫ້ຄວາມສຳຄັນໃນ ເລື່ອງການວາງແຜນກ່ຽວກັບການກຳນົດການຈັດຕາຕະລາງການສອນ, ການຈັດນັກຮຽນເຂົ້າຮຽນການຈັດອາຈານເຂົ້າສອນ ການຈັດຫ້ອງຮຽນ ແລະ ການຈັດວິຊາຮຽນ, ເວລາຮຽນຄົບຕາມໂຄງສ້າງຂອງຫຼັກສູດເພື່ອໃຫ້ນັກສຶກສາໄດ້ລົງທະບຽນ ແລະ ຮຽນໄດ້ຕາມທີ່ຫຼັກສູດກຳນົດ ເຊິ່ງສອດຄ່ອງກັບ ປີຍາພອນ ວົງຄະນຸໂລ(2535:28)ກ່າວວ່າ ຈຸດມຸ່ງໝາຍຫຼັກຂອງການສຶກສາຢູ່ທີ່ການຈັດການຮຽນການສອນໃຫ້ເປັນໄປຢ່າງມີປະສິດທິພາບການຈັດ ແລະ ການດຳເນີນການຮຽນການສອນຈະເປັນໄປດ້ວຍດີ ກໍຍ້ອນການວາງແຜນການບໍລິຫານງານດ້ວຍຄວາມຮ່ວມມືຂອງບຸກຄະລາກອນໃນສະຖານສຶກສາ ໂດຍສະເພາະຄູອາຈານຊຶ່ງເປັນຕົວຈັດສຳຄັນທີ່

ຈະເຮັດໃຫ້ການຮຽນການສອນມີຄຸນນະພາບ. ນອກຈາກນີ້ເນື່ອງຈາກວຽກດັ່ງກ່າວເປັນວຽກທີ່ອາຈານຕ້ອງປະຕິບັດເປັນກິດປະຈຳວັນທີ່ອາຈານຕ້ອງເຮັດຕາມໜ້າທີ່ການສິດສອນ; ສ່ວນດ້ານຫຼັກສູດຍັງເຮັດບໍ່ທັນໄດ້ດີຈຶ່ງເຮັດໃຫ້ດ້ານກັນຈັດການຮຽນການສອນມີຜົນປະຕິບັດສູງກວ່າທຸກດ້ານ.

ສ່ວນດ້ານທີ່ມີຄ່າສະເລ່ຍຕ່ຳທີ່ສຸດຄື ດ້ານການຄົ້ນຄວ້າຢູ່ໃນລະດັບປານກາງ ອາດເປັນເພາະວ່າ ຜູ້ບໍລິຫານຍັງບໍ່ໄດ້ເປີດໂອກາດໃຫ້ອາຈານໄດ້ມີສ່ວນຮ່ວມໃນການວາງແຜນຮ່ວມກັນເພື່ອທີ່ຈະໄດ້ຮ່ວມກັນແກ້ໄຂປັນຫາ ແລະຄົ້ນຫາຫົວຂໍ້ການຄົ້ນຄວ້າ ຫຼືປັນຫາການຄົ້ນຄວ້າຮ່ວມກັນເພາະວຽກງານຄົ້ນຄວ້າຍັງເປັນວຽກທີ່ອາຈານຍັງຂາດຄວາມຮູ້ຄວາມເຂົ້າໃຈເທົ່າທີ່ຄວນ ແລະຍັງຂາດຄວາມຮູ້ຄວາມຊຳນານໃນການຄົ້ນຄວ້າ ເຮັດໃຫ້ບໍ່ກ້າທີ່ຈະເຜີຍແຜ່ຜົນງານຂອງຕົນເອງຊຶ່ງຍັງເຮັດບໍ່ໄດ້ເໝືອນກັບແຜນຍຸດທະສາດທີ 4 ໄດ້ວາງເອົາໄວ້ (ແຜນພັດທະນາມະຫາວິທະຍາໄລ 5 ປີ ຄັ້ງທີ 3,2549:20). ສ້າງຄວາມສາມາດສົ່ງເສີມພັດທະນາ ແລະເຜີຍແຜ່ຜົນງານຄົ້ນຄວ້າ; ການຄົ້ນຄວ້າສ້າງ ແລະພັດທະນານັກຄົ້ນຄວ້າໃຫ້ມີຄວາມສາມາດ, ມີທັກສະ ແລະກາຍເປັນຊ່ຽວຊານດ້ານການຄົ້ນຄວ້າວິໄຈ, ສົ່ງເສີມພັດທະນາ ແລະເຜີຍແຜ່ການວິໄຈພາຍໃນມະຫາວິທະຍາໄລແຫ່ງຊາດໄປສູ່ອົງກອນຂອງລັດ, ເອກະຊົນ ແລະຕ່າງປະເທດ; ຄຸ້ມຄອງສັບສົນທາງປັນຍາຂອງນັກຄົ້ນຄວ້າວິໄຈ, ມະຫາວິທະຍາໄລແຫ່ງຊາດລາວໃຫ້ດີກວ່າເກົ່າ.

ບັນຫາການບໍລິຫານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ ອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກມີຄວາມຄິດເຫັນກ່ຽວກັບບັນຫາການບໍລິຫານງານວິຊາການຢູ່ໃນລະດັບປານກາງ ອາດເນື່ອງຈາກການປ່ຽນແປງລະບົບການບໍລິຫານໃນມະຫາວິທະຍາໄລແຫ່ງຊາດລາວ ໃນຂັ້ນຕົ້ນ,ຕ້ອງປະເຊີນກັບບັນຫາອຸປະສັກຫຼາຍ ຊຶ່ງສະພາບຕ່າງໆຍັງບໍ່ສາມາດເອື້ອອຳນວຍໄດ້ຕາມຄວາມຕ້ອງການ. ອັນໜຶ່ງລະບົບການບໍລິຫານງານວິຊາການຈາກການຈະເລີນເຕີບໂຕໃນຮອບ 5 ປີ ຄັ້ງທີ່ໜຶ່ງໃນປີ ຄສ 1996-2000; ມະຫາວິທະຍາໄລແຫ່ງຊາດໄດ້ເຂົ້າສູການປັບປຸງລະບົບໂຄງສ້າງຂອງການບໍລິຫານງານທີ່ເປັນກົນໄກພື້ນຖານໃນບາງພາກສ່ວນ ເຮັດໃຫ້ການປັບແປງລະບົບການຮຽນການສອນການພັດທະນາຫຼັກສູດ ແລະການພັດທະນາຊັບພະຍາກອນມະນຸດໂດຍສະເພາະການພັດທະນາອາຈານສອນໃນລະດັບປະລິນຍາຕີຍັງຊັກຊ້າ ແລະການຈະເລີນເຕີບໂຕໃນຮອບ5 ປີ ຄສ 2001-2005 ຍັງ ປະເຊີນກັບອຸປະສັກ. ບົດສະຫຼຸບການປະຕິບັດແຜນພັດທະນາ10 ປີ (2549:17) ໄດ້ສະຫຼຸບວ່ານັກສຶກສາບາງກຸ່ມຍັງບໍ່ເອົາໃຈໃສ່ ໃນການສຶກສາຄົ້ນຄວ້າ, ອາຈານຈຳນວນໜຶ່ງຍັງຂາດຄວາມຮັບຜິດຊອບຕໍ່ກັບໜ້າທີ່ການງານທີ່ຕົນຮັບຜິດຊອບ, ຄຸນນະພາບການກໍ່ສ້າງຕຳລາ, ຫ້ອງທົດລອງ ຫ້ອງຮຽນ, ຫ້ອງສະມຸດ ຍັງບໍ່ໄດ້ມາດຕະຖານ. ການຄົ້ນຄວ້າວິທະຍາສາດ, ການຕິດຕາມຜູ້ສຳເລັດການສຶກສາຄວາມຮັບຜິດຊອບຂອງພາກສ່ວນຕ່າງໆຍັງເຮັດບໍ່ທັນໄດ້ດີ, ຂາດຄວາມເຂັ້ມງວດໃນການປະຕິບັດງານ, ຂາດເງື່ອນໄຂທີ່ຈຳເປັນສຳລັບການຄົ້ນຄວ້າວິໄຈ. ງົບປະມານທີ່ໄດ້ຮັບຍັງບໍ່ສາມາດຕອບສະໜອງຕາມຄວາມຕ້ອງການຢ່າງແທ້ຈິງ. ໃນການພັດທະນາມະຫາວິທະຍາໄລແຫ່ງຊາດ ການປະສານງານບາງ

ງານຍັງບໍ່ຄອງຕົວຊັກຊ້າ, ສັບສົນ; ບາງວິທະຍາເຂດຍັງມີບັນຫາເຊັ່ນ ການຄຸ້ມຄອງທີ່ດິນ, ອາຄານ ຫ້ອງຮຽນ, ໂຕະຕັ່ງ ບໍ່ໄດ້ມາດຕະຖານເກົ່າແກ່ ແລະຊຸດໂຊມບໍ່ພຽງພໍກັບຄວາມຕ້ອງການ ສະພາບ ນ້ຳໄຟຟ້າບໍ່ປົກກະຕິ ແຜນການບໍລິການວິຊາການ, ຄະນະອັກສອນສາດໄດ້ລາຍງານສະຫຼຸບກ່ຽວກັບ "ວຽກວິຊາການ ການຈັດຕັ້ງການຮຽນການສອນ ແລະການເຄື່ອນໄຫວຕ່າງໆໃນເຂດວິຊາການ, ສະບັບເລກທີ 354 I ຄອສ.08 ວັນທີ19 ເດືອນ3" ມີສະພາບ ແລະບັນຫາດັ່ງນີ້ ຄູອາຈານພາຍ ໃນມີຊົ່ວໂມງສອນຈຳນວນຫຼາຍເນື່ອງຈາກວ່າ ອາຈານສອນພາຍໃນຄະນະແລ້ວ ຍັງຕ້ອງປະຕິບັດ ການຮຽນການສອນໃຫ້ກັບພາກສ່ວນອື່ນໃນມະຫາວິທະຍາໄລແຫ່ງຊາດລາວ ແລະສອນລະບົບ ພິເສດພາກບ່າຍ, ພາກຄ່ຳ. ສະນັ້ນ,ຈຶ່ງເຮັດໃຫ້ອາຈານມີວຽກຫຼາຍຂຶ້ນ ແລະເປັນເຫດໃຫ້ການສົ່ງ ຄວາມຮູ້ໃຫ້ນັກສຶກສາບໍ່ເຕັມທີ່; ສ່ວນນັກສຶກສາຈຳນວນໜຶ່ງຮຽນສອງສາຍວິຊາ ແລະບໍ່ສາມາດ ປະຕິບັດຫຼັກສູດໄດ້ ຕາມຂອບເຂດທີ່ກຳນົດໃຫ້ເຮັດໃຫ້ຄຸນນະພາບການຮຽນຂອງນັກສຶກສາບໍ່ໄດ້ ມາດຕະຖານທີ່ກຳໜົດ ໄວ້ ແລະຈາກສະພາບທີ່ເປັນຈິງ, ຫ້ອງຮຽນຍັງບໍ່ພໍເພາະນັກສຶກສາມີ ຈຳນວນຫຼາຍ.

ດ້ານທີ່ມີບັນຫາຫຼາຍຄື ດ້ານການຈັດການຮຽນການສອນຢູ່ໃນລະດັບຫຼາຍ ເນື່ອງຈາກມີບັນ ຫາໃນການວາງແຜນກ່ຽວກັບການກຳນົດການຈັດຕາຕະລາງການຮຽນການສອນການ,ຈັດນັກຮຽນໃຫ້ ເຂົ້າຮຽນ, ການຈັດອາຈານເຂົ້າສອນ, ການຈັດຫ້ອງຮຽນ, "ບົດສະຫຼຸບການປະຕິບັດແຜນງານພັດ ທະນາ10 ປີ 2549:17" ໄດ້ສະຫຼຸບວ່າ ການພັດທະນາມະຫາວິທະຍາໄລແຫ່ງຊາດ ການປະສານ ງານບາງວຽກຍັງບໍ່ຄ່ອງຕົວ, ຊັກຊ້າ,ແລະຍັງມີບັນຫາເຊັ່ນ ບັນຫາຄຸ້ມຄອງທີ່ດິນອາຄານຫ້ອງຮຽນ, ໂຕະຕັ່ງຍັງບໍ່ໄດ້ມາດຕະຖານເກົ່າແກ່ ແລະຊຸດໂຊມ ບໍ່ພຽງພໍກັບຄວາມຕ້ອງການ ສະພາບນ້ຳ ໄຟຟ້າຍັງບໍ່ປົກກະຕິ ອາດເປັນເພາະອາຈານໃນສາຍວິຊາການທີ່ຮັບຜິດຊອບງານດັ່ງກ່າວບໍ່ໄດ້ຮັບຂໍ້ ມູນຂ່າວສານຢ່າງຖືກຕ້ອງ ເພາະນັກສຶກສາລົງທະບຽນເປັນແຕ່ລະໄລຍະບໍ່ພ້ອມກັນເຮັດໃຫ້ຈຳນວນ ນັກສຶກສາເພີ່ມຂຶ້ນຈຶ່ງເຮັດໃຫ້ມີບັນຫາ. ເພາະສະນັ້ນ,ຜູ້ບໍລິຫານຮູ້ວ່າປັນຫາດັ່ງກ່າວຄວນໃຫ້ອາຈານ ໃນສາຍງານວິຊາການທີ່ຮັບຜິດຊອບງານໄດ້ມີສ່ວນຮ່ວມໃນການວາງແຜນ ການກຳນົດການຈັດຕາງ ຕາລາງສອນ, ການຈັດນັກຮຽນເຂົ້າຮຽນ, ການຈັດອາຈານເຂົ້າສອນ, ການຈັດຫ້ອງຮຽນ ເພາະເປັນ ການເຮັດວຽກຮ່ວມກັນຂອງຜູ້ບໍລິຫານ ແລະອາຈານສອນເພື່ອພັດທະນາການຮຽນການສອນໃຫ້ມີ ປະສິດທິພາບ. ອີກບັນຫາໜຶ່ງຄື ການວາງແຜນການຈັດທຳແບບຮຽນ, ການຈັດບໍລິການອຸປະກອນ ແລະສິ່ງອຳນວຍຄວາມສະດວກເໝາະສົມຕໍ່ກັບການຮຽນການສອນ ດັ່ງທີ່ແຜນການປະຈຳປີການສຶກ ສາ2543-2544 ຂອງມະຫາວິທະຍາໄລແຫ່ງຊາດລາວ(2543:15) ໄດ້ກຳນົດແນວທາງແກ້ໄຂ ບັນຫາດັ່ງກ່າວຖືກຕ້ອງ ສົ່ງເສີມການແປຕຳລາເອກະສານຕ່າງປະເທດເປັນພາສາລາວ; ການສ້າງ ຕຳລາໜັງສືຮຽນ ໂດຍສະເພາະແບບຮຽນສຳລັບຫຼັກສູດປະລິນຍາຕີຂອງທຸກພາກວິຊາ ແລະປັບປຸງ ລະບົບການບໍລິການຂອງໜ່ວຍງານທີ່ຮັບຜິດຊອບຜະລິດ ແລະດູແລດ້ານອຸປະກອນການຮຽນການ ສອນ ແລະສິ່ງພິມຕ່າງໆໃຫ້ມີປະສິດທິພາບດີຍິ່ງຂຶ້ນ.

ສ່ວນດ້ານທີ່ມີຄ່າສະເລ່ຍຕ່ຳສຸດຄືດ້ານການຄົ້ນຄວ້າ,ຢູ່ໃນລະດັບປານກາງ ເນື່ອງຈາກວ່າອົງກອນທີ່ກ່ຽວຂ້ອງຂາດແຄນດ້ານເງິນທຶນທີ່ຈະໃຫ້ງົບປະມານແກ່ອາຈານ ນອກຈາກນີ້ອາຈານບໍ່ມັກເຮັດການຄົ້ນຄວ້າ ຍ້ອນວຽກງານການຄົ້ນຄວ້າຍັງເປັນວຽກທີ່ອາຈານຍັງຂາດຄວາມຮູ້ຄວາມເຂົ້າໃຈ ແລະຂາດຄວາມຮູ້ຄວາມຊຳນານໃນການຄົ້ນຄວ້າ ໂດຍສະເພາະຢ່າງຍິ່ງການວາງແຜນການສະໜັບສະໜູນ ແລະສົ່ງເສີມໃຫ້ອາຈານເຮັດການຄົ້ນຄວ້າ; ຮອງລົງມາແມ່ນການສົ່ງເສີມງົບປະມານໃນການຄົ້ນຄວ້າແກ່ອາຈານ ແລະການສຶກສາຄົ້ນຄວ້າວິໄຈຂໍ້ມູນ ຫຼືບັນຫາຕ່າງໆ ເພາະສະນັ້ນຜູ້ບໍລິຫານຄວນເປີດໂອກາດໃຫ້ອາຈານໄດ້ມີສ່ວນຮ່ວມໃນການວາງແຜນຮ່ວມກັນເພື່ອຈະໄດ້ຮວມກັນໃນການແກ້ໄຂປັນຫາການເຮັດບົດຄົ້ນຄວ້າ. ຜົນການປຽບທຽບກ່ຽວກັບສະພາບການບໍລິຫານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ ຈຳແນກຕາມສາຍຄະນະວິຊາທີ່ອາຈານສັງກັດ.

ເຫັນວ່າອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົງໂດກທີ່ສັງກັດໃນສາຍຄະນະວິຊາຕ່າງກັນ ມີຄວາມຄິດເຫັນກ່ຽວກັບສະພາບການບໍລິຫານງານວິຊາ ການແຕກຕ່າງກັນທາງສະຖິຕິທີ່ລະດັບ 0,05 ຊຶ່ງສອດຄອງກັບສົມມຸດຕິຖານ ໂດຍອາຈານທີ່ສັງກັດໃນຄະນະວິຊາສາຍທຳມະຊາດ ມີຄວາມເຫັນກ່ຽວກັບສະພາບການບໍລິຫານງານວິຊາການຫຼາຍກວ່າອາຈານທີ່ສັງກັດໃນຄະນະວິຊາສາຍສັງຄົມ; ທັ້ງນີ້ເນື່ອງມາຈາກອາຈານສອນແຕ່ລະສາຍຄະນະວິຊາເຮັດວຽກໃນສະພາບແວດລ້ອມທີ່ແຕກຕ່າງກັນ; ສາຍທຳມະຊາດຕ້ອງປະຕິບັດການຮຽນການສອນຕະຫຼອດໃນແຕ່ລະລາຍວິຊາມີເນື້ອໃນວິຊາສອນຍາກ ຕ້ອງໄດ້ສອນຝຶກ ແລະປະຕິບັດຕົວຈິງເພື່ອໃຫ້ເກີດຄວາມເຂົ້າໃຈ, ຄ່ອງເຄີຍ ຈົນເກີດການຮຽນຮູ້ຫຼັກສູດມີການປັບປ່ຽນ ແລະປ່ຽນແປງຢູ່ສະເໝີເພື່ອໃຫ້ສອດຄ່ອງ ແລະທັນສະໄໝ. ການວັດ ແລະປະເມີນຜົນຕ້ອງອອກຂໍ້ສອບທັງພາກປະຕິບັດ ແລະທັກສະພ້ອມກັນ; ສ່ວນສາຍວິຊາສັງຄົມໃນຂະນະທີ່ບາງວິຊາການສອນເອື້ອໂອກາດດ້ານຄວາມເປັນອິດສະລະທາງວິ ຊາການຫຼາຍ ເປີດໂອກາດໃຫ້ນັກສຶກສາໄດ້ທຳການຄົ້ນຄວ້າຢ່າງເປັນອິດສະລະ.

ຜົນການປຽບທຽບກ່ຽວກັບບັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດ, ວິທະຍາເຂດດົງໂດກ ຈຳແນກຕາມສາຍວິຊາທີ່ສັງກັດ.

ອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົງໂດກທີ່ສັງກັດໃນສາຍຄະນະວິຊາທີ່ແຕກຕ່າງກັນ ມີຄວາມຄິດເຫັນກ່ຽວກັບບັນຫາການບໍລິຫານງານວິຊາການ ໂດຍພາບລວມແຕກຕ່າງກັນທາງສະຖິຕິທີ່ລະດັບ 0,05 ຊຶ່ງສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ ໂດຍອາຈານທີ່ສັງກັດໃນຄະນະສາຍວິຊາທຳມະຊາດມີຄວາມຄິດເຫັນກ່ຽວກັບບັນຫາການບໍລິການວຽກງານວິຊາການຫຼາຍກ່ວາອາຈານທີ່ສັງກັດໃນຄະນະວິຊາສັງຄົມ ອາດເນື່ອງຈາກງົບປະມານບໍ່ພຽງພໍກັບຄວາມຕ້ອງການ ເພາະສາຍທຳມະຊາດຕ້ອງໃຊ້ອຸປະກອນເປັນຈຳນວນຫຼາຍໃນການຈັດການຮຽນ ການສອນ. ນອກຈາກນີ້ຍັງສ້າງຫ້ອງທົດລອງຕ່າງໆ ເຖິງແມ່ນວ່າໄດ້ງົບປະມານໄປເທົ່າໃດກໍບໍ່ພຽງພໍ ເພາະອຸປະກອນມີລາຄາແພງ; ບາງຄັ້ງກໍ່ໄດ້ງົບປະມານຈາກລັດຖະບານມາຢ່າງຫຼວງຫຼາຍ ແຕ່ເມື່ອ

ບັນກັນໃຊ້ໃນແຕ່ລະພາກວິຊາແລ້ວ ຖືວ່າຍັງໜ້ອຍ ບໍ່ພຽງພໍ. ອີກບັນຫາໜຶ່ງອາຈານຍັງພັດທະນາຕົນເອງບໍ່ທັນກັບອຸປະກອນທີ່ທັນສະໄໝ ການນຳໃຊ້ອຸປະກອນບໍ່ເປັນ ເຖິງຈະມີງົບປະມານເພື່ອເຝິກອົບຮົມກໍ່ໃຫ້ພຽງພໍສະເພາະຄົນດຽວ. ສ່ວນສາຍສັງຄົມແມ່ນບໍ່ຄ່ອຍມີງົບປະມານດັ່ງກ່າວ ເພາະບໍ່ຄ່ອຍມີອຸປະກອນຫ້ອງທົດລອງຍ້ອນເນື້ອໃນວິຊາທີ່ສອນເປີດໂອກາດໃຫ້ນັກສຶກສາໄດ້ຄົ້ນຄວ້າຢ່າງເປັນອິດສະລະ ບໍ່ຄ່ອຍໄດ້ໃຊ້ງົບປະມານຈຶ່ງເຮັດໃຫ້ງົບປະມານໄປຖົມຢູ່ພາກສ່ວນດຽວ ສອດຄ່ອງກັບບົດສະຫຼຸບການປະຕິບັດແຜນງານ10 ປີ(2549:17)ທີ່ພົບວ່າຄຸນນະພາບການກໍ່ສ້າງຕຳລາ,ຫ້ອງທົດລອງ, ຫ້ອງຮຽນ, ຫ້ອງສະມຸດຍັງບໍ່ໄດ້ມາດຕະຖານ,ການຄົ້ນຄວ້າວິທະຍາສາດ. ການຕິດຕາມຜູ້ສຳເລັດການສຶກສາ ຄວາມຮັບຜິດຊອບຂອງພາກສ່ວນຕ່າງໆຍັງເຮັດບໍ່ໄດ້ດີ, ຂາດຄວາມເຂັ້ມງວດໃນການປະຕິບັດງານ, ຂາດເງື່ອນໄຂທີ່ຈຳເປັນ ແລະສຳລັບການສຶກສາຄົ້ນຄວ້າ ງົບປະມານທີ່ໄດ້ຮັບບໍ່ສາມາດຕອບສະໜອງຕາມຄວາມຕ້ອງການຢ່າງແທ້ຈິ່ງໃນການພັດທະນາມະຫາວິທະຍາໄລແຫ່ງຊາດ. ເພາະສະນັ້ນ,ທາງມະຫາວິທະຍາໄລຕ້ອງໃສ່ໃຈດູແລເລື່ອງງົບປະມານໃຫ້ພຽງພໍກັບອາຈານ, ນັກສຶກສາ ແລະລັດຖະບານຕ້ອງໃຫ້ງົບປະມານລົງທຶນໃນສິ່ງກໍ່ສ້າງ ແລະພັດທະນາອາຈານເພື່ອໃຫ້ການຮຽນການສອນມີຄຸນນະພາບ

ຜົນການປຽບທຽບກ່ຽວກັບສະພາບການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົງໂດກ ຈຳແນກຕາມອຸດທິການສຶກສາ: ເຫັນວ່າອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົງໂດກທີ່ມີອຸດທິການສຶກສາທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບສະພາບການບໍລິຫານງານວິຊາການບໍ່ແຕກຕ່າງກັນ ເຊິ່ງບໍ່ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ ອາດເນື່ອງຈາກວ່າອາຈານມີ ອຸດທິການສຶກສາສູງກວ່າປະລິນຍາຕີ ແລະອາຈານທີ່ມີອຸດທິການສຶກສາລະດັບປະລິນຍາຕີ ຕ່າງກໍເປັນອາຈານສອນຄືກັນຢູ່ໃນບໍລິບົດດຽວກັນເຊິ່ງອາຈານທຸກຄົນມີຄວາມຄິດເປັນເອກະພາບກັນດ້ານຄວາມຄິດແລະການປະຕິບັດໜ້າທີ່. ນອກຈາກນີ້ທັງສອງກຸ່ມຍັງໄດ້ຮັບການສົ່ງເສີມ ແລະພັດທະນາຄວາມຮູ້ຄວາມສາມາດດ້ວຍກັນໃນຊ່ວງ10 ປີທີ່ຜ່ານມາ ອາຈານໃຫ້ຄວາມສຳຄັນດ້ານການຈັດການຮຽນການສອນ, ການວັດ ແລະການປະເມີນຜົນເພື່ອໃຫ້ເກີດຄຸນນະພາບແກ່ນັກສຶກສາ; ສ່ວນເລື່ອງງານບໍລິຫານງານວິຊາການປ່ອຍໃຫ້ເປັນໜ້າທີ່ຂອງຜູ້ບໍລິຫານລະດັບຕ່າງໆ. ນອກຈາກນັ້ນ ມະຫາວິທະຍາໄລກຳລັງດຳເນີນນະໂຍບາຍສະໜອງຄ່າຕອບແທນຕ່າງໆ ແລະຫາໂອກາດໃຫ້ອາຈານໄດ້ຮັບການພັດທະນາທາງດ້ານວິຊາການທັງພາຍໃນ ແລະຕ່າງປະເທດເກືອບເທົ່າທຽມກັນ ເຊິ່ງສອດຄ່ອງກັບ ບໍແສງຄຳ ວົງດາລາ(2542:28)ໄດ້ກ່າວ່າ ມະຫາວິທະຍາ ໄລແຫ່ງຊາດລາວຈະຕ້ອງໃສ່ໃຈເປັນພິເສດ ດ້ານການພັດທະນາບຸກຄະລາກອນ, ພັດທະນາຫຼັກສູດຢ່າງຕໍ່ເນື່ອງໃນທຸກລະດັບສາຂາວິຊາ, ດຳເນີນການຄົ້ນຄວ້າວິໄຈ ແລະໃຫ້ການບໍລິການວິຊາການແກ່ສັງຄົມໃຫ້ດີຂຶ້ນ, ດຳເນີນການຮ່ວມມືຢ່າງຕໍ່ເນື່ອງກັບທະນາຄານໂລກ, ທະນາຄານພັດທະນາອາຊີບເພື່ອບູລະນະອາຄານສະຖານທີ່ຮຽນໃນມະຫາວິທະຍາໄລແຫ່ງຊາດ ວິທະຍາເຂດດົງໂດກ ເຝິກອົບຮົມຍົກລະດັບດ້ານວິຊາການແກ່ອາຈານ, ປະກອບອຸປະກອນ ແລະ

ເອກະສານຕຳລາຮຽນທີ່ສຳຄັນ ອາຈານທີ່ມີວຸດທິການສຶກສາລະດັບປະລິນຍາຕີມີອາຍຸນ້ອຍຍິ່ງເປັນບຸກຄະລາກອນທີ່ມະຫາວິທະຍາໄລແຫ່ງຊາດລາວຕ້ອງໃສ່ໃຈສົ່ງເສີມເພື່ອໃຫ້ເປັນນັກວິຊາການທົດແທນອາຈານທີ່ຕຸ່ມເກນອາຍຸກທັນການ. ຜົນການປຽບທຽບກ່ຽວກັບບັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກ ຈຳແນກຕາມວຸດທິການສຶກສາ:

ອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກທີ່ມີວຸດທິການສຶກສາທີ່ແຕກຕ່າງກັນ ມີຄວາມຄິດເຫັນກ່ຽວກັບບັນຫາການບໍລິຫານງານວິຊາການ ໂດຍພາບລວມບໍ່ແຕກຕ່າງກັນ ອາດເນື່ອງຈາກຕ່າງມີຄວາມຮູ້ຄວາມເຂົ້າໃຈ ແລະສາມາດປະຕິບັດງານວິຊາການໄດ້ເປັນຢ່າງດີ ເພາະງານດັ່ງກ່າວຕ້ອງປະຕິບັດເປັນປົກກະຕິໃນມະຫາວິທະຍາໄລຈຶ່ງຈຳເປັນໃຫ້ອາຈານທັງສອງກຸ່ມມີຄວາມຄິດເຫັນຄືກັນ ເພາະທຸກຄົນໃຫ້ຄວາມສຳຄັນຕໍ່ງານວິຊາການ; ອາຈານທີ່ມີວຸດທິການສຶກສາລະດັບປະລິນຍາຕີມີຄວາມຄິດເຫັນກ່ຽວກັບປັນຫາບໍລິຫານງານວິຊາການຫຼາຍກ່າວອາຈານທີ່ມີວຸດທິການສຶກສາສູງກ່ວາປະລິນຍາຕີ ເນື່ອງຈາກວ່າອາຈານມີວຸດທິການສຶກສາລະດັບປະລິນຍາຕີ ມີຄວາມຮູ້ດ້ານພາສາຕ່າງປະເທດ, ຄອມພິວເຕີຂ້ອນຂ້າງໜ້ອຍບໍ່ຄ່ອຍໄດ້ຮັບໂອກາດພັດທະນາໃນດ້ານວິຊາການ ມີການປະຕິບັດໜ້າທີທາງດ້ານວິຊາການ ແລະດ້ານຄອມພິວເຕີໃນຂອບຈຳກັດ, ບໍ່ຄ່ອຍມີໂອກາດໄປຮຽນຕ່າງປະເທດເຊິ່ງກົງກັນຂ້າມອາຈານມີວຸດທິການສຶກສາສູງກ່ວາປະລິນຍາຕີ ໂດຍສະເພາະມີຄວາມເຂົ້າໃຈກ່ຽວກັບການສອນ, ມີຄວາມຄິດ ແລະປະຕິບັດໜ້າທີ່ໄດ້ເປັນຢ່າງດີ ທັງພັດທະນາດ້ານວິຊາການດ້ານພາສາອັງກິດ, ການນຳໃຊ້ຄອມພິວເຕີ ແລະເທັກໂນໂລຢີການສຶກສາທີ່ທັນສະໄໝ.

ຜົນການປຽບທຽບກ່ຽວກັບສະພາບການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກ ຈຳແນກຕາມປະສົບການໃນການເຮັດວຽກ. ພົບວ່າອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກທີ່ມີປະສົບການໃນການເຮັດວຽກທີ່ແຕກຕ່າງກັນມີຄວາມຄິດເຫັນກ່ຽວກັບສະພາບການບໍລິຫານງານວິຊາການໂດຍພາບລວມ ແລະສະເພາະດ້ານແມ່ນບໍ່ແຕກຕ່າງກັນ ເຊິ່ງບໍ່ເປັນໄປຕາມຂໍ້ສົມມຸດຕິຖານ; ທັ້ງນີ້ອາດເປັນຍ້ອນວ່າອາຈານທີ່ມີປະສົມການໃນການເຮັດວຽກທີ່ແຕກຕ່າງກັນເຮັດວຽກໃນມະຫາວິທະຍາ ໄລແຫ່ງຊາດລາວທີ່ມີລະບົບການບໍລິຫານງານວິຊາການ ແລະການຈັດການຮຽນການສອນລະບົບດຽວກັນຕ້ອງເຮັດວຽກຮ່ວມກັນພາຍໃຕ້ຫຼັກການ, ລະບຽບປະຕິບັດ ແລະນະໂຍບາຍຄືກັນ ຈາກເຫດຜົນດັ່ງກ່າວເປັນເຫດຜົນເຮັດໃຫ້ອາຈານທີ່ມີປະສົບການໃນການເຮັດວຽກຕ່າງກັນມີຄວາມຄິດເຫັນກ່ຽວກັບການບໍລິຫານງານວິຊາ ການຂອງມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດດົ່ງໂດກບໍ່ແຕກຕ່າງກັນ.

ຜົນການປຽບທຽບກ່ຽວກັບບັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກ ຈຳແນກຕາມປະສົບການໃນການເຮັດວຽກ.

ອາຈານພາຍໃນມະຫາວິທະຍາໄລແຫ່ງຊາດລາວວິທະຍາເຂດດົ່ງໂດກທີ່ມີປະສົບການໃນການເຮັດວຽກຕ່າງກັນມີຄວາມຄິດເຫັນກ່ຽວກັບບັນຫາການບໍລິຫານງານວິຊາການ ໂດຍພາບລວມ

ແລະສະເພາະດ້ານແຕກຕ່າງກັນທາງສະຖິຕິທີ່ລະດັບ 0,05 ທີ່ເປັນໄປຕາມສົມມຸດຕິຖານທີ່ຕັ້ງໄວ້ ສອດຄ່ອງກັບງານຄົ້ນຄວ້າຂອງ ບຸນເຫຼືອ ປິ່ນຈະເລີນ(2549:ບົດຄັດຫຍໍ້)ທີ່ສຶກສາວິໄຈເລື່ອງຄວາມຄຶດເຫັນຂອງອາຈານຜູ້ສອນຕໍ່ການບໍລິຫານງານວິຊາການໃນສະຖາບັນສ້າງຄູເຂດພາກເໜືອແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ; ຜົນຄົ້ນຄວ້າພົບວ່າ ອາຈານຜູ້ສອນທີ່ມີປະສົບການ ໃນການເຮັດວຽກຕ່ຳກ່ວາ10 ປີ ລົງມາ ແລະອາຈານທີ່ມີປະສົມການໃນການເຮັດວຽກຕັ້ງແຕ່10 ປີ ຂຶ້ນໄປ ມີຄວາມຄິດເຫັນຕໍ່ກັບການບໍລິຫານງານວິຊາການໃນສະຖາບັນສ້າງງຄູເຂດພາກເໜືອແຫ່ງ ສາທາລະນະລັດປະຊທິ ປະໄຕປະຊາຊົນລາວ ແຕກຕ່າງກັນຢ່າງ ມີໄນສຳຄັນທາງສະຖິຕິທີ່ລະດັບ 0,05; ທັ້ງນີ້ອາດເປັນເພາະວ່າ ອາຈານທີ່ມີປະສົບການນ້ອຍກ່ວາ10 ປີ ສ່ວນຫຼາຍເປັນອາຈານເຂົ້າ ເຮັດວຽກໃໝ່ ຍັງມີປະສົບການໃນການເຮັດວຽກໜ້ອຍ ແລະຍັງບໍ່ເຂົ້າໃຈໃນການເຮັດວຽກວິຊາການ ຢ່າງເລິກເຊິ່ງເພາະຫາກໍເຂົ້າເຮັດວຽກໃໝ່ ອາຈານທີ່ເຮັດວຽກມີປະສົບການ10-20 ປີ ມີປະສົບການ ທີ່ກ່ຽວຂ້ອງກັບການບໍລິຫານງານວິຊາການຂ້ອງຂ້າງຫຼາຍ ເປັນອາຈານສອນທີ່ມີປະສົບການໃນການ ເຮັດວຽກດ້ານການສອນ ແລະການບໍລິຫານດ້ານຕ່າງໆ ແລະມີປະສົບການໃນການເຮັດວຽກຕໍ່ເນື່ອງ ມາຈາກວິທະຍາໄລສ້າງຄູວຽງຈັນຈຶ່ງກາຍເປັນບຸກຄະລາກອນໄດ້ຮັບການຍອມຮັບຈາກຄະນະ ອະທິການບໍດີມະຫາວິທະຍາໄລແຫ່ງຊາດລາວ ໄດ້ມອບໝາຍຄວາມຮັບຜິດຊອບທັ້ງໃນການສອນ ແລະການບໍລິຫານ ເຊິ່ງສອດຄອງກັບງານວິໄຈຂອງ ສາຍສະໜອນ ປະສອນໄຊ(2542ອ້າງເຖິງໃນ ສະດາຈິດ 2547:71) ກ່າວວ່າອາຈານ; ສ່ວນຫຼາຍຮຽນຈົບລະດັບປະລິນຍາຕີ ແລະມີປະສົບການ ສອນ6-10 ປີ ອາຈານສ່ວນຫຼາຍມີຊົ່ວໂມງສອນ 6-10 ຊົ່ວໂມງຕໍ່1 ອາທິດ ເຊິ່ງຈຳນວນນັກສຶກ ສາໃນແຕ່ລະຫ້ອງມີຫຼາຍກ່ວາ 45 ຄົນ. ນອກຈາກອາຈານມີໜ້າທີ່ສອນແລ້ວ ຍັງເຮັດໜ້າທີ່ອື່ນໆ ອີກເຊັ່ນ ເປັນຄະນະບໍດີ, ເປັນຫົວໜ້າພາກວິຊາ, ຮອງຫົວໜ້າພາກວິຊາ ແລະອື່ນໆ. ນອກຈາກນີ້ ອາຈານທີ່ມີປະສົບການໃນການເຮັດວຽກຫຼາຍກ່ວາ20 ປີ ອາດມີຄວາມຄຸ້ນເຄີຍກັບຂະບວນການ ບໍລິຫານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວທີ່ປັບປຸງຈາກຂະບວນການບໍລິຫານວິຊາ ການ ຈາກວິທະຍາໄລສ້າງຄູວຽງຈັນຈຶ່ງມີຄວາມຄິດຍູ້ດັນໃຫ້ຂະບວນການບໍລິຫານງານວິຊາການ ຂອງມະຫາວິທະຍາໄລແຫ່ງຊາດໃຫ້ໄດ້ຮັບການປັບປຸງໃຫ້ດີຂຶ້ນກ່ວາເດີມເຊິ່ງກົງກັນຂ້າມກັບອາຈານ ທີ່ມີປະສົບການນ້ອຍ ອາດມີປະສົບການທີ່ກ່ຽວຂ້ອງກັບການບໍລິຫານວິຊາການຂ້ອນຂ້າງໜ້ອຍ. ຈາກເຫດດັ່ງກ່ວາຈຶ່ງເປັນເຫດຜົນສຳຄັນເຮັດໃຫ້ອາຈານທີ່ມີປະສົບການໃນການເຮັດວຽກແຕກຕ່າງ ກັນມີຄວາມຄິດເຫັນກ່ຽວກັບການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົ່ງໂດກ ແຕກຕ່າງກັນ.

ຂໍ້ສະເໜີແນະ

ຂໍ້ແນະນຳສຳຫຼັບການນຳໃຊ້

ມະຫາວິທະຍາໄລຕ້ອງເອົາໃຈໃສ່ດູແລງົບປະມານໃຫ້ທົ່ວເຖິງ ແລະພຽງພໍກັບຄວາມຕ້ອງການ ໂດຍສະເພາະຄະນະວິຊາສາຍທຳມະຊາດຕ້ອງໃຊ້ທຶນໃນສິ່ງກໍ່ສ້າງ ແລະອຸປະກອນຫຼາຍທີ່ສຸດ ແລະເພື່ອໃຫ້ງົບປະມານພັດທະນາອາຈານທີ່ມີປະສົບການໃນການເຮັດວຽກນ້ອຍ, ສົ່ງເສີມໃຫ້ອາຈານຂຽນຕຳລາ, ເຮັດການຄົ້ນຄວ້າ, ສ້າງຜົນງານດ້ານວິຊາການ, ເຂົ້າຮ່ວມກິດຈະກຳທາງວິຊາການທັ້ງພາຍໃນ ແລະຕ່າງປະເທດເພື່ອພັດທະນາຄວາມຮູ້ຄວາມສາມາດ ແລະທັກສະດ້ານຕ່າງໆ.

ມະຫາວິທະຍາໄລຄວນນຳຜົນງານຄົ້ນຄວ້າຂອງອາຈານໄປນຳໃຊ້ປະໂຫຍດ ຄວນໃຫ້ອາຈານໃນສາຍງານວິຊາການທີ່ຮັບຜິດຊອບງານໄດ້ມີສ່ວນຮ່ວມໃນການວາງແຜນກ່ຽວກັບການກຳນົດການຈັດຕາຕາລາງສອນ, ການຈັດນັກຮຽນເຂົ້າຮຽນ, ການຈັດອາຈານເຂົ້າສອນ, ການຈັດຫ້ອງຮຽນ ພາກວິຊາຄວນມີການວາງແຜນການຄຸມສອນ, ການຈັດຫ້ອງສອນ, ການຈັດຫາວັດຖຸອຸປະກອນທີ່ໃຊ້ໃນການສອນ, ມີການວາງແຜນການກຳນົດຂອບເຂດເນື້ອຫາ ແລະລາຍວິຊາທີ່ຈະນຳມາຮຽນນຳມາສອນໃຫ້ຊັດເຈນ.

ຂໍ້ສະເໜີໃນການສຶກສາຄົ້ນຄວ້າຄັ້ງຕໍ່ໄປ

ຄວນສຶກສາສະພາບ ແລະບັນຫາການບໍລິຫານງານວິຊາການຂອງມະຫາວິທະຍາໄລແຫ່ງຊາດລາວໃນວິທະຍາເຂດອື່ນໆ ເພື່ອປຽບທຽບຄວາມຄິດເຫັນຕໍ່ສະພາບ ແລະປັນຫາການບໍລິຫານວິຊາການຂອງແຕ່ລະວິທະຍາເຂດ. ຄວນສຶກສາສະພາບ ແລະບັນຫາການບໍລິຫານວິຊາການຂອງມະຫາວິທະຍາໄລແຫ່ງອື່ນ ພາຍໃນມະຫາວິທະຍາໄລຂອງລັດ ໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

ເອກະສານອ້າງອີງ

ກະຊວງສຶກສາທິການ(2542) ແຜນຍຸດທະສາດການສຶກສາແຫ່ງຊາດ ພສ. 2544-2563 ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາທິການ.

ບຸນເຫຼືອ ປິ່ນຈະເລີນ.(2549) ຄວາມຄິດເຫັນຂອງອາຈານຜູ້ສອນຕໍ່ການບໍລິຫານງານວິຊາການ ໃນສະຖາບັນສ້າງຄູເຂດພາກເໜືອແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ. ວິທະຍານິພົນປະລິນຍາ ມະຫາບັນດິດ ສາຂາບໍລິຫານການສຶກສາ ສຳນັກບັນດິດ ສຶກສາສາຖາບັນລາຊະພັດເລີຍ.

ບໍແສງຄຳ ວົງດາລາ (2542). ມະຫາວິທະຍາໄລແຫ່ງຊາດລາວ.ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາ.

ປະລິຍາພອນ ວົງອະນຸໂລ (2542). ການບໍລິຫານງານວິຊາການ. ກຸງເທບ.

ມະຫາວິທະຍາໄລແຫ່ງຊາດລາວ(2549) ບົດສະຫຼຸບການປະຕິບັດແຜນພັດທະນາ10ປີ ນະຄອນຫຼວງວຽງຈັນ ສຳນັກພິມຮ່ວມມິດການພິມ.

ลำลึกบุญ

• โดย เด็ด ดำฮำ

ไຊເສດຖາທໍລາດລ້ຳ ມະສັດເອກ ລ້ຳຊ້ຳ
ພະລ້ຳພາຍໃຈແຂ໋ງ ລົ້ນຄົ້ນ ທ້ຳຄ້ຳຍ
ສາຍຕາລົ້ແລລ້ຳ ມອ໋ງໄກ໋ເກົ໋ນອ່ານ
ລ໋ວດເດດຜາຍຜ່ານຟ້ຳ ຜະຫຍາລ້ຳ ປານມານ
ອາມາຈັກລ້ານຊ້ຳ໋ ພະອົ໋ງທ່ານນຳພາ ສະໄໝນັ້ນ
ເປັນທ໋ີອັດສະຈັນໃຈ ເຄ໋ີ່ອ໋ງຄູນຂອ໋ງດ້ຳ
ມ໋ລະດົກມະຫາຊົ້ນ ເຊ໋ົ້າສົ່ນ ດູອາດ
ຕົ໋ງຫ໋ອດເປັນ໋ງຸດລ້ຳ ລາວໄດ້ ເອກະນ໋ົ໋ງ
ລາວທ້ຳຊາດ ຂໍເກ໋ີດໄອ້ ພະຄຸນທ່ານ ທັນສາ
ຜົນ໋ງານອົ໋ງເໜ໋ືອຄະນາ (ທ໋ີ) ສ້ຳ໋ງສົມ ສາໃຫ້
ປະນົມມ໋ືເປັນ໋ງຸນໄຕ້ ອັນຫານ້ອມພະບາດ
ລຳລຶກຄຸນ ໄຊເສດຖາທໍລາດໄອ້ ເຕ໋ົ໋ງເທ້ົ໋າຊ໋ື່ອນ໋ົ໋ລັນ

14.11.2016